# ການຕໍ່ສູ້ຍ່າງບິຊັບ

## The Great Controversy

# ເປັນຫຍັງທ່ານຕ້ອງອ່ານໜັງສືເຫລັ້ມນີ້

ສຳລັບຄົນນັບແສນນັບລ້ານ ຊີວິດເບິ່ງເໝືອນຈະບໍ່ມີຄວາມໝາຍແລະໄຮ້ສາລະ ວິທະຍາສາດ ເທັກໂນໂລຢີ ຫລືແມ່ນແຕ່ປັດຊະຍາ ແລະສາສານສາດວາດພາບຂອງມະນຸດວ່າເປັນພຽງສິ່ງມີຊີວິດແຫ່ງໂອກາດ ແຕ່ເປັນປານນັ້ນຈະດ້ວຍສາມັນສຳນຶກຫລືອັນໃດກໍຕາມ ມະນຸດທັງຊາຍແລະຍິງກັບພົບວ່າ ຍາກທີ່ຈະຍອມຮັບການມີຊີວິດຢູ່ຢ່າງໄຮ້ເປົ້າໝາຍ ຄວາມວຸ່ນວາຍການຕໍ່ຕ້ານແລະການກະບົດການເສບຢາເສບຕິດ ທັງໝົດນີ້ຄືການສະແດງອອກເຖິງການຂາດສະຕິຂອງຜູ້ຄົນທີ່ຕ້ອງຕໍ່ສູ້ດີ້ນຮົນກັບຄວາມຫວາດຫວັ່ນຈາກການສູນເສັຽ ເໝືອນກັບເດັກກຳພ້າທີ່ຮ້ອງອອກມາດ້ວຍຄວາມເຫງົາແລະໝົດຫວັງ ຖາມຢູ່ສະເໝີວ່າ "ຂ້ານ້ອຍຄືຜູ້ໃດ ພໍ່ແມ່ຂ້ານ້ອຍຢູ່ໃສ ເປັນຫຍັງຈຶ່ງປະຖິ້ມຂ້ານ້ອຍຢູ່ຢ່າງນີ້ ຂ້ານ້ອຍຈະພົບພໍ່ແມ່ໄດ້ຢ່າງໃດ"

ຄົນຈຳນວນຫລວງຫລາຍຫັນຫາວິທະຍາສາດເພື່ອຫາຄຳຕອບ ຫັນໄປຫາກ້ອງສ່ອງເບິ່ງດວງດາວ ນອກໂລກສ່ຳກັບຈະຖາມວ່າມີໃຜຢູ່ບ່ອນນັ້ນທີ່ຮູ້ຈັກຂ້ານ້ອຍແດ່ ມີໃຜສົນໃຈຂ້ານ້ອຍແດ່ ແຕ່ວິທະຍາສາດກໍບໍ່ສາມາດໃຫ້ຄຳຕອບໄດ້ ວິທະຍາສາດຕັ້ງຂຶ້ນມາເພື່ອຕັ້ງຄຳຖາມວ່າອະຕອມເກີດຂຶ້ນມາໄດ້ຢ່າງໃດ ມັນແຍກຕົວຢ່າງໃດ ສະໝອງຂອງເຮົາທຳງານຢ່າງໃດ ຈັກກະວານນີ້ຖືກສ້າງຂຶ້ນມາໄດ້ຢ່າງໃດ

ວິທະຍາສາດບໍ່ສາມາດບອກໄດ້ວ່າ ອະຕອມເກີດຂຶ້ນມາໄດ້ຢ່າງໃດ ເປັນຫຍັງມະນຸດຈຶ່ງເກີດຂຶ້ນມາ ເປັນຫຍັງຈຶ່ງຕ້ອງມີຈັກກະວານແລະກໍບໍ່ສາມາດໃຫ້ຄຳຕອບແກ່ຄຳຖາມທີ່ຄຳຖາມອື່ນໆ ທີ່ຄົນມັກຖາມກັນສະເໝີວ່າໃນຈັກກະວານນີ້ມີອັນໃດທີ່ມີຄວາມໝາຍແລະຍຸດຕິທັມຫລືບໍ່ ເປັນຫຍັງຄົນທີ່ໄຮ້ດຽງສາຕ້ອງທົນທຸກເພາະຄວາມຜິດ

ທຸກ ວັນນີ້ໄບດຂອງຄຣິສະຕຽນພາກັນເວົ້າກັນຫລວງຫລາຍເຖິງເລື່ອງຂອງພຣະເຈົ້າ ແຕ່ອັນໃດຄືຄວາມຈິງ

ອະນາຄົດຂອງໂລກຈະເປັນຢ່າງໃດ ມັນຈະສິ້ນສຸດລົງດ້ວຍສຽງຮ້ອງແຫ່ງຄວາມທຸກລະກຳລຳບາກຂອງເດັກນ້ອຍ ທີ່ຈະຕ້ອງຫາຍໃຈມີຊີວິດຢູ່ກັບສະພາບທີ່ເຕັມໄປດ້ວຍມົນລະພິດຢ່າງນັ້ນຫລື ຫລືຖືກທຳລາຍດ້ວຍລະເບີດນີວເຄຣັຽ ມະນຸດທັງຫລາຍທີ່ປະຫວັດສາດໄດ້ບັນທຶກຄວາມເຫັນແກ່ຕົວດ້ວຍເອົາໄວ້ວ່າບໍ່ສາມາດຄວບ



"ແຕ່ວັນນັ້ນໂມງນັ້ນບໍ່ມີຜູ້ໃດຮູ້" ຂໍ້ຄວາມນີ້ເປັນເຫດຜົນທີ່ຄົນທັງຫລາຍທີ່ບໍ່ມີຄວາມເຊື່ອກ່ຽວກັບການສະເດັດກັບມາຂອງພຣະຄຣິດໄດ້ຍົກຂຶ້ນມາອ້າງຫລາຍເທື່ອພຣະຄັມພີກ່າວວ່າ

ຫລາຍຄົນໄດ້ປ້ຳສູ້ອະທິຖານຕລອດຄືນເພື່ອຈະໄດ້ໝັ້ນໃຈວ່າຄວາມບາບຂອງພວກເຂົາໄດ້ຮັບການອະພັຍຫລືເພື່ອການກັບໃຈຂອງຍາດພີ່ນ້ອງແລະເພື່ອນບ້ານຂອງເຂົາ

ຄົນທຸກຊັ້ນບໍ່ວ່າຈະຮັ່ງມີຫລືຈົນມີຖານະສູງຫລືຕ່ຳຕ່າງມີໃຈຮ້ອນຮົນທີ່ຈະໄດ້ຟັງຫລັກຄຳສອນກ່ຽວກັບການສະເດັດມາຄັ້ງທີ່ສອງ ພຣະວິນຍານບໍຣິສຸດຂອງພຣະເຈົ້າໄດ້ຊົງປະທານຣິດອຳນາດໃຫ້ຄວາມຈິງຂອງພຣະອົງມີພະລັງມີຄວາມຮູ້ສຶກວ່າເທວະດາຢູ່ໃນທີ່ປະຊຸມດ້ວຍແລະຍິ່ງດົນມາເທົ່າໃດກໍມີຄົນເຂົ້າມາຮ່ວມກັບຜູ້ເຊື່ອຫລາຍຂຶ້ນຝູງຄົນພາກັນມາຟັງພຣະທັມທີ່ໜ້າຢຳເກງພຣະເຈົ້າດ້ວຍຄວາມສງົບ ເບິ່ງເໝືອນວ່າສວັນແລະໂລກໄດ້ຫັນເຂົ້າມາຫາກັນ ປະຊາຊົນກັບບ້ານດ້ວຍຄຳສັນລະເສີນເທີງຣິມປາກສຽງຮ້ອງເພງດ້ວຍຄວາມຊົມຊື່ນຍິນດີດັງກັງວານໄປຖ້າມກາງຄວາມສງົບງຽບຂອງຣາຕີການບໍ່ມີໃຜທີ່ໄດ້ເຂົ້າຮ່ວມປະຊຸມຈະລືມພາບຕ່າງໆ ອັນໜ້າປະທັບໃຈຢ່າງສຸດຊຶ້ງນັ້ນໄດ້

## ການຕໍ່ຕ້ານຂ່າວການສະເດັດກັບມາຂອງພຣະຄຣິດ

ປະກາດກຳນົດເວລາທີ່ແນ່ນອນຂອງການສະເດັດກັບມາຂອງພຣະຄຣິດເຮັດໃຫ້ການຕໍ່ຕ້ານຢ່າງຮຸນແຮງຈາກທຸກລະດັດ ຕັ້ງແຕ່ສາສນາຈານເທີງທໍທັມມາດໄປຈົນເຖິງຄົນຜິດບາບໜາຜູ້ທ້າທາຍສວັນຫລາຍຄົນປະກາດວ່າພວກເຂົາບໍ່ໄດ້ຂັດຂວາງຫລັກຄວາມເຊື່ອກ່ຽວກັບການສະເດັດກັບມາຄັ້ງທີ່ສອງ ແຕ່ປະຕິເສດກຳນົດເວລາທີ່ແນ່ນອນເທົ່ານັ້ນ ແຕ່ພຣະເຈົ້າຜູ້ທອດພຣະເນດເຫັນທຸກສິ່ງທຸກຢ່າງຊົງອ່ານຈິດໃຈຂອງພວກເຂົາອອກ ເຂົາບໍ່ຕ້ອງການຟັງເຣື່ອງການສະເດັດກັບມາພິພາກສາໂລກດ້ວຍຄວາມຊອບທັມຂອງພຣະຄຣິດ ງານຂອງພວກເຂົາບໍ່ເປັນທີ່ພໍພຣະທັຍຂອງພຣະເຈົ້າຜູ້ຊົງກວດສອບແລະຢັ່ງຮູ້ຈິດໃຈ ແລະພວກເຂົາຢ້ານທີ່ຈະໄດ້ພົບພຣະເຈົ້າແລະບໍ່ພ້ອມທີ່ຈະຕ້ອນຮັບອົງພຣະຜູ້ເປັນເຈົ້າຂອງຕົນເອງ ເຊັ່ນດຽວກັບພວກຢິວໃນສມັຍຂອງພຣະເຢຊູສະເດັດມາເທື່ອທຳອິດພວກເຂົາບໍ່ພຽງແຕ່ປະຕິເສດທີ່ຈະຟັງເຫດຜົນທີ່ບໍ່ມີຂໍ້ໂຕ້ແຍ້ງຈາກພຣະຄັມພີເທົ່ານັ້ນ ແຕ່ຍັງເຢາະເຢີ້ຍຄົນທັງຫລາຍທີ່ເຝົ້າຄອຍອົງພຣະຜູ້ເປັນເຈົ້າດ້ວຍ ຊາຕານໄດ້ຫົວເລາະເຢາະເຢີ້ຍແລະສົບປມາດພຣະພັກຂອງພຣະຄຣິດວ່າຜູ້ທີ່ສະແດງຕົນວ່າເປັນປະຊາກອນຂອງພຣະອົງນັ້ນຮັກພຣະອົງນ້ອຍໄປພວກເຂົາຈຶ່ງບໍ່ປາຖນາທີ່ຈະໃຫ້ພຣະອົງສະເດັດມາ



ຄຸມບັນຫາຄວາມເຫັນແກ່ຕົວຂອງຕົນເອງໄດ້ຈະສາມາດຍຸດຕິຄວາມຊົ່ວຮ້າຍສົງຄາມຄວາມຍາກຈົນແລະແມ່ນກະທັ່ງຄວາມຕາຍໄດ້ຢ່າງໃດ

ໜັງສືເຫລັ້ມນີ້ໃຫ້ຄຳຕອບ ແລະໃຫ້ຄວາມໝັ້ນໃຈວ່າຊີວິດນີ້ມີຄວາມໝາຍເຮົາບໍ່ໄດ້ຢູ່ໃນໂລກນີ້ຄົນດຽວ ເພາະບໍ່ມີໃຜຄົນນຶ່ງສົນໃຈ ໃຜຄົນນັ້ນທີ່ມີສ່ວນໃນປະຫວັດສາດຂອງມະນຸດໂລກ ຜູ້ມີສ່ວນຮ່ວມສະພາບຄວາມເປັນມະນຸດຮ່ວມກັບເຮົາເພື່ອເຮົາຈະສາມາດເຂົ້າໄປຫາທ່ານໄດ້ ແລະທ່ານມາຫາເຮົາໄດ້ ທ່ານຜູ້ນຶ່ງທີ່ມີພຣະຫັດອັນແຂງແຮງຄອຍດູແລອູ້ມຊູໂລກໜ່ວຍນີ້ໄວ້ແລະເປັນຜູ້ທີ່ຈະນຳໂລກນີ້ໄປສູ່ສັນຕິສຸກໃນບໍ່ນານນີ້ ແລະຜູ້ນັ້ນທີ່ເຮົາກ່າວເຖິງຄືພຣະເຈົ້າ

ຍ້ອນອະດີດອັນຍາວນານມາແລ້ວ ໄດ້ມີຜູ້ເຂົ້າມາຍຶດແລະຄວບຄຸມໂລກນີ້ແລະໄດ້ທຳລາຍແຜນການຂອງພຣະເຈົ້າ ທີ່ວາງໄວ້ເພື່ອຄວາມສຸກຂອງຄອບຄົວມະນຸດໃນໂລກ ຜູ້ຂຽນໜັງສືເຫລັ້ມນີ້ໄດ້ໃຊ້ພາສາທີ່ຄົນຈຳນວນຫລວງຫລາຍກ່າວວ່າສ່ຳກັບໄດ້ຮັບການດົນໃຈໃຫ້ຂຽນ ກ້າຫານ ບໍ່ຫວັ່ນກົວຕໍ່ສິ່ງໃດ ເປັນການຈີກຜ້າກັ້ງ ເຜີຍໃຫ້ເຫັນເຖິງເປົ້າໝາຍຂອງອຳນາດທີ່ເບິ່ງບໍ່ເຫັນທີ່ກຳລັງໃຊ້ມືຫຍຸມໂລກຂອງເຮົາໜ່ວຍນີ້ໃຫ້ຢູ່ໃນມືຂອງມັນ ໃນພາບຂອງມະນຸດຜູ້ນຳຝ່າຍໂລກແລະຜູ້ນຳທາງສາດສະໜາໄດ້ມີສ່ວນຮ່ວມໃນຄວາມຜິດຂອງແຜນການຮ້າຍນີ້ດ້ວຍ

ໃນຍຸກແຫ່ງເສລີພາບທາງສາດສະໜາເທົ່ານັ້ນທີ່ໜັງສືເຫລັ້ມນີ້ສາມາດພິມແລະຈຳໜ່າຍຈ່າຍແຈກໄປທົ່ວໄດ້ ເພາະເປັນໜັງສືທີ່ເປັນເໝືອນມີດທີ່ປາດລົງເທິງອຳນາດອັນຍິ່ງໃຫຍ່ທີ່ສຸດຢ່າງນຶ່ງຂອງທຸກວັນນີ້ຢ່າງຮຸນແຮງ ໜັງສືເຫລັ້ມນີ້ບອກໃຫ້ຮູ້ວ່າເປັນຫຍັງທຸກວັນນີ້ຈຳເປັນຕ້ອງມີການປະຕິຮູບສາດສະໜາອີກເທື່ອນຶ່ງ ແລະເປັນຫຍັງການປະຕິຮູບເຖິງຢຸດຊະງັກລົງ ບອກເຖິງເລື່ອງລາວອັນໜ້າເສົ້າຂອງຄຣິສຕະຈັກທີ່ລະຖິ້ມຄວາມເຊື່ອ ບອກເຖິງການສ້າງພັນທະມິດເພື່ອການກົດຂີ່ຂົ່ມເຫັງຂອງຄຣິສຕະຈັກ ແລະລັດທິ ຈະມີສ່ວນໃນສິ່ງທີ່ນຳມາແຕ່ຄວາມມືດມົນກ່ອນທີ່ວາລະສຸດທ້າຍຂອງການຕໍ່ສູ້ອັນຍິ່ງໃຫຍ່ຈະສິ້ນສຸດລົງແລະບອກເຖິງຄວາມຂັດແຍ້ງຂອງມະນຸດທຸກຜູ້ທຸກຄົນທີ່ມີສ່ວນຮ່ວມໃນການຕໍ່ສູ້ຄັ້ງນີ້

ຜູ້ຂຽນໄດ້ກ່າວເຖິງສິ່ງທີ່ຍັງບໍ່ເກີດຂຶ້ນຍັງບໍ່ເກີດຂຶ້ນໃນສະໃໝຂອງຕົນເອງເພິ່ນໄດ້ກ່າວເຖິງສິ່ງເຫລົ່ານີ້ດ້ວຍຄວາມຊື່ສັດກົງໄປກົງມາທີ່ສ້າງຄວາມຊຸ້ນເຄືອງແລະຕື່ນຕະໜັກເລື່ອງລາວແຫ່ງການຕໍ່ສູ້ນີ້ເປັນສິ່ງທີ່ຍິ່ງໃຫຍ່ທີ່ຈະຕ້ອງກະຕຸ້ນໃຫ້ໃຜຈັກຄົນນຶ່ງຕ້ອງເວົ້າອອກມາເພື່ອເຕືອນແລະໃຫ້ຄວາມກະຈ່າງແຈ້ງໃນເລື່ອງລາວເຫລົ່ານີ້

ບໍ່ມີຜູ້ອ່ານຄົນໃດທີ່ເປີດອ່ານໜັງສືເຫລັ້ມນີ້ແລ້ວຈະວາງລົງໂດຍບໍ່ປະຫຼາດໃຈວ່າການທີ່ໄດ້ຄົ້ນພົບເລື່ອງລາວເຫລົ່ານີ້ເປັນສິ່ງທີ່ເກີນກວ່າຈະຮຽກວ່າບັງເອີນອາລຳພະບິດຜູ້ຂຽນ

## ເປີດມ່ານແຫ່ງອະນາຄົດ

ກ່ອນທີ່ຄວາມບາບຈະເກີດຂຶ້ນ ອາດຳມີຄວາມສຸກກັບການມີຄວາມສຳພັນຢ່າງເປີດເຜີຍກັບພຣະຜູ້ສ້າງ ແຕ່ພາຍຫລັງທີ່ມະນຸດໄດ້ແຍກຕົວອອກຈາກພຣະເຈົ້າເພາະການລ່ວງລະເມີດຂອງເຂົາ ຫົນທາງໄດ້ເປີດໄວ້ສຳລັບມະນຸດຜູ້ອາໃສຢູ່ເທິງໂລກນີ້ ທີ່ຈະສາມາດຕິດຕໍ່ກັບສະຫວັນໄດ້ ໂດຍແຜນການໄຖ່ໃຫ້ລອດ ພຣະເຈົ້າຊົງຕິດຕໍ່ກັບມະນຸດຜ່ານທາງພຣະວິນຍານຂອງພຣະອົງ ແລະແສງສະຫວ່າງຈາກພຣະອົງໄດ້ສ່ອງມາຍັງໂລກນີ້ດ້ວຍການເປີດເຜີຍແກ່ບັນດາຜູ້ຮັບໃຊ້ທີ່ຊົງເລືອກສັນໄວ້ “ເພາະຖ້າເຂົາບໍ່ໄດ້ຮູ້ທາງຊອບທຳນັ້ນກໍຍັງຈະດີກວ່າທີ່ໄດ້ຮູ້ແລ້ວ ແຕ່ຍັງກັບຫັນຫລັງໃສ່ຂໍ້ບັນຍັດອັນສັກສິດທີ່ຊົງໂຜດມອບໃຫ້ແກ່ເຂົານັ້ນ” (2ເປໂຕ 2:21)

ໃນຊ່ວງ 2500 ປີແລກຂອງປະຫວັດສາດແຫ່ງມະນຸດຊາດຍັງບໍ່ມີການເປີດເຜີຍໂດຍຂໍ້ຂຽນໃດໆ ຄົນທີ່ໄດ້ຮັບການສອນເລື່ອງພຣະເຈົ້າໄດ້ບອກກ່າວຄວາມຮູ້ທີ່ເຂົາໄດ້ຮັບມາແກ່ຄົນອື່ນ ແລະກ່າວຂານສືບຕໍ່ກັນມາຈາກບິດາຕໍ່ບຸດຜ່ານມາຫລາຍຊົ່ວອາຍຸຄົນ ການຕຽມການເພື່ອຂຽນສິ່ງຕ່າງໆ ເອົາໄວ້ ເລີ່ມຂຶ້ນມາສະໃໝຂອງໂມເຊການສຳແດງໂດຍການດົນໃຈໄດ້ກໍ່ເປັນຮູບຮ່າງຂຶ້ນໃນໜັງສືທີ່ໄດ້ຮັບການດົນໃຈ ຄືພຣະຄຣິສຕະທຳຄຳພີໜັງສືເຫລັ້ມນີ້ໃຊ້ເວລາຂຽນຕໍ່ເນື່ອງກັນມາເປັນເວລານານ 1600 ປີ ເລີ່ມຈາກໂມເຊ ບັນທຶກເລື່ອງລາວການສ້າງໂລກແລະພຣະບັນຍັດ ຈົນເຖິງໂຢຮັນຜູ້ບັນທຶກຄວາມຈິງແຫ່ງຂ່າວປະເສີດອັນເປັນເລີດທີ່ສຸດ

ພຣະຄຳພີຊີ້ໄປທີ່ພຣະເຈົ້າໃນຖານະຜູ້ປະພັນ ແຕ່ເຖິງປານນັ້ນກໍຂຽນດ້ວຍມືມະນຸດ ແລະມີລັກສະນະການຂຽນແຕກຕ່າງກັນໄປໃນແຕ່ລະເຫລັ້ມເປັນການສະແດງເຖິງລັກສະນະຂອງຜູ້ຂຽນທີ່ຮູບແບບແຕກຕ່າງກັນ ຄວາມຈິງທັງຫລາຍທີ່ໄດ້ຮັບການເປີດເຜີຍນີ້ “ໄດ້ຮັບການບັນດົນໃຈຈາກພຣະເຈົ້າ” (2 ຕີໂມທຽວ 3:16) ແຕ່ເຖິງປານນັ້ນກໍຍັງສະແດງອອກມາເປັນຖ້ອຍຄຳຂອງມະນຸດ ໂດຍຜ່ານພຣະວິນຍານຂອງສັບພັນຍູແສງສະຫວ່າງໄດ້ສ່ອງເຂົ້າໄດ້ໃນຄວາມຄິດແລະຈິດໃຈ



ຄຳພະຍາກອນຕ່າງໆ ຊຶ່ງເບິ່ງເໝືອນວ່າຈະຊີ້ໄປທີ່ການສະເດັດມາຂອງພຣະຄຣິດໃນຣະດູໃບໄມ້ລ່ວງໃນປີ ຄ.ສ 1844 ໄດ້ຖືກຝັງເລິກໃນຄວາມຄິດຂອງປະຊາຊົນຫລາຍຄົນເຊື່ອວ່າເຫດຜົນທີ່ກ່າວເຖິງໄລຍະເວລາຂອງຄຳພະຍາກອນນັ້ນຖືກຕ້ອງທຸກຄົນພາກັນລົດລະຄວາມຄິດເຫັນທີ່ຂັດແຍ້ງກັນແລະຍອມຮັບຄວາມຈິງດ້ວຍຄວາມຍິນດີສິດຍາພິບານບາງຄົນທີ່ຍອມສະລະເງິນເດືອນແລະໂບດທີ່ເຂົາທຳງານປະຈຳຢູ່ແລ້ວເຂົ້າຮ່ວມການປະກາດຂ່າວການສະເດັດມາຂອງພຣະຄຣິດຢ່າງໃດກໍຕາມເມື່ອປຽບທຽບ ເບິ່ງແລ້ວມີອາຈານຈຳນວນນ້ອຍທີ່ຍອມຮັບຂ່າວນີ້ ດັ່ງນັ້ນຜູ້ປະກາດຂ່າວນີ້ສ່ວນຫລາຍຈຶ່ງເປັນສາມາຊິກອາສາທີ່ຕ່ຳຕ້ອຍຊາວນາລະຖິ້ມໄຮ່ນາພວກຊ່າງລະຖິ້ມເຄື່ອງໄມ້ເຄື່ອງມືພໍ່ຄ້າລະຖິ້ມເຄື່ອງສິນຄ້າຄົນທີ່ງານອາຊີບລະຖິ້ມຕຳແໜ່ງພວກເຂົາເຕັມໃຈທີ່ຈະອົດທົນຕໍ່ຄວາມລຳບາກກາກກຳທົນຍອມຮັບຄວາມທຸກຍາກເພື່ອຈະໄດ້ຊັກຈູງຄົນທັງຫລາຍໃຫ້ກັບໃຈໃໝ່ແລະໄດ້ຮັບຄວາມລອດມີຄົນນັບເປັນພັນເປັນໝື່ນຍອມຮັບຄວາມຈິງນີ້

## ຂໍ້ພຣະຄັມພີງ່າຍໆ ເຮັດໃຫ້ກັບໃຈໃໝ່

ບັນດານັກເທດສອນເໝືອນກັບໂຢຮັນໃຫ້ບັບຕິສະມາທີ່ຕັກເຕືອນຢ່າງຕົງໄປຕົງມາໃຫ້ທຸກຄົນ “ພິສູດການກັບໃຈດ້ວຍຜົນທີ່ເກີດຂຶ້ນ” ຄຳພຍານຈາກຂໍ້ພຣະຄັມພີທັມມະດາເຮັດໃຫ້ເກີດຄວາມສຳນຶກຜິດທີ່ນ້ອຍຄົນຈະປະຕິເສດໄດ້ໝົດ ແຕກຕ່າງຈາກຄຳເທສນາຈາກທັມມາດທົ່ວໄປທີ່ໃຫ້ແຕ່ຄວາມໝັ້ນໃຈໃນສັນຕິສຸກ ແລະຄວາມປອດພັຍມີຄົນຫລວງຫລາຍສະແຫວງຫາພຣະເຈົ້າດ້ວຍການກັບໃຈໃໝ່ຄວາມຮັກແລະໃຝ່ໃຈໃນທາງໂລກທີ່ມີມານານ ບັດນີ້ກັບຍຶດໝັ້ນໃນສວັນດ້ວຍຈິດໃຈທີ່ອ່ອນສຸພາບແລະສະງົບສະຫງຽມ ທຸກຄົນຮ່ວມກັນເປັ່ງສຽງຮ້ອງວ່າ “ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດແດ່ພຣະອົງເພາະວ່າເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ”

ບັນດາຄົນບາບພາກັນຮ້ອງໄຫ້ພາງຖາມວ່າ “ຂ້າພະເຈົ້າຈະຕ້ອງເຮັດຢ່າງໃດຈະລອດໄດ້” ບັນດາຜູ້ທີ່ເຄີຍທຸຈະຣິດມີໃຈຮ້ອນຮົນທີ່ຈະກັບໃຈໃໝ່ ບັນດາຜູ້ໄດ້ພົບສັນຕິສຸກໃນພຣະຄຣິດກໍປາຖນາທີ່ຈະແບ່ງປັນພຣະພອນໃຫ້ຜູ້ອື່ນຈິດໃຈພໍ່ຫັນໄປຫາລູກແລະຈິດໃຈລູກຫັນໄປຫາພໍ່ (ມາລາຄີ 4:6 ກຳແພງແຫ່ງຄວາມເຍີ່ຍິ່ງຈອງຫອງແລະຄວາມເສີຍເມີຍໄດ້ຖືກທຳລາຍໄປໝົດ ມີການສາຣະພາບດ້ວຍຄວາມຮູ້ສຶກເສັຽໃຈຢ່າງແທ້ຈິງ ທຸກທົນທຸກແຫ່ງຈິດວິນຍານທັງຫລາຍຕ່າງກໍຮ້ອງທູນຕໍ່ພຣະເຈົ້າ

ສັ່ງສອນໄດ້ເກີນກວ່າຄວາມສາມາດທີ່ມີຢູ່ຕາມທັມມະຊາດ ນ້ຳສຽງແລະກິຣິຍາທ່າທາງປ່ຽນໄປແລະດ້ວຍຣິດທານຸພາບອັນຍິ່ງໃຫຍ່ ເດັກເຫລົ່ານັ້ນສາມາດປະກາດຄຳຕັກເຕືອນກ່ຽວກັບການພິພາກສາ "ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດແດ່ພຣະອົງ ເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ" ປະຊາຊົນທີ່ມາຟັງມີຄວາມຢ້ານຈົນຕົວສັ່ນພຣະວິນຍານບໍຣິສຸດຂອງພຣະເຈົ້າຕຣັດແກ່ຈິດໃຈຄົນເຫລົ່ານັ້ນ ມີຫລາຍຄົນຖືກຊັກຊວນໃຫ້ສຶກສາຄົ້ນຄົ້ວພຣະຄັມພີ ຄົນທີ່ບໍ່ຮູ້ຈັກປະມານຕົນແລະຄົນທີ່ປະພຶດຜິດສິລທັມໄດ້ກັບຕົວກັບໃຈໃໝ່ຄວາມປ່ຽນແປງຄັ້ງນີ້ສັງເກດເຫັນໄດ້ຢ່າງຊັດເຈນ ແມ່ນແຕ່ບັນດາສິຍາພິບານຂອງຄຣິສຕະຈັກປະຈຳຣັດກໍຍອມຮັບວ່າພຣະຫັດຂອງພຣະເຈົ້າຊົງນຳໃນກິຈການນີ້

ພຣະເຈົ້າມີພຣະປະສົງໃຫ້ມີການປະກາດຂ່າວດີແກ່ການສະເດັດມາຂອງພຣະຄຣິດໃນສະແກນດິເນເວັຽ ແລະພຣະອົງປະທານພຣະວິນຍານຂອງພຣະອົງແກ່ເດັກໆ ເພື່ອງານການປະກາດຂ່າວນີ້ຈະໄດ້ເປັນຜົນສຳເຣັດ ເມື່ອພຣະເຢຊູຊົງດຳເນີນມາໃກ້ກຸງເຢຣູຊາເລັມປະຊາຊົນໄດ້ພາກັນຮ້ອງຂຶ້ນດ້ວຍຄວາມຊື່ນຊົມຍິນດີພວກປຸໂຣຫິດແລະພວກຜູ້ປົກຄອງຝ່າຍສາສນາຫ້າມບໍ່ໃຫ້ພວກເຂົາສົ່ງສຽງຮ້ອງຂນະເມື່ອພຣະອົງເຂົ້າສູ່ປະຕູກຸງເຢຣູຊາເລັມ ແຕ່ເດັກໆ ທີ່ຢູ່ໃນບໍຣິເວນລານພຣະວິຫານນັ້ນສົ່ງສຽງຮ້ອງວ່າ "ໂຮຊັນນາແກ່ຣາຊບຸດຂອງດາວິດ" (ມັດທາຍ 21:8-16) ພຣະເຈົ້າຊົງປະກາດຂ່າວປະເສີດຂອງພຣະອົງໂດຍຜ່ານທາງເດັກໃນສມັຍເມື່ອພຣະຄຣິດສະເດັດມາຄັ້ງທຳອິດສັນໃດ ພຣະອົງກໍຊົງປະກາດຂ່າວການສະເດັດມາຄັ້ງທີ່ສອງຂອງພຣະຄຣິດໂດຍຜ່ານທາງພວກເຂົາອີກສັນນັ້ນ

## ຂ່າວການສະເດັດມາຂອງພຣະຄຣິດແຜ່ຂຍາຍໄປທົ່ວ

ອະເມຣິກາກາຍເປັນສູນກາງການປະກາດຂ່າວການສະເດັດມາຂອງພຣະຄຣິດໜັງສືຂອງມິນເລີແລະເພື່ອນຮ່ວມງານຂອງເພິ່ນໄດ້ຮັບການນຳໄປເຜີຍແຜ່ຍັງແດນໄກທຸກທີ່ນທຸກແຫ່ງທີ່ບັນດາຜູ້ເຜີຍແຜ່ສາສນາໄດ້ເຂົ້າໄປເຖິງທົ່ວໂລກ ຂ່າວປະເສີດອັນເປັນອັມມະຕະໄດ້ເຜີຍແຜ່ໄປໄກ "ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດແດ່ພຣະອົງ ເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ"



ຂອງຜູ້ຮັບໃຊ້ທັງຫລາຍ ພຣະອົງຊົງປະທານຜ່ານນິມິດແລະຄວາມຝັນ ເຄື່ອງໝາຍແລະອຸປະມາ ແລະບັນດາຜູ້ໄດ້ຮັບຄວາມຈິງນີ້ໄດ້ເປີດເຜີຍຄວາມຄິດສິ່ງທີ່ໄດ້ຮັບອອກມາເປັນພາສາຂອງມະນຸດ

ມີການຂຽນຕ່າງສະໄໝ ຫລາຍຊົ່ວອາຍຸຄົນ ໂດຍມະນຸດແຕ່ລະຄົນຜູ້ມີຄວາມແຕກຕ່າງທັງໃນດ້ານອາຊີບແລະຕຳແໜ່ງໜ້າທີ່ ແຕກຕ່າງກັນທັງມັນສະໝອງແລະຈິດວິນຍານ ພຣະຄຳພີຖືກນຳສະເໜີໃນຮູບແບບ ການຂຽນທີ່ແຕກຕ່າງໃນຫົວຂໍ້ທີ່ເປີດເຜີຍອອກມາຢ່າງຫລາຍຮູບແບບ ການສະແດງອອກແຕກຕ່າງໄປຕາມລັກສະນະຂອງຜູ້ຂຽນແຕ່ລະຄົນ ຫລາຍເທື່ອທີ່ຄວາມຈິງອັນດຽວກັນມີຄວາມຊັດເຈນກວ່າຂອງຜູ້ຂຽນອີກຄົນນຶ່ງ ແລະຂະນະທີ່ຜູ້ຂຽນຫລາຍຄົນນຳສະເໜີຫົວຂໍ້ແລະຄວາມສຳພັນທີ່ແຕກຕ່າງຮູບແບບກັນໄປ ລາງເທື່ອຜູ້ທີ່ອ່ານຢ່າງຜິວເຜີນບໍ່ລະອຽດ ຫລືດ້ວຍໃຈມີຄະຕິ ຈະເຫັນມີຄວາມແຕກຕ່າງຫລືຄວາມຂັດແຍ້ງ ແຕ່ສຳລັບຜູ້ທີ່ສຶກສາດ້ວຍຄວາມປຣານີດ ວິເຄາະດ້ວຍຄວາມຢຳເກງ ຈະມີຄວາມເຂົ້າໃຈຢ່າງເລິກເຊິ່ງມອງເຫັນຄວາມສອດຄ່ອງຂອງເນື້ອຫາ

ຂະນະທີ່ຖືກນຳສະເຫນີໂດຍປັດໃຈທີ່ແຕກຕ່າງກັນ ຄວາມຈິງກໍຖືກນຳອອກມາໃນແງ່ມູມທີ່ແຕກຕ່າງກັນອອກໄປເຊັ່ນກັນ ຜູ້ຂຽນຄົນນຶ່ງສ້າງຄວາມປະທັບໃຈໃນຂໍ້ຄວາມຕອນນຶ່ງຂອງເລື່ອງລາວນຶ່ງ ເຂົາຫຍິບເອົາຈຸດຕ່າງໆ ທີ່ສອດຄ້ອງເຂົ້າກັບປະສົບການຂອງເຂົາ ຫລືດ້ວຍອຳນາດແຫ່ງຄວາມເຂົ້າໃຈແລະຄວາມຢັ້ງຮູ້ຂອງຕົນເອງ ຄົນອື່ນໆ ຈັບເອົາຄວາມແຕກຕ່າງກັນອີກມູມນຶ່ງ ຢ່າງໃດກໍຕາມທຸກຄົນຢູ່ພາຍໃຕ້ການຊົງນຳຂອງພຣະວິນຍານບໍຣິສຸດ ນຳສະເຫນີສິ່ງທີ່ມີພະລັງອຳນາດສ້າງຄວາມປະທັບໃຈໃຫ້ແກ່ຄວາມຄິດຂອງເຂົາ ຕາມແງ່ມູມຂອງຄວາມຈິງທີ່ແຕກຕ່າງ ກັນອອກໄປ ມີແຕ່ຄວາມສອດຄ້ອງກັນຢ່າງສົມບູນແລະຄວາມຈິງທັງຫລາຍເປີດເຜີຍດ້ວຍຄວາມເປັນນຶ່ງດຽວ ເພື່ອສ້າງຄວາມສົມບູນທັງໝົດປັບໃຫ້ເຂົ້າກັບຄວາມຕ້ອງ ການຂອງມະນຸດ ໃນທຸກສະພາບແວດລ້ອມແລະປະສົບການໃນຊີວິດ

ພຣະເຈົ້າຊົງມີຄວາມພໍພຣະໃທທີ່ຈະຕິດຕໍ່ຊື່ສານຄວາມຈິງຂອງພຣະອົງກັບມະນຸດທັງໂລກນີ້ ໂດຍຜ່ານທາງຜູ້ແທນຂອງພຣະອົງແລະໂດຍພຣະອົງເອງ ໂດຍທາງພຣະວິນຍານບໍຣິສຸດ ໃຫ້ຄົນເຫລົ່ານີ້ມີຄວາມສາມາດແລະໃຫ້ອຳນາດໃນການປະຕິບັດໜ້າທີ່ ພຣະອົງຊົງນຳຄວາມຄິດໃນການເລືອກສິ່ງທີ່ຈະກ່າວຫລືສິ່ງທີ່ຈະຂຽນຄັງສົມບັດໄດ້ຖືກມອບໄວ້ໃຫ້ແກ່ພາສະນະໃນໂລກນີ້ ເຖິງປານນັ້ນກໍຕາມບໍ່ມີສິ່ງໃດທີ່

ບໍ່ໄດ້ມາຈາກສະຫວັນ ຄຳພະຍານທີ່ຖືກນຳມາສະເຫນີຜ່ານການສະແດງອອກເປັນພາສາມະນຸດ ແມ່ນຈະບໍ່ສົມບູນແຕ່ຄຳພະຍານເຫລົ່ານີ້ກໍມາຈາກພຣະເຈົ້າ ແລະບຸດຫລານຂອງພຣະເຈົ້າທີ່ເຊື່ອຟັງຄຳເຫລົ່ານີ້ກໍຈະເຫັນພຣະສີຣິແລະຣິດທານຸພາບຂອງພຣະອົງຢູ່ພາຍໃນ ເຕັມໄປດ້ວຍພຣະຄຸນແລະຄວາມຈິງ

ພຣະທຳຂອງພຣະເຈົ້ານັ້ນ ພຣະອົງຊົງມອບຄວາມຮູ້ທີ່ຈຳເປັນເພື່ອຄວາມລອດຂອງມະນຸດ ພຣະທຳອັນສັກສິດຈະຕ້ອງໄດ້ຮັບການຍອມຮັບໃນສິດທິອຳນາດການສຳແດງນ້ຳພຣະໄທຂອງພຣະອົງໂດຍບໍ່ມີຜິດພາດ ນີ້ຄືມາດຕະຖານສຳລັບອຸປະນິໄສເປັນສິ່ງທີ່ເປີດເຜີຍຫລັກຄວາມເຊື່ອ ແລະສິ່ງທົດສອບປະສົບການ "ພຣະຄຳພີທຸກຕອນໄດ້ຮັບການບັນດົນໃຈຈາກພຣະເຈົ້າ ແລະເປັນປະໂຫຍດໃນການສອນ ການຕັກເຕືອນວ່າກ່າວ ການປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະການອົບຮົມໃນທາງຊອບທຳເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເລັດ ແລະຕຽມໄວ້ພ້ອມສຳລັບການດີທຸກຢ່າງ" (2 ຕີໂມທຽວ 3:16 - 17)

ເຖິງຢ່າງໃດກໍຕາມ ຄວາມຈິງທີ່ພຣະເຈົ້າຊົງສຳແດງນ້ຳພຣະໄທແກ່ມະນຸດໂດຍຜ່ານທາງພຣະທຳຂອງພຣະອົງ ບໍ່ສາມາດຈະດຳເນີນຕໍ່ໄປໄດ້ຫາກບໍ່ມີພຣະວິນຍານຊົງນຳພາຢ່າງຕໍ່ເນື່ອງ ໃນທາງກົງກັນຂ້າມ ພຣະວິນຍານໄດ້ຊົງສັນຍາໄວ້ໂດຍພຣະຜູ້ຊ່ອຍໃຫ້ລອດຂອງເຮົາວ່າ ຈະຊົງເປີດເຜີຍພຣະທັມແກ່ຜູ້ຮັບໃຊ້ຂອງພຣະອົງເພື່ອໃຫ້ແສງສະຫວ່າງແລະປະຍຸກຄຳສອນເພື່ອການນຳໄປໃຊ້ແລະເມື່ອເຮົາຮູ້ວ່າພຣະ ວິນຍານຂອງພຣະເຈົ້າເປັນຜູ້ຊົງດົນໃຈການຂຽນພຣະຄຳພີ ຈຶ່ງເປັນໄປບໍ່ໄດ້ເລີຍທີ່ຄຳສອນຂອງພຣະວິນຍານຈະຂັດແຍ່ງກັບພຣະທຳ

ພຣະວິນຍານບໍ່ໄດ້ປະທານມາເພື່ອທົດແທນພຣະຄຳພີ ເພາະພຣະຄຳພີໄດ້ສະແດງໃຫ້ເຫັນຢ່າງຊັດເຈນວ່າ ພຣະທຳຂອງພຣະເຈົ້ານັ້ນເປັນມາດຕະຖານເພື່ອພິສູດບັນດາຄຳສອນ ແລະປະສົບການທຸກຢ່າງ ອັກຄະສາວົກໂຢຮັນກ່າວວ່າ "ພວກທີ່ຮັກເອີຍ, ຢ່າເຊື່ອວິນຍານທຸກ ໆ ດວງ ແຕ່ຈົ່ງພິສູດວິນຍານທັງຫລາຍນັ້ນວ່າມາຈາກພຣະເຈົ້າຫລືບໍ່ ເພາະວ່າມີຜູ້ທຳນາຍປອມຫລາຍຄົນໄດ້ອອກໄປໃນໂລກ". (1ໂຢ ຮັນ 4:1) ແລະເອຊາຢາກ່າວວ່າ "ຈົ່ງຟັງພຣະທຳທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ ຢ່າຟັງຄວາມຜີ ເພາະວ່າສິ່ງທີ່ເຂົາບອກໃຫ້ເຈົ້າເຮັດນັ້ນມັນບໍ່ດີ" (ເອຊາຢາ 8:20)

ມີການດູໝິ່ນພາລະກິດຂອງພຣະວິນຍານບໍຣິສຸດກັນຢ່າງກວ້າງຂວາງໂດຍຄົນຈາກຫລາຍຊົນຊັ້ນ ທີ່ເຂົ້າໃຈຜິດ ອ້າງວ່າບໍ່ຈຳເປັນຕ້ອງອາໃສການປະທານແສງ



ນີວາ ດ້ວຍເຫດນີ້ຂ່າວການສະເດັດມາຄັ້ງທີ່ສອງຂອງພຣະຄຣິດໄດ້ເຜີຍແຜ່ໄປຍັງສ່ວນອື່ນໆ ດ້ວຍ

ຄວາມສຳເຣັດຄັ້ງນີ້ເຮັດໃຫ້ໂກສເຊັນມີກຳລັງໃຈຈຶ່ງຈັດພິມບົດຮຽນຂອງເພິ່ນຂຶ້ນໂດຍມຸ້ງຫວັງວ່າຈະເປັນສິ່ງທີ່ສົ່ງເສີມການສຶກສາໜັງສືກ່ຽວກັບຄຳພະຍາກອນຫລັງຈາກນັ້ນບໍ່ນານເພິ່ນໄດ້ເປັນຄຣູສອນໃນໂຮງຮຽນສາສນາສາດໃນວັນອາທິດເພິ່ນຍັງຄົງສອນໜັງສືແບບຖາມຕອບ ເພິ່ນເວົ້າຈາທັກທາຍກັບເດັກໆ ແລະສັ່ງສອນນຳກ່ຽວກັບພຣະຄັມພີຈາການທຳງານທີ່ໂຕ໊ະຂອງອາຈານເປັນຜູ້ຈັດພິມໜັງສືແລະໃນຖານະທີ່ເປັນຄຣູສອນເດັກຈຶ່ງເຮັດໃຫ້ຫລາຍປີທີ່ເພິ່ນທຳງານນັ້ນຊັກຈູງຄົນຈຳນວນຫລວງຫລາຍໃຫ້ມາສົນໃຈຄຳພະຍາກອນທີ່ວ່າພຣະຄຣິດໃກ້ຈະສະເດັດມາແລ້ວ

## ນັກເທດເດັກແຫ່ງສະແກນດິເນເວັຽ

ໃນສະແກນດິເນເວັຽກໍມີການປະກາດຂ່າວການສະເດັດມາດ້ວຍຜູ້ຄົນຈຳນວນຫລວງຫລາຍສາຣະພາບຄວາມຜິດບາບແລະສແວງຫາການອະພັຍໃນພຣະນາມຂອງພຣະຄຣິດ ແຕ່ພວກຜູ້ມີອຳນາດທາງຝ່າຍສາສນາຂອງຄຣິສຕະຈັກປະຈຳຣັດໄດ້ຕໍ່ສູ້ຂັດຂວາງການເຄື່ອນໄຫວໃນຄັ້ງນີ້ ຄົນທີ່ເທສນາບາງຄົນຖືກຈັບໄປຂັງຄຸກໄວ້

ໃນສະຖານທີ່ຫລາຍແຫ່ງທີ່ຜູ້ປະກາດຂ່າວການສະເດັດມາຂອງພຣະຄຣິດຖືກຫ້າມ ພຣະເຈົ້າຊົງສົ່ງຂ່າວຂອງພຣະອົງໂດຍຜ່ານທາງເດັກໆ ເນື່ອງຈາກເດັກເຫລົ່ານີ້ອາຍຸຍັງນ້ອຍ ທາງຣັດຈຶ່ງບໍ່ສາມາດທີ່ຈະຢັບຢັ້ງແລະກັກຂັງພວກເຂົາໄດ້ຈຶ່ງໄດ້ຮັບອະນຸຍາດໃຫ້ເວົ້າໂດຍບໍ່ຖືກຣົບກວນ

ໃນສະຖານທີ່ພັກອັນຕ່ຳຕ້ອຍຂອງກັມມະກອນ ມີປະຊາຊົນມາຊຸມນຸມກັນເພື່ອຟັງຄຳຕັກເຕືອນສັ່ງສອນກ່ຽວກັບການສະເດັດມາຂອງພຣະຄຣິດ ນັກເທດເດັກບາງຄົນມີອາຍຸພຽງຫົກປີຫລືແປດປີ ແຕ່ລະຄົນໄດ້ດຳເນີນຊີວິດທີ່ສະແດງໃຫ້ເຫັນວ່າພວກເຂົາຮັກພຣະຜູ້ຊ່ອຍໃຫ້ລອດ ຕາມປົກກະຕິເດັກເຫລົ່ານີ້ຈະສະແດງສະຕິປັນຍາ ຄວາມສາມາດເຊັ່ນກັບເດັກໃນລຸ່ນດຽວກັນ ແຕ່ໃນຂນະທີ່ພວກເດັກເຫລົ່ານີ້ຢືນຕໍ່ໜ້າຝູງຊົນ ໃນການເທສນາຈະມີອິດທິພົນຢ່າງນຶ່ງຊັກຈູງໃຫ້ພວກເຂົາສາມາດເທສນາ

ໜັງສືຂອງເບັງເກລໄດ້ແຜ່ຫລາຍທົ່ວໄປໃນຣັດເວີເທັມເບີກ ທີ່ເພິ່ນອາສັຍຢູ່ ແລະໄດ້ແຜ່ຫລາຍທົ່ວໄປໃນສ່ວນຕ່າງໆ ຂອງເຢຣະມັນ ຂນະທີ່ຂ່າວການສະເດັດມາຂອງພຣະຄຣິດໄດ້ແຜ່ຫລາຍໄປທົ່ວປະເທດເຢຣະມັນນັ້ນ ປະເທດອື່ນໆ ກໍມີຄວາມສົນໃຈໃນຂ່າວນີ້ເຊັ່ນກັນ

ໃນເຈນີວາ ໂກສເຊັນໄດ້ເທສນາສັ່ງສອນຂ່າວການສະເດັດມາຄັ້ງທີ່ສອງຂອງພຣະຄຣິດ ເມື່ອເພິ່ນເລີ່ມທຳງານເປັນສິດຍາພິບານໃໝ່ນັ້ນເພິ່ນເຊື່ອໃນລັດທິສົງສັຍ (Skepticism) ເມື່ອຍັງໜຸ່ມເພິ່ນສົນໃຈໃນຄຳພະຍາກອນ ແຕ່ຫລັງຈາກທີ່ໄດ້ອ່ານໜັງສື "ປະຫວັດສາດໂບຮານ" ຂອງໂຣລລິນ ໂກສເຊັນເກີດຄວາມສົນໃຈໃນດານີເອນບົດທີ່ 2 ແລະຮູ້ສຶກປລາດໃຈຢ່າງໃຫຍ່ທີ່ເຫດການຕ່າງໆ ໄດ້ເກີດຂື້ນຈິງຕາມຄຳພະຍາກອນເຫັນວ່າຄຳພະຍາກອນທັງຫລາຍມາຈາກພຣະຄັມພີຈຶ່ງບໍ່ວາງໃຈໃນລັດທິເຫດຜົນນິຍົມອີກຕໍ່ໄປ ຫລັງຈາກທີ່ສຶກສາພຣະຄັມພີຢູ່ຊົ່ວໄລຍະເວລານຶ່ງເພິ່ນກໍຍອມຮັບຄວາມເຊື່ອທີ່ແທ້ຈິງ

ໂກສເຊັນສຶກສາຄົ້ນຄ້ວາຈົນມີຄວາມເຊື່ອວ່າພຣະເຢຊູຄຣິດຈວນຈະສະເດັດມາ ແລ້ວດ້ວຍຄວາມປະທັບໃຈຢ່າງເລິກເຊິ່ງໃນຄວາມຈິງທີ່ສຳຄັນໃຫຍ່ນີ້ ຈຶ່ງເຮັດໃຫ້ເພິ່ນປາຖນາທີ່ຈະເຜີຍແຜ່ແກ່ປະຊາຊົນ ແຕ່ສິ່ງທີ່ກີດຂວາງການດຳເນີນງານຂອງເພິ່ນຄືປະຊາຊົນທົ່ວໄປມີຄວາມເຊື່ອວ່າຄຳພະຍາກອນໃນໜັງສືດານີເອັນບໍ່ສາມາດຈະເຂົ້າໃຈໄດ້ ໃນທີ່ສຸດໂກສເຊັນໄດ້ຕັດສິນໃຈເຮັດຢ່າງທີ່ຟາເຣນໄດ້ເຮັດມາກ່ອນໃນການປະກາດຂ່າວປະເສີດໃນເຈນີວາຄືເລີ່ມສອນເດັກນ້ອຍໂດຍຫວັງວ່າເດັກຈະສ້າງຄວາມສົນໃຈໃນການສະເດັດມາຂອງພຣະຄຣິດໃຫ້ກັບບິດາມານດາຂອງເຂົາເອງ ໂກສເຊັນກ່າວວ່າ "ເຫດທີ່ຂ້າພະເຈົ້າປະກາດຂ່າວນີ້ແກ່ເດັກກໍເພາະຖ້າຫາກມີຈຳນວນເດັກເພີ່ມຂື້ນແລະຖ້າຂ້າພະເຈົ້າເຫັນວ່າເຂົາຟັງຄຳສອນຂອງຂ້າພະເຈົ້າມີຄວາມພໍໃຈແລະສົນໃຈສາມາດເຂົ້າໃຈແລະອະທິບາຍເຣື່ອງນີ້ໄດ້ ຂ້າພະເຈົ້າກໍແນ່ໃຈວ່າຈະມີເດັກໆ ກຸ່ມທີ່ສອງມາຟັງອີກແລ້ວຜູ້ໃຫຍ່ກໍຈະເຫັນວ່າການທີ່ມານັ່ງແລະສຶກສານັ້ນໄດ້ຮັບຜົນຄຸ້ມຄ່າ ເມື່ອເຮັດໄດ້ເຊັ່ນນີ້ກໍຄິດວ່າໄດ້ຜົນແລ້ວ"

ຂນະທີ່ໂກສເຊັນເວົ້າກັບເດັກນ້ອຍ ພວກຜູ້ໃຫຍ່ກໍມາຟັງດ້ວຍລະບຽງໂບດທີ່ເພິ່ນປະກາດສັ່ງສອນເຕັມໄປດ້ວຍຜູ້ຟັງທີ່ມີຄວາມສົນໃຈ ຄົນເຫລົ່ານັ້ນເປັນກຸ່ມຊົນທີ່ມີບັນດາສັກແລະມີວິຊາຄວາມຮູ້ ຄົນຕ່າງຖິ່ນແລະຄົນຕ່າງຊາດທີ່ມາຢ້ຽມຢາມເຈ



ສະຫວ່າງຈາກພຣະອົງ ແລະພຣະທຳຂອງພຣະອົງອີກຕໍ່ໄປ ພວກເຂົາຖືກຄອບງຳດ້ວຍຄວາມຮູ້ສຶກເພິ່ງພໍໃຈ ແລະຄິດວ່າເປັນພຣະສຸຣະສຽງຂອງພຣະເຈົ້າທີ່ຕຣັດໃນຈິດໃຈ ແຕ່ພຣະວິນຍານທີ່ຄວບຄຸມເຂົາບໍ່ແມ່ນວິນຍານຂອງພຣະເຈົ້າ ເມື່ອຕິດຕາມຄວາມຮູ້ສຶກເພິ່ງພໍໃຈ ຈຶ່ງລະເລີຍພຣະຄຳພີໃນທີ່ສຸດກໍຈະນຳມາແຕ່ຄວາມສັບສົນການຫລອກລວງ ແລະຄວາມພິນາດໃນບັ້ນປາຍແຮ່ງຈະເຮັດໃຫ້ເຈດຕະນາມູ່ງຮ້າຍຂອງມານກ້າວໜ້າຫລາຍຂື້ນເທົ່ານັ້ນ ໃນເມື່ອພັນທະກິດຂອງພຣະວິນຍານບໍຣິສຸດມີຄວາມສຳຄັນຢ່າງຍິ່ງຕໍ່ຄຣິສຕະຈັກຂອງພຣະຄຣິດ ຈຶ່ງເປັນເປົ້າໝາຍທີ່ຊາຕານຕ້ອງການຫາອຸບາຍຫລອກລວງດ້ວຍການລ້າງຄວາມຜິດພາດໃຫ້ເກີດກັບຄົນທີ່ຄັ່ງໄຄ່ ແລະມີຄວາມ ຄິດຮຸນແຮງດ້ານສາດສະໜາ ຄິດຫາທາງດູໝິ່ນງານຂອງພຣະວິນຍານ ແລະເປັນເຫດເຮັດໃຫ້ປະຊາກອນຂອງພຣະເຈົ້າລະເລີຍແຫລ່ງທີ່ມາແຫ່ງພະລານຸພາບ ທີ່ອົງພຣະຜູ້ເປັນເຈົ້າຂອງເຮົາຊົງຈັດຕຽມໄວ້ໃຫ້ ເພື່ອໃຫ້ສອດຄ້ອງກັບພຣະທຳຂອງພຣະເຈົ້າ ພຣະ ວິນຍານຂອງພຣະອົງຈະຕ້ອງເຮັດໜ້າທີ່ນີ້ຕໍ່ໄປ ຕລອດເວລາທີ່ຂ່າວປະເສີດໄດ້ຮັບອະນຸຍາດໃຫ້ປະກາດຕລອດເວລາທີ່ພຣະຄຳພີພັນທະສັນຍາເດີມ ແລະພັນທະສັນຍາໃໝ່ໄດ້ຮັບການປະທານໃຫ້ມານັ້ນ ພຣະວິນຍານບໍຣິສຸດບໍ່ໄດ້ຢຸດການປະທານແສງສະຫວ່າງແກ່ຈິດໃຈຂອງທຸກຄົນ ຫລືແຍກອອກຈາກການສຳແດງພຣະອົງໃນຄຳພີອັນສັກສິດ ພຣະຄັມພີເອງກໍໄດ້ກ່າວເຖິງວິທີການທີ່ມະນຸດໄດ້ຮັບຄຳຕັກເຕືອນໃຫ້ຮູ້ຈັກປັບປຸງໃຫ້ການແນະນຳແລະການສັ່ງສອນ ຜ່ານທາງພຣະວິນຍານບໍຣິສຸດ ແລະການຕິດຕໍ່ກັບບັນດາຜູ້ປະກາດພຣະທຳຕ່າງຍຸກຕ່າງສະໃໝແລະໃນການບັນທຶກຖ້ອຍຄວາມທັງຫລາຍທີ່ຊົງປະທານໃຫ້ໃນລັກສະນະດຽວກັນນີ້ ຫລັງຈາກສິ້ນສຸດການຂຽນພຣະຄຳພີ ພຣະວິນຍານບໍຣິສຸດຍັງຄົງເຮັດໜ້າທີ່ເພື່ອໃຫ້ຄວາມກະຈ່າງ ຄວາມອົບອຸ່ນແລະການເລົ້າໂລມໃຈແກ່ລູກຫລານຂອງພຣະເຈົ້າຕໍ່ໄປ

ພຣະເຢຊູຊົງສັນຍາກັບບັນດາອັກຄະສາວົກຂອງພຣະອົງວ່າ "ແຕ່ພຣະຜູ້ຊ່ອຍຄືພຣະວິນຍານບໍຣິສຸດ ທີ່ພຣະບິດາຈະຊົງໃຊ້ມາໃນນາມຂອງເຮົາ ອົງນັ້ນແຫລະ, ຈະຊົງສອນທ່ານທັງຫລາຍທຸກ ໆ ສິ່ງ ແລະຈະເຕືອນພວກທ່ານໃຫ້ລະນຶກເຖິງທຸກສິ່ງທີ່ເຮົານີ້ໄດ້ກ່າວແກ່ພວກທ່ານແລ້ວນັ້ນ". "ແຕ່ເມື່ອພຣະອົງນັ້ນຄືພຣະວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ ພຣະອົງຈະນຳທ່ານທັງຫລາຍໄປສູ່ຄວາມຈິງທັງໝົດເພາະພຣະອົງຈະບໍ່ກ່າວແຕ່ລຳພັງຂອງພຣະອົງເອງ ແຕ່ພຣະອົງຊົງໄດ້ຍິນສິ່ງໃດກໍຈະ

ຊົງກ່າວສິ່ງນັ້ນ ແລະຈະຊົງປະກາດໃຫ້ແກ່ທ່ານທັງຫລາຍຮູ້ເຖິງສິ່ງເຫລົ່ານີ້ທີ່ຈະເກີດຂຶ້ນ". (ໂຢຮັນ 14:26; 16:13) ພຣະຄໍາພີສອນໄວ້ຢ່າງຊັດເຈນວ່າ ພຣະສັນຍາເຫລົ່ານີ້ບໍ່ໄດ້ມີຈໍາກັດໄວ້ພຽງສະໃໝຂອງອັກຄະສາວົກເທົ່ານັ້ນ ແຕ່ມີຢູ່ຕລອດໄປໃນຄຣິສຕະຈັກຂອງພຣະຄຣິດທຸກຍຸກທຸກສະໃໝ ພຣະຜູ້ຊ່ອຍໃຫ້ລອດຊົງໃຫ້ເປັນປະກັນແກ່ຜູ້ຕິດຕາມພຣະອົງ "ເຮົາຢູ່ກັບເຈົ້າທັງຫລາຍທຸກໆວັນ ຈົນໝົດກັບ". (ມັດທາຍ 28:20) ແລະໂປໂລໄດ້ປະກາດໄວ້ຊັດເຈນວ່າຂອງປະທານແລະການສໍາແດງຂອງພຣະວິນຍານບໍຣິສຸດຖືກກໍານົດໄວ້ໃນຄຣິສຕະຈັກ "ເພື່ອຈັດຕຽມໄພ່ພົນທັງຫລາຍຂອງພຣະອົງໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມ ເພື່ອເສີມສ້າງພຣະກາຍຂອງພຣະຄຣິດໃຫ້ຈະເລີນຂຶ້ນ. ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນໍ້າໜຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງເລື່ອງພຣະບຸດຂອງພຣະເຈົ້າ ຈົນກວ່າເຮົາຈະເປັນຄົນໃຫຍ່ເຕັມສ່ວນ ຄືເຕັມເຖິງຂະໜາດຄວາມສົມບູນຂອງພຣະຄຣິດ". (ເອເຟໂຊ 4:12, 13)

ທ່ານອັກຄະທູດໄດ້ອະທິຖານເພື່ອພີ່ນ້ອງຜູ້ເຊື່ອໃນເມືອງເອເຟໂຊວ່າ "ເຮົາອ້ອນວອນວ່າຂໍພຣະເຈົ້າຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍຄືພຣະບິດາຜູ້ຊົງພຣະສະງ່າຣາສີຊົງໂຜດປະທານໃຫ້ທ່ານທັງຫລາຍມີຈິດໃຈປະກອບດ້ວຍສະຕິປັນຍາ ແລະຄວາມຮູ້ແຈ້ງເຫັນຈິງເລື່ອງຂອງພຣະອົງ ແລະຈົ່ງຊົງໂຜດໃຫ້ຕາພາຍໃນຂອງທ່ານທັງຫລາຍສະຫວ່າງຂຶ້ນເພື່ອພວກທ່ານຈະໄດ້ຮູ້ວ່າໃນການທີ່ພຣະອົງຊົງເອີ້ນພວກທ່ານນັ້ນ ພຣະອົງໄດ້ຊົງປະທານຄວາມຫວັງອັນໃດແກ່ພວກທ່ານແລະຮູ້ວ່າມໍລະດົກຂອງພຣະອົງສໍາລັບພວກໄພ່ພົນຂອງພຣະອົງນັ້ນມີສະງ່າຣາສີອັນອຸດົມສົມບູນສໍ່າໃດ ແລະຮູ້ວ່າຣິດອໍານາດອັນໃຫຍ່ເຫລືອປະມານຂອງພຣະອົງມີຫລາຍປານໃດສໍາລັບພວກເຮົາທີ່ເຊື່ອ ຕາມອໍານາດຂອງພຣະກໍາລັງແລະຣິດທານຸພາບອັນໃຫຍ່ຫລວງຂອງພຣະອົງ". (ເອເຟໂຊ 1:17 - 19) ພັນທະກິດຂອງພຣະວິນຍານແຫ່ງພຣະເຈົ້າໃນການແຈ້ງຄວາມເຂົ້າໃຈ ແລະເປີດຈິດໃຈແກ່ສິ່ງເລິກລັບແຫ່ງພຣະທໍາອັນສັກສິດຂອງພຣະເຈົ້າ ຄືພຣະພອນທີ່ໂປໂລອ້ອນວອນຂໍສໍາລັບຄຣິສ ຕະຈັກ ເອເຟໂຊ

ຫລັງຈາກການສໍາແດງອັນມະຫັດສະຈັນຂອງພຣະວິນຍານບໍຣິສຸດໃນວັນເພັນຕໍເຕສະເຕ ເປໂຕໄດ້ສັ່ງສອນປະຊາຊົນໃຫ້ກັບໃຈແລະຮັບບັບຕິສະມາໃນພຣະນາມຂອງພຣະຄຣິດ ເພື່ອການລະຖິ້ມຄວາມບາບຂອງເຂົາແລະໄດ້ກ່າວວ່າ "ຈົ່ງຖິ້ມ



ຂ່າວນີ້ຊີ້ໄປທີ່ປີ ຄ.ສ 1844 ວ່າເປັນປີທີ່ພຣະຄຣິດຈະສະເດັດກັບມາໜັງສືທີ່ຕີພິມເລື່ອງການສະເດັດມາຂອງພຣະຄຣິດຈາກສະຫະຣັດກໍຈໍາໜ່າຍກແຈກຈ່າຍໄປຢ່າງກວ້າງຂວາງ ໃນປີ ຄ.ສ 1842 ໂຣເບີດ ວິນເຕີ ຊາວອັງກິດຊຶ່ງໄດ້ຮັບຫລັກຄວາມເຊື່ອກ່ຽວກັບການສະເດັດມາຂອງພຣະຄຣິດໄດ້ເດີນທາງມາຍັງປະເທດບ້ານເກີດເມືອງນອນຂອງເຂົາ ເພື່ອທີ່ຈະປະກາດຂ່າວການສະເດັດມາຂອງພຣະຄຣິດ ມີຫລາຍຄົນຮ່ວມມືທໍາງານກັບເຂົາໃນສ່ວນຕ່າງໆ ຂອງປະເທດອັງກິດ

ໃນອະເມຣິກາໃຕ້ ລາຄູນຊາ ບາດຫລວງຊາວສະເປນຈາກຄະນະເຢຊູອິດໄດ້ຍອມຮັບຄວາມຈິງກ່ຽວກັບການສະເດັດມາຂອງພຣະຄຣິດ ເພື່ອຫລີກລ່ຽງຈາກຄໍາຕິຕຽນຂອງສັນຕະປາປາແຫ່ງໂຣມທ່ານຈຶ່ງຈັດພິມໜັງສືກ່ຽວກັບຄວາມຄິດຂອງຕົນເອງ ໂດຍໃຊ້ນາມແຝງວ່າ "ຣັບບີເບັນເອສຣາ" ໃນໜັງສືເຫລັ້ມນີ້ທ່ານໄດ້ກ່າວແທນຕົວເອງວ່າເປັນຊາວຢິວຄົນນຶ່ງທີ່ກັບໃຈປະມານປີ ຄ.ສ 1825 ໜັງສືໄດ້ຮັບການແປເປັນພາສາອັງກິດຈຶ່ງເຮັດໃຫ້ຜູ້ທີ່ສົນໃຈເລື່ອງການສະເດັດມາຂອງພຣະຄຣິດຢູ່ແລ້ວມີຄວາມສົນໃຈຫລາຍຂຶ້ນ

## ພຣະທັມພຣະນິມິດຖືກເປີດເຜີຍແກ່ເບັງເກລ

ໃນປະເທດເຢຣະມັນເບັງເກລສິດຍາບິບານແຫ່ງຄະນະລູເທີເຣນແລະເປັນຜູ້ສຶກສາຄົ້ນຄ້ວພຣະຄັມພີຄົນນຶ່ງໄດ້ປະກາດຫລັກຄໍາສອນນີ້ ຂນະທີ່ກໍາລັງຕຽມເຣື່ອງເທສນາຈາກພຣະທັມພຣະນິມິດບົດທີ່ 21 ຢູ່ນັ້ນແສງສວ່າງແຫ່ງການສະເດັດມາຂອງພຣະຄຣິດໄດ້ພຸດຂຶ້ນມາໃນສມອງຂອງເພິ່ນ ເຮັດໃຫ້ເຂົ້າໃຈຄໍາພະຍາກອນໃນພຣະທັມພຣະນິມິດຢ່າງຊັດເຈນດ້ວຍຄວາມຮູ້ສຶກຕື່ນເຕັ້ນຕໍ່ພາບເຫດການທີ່ປະກອບໄປດ້ວຍພຣະສະງ່າຣາສີຂອງພຣະເຈົ້າທີ່ຜູ້ປະກາດພຣະທັມໂຢຮັນໄດ້ຂຽນໄວ້ໃນພຣະທັມພຣະນິມິດ ເພິ່ນຈຶ່ງຫັນເຫຄວາມສົນໃຈໄປຈາກຄໍາພະຍາກອນຊົ່ວຂນະນຶ່ງ ແລະຂນະທີ່ເພິ່ນຢືນເທສນາຢູ່ທັມມາດ ພາບເຫດການນີ້ກໍໄດ້ປາກົດໃຫ້ເພິ່ນເຫັນອີກເທື່ອນຶ່ງ ຕັ້ງແຕ່ບັດນີ້ເປັນຕົ້ນມາເບັງເກລຈຶ່ງອຸທິດຕົວເອງໃຫ້ກັບການສຶກສາຄໍາພະຍາກອນຕ່າງໆ ແລະໃນທີ່ສຸດເພິ່ນກໍເຊື່ອວ່າພຣະຄຣິດຈວນຈະສະເດັດມາແລ້ວວັນເວລາທີ່ເບັງເກລໄດ້ກໍານົດໄວ້ວ່າພຣະຄຣິດຈະສະເດັດມາຄັ້ງທີ່ສອງນັ້ນເປັນໄລຍະເວລາຫລັງຈາກທີ່ມິນເລີໄດ້ກໍານົດໄວ້ສອງສາມປີ

"ນອກຈາກນັ້ນຂ້າພະເຈົ້າໄດ້ຮັບຄວາມຮັກຈາກພຣະເຈົ້າຜູ້ເປັນເພື່ອນບ້ານຢູ່ໃນຈິດໃຈ ແລະມີພຣະຄັມພີຢູ່ໃນມືອຳນາດເຫລົ່ານີ້ແລະຈະເປັນສິ່ງຄ້ຳຊູຂ້າພະເຈົ້າ"

ເພິ່ນໄດ້ປະກາດສັ່ງສອນຈົນກະທັ່ງຂ່າວປະເສີດເຜີຍແຜ່ໄປໃນທີ່ມີຄົນອາສັຍຢູ່ໃນສ່ວນໃຫຍ່ຂອງໂລກ ປະກາດພຣະທັມຂອງພຣະເຈົ້າໃນພາສາຕ່າງໆ ຖ້າມກາງ ຊາວຢິວ ຕຣຸກີ ປາຣ໌ຊີ ຮິນດູ ແລະເຊື້ອຊາດອື່ນໆ ທຸກແຫ່ງຈະໄດ້ຮັບຊາບກ່ຽວກັບພຣະເມຊີອາຜູ້ຈວນຈະສະເດັດມາ

ໃນໂບຄາຣາ ທ່ານ ດຣ. ໂຢເຊບ ໄດ້ພົບຫລັກຄຳສອນໃນການສະເດັດກັບມາຂອງພຣະເຈົ້າອີກບໍ່ດົນນານນີ້ ຊຶ່ງປະຊາຊົນໝູ່ນຶ່ງທີ່ຢູ່ຫ່າງໄກຈາກສັງຄົມຍຶດຖືຢູ່ ຄືຊາວອາຫລັບ ແຫ່ງເຢເມນ ເພິ່ນກ່າວວ່າ "ພວກອາຫລັບແຫ່ງເຢເມນມີໜັງສືເຫລັ້ມນຶ່ງຮຽກວ່າ "ຊີຣາ" ຊຶ່ງໄດ້ກ່າວເຖິງການສະເດັດມາຂອງພຣະຄຣິດແລະການປົກຄອງດ້ວຍສະງ່າຣາສີຂອງພຣະອົງ ເພິ່ນມີຄວາມເຊື່ອວ່າພຣະອົງຈະສະເດັດມາໃນປີ 1840"

"ຂ້າພະເຈົ້າໄດ້ພົບລູກຫລານຂອງອິສຣະເອັນຕະກຸນດານແລະລູກຫລານຂອງເຣດາບທີ່ຫວັງວ່າພຣະເມຊີອາຈະສະເດັດມາຢ່າງກະທັນຫັນຖ້າມກາງໝູ່ເມກໃນທ້ອງຟ້າ"

ຜູ້ເຜີຍແຜ່ສາສນາໃນຕາຕາຣີກໍໄດ້ພົບຄວາມເຊື່ອທີ່ຄ້າຍຄືກັບຄວາມເຊື່ອດັ່ງກ່າວບາດຫລວງຂອງຊາວຕາຕາຣີຄົນນຶ່ງໄດ້ຖາມຜູ້ເຜີຍແຜ່ສາສນາເຫລົ່ານີ້ວ່າພຣະຄຣິດຈະສະເດັດມາຄັ້ງທີ່ສອງເມື່ອໃດ ເມື່ອຜູ້ເຜີຍແຜ່ສານາໄດ້ຕອບຄຳຖາມຂອງບາດຫລວງອົງນີ້ວ່າເພິ່ນບໍ່ຮູ້ວ່າພຣະຄຣິສຈະສະເດັດມາເມື່ອໃດ ບາດຫລວງປະຫລາດໃຈໃນຄວາມບໍ່ຮູ້ຂອງຄຣູສອນພຣະຄັມພີຄົນນີ້ ຈຶ່ງກ່າວເຖິງຄວາມເຊື່ອຂອງຕົນ ຊຶ່ງມີຣາກຖານມາຈາກຄຳພະຍາກອນວ່າພຣະຄຣິດຈະສະເດັດມາປະມານປີ ຄ.ສ 1844

ຕົ້ນປີ ຄ.ສ 1826 ມີຜູ້ເທສນາສັ່ງສອນຂ່າວການສະເດັດມາຄັ້ງທີ່ສອງຂອງພຣະຄຣິດໃນປະເທດອັງກິດເຖິງແມ່ນບໍ່ໄດ້ສອນເຖິງເວລາທີ່ແນ່ນອນຂອງພຣະອົງກໍຕາມ ແຕ່ກໍໄດ້ມີການປະກາດຄວາມຈິງຂອງການສະເດັດມາໃນບໍ່ເທິງນີ້ດ້ວຍຣິດທານຸພາບແລະສະງ່າຣາສີຂອງພຣະຄຣິດໄປທົ່ວ ນັກຂຽນຊາວອັງກິດຄົນນຶ່ງໄດ້ຂຽນວ່າມີສາສນາຈານຂອງຄຣິສຕະຈັກອັງກິດປະມານ 700 ຄົນໄດ້ເທສນາສັ່ງສອນ "ຂ່າວປະເສີດແຫ່ງແຜ່ນດິນຂອງພຣະເຈົ້າ"



ໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສະມາໃນພຣະນາມຂອງພຣະເຢຊູຄຣິດທຸກຄົນເພື່ອການຊົງຍົກບາບໂທດຂອງພວກທ່ານແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານຄືພຣະວິນຍານບໍຣິສຸດ. ດ້ວຍພຣະສັນຍານັ້ນກໍມີໄວ້ແກ່ທ່ານທັງຫລາຍ ກັບລູກຫລານຂອງພວກທ່ານ ແລະແກ່ຄົນທັງປວງທີ່ຢູ່ຫ່າງໄກ ຄືທຸກຄົນທີ່ອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງພວກເຮົາຊົ່ງເອີ້ນມາເຝົ້າພຣະອົງນັ້ນ". (ກິຈການ 2:38-39)

ພາບຕ່າງ ໆ ເຫລົ່ານີ້ມີສ່ວນກ່ຽວຂ້ອງກັນໂດຍກົງກັບວັນຂອງອົງພຣະຜູ້ເປັນເຈົ້າ ພຣະເຈົ້າຊົງມີພຣະສັນຍາຜ່ານຜູ້ພຍາກອນໂຢເອນເຖິງການເປີດເຜີຍເປັນພິເສດຂອງພຣະວິນຍານ (ໂຢເອນ 2:28) ຄຳພຍາກອນນີ້ໄດ້ສຳເຣັດໄປແລ້ວເປັນບາງສ່ວນເມື່ອພຣະວິນຍານຫລັ່ງລົງມາໃນວັນເພັນເຕຄໍສະເຕ ແຕ່ຈະເກີດຂຶ້ນຈົນສຳເຣັດສົມບູນອີກເທື່ອນຶ່ງໃນການສຳແດງພຣະຄຸນຂອງພຣະເຈົ້າ ໃນວັນແຫ່ງການສິ້ນສຸດການປະກາດຂ່າວປະເສີດ

ການຕໍ່ສູ້ຄັ້ງຍິ່ງໃຫຍ່ລະຫວ່າງຄວາມດີກັບຄວາມຊົ່ວ ຈະຮຸນແຮງຫລາຍຂຶ້ນເມື່ອໃກ້ວາຣະສຸດທ້າຍ ຕລອດທຸກຍຸກທຸກສມັຍທີ່ຜ່ານມາຄວາມຄຽດແຄ້ນຂອງຊາຕານໄດ້ສະແດງອອກໃຫ້ເຫັນຈາກການຕໍ່ຕ້ານຄຣິສຕະຈັກຂອງພຣະຄຣິດ ແລະພຣະເຈົ້າໄດ້ຊົງປະທານພຣະຄຸນແລະພຣະວິນຍານລົງມາເໜືອປະຊາກອນຂອງພຣະອົງເພື່ອເຮັດໃຫ້ເຂົາມີຄວາມເຂັ້ມແຂງ ທີ່ຈະຕໍ່ສູ້ກັບອຳນາດຂອງມານ ຂນະທີ່ບັນດາສາວົກຂອງພຣະຄຣິດນຳເອົາຂ່າວປະເສີດໄປຍັງຊາວໂລກ ແລະພວກເຂົາຕ່າງກໍໄດ້ຮັບການປະທານຄວາມເຂົ້າໃຈຈາກພຣະວິນຍານ ປາກົດໃຫ້ເຫັນຕັ້ງແຕ່ອະດີດໄປຈົນເຖິງອານາຄົດ ແຕ່ຂນະທີ່ຄຣິສຕະຈັກກ້າວໄປສູ່ການຊ່ວຍກູ້ຄັ້ງສຸດທ້າຍ ຊາຕານກໍຈະໃຊ້ອຳນາດຂອງມັນຢ່າງເຕັມທີ່ ມັນລົງມາ "ດ້ວຍວ່າຄວາມຄຽດອັນໃຫຍ່ ເພາະມັນຮູ້ວ່າເວລາຂອງມັນມີນ້ອຍ" (ພຣະນິມິດ 12:12) ມັນຈະທຳງານ "ພ້ອມດ້ວຍຣິດອຳນາດທຸກຢ່າງ ແລະດ້ວຍໝາຍສຳຄັນກັບການອັສຈັນທີ່ຫລອກລວງ". (2ເທຊະໂລນິກ 2:9) ເປັນເວລາກວ່າ 6000 ປີທີ່ຜູ້ຊັກໃຫຍ້ຢູ່ເບື້ອງຫລັງຊຶ່ງຄັ້ງ ນຶ່ງເຄີຍມີຕຳແໜ່ງສູງສຸດໃນໝູ່ເທວະດາຂອງພຣະເຈົ້າໄດ້ທຳງານແຫ່ງການຫລອກລວງບິດເບືອນແລະທຳລາຍຂອງມັນຢ່າງເຕັມທີ່ຄວາມເລິກລັບຂອງຄວາມຊົ່ວຮ້າຍ ແລະເລ່ຫລ່ຽມຂອງມັນກໍເພີ່ມຫລາຍຂຶ້ນ ຄວາມໂຫດຮ້າຍທັງຫລາຍໄດ້ຮັບການພັດທະນາໃນລະຫວ່າງການຕໍ່ສູ້ດົ້ນຣົນຕລອດການທີ່ຜ່ານມາ ຈະຖືກນຳອອກມາຕໍ່ສູ້ກັບປະຊາກອນຂອງພຣະເຈົ້າໃນຄວາມຂັດແຍ່ງຄັ້ງສຸດທ້າຍນີ້ ແລະໃນເວລາອັນເຕັມໄປດ້ວຍອັນ

ຕຣາຍ ບັນດາຜູ້ຕິດຕາມພຣະຄຣິດຈະຕ້ອງນຳເອົາການຕັກເຕືອນແກ່ຊາວໂລກ ເຖິງການສະເດັດກັບມາຄັ້ງທີ່ສອງຂອງອົງພຣະຜູ້ເປັນເຈົ້າ ແລະປະຊາຊົນທັງປວງຕ້ອງຕຽມຕົວເພື່ອລໍພົບພຣະອົງໃນການສະເດັດມາໂດຍ "ບໍ່ມີຈຸດດ່າງພ້ອຍແລະຂໍ້ຕຳໜິ". (2ເປໂຕ 3:14) ໃນຍຸກນີ້ຄວາມຕ້ອງການຂອງປະທານດ້ານພຣະຄຸນແລະຣິດເດດບໍ່ໄດ້ນ້ອຍໄປກວ່າຄຣິສຕະຈັກໃນສມັຍຂອງອັຄສາວົກເລີຍ

ພາບເຫດການຂອງຄວາມຂັດແຍ້ງອັນຕໍ່ເນື່ອງລະຫວ່າງຄວາມດີ ແລະຄວາມຊົ່ວໄດ້ເປີດເຜີຍແກ່ຜູ້ຂຽນໜັງສືເຫລັ້ມນີ້ ໂດຍຜ່ານການປະທານແສງສວ່າງຂອງພຣະວິນຍານບໍຣິສຸດ ອີກແລ້ວອີກເລົ່າທີ່ພຣະເຈົ້າໄດ້ຮັບອະນຸຍາດໃຫ້ເຫັນກິດຈະການງານໃນຍຸກຕ່າງໆ ຂອງການຕໍ່ສູ້ອັນຍິ່ງໃຫຍ່ລະຫວ່າງພຣະຄຣິດ ເຈົ້າແຫ່ງຊີວິດຜູ້ຊົງປະທານຄວາມລອດໃຫ້ແກ່ເຮົາ ແລະຊາຕານເຈົ້າແຫ່ງຄວາມຊົ່ວຮ້າຍ ຜູ້ສ້າງຄວາມບາບ ຜູ້ທຳອິດທີ່ໄດ້ລ່ວງລະເມີດພຣະບັນຍັດອັນບໍຣິສຸດຂອງພຣະເຈົ້າ ການເປັນສັດຕຣູຂອງຊາຕານ ແລະຕໍ່ສູ້ກັບພຣະຄຣິດໄດ້ສະແດງອອກດ້ວຍການຕໍ່ສູ້ບັນດາຜູ້ຕິດຕາມພຣະອົງ ເປັນຄວາມກຽດຊັງດຽວກັນກັບທີ່ມີຕໍ່ຫລັກການແຫ່ງພຣະ ບັນຍັດຂອງພຣະເຈົ້າ ເປັນນະໂຍບາຍແຫ່ງການຫລອກລວງຢ່າງດຽວກັນ ເຮັດໃຫ້ຄວາມຜິດເບິ່ງເໝືອນເປັນຄວາມຈິງ ເຮັດໃຫ້ກົດໝາຍຂອງມະນຸດເຂົ້າມາແທນພຣະ ບັດຍັດຂອງພຣະເຈົ້າ ແລະມະນຸດຖືກນຳໃຫ້ໄປກາບໄຫວ້ສິ່ງທີ່ຊົງສ້າງແທນພຣະຜູ້ສ້າງສືບຕໍ່ເນື່ອງກັນມາຕລອດຕັ້ງແຕ່ອະດີດ ຄວາມພຍາຍາມຂອງຊາຕານຄືການບິດເບືອນພຣະລັກສະນະຂອງພຣະເຈົ້າ ເປັນເຫດໃຫ້ມະນຸດມີຄວາມຄິດຜິດກ່ຽວກັບພຣະຜູ້ສ້າງ ແລະດ້ວຍເຫດນີ້ຈຶ່ງເຮັດໃຫ້ເກີດຄວາມເກັ່ງກົວແທນຄວາມຮັກ ຄວາມ ພຍາຍາມອຸດສາຫະຂອງມັນກໍຄືການລະຖິ້ມພຣະບັນຍັດຂອງພຣະເຈົ້າເສັຽ ຊັກຊວນໃຫ້ປະຊາຊົນຄິດວ່າເຂົາເປັນອິສຣະຈາກຂໍ້ກຳນົດທັງຫລາຍແລ້ວແລະບັນດາຄົນທີ່ກ້າລຸກຂຶ້ນຕໍ່ສູ້ການຫລອກລວງຂອງມັນກໍຖືກຕິດຕາມໄລ່ລ່າ ກົດຂີ່ຂົ່ມເຫັງຕລອດມານັບຕັ້ງແຕ່ສມັຍບັນພຣະບຸຣຸດ ຜູ້ປະກາດພຣະທັມແລະອັຄສາວົກຜູ້ເສັຽສຣະຊີວິດເພື່ອສາສນາ ແລະນັກປະຕິວັດສາສນາທີ່ມີບັນທຶກໄວ້ໃນປະຫວັດສາດທີ່ຜ່ານມາ

ໃນຄວາມຂັດແຍ່ງອັນຍິ່ງໃຫຍ່ໃນຄັ້ງສຸດທ້າຍນີ້ ຊາຕານຈະນຳເອົາວິທີການຢ່າງດຽວກັນ ການສະແດງອອກຂອງວິນຍານດຽວກັນ ແລະນຳເອົາທາຍານະທີ່ເໝືອນກັບຍຸກກ່ອນນັ້ນມາໃຊ້ອີກເທື່ອນຶ່ງ ສິ່ງທີ່ເຄີຍເກີດຂຶ້ນຈະເກີດຂຶ້ນອີກເທື່ອນຶ່ງນອກຈາກຄວາມລຳບາກຈະມາເຖິງນັ້ນ ຈະມີຄວາມໂຫດຮ້າຍໜ້າຢ້ານຫລາຍຂຶ້ນ ຢ່າງທີ່



## ຕໍ່ຕ້ານການຕີຄວາມໝາຍໃນພຣະຄັມພີແບບສມັຍນິຍົມ

ກ່ຽວກັບຣະບົບການຕີຄວາມໝາຍຂອງພຣະຄັມພີແບບສມັຍນິຍົມ ໂຢເຊບໄດ້ຂຽນໄວ້ວ່າ "ຄຣິສຕະຈັກຂອງຄຣິສະຕຽນສ່ວນໃຫຍ່ໄດ້ຫັນໄປຈາກຄວາມເປັນຈິງຂອງພຣະຄັມພີ ພວກເຂົາສົມມຸດເອົາວ່າຖ້າອ່ານພາສາຂອງ "ຢິວ" ພວກເຂົາກໍຕ້ອງເຂົ້າໃຈຄົນ "ຕ່າງຊາດ" ເມື່ອພວກເຂົາອ່ານເຣື່ອງກຸງ "ເຢຣູຊາເລັມ" ພວກເຂົາຕ້ອງເຂົ້າໃຈ "ຄຣິສຕະຈັກ" ຖ້າມີຂໍ້ຄວາມກ່າວວ່າ "ແຜ່ນດິນ" ກໍໝາຍເຖິງ "ທ້ອງ ຟ້າ" ສຳລັບການສະເດັດມາຂອງ "ອົງພຣະຜູ້ເປັນເຈົ້າ" ພວກເຂົາຈະຕ້ອງເຂົ້າໃຈຄວາມກ້າວໜ້າຂອງ "ສະມາຄົມເຜີຍແຜ່ສາສນາ" ການຂຶ້ນໄປເທິງພູເຂົາແຫ່ງວິຫານຂອງພຣະເຈົ້າໝາຍເຖິງ "ການປະຊຸມຄັ້ງໃຫຍ່ຫລວງຂອງພວກເມທໍດິສທ໌

ຕັ້ງແຕ່ປີ ຄ.ສ 1821 ເຖິງ 1845 ໂຢເຊບໄດ້ເດີນທາງໄປອີຢິບ ອາບິສ ຊີເນັຽ ປາເລສໄຕ໌ ຊີເຣັຽ ເປີເຊັຽ ໂບຄາຣາ ອິນເດັຽ ແລະສະຫະຣັດອະເມຣິກາ

## ຣິດອຳນາດໃນພຣະຄັມພີ

ທ່ານ ດຣ. ໂຢເຊບ ວູບເດີນທາງໄປໃນປະເທດທີ່ປ່າເຖື່ອນໂດຍບໍ່ມີການຄຸ້ມຄອງຕໍ່ຄວາມຍາກລຳບາກຫລາຍຢ່າງແລະຖືກແວດລ້ອມໄປດ້ວຍພັຍອັນຕຣາຍ ເຫລືອທີ່ຈະພັນລະນາໄດ້ ຜະເຊີນກັບຄວາມອຶດຢາກ ຖືກຂາຍເປັນທາດ ຖືກປັບໂຕເຖິງຕາຍສາມຄັ້ງ ຖືກໂຈນປຸ້ນແລະລາງເຫືອເກືອບຕາຍເພາະຄວາມກະຫາຍນ້ຳ ເທື່ອນຶ່ງເພິ່ນຖືກໂຈນຍາດຊີງເຄື່ອງຂອງເພິ່ນໄປໝົດກ້ຽງແລະຖືກຖິ້ມໄວ້ໃຫ້ເດີນທາງຍ່າງດ້ວຍຕີນເປົ່າເປັນໄລຍະທາງຫລາຍຮ້ອຍຫລັກກິໂລຜ່ານພູຜາປ່າດົງຫລາຍໜ່ວຍທີ່ມະຕິກລົງອາບໃບໜ້າຕີນຂອງເພິ່ນເຢັນຊາເພາະນ້ຳແຂງ ຂນະເດີນຢູ່ເທິງພື້ນດິນທີ່ໜາວເຢັນ

ເມື່ອເພິ່ນໄດ້ຮັບຄຳເຕືອນບໍ່ໃຫ້ເດີນທາງໄປໃນເຜົ່າທີ່ປ່າເຖື່ອນ ແລະໂຫດຮ້າຍໂດຍບໍ່ມີອາວຸດຕິດຕົວ ເພິ່ນກ່າວວ່າເພິ່ນມີອາວຸດພ້ອມພຽງຄື "ການອະທິຖານ" ຄວາມມີໃຈຮ້ອນຮົນໃນພຣະຄຣິດການໄວ້ວາງໃຈໃນຄວາມຊ່ອຍເຫລືອຂອງພຣະອົງ

ຂອງຊາຍຊະຣາຄຣິສະຕຽນນັ້ນເປັນຄວາມຈິງຫລື ເພິ່ນຂໍໃຫ້ພໍ່ອະທິບາຍຄຳພະຍາກອນນັ້ນ ແຕ່ພໍ່ບໍ່ຍອມຕອບຈຶ່ງເຮັດໃຫ້ໃຈໂຢເຊບບໍ່ກ້າເວົ້າເຖິງເຣື່ອງນີ້ອີກເລີຍ

ເມື່ອໂຢເຊບອາຍຸໄດ້ສິບເອັດປີ ເພິ່ນໄດ້ເດີນທາງອອກໄປໃນໂລກກວ້າງເພື່ອສະແຫວງຫາການສຶກສາເພື່ອເລືອກນັບຖືສາສນາແລະຫາງານເຮັດລ້ຽງຊີບດ້ວຍຕົນເອງໂດຍບໍ່ມີເງິນຈຶ່ງຕ້ອງຫາທາງເອົາເອງ ເພິ່ນສຶກສາຮ່ຳຮຽນຢ່າງຂຍັນໝັ່ນພຽນທຳງານຫາເງິນດ້ວຍການສອນໜັງສືພາສາເຮັບເຣີ ມີຄົນຊັກຊວນໃຫ້ເພິ່ນຍອມຮັບຄວາມເຊື່ອຂອງຄຣິສຕະຈັກໂຣມັນຄາທໍລິກ ເພິ່ນຈຶ່ງຖືກສົ່ງໃຫ້ໄປຮຽນທີ່ວິທະຍາລັຍໂປຣປາກັນດາໃນກຸງໂຣມໃນວິທະຍາລັຍນີ້ເອງທີ່ໂຢເຊບໄດ້ໂຈມຕີຄຣິສຕະຈັກໂຣມັນຢ່າງເປີດເຜີຍເຖິງການກະທຳໃນທາງຜິດແລະແນະໃຫ້ມີການປະຕິຮູບຫລືປັ່ງແປງແກ້ໄຂໃໝ່ ຫລັງຈາກນັ້ນບໍ່ນານເພິ່ນກໍຈຳຕ້ອງອອກຈາກກຸງໂຣມ ທຸກຄົນກໍປະຈັກແລ້ວວ່າບໍ່ມີໃຜບັງຄັບໃຫ້ໂຢເຊບຢູ່ພາຍໃຕ້ອຳນາດຄວາມເຊື່ອຂອງໂຣມັນໄດ້ໂຣມໄດ້ປະກາດວ່າບໍ່ມີໃຜ ບັງຄັບເພິ່ນໄດ້ຈຶ່ງປ່ອຍເປັນອິສະຣະຕາມຄວາມຕ້ອງການເພິ່ນເດີນທາງໄປຍັງປະເທດອັງກິດແລະເຂົ້າເປັນສາມາຊິກຂອງໂບດອັງກິດ ພາຍຫລັງຈາກທີ່ໄດ້ສຶກສາຮ່ຳຮຽນຢູ່ສອງປີ ເພິ່ນໄດ້ອອກເດີນທາງໄປປະຕິບັດໜ້າທີ່ໃນປີ ຄ.ສ 1821

ໂຢເຊບ ເຫັນດ້ວຍວ່າຄຳພະຍາກອນໄດ້ກ່າວເຖິງການສະເດັດມາຄັ້ງທີ່ສອງຂອງພຣະຄຣິດດ້ວຍພຣະສງ່າຣາສີອັນຣິດທານຸພາບ ຂນະທີ່ເພິ່ນສແວງຫາວິທີທີ່ຈະນຳປະຊາຊົນໃຫ້ມາຫາພຣະເຢຊູແຫ່ງນາຊາເຣັດ ພຣະເມຊີອາ ທີ່ຊົງສັນຍາໄວ້ແລະຊີ້ໃຫ້ພວກເຂົາເຫັນເຖິງການສະເດັດມາຄັ້ງທຳອິດຂອງພຣະອົງເພື່ອໄຖ່ບາບເພິ່ນສອນກ່ຽວກັບການສະເດັດມາຄັ້ງທີ່ສອງຂອງພຣະອົງດ້ວຍ

ໂຢເຊບ ເຊື່ອວ່າການສະເດັດຂອງອົງພຣະຜູ້ເປັນເຈົ້ານັ້ນໃກ້ເຂົ້າມາແລ້ວການຕີຄວາມໝາຍໄລຍະເວລາຂອງຄຳພະຍາກອນຂອງເພິ່ນຢູ່ໃນລະຫວ່າງສອງສາມປີໃກ້ຄຽງກັບທີ່ມິນເລີໄດ້ກຳນົດໄວ້ "ອົງພຣະຜູ້ເປັນເຈົ້າບໍ່ໄດ້ປະທານໝາຍສຳຄັນເພື່ອບອກໃຫ້ຮູ້ວ່າເວລາພຣະອົງໃກ້ຈະສະເດັດມາ ເໝືອນຢ່າງທີ່ເຮົາຮູ້ວ່າຣະດູຮ້ອນໃກ້ເຂົ້າມາແລ້ວ ໂດຍສັງເກດຈາກການໃບໝາກເດືອເທດປົ່ງຢ່າງນັ້ນຫລືພຽງພໍແນ່....ເຮົາຈະຮູ້ໄດ້ໂດຍເຄື່ອງໝາຍແຫ່ງເວລາທີ່ຈະຊ່ອຍໃຫ້ຕຽມຕົວພ້ອມສຳລັບການສະເດັດມາຂອງພຣະອົງເໝືອນໂນອາໄດ້ຕຽມເຮືອ



ມະນຸສໂລກບໍ່ເຄີຍເຫັນມາກ່ອນ ການຫລອກລວງຂອງຊາຕານຈະມີເລ່ຫລ່ຽມສໍ້ໂກງຫລາຍຂຶ້ນ ການຈູ່ໂຈມຂອງມັນຈະໃຊ້ຄວາມພຍາຍາມຕັ້ງໃຈຫລາຍຂຶ້ນ ເພື່ອຖ້າເປັນໄປໄດ້ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງ. (ມາຣະໂກ 13:22)

ຂນະທີ່ພຣະວິນຍານຂອງພຣະເຈົ້າຊົງເປີດຈິດໃຈຂອງຂ້າພະເຈົ້ານັ້ນ ຂ້າພະເຈົ້າກໍໄດ້ເຫັນຄວາມຈິງອັນຍິ່ງໃຫຍ່ໃນພຣະທັມຂອງພຣະເຈົ້າແລະພາບເຫດການຕ່າງໆ ທັງທີ່ເກີດຂຶ້ນໃນອະດີດແລະທີ່ຈະເກີດຂຶ້ນໃນອະນາຄົດ ຂ້າພະເຈົ້າໄດ້ຮັບການບອກເລົ່າໃຫ້ນຳເອົາສິ່ງທີ່ໄດ້ຮັບການເປີດເຜີຍນີ້ໄປແຈ້ງໃຫ້ແກ່ທຸກຄົນໄດ້ຮູ້ ໃຫ້ບັນທຶກເຣື່ອງຣາວຂອງການຕໍ່ສູ້ນັບຕັ້ງແຕ່ອະດີດ ແລະໂດຍສະເພາະຢ່າງຍິ່ງໃຫ້ນຳສເນີເຣື່ອງຣາວເຫລົ່ານີ້ເພື່ອເປັນແສງສວ່າງໃຫ້ເຫັນເຖິງຄວາມຂັດແຍ່ງທີ່ກຳລັງຈະເກີດຂຶ້ນໃນອະນາຄົດ ເປົ້າໝາຍກໍເພື່ອສະແດງໃຫ້ເຫັນເຖິງຄວາມເຊື່ອຖືໃນສິ່ງເຫລົ່ານີ້ ຂ້າພະເຈົ້າໄດ້ພຍາຍາມຄັດເລືອກແລະຮວບຮວມພາບເຫດການຕ່າງໆ ທີ່ເກີດຂຶ້ນໃນປະຫວັດສາດຂອງຄຣິສຕະຈັກ ເພື່ອໃຫ້ເຖິງການທົດສອບຄວາມຈິງອັນຍິ່ງໃຫຍ່ໃນຍຸກສມັຍທີ່ແຕກຕ່າງກັນໃຫ້ແກ່ມະນຸສໂລກທີ່ບັນທຶກໄວ້ໂດຍບໍ່ມີອັນໃດມາປິດບັງໄດ້ ກາຍເປັນສິ່ງທີ່ກະຕຸ້ນຄວາມຄຽດແຄ້ນແກ່ຊາຕານ ແລະສ້າງສັດຕຣູກັບຄຣິສຕະຈັກທີ່ຮັກໂລກ ສິ່ງເຫລົ່ານີ້ໄດ້ຮັບການຮັກສາເອົາໄວ້ໂດຍບັນດາພຍານທັງຫລາຍຜູ້ "ບໍ່ໄດ້ເສັຽດາຍທີ່ຈະສະລະຊີວິດຂອງຕົນ"

ໃນບັນທຶກນີ້ເປັນລາງບອກເຫດໃຫ້ເຮົາໄດ້ເຫັນຄວາມຂັດແຍ່ງທີ່ຈະເກີດຂຶ້ນຫາກມອງດ້ວຍແສງສວ່າງທີ່ມາຈາກພຣະທັມຂອງພຣະເຈົ້າແລະໂດຍການໃຫ້ຄວາມກະຈ່າງແຈ້ງຈາກພຣະວິນຍານຂອງພຣະອົງ ເຮົາຈະໄດ້ເຫັນຄວາມຫລອກລວງໂດຍບໍ່ມີອັນໃດປິດບັງຂອງຜູ້ຊົ່ວຮ້າຍແລະອັນຕຣາຍຕ່າງໆ ທີ່ຈະຕ້ອງຫລົບຫລີກ ເພື່ອຈະໄດ້ພົບວ່າເປັນຜູ້ທີ່ "ບໍ່ດ່າງພ້ອຍເລີຍ" ໃນວັນສະເດັດມາຂອງອົງພຣະຜູ້ເປັນເຈົ້າ

ເຫດການອັນຍິ່ງໃຫຍ່ທີ່ໄດ້ສ້າງຄວາມກ້າວໜ້າຂອງການປະຕິວັດໃນອະດີດໄດ້ຢ່າງຊັດເຈນ ເປັນເຣື່ອງຣາວທີ່ຢູ່ໃນປະຫວັດສາດ ອັນເປັນທີ່ຮູ້ກັນດີ ແລະເປັນທີ່ຍອມຮັບກັນໃນແວດວົງໂປແຕສແຕນ ເປັນຄວາມຈິງທີ່ບໍ່ມີຜູ້ໃດສາມາດໂຕ້ແຍ່ງໄດ້ປະຫວັດສາດເຫລົ່ານີ້ຂ້າພະເຈົ້າໄດ້ນຳມາກ່າວພຽງສັ້ນໆ ເປັນໄປຕາມຂອບເຂດເນື້ອຫາຂອງໜັງສື ແລະບັນທຶກຫຍໍ້ເຫລົ່ານີ້ຈຳເປັນຈະຕ້ອງໄດ້ຮັບຄວາມສົນໃຈ ຄວາມເປັນຈິງທັງຫລາຍໄດ້ຖືກຫຍໍ້ລົງເພື່ອໃຫ້ເໝາະກັບເນື້ອຫາແລະຄວາມເຂົ້າໃຈຕາມປໂຍດທີ່ຈະໄດ້ຮັບ ໃນບາງກໍຣະນີທີ່ນັກປະຫວັດສາດໄດ້ຮວບຮວມເອົາເຫດການ

ເຫລົ່ານັ້ນເຂົ້າໄວ້ດ້ວຍກັນ ຂ້າພະເຈົ້າກໍຈະກ່າວພຽງຄ່າວໆ ເປັນການສລຸບເບື້ອງ ຫລັງຂອງຫົວຂໍ້ນັ້ນໆ ຫລື ຫຍໍ້ລາຍລະອຽດລົງມາເພື່ອໃຫ້ສະດວກຂື້ນ ແລະຈະອ້າງຖ້ອຍຄໍາຂອງນັກຂຽນເຫລົ່ານັ້ນລົງມາດ້ວຍ ແຕ່ໃນບາງກໍຣະນີທີ່ບໍ່ໄດ້ອ້າງຊື່ຜູ້ຂຽນ ຫລື ບາງກໍຣະນີທີ່ບໍ່ໄດ້ບັນທຶກຊື່ຜູ້ຂຽນ ຫລື ໃນກໍຣະນີທີ່ບໍ່ໄດ້ກ່າວນາມຂອງຜູ້ຂຽນຕາມຂໍ້ອ້າງອີງກໍເພາະເຣື່ອງຣາວເຫລົ່ານັ້ນເປັນທີ່ຮູ້ຈັກ ແລະຍອມຮັບກັນດີຢູ່ແລ້ວ ສໍາລັບຊື່ຜູ້ຂຽນຄວາມຄິດເຫັນຂອງຜູ້ທີ່ຍັງເຮັດໜ້າທີ່ໃນການປະຕິຮູບໃນສມັຍຂອງເຮົາກໍໄດ້ໃຊ້ຫລັກການດຽວກັນກັບນັກຂຽນທ່ານອື່ນໆດ້ວຍ

ຈຸດມຸ້ງໝາຍຂອງໜັງສືເຫລັ້ມນີ້ບໍ່ຕ້ອງການນໍາສເໜີຄວາມຈິງໃໝ່ກ່ຽວກັບຄວາມທຸກຍາກລໍາບາກຂອງບຸກຄົນໃນອະດີດ ແຕ່ເປັນການນໍາເອົາຄວາມຈິງທັງຫລາຍແລະຫລັກການທີ່ມີສ່ວນສນັບສໜູນພາບເຫດການທີ່ກໍາລັງຈະເກີດຂື້ນອອກມາສະແດງໃຫ້ເຫັນ ຢ່າງໃດກໍຕາມກໍຊ່ວຍທົບທວນໃຫ້ເຫັນການຕໍ່ສູ້ລະຫວ່າງກອງທັບຂອງຄວາມສວ່າງແລະຄວາມມືດ ບັນທຶກເຣື່ອງຣາວໃນອະດີດຈຶ່ງມີຄວາມສໍາຄັນຫລາຍຍິ່ງຂື້ນ ແລະເຫດການເຫລົ່ານີ້ເປັນແສງສວ່າງທີ່ຊີ້ໃຫ້ເຫັນສິ່ງທີ່ຈະເກີດຂື້ນໃນອະນາຄົດ ສ້າງຄວາມກະຈ່າງແກ່ທົນທາງເພື່ອໃຫ້ຜູ້ທີ່ຈະເຮັດການເໝືອນນັກປະຕິວັດໃນອະດີດຖືກຮຽກອອກມາ ເຖິງຈະຕ້ອງສູນເສັຽທຸກຢ່າງໃນໂລກເພື່ອເປັນພຍານ "ເນື່ອງດ້ວຍພຣະທັມຂອງພຣະເຈົ້າ ແລະເນື່ອງດ້ວຍການເປັນພຍານຝ່າຍພຣະເຢຊູ"

ຈຸດມຸ້ງໝາຍຂອງໜັງສືເຫລັ້ມນີ້ກໍເພື່ອເປີດເຜີຍພາບເຫດການຕ່າງໆ ຂອງການຕໍ່ສູ້ອັນຍິ່ງໃຫຍ່ລະຫວ່າງຄວາມຈິງແລະຄວາມເທັດ ເພື່ອເປີດເຜີຍເລ່ເພທຸບາຍຂອງຊາຕານ ແລະເຈຕະນາຂອງມັນເພື່ອງານແຫ່ງການຕໍ່ສູ້ຂັດຂວາງຂອງມັນເປັນຜົນສໍາເຣັດ ເພື່ອເປັນການນໍາສເໜີຄໍາຕອບທີ່ເພິ່ງພໍໃຈສໍາລັບທາງແກ້ໄຂບັນຫາຄວາມຊົ່ວຮ້າຍສ່ອງສວ່າງໃຫ້ເຫັນເຖິງຈຸດເລີ່ມຕົ້ນແລະບົດສຸດທ້າຍໃນຈຸດປະສົງຂອງຄວາມບາບ ເພື່ອເປີດເຜີຍຄວາມຍຸດຕິທັມ ແລະຄວາມເມດຕາກະຣຸນາຂອງພຣະເຈົ້າທີ່ຊົງຈັດການກັບສິ່ງທີ່ພຣະອົງຊົງສ້າງທຸກສິ່ງຢ່າງເຕັມທີ່ ແລະເພື່ອສະແດງເຖິງຄວາມບໍຣິສຸດລັກສະນະພຣະບັນຍັດຂອງພຣະເຈົ້າ ແລະດ້ວຍແຮງຈູງໃຈຂອງໜັງສືເຫລັ້ມນີ້ ກໍເຊື່ອວ່າຈິດວິນຍານອີກເປັນຈໍານວນຫລາຍອາດຈະໄດ້ຮັບການປົດປ່ອຍອອກຈາກອໍານາດແຫ່ງຄວາມມືດ ແລະຈະ "ເຂົ້າສ່ວນໄດ້ຮັບມໍຣະດົກດ້ວຍກັນກັບຜູ້ຮັບໃຊ້ໃນຄວາມສວ່າງ" ຄໍາອະທິຖານວິງວອນຂອງຜູ້ຂຽນກໍຄື ເພື່ອການສັນລະເສີນພຣະອົງ ຜູ້ຊົງຮັກເຮົາທັງຫລາຍແລະຊົງປະທານພຣະອົງເອງເພື່ອເຮົາ



ຈະແຈ້ງວ່າ ວາຣະສຸດທ້າຍໃກ້ເຂົ້າມາແລ້ວ ບັນດາຄຣິສະຕຽນໄດ້ປຶກຕົວອອກຈາກສັງຄົມເພື່ອສຶກສາພຣະທັມຂອງພຣະເຈົ້າຢ່າງເອົາຈິງເອົາຈັງ ຈົນກະທັ່ງມີຄວາມເຊື່ອວ່າພຣະຜູ້ຊ່ອຍໃຫ້ລອດຈວນຈະສະເດັດກັບມາແລ້ວ

ສາມປີພາຍຫລັງຈາກທີ່ມິນເລີ ໄດ້ອະທິບາຍກ່ຽວກັບຄໍາພະຍາກອນນີ້ ດຣ. ໂຢເຊບ ວູບ "ຜູ້ເຜີຍແຜ່ສາສນາທົ່ວໂລກ" ໄດ້ເລີ່ມປະກາດຂ່າວການສະເດັດກັບມາຂອງອົງພຣະຜູ້ເປັນເຈົ້າ ດຣ. ວູບໄດ້ເກີດໃນປະເທດເຢັຽຣະມັນ ບິດາມານດາເປັນຄົນຊາດຢິວ ເມື່ອຍັງເຍົາໄວໜຸ່ມເຊື່ອຄວາມຈິງຂອງຄຣິສຕະສາສນາ ເພິ່ນມັກຟັງພວກຜູ້ໃຫຍ່ຊາວຢິວທີ່ເຄັ່ງທາງສາສນາມາປະຊຸມສົນທະນາກັນໃນບ້ານຂອງເພິ່ນດ້ວຍຄວາມຕັ້ງໃຈ ເພື່ອສົນທະນາກັນເຖິງເຣື່ອງຄວາມຫວັງຂອງປະຊາຊົນກ່ຽວກັບການສະເດັດມາດ້ວຍສະງ່າຣາສີຂອງພຣະເມຊີອາແລະການກູ້ແຜ່ນດິນຂອງອິສຣາເອນ ວັນນຶ່ງເພິ່ນໄດ້ຍິນການສົນທະນາເຖິງພຣະເຢຊູຊາວນາຣາເຣັດ ເດັກຊາຍກໍຖາມຂື້ນວ່າເຢຊູຄືຜູ້ໃດ ພວກເຂົາຕອບວ່າ "ພຣະອົງເປັນຊາວຢິວຜູ້ມີຄວາມສາມາດທີ່ຍິ່ງໃຫຍ່ທີ່ສຸດຄົນນຶ່ງ ແຕ່ເມື່ອອ້າງວ່າພຣະອົງເປັນພຣະເມຊີອາ ພວກຢິວຈຶ່ງຕັດສິນປະຫານພຣະອົງເຖິງຕາຍ" ໂຢເຊບຖາມອີກວ່າ "ເປັນຫຍັງ ກຸງເຢຣູຊາເລັມຈຶ່ງຖືກທໍາລາຍແລະເປັນຫຍັງເຮົາຈຶ່ງຕົກເປັນຊະເລີຍ"

ບິດາຂອງໂຢເຊບຕອບລາວວ່າ "ອະນິຈາເພາະພວກຢິວຂ້າບັນດາຜູ້ປະກາດພຣະທັມ" ເດັກຊາຍກໍເກີດຄວາມຄິດຂື້ນໃນໃຈວ່າ "ບາງທີພຣະເຢຊູເປັນຜູ້ປະກາດພຣະທັມດ້ວຍແລະພວກຢິວຂ້າພຣະອົງທັງທີ່ພຣະອົງເປັນຜູ້ບໍຣິສຸດ" ເຖິງແມ່ນວ່າບິດາຂອງເພິ່ນຫ້າມບໍ່ໃຫ້ເຂົ້າໂບດຂອງຄຣິສະຕຽນ ໂຢເຊບກໍມັກຈະຢືນຢູ່ຂ້າງນອກໂບດຟັງຄໍາເທສນາເມື່ອອາຍຸໄດ້ພຽງເຈັດປີເພິ່ນໄດ້ເວົ້າໂອ້ອວດໃຫ້ເພື່ອນບ້ານທີ່ເປັນຄຣິສະຕຽນຟັງເຖິງເຣື່ອງຊັຍຊະນະໃນອານາຄົດຂອງອິສຣາເອນ ເມື່ອພຣະເມຊີອາສະເດັດກັບມາຊາຍຊະຣາຄົນນຶ່ງຈຶ່ງເວົ້າດ້ວຍຄວາມເມດຕາວ່າ "ບັກຫລ້າເອີຍ" ພໍ່ຕູ້ຈະບອກເຈົ້າໃຫ້ຮູ້ວ່າ ພຣະເມຊີອາທີ່ແທ້ຄືຜູ້ໃດ ພຣະອົງຖືກຄຶງທີ່ໄມ້ກາງແຂນເຈົ້າຈົ່ງກັບໄປບ້ານແລ້ວເປີດ ອ່ານພຣະທັມເອຊາຢາບົດທີ່ 53 ແລ້ວເຈົ້າຈະເຊື່ອວ່າພຣະເຢຊູຄຣິດຄືພຣະບຸດຂອງພຣະເຈົ້າ"

ໂຢເຊບກັບໄປບ້ານແລ້ວອ່ານພຣະຄັມພີ ເພິ່ນມີຄວາມສົງສັຍວ່າຄໍາພະຍາກອນກ່ຽວກັບພຣະເມຊີອາສໍາເຣັດຈິງໃນພຣະເຢຊູຊາວນາຊາເຣັດໄດ້ຢ່າງໃດ ຄໍາເວົ້າ

ຂ່າວນີ້ເປັນສ່ວນນຶ່ງຂອງຂ່າວປະເສີດຊຶ່ງຈະປະກາດໃນຍຸກສຸດທ້າຍເທົ່ານັ້ນ ເມື່ອເວລາກຳນົດ "ການພິພາກສາ" ມາເຖິງແລ້ວ ສ່ວນນຶ່ງຂອງຄຳພະຍາກອນກ່ຽວກັບຍຸກສຸດທ້າຍ ທີ່ເທວະດາໄດ້ໃຫ້ດານີເອນປິດແລະຕີຕາປະທັບໄວ້ "ຈົນເຖິງວັນສຸດທ້າຍ" (ດານີເອນ 12:14) ຈົນກະທັ່ງເຖິງເວລານີ້ຂ່າວກ່ຽວກັບການພິພາກສາຈຶ່ງປະກາດອອກມາຊຶ່ງຕັ້ງຢູ່ເທິງພື້ນຖານຂອງຄວາມສຳເຣັດຂອງຄຳພະຍາກອນນີ້

ໂປໂລໄດ້ເຕືອນຄຣິສຕະຈັກບໍ່ໃຫ້ເຝົ້າລໍຄອຍຖ້າການສະເດັດມາຂອງພຣະຄຣິດໃນສມັຍຂອງເພິ່ນຈົນກວ່າຈະມີການລະຖິ້ມຄວາມເຊື່ອຄັ້ງໃຫຍ່ຫລວງແລະຫລັງຈາກການປົກຄອງເປັນເວລາດົນນານຂອງ "ຄົນນອກກົດໝາຍ" (ເບິ່ງ 2ເທຊະໂລນິກ 2:3) ຈາກນັ້ນຈຶ່ງຈະລໍຄອຍການສະເດັດກັບມາຂອງອົງພຣະຜູ້ເປັນເຈົ້າ "ຄົນນອກກົດໝາຍ" ຊຶ່ງມີຊື່ອີກວ່າ "ຄົນຊົ່ວຮ້າຍ" "ການກະທຳນອກກົດໝາຍອັນໜ້າສະອິດສະເອືອນ" "ລູກແຫ່ງຄວາມພິນາດຈິບຫາຍ" ເປັນເຄື່ອງໝາຍເລັງເຖິງສັນຕະປາປາຊຶ່ງມີອຳນາດປົກຄອງເປັນໄລຍະເວລາ 1,260 ປີ ໄລຍະເວລານີ້ໄດ້ສິ້ນສຸດລົງໃນປີ ຄ.ສ 1798 ການສະເດັດມາຂອງພຣະຄຣິດຈະບໍ່ເກີດຂຶ້ນ ກ່ອນໜ້ານັ້ນໂປໂລໄດ້ບອກໃຫ້ຄົນທັງຫລາຍຮູ້ເຖິງເຫດການທັງໝົດກ່ຽວກັບຄຣິສະຕຽນເກີດຂຶ້ນເປັນລຳດັບຕິດຕໍ່ກັນມາຈົນເຖິງປີ ຄ.ສ 1798 ພາຍຫລັງປີນີ້ແລ້ວຈຶ່ງມີການປະກາດຂ່າວການສະເດັດມາຄັ້ງທີ່ສອງຂອງພຣະຄຣິດ

ທຸກຍຸກສມັຍທີ່ຜ່ານມາບໍ່ເຄີຍມີໃຜປະກາດຂ່າວນີ້ເລີຍ ດັ່ງທີ່ເຮົາຮູ້ແລ້ວວ່າອັຄສາວົກໂປໂລກໍບໍ່ໄດ້ເທສນາສັ່ງສອນຂ່າວນີ້ເພິ່ນໄດ້ຊີ້ແຈງໃຫ້ຮູ້ວ່າການສະເດັດກັບມາຂອງພຣະເຈົ້າຍັງຢູ່ຫ່າງໄກຫລາຍ ນັກປະຕິຮູບສາສນາກໍບໍ່ໄດ້ປະກາດຂ່າວນີ້ ມາຕິນລູເທີກ່າວວ່າ ການພິພາກສາໂລກຈະເກີດຂຶ້ນປະມານ 300 ປີ ຫລັງຈາກສມັຍຂອງເພິ່ນ "ນັບຕັ້ງແຕ່ປີ ຄ.ສ 1798 ໜັງສືດານີເອັນໄດ້ຖືກເປີດເຜີຍອອກ ຄົນຈຳນວນຫລາຍໄດ້ປະກາດຂ່າວການພິພາກສາໂລກໃກ້ມາເຖິງແລ້ວ

## ເກີດຂຶ້ນພ້ອມກັນໃນປະເທດຕ່າງໆ

ເຊັ່ນດຽວກັບການປະຕິຮູບສາສນາໃນສມັຍສັດຕະວັດທີ່ 16 ຂ່າວການສະເດັດມາຄັ້ງທີ່ສອງຂອງພຣະຄຣິດກໍເກີດຂຶ້ນໃນປະເທດຕ່າງໆ ໃນເວລາດຽວກັນບັນດາຜູ້ມີຄວາມເຊື່ອໄດ້ສຶກສາຄຳພະຍາກອນແລະໄດ້ພົບຫລັກຖານທີ່ສະແດງໃຫ້ເຫັນຢ່າງ



ໝາຍເຫດ ເນື່ອງຈາກເນື້ອທີ່ອັນຈຳກັດ ຜູ້ແປແລະຜູ້ຈັດພິມຈຶ່ງບໍ່ໄດ້ໃສ່ຊື່ໜັງສືອ້າງອີງ ຜູ້ສົນໃຈອາດຈະຫາເບິ່ງໄດ້ຈາກຕົ້ນສະບັບພາສາອັງກິດ

## ສາຣະບານ


| ບົດທີ່ | ຊື່ເຣື່ອງ | ໜ້າ |
|---|---|---|
| 1. | ການທຳນວາຍຊະຕາກັມຂອງໂລກ | 14 |
| 2. | ຄຣິສະຕຽນກຸ່ມທຳອິດທີ່ສັດຊື່ແລະຈົງຮັກພັກດີ | 26 |
| 3. | ຄວາມມືດທາງຈິດວິນຍານໃນຄຣິສຕະຈັກຍຸກທຳອິດ | 33 |
| 4. | ວອນເດນຜູ້ພິທັກຄວາມເຊື່ອ | 43 |
| 5. | ແສງສວ່າງສ່ອງປະກາຍປະເທດອັງກິດ | 56 |
| 6. | ສອງວິພະບຸຣຸດຜະເຊີນກັບຄວາມຕາຍ | 69 |
| 7. | ມາຕິນລູເທີບຸຣຸດຜູ້ເໝາະສົມກັບເວລາ | 88 |
| 8. | ຜູ້ຊະນະແຫ່ງຄວາມຈິງ | 107 |
| 9. | ແສງສວ່າງຖືກຈູດຂຶ້ນໃນສະວິດເຊີແລນ | 129 |
| 10. | ຄວາມກ້າວໜ້າໃນເຢຣະມັນ | 139 |
| 11. | ຄຳຂັດຄ້ານຂອງເຈົ້ານາຍເຢຣະມັນ | 149 |
| 12. | ອະລຸນເບີກຟ້າໃນຝຣັ່ງເສດ | 159 |
| 13. | ໃນປະເທດເນີເທີແລນ ແລະສະແກນດີເນເວັຽ | 179 |
| 14. | ຄວາມຮຸ່ງເຮືອງຂອງຄວາມເປັນຈິງໃນອັງກິດ | 185 |
| 15. | ເຫດຂອງຄວາມໂຫດຮ້າຍໃນຝຣັ່ງເສດ | 199 |
| 16. | ສະແຫວງຫາອິເສຣີພາບໃນໂລກໃໝ່ | 216 |

17. ພຣະສັນຍາແຫ່ງການສະເດັດກັບມາຂອງພຣະຄຣິດ 224
18. ຄວາມສວ່າງໃໝ່ໃນໂລກໃໝ່ 235
19. ເປັນຫຍັງຈຶ່ງກາຍເປັນຜິດຫວັງຄັ້ງຍິ່ງໃຫຍ່ 254

ບົດທີ 1

## ການທຳນວາຍຊະຕາກັມຂອງໂລກ

**ຈາກຈອມຍອດຂອງພູໝາກກອກເທດ ພຣະເຢຊູຊົງທອດພຣະເນດມາເບິ່ງກຸງເຢຣູຊາເລັມ ພຣະອົງເຫັນພຣະວິຫານຢ່າງຊັດເຈນ ຂນະທີ່ແສງພຣະອາທິດສ່ອງປະກາຍສະທ້ອນກຳແພງຫີນອ່ອນຂາວເໝືອນຫິມະ ຍອດອາຄານກໍທໍແສງສີທອງອັນເຫລືອງອະຫລ່າມ ຊາວອິສາຣະເອນເມື່ອມອງເຫັນພາບນີ້ກໍຈະເກີດຄວາມຕື່ນເຕັ້ນແລະພໍໃຈ ແຕ່ສຳລັບພຣະເຢຊູຊົງມີຄວາມຮູ້ສຶກທີ່ຕົງກັນຂ້າມ "ເມື່ອພຣະອົງສະເດັດມາໃກ້ແລະເຫັນກຸງແລ້ວ ກໍຊົງພຣະກັນແສງເພາະສົງສານກຸງນັ້ນ" (ລູກາ 19:41)**

**ພຣະເຢຊູຊົງກັນແສງບໍ່ໃຊ່ເພື່ອພຣະອົງເອງ ເຖິງແມ່ນວ່າເຫດການທີ່ພຣະອົງຈະຕ້ອງທົນທຸກທໍຣະມານໃນສວນເກດເຊມະເນ ແລະການຖືກຄຶງເທິງໄມ້ກາງແຂນກຳລັງລໍຢູ່ເບື້ອງໜ້າ ແຕ່ພາບເຫດການເຫລົ່ານີ້ບໍ່ໄດ້ເຮັດໃຫ້ຊົ່ວໂມງແຫ່ງຄວາມຊົມຊື່ນຍິນດີຂອງພຣະອົງສິ້ນສຸດໄປ ແຕ່ພຣະອົງຊົງກັນແສງເພາະເຄາະກັມຂອງປະຊາຊົນນັບພັນໆຄົນໃນກຸງເຢຣູຊາເລັມຈະຕ້ອງໄດ້ຮັບ**

**ປະຫວັດສາດອັນຍາວນານກວ່ານຶ່ງພັນປີ ທີ່ສະແດງໃຫ້ເຫັນເຖິງຄວາມຮັກແລະຄວາມຫ່ວງໃຍຂອງພຣະເຈົ້າ ທີ່ມີຕໍ່ປະຊາກອນທີ່ຊົງເລືອກສັນໄດ້ເປີດອອກຕໍ່ພຣະເນດຂອງພຣະເຢຊູ ກຸງເຢຣູຊາເລັມໄດ້ເປັນນະຄອນທີ່ຖວາຍກຽດແດ່ພຣະເຈົ້າເໜືອເມືອງໃດໃນໂລກ ພຣະເຈົ້າຊົງ "ເລືອກເຟັ້ນເອົາພູສີໂອນຢາກຕັ້ງເອົາພູນີ້ໃຫ້ເປັນທີ່ປະທັບຂອງພຣະເຈົ້າ" (ເພງສັນລະເສີນ 132:13) ຜູ້ປະກາດພຣະທັມໄດ້**



ກາງ ເພື່ອປະກາດວ່າພຣະເຢຊູຄຣິດຈະສະເດັດກັບມາຄັ້ງທີ່ສອງ ໃນປີ 1847 ພຣະອົງຈະສະເດັດມາຄອບຄອງກຸງເຢຣູຊາເລັມ 1,000 ປີ ແມ່ນວ່າຄວາມເຊື່ອຂອງເພິ່ນຈະແຕກຕ່າງໄປຈາກກຸ່ມຂອງມິນເລີ ແຕ່ເພິ່ນກໍ່ມີຄວາມໝັ້ນຄົງໃນການປະກາດ

ໃນອະເມຣິກາໃຕ້ ກໍມີນັກເທດຄາທໍລິກຊື່ບາດຫລວງມານູເອນ ລາຄູນຊາ (ຄ.ສ 1731 - 1801) ຄະນະເຢຊູອິດໄດ້ຂຽນໜັງສືກ່ຽວກັບການສະເດັດມາຄັ້ງທີ່ສອງຂອງພຣະເຢຊູ ໃນອັງກິດກໍມີສາສນາຈານປະກາດເຣື່ອງການສະເດັດກັບມາຂອງພຣະເຢຊູ ທັງຍຸໂຣບແລະສເກນດິເນເວັຽຂ່າວດີນີ້ກໍກະຈາຍໄປທົ່ວ ເກີດການຕື່ນຕົວຂອງຄຣິສະຕຽນທຸກຫົນທຸກແຫ່ງ

**ບົດທີ 20**

## ຄອຍຖ້າການສະເດັດກັບມາຂອງພຣະຄຣິດດ້ວຍຄວາມຮັກ

ການຕື່ນຕົວດ້ານສາສນາຄັ້ງໃຫຍ່ຫລວງໄດ້ກ່າວໄວ້ແລ້ວໃນຂ່າວຂອງເທວະດາອົງທີ່ນຶ່ງໃນພຣະນິມິດບົດທີ່ 14 ອັຄສາວົກໂຢຮັນໄດ້ເຫັນເທວະດາບິນໄປ "ໃນທ້ອງຟ້າມີຂ່າວປະເສີດອັນຕລອດໄປເປັນນິດເພື່ອນຳໄປປະກາດແກ່ຊາວໂລກທັງປວງ ທຸກປະເທດ, ທຸກຕະກຸນ, ທຸກພາສາ, ແລະທຸກຊາດ. ເທວະດາຕົນນັ້ນໄດ້ຮ້ອງສຽງດັງຂຶ້ນວ່າ "ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດແດ່ພຣະອົງເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວແລະຈົ່ງນະມັດສະການພຣະອົງຜູ້ຊົງສ້າງຟ້າສວັນ, ແຜ່ນດິນໂລກ, ນ້ຳທະເລ, ກັບນ້ຳພຸທັງຫລາຍ" (ພຣະນິມິດ 14:6,7)

ເທວະດາເປັນຕົວແທນລັກສະນະຂອງງານທີ່ໜ້າຍົກຍ້ອງເຊີດຊູທີ່ຕ້ອງເຮັດໃຫ້ສຳເຣັດຄືການປະກາດຂ່າວທີ່ປະກອບດ້ວຍອຳນາດແລະສະງ່າຣາສີ ເທວະດາບິນໄປ "ໃນທ້ອງຟ້າ ມີຂ່າວປະເສີດອັນຕລອດໄປເປັນນິດເພື່ອນຳໄປປະກາດແກ່ຊາວໂລກທັງປວງ ທຸກປະເທດ, ທຸກຕະກຸນ, ທຸກພາສາ, ແລະທຸກຊາດ" ເປັນຫລັກຖານພິສູດໃຫ້ເຫັນວ່າເປັນການປະກາດຂ່າວໄປທົ່ວໂລກດ້ວຍຄວາມວ່ອງໄວ ເມື່ອເວລານີ້ມາເຖິງກໍຮູ້ເຖິງວ່າການພິພາກສາກຳລັງເລີ່ມຕົ້ນຂຶ້ນແລ້ວ

ຄວາມຜິດຫວັງຄັ້ງນີ້ຍັງເປັນເຄື່ອງພິສູດຈິດໃຈຂອງຜູ້ທີ່ສະແດງຕົນວ່າຍອມຮັບຂ່າວການຕັກເຕືອນວ່າເຂົາຈະທຸ່ມທັນພັນແລ່ນ ຍອມເສັ່ງຊັຍຕໍ່ປະສົບການທີ່ພວກເຂົາໄດ້ຮັບຫລືບໍ່ ພວກເຂົາຈະລະຖິ້ມຄວາມໄວ້ວາງໃຈໃນພຣະທັມຂອງພຣະເຈົ້າຫລືບໍ່ ຖ້າໂລກນີ້ໄດ້ປະນາມແລະກັ້ນແກ້ງເຂົາ ແລະຫາກພຣະເຈົ້າສະເດັດມາລ່າຊ້າ ແລະເຮັດໃຫ້ພວກເຂົາຜິດຫວັງ ເພາະເຫດພຽງວ່າບໍ່ເຂົ້າໃຈໃນການດຳເນີນການຂອງພຣະເຈົ້າ ພວກເຂົາຈະລະຖິ້ມຄວາມຈິງທີ່ສຳແດງໂດຍຄຳພະຍານໃນພຣະທັມຂອງພຣະອົງຫລືບໍ່

ການທົດສອບຄັ້ງນີ້ໄດ້ສອນໃຫ້ເຂົາຮຽນຮູ້ເຖິງ ອັນຕຣາຍຂອງການຍອມຮັບການແປຄວາມໝາຍຂອງມະນຸດແທນທີ່ຈະໃຫ້ພຣະຄັມພີເປັນຜູ້ອະທິບາຍຕົນເອງ ບຸດຊາຍຍິງແຫ່ງຄວາມເຊື່ອຈະຖືກນຳມາສຶກສາພຣະທັມຂອງພຣະເຈົ້າຢ່າງໃກ້ສິດຫລາຍຂຶ້ນ ກວດສອບຮາກຖານຂອງຄວາມເຊື່ອຢ່າງຮອບຄອບ ແລະລະຖິ້ມທຸກສິ່ງທຸກຢ່າງ ທີ່ບໍ່ມີຮາກຖານມາຈາກພຣະຄັມພີ ອັນເປັນທີ່ຍອມຮັບໂດຍທົ່ວໄປໃນໝູ່ຄຣິສຕຽນ

ເບິ່ງເໝືອນວ່າຄວາມທຸກຍາກລຳບາກທີ່ໄດ້ຮັບເຮັດໃຫ້ເຂົ້າໃຈໃນຄຳສອນຢ່າງແຈ່ມແຈ້ງຫລາຍຂຶ້ນ ເຖິງແມ່ນວ່າຄວາມທຸກຍາກນັ້ນຈະເປັນຜົນເນື່ອງມາຈາກຄວາມຜິດພາດຂອງຕົນເອງ ແຕ່ເຂົາກໍໄດ້ຮຽນຮູ້ປະສົບການອັນເປັນພອນນີ້ວ່າ “ພຣະອົງຊົງນຳພາທຸກໆຄົນເຊື່ອຟັງຄຳໝັ້ນສັນຍາ ແລະຄຳສັ່ງຂອງພຣະອົງດ້ວຍຄວາມຮັກແລະຄວາມສັດຈິງ” (ເພັງສັນລະເສີນ 25:10)

## ແຜນພູມລຳດັບເຫດການ 2300 ວັນ

“ຍັງເຫິງເທົ່າກັບເວລາເຜົາບູຊາທັງເຊົ້າແລະແລງຜ່ານໄປໄດ້ 2300 ເທື່ອ ແລ້ວ ພຣະວິຫານຈະຄືນສູ່ສະພາບເດີມ” ດານີເອນ 8:14 ໃນຂນະທີ່ຂ່າວການສະເດັດກັບມາຂອງພຣະເຢຊູປະກາດໃນສະຫະຣັດອະເມຣິການັ້ນ ໂຈເຊບວູລ໌ຟ (ຄ.ສ 1795 - 1862) ຄຣິສະຕຽນຊາວຢິວໃນເຢຣະມັນ ເພິ່ນເປັນສະມາຊິກຂອງຄຣິສຕະຈັກຄາທໍລິກ ຕໍ່ມາໄດ້ກັບໃຈມາເປັນໂປເຕສແຕນແລະໄດ້ກາຍເປັນນັກເທດທີ່ປະ ກາດກັບຊາວຢິວ ເພິ່ນມຸ້ງຫວັງວ່າຈະຕິດຕາມຫາອິສຣາເອນອີກສິບເຜົ່າທີ່ສູນຫາຍໄປ ເປັນເວລາ 18 ປີ ເດີນທາງໄປທົ່ວປາເລສໄຕໃນອາລະເບັຽແລະໃນປະເທດຕາເວັນອອກ



ປະກາດຂ່າວຕັກເຕືອນປະຊາຊົນມາຫລາຍຊົ່ວອາຍຸຄົນ ມີການຖວາຍເລືອດລູກແກະທຸກວັນຊຶ່ງເລັງເຖິງລູກແກະຂອງພຣະເຈົ້າ

ຫາກຊົນຊາດອິສາຣະເອນມີຄວາມຈິງຮັກພັກດີຕໍ່ສວັນ ກຸງເຢຣູຊາເລັມກໍຄົງຈະດຳຣົງຢູ່ຕລອດໄປເປັນນິດ ໃນຖານະຊາດທີ່ພຣະເຈົ້າຊົງເລືອກສັນແຕ່ປະຫວັດສາດຂອງປະຊາກອນທີ່ພຣະອົງຊົງຮັກ ທີ່ຊົງເລືອກກັບບັນທຶກເຖິງການຫລົງຫາຍແລະການທໍຣະຍົດຕໍ່ພຣະອົງ ດ້ວຍຄວາມຮັກທີ່ປະກອບດ້ວຍຄວາມເມດຕາດັ່ງຄວາມຮັກທີ່ບິດາທີ່ມີຕໍ່ບຸດພຣະເຈົ້າຊົງ “ມີພຣະທັຍກະຣຸນາຕໍ່ປະຊາກອນຂອງພຣະອົງ ແລະຕໍ່ທີ່ປະທັບຂອງພຣະອົງ” (2 ພົງສາວະດານ 36:15) ເມື່ອການອ້ອນວອນ ແລະການຕຳນິໄຮ້ຜົນພຣະອົງຊົງປະທານຂອງຂວັນທີ່ດີທີ່ສຸດຈາກສວັນຄື ພຣະບຸດຂອງພຣະອົງລົງມາແກ້ຄະດີແທນນະຄອນທີ່ບໍ່ຮູ້ສຶກສຳນຶກໃນຄວາມຜິດບາບ

ເປັນເວລາຫລາຍປີທີ່ອົງແຫ່ງຄວາມສວ່າງແລະສະງ່າຣາສີຊົງດຳເນີນຢູ່ຖ້າມກາງປະຊາກອນຂອງພຣະອົງ “ແລະຊົງໂຜດບັນດາຜູ້ຖືກມານບຽດບຽນໃຫ້ດີ” “ຊົງໃຫ້ອິສຣະພາບແກ່ບັນດາຊະເລີຍ” “ຄືວ່າຄົນຕາບອດກໍເຫັນຮຸ່ງ, ຄົນຂາເສັ່ງກໍຍ່າງເປັນປົກກະຕິ ຄົນຂີ້ທູດກໍດີສະອາດ ຄົນຫູໜວກກໍໄດ້ຍິນ ຄົນຕາຍແລ້ວກໍເປັນຄືນມາ ແລະຂ່າວປະເສີດກໍປະກາດແກ່ຄົນອານາຖາ” (ກິຈການ 10:38, ລູກາ 4:18, ມັດທາຍ 11:5)

ພຣະອົງຊົງທ່ອງທ່ຽວໄປ ໂດຍບໍ່ມີທີ່ພັກພາອາສັຍ ຊົງມີຊີວິດເພື່ອບົວລະບັດຮັບໃຊ້ຜູ້ຍາກຈົນ ແລະປົດເປື້ອງຄວາມທຸກຂອງປະຊາຊົນ ຊົງຂໍຮ້ອງໃຫ້ເຮົາໄດ້ຮັບຂອງປະທານແຫ່ງຊີວິດຄື້ນແຫ່ງຄວາມເມດຕາ ຖືກຂັບໄລ່ອອກໄປໂດຍຈິດໃຈທີ່ຕໍ່ຕ້ານ ແຕ່ກັບຕອບແທນດ້ວຍກະແສແຫ່ງຄວາມເມດຕາທີ່ຫລາຍກວ່າເກົ່າ ດ້ວຍຄວາມຮັກອັນສຸດທີ່ຈະພັນລະນາ ແຕ່ອິສຣະເອນໄດ້ຫັນຫລັງໃຫ້ກັບສະຫາຍເລີດແລະຜູ້ຊ່ອຍພຣະອົງດຽວນີ້ໄປເສັຽ ການຮຽກຮ້ອງດ້ວຍຄວາມຮັກຂອງພຣະອົງກັບຖືກດູໝິ່ນ

ຊົ່ວໂມງແຫ່ງຄວາມຫວັງທີ່ຈະໄດ້ຮັບການອະພັຍຜ່ານພົ້ນໄປຢ່າງວ່ອງໄວເມກໝອກແຫ່ງການລະຖິ້ມພຣະເຈົ້າ ແລະ ການກະບົດຕໍ່ພຣະອົງ ທີ່ເຄີຍປົກຄຸມຢູ່ເໜືອຝູງຊົນມາຫລາຍຊົ່ວອາຍຸ ທີ່ໃກ້ຈະປະທຸອອກມາເໜືອປະຊາຊົນທີ່ເຕັມດ້ວຍ

ຄວາມບາບຜິດພຣະອົງຜູ້ຊຶ່ງສາມາດຊ່ອຍພວກເຂົາພົ້ນຈາກບາບຜິດຖືກດູໝິ່ນຢຽບຫຍາມ ຖືກທຳຮ້າຍ ຖືກປະຕິເສດ ແລະ ໃນທີ່ສຸດພຣະອົງຖືກຄຶງເທິງໄມ້ກາງແຂນ

ຂນະທີ່ພຣະຄຣິດຊົງທອດພຣະເນດກຸງເຢຣູຊາເລັມຢູ່ນັ້ນ ຄວາມພິນາດຂອງນະຄອນຂອງປະເທດຊາດທັງໝົດໄດ້ປາກົດຕໍ່ພຣະອົງ ພຣະອົງຊົງເຫັນເທວະດາແຫ່ງການທຳລາຍພ້ອມດ້ວຍດາບທີ່ຊູຂຶ້ນຕໍ່ສູ້ນະຄອນນັ້ນ ທີ່ເຄີຍເປັນສະຖານທີ່ພຣະເຈົ້າຊົງພຳນັກຕໍ່ຈາກນີ້ອີກບໍ່ນານຈະຖືກຄອບຄອງໂດຍທິຕັດແລະກອງທັບຂອງເຂົາ ພຣະອົງຊົງທອດພຣະເນດຜ່ານຫວ່າງພູ ຊົງເຫັນສະຖານບໍຣິສຸດ ແລະບໍຣິເວນລານບໍຣິຫານ ດ້ວຍນ້ຳພຣະເນດທີ່ໄຫລຊຶມຊົງເຫັນຄົນຕ່າງຊາດຢືນລ້ອມກຳແພງເຕັມໄປໝົດ ພຣະອົງໄດ້ຍິນສຽງເດີນແຖວສູ້ຮົບສຽງຮ້ອງຂອງເຫລົ່າມານດາແລະເດັກໆຮ້ອງຂໍອາຫານໃນເມືອງຖືກອ້ອມລ້ອມ ພຣະອົງຊົງທອດພຣະເນດເຫັນວິຫານທີ່ສວຍງາມ ພຣະຣາຊວັງ ແລະຫໍສູງຕົກຢູ່ໃນກອງໄຟເຫລືອແຕ່ຊາກສະຫລັກຫັກພັງ

ເມື່ອຊົງທອດພຣະເນດອີກຫລາຍຊົ່ວອາຍຸ ພຣະອົງຊົງເຫັນປະຊາກອນທີ່ເລືອກສັນກະຈັດກະຈາຍໄປທົ່ວໂລກ "ເໝືອນດັ່ງເສດໄມ້ເສດຫຍ້າທີ່ທະເລຊາຍ" ພຣະເນດ ແລະຄວາມຮັກທີ່ເຕັມໄປດ້ວຍຄວາມຫ່ວງໃຍເຫັນໄດ້ຈາກຖ້ອຍຄຳທີ່ຄ່ຳຄວນວ່າ "ໂອ ເຢຣູຊາເລັມ ເຢຣູຊາເລັມເອີຍ, ເຈົ້າທີ່ໄດ້ຂ້າບັນດາຜູ້ປະກາດພຣະທັມ ແລະເອົາຫີນຂວ້າງໃສ່ຜູ້ຮັບໃຊ້ມາຫາເຈົ້າ ເຮົາປາຖນາຈັກເທື່ອແລ້ວໜໍ ວ່າຈະຮວບຮວມເອົາລູກຂອງເຈົ້າໄວ້ ເໝືອນດັ່ງລູກໄກ່ທີ່ຮວບຮວມລູກໄວ້ໃຕ້ປີກຂອງມັນ ແຕ່ພວກເຈົ້າບໍ່ຍິນຍອມ (ມັດທາຍ 23:37)

ສິ່ງທີ່ພຣະຄຣິດຊົງເຫັນໃນກຸງເຢຣູຊາເລັມ ເປັນເຄື່ອງໝາຍຂອງໂລກທີ່ມີຈິດໃຈແຂງກະດ້າງ ບໍ່ມີຄວາມເຊື່ອ ແລະທໍຣະຍົດ ເລັ່ງເລົ້າໃຫ້ພົບກັບການພິພາກສາຂອງພຣະເຈົ້າ ພຣະທັຍຂອງພຣະອົງເຕັມໄປດ້ວຍຄວາມສົງສານໃນຄວາມທຸກຍາກ ແລະ ທໍຣະມານຂອງມະນຸສໂລກ ພຣະອົງປາຖນາທີ່ຈະຊ່ອຍປົດປ່ອຍຄວາມທຸກຍາກໃຫ້ແກ່ທຸກຄົນ ພຣະອົງຍິນດີທີ່ຈະເສັຽສະລະຊີວິດແມ່ນຈະຕ້ອງຕາຍ ເພື່ອມະນຸດຈະໄປເຖິງຄວາມລອດໄດ້

ກະສັດແຫ່ງສວັນຊົງກັນແສງ ພາບນັ້ນໄດ້ສະແດງໃຫ້ເຫັນເຖິງພາລະອັນແສນໜັກຂອງການຊ່ອຍເຫລືອຜູ້ທີ່ເຮັດຜິດອັນເປັນຜົນຂອງການລ່ວງລະເມີດບັນຍັດ



ໃຫ້ບໍຣິສຸດດ້ວຍໄຟ ຂນະທີ່ພຣະຜູ້ເປັນເຈົ້າສະເດັດມາ ດັ່ງນັ້ນເພິ່ນຈຶ່ງສລຸບໄດ້ວ່າການສິ້ນສຸດຂອງ 2300 ວັນ ຄືວັນສະເດັດມາຄັ້ງທີ່ສອງ

ການຊຳຣະສະຖານທີ່ບໍຣິສຸດນັ້ນຄືການກະທຳພິທີຂັ້ນສຸດທ້າຍຂອງມະຫາປຸໂຣຫິດໃນການທຳພິທີໄຖ່ບາບຂອງທຸກໆ ປີ ພິທີນີ້ເປັນງານອັນສຸດທ້າຍຂອງການໄຖ່ບາບເພື່ອການປົດເປື້ອງຫລືທຳລາຍລ້າງຄວາມຜິດບາບຈາກຄົນອິສຣາເອນ ເປັນເຄື່ອງໝາຍເລັງເຖິງການທຳງານອັນສຸດທ້າຍຂອງມະຫາປຸໂຣຫິດໃນສວັນ ຄືການປົດເປື້ອງຫລືກຳຈັດຄວາມຜິດບາບປະຊາກອນຂອງພຣະອົງທີ່ໄດ້ຮັບການຈົດບັນທຶກໄວ້ໃນໜັງສືຊີວິດ ພິທີກັມນີ້ກ່ຽວຂ້ອງກັບການສອບສວນ ການພິພາກສາແລະກ່ຽວກັບການທີ່ພຣະຄຣິດສະເດັດມາເທິງທ້ອງຟ້າ ເພາະເມື່ອພຣະອົງສະເດັດມາທຸກຄົນໄດ້ຮັບການຕັດສິນຮຽບຮ້ອຍແລ້ວ ພຣະເຢຊູຕຣັດວ່າ "ເບິ່ງແມ, ເຮົາຈະມາໃນ ໄວໆ ນີ້ ເຮົາຈະເອົາບຳເໜັດຂອງເຮົາມານຳ ເພື່ອຕອບແທນການປະຕິບັດຂອງທຸກຄົນ" (ພຣະນິມິດ 22:12) ງານການພິພາກສານີ້ໄດ້ປະກາດໄວ້ໃນຂ່າວຂອງເທວະດາອົງທີ່ນຶ່ງໃນ ພຣະນິມິດ 14:7 "ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດ ແກ່ພຣະອົງເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ"

ບັນດາຜູ້ທີ່ປະກາດຕັກເຕືອນດັ່ງກ່າວນັບວ່າເປັນການປະກາດຂ່າວໃນເວລາອັນເໝາະສົມ ເໝືອນບັນດາອັຄສາວົກໄດ້ຄາດການຜິດກ່ຽວກັບອານາຈັກຂອງພຣະເຈົ້າ ທີ່ຈະມາຕັ້ງຢູ່ໃນໂລກນີ້ໃນວັນສຸດທ້າຍຂອງ "ເຈັດສິບສັປດາ" ສັນໃດບັນດາຜູ້ລໍຄອຍການສະເດັດກັບມາຄັ້ງທີ່ສອງອງພຣະຄຣິດກໍຄາດການຜິດກ່ຽວກັບເຫດການວັນສິ້ນສຸດຂອງ 2300 ວັນສັນນັ້ນ ຄວາມເຊື່ອຜິດອັນເປັນທີ່ນິຍົມເຮັດໃຫ້ຄວາມຄິດຂອງເພິ່ນພາດໄປສອງຄັ້ງ ເຫດການທັງສອງນີ້ເຮັດໃຫ້ຂ່າວສານຕາມນ້ຳພຣະທັຍຂອງພຣະເຈົ້າໃນການຊ່ອຍກູ້ທີ່ພຣະອົງປາຖນາຈະປະທານໃນສຳເຣັດຈິງ ແຕ່ທັງສອງກຸ່ມນີ້ຕ່າງກໍຜິດຫວັງເພາະເຂົ້າໃຈຜິດໃນຂ່າວທີ່ພວກເຂົາໄດ້ຮັບ ແຕ່ເຖິງປານນັ້ນພຣະເຈົ້າຊົງກະທຳໃຫ້ທຸກສິ່ງທຸກຢ່າງເປັນໄປຕາມຄວາມມຸ້ງໝາຍຂອງພຣະອົງ ພຣະອົງຊົງໂປຣດໃຫ້ປະກາດຂ່າວເພື່ອທົດສອບແລະຊຳຣະຄຣິສຕະຈັກຂອງພຣະອົງໃຫ້ບໍຣິສຸດຊົງປາຖນາໃຫ້ເຂົາຊາບວ່າເຂົາຮັກໂລກນີ້ຫລືຮັກພຣະຄຣິດແລະສວັນ ເຂົາພ້ອມທີ່ຈະລະຖິ້ມຄວາມທະເຍີທະຍານຝ່າຍໂລກນີ້ ແລະຈະຍອມຮັບການສະເດັດກັບມາຄັ້ງທີ່ສອງຂອງພຣະຜູ້ເປັນເຈົ້າຫລືບໍ່

16:15; ມັດທາຍ 28:20)ໃນວັນເທສການເພນເຕຄໍສະເຕ ພຣະວິນຍານບໍຣິສຸດອົງພຣະຜູ້ຊ່ອຍໄດ້ຊົງສັນຍາໄວ້ນັ້ນໄດ້ຫລັ່ງລົງມາແລະຈິດໃຈຂອງທຸກຄົນຕ່າງກໍມີຄວາມຊົມຊື່ນຍິນດີຂນະທີ່ມອງເບິ່ງພຣະຜູ້ເປັນເຈົ້າສະເດັດຂຶ້ນສູ່ສວັນ

## ຂ່າວຂອງອັຄສາວົກປຽບທຽບກັບຂ່າວປີ 1844

ປະສົບການຂອງອັຄສາວົກກ່ຽວກັບການສະເດັດມາຂອງພຣະຄຣິດຄັ້ງທຳອິດນັ້ນ ຄ້າຍກັບປະສົບການຂອງຜູ້ທີ່ປະກາດເຣື່ອງການສະເດັດກັບມາຄັ້ງທີ່ສອງຂອງພຣະອົງ ບັນດາອັຄສາວົກປະກາດວ່າ "ເວລາກຳນົດມາເຖິງແລ້ວແລະແຜ່ນດິນຂອງພຣະເຈົ້າກໍມາໃກ້ແລ້ວ" ມິນເລີແລະເພື່ອນຮ່ວມງານຂອງເພິ່ນໄດ້ປະກາດວ່າໄລຍະເວລາສຸດທ້າຍຂອງຄຳພະຍາກອນໃນພຣະຄັມພີໃກ້ຈະສິ້ນສຸດລົງແລ້ວການພິພາກສາຄັ້ງສຸດທ້າຍໃກ້ຈະມາເຖິງແລະອານາຈັກນິຣັນດອນກຳລັງຈະມາເຖິງ ຄຳເທສນາສັ່ງສອນຂອງບັນດາອັຄສາວົກກ່ຽວກັບເວລາກຳນົດນັ້ນມີຮາກຖານມາຈາກເຈັດສິບສັປດາໃນດານີເອັນບົດທີ່ 9 ຂ່າວທີ່ມິນເລີແລະເພື່ອນຮ່ວມງານຂອງເພິ່ນໄດ້ປະກາດວ່າເປັນການສິ້ນສຸດຂອງ 2300 ວັນໃນດານີເອັນ 8:14 ເປັນສ່ວນນຶ່ງຂອງເຈັດສິບສັປດາ ການເທສນາສັ່ງສອນເຖິງໄລຍະເວລາແຕ່ລະສ່ວນມີຮາກຖານມາຈາກເຫດການທີ່ເກີດຂຶ້ນຈິງດັ່ງຄຳພະຍາກອນໃນຍຸກດຽວກັນ

ມິນເລີ ແລະເພື່ອນຮ່ວມງານບໍ່ສາມາດຢັ່ງຮູ້ຂ່າວທີ່ເພິ່ນປະກາດທັງໝົດເຊັ່ນດຽວກັບບັນດາອັຄສາວົກ ຄວາມເຊື່ອຜິດທີ່ມີຢູ່ໃນຄຣິສຕະຈັກມາຊ້ານານເຮັດໃຫ້ພວກເຂົາບໍ່ສາມາດຈະອະທິບາຍຈຸດສຳຄັນຂອງຄຳພະຍາກອນໄດ້ ເຫດນີ້ເອງແມ່ນວ່າພວກເຂົາປະກາດສັ່ງສອນຂ່າວຕາມທີ່ພຣະເຈົ້າຊົງມອບໝາຍໃຫ້ເຮັດກໍຕາມ ແຕ່ເມື່ອຂາດຄວາມເຂົ້າໃຈຄວາມໝາຍຂອງຂ່າວນັ້ນຢ່າງແທ້ຈິງ ຈຶ່ງເປັນສາຍເຫດເຮັດໃຫ້ພວກເຂົາໄດ້ຮັບຄວາມຜິດຫວັງ

ມິນເລີ ຍອມຮັບເອົາຄວາມຄິດເຫັນແບບທົ່ວໆໄປວ່າ ໂລກນີ້ເປັນ "ສະຖານທີ່ບໍຣິສຸດ" ເພິ່ນເຊື່ອວ່າ "ການຊຳຣະສະຖານສັກສິດ" ໝາຍເຖິງການຊຳຣະໂລກນີ້



**ຂອງພຣະເຈົ້າ ພຣະເຢຊູຊົງທອດພຣະເນດເຫັນມະນຸສໂລກ ມີສ່ວນກ່ຽວຂ້ອງກັບການຫລອກລວງ ທີ່ຄ້າຍກັບສິ່ງທີ່ເປັນເຫດໃຫ້ເຢຣູຊາເລັມປະສົບກັບຄວາມພິນາດ ຄວາມບາບອັນໃຫຍ່ຫລວງຂອງຊາວຢິວຄື ການທີ່ພວກເຂົາປະຕິເສດພຣະຄຣິດ ສ່ວນຄວາມບາບອັນໃຫຍ່ຫລວງຂອງມະນຸສໂລກຄື ການປະຕິເສດພຣະບັນຍັດຂອງພຣະເຈົ້າ ຊຶ່ງເປັນຮາກຖານຂອງການປົກຄອງຂອງພຣະອົງທັງໂລກ ແລະສວັນ ຄົນນັບລ້ານຕົກເປັນທາດຂອງຄວາມບາບ ຄົນເຫລົ່ານັ້ນຈະໄດ້ຮັບຄວາມທຸກທໍຣະມານໃນຄວາມຕາຍຄັ້ງທີ່ສອງ ເພາະປະຕິເສດທີ່ຈະຟັງພຣະທັມແຫ່ງຄວາມຈິງຈົນເຖິງວັນທີ່ໄພພິນາດຈະມາເຖິງເຂົາ**

## ພຣະວິຫານອັນງົດງາມຖືກທຳລາຍ

**ກ່ອນພິທີປັດສະຄາສອງວັນ ພຣະຄຣິດສະເດັດໄປຍັງພູໝາກກອກເທດກັບສາວົກຂອງພຣະອົງຄັ້ງນຶ່ງ ເພື່ອທອດພຣະເນດກຸງເຢຣູຊາເລັມ ເມື່ອພຣະອົງທອດພຣະເນດພຣະວິຫານທີ່ສ່ອງແສງປະກາຍອັນວິຈິດ ດັ່ງມົງກຸດອັນງົດງາມອີກເທື່ອນຶ່ງ ຊາໂລໂມນ ພຣະຣາຊາຜູ້ຊົງມີສະຕິປັນຍາລ້ຳເລີດທີ່ສຸດຂອງອິສຣະເອນເຄີຍສ້າງວິຫານຫລັງທຳອິດເປັນອາຄານທີ່ມີຄວາມວິຈິດງົດງາມທີ່ສຸດທີ່ໂລກນີ້ເຄີຍເຫັນ ຫລັງຈາກທີ່ພຣະຣາຊາເນບູຄັດເນດຊາທຳລາຍພຣະວິຫານນີ້ແລ້ວກໍໄດ້ມີການປະຕິສັງຂອນຂຶ້ນອີກປະມານຫ້າຮ້ອຍປີກ່ອນພຣະເຢຊູມາບັງເກີດ**

**ແຕ່ພຣະວິຫານທີ່ໄດ້ຮັບການປະຕິສັງຂອນໃໝ່ນີ້ບໍ່ງາມເໝືອນຫລັງທຳອິດ ບໍ່ມີເມກແຫ່ງພຣະສິຣິ ບໍ່ມີໄຟຈາກສວັນລົງມາເຜົາເທິງແທ່ນບູຊາ ບໍ່ມີຫີບພຣະສັນ ຍາໄມຕຣີ ບໍ່ມີພຣະທີ່ນັ່ງກະຣຸນາ ແລະບໍ່ມີໂຕ໊ະເຂົ້າໜົມປັງແຫ່ງພຣະສັນຍາ ບໍ່ມີພຣະສຸຣະສຽງຈາກສວັນທີ່ຈະເຮັດໃຫ້ປະໂລຫິດຮູ້ເຖິງນ້ຳພຣະທັຍຂອງພຣະເຈົ້າ ໃນພຣະວິຫານຫລັງທີ່ສອງນີ້ບໍ່ມີເມກແຫ່ງພຣະສິຣິ ແຕ່ມີພຣະອົງຜູ້ຊົງພຣະຊົນສະຖິດຢູ່ຊົງເປັນພຣະເຈົ້າທີ່ສຳແດງພຣະອົງໃນເນື້ອໜັງ "ຜູ້ເພິ່ງປາຖນາແຫ່ງປວງຊົນ" ໄດ້ສະເດັດມາຍັງພຣະວິຫານ ເມື່ອພຣະບຸຣຸດຜູ້ນີ້ງຈາກນາຊາເຣັດໄດ້ສັ່ງສອນ ແລະຮັກສາຄົນເຈັບປ່ວຍໃນເຂດພຣະວິຫານອັນສັກສິດ ແຕ່ພວກອິສຣະເອນໄດ້ປະຕິເສດທີ່ຈະ**

ຮັບເອົາຂອງປະທານອັນມີຄ່າຈາກສວັນເສັ່ງ ພຣະອົງຊົງເປັນພຣະອາຈານຜູ້ມີພຣະທັຍຖ່ອມສຸພາບ ເມື່ອພຣະອົງສະເດັດອອກຈາກປະຕູທອງຂອງພຣະວິຫານພຣະສິຣິຂອງພຣະເຈົ້າກໍບໍ່ໄດ້ສະຖິດຢູ່ໃນພຣະວິຫານອີກຕໍ່ໄປ ເຫດການນີ້ໄດ້ເປັນໄປຕາມທີ່ພຣະຜູ້ຊ່ອຍໃຫ້ລອດໄດ້ຕຣັດໄວ້ "ເບິ່ງແມ, ເຮືອນຂອງເຈົ້າກໍຈະຖືກປະຮ້າງໄວ້ໃຫ້ຢູ່ຫວ່າງເປົ່າແກ່ເຈົ້າ" (ມັດທາຍ 23:38)

ເຫລົ່າສາວົກປລາດໃຈໃນຄຳທຳນວາຍຂອງພຣະຄຣິດ ກ່ຽວກັບພຣະວິຫານທີ່ຈະຖືກທຳລາຍ ແລະເຂົາຢາກຈະເຂົ້າໃຈໃນຄຳໝາຍທີ່ຖ້ອຍຄຳທີ່ຊົງຕຣັດ ກະສັດເຮໂລດມະຫາຣາດໄດ້ໃຊ້ສົມບັດອັນລ້ຳຄ່າທັງຂອງຢິວແລະໂຣມັນໃນການປະ ຕິສັງຂອນຫີນອ່ອນກ້ອນມະຫຶມານຳມາຈາກກຸງໂຣມ ເພື່ອໃຊ້ເປັນໂຄງສ້າງຂອງຕຶກສາວົກມອງເບິ່ງດ້ວຍຄວາມຕຶກຕະລຶງ ແລະທູນພຣະອົງວ່າ "ພຣະອາຈານເອີຍ ກ້ອນຫີນ ແລະຕຶກເຫລົ່ານີ້ເກີນວ່າງົດງາມ" (ມາຣະໂກ 13:1)

ພຣະເຢຊູຕອບດ້ວຍຖ້ອຍຄຳທີ່ຈິງຈັງ ແລະໜ້າຕື່ນຕະໜົກວ່າ " ເຮົາບອກພວກທ່ານຕາມຄວາມຈິງວ່າ ກ້ອນຫີນທີ່ຊ້ອນທັບກັນຢູ່ທີ່ນີ້ຈະຖືກທຳລາຍລົງຈົນບໍ່ເຫລືອຈັກກ້ອນດຽວ" (ມັດທາຍ 24:2) ພຣະຜູ້ເປັນເຈົ້າໄດ້ຊົງບອກເຫລົ່າສາວົກວ່າພຣະອົງຈະສະເດັດມາຄັ້ງທີ່ສອງ ເມື່ອພຣະອົງຊົງຕຣັດເຖິງການພິພາກສາກຸງເຢຣູຊາເລັມ ຈິດໃຈຈຶ່ງຫວນຄິດເຖິງການສະເດັດມາຂອງພຣະອົງ ແລະກາບທູນວ່າ "ຂໍໂຜດໃຫ້ພວກຂ້ານ້ອຍຊາບແດ່ວ່າ ເຫດການເຫລົ່ານີ້ຈະເກີດຂຶ້ນເວລາໃດ ສິ່ງໃດເປັນໝາຍສຳຄັນວ່າ ທ່ານຈະມາ ແລະສມັຍເກົ່າຈະສິ້ນສຸດລົງ" (ມັດທາຍ 24:3)

ພຣະຄຣິດໄດ້ຊົງບອກໃຫ້ເຂົາຮູ້ເຖິງເຫດການທີ່ຈະເກີດຂຶ້ນກ່ອນເວລາສິ້ນຍຸກຈະມາເຖິງ ຄຳພະຍາກອນທີ່ພຣະອົງຊົງຕຣັດມີຄວາມໝາຍສອງປະການຄື ພຣະອົງຊົງໝາຍເຖິງກຸງເຢຣູຊາເລັມຈະຖືກທຳລາຍ ແລະໝາຍເຖິງເຫດການອັນໜ້າຢ້ານໃນວັນສຸດທ້າຍຂອງໂລກ

ປະຊາກອນອິສຣະເອນຖືກຕັດສິນພິພາກສາ ເພາະເຂົາບໍ່ຍອມຮັບພຣະເມສາ ແລະຄຶງພຣະອົງເທິງໄມ້ກາງແຂນ "ເຫດສັນນັ້ນເມື່ອໃດທ່ານທັງຫລາຍເຫັນສິ່ງທີ່ໜ້າກຽດໜ້າຊັງ ທີ່ເຮັດໃຫ້ເກີດວິບັດຕັ້ງຢູ່ໃນສະຖານທີ່ສັກສິດ ຕາມພຣະທັມທີ່ຊົງກ່າວໄວ້ດ້ວຍດານີເອນຜູ້ປະກາດພຣະທັມ (ໃຫ້ຜູ້ອ່ານເຂົ້າໃຈເອົາ)" ເມື່ອນັ້ນໃຫ້ຜູ້ທີ່ຢູ່



ບັນດາສາວົກໄດ້ຮັບປະສົບການທີ່ດູເໝືອນຈະສ້າງຄວາມຂົມຂື່ນໃຈກໍເພື່ອພວກເຂົາຈະໄດ້ຕຽມຕົວພ້ອມໃນການທຳງານອັນຍິ່ງໃຫຍ່ນີ້

ຫລັງຈາກທີ່ພຣະເຢຊູຄືນພຣະຊົນແລ້ວ ພຣະອົງຊົງປາກົດແກ່ສາວົກຂນະທີ່ພວກເຂົາເດີນທາງໄປຍັງເມືອງເອັມມາອູດແລະ "ອະທິບາຍພຣະຄັມພີທັງໝົດທີ່ກ່ຽວກັບພຣະອົງເອງໃຫ້ເຂົາຟັງ ຕັ້ງແຕ່ໂມເຊແລະບັນດາຜູ້ປະກາດພຣະທັມ" ພຣະອົງມີພຣະປະສົງທີ່ຈະໃຫ້ບັນດາສາວົກມີຄວາມໝັ້ນໃຈໃນ "ຄຳພະຍາກອນທີ່ແນ່ນອນ" (ລູກາ 24:27; 1ເປໂຕ 1:19) ບໍ່ແມ່ນພຽງເພາະການເປັນພະຍານຂອງພຣະອົງແຕ່ເປັນເພາະຄຳພະຍາກອນຂອງພັນທະສັນຍາເດີມ ຂັ້ນແຮກທີ່ສຸດພຣະເຢຊູຊົງປະທານຄວາມເຂົ້າໃຈໃຫ້ກັບອັຄສາວົກ ພຣະອົງອະທິບາຍໃຫ້ພວກເຂົາຮູ້ເຣື່ອງ "ໂມເຊແລະຜູ້ປະກາດພຣະທັມ" ໃນພຣະຄັມພີເດີມ

## ຄວາມຜິດຫວັງປ່ຽນເປັນຄວາມໝັ້ນໃຈ

ສາວົກທັງສອງມີຄວາມຮູ້ສຶກໝັ້ນໃຈຂຶ້ນກວ່າແຕ່ກ່ອນເມື່ອເຂົາໄດ້ "ພົບພຣະອົງຜູ້ຊຶ່ງໂມເຊໃນພຣະບັນຍັດແລະບັນດາຜູ້ປະກາດພຣະທັມໄດ້ຂຽນໄວ້" ຄວາມບໍ່ແນ່ນອນຄວາມຜິດຫວັງໄດ້ມາແທນທີ່ຄວາມໝັ້ນໃຈແລະກຳຈັດສິ່ງທີ່ປິດບັງຄວາມເຊື່ອ ພວກເຂົາໄດ້ຜ່ານການທົດລອງອັນລຳບາກກາກກຳທີ່ສຸດເພື່ອຊ່ອຍໃຫ້ມີປະສົບການແລະໄດ້ເຫັນວ່າພຣະທັມຂອງພຣະເຈົ້າໄດ້ຮັບຊັຍຊະນະຢ່າງແທ້ຈິງຢ່າງໃດ ຕັ້ງແຕ່ນີ້ເປັນຕົ້ນໄປອັນໃດຈະທຳລາຍຄວາມເຊື່ອຂອງພວກເຂົາໄດ້ ໃນຂນະທີ່ພວກເຂົາມີຄວາມທຸກຂໍ້ຂົມຂື່ນທີ່ສຸດກໍໄດ້ຮັບ "ຄວາມຊູໃຈອັນແຮງກ້າຢ່າງໃຫຍ່ຫລວງ" ແລະຄວາມຫວັງທີ່ຈະຍຶດນັ້ນເປັນເໝືອນ "ສມໍທີ່ແທ້ຈິງແລະໝັ້ນຄົງຂອງຈິດໃຈ" (ເຮັບເຣີ 6:18,19)

ພຣະຜູ້ເປັນເຈົ້າຊົງຕຣັດວ່າ "ໄພ່ພົນຂອງເຮົາຈະບໍ່ຖືກດູໝິ່ນຢຽບຫຍາມອີກ" "ການຮ້ອງໄຫ້ອາດຈະອ້ອຍອີ້ງຢູ່ຈັກຄືນນຶ່ງ ແຕ່ຄວາມຊື່ນບານຈະມາເວລາ ເຊົ້າ" (ໂຢເອນ 2:27; ເພັງສັນລະເສີນ 30:5) ໃນວັນທີ່ພຣະເຢຊູຊົງຄືນພຣະຊົນສາວົກເຫລົ່ານີ້ໄດ້ພົບພຣະອົງແລະຈິດໃຈຂອງພວກເຂົາເຮົ່າຮ້ອນຂນະທີ່ຟັງຖ້ອຍຄຳຂອງພຣະອົງ ກ່ອນການສະເດັດຂຶ້ນສູ່ສວັນ ພຣະອົງຊົງຕຣັດສັ່ງພວກເຂົາວ່າ "ທ່ານທັງຫລາຍຈົ່ງໄປທົ່ວໂລກປະກາດຂ່າວປະເສີດແກ່ມະນຸສໂລກທັງໝົດ" (ມາຣະໂກ

ຂໍ້ຄວາມທີ່ວ່າ "ແຜ່ນດິນຂອງພຣະເຈົ້າ" ໃຊ້ສະແດງເຖິງອານາຈັກແຫ່ງພຣະຄຸນ ແລະອານາຈັກແຫ່ງສະງ່າຣາສີ ອັຄສາວົກໂປໂລກ່າວວ່າ "ເຫດສັນນັ້ນໃນເຮົາທັງຫລາຍມີໃຈກ້າເຂົ້າໄປເຖິງພຣະທີ່ນັ່ງແຫ່ງພຣະຄຸນ ເພື່ອພວກເຮົາຈະໄດ້ຮັບພຣະເມດຕາ ແລະພົບພຣະຄຸນທີ່ຈະຊ່ອຍເຮົາໃນເວລາທີ່ຕ້ອງການ" (ເຮັບເຣີ 4:16) ພຣະບັນລັງຕັ້ງຢູ່ໝາຍເຖິງການມີອານາຈັກຕັ້ງຢູ່ ພຣະຄຣິດຕຣັດເຖິງ "ອານາຈັກແຫ່ງສວັນ" ພຣະອົງຊົງໝາຍເຖິງການທຳງານຂອງພຣະຄຸນໃນຈິດໃຈຂອງມະນຸດ ດັ່ງນັ້ນ ພຣະບັນລັງອັນຮຸ່ງເຮືອງໝາຍເຖິງອານາຈັກອັນຮຸ່ງເຮືອງນັ້ນເອງ (ມັດທາຍ 25:31,32) ອານາຈັກນີ້ເປັນເຣື່ອງໃນອານາຄົດ ຈະບໍ່ມາຕັ້ງຢູ່ຈົນກວ່າຈະເຖິງເວລາການສະເດັດມາຄັ້ງທີ່ສອງຂອງພຣະຄຣິດ

ເມື່ອພຣະຜູ້ຊ່ອຍໃຫ້ລອດຍອມສະລະພຣະຊົນຂອງພຣະອົງໄດ້ຕຣັດດ້ວຍພຣະສຸຣະສຽງອັນດັງວ່າ "ສຳເຣັດແລ້ວ" ພຣະສັນຍາແຫ່ງຄວາມລອດທີ່ຊົງມີໄວ້ສຳລັບມະນຸດຄູ່ແຣກໃນເອເດນທີ່ຫລົງກະທຳບາບກໍສຳເຣັດແລ້ວໃນທີ່ສຸດພຣະທີ່ນັ່ງແຫ່ງພຣະຄຸນຊຶ່ງມີຢູ່ກ່ອນແລ້ວໂດຍພຣະສັນຍາຂອງເຈົ້າໄດ້ຖືກຕັ້ງຂຶ້ນ

ສະນັ້ນ ຄວາມຕາຍຂອງພຣະຄຣິດ ຊຶ່ງເປັນເຫດການທີ່ບັນດາອັຄສາວົກມອງເບິ່ງວ່າເປັນສິ່ງທຳລາຍຄວາມຫວັງຂອງພວກເຂົາ ກັບເຮັດໃຫ້ແຜນການຂອງພຣະເຈົ້າເປັນສິ່ງທີ່ແນ່ນອນຕລອດໄປ ຂນະທີ່ໄດ້ນຳຄວາມຜິດຫວັງຢ່າງໃຫຍ່ຫລວງມາສູ່ບັນດາອັຄສາວົກກໍເປັນສິ່ງພິສູດໃຫ້ເຫັນວ່າຄວາມເຊື່ອຂອງພວກເຂົານັ້ນຖືກຕ້ອງ ເຫດການທີ່ເຮັດໃຫ້ພວກເຂົາຕ້ອງຜິດຫວັງກັບເປີດປະຕູແຫ່ງຄວາມຫວັງແກ່ບັນດາຜູ້ຊື່ສັດຂອງພຣະເຈົ້າຕລອດທຸກຍຸກທຸກສມັຍ

ຄວາມຮັກຂອງບັນດາອັຄສາວົກທີ່ມີຕໍ່ພຣະເຢຊູປຽບເໝືອນທອງຄຳອັນບໍຣິສຸດຖືກເຈືອປົນໄປດ້ວຍຄວາມທະເຍີທະຍານທີ່ເຫັນແກ່ຕົວ ນິມິດຂອງພວກເຂົາມອງເຫັນແຕ່ບັນລັງ ມົງກຸດແລະສະງ່າຣາສີ ຈິດໃຈທີ່ມີຄວາມເຍີ່ຍິ່ງແລະຄວາມກະຫາຍໃນກຽດຕິຍົດຝ່າຍໂລກຈຶ່ງເຮັດໃຫ້ພວກເຂົາບໍ່ໄດ້ຍິນພຣະສຸຣະສຽງຂອງພຣະຜູ້ຊ່ອຍໃຫ້ລອດ ທີ່ສະແດງໃຫ້ເຫັນເຖິງອານາຈັກທີ່ແທ້ຈິງຂອງພຣະອົງແລະຊີ້ໃຫ້ເຫັນເຖິງຄວາມຕາຍຂອງພຣະອົງ ເພາະຄວາມຜິດພາດນີ້ ຍັງມີຜົນໃຫ້ເກີດການທົດລອງທີ່ອະນຸຍາດໃຫ້ເກີດຂຶ້ນເພື່ອແກ້ໄຂດັດແປງພວກເຂົາ ເພື່ອຈະໄດ້ມອບໝາຍຂ່າວປະເສີດແຫ່ງສະງ່າຣາສີຂອງການຄືນພຣະຊົນຂອງອົງພຣະຜູ້ເປັນເຈົ້າ ການທີ່ພຣະເຈົ້າຊົງໃຫ້



**ໃນແຂວງຢູດາປົບໜີໄປຍັງພູ" (ມັດທາຍ 24:15,16, ລູກາ 21:20,21) ເມື່ອບັນດາຜູ້ກາບໄຫວ້ຮູບເຄົາລົບຊາວໂຣມັນມາລ້ອມຮອບກຳແພງເມືອງ ຜູ້ຕິດຕາມພຣະຄຣິດຕ້ອງຫລົບໜີໄປຫາທີ່ປອດພັຍ ຜູ້ທີ່ປົບໜີຈະລໍຊ້າບໍ່ໄດ້ ເພາະຄວາມບາບຂອງພວກກຸງນີ້ ພຣະພິໂຣດໄດ້ຖືກປະກາດຕໍ່ເຢຣູຊາເລັມ ຄວາມດື້ດ້ານ, ຄວາມບໍ່ເຊື່ອກະທຳໃຫ້ນະຄອນຕ້ອງພິນາດເຊັ່ນນີ້ (ມີກາ 3:9-11)**

**ປະຊາກອນໃນກຸງເຢຣູຊາເລັມ ໄດ້ປະນາມພຣະຄຣິດວ່າເປັນຕົ້ນເຫດແຫ່ງບັນຫາທັງຫລາຍ ຊຶ່ງຕົກແກ່ພວກເຂົາເນື່ອງຈາກຜົນຂອງການບາບຂອງຕົນ ເຖິງແມ່ນເຂົາຮູ້ດີວ່າພຣະອົງບໍ່ມີບາບຜິດໃດ ເຂົາປະກາດວ່າຄວາມຕາຍຂອງພຣະອົງເປັນສິ່ງຈຳເປັນເພື່ອປົກປ້ອງຮັກສາປະເທດຊາດເອົາໄວ້ ທຸກຄົນເຫັນດ້ວຍກັບການຕັດສິນໃຈຂອງປະໂລຫິດຂອງເຂົາທີ່ວ່າ ຈະເປັນການດີຖ້າວ່າຈະໃຫ້ຄົນຕາຍເສັຽຄົນນຶ່ງ ແທນທີ່ຈະໃຫ້ຄົນທັງຊາດຕ້ອງພິນາດ (ໂຢຮັນ 11:47-53)**

**ຂນະຄົນເຫລົ່ານັ້ນຂ້າພຣະຜູ້ຊ່ອຍໃຫ້ລອດ ເພາະວ່າພຣະອົງຕຳໜິຄວາມຜິດບາບຂອງເຂົາ ເຂົາກໍຍັງຖືວ່າພວກຕົນເປັນຜູ້ທີ່ພຣະເຈົ້າຊົງໂປດປານ ແລະຫວັງວ່າພຣະອົງຈະຊ່ອຍໃຫ້ພົ້ນຈາກສັດຕຣູຂອງເຂົາ**

## ຄວາມອົດກັ້ນຂອງພຣະເຈົ້າ

ເປັນເວລາເກືອບສີ່ສິບປີທີ່ພຣະເຈົ້າຊົງຍັບຍັ້ງການພິພາກສາໄວ້ ເຖິງປານນັ້ນຊາວຢິວຈຳນວນຫລວງຫລາຍກໍຍັງບໍ່ຍອມຮັບອຸປະນິສັຍ ແລະພະຣາຊກິດຂອງພຣະຄຣິດ ແລະພວກເດັກໆ ກໍບໍ່ໄດ້ຊົມຊື່ນກັບແສງສວ່າງທີ່ພໍ່ແມ່ດູໝິ່ນຢຽບຫຍາມພຣະເຈົ້າຊົງໃຫ້ແສງສວ່າງຂອງພຣະອົງສ່ອງຜ່ານທາງຄຳເທສນາຂອງບັນດາອັຄສາວົກ ເພື່ອເຂົາຈະໄດ້ເຫັນຄຳພະຍາກອນທີ່ສຳເຣັດແລ້ວ ບໍ່ພຽງແຕ່ຄຳພະຍາກອນທີ່ກ່າວເຖິງການສະເດັດມາບັງເກີດ ແລະດຳຣົງຊີວິດຂອງພຣະອົງເທົ່ານັ້ນທີ່ສຳເຣັດແລ້ວ ແຕ່ການສິ້ນພຣະຊົນ ແລະການຟື້ນພຣະຊົນຂອງພຣະອົງ ກໍໄດ້ສຳເຣັດຕາມນັ້ນ ເດັກບໍ່ຖືກກ່າວໂທດເພາະຄວາມບາບຂອງພໍ່ແມ່ ແຕ່ເມື່ອເຂົາປະຕິເສດ

ແສງສວ່າງທີ່ພຣະເຈົ້າປະທານເພີ່ມເຕີມໃຫ້ ເຂົາກໍມີສ່ວນໃນຄວາມຜິດບາບຂອງຜູ້ປົກຄອງ ແລະເພີ່ມຄວາມຜິດບາບທີ່ເຂົາມີຢູ່ກ່ອນແລ້ວ

ການທີ່ຊາວຢິວດື້ດຶງ ແລະປະຕິເສດພຣະກະຣຸນາເທື່ອສຸດທ້າຍຂອງພຣະເຈົ້າ ຫລັງຈາກນັ້ນພຣະອົງຈຶ່ງເພີກຖອນການພິພາກສາເຂົາ ປະເທດຊາດຂອງເຂົາຖືກປົກຄອງໂດຍຜູ້ນຳທີ່ເຂົາເລືອກ ຊາຕານໄດ້ເລັ່ງເລົ້າໃຫ້ເກີດຄວາມໂຫດຮ້າຍ ແລະມີຕັນຫາໃຝ່ຕ່ຳຫລາຍຍິ່ງຂຶ້ນ ມະນຸດຢູ່ເໜືອເຫດຜົນຈິດໃຈຢູ່ພາຍໃຕ້ ຄວາມຫຸນຫັນພັນແລ່ນ ແລະໂທສະມີຄວາມໂຫດຮ້າຍຂອງຊາຕານ ມີການທໍຣະຍົດກັນລະຫວ່າງຍາດມິດແລະເພື່ອນຝູງ ພໍ່ແມ່ກໍຂ້າລູກ ແລະລູກກໍຂ້າພໍ່ແມ່ ຜູ້ປົກຄອງທັງຫລາຍບໍ່ມີອຳນາດໃນການດູແລພວກດຽວກັນເອງ, ຕັນຫາເຮັດໃຫ້ພວກເຂົາເປັນຄົນທີ່ໂຫດຮ້າຍພວກຢິວເຫັນດ້ວຍກັບພະຍານເທັດທີ່ກ່າວໂທດພຣະບຸດຂອງພຣະເຈົ້າ ຜູ້ປັດສະຈາກຄວາມຜິດ ການກ່າວໂທດທີ່ເປັນເທັດນີ້ ເຮັດໃຫ້ເຂົາເກີດຄວາມວຸ່ນວາຍ ແລະບໍ່ກົງວົນຢ້ານພຣະເຈົ້າອີກຕໍ່ໄປ ທັງນີ້ເພາະມີຊາຕານຢູ່ໃນຈິດໃຈຂອງເຂົາ

ບັນດາຜູ້ທີ່ມີຄວາມຂັດແຍ່ງກັນ ກໍຖືກກຳລັງຂອງອີກຝ່າຍຂ້າຢ່າງທາລຸນຢ່າງໄຮ້ຄວາມເມດຕາ ແມ່ນແຕ່ຄວາມບໍຣິສຸດຂອງພຣະວິຫານກໍບໍ່ພົ້ນຈາກຄວາມບາບຫຍາບຊ້າຂອງເຂົາ ພຣະວິຫານເປິະເປື້ອນດ້ວຍເລືອດ ແລະຊາກສົບຜູ້ທີ່ຍຸຍົງສິ່ງເສີມຄວາມໂຫດຮ້າຍຄັ້ງນີ້ໄດ້ສະແດງໃຫ້ເຫັນວ່າ ເຂົາບໍ່ມີຄວາມຢ້ານວ່າກຸງເຢຣູຊາເລັມຈະຖືກທຳລາຍ ເພາະເປັນນະຄອນຂອງພຣະເຈົ້າ ແມ່ນໃນຂນະທີ່ໂຣມັນຍຶດ ຄອງພຣະວິຫານຢູ່ນັ້ນ ປະຊາຊົນມີຄວາມເຊື່ອວ່າພຣະຜູ້ສູງສຸດຈະຊ່ອຍເຂົາໃຫ້ມີຊັຍຊະນະເໜືອສັດຕຣູໄດ້ ແຕ່ອິສຣະເອນໄດ້ປະຕິເສດຍອມຮັບການຄຸ້ມຄອງຂອງພຣະເຈົ້າ ແລະບັດນີ້ຈຶ່ງບໍ່ມີຜູ້ໃດມາປົກປ້ອງ

## ລາງບອກເຫດພັຍພິບັດ

ຄຳພະຍາກອນທັງໝົດ ທີ່ພຣະຄຣິດຊົງທຳນວາຍກ່ຽວກັບກຸງເຢຣູຊາເລັມຖືກທຳລາຍນັ້ນໄດ້ສຳເຣັດຈິງທຸກຕົວອັກສອນ ເຄື່ອງໝາຍແລະການອັສຈັນຕ່າງໆ ໄດ້



ພວກເຂົາໄດ້ເທສນາສັ່ງສອນຂ່າວປະເສີດທີ່ພຣະຄຣິດຊົງມອບໝາຍເຖິງແມ່ນວ່າເຂົາຈະບໍ່ສາມາດຢັ່ງຮູ້ຄວາມໝາຍ ຂນະທີ່ພວກເຂົາປະກາດສິ່ງທີ່ມີຢູ່ໃນດານີເອນບົດທີ່ 9:25 ເຂົາບໍ່ເຫັນພຣະຄັມພີຂໍ້ຕໍ່ໄປທີ່ບອກວ່າຜູ້ຖືກເຈີມຈະຕ້ອງຖືກ “ຕັດອອກ” ຈິດໃຈຂອງພວກເຂົາເຝົ້າແຕ່ຄິດເຖິງແຕ່ສະງ່າຣາສີແຫ່ງອານາຈັກຂອງໂລກນີ້ ສິ່ງນີ້ແຫລະທີ່ເຮັດໃຫ້ຈິດໃຈຂອງພວກເຂົາມືດມົນແລະບໍ່ເຂົ້າໃຈ ພວກເຂົາເຝົ້າຫວັງທີ່ຈະເຫັນພຣະຜູ້ເປັນເຈົ້າສະເດັດຂຶ້ນຄອງບັນລັງຂອງກະສັດດາວິດ ແຕ່ກັບເຫັນພຣະອົງຖືກຈັບ ຖືໂບຍຕີ ຖືກເຢາະເຢີ້ຍຢຽມຫຍາມແລະຖືກປະນາມເທິງໄມ້ກາງແຂນ ໄດ້ສ້າງຄວາມຮູ້ສຶກຜິດຫວັງ ແລະຄວາມເຈັບປວດບີບຄັ້ນໃນຫົວໃຈຂອງເຫລົ່າສາວົກເປັນຢ່າງຍິ່ງ

ພຣະຄຣິດໄດ້ສະເດັດມາຕາມຕົງເວລາທີ່ກຳນົດໄວ້ ພຣະຄັມພີໄດ້ສຳເຣັດຈິງທຸກປະການ ພຣະທັມແລະພຣະວິນຍານຂອງພຣະເຈົ້າໄດ້ພິສູດໃຫ້ເຫັນພາຣະທີ່ພຣະເຈົ້າຊົງມອບໝາຍໃຫ້ແກ່ພຣະບຸດ ແຕ່ຈິດໃຈຂອງເຫລົ່າສາວົກຍັງມີຄວາມສົງສັຍຢູ່ ຫາກພຣະເຢຊູເປັນພຣະເມຊີອາແທ້ພວກເຂົາຈະໄດ້ຮັບຄວາມເສົ້າໂສກແລະຜິດຫວັງຢ່າງນີ້ບໍ່ ນີ້ຄືຄຳຖາມອັນເຈັບປວດຢູ່ໃນຈິດວິນຍານຂອງເຫລົ່າສາວົກຊ່ວງວັນຊະບາໂຕລະຫວ່າງການສິ້ນພຣະຊົນແລະການຄືນພຣະຊົນຂອງພຣະອົງ

ແຕ່ພວກສາວົກກໍບໍ່ໄດ້ຖອດຖິ້ມ “ເວລານີ້ຂ້ອຍຢູ່ໃນຄວາມມືດ ແຕ່ພຣະຜູ້ເປັນເຈົ້າເປັນແສງສວ່າງຂອງຂ້ອຍ” “ຄວາມສວ່າງຈະໂຜ່ຂຶ້ນມາໃນຄວາມມືດ” “ເຮົາຈະຈູງຄົນຕາບອດຂອງເຮົາໄປຕາມທາງທີ່ເຂົາບໍ່ເຄີຍໄປ ຈະໃຫ້ຄວາມມືດຂອງເຂົາກາຍເປັນແສງສວ່າງ ແລະຈະໃຫ້ບ່ອນສູງຕ່ຳເປັນບ່ອນຮາບພຽງ ສິ່ງເຫລົ່ານີ້ເຮົາຈະຕ້ອງກະທຳ” (ມີກາ 7:8,9; ເພັງສັນລະເສີນ 112:4; ເອຊາຢາ 42:16)

ຄຳປະກາດຂອງເຫລົ່າສາວົກນັ້ນຖືກຕ້ອງທຸກຢ່າງ “ເວລາກຳນົດມາເຖິງແລະແຜ່ນດິນຂອງພຣະເຈົ້າກໍມາເຖິງແລ້ວ” ເມື່ອເຖິງກຳນົດ “ເວລາ” ຫົກສິບເກົ້າສັປດາໃນດານີເອນບົດທີ່ 9 ຊຶ່ງຍືດເຍື້ອໄປຈົນເຖິງພຣະເມຊີອາ “ຜູ້ຖືກເຈີມໄວ້” ພຣະຄຣິດຖືກເຈີມໂດຍພຣະວິນຍານບໍຣິສຸດ ຫລັງຈາກທີ່ໂຢຮັນຜູ້ບັບຕິສາມາໄດ້ໃຫ້ບັບຕິສມາແກ່ພຣະອົງ “ອານາຈັກຂອງພຣະເຈົ້າ” ບໍ່ໃຊ່ອານາຈັກຂອງໂລກຢ່າງທີ່ພວກເຮົາຄິດ ແຕ່ເປັນອານາຈັກທີ່ດຳຣົງຢູ່ນິຣັນໃນອານາຄົດຊຶ່ງ “ຣາຊອານາຈັກທັງສິ້ນຈະປົນນິບັດແລະເຊື່ອຟັງທ່ານ” (ດານີເອນ 3:27)

ຊົງທຳນາຍໄວ້ເຖິງຄວາມທຸກທໍຣະມານຂອງພຣະຄຣິດ ແລະເຖິງສະງ່າຣາສີທີ່ຈະມາພາຍຫລັງຄວາມທຸກຮ້ອນທໍຣະມານນັ້ນ, ກໍຊົງສະແດງໃຫ້ພວກຜູ້ປະກາດພຣະທັມນັ້ນຊາບວ່າທີ່ເຂົາເຫລົ່ານັ້ນໄດ້ປະຕິບັດໃນເຫດການທັງປວງນັ້ນ ບໍ່ແມ່ນສຳລັບເຂົາເອງ ແຕ່ສຳລັບທ່ານທັງຫລາຍ ບັດນີ້ຄົນເຫລົ່ານັ້ນທີ່ປະກາດຂ່າວປະເສີດແກ່ທ່ານທັງຫລາຍໄດ້ກ່າວສິ່ງເຫລົ່ານັ້ນແກ່ພວກທ່ານແລ້ວ ໂດຍພຣະວິນຍານບໍຣິສຸດຜູ້ຊົງຮັບໃຊ້ມາຈາກສວັນ ເຫດການເຫລົ່ານີ້ເປັນສິ່ງຊຶ່ງພວກເທວະດາປາຖນາຈະພິຈາຣະນາເບິ່ງ" (1ເປໂຕ 1:10-12)

ນັບວ່າເປັນບົດຮຽນທີ່ດີເລີດສຳລັບປະຊາກອນຂອງພຣະເຈົ້າໃນຍຸກຂອງຄຣິສະຕຽນ ບັນດາຜູ້ບໍຣິສຸດເຫລົ່ານັ້ນຂອງພຣະເຈົ້າໄດ້ "ສືບຄົ້ນແລະສອບຖາມ" ກ່ຽວກັບນິມິດທີ່ພຣະເຈົ້າໄດ້ຊົງສຳແດງໃຫ້ແກ່ຄົນທັງຫລາຍແມ່ນຍັງບໍ່ເກີດມາໃນໂລກ ຊ່າງເປັນການຕຳນິບັນດາຄົນທີ່ຮັກແຕ່ສິ່ງໂລກ ທີ່ຖືວ່າຄຳພຍາກອນທັງຫລາຍເປັນສິ່ງທີ່ບໍ່ສາມາດເຂົ້າໃຈໄດ້

ບໍ່ຄ່ອຍມີຫລາຍທີ່ຂນົບທັມນຽມປະເພນີແລະຫລັກຄຳສອນທີ່ຫຼຽມເທັດຈະເຮັດໃຫ້ຈິດໃຈຂອງຄົນທັງຫລາຍລວມທັງຜູ້ຮັບໃຊ້ຂອງພຣະເຈົ້າຫລົງງົມງວາຍແລະເຂົ້າໃຈສິ່ງທີ່ໄດ້ເປີດເຜີຍໄດ້ໃນພຣະທັມຂອງພຣະອົງພຽງບາງສ່ວນ ແມ່ນແຕ່ອັຄສາວົກຂອງພຣະຄຣິດ ເມື່ອພຣະຜູ້ຊ່ອຍຢູ່ກັບເຂົາກໍຍັງມີຄວາມຄິດວ່າພຣະເມຊີອາເປັນເຈົ້າຊາຍທີ່ຈະມາສ້າງອານາຈັກຂອງອິສຣະເອນໃຫ້ເປັນຊາດທີ່ຍິ່ງໃຫຍ່ໄປທົ່ວໂລກ ພວກເຂົາບໍ່ເຂົ້າໃຈພຣະທັມຂອງພຣະອົງທີ່ໄດ້ບອກລ່ວງໜ້າເຖິງຄວາມທຸກທໍຣະມານແລະຄວາມຕາຍຂອງພຣະອົງ

## "ເວລາກຳນົດມາເຖິງແລ້ວ"

ພຣະຄຣິດໄດ້ຊົງສົ່ງຂ່າວໃຫ້ກັບຄົນທັງຫລາຍວ່າ "ເວລາກຳນົດມາເຖິງແລ້ວ ຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ແລະເຊື່ອໃນຂ່າວປະເສີດເຖີດ" (ມາຣະໂກ 1:15) ຂ່າວນີ້ມີຮາກຖານມາຈາກຄຳພະຍາກອນໃນດານີເອັນບົດທີ 9 ທີ່ກ່າວວ່າ "ຫົກສິບເກົ້າສັປດາ" ໄດ້ຍືດຍາວໄປຈົນເຖິງ "ສມັຍຜູ້ຖືກເຈີມ" (ພຣະເມຊີອາ) ແລະເຫລົ່າສາວົກຕ່າງກໍລໍຄອຍອານາຈັກຂອງພຣະເມຊີອາມາຕັ້ງຢູ່ກຸງເຢຣູຊາເລັມເພື່ອຄອບຄອງເໜືອໂລກນີ້



ປາກົດແລ້ວ ເປັນເວລາເຈັດປີທີ່ຊາຍຄົນນຶ່ງໄດ້ເດີນທາງໄປມາຕາມຖນົນຂອງກຸງເຢຣູຊາເລັມ ເພື່ອປະກາດໃຫ້ປະຊາຊົນໄດ້ຮູ້ເຖິງພັຍພິບັດທີ່ຈະມາເຖິງ ລາວຖືກຂັງແລະຂ້ຳໂບຍຕີ ເມື່ອລາວຖືກດ່າປະຈານແລະປມາດຢຽມຫຍາມລາວເວົ້າແຕ່ພຽງວ່າ "ກຸງເຢຣູຊາເລັມຈົ່ງພິນາດ ຈົ່ງພິນາດ" ໃນທີ່ສຸດລາວກໍຖືກຂ້າເພາະຄຳທຳນວາຍນັ້ນ

ບໍ່ມີຄຣິສຕຽນຈັກຄົນຖືກທຳລາຍໄປກັບກຸງເຢຣູຊາເລັມ ຫລັງຈາກນັ້ນກອງທັບໂຣມັນພາຍໃຕ້ການບັນຊາຂອງເຊສທີອັສໄດ້ລ້ອມເມືອງໄວ້ ບໍ່ນານລາວກໍຍົກເລີກການລ້ອມເມືອງນັ້ນຢ່າງກະທັນຫັນ ເຖິງແມ່ນຈະມີໂອກາດເໝາະແກ່ການເຂົ້າໂຈມຕີ ແຕ່ພວກທະຫານໂຣມັນກໍຖອຍທັບກັບໂດຍບໍ່ມີເຫດຜົນ ນີ້ເປັນເຄື່ອງໝາຍແຫ່ງຄຳສັນຍາໄວ້ກັບຄຣິສະຕຽນທີ່ລໍຄອຍ (ລູກາ 21:20,21)

ເຫດການຕ່າງໆ ບອກໃຫ້ເຫັນແຈ້ງວ່າທັງຊາວຢິວແລະໂຣມັນກໍບໍ່ສາມາດຂັດຂວາງການຫລົບໜີຂອງຄຣິສະຕຽນ ໃນການລ່າຖອຍຂອງເຊສທີອັສຄັ້ງນີ້ຊາວຢິວຕິດຕາມໄປຂັບໄລ່ ແລະຂນະທີ່ທັງສອງຝ່າຍກຳລັງຕໍ່ສູ້ກັນຢູ່ນັ້ນຄຣິສຕຽນທົ່ວທັງແຜ່ນດິນສາມາດຫລົບໜີໄປຍັງສະຖານທີ່ທີ່ປອດພັຍທີ່ເມືອງເພນລາ

ກອງກຳລັງຂອງຢິວຂັບໄລ່ກອງກຳລັງຂອງເຊສທີອັສບໍ່ສຳເຣັດ ກອງທັບໂຣມັນກໍລ່າຖອຍໄປ ຊາວຢິວພາກັນກັບກຸງເຢຣູຊາເລັມຢ່າງມີຊັຍ ແຕ່ຄວາມສຳເຣັດຂອງພວກເຂົານຳມາຊຶ່ງຄວາມຊົ່ວຮ້າຍ ເພາະເຫດໂຣມັນເກີດຄວາມແຄ້ນແລະຄວາມແຄ້ນນັ້ນເອງໄດ້ນຳຄວາມວິບັດມາສູ່ກຸງທີ່ປະສົບເຄາະກັມໃນທີ່ສຸດ

ກຸງເຢຣູຊາເລັມກຳລັງໄດ້ຮັບຄວາມຫາຍນະອີກເທື່ອນຶ່ງ ເມື່ອທີຕັດກັບມາລ້ອມກຸງອີກ ໃນຂນະນັ້ນຢູ່ໃນລະຫວ່າງເທສະການປັສະຄາ ຊາວຢິວນັບລ້ານໆ ຄົນກຳລັງປະຊຸມກັນຢູ່ໃນກຳແພງເມືອງ ອາຫານແລະສິ່ງທີ່ເກັບສະສົມໄວ້ນັ້ນຖືກທຳລາຍເມື່ອຄັ້ງມີການແຕກແຍກກັນພາຍໃນ ຂນະນີ້ທຸກຄົນກຳລັງປະສົບກັບຄວາມອຶດຢາກ ຜູ້ຊາຍບາງຄົນແກະກິນສາຍແອວໜັງ ເກີບແຕະແລະໜັງຫຸ້ມໂລ່ ບາງຄົນກໍລັກເລັດລອດອອກໄປເກັບໃບໄມ້ທີ່ຂຶ້ນຕາມທັມມະຊາດນອກກຳແພງເມືອງ ບາງຄົນກໍຖືກຈັບໄດ້ແລ້ວຖືກນຳໄປທໍຣະມານຈົນຕາຍ ສຳລັບຜູ້ທີ່ໜີລອດເຂົ້າກຳແພງໄດ້ກໍຖືກຍາດຊິງພືດຜັກທີ່ເກັບມານັ້ນເສັຽ ສາມີຍາດຊິງຈາກພັນລະຍາ ແລະພັນລະຍາກໍຍາດຊິງຈາກສາມີ ລູກໆ ກໍຍາດຊິງເອົາອາຫານຈາກປາກຂອງພໍ່ແມ່

ຜູ້ນຳໂຣມັນພຍາຍາມກຳລັງລ້ອມກຸງເຢຣູຊາເລັມຄັ້ງນີ້ ກໍເພື່ອເຮັດໃຫ້ຊາວຢິວຍອມຈຳນົນ ພວກນັກໂທດຖືກຂ້າຕີ ຖືກທໍຣະມານ ແລະຖືກຄຶງເທິງໄມ້ ກາງແຂນນອກກຳແພງເມືອງ ຕາມຮ່ອມພູເຢໂຮຊາຟັດແລະເທິງພູຄາວາຣີ ໄມ້ກາງແຂນຕັ້ງລຽງລາຍກັນຢູ່ເປັນຈຳນວນຫລວງຫລາຍ ຈົນແທບຈະບໍ່ມີທີ່ຫລົງເຫລືອ ສະພາບເຊັ່ນນີ້ເກີດຂຶ້ນຕາມຄຳສາບແຊ່ງທີ່ໄດ້ກ່າວຕໍ່ໜ້າການພິພາກສາຂອງປີລາດວ່າ "ໃຫ້ໂທດເຣື່ອງຄວາມຕາຍຂອງມັນຕົກໃສ່ພວກເຮົາທັງລູກຫລານຂອງເຮົາ" (ມັດທາຍ 27:25)

ທິຕັດຮູ້ສຶກຂວັນເສັຽ ເມື່ອເຫັນຊາກສົບລຽງລາຍຢູ່ຕາມຮ່ອມພູ ເມື່ອລາວເຂົ້າໄປທາງປະຕູເມືອງ ລາວມີຄຳສັ່ງຫ້າມທຳລາຍພຣະວິຫານ ແມ່ນແຕ່ກ້ອນຫີນກ້ອນນຶ່ງກໍບໍ່ໃຫ້ແຕະຕ້ອງ ລາວຂໍຮ້ອງຜູ້ນຳຂອງຢິວວ່າຢ່າພຍາຍາມເຮັດໃຫ້ເຂົາຕ້ອງເຮັດໃຫ້ສະຖານທີ່ສັກສິດນີ້ເປິະເປື້ອນໄປດ້ວຍເລືອດ ແລະຫາກພວກເຂົາສູ້ຮົບໃນສະຖານທີ່ອື່ນບໍ່ມີໂຣມັນຄົນໃດຈະທຳລາຍພຣະວິຫານນີ້ໄດ້ ໂຈເຊຟັສ ເວົ້າຊັກຊວນໃຫ້ທຸກຄົນຍອມເພື່ອຮັກສາຊີວິດຂອງພວກເຂົາ ຮັກສາເມືອງຂອງເຂົາແລະສະຖານນະມັດສະການ ແຕ່ພວກເຂົາກັບສາບແຊ່ງຂອງຄົນກາງຄົນສຸດທ້າຍ ຊາຍຜູ້ນີ້ຈຶ່ງຖືກຍິງດ້ວຍລູກທະນູເສັຽຊີວິດ ຄວາມພຍາຍາມທີ່ຈະຮັກສາພຣະວິຫານຂອງທິຕັດຈຶ່ງໝົດຄວາມໝາຍ ເພາະພຣະອົງຜູ້ຍິ່ງໃຫຍ່ກວ່າລາວໄດ້ປະກາດໄວ້ແລ້ວວ່າແມ່ນແຕ່ກ້ອນຫີນກ້ອນນຶ່ງກໍຈະບໍ່ຊ້ອນທັບກັນ

ໃນທີ່ສຸດທິຕັດຈຶ່ງຕັດສິນໃຈເຂົ້າຍຶດຄອງພຣະວິຫານດ້ວຍການໂຈມຕີລາວຄິດວ່າເປັນວິທີທີ່ອາດຈະຮັກສາພຣະວິຫານບໍ່ໃຫ້ຖືກທຳລາຍໄດ້ ແຕ່ບໍ່ມີໃຜຟັງຄຳສັ່ງຂອງລາວທະຫານພຸ່ງໂຄມໄຟເຂົ້າທາງໜ້າມູມຂອງພຣະວິຫານທີ່ເປີດຢູ່ ທັນໃດນັ້ນໄຟກໍລຸກໄໝ້ພຣະວິຫານຢ່າງລວດເລວ ທິຕັດຮີບເຂົ້າໄປເພື່ອສັ່ງທະຫານດັບໄຟນັ້ນໃຫ້ໄດ້ ແຕ່ບໍ່ມີໃຜໄດ້ຍິນຄຳສັ່ງຂອງລາວ ທະຫານຍິ່ງພຸ່ງໂຄມໄຟເພີ່ມເຂົ້າໄປອີກແລ້ວເຂົ້າໄປຂ້າພວກຢິວທີ່ຫລົບຕົວຢູ່ໃນພຣະວິຫານ ເລືອດຫລັ່ງໄຫລຕາມບັນໃດພຣະວິຫານເໝືອນນ້ຳ

ຫລັງຈາກພຣະວິຫານຖືກທຳລາຍແລ້ວ ກຸງເຢຣູຊາເລັມຕົກເປັນເມືອງຂຶ້ນຂອງໂຣມ ພວກຜູ້ນຳຂອງຢິວລະຖິ້ມປ້ອມປະການທີ່ແຂງແກ່ງຂອງເຂົາໄປ ທິຕັດ



ບົດທີ່ 19

# ເປັນຫຍັງຈຶ່ງກາຍເປັນຜິດຫວັງຄັ້ງຍິ່ງໃຫຍ່

ພຣະຣາຊກິດຂອງພຣະເຈົ້າທຸກຍຸກທຸກສມັຍໄດ້ສະແດງໃຫ້ເຫັນເໝືອນກັນຢ່າງແຈ່ມແຈ້ງໃນລັກສະນະຂອງການປະຕິຮູບຫລືຂະບວນການທາງສາສນາທີ່ຍິ່ງໃຫຍ່ ຫລັກການທີ່ພຣະເຈົ້າຊົງໃຊ້ຕິດຕໍ່ກ່ຽວຂ້ອງກັບມະນຸດນັ້ນເປັນຫລັກການຢ່າງດຽວກັນ ການເຄື່ອນໄຫວຂອງກິຈການຄັ້ງສຳຄັນກ່ຽວກັບສາສນາໃນປັດຈຸບັນມີສິ່ງຄ້າຍຄືກັບການເຄື່ອນໄຫວຄັ້ງສຳຄັນໆ ໃນອະດີດແລະປະສົບການຂອງຄຣິສຕະຈັກໃນອະດີດຍ່ອມເປັນບົດຮຽນໃນສມັຍຂອງເຮົາດ້ວຍ

ພຣະເຈົ້າຊົງໃຊ້ພຣະວິນຍານບໍຣິສຸດຂອງພຣະອົງ ໃຫ້ນຳຜູ້ຮັບໃຊ້ຂອງພຣະອົງໃນໂລກນີ້ ດຳເນີນງານແຫ່ງຄວາມລອດຂອງມະນຸດ ເຂົາເປັນເຄື່ອງມືໃນພຣະຫັດຂອງພຣະເຈົ້າ ໄດ້ຮັບຄຳຕັກເຕືອນສັ່ງສອນພຽງພໍທີ່ຈະເຮັດໃຫ້ສາມາດທຳງານທີ່ພຣະເຈົ້າມອບໝາຍໃຫ້ເຮັດໄດ້ ແຕ່ບໍ່ມີຜູ້ໃດສາມາດທີ່ຈະຢັ່ງຮູ້ໃນທິດທາງຂອງຂ່າວທີ່ເຂົາປະກາດໃນພຣະທັມຂອງພຣະອົງໄດ້ທັງໝົດ ແມ່ນແຕ່ຜູ້ປະກາດພຣະທັມເອງກໍບໍ່ສາມາດຢັ່ງຮູ້ການເປີດເຜີຍທີ່ໃຫ້ແກ່ພວກເຂົາໄດ້ໝົດ ຄວາມໝາຍໄດ້ຖືກເກັບຊ່ອນໄວ້ຕລອດເວລາທີ່ຜ່ານມາ

ເປໂຕໄດ້ກ່າວເຖິງຄວາມລອດນີ້ວ່າ ບັນດາຜູ້ປະກາດພຣະທັມຜູ້ໄດ້ທຳນວາຍເຖິງພຣະຄຸນ ຊຶ່ງຈະບັງເກີດແກ່ທ່ານທັງຫລາຍກໍໄດ້ຄົ້ນຄ້ວາແລະສືບຖາມຫາຢ່າງຖີ່ຖ້ວນກ່ຽວກັບເຣື່ອງຄວາມພົ້ນນີ້ ເຂົາໄດ້ສືບຄົ້ນຫາວ່າພຣະວິນຍານຂອງພຣະຄຣິດ ຜູ້ຊົງສະຖິດຢູ່ໃນເຂົາໄດ້ຊົງບົ່ງໄວ້ເຖິງຄາວໃດ ແລະເວລາຢ່າງໃດ ເມື່ອພຣະອົງ

ສີທັງສອງເຫລັ້ມນີ້ມີຄຳແນະນຳສັ່ງສອນກ່ຽວກັບເຫດການທີ່ຈະເກີດຂຶ້ນໃນຊ່ວງສຸດທ້າຍຂອງປະຫວັດສາດໂລກ

ທ່ານໂຢຮັນໄດ້ເຫັນພັຍອັນຕຣາຍ ການຕໍ່ສູ້ແລະການຊ່ວຍກູ້ປະຊາກອນຂອງພຣະເຈົ້າຄັ້ງສຸດທ້າຍ ທ່ານໄດ້ບັນທຶກຂ່າວທີ່ພຣະເຈົ້າປະທານໃຫ້ກັບມະນຸດໃນວາຣະສຸດທ້າຍເຮັດໃຫ້ໂລກນີ້ພ້ອມເພື່ອການເກັບກ່ຽວ ເພື່ອຈະໄດ້ເກັບໄວ້ໃນຍຸ້ງສາງໃນສວັນຫລືເພື່ອເຜົາຜານດ້ວຍໄຟທຳລາຍໂລກ ເພື່ອຄົນທັງຫລາຍທີ່ຫັນກັບຈາກຄວາມຜິດມາສູ່ຄວາມຈິງ ຈະໄດ້ຮັບຄຳສອນກ່ຽວກັບຫາຍນະແລະການຕໍ່ສູ້ທີ່ຢູ່ຕໍ່ໜ້າເຂົາ

ເມື່ອເປັນເຊັ່ນນັ້ນ ເປັນຫຍັງຄົນທັງຫລາຍຈຶ່ງບໍ່ສົນໃຈສຶກສາສ່ວນທີ່ສຳຄັນຂອງພຣະທັມສັກສິດນີ້ ນີ້ຄືຜົນທີ່ເກີດຈາກການທີ່ເຈົ້າແຫ່ງຄວາມມືດພະຍາຍາມທີ່ຈະປົກປິດບໍ່ໃຫ້ມະນຸດຮູ້ວິທີການທີ່ມັນໃຊ້ຫລອກລວງມະນຸດ ດ້ວຍເຫດຜົນນີ້ເອງພຣະຄຣິດຜູ້ຊົງເປີດເຜີຍຊົງມອງເຫັນເຫດການລ່ວງໜ້າແລ້ວວ່າ ຈະມີສິ່ງຄວາມຕໍ່ສູ້ຂັດຂວາງຄົນທັງຫລາຍທີ່ສຶກສາໜັງສືພຣະນິມິດ ຈຶ່ງປະກາດອວຍພອນແກ່ບັນດາຜູ້ອ່ານຜູ້ຟັງ ແລະຖືຮັກສາຂໍ້ຄວາມທີ່ຂຽນໄວ້ໃນຄຳພະຍາກອນນີ້

ຈາກກຸ່ມນ້ອຍໆ ຂອງຜູ້ທີ່ເຊື່ອເຣື່ອງການສະເດັດກັບມາຄັ້ງທີ່ສອງຂອງມິນເລີໄດ້ກາຍເປັນກຸ່ມໃຫຍ່ຈົນຮຽກຕົວເອງວ່າ ຜູ້ລໍຄອຍການສະເດັດມາຂອງພຣະເຢຊູຄົນເຫລົ່ານີ້ມາຈາກທຸກຄະນະນິກາຍ ບໍ່ວ່າຈະເປັນຄຣິສຕະຈັກ ເມນທໍດິສທ໌ເພຣສໄບທີຣຽນ ແບ໊ບຕິສທ໌ ຄົນຈຳນວນບໍ່ນ້ອຍທີ່ຖືກຂັບອອກຈາກໂບດເພາະຄວາມເຊື່ອໃໝ່ຂອງຕົນ ພວກເຂົາພາກັນກຳນົດເວລາວັນທີ່ພຣະເຢຊູຈະສະເດັດມາ ໃນວັນທີ່ 22 ເດືອນ ຕຸລາ ປີ ຄ.ສ 1844 ແຕ່ເມື່ອເວລາມາເຖິງພຣະເຢຊູບໍ່ໄດ້ສະເດັດມາ ຈຶ່ງນຳຄວາມເສັຽໃຈຢ່າງໃຫຍ່ຫລວງສູ່ຄຣິສຕຽນກຸ່ມນີ້

ມີເຫດການຫລາຍປະການທີ່ພວກເຂົາຕ້ອງຜິດຫວັງ ແຕ່ສິ່ງທີ່ເກີດຂຶ້ນເປັນນ້ຳພຣະທັຍຂອງພຣະເຈົ້າທີ່ເຮັດໃຫ້ຂ່າວການສະເດັດມາຂອງພຣະເຢຊູຄຣິດໄດ້ປະກາດແຜ່ໄປທົ່ວໂລກ ຜົນຈາກຄວາມຜິດຫວັງຄັ້ງນັ້ນເຮັດໃຫ້ເກີດກຸ່ມທີ່ຮຽກຕົວເອງວ່າ "ຜູ້ລໍຄອຍການສະເດັດກັບມາຂອງພຣະເຢຊູ" (Adventists) ເລີ່ມກໍ່ຕົວຂຶ້ນຈົນກາຍມາເປັນຄຣິສຕະຈັກທີ່ເຕີບໂຕໃນເວລາຕໍ່ມາ



ປະກາດວ່າ ພຣະເຈົ້າຊົງປະທານຄົນເຫລົ່ານັ້ນໃຫ້ຢູ່ໃນເງື້ອມມືຂອງລາວ ບໍ່ມີເຄື່ອງມືອັນຊົງພະລັງໃດຕໍ່ຕ້ານເສິກອັນຍິ່ງໃຫຍ່ຄັ້ງນີ້ໄດ້ທັງເມືອງ ແລະພຣະວິຫານຖືກທຳລາຍລ້າງກ້ຽງ ພື້ນດິນທີ່ພຣະວິຫານອັນບໍຣິສຸດຕັ້ງຢູ່ "ເມືອງຊີໂອນຈະຖືກໄຖເໝືອນດັ່ງໄຖນາ" (ເຢເຣມີຢາ 26:18) ຄົນນັບລ້ານໆ ຖືກຂ້າຕາຍ ຜູ້ທີ່ມີຊີວິດລອດກໍຖືກນຳໄປເປັນຊະເລີຍ ຂາຍເປັນທາດ ແລະຖືກກະຊາກລາກຖູໄປຍັງໂຣມ ຖືກໂຍນໃຫ້ສັດປ່າທີ່ດຸຮ້າຍ ແລະບາງຄົນກໍກະຈັດກະຈາຍໄຮ້ທີ່ອາສັຍໄປທົ່ວໂລກ

ພວກຢິວເຮັດໃຫ້ຖ້ວຍແຫ່ງການແກ້ແຄ້ນເຕັມລົ້ນດ້ວຍຕົວເອງ ຄວາມວິບັດທີ່ເຂົາຕ້ອງແຕກກະຈັດກະຈາຍໃນຄັ້ງນີ້ເປັນເພາະຜົນທີ່ເຂົາໄດ້ເຮັດໄວ້ "ໂອ ອິສຣະເອນເອີຍເຈົ້າທຳລາຍເຈົ້າເອງ" "ບາບຂອງພວກເຈົ້າໄດ້ເຮັດໃຫ້ພວກເຈົ້າ ຕຳສະດຸດລົ້ມລົງ" (ໂຮເຊອາ 13:9, 14:1) ການທີ່ເຂົາໄດ້ຮັບຄວາມທຸກທໍຣະມານທຸກຄັ້ງ ພວກເຂົາຄິດວ່າເປັນການລົງໂທດໂດຍຕົງຈາກພຣະເຈົ້າ ດ້ວຍເຫດນີ້ຈຶ່ງເຮັດໃຫ້ຜູ້ຫລອກລວງຕົວສຳຄັນແອບປິດບັງງານຂອງມັນ ຄວາມຈິງແລ້ວເປັນເພາະເຂົາປະຕິເສດຄວາມຮັກຄວາມເມດຕາຂອງພຣະເຈົ້າ ທີ່ເຮັດໃຫ້ພຣະອົງຖອດຖອນການພິທັກຮັກສາອອກຈາກເຂົາໄປເສັຽ

ເຮົາບໍ່ສາມາດຮູ້ໄດ້ເລີຍວ່າເຮົາເປັນໜີ້ພຣະຄຣິດເທົ່າໃດ ສຳລັບສັນຕິສຸກແລະການປົກປັກຮັກສາທີ່ເຮົາໄດ້ຮັບພະລັງອຳນາດ ທີ່ໜ່ວງໜ່ຽວໄວ້ປົກປ້ອງ ມະນຸດຊາດຈາກການຕົກຢູ່ໃຕ້ການຄອບຄຸມຂອງຊາຕານ ຜູ້ທີ່ບໍ່ເຊື່ອຟັງ ແລະບໍ່ຮູ້ສຶກສຳນຶກໃນບຸນຄຸນຍ່ອມຈະມີຂໍ້ອ້າງໃນການລືມພຣະກະຣຸນາຄຸນຂອງພຣະເຈົ້າ ແຕ່ເມື່ອໃດທີ່ມະນຸດກະທຳເກີນຂອບເຂດຄວາມອົດກັ້ນ ຄວາມອົດທົນຂອງພຣະອົງກໍໝົດໄປເພາະພຣະເຈົ້າບໍ່ສາມາດຢືນຢູ່ໃນຖານະຜູ້ຮັບຄຳແກ້ຕົວຂອງຜູ້ທີ່ຖືກລົງໂທດ ເນື່ອງມາຈາກການລ່ວງລະເມີດຕໍ່ໄປໄດ້ ພຣະອົງຊົງລະຈາກບັນດາຜູ້ປະຕິເສດພຣະຄຸນ ໃຫ້ເຂົາເກັບກ່ຽວຜົນທີ່ເຂົາໄດ້ຫວ່ານໄປ ແສງສວ່າງທຸກຢ່າງທີ່ສ່ອງມາ ເມື່ອຖືກປະຕິເສດຄືເມັດທີ່ຫວ່ານລົງໄປ ຈະເກັບກ່ຽວຜົນຢ່າງແນ່ນອນບໍ່ຜິດພາດ ເມື່ອພຣະວິນຍານຂອງພຣະເຈົ້າຖືກປະຕິເສດ ໃນທີ່ສຸດກໍຈະຖອນຕົວອອກໄປ ຫລັງຈາກນັ້ນກໍຈະບໍ່ມີອຳນາດໃດຄວບຄຸມກິເລດຕັນຫາທັງຫລາຍຂອງຄວາມຊົ່ວໃນຈິດວິນຍານ ບໍ່ມີການປົກປ້ອງຄວາມປະສົງຮ້າຍ ແລະຄວາມເປັນສັດຕຣູຂອງຊາຕານອີກຕໍ່ໄປ

ຄວາມພິນາດຂອງກຸງເຢຣູຊາເລັມ ເປັນສິ່ງເຕືອນໃຈທີ່ໜ້າຢ້ານແກ່ຄົນທັງຫລາຍທີ່ຂັດຂວາງຄຳເຊີນຈາກພຣະກະຣຸນາຄຸນຂອງພຣະເຈົ້າ ຄຳພະຍາກອນຂອງພຣະຜູ້ຊ່ອຍໃຫ້ລອດກ່ຽວກັບການພິພາກສາ ກຸງເຢຣູຊາເລັມຈະສຳເຣັດອີກເທື່ອນຶ່ງ ຈາກສະຕາກັມຂອງກຸງເຢຣູຊາເລັມເຮັດໃຫ້ເຮົາມອງເຫັນເຖິງຊະຕາຊີວິດຂອງມະນຸສໂລກທີ່ໄດ້ປະຕິເສດພຣະເຈົ້າ ແລະຜູ້ທີ່ຢຽບຢ່ຳພຣະບັນຍັດຂອງພຣະອົງເປັນຢ່າງດີ ຄວາມດຳມືດຄືບັນທຶກຂອງທຸກເວດທະນາແຫ່ງມະນຸດທີ່ໂລກໄດ້ເປັນປະຈັກພະຍານ ຄວາມຊົ່ວຮ້າຍຕ່າງໆ ເປັນຜົນຈາກການປະຕິເສດອຳນາດຂອງສວັນ ແຕ່ພາບແຫ່ງຄວາມມືດນີ້ ໄດ້ຖືກນຳມາເປີດເຜີຍເພື່ອອານາຄົດ ເມື່ອການໜ່ວງໜ່ຽວຂອງພຣະວິນຍານບໍຣິສຸດຖືກຖອນອອກຈາກໂລກນີ້ຢ່າງສິ້ນເຊີງແລ້ວ ຈະບໍ່ມີຜູ້ໃດມາຄອຍກວດສອບຄວາມເດືອດດານຂອງມະນຸດ ແລະຄວາມຄຽດຂອງຊາຕານໄດ້ ແລ້ວໂລກກໍຈະໄດ້ເຫັນຜົນຂອງການປົກຄອງໂດຍຊາຕານຢ່າງບໍ່ເຄີຍມີມາກ່ອນ

ໃນວັນນັ້ນ ປະຊາກອນຂອງພຣະເຈົ້າຈະໄດ້ຮັບການຊ່ອຍກູ້ເຊັ່ນດຽວກັບເທື່ອທີ່ກຸງເຢຣູຊາເລັມຖືກທຳລາຍ (ເອຊາຢາ 4:3 ມັດທາຍ 34:30,31) ພຣະຄຣິດຈະສະເດັດມາຄັ້ງທີ່ສອງ ເພື່ອມາຮັບບັນດາຄົນທີ່ຊື່ສັດໃຫ້ໄປຢູ່ກັບພຣະອົງ "ເມື່ອນັ້ນໝາຍສຳຄັນຂອງບຸດມະນຸດຈະປາກົດຂຶ້ນໃນທ້ອງຟ້າ ມະນຸດທຸກຊາດທົ່ວໂລກຈະຕີອົກຮ້ອງໄຫ້ ແລ້ວຈະເຫັນບຸດມະນຸດສະເດັດມາເທິງເມກໃນທ້ອງຟ້າ ດ້ວຍຣິດທານຸພາບແລະສະງ່າຣາສີອັນໃຫຍ່ ພຣະອົງຈະໃຊ້ເທວະດາຂອງຕົນໄປດ້ວຍສຽງແກອັນດັງ ໃຫ້ຮວບຮວມເອົາຄົນທັງປວງທີ່ພຣະອົງຊົງເລືອກໄວ້ແລ້ວຈາກທິດທັງສີ່ ຕັ້ງແຕ່ທີ່ສຸດຟ້າເບື້ອງນີ້ຈົນເຖິງທີ່ສຸດຟ້າເບື້ອງນັ້ນ" (ມັດທາຍ 24:30,31)

ມະນຸດຊາດຈະລະມັດລະວັງ ດ້ວຍເກງວ່າຈະລະເລີຍຄຳຂອງພຣະຄຣິດ ດັ່ງທີ່ພຣະອົງໄດ້ຕັກເຕືອນບັນດາອັກຄະສາວົກເຖິງຄວາມພິນາດຂອງເຢຣູຊາເລັມ ເພື່ອເຂົາຈະໄດ້ຫາທາງຫລົບໜີ ດັ່ງນັ້ນ ພຣະອົງກໍຊົງເຕືອນມະນຸສໂລກເຖິງຄວາມພິນາດໃນວັນສຸດທ້າຍ ເພື່ອທຸກຄົນທີ່ເຊື່ອຟັງຈະໄດ້ໜີພົ້ນຈາກພຣະພິໂຣດທີ່ກຳລັງຈະມາເຖິງ "ຈະມີໝາຍສຳຄັນໃນດວງອາທິດ ໃນດວງຈັນແລະໃນດວງດາວທັງປວງ ແລະຈະມີຄວາມທຸກຮ້ອນເທິງແຜ່ນດິນໂລກຕາມປະເທດຕ່າງໆ ຊຶ່ງມີຄວາມສະງິນສົນເທເພາະສຽງກ້ອງອັນໃຫຍ່ຫລວງຂອງທະເລ ແລະທ້ອງຟ້າ" (ລູກາ 21:25, ມັດທາຍ 24:29, ມາຣະໂກ 13:24-26, ພຣະນິມິດ 6:12-17) ເຫດສັນນັ້ນ, ທ່ານທັງຫລາຍ



ສຸດຂອງພຣະເຈົ້າປະທານພະລັງຄວາມສາມາດທີ່ຈະຕຽມພ້ອມສຳລັບວັນຂອງອົງພຣະຜູ້ເປັນເຈົ້າ ຊີວິດປະຈຳວັນຂອງພວກເຂົາເປັນທີ່ຕຳນິຕິຕຽນຂອງສະມາຊິກໂບດທັງຫລາຍ ການຊອບທັມສນຸກສນານ ການສະແຫວງຫາເງິນຄຳແລະຄວາມທະເຍີທະຍານໃນການສແວງຫາກຽດຕິຍົດຊື່ສຽງໃນໂລກນີ້ ບໍ່ສາມາດລົບກວນຈິດໃຈຂອງຄົນເຫລົ່ານີ້ໄດ້ ດ້ວຍເຫດດັ່ງກ່າວພວກທີ່ຢູ່ຝ່າຍໂລກຈຶ່ງເປັນສັດຕຣູຕໍ່ສູ້ຂັດຂວາງຄວາມເຊື່ອເຣື່ອງການສະເດັດມາຄັ້ງທີ່ສອງຂອງພຣະຄຣິດ

ບັນດາຜູ້ທີ່ຂັດຂວາງໄດ້ພຍາຍາມເຮັດໃຫ້ທໍ້ໃຈດ້ວຍການສອນວ່າຄຳພະຍາກອນຕ່າງໆ ຖືກປະທັບຕຣາໄວ້ແລ້ວ ດ້ວຍເຫດນີ້ຄຣິສຕະຈັກໂປເຕສແຕນໄດ້ຈະເຣີນລອຍຕາມຝ່າຍໂຣມັນຄາທໍລິກ ຄຣິສຕະຈັກໂປເຕສແຕນທັງຫລາຍອ້າງວ່າສ່ວນສຳຄັນສ່ວນນຶ່ງຂອງພຣະທັມຂອງພຣະເຈົ້າ ທີ່ປາກົດໃຫ້ເຫັນໂດຍສະເພາະໃນສມັຍຂອງເຮົານັ້ນບໍ່ສາມາດເຂົ້າໃຈໄດ້ ບັນດາສິດຍາພິບານ ສາສນາຈານປະກາດວ່າດານີເອນແລະພຣະນິມິດເປັນຂໍ້ຄວາມເລິກລັບທີ່ບໍ່ສາມາດຈະເຂົ້າໃຈໄດ້

ແຕ່ພຣະຄຣິດຊົງຊີ້ແນະສາວົກຂອງພຣະອົງໃຫ້ສົນໃຈໃນຄຳພະຍາກອນຂອງດານີເອນ "ໃຫ້ຜູ້ອ່ານເຂົ້າໃຈເອົາ" (ມັດທາຍ 24:15) ແລະພຣະທັມພຣະນິມິດເປັນທີ່ຮູ້ຈັກແກ່ທຸກຄົນ "ພຣະນິມິດຂອງພຣະເຢຊູຄຣິດຊຶ່ງພຣະເຈົ້າໄດ້ຊົງໂປດປະທານແກ່ພຣະອົງ ເພື່ອຊີ້ແຈງແກ່ຜູ້ຮັບໃຊ້ທັງຫລາຍຂອງພຣະອົງ ເນື່ອງດ້ວຍເຫດການເຫລົ່ານັ້ນຊຶ່ງຈະຕ້ອງອຸບັດຂຶ້ນໃນບໍ່ຊ້າຜູ້ອ່ານແລະຜູ້ຟັງທັງຫລາຍໄດ້ຟັງຄຳພະຍາກອນເຫລົ່ານີ້ແລະຖືຮັກສາຂໍ້ຄວາມທີ່ຂຽນໃນຄຳພະຍາກອນນີ້ໄວ້ຈະໄດ້ຮັບຄວາມສຸກເພາະວ່າເວລານັ້ນໃກ້ເຂົ້າມາແລ້ວ" (ພຣະນິມິດ 1:1-3)

"ໃຫ້ຜູ້ອ່ານໄດ້ຮັບຄວາມສຸກ" ແຕ່ມີຫລາຍຄົນບໍ່ຍອມອ່ານ "ແລະຄົນທັງຫລາຍທີ່ຟັງ" ແຕ່ມີຫລາຍຄົນປະຕິເສດທີ່ຈະຟັງກ່ຽວກັບຄຳພະຍາກອນທຸກຢ່າງ "ແລະຖືຮັກສາຂໍ້ຄວາມທີ່ຂຽນໄວ້ໃນຄຳພະຍາກອນນີ້ໄວ້" ແຕ່ມີຫລາຍຄົນປະຕິເສດທີ່ຈະຟັງຄຳແນະນຳໃນພຣະທັມພຣະນິມິດ ຄົນເຫລົ່ານີ້ຈະບໍ່ສາມາດອ້າງທີ່ຈະໄດ້ຮັບພຣະພອນທີ່ຊົງສັນຍາໄວ້

ມະນຸດຍຶດຖືຢ່າງໃດທີ່ຈະສອນວ່າພຣະທັມພຣະນິມິດເປັນຄວາມເລິກລັບຍາກທີ່ມະນຸດຈະເຂົ້າໃຈໃນໜັງສືເຫລັ້ມນີ້ຄວາມເລິກລັບຖືກເປີດເຜີຍໃຫ້ຊາບ ເປັນໜັງສືທີ່ຖືກເປີດອອກ ການສຶກສາພຣະທັມພຣະນິມິດຈູງໃຈໃຫ້ສຶກສາດານີເອນ ໜັງ

ແຫ່ງຄວາມຊອບທັມເປັນຄົນມີໃຈຮ້ອນຮົນທີ່ຫລົງໄປ ພວກເຂົາຈິງໃຈເຮັດຊົ່ວຫລາຍຂຶ້ນກວ່າເກົ່າ ແຕ່ເມື່ອເຖິງເວລາທີ່ກຳນົດໄວ້ກັບການພິພາກສາຂອງພຣະເຈົ້າກໍມາເຖິງບັນດາຄົນທີ່ປະຕິເສດພຣະກະຣຸນາຄຸນຂອງພຣະອົງ

## ສົງສັຍແລະບໍ່ເຊື່ອ

ພຣະຄຣິດຊົງປະກາດວ່າດັ່ງເຊັ່ນຄົນທັງຫລາຍໃນສມັຍໂນອາ "ບໍ່ຮູ້ຕົວຈົນກະທັ່ງນ້ຳຖ້ວມແລະໄດ້ກວາດເອົາພວກເຂົາໄປຈົນໝົດສັນໃດ ເມື່ອບຸດມະນຸດສະເດັດມາກໍຈະເປັນສັນນັ້ນ" (ມັດທາຍ 24:39) ເມື່ອປະຊາກອນສະແດງຕົນວ່າເຊື່ອໃນພຣະເຈົ້າຮວມຕົວເຂົ້າກັບຊາວໂລກ ເມື່ອຄວາມຫລູຫລາຟຸ່ມເຟືອຍຂອງໂລກກັບກາຍມາເປັນຂອງຄຣິສຕະຈັກ ເມື່ອມະນຸດທຸກຄົນເຝົ້າຫວັງແຕ່ມັ່ງຄັ່ງຂອງໂລກໃນພາຍໜ້າ ທັນໃດນັ້ນເອງ ຂນະທີ່ເກີດຟ້າແມບຂຶ້ນ ຄວາມຫວັງອັນຈອມປອມຂອງພວກເຂົາຈະສູນສິ້ນໄປ ຂນະທີ່ພຣະເຈົ້າສົ່ງຜູ້ຮັບໃຊ້ຂອງພຣະອົງໃຫ້ເຂົ້າເຝົ້າເຕືອນມະນຸດໃນໂລກກ່ຽວກັບນ້ຳຖ້ວມສັນໃດ ພຣະເຈົ້າກໍຊົງສົ່ງຜູ້ຊີ້ຂ່າວທີ່ຖືກເລືອກສັນໃຫ້ປະກາດຂ່າວກ່ຽວກັບການພິພາກສາຄັ້ງສຸດທ້າຍໃກ້ເຂົ້າມາແລ້ວສັນນັ້ນ ແລະປະຊາຊົນໃນສມັຍຂອງໂນອາໄດ້ພາກັນຫົວຂວັນຄຳພະຍາກອນຂອງຜູ້ເທສນາແຫ່ງຄວາມຊອບທັມສັນໃດປະຊາກອນທີ່ສະແດງຕົນວ່າເປັນຜູ້ເຊື່ອກໍຈະໄດ້ເວົ້າເຢາະເຢີ້ຍຖ້ອຍຄຳແຫ່ງການຕັກເຕືອນກ່ຽວກັບການສະເດັດມາຂອງພຣະຄຣິດດ້ວຍເຊັ່ນກັນ

ບໍ່ມີຫລັກຖານໃດທີ່ເປັນເຄື່ອງພິສູດວ່າຄຣິສຕະຈັກທັງຫລາຍ ໄດ້ເຫີນຫ່າງຈາກພຣະເຈົ້າດີເທົ່າກັບການເປັນປະຕິປັກຕໍ່ຂ່າວທີ່ສົ່ງມາຈາກສວັນ

ຄົນທັງຫລາຍທີ່ຍອມຮັບຫລັກຄຳສອນກ່ຽວກັບການສະເດັດມາຂອງພຣະຄຣິດຮູ້ສຶກວ່າເຖິງເວລາແລ້ວທີ່ຈະຍຶດໝັ້ນໃນຄວາມເຊື່ອນີ້ "ສິ່ງທີ່ກ່ຽວຂ້ອງກັບຊີວິດນິຣັນດອນກັບກາຍເປັນຄວາມຈິງທີ່ສຳຄັນຍິ່ງ ທຸກຄົນຮູ້ສຶກວ່າເວລາມີນ້ອຍເຫລືອເກີນ ສິ່ງຕ່າງໆ ທີ່ເຂົາຄວາມກະທຳໃຫ້ກັບເພື່ອນມະນຸດດ້ວຍກັນຈະຕ້ອງເລີ່ມເຮັດໃຫ້ຊົ່ວທີ່ສຸດຊີວິດນິຣັນດອນຮູ້ສຶກຈະເປີດໃຫ້ແກ່ພວກເຂົາແລ້ວ" ພຣະວິນຍານບໍຣິ



ຈົ່ງເຝົ້າລະວັງຢູ່ "ນີ້ເປັນຄຳຕັກເຕືອນຂອງພຣະຄຣິດ (ມາຣະໂກ 13:35) ຜູ້ທີ່ເຊື່ອຟັງຄຳຕັກເຕືອນນີ້ຈະບໍ່ຖືກຖິ້ມໄວ້ໃນຄວາມມືດ

ຊາວໂລກບໍ່ໄດ້ຕຽມພ້ອມທີ່ຈະຮັບຄຳຕັກເຕືອນຂອງພຣະເຈົ້າໃນຍຸກນີ້ຫລາຍໄປກວ່າຊາວຢິວທີ່ບໍ່ຍອມຮັບຄຳຕັກເຕືອນຂອງພຣະຜູ້ຊ່ອຍໃຫ້ລອດ ກ່ຽວກັບຄວາມພິນາດຂອງເຢຣູຊາເລັມ ຈົ່ງມາຫາພຣະອົງເສັຽດຽວນີ້ ວັນຂອງອົງພຣະຜູ້ເປັນເຈົ້າຈະມາໃນຂະນະທີ່ຄົນອະທັມບໍ່ຮູ້ຕົວ ໃນຂະນະທີ່ຊີວິດດຳເນີນຢູ່ຕໍ່ໄປບໍ່ມີປ່ຽນແປງ ເວລາທີ່ມະນຸດມົກມົ້ນຢູ່ກັບຄວາມສຳລານ ທຸຣະກິດ ເວລາທີ່ຊອກຫາເງິນທອງ ເມື່ອຜູ້ນຳທາງສາສນາອວດອ້າງຄວາມກ້າວໜ້າຂອງໂລກ ແລະປະຊາຊົນຖືກຖລົ່ມໃຫ້ເຊື່ອໃນຄວາມປອດພັຍທີ່ຈອມປອມ ໃນເວລານັ້ນຄວາມພິນາດຈະເກີດຂຶ້ນແກ່ຄົນທີ່ປະມາດເລີ້ນເລີ ແລະຄົນອະທັມຢ່າງກະທັນຫັນ ເໝືອນຂະໂມຍທີ່ເຂົ້າມາໂຈຣະກັມໃນເຮືອນທີ່ບໍ່ມີຄົນເຝົ້າໃນຍາມທ່ຽງຄືນ "ເພາະວ່າເຈົ້າເອງກໍຮູ້ຢູ່ແລ້ວວ່າວັນຂອງພຣະຜູ້ເປັນເຈົ້າຈະມາເໝືອນຂະໂມຍມາໃນເວລາກາງຄືນ"...(1 ເທຊະໂລນິກ 5:2-5)

ແຜນການຂອງພຣະເຈົ້າທີ່ຊົງໂປຣດໃຫ້ພຣະເຢຊູສິ້ນພຣະຊົນເທິງໄມ້ກາງແຂນໄດ້ສຳເຣັດແລ້ວ ເມື່ອພຣະອົງໄດ້ຟື້ນຈາກຄວາມຕາຍ ຕໍ່ໄປນີ້ກໍເປັນໜ້າທີ່ຂອງບັນດາສາວົກຂອງພຣະອົງທີ່ຈະຕ້ອງທຳໜ້າທີ່ປະກາດຂ່າວປະເສີດຕໍ່ໄປ

ແຕ່ສັດຕຣູຂອງພຣະເຈົ້າກໍເລີ່ມແຜນການຂອງມັນເໝືອນກັນ ມັນໃຊ້ວິທີທຳລາຍຄົນຂອງພຣະເຈົ້າໂດຍອາສັຍອຳນາດຝ່າຍການເມືອງ ນັບຕັ້ງແຕ່ສະເຕເຟນຄຣິສະຕຽນຄົນທຳອິດທີ່ຖືກຂ້າຕາຍ ເພາະຄວາມເຊື່ອໃນປີ ຄ.ສ 87 ຈັກກະພັດໂດມິຊຽນ ແລະຈັກກະພັດເນໂຣ (ຄ.ສ. 37-68) ຜູ້ໄດ້ພະຍາຍາມທຳລາຍຄຣິສະຕຽນຈຳນວນຫລວງຫລາຍ ພຣະອົງກ່າວຫາວ່າຄຣິສະຕຽນເປັນຜູ້ເຜົາທຳລາຍກຸງໂຣມ ແລະເຊື່ອວ່າອາຈານໂປໂລແລະອັກຄະສາວົກເປໂຕ ຖືກປະຫານຊີວິດໃນສມັຍຂອງຣາຊາອົງນີ້ *ໃນຣາວປີ ຄ.ສ. 593 ໃນອີກສ່ວນນຶ່ງຂອງໂລກ ອານາຈັກນານເຈົ້າຂອງຄົນ ໄທຍ໌ກໍໄດ້ຮັບການສະຖາປານາຂຶ້ນ*

ແຕ່ໂລຫິດຂອງທັມມະກິຊົນເຫລົ່ານີ້ກັບເປັນເມັດທີ່ກະຈັດກະຈາຍອອກໄປ ຂ່າວປະເສີດກັບຖືກປະກາດໄປຫລາຍຍິ່ງຂຶ້ນ ການທຳລາຍຄຣິສະຕຽນຈຶ່ງໄຮ້ຜົນ.

ບົດທີ່ 2

# ຄຣິສະຕຽນກຸ່ມທຳອິດທີ່ຊື່ສັດ ແລະຈົງຮັກພັກດີ

ພຣະເຢຊູຄຣິດຊົງສຳແດງໃຫ້ເຫລົ່າສາວົກຂອງພຣະອົງໄດ້ເຫັນເຖິງການສະເດັດກັບມາດ້ວຍຣິດອຳນາດແລະສະງ່າຣາສີ ເຊັ່ນດຽວກັບເຫດການທີ່ພຣະອົງຈະຖືກຮັບໄປຈາກພວກເຂົາ ພຣະເນດຂອງພຣະອົງທະລຸໄປເຖິງອານາຄົດຊົງເຫັນພາບການຖືກກົດຂີ່ຂົ່ມເຫງທີ່ກຳລັງຈະເກີດຂຶ້ນກັບບັນດາຜູ້ຕິດຕາມພຣະອົງ (ມັດທາຍ 24:4, 9,21) ບັນດາຜູ້ຕິດຕາມພຣະຄຣິດຈະຕ້ອງເດີນຕາມຫົນທາງແຫ່ງຄວາມທຸກຍາກທີ່ພຣະອົງເຄີຍດຳເນີນມາແລ້ວ ຄຳໝິ່ນປມາດຕໍ່ພຣະຜູ້ຊ່ອຍໃຫ້ລອດຂອງໂລກກໍຈະເກີດຂຶ້ນອີກເທື່ອນຶ່ງກັບບັນດາຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ

ຄົນນອກສາສໜາຮູ້ລ່ວງໜ້າແລ້ວວ່າຂ່າວປະເສີດຈະຕ້ອງໄດ້ຊັຍຊະນະວິຫານແລະແທ່ນບູຊາຂອງເຂົາຈະຕ້ອງຖືກທຳລາຍ ດັ່ງນັ້ນໄຟແຫ່ງການກົດຂີ່ຂົ່ມເຫງຈຶ່ງໄດ້ຖືກຈູດຂຶ້ນ ຄຣິສະຕຽນຖືຊ່ວງຊີງຊັບສົມບັດ ແລະຖືກຂັບໄລ່ອອກຈາກບ້ານເຮືອນຂອງຕົນເອງ ຄົນຈຳນວນຫລວງຫລາຍບໍ່ວ່າຜູ້ດີຫລືທາດ, ຮັ່ງມີຫລືຍາກຈົນ ຜູ້ມີການສຶກສາ ແລະດ້ອຍການສຶກສາ ຖືກຂ້າຕາຍໄຮ້ຄວາມປານີ

ການກົດຂີ່ຂົ່ມເຫງໄດ້ເລີ່ມຕົ້ນຕັ້ງແຕ່ສມັຍຂອງເນໂຣ ຕໍ່ເນື່ອງເປັນເວລາຫລາຍສັດຕະວັດ ຄຣິສະຕຽນຖືກກ່າວຫາວ່າເປັນຕົ້ນເຫດຂອງການກັນດານອາຫານໂຣກຕິດຕໍ່ແລະແຜ່ນດິນໄຫວ ຜູ້ລາຍງານເທັດພ້ອມສເໜີທີ່ຈະຫາປໂຫຍດ ເພື່ອທໍຣະຍົດຜູ້ທີ່ບໍຣິສຸດຖືກກ່າວຫາວ່າເປັນພວກກະບົດ ແລະຕົວທຳລາຍສັງຄົມ ຄຣິສະຕຽນຈຳນວນຫລວງຫລາຍຖືກໂຍນໃຫ້ເປັນເຍື່ອຂອງສິງຫລືຖືກເຜົາທັງ
ເປັນທີ່ສະໜາມກິລາ ບາງຄົນກໍຖືກຄຶງເທິງໄມ້ກາງແຂນ ແລະບາງຄົນກໍຖືກຄຸມ



ຜູ້ຊຶ່ງໄດ້ລະຖິ້ມບ້ານທີ່ແສນສະດວກສະບາຍ ແລະອອກຄ່າໃຊ້ຈ່າຍເອງໃນການເດີນທາງເພື່ອປະກາດໃຫ້ໂລກຮູ້ເຖິງການພິພາກສາທີ່ກຳລັງກ້າວເຂົ້າມາຖືກເຢາະເຍີ້ຍຢຽບຫຍາມວ່າເປັນຄົນບ້າສາສານາ

## ສົນໃຈແຕ່ບໍ່ເຊື່ອ

ຄວາມສົນໃຈໄດ້ເພີ່ມພູນຫລາຍຂຶ້ນ ຈາກຫລາຍສິບເພີ່ມເປັນຫລາຍຮ້ອຍຄົນ ຈຳນວນສະມາຊິກເພີ່ມຂຶ້ນເປັນຫລາຍພັນຄົນ ແຕ່ຫລັງຈາກນັ້ນຊົ່ວໄລຍະນຶ່ງພວກທີ່ບໍ່ຍອມເຊື່ອຟັງຄຳສອນຂອງມິນເລີກໍຂັດຂວາງຜູ້ທີ່ກັບໃຈໃໝ່ທັງຫລາຍ ທາງຄຣິສຕະຈັກເລີ່ມເຂັ້ມງວດກັບຜູ້ທີ່ຍອມຮັບຄວາມຄິດຂອງມິນເລີ ການກະທຳຄັ້ງນີ້ເພິ່ນໄດ້ຂຽນຕອບໄປວ່າ “ຫາກເຮົາເປັນຜູ້ກະທຳໃນທາງທີ່ຜິດ ຈົ່ງສະແດງໃຫ້ເຮົາເຫັນດ້ວຍ ການອະທິຖານວ່າເຮົາຜິດຢູ່ບ່ອນໃດ ຈົ່ງພິສູດໃຫ້ເຮົາເຫັນຈາກພຣະທັມຂອງພຣະເຈົ້າວ່າເຮົາຜິດ ເຮົາໄດ້ຮັບການເຢາະເຍີ້ຍຢຽບຫຍາມຫລາຍພໍແລ້ວ ແຕ່ຈະບໍ່ມີທາງເຮັດໃຫ້ເຮົາເຫັນວ່າເຮົາຜິດ ພຣະທັມຂອງພຣະເຈົ້າເທົ່ານັ້ນທີ່ຈະປ່ຽນຄວາມຄິດຂອງເຮົາໄດ້ ເຮົາໄດ້ສລຸບເຫັນດ້ວຍຄວາມໄຕ່ຄວນແລະດ້ວຍການອະທິຖານຕາມທີ່ເຮົາໄດ້ເຫັນຫລັກຖານໃນພຣະຄັມພີ

ເມື່ອຄວາມຊົ່ວຮ້າຍຂອງມະນຸດໃນສມັຍກ່ອນນ້ຳຖ້ວມເປັນສາຍເຫດເຮັດໃຫ້ພຣະເຈົ້າສົ່ງນ້ຳມາຖ້ວມໂລກ ພຣະອົງຕຣັດບອກແກ່ມະນຸດທັງຫລາຍໃຫ້ຊາບພຣະປະສົງຂອງພຣະອົງກ່ອນເປັນໄລຍະເວລາເຖິງ 120 ປີທີ່ມີການປະກາດໃຫ້ກັບໃຈໃໝ່ແຕ່ພວກເຂົາບໍ່ເຊື່ອ ເຂົາເວົ້າລໍ້ລຽນຜູ້ຊີ້ຂ່າວຂອງພຣະເຈົ້າ ຖ້າຫາກຂ່າວທີ່ໂນອາໄດ້ປະກາດເປັນຄວາມຈິງ ເປັນຫຍັງມະນຸດທົ່ວໂລກຈຶ່ງບໍ່ເຂົ້າໃຈແລະເຊື່ອຂ່າວນັ້ນ ຊາຍຄົນດຽວເທົ່ານັ້ນເປັນຜູ້ຢືນຢັນສິ່ງນີ້ກັບສະຕິປັນຍາຂອງຄົນນັບເປັນພັນ ພວກເຂົາຈະບໍ່ຍອມເຊື່ອຄຳຕັກເຕືອນຫລືຊອກຫາບ່ອນລີ້ພັຍໃນນາວາ (ເຮືອ)

ຄົນທັງຫລາຍທີ່ເຢາະເຍີ້ຍຢຽບຫຍາມໄດ້ຊີ້ໄປຍັງຣະດູການທີ່ບໍ່ປ່ຽນແປງແລະທ້ອງຟ້າສີຄາມທີ່ບໍ່ເຄີຍມີຝົນ ພວກເຂົາດູໝິ່ນໂນອາແລະປະກາດວ່າຜູ້ເທສນາ

ເພິ່ນຕັ້ງແຕ່ປີ 1840 ຈົນເຖິງປີ 1844 ງານໄດ້ຈະເຣີນກ້າວໜ້າໄປຢ່າງກວ້າງຂວາງ ແລະວ່ອງໄວ

ມິນເລີ ມີກຳລັງສມອງທີ່ເຂັ້ມແຂງແລະເພິ່ນໄດ້ເພີ່ມພູນສະຕິປັນຍາແຫ່ງສວັນດ້ວຍການເຂົ້າສະນິດຢູ່ກັບພຣະອົງຜູ້ເປັນບໍ່ເກີດຂອງສະຕິປັນຍາ ເພິ່ນໄດ້ຮັບການຍົກຍ້ອງນັບຖືວ່າເປັນຜູ້ມີຄວາມສັດຊື່ແລະມີສິລທັມອັນສູງສົ່ງ ແຕ່ດ້ວຍການເປັນຄຣິສະຕຽນທີ່ມີຄວາມອ່ອນນ້ອມຖ່ອມຕົນ ເພິ່ນຈຶ່ງເປັນຄົນທີ່ມີຄວາມເອົາໃຈໃສ່ແລະສຸພາບອ່ອນນ້ອມຕໍ່ທຸກຄົນພ້ອມທີ່ຈະຟັງຄວາມຄິດເຫັນຂອງຜູ້ອື່ນ ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນເພິ່ນຈະພິສູດທິສະດີທຸກຢ່າງດ້ວຍພຣະທັມຂອງພຣະເຈົ້າແລະເນື່ອງຈາກວ່າເພິ່ນເປັນຄົນທີ່ມີເຫດຜົນແລະມີຄວາມຮູ້ໃນພຣະທັມດີ ມິນເລີຈຶ່ງສາມາດໂຕ້ແຍ້ງໃນສິ່ງທີ່ຜິດໄດ້

ເຖິງປານນັ້ນກໍຕາມ ເພິ່ນກໍເໝືອນກັບນັກປະຕິຮູບສມັຍກ່ອນ ບັນດາຄຣູສອນສາສນາທີ່ມີຊື່ສຽງກວ້າງຂວາງບໍ່ຍອມຮັບຄວາມຈິງທີ່ເພິ່ນສັ່ງສອນ ແຕ່ພວກເຂົາກໍບໍ່ສາມາດຢືນຢັນການກະທຳນີ້ດ້ວຍພຣະຄັມພີ ພວກເຂົາຈຶ່ງເພິ່ງໃນຫລັກຄຳສອນຂອງມະນຸດແລະເຄົານົບທັມນຽມຂອງບັນພະບຸຣຸດ ແຕ່ພຣະທັມຂອງພຣະເຈົ້າເປັນພະຍານດຽວເທົ່ານັ້ນທີ່ເປັນທີ່ຍອມຮັບຂອງບັນດານັກເທດຄວາມຈິງກ່ຽວກັບການສະເດັດກັບມາ ຝ່າຍກຸ່ມທີ່ຕໍ່ຕ້ານກໍໃຊ້ວິທີເຍາະເຍີ້ຍແລະດູໝິ່ນອັນຮ້າຍກາດຕໍ່ບັນດາຜູ້ທີ່ເຝົ້າຄອຍການສະເດັດກັບມາຂອງອົງພຣະຜູ້ເປັນເຈົ້າຂອງເຂົາ ແລະດ້ວຍການອົດທົນດຳເນີນຊີວິດ

ໃນຄວາມບໍຣິສຸດແລະຕຽມຄົນອື່ນໆ ໃຫ້ພ້ອມກັບການສະເດັດມາປາກົດຂອງພຣະອົງສຳກັບວ່າການສຶກສາຄຳພະຍາກອນເຣື່ອງການສະເດັດກັບມາແລະວາຣະສຸດທ້າຍຂອງໂລກເປັນຄວາມບາບ ດັ່ງນັ້ນ ບັນດານັກເທດທີ່ມີຊື່ສຽງຈຶ່ງບ້ອນທຳລາຍຄວາມເຊື່ອໃນພຣະທັມຂອງພຣະເຈົ້າ ຄຳສອນຂອງພວກເຂົາເຮັດໃຫ້ບຸກຄົນທົ່ວໄປກາຍເປັນຄົນນອກຮີດຫລາຍຄົນໄດ້ປະພຶດຊົ່ວຕາມທີ່ພໍໃຈແລ້ວບັນດາຜູ້ກະທຳຊົ່ວເຫລົ່ານີ້ກໍກ່າວຫາວ່າກຸ່ມທີ່ລໍຄອຍການສະເດັດກັບມາຄັ້ງທີ່ສອງເປັນຜູ້ທີ່ກະທຳຜິດ

ຂນະທີ່ຄຳສອນຂອງມິນເລີຊັກຈູງຜູ້ທີ່ມີສະຕິປັນຍາມາຟັງກັນຢ່າງແໜ້ນໜາ ໜັງສືທີ່ກ່ຽວກັບສາສນາກັບບໍ່ເອີ່ຍຊື່ຂອງເພິ່ນເລີຍ ນອກຈາກຖ້ອຍຄຳເຍາະເຍີ້ຍແລະຄຳກ່າວປະນາມ ຄົນທີ່ບໍ່ເຊື່ອພຣະຜູ້ເປັນເຈົ້າຖືກປຸກລະດົມໂດຍບັນດາຜູ້ສອນສາສນາໃຫ້ເວົ້າປມາດຢາດຫານຕົວເພິ່ນ ແລະງານຂອງເພິ່ນ ຊາຍຊະຣາຜົມສີຂາວ



ດ້ວຍໜັງຂອງສັດປ່າ ແລ້ວໂຍນລົງໄປຍັງເວທີປະລອງຝີມືເພື່ອໃຫ້ໝາກັດ ໃນວັນສລອງງານລື່ນເລີງແຫ່ງຊາດ, ປະຊາຊົນຈະນຳມາຊຸມນຸມກັນເພື່ອເຂົ້າຊົມ ແລະສນຸກສນານກັບການຕາຍຢ່າງທໍຣະມານຂອງຄົນເຫລົ່ານັ້ນ ພວກເຂົາພາກັນຫົວເລາະແລະຕົບມື

ຜູ້ຕິດຕາມພຣະຄຣິດຖືກບີບບັງຄັບໃຫ້ຫາສະຖານທີ່ຫ່າງໄກ ເພື່ອຫລົບໜີແຖບເຊີງພູນອກກຸງໂຣມ ມີການຂຸດອຸໂມງທະລຸໃຕ້ດິນ ແລະກົ້ງກ້ອນຫີນອອກໄປຈາກກຳແພງເມືອງໄລຍະທາງຍາວນັບເປັນໄມ ໃນອຸໂມງໃຕ້ດິນແຫ່ງ ນີ້ມີຜູ້ຕິດຕາມພຣະຄຣິດຫລາຍຄົນຖືກຝັງໄວ້ ແລະ ທີ່ແຫ່ງນີ້ເຊັ່ນກັນທີ່ຄຣິສະຕຽນຈຳນວນຫລວງຫລາຍຍຶດເປັນທີ່ອາສັຍເມື່ອຖືກເນຣະເທດ ມີຄົນເປັນຈຳນວນຫລາຍທີ່ຫວນຄິດເຖິງຖ້ອຍຄຳຂອງພຣະອາຈານທີ່ກ່າວວ່າ ເມື່ອທ່ານຖືກຂົ່ມເຫງເພື່ອເຫັນແກ່ພຣະຄຣິດກໍຈົ່ງຊົມຊື່ນຍິນດີເພາະວ່າບຳເໜັດຂອງທ່ານທັງຫລາຍມີບໍຣິບູນໃນສວັນ ເໝືອນດັ່ງນັ້ນແຫລະ ເຂົາໄດ້ຂົ່ມເຫງຜູ້ປະກາດພຣະທັມມີຢູ່ກ່ອນທ່ານທັງຫລາຍ (ມັດທາຍ 5:11,)

ສຽງເພງແຫ່ງຊັຍຊະນະດັງອອກມາຖ້າມກາງແປວໄຟທີ່ກຳລັງລຸກໄໝ້ ໂດຍຄວາມເຊື່ອພວກເຂົາມອງເຫັນພຣະຄຣິດແລະເທວະດາມອງມາຍັງເຂົາດ້ວຍຄວາມຮັກແລະຫ່ວງໃຍຢ່າງສຸດຊຶ້ງ ແລະຍອມຮັບການຢືນຢັດໃນຄວາມເຊື່ອຂອງເຂົາ ພຣະສຸຣະສຽງຕຣັດຈາກພຣະບັນລັງຂອງພຣະເຈົ້າວ່າ “ແຕ່ເຈົ້າຈົ່ງມີໃຈສັດຊື່ສຸດຈະຣິດຈົນເຖິງວັນຕາຍ ແລ້ວເຮົາຈະເອົາພວງມາລັຍແຫ່ງຊີວິດໃຫ້ແກ່ເຈົ້າ” (ພຣະນິມິດ 2:10)

ຄວາມພຍາຍາມຂອງຊາຕານ ທີ່ຈະທຳລາຍຄຣິສຕະຈັກຂອງພຣະຄຣິດດ້ວຍການໃຊ້ຄວາມຮຸນແຮງໄຮ້ຜົນ ເຖິງມີຜູ້ຮັບໃຊ້ຂອງພຣະເຈົ້າຈະຖືກຂ້າຕາຍ ແຕ່ຂ່າວປະເສີດຂອງພຣະຄຣິດຍັງແຜ່ອອກໄປຢ່າງບໍ່ຢຸດຢັ້ງ ແລະເລື່ອມໃສໃນພຣະທັມກໍຈະເພີ່ມຫລາຍຂຶ້ນ ຄຣິສະຕຽນຄົນນຶ່ງເວົ້າວ່າ ເຖິງແມ່ນເຮົາຈະຖືກຕັດລົງຫລາຍເທົ່າໃດ ເຮົາກໍຍິ່ງເຕີບໂຕຫລາຍຂຶ້ນເທົ່ານັ້ນ ເລືອດຂອງຄຣິສະຕຽນຄືເມັດທີ່ຈະແຜ່ກະຈາຍຫລາຍຂຶ້ນ”

ເຫດສະນັ້ນ ຊາຕານຈຶ່ງວາງແຜນເຮັດສົງຄາມກັບພຣະເຈົ້າເພື່ອໃຫ້ໄດ້ຜົນຫລາຍຂຶ້ນ ໂດຍການປັກຫລັກ ວິທີການຄວບຄຸມຂອງມັນໃນໂບດຂອງຄຣິສະຕຽນ

ເພື່ອຢຶດເອົາມາດ້ວຍການໃຊ້ເລ່ກົນ ທີ່ມັນບໍ່ສາມາດເຮັດໄດ້ໂດຍການໃຊ້ກຳລັງ ການກົດຂີ່ຂົ່ມເຫງຢຸດໄປ ແຕ່ມັນໃຊ້ສິ່ງໂນມນ້າວຈິດໃຈໃນທາງຜິດເຂົ້າມາແທນ ຄືຄວາມຮັ່ງມີລ່ຳລວຍແລະກຽດຕິຍົດທາງໂລກ ຄົນທີ່ກາບໄຫວ້ຮູບເຄົາຣົບຖືກນຳເຂົ້າ ມາໃຫ້ຍອມຮັບຄວາມເຊື່ອບາງສ່ວນຂອງຄຣິສະຕຽນ ໃນຂະນະທີ່ລະຖິ້ມຄວາມຈິງທີ່ສຳຄັນໄປເສັຽ ເຂົາຍອມຮັບພຣະເຢຊູເປັນພຣະຜູ້ຊ່ອຍໃຫ້ລອດ ແຕ່ບໍ່ມີການຍອມຄວາມຜິດບາບຂອງຕົນເອງ ແລະບໍ່ຮູ້ສຶກຕ້ອງການກັບໃຈຫລືປ່ຽນໃຈໃໝ່ ດ້ວຍການຍອມຮັບເຊື່ອເປັນບາງສ່ວນຂອງພວກເຂົານັ້ນ ເຂົາສເໜີວ່າຄຣິສະຕຽນທຸກຄົນຕ່າງກໍມີສ່ວນເປັນນຶ່ງດຽວກັນພາຍໃຕ້ "ຄວາມເຊື່ອໃນພຣະຄຣິດ"

ບັດນີ້ ຄຣິສຕະຈັກຢູ່ຖ້າມກາງມໍຣະສຸມທີ່ຮຸນແຮງ ການຖືກກັກຂັງ ຖືກທໍຣະມານ ດ້ວຍການຖືກເຜົາໄຟ ແລະຖືກປະຫານດ້ວຍດາບ ຍັງດີກວ່າເມື່ອປຽບທຽບກັບສິ່ງນີ້ ຄຣິສະຕຽນບາງຄົນຍັງຢືນຢັດຢູ່ໃນຄວາມເຊື່ອຢ່າງຖືກຕ້ອງ ແຕ່ບາງຄົນກໍຊື່ນຊອບການປ່ຽນແປງທາງຄວາມເຊື່ອພາຍໃຕ້ການຫລອກລວງດ້ວຍການໃຊ້ນາມຄຣິສຕະສາສນາເປັນເຄື່ອງກຳບັງ ຊາຕານໄດ້ແຊກຊຶມເຂົ້າໄປໃນຄຣິສຕະຈັກຢ່າງງຽບໆ ເພື່ອທຳລາຍຄວາມເຊື່ອຂອງຄຣິສະຕຽນເຫລົ່ານັ້ນ

ໃນທີ່ສຸດຄຣິສະຕຽນສ່ວນຫລາຍກໍສນັບສນູນ ແລະຍອມລົດມາຕະຖານຄວາມເຊື່ອ ມີການຮວມຕົວດຳເນີນການຮ່ວມກັນລະຫວ່າງຄຣິສະຕຽນແລະຄົນນອກສາສນາ ແມ່ນວ່າຜູ້ທີ່ບູຊາຮູບເຄົາຣົບສະແດງຕົນຍອມຮັບເພື່ອຮວມເຂົ້າກັບຄຣິສຕະຈັກ ເຂົາກໍຍັງຢຶດຖືຮູບເຄົາຣົບຢູ່ ພຽງແຕ່ປ່ຽນສິ່ງທີ່ໃຊ້ກາບໄຫວ້ມາເປັນຮູບປັ້ນຂອງພຣະເຢຊູ ຫລືແມ່ນແຕ່ຮູບປັ້ນຂອງນາງມາຣີອາແລະນັກບຸນຕ່າງໆ ຫລັກຄວາມເຊື່ອທີ່ບໍ່ຖືກຕ້ອງ ພິທີກັມກັບໄຊຍະສາດແລະພິທີກັມການບູຊາຮູບເຄົາຣົບປະສົມປະສານກັນກັບຫລັກຄວາມເຊື່ອ ແລະການນະມັດສະການຂອງຄຣິສຕະຈັກ ຈົນເປັນໃຫ້ຄຣິສຕະສາສນາເຊື່ອມລົງ ຄຣິສຕະຈັກໄດ້ສູນເສັຽຄວາມບໍຣິສຸດແລະອຳນາດ ແຕ່ເຖິງຢ່າງໃດກໍຍັງມີຄຣິສຕະຈັກບາງສ່ວນທີ່ບໍ່ໄດ້ຖືກຊັກນຳໃຫ້ຫລົງຜິດ ຄຣິສະຕຽນເຫລົ່ານັ້ນຍັງຢືນຢັດຢູ່ໃນຄວາມເຊື່ອຂອງເຂົາທີ່ມີຕໍ່ພຣະຜູ້ຊົງເປັນຄວາມຈິງຢູ່ຢ່າງ ໝຽວແໜ້ນ

ຄົນສອງຈຳພວກໃນຄຣິສຕະຈັກ



ໃນໜັງສືອາວະສານການຄ້ານິວຢ໊ອກ (New York Journal of Commerce) ປະຈຳວັນທີ່ 14 ພຶສຈິກາ ຄ.ສ 1833 ມີບົດຄວາມຕອນນຶ່ງທີ່ກ່າວເຖິງປາກົດການທີ່ໜ້າອັສຈັນໃນຄັ້ງນີ້ວ່າ "ຂ້າພະເຈົ້າຄິດວ່າບໍ່ມີນັກປັສຍາຫລື ນັກສຶກສາຄົ້ນຄົ້ວຄົນໃດໄດ້ບອກເລົ່າ ຄົນໃດໄດ້ບອກຫລືບັນທຶກເຫດການເໝືອນດັ່ງທີ່ເກີດຂື້ນເມື່ອວານນີ້ ເມື່ອ 1,800 ປີມາແລ້ວ ຜູ້ປະກາດພຣະທັມຄົນນຶ່ງໄດ້ພະຍາກອນລ່ວງໜ້າເຖິງເຫດການທີ່ເກີດຂື້ນໄດ້ຢ່າງຖືກຕ້ອງ ຖ້າຫາກວ່າເຮົາຍັງບໍ່ເຂົ້າໃຈ ຄວາມໝາຍອັນແທ້ຈິງຂອງດາວຕົກ ເຮົາກໍຈະຮູ້ຈາກເຫດການທີ່ເກີດຂື້ນຄັ້ງນີ້ວ່າເປັນ ຈິງ"

ດັ່ງນັ້ນໝາຍສຳຄັນປະການສຸດທ້າຍຂອງການສະເດັດມາຂອງພຣະຄຣິດກໍໄດ້ປາກົດໃຫ້ເຫັນ ພຣະເຢຊູໄດ້ຕຣັດກັບສາວົກຂອງພຣະອົງກ່ຽວກັບໝາຍສຳຄັນນີ້ວ່າ "ພວກທ່ານກໍເໝືອນກັນ ເມື່ອເຫັນເຫດການເຫລົ່ານັ້ນ ຈົ່ງຮູ້ວ່າພຣະອົງສະເດັດມາໃກ້ຈະເຖິງປະຕູແລ້ວ" (ມັດທາຍ 24:33) ຫລາຍຄົນທີ່ເຫັນເຫດການດາວຕົກໃນຄັ້ງນີ້ວ່າເປັນການປະກາດໃຫ້ຊາບເຖິງການພິພາກສາໂທດໃນວາຣະສຸດທ້າຍທີ່ກຳລັງຈະມາເຖິງ

ໃນປີ ຄ.ສ 1840 ເຫດການປລາດອີກຢ່າງນຶ່ງທີ່ສຳເຣັດຈິງດັ່ງຄຳພະຍາກອນ ເຮັດໃຫ້ປະຊາຊົນຫລວງຫລາຍມີຄວາມສົນໃຈສອງປີກ່ອນໜ້ານີ້ ໂຢຊີຢາ ລິດໄດ້ຈັດພິມຄຳອະທິບາຍພຣະນິມິດບົດທີ່ 9 ໂດຍທຳນວາຍວ່າອານາຈັກຂອງ ອອ໊ສໂຕມານ ຈະຕ້ອງສູນສິ້ນອຳນາດ ໃນຣາວເດືອນສິງຫາຂອງປີ ຄ.ສ 1840 ແລະສອງສາມວັນກ່ອນທີ່ເຫດການນີ້ຈະເກີດຂື້ນເພິ່ນຂຽນວ່າ "ອານາຈັກອອ໊ສໂຕມານໃນຄອນສະແຕນຕິໂນເປິລ ຈະສູນສິ້ນອຳນາດໃນວັນທີ່ 11 ສິງຫາ ປີ ຄ.ສ 1840"

## ຄຳພະຍາກອນສຳເຣັດຈິງ

ຕາມເວລາກຳນົດດັ່ງກ່າວ ປະເທດຕຸຣກີໄດ້ຍອມຮັບການຄຸ້ມຄອງຂອງຊາດພັນທະມິດຢູໂຣບ ແລະດ້ວຍເຫດນີ້ໄດ້ຍອມຢູ່ພາຍໃຕ້ການຄວບຄຸມຂອງບັນດາປະເທດຄຣິສະຕຽນ ເຫດການໄດ້ເກີດຂື້ນຈິງຕາມຄຳພະຍາກອນ (ເບິ່ງພາກຜນວກ) ປະຊາຊົນຈຳນວນຫລວງຫລາຍເຊື່ອໃນຫລັກການອະທິບາຍຄຳພະຍາກອນທີ່ມິນເລີ ແລະມິດສະຫາຍນຳມາໃຊ້ວ່າຖືກຕ້ອງແລະໜ້າເຊື່ອຖື ບັນດາຜູ້ມີຄວາມຮູ້ແລະມີຕຳແໜ່ງສູງຍອມຮ່ວມມືກັບມິນເລີທາງດ້ານການເທສນາແລະການພິມຄວາມຄິດຂອງ

ຂອງນັກປະຕິຮູບສາສນາໃນສມັຍເລີ່ມຕົ້ນພຍາຍາມໃຫ້ເກີດຄວາມເຂົ້າໃຈແລະປຸກເລົ້າຄວາມຮູ້ສຶກຜິດຊອບຊົ່ວດີຫລາຍກວ່າເຮັດໃຫ້ຮູ້ສຶກຕື່ນເຕັ້ນ

ໃນປີ 1833 ມິນເລີໄດ້ຮັບໃບອະນຸຍາດໃຫ້ທຳການເທສນາຈາກຄຣິສຕະຈັກແບ໊ບຕິສ ສາສນາຈານຫລາຍຄົນໃນນິກາຍຂອງມິນເລີໄດ້ຮັບການຍອມຮັບໃນຜົນງານຂອງເພິ່ນ ແລະຜູ້ຮັບໃຊ້ເຫລົ່ານັ້ນໄດ້ຍອມໃຫ້ເພິ່ນທຳງານຕໍ່ໄປ ມິນເລີໄດ້ທ່ອງທ່ຽວໄປເທສນາສັ່ງສອນຢ່າງບໍ່ຢຸດຢັ້ງ ເພິ່ນບໍ່ເຄີຍໄດ້ຮັບເງິນພຽງພໍສຳລັບຄ່າໃຊ້ຈ່າຍໃນການເດີນທາງທຸກແຫ່ງທີ່ເພິ່ນໄດ້ຮັບເຊີນ ດັ່ງນັ້ນງານທີ່ເພິ່ນເຮັດເພື່ອປະຊາຊົນຈຶ່ງເປັນສາຍເຫດເຮັດໃຫ້ເພິ່ນຕ້ອງສູນເສັຽຊັບສິນເງິນທອງໄປເປັນຈຳນວນຫລາຍ

## "ດວງດາວທັງປວງຈະຕົກຈາກຟ້າ"

ໃນປີ ຄ.ສ 1833 ໝາຍສຳຄັນຂອງການສະເດັດກັບມາຂອງພຣະຄຣິດຕາມທີ່ພຣະອົງຊົງສັນຍາໄວ້ໄດ້ປາກົດ "ດວງດາວທັງປວງຕົກຈາກຟ້າ" ແລະທ່ານໂຢຮັນໄດ້ກ່າວໄວ້ໃນພຣະທັມພຣະນິມິດໄວ້ວ່າ "ດວງດາວທັງຫລາຍໃນທ້ອງຟ້າກໍຕົກລົງເທິງແຜ່ນດິນ ເໝືອນກັບຕົ້ນໝາກເດື່ອເທດທີ່ຖືກລົມກ້າພັດຈົນໝາກທີ່ຍັງບໍ່ທັນສຸກຫລົ່ນລົງໝົດ" (ມັດທາຍ 24:29; ພຣະນິມິດ 6:13) ຄຳພະຍາກອນດັ່ງກ່າວໄດ້ສຳເຣັດຈິງ ເມື່ອມີດາວຕົກລົງຄັ້ງໃຫຍ່ໃນວັນທີ່ 13 ເດືອນພຶສຈິກາ ປີ 1833 ດາວຕົກຄັ້ງນັ້ນເປັນປາກົດການທີ່ໜ້າອັສຈັນແລະແຜ່ຂຍາຍກວ້າງໄກຢ່າງບໍ່ເຄີຍບັນທຶກມາກ່ອນ "ບໍ່ເຄີຍມີຝົນຕົກຄັ້ງໃດທີ່ຈະໜັກເທົ່າດວງດາວຕົກລົງສູ່ແຜ່ນດິນໂລກໃນຄັ້ງນີ້ ບໍ່ວ່າຈະເປັນທິດຕາເວັນອອກທິດຕາເວັນຕົກ ທິດເໜືອຫລືທິດໃຕ້ ເທົ່າໆກັນໝົດເບິ່ງເໝືອນດວງດາວທັງຫລາຍຈະເຄື່ອນໄຫວໄປທົ່ວທ້ອງຟ້າຕັ້ງແຕ່ບ່າຍສອງໂມງກາງຄືນຈົນເຖິງກາງເວັນທີ່ມີແສງສວ່າງເຈີດຈ້າທ້ອງຟ້າໂປ່ງໃສປັດສະຈາກເມກໝອກ ດວງດາວທີ່ມີຣັສມີໂຊກຊ່ວງພຸ່ງຜ່ານໄປມາທົ່ວທ້ອງຟ້າ" ເບິ່ງຊ້ຳກັບວ່າດວງດາວທັງປວງໃນທ້ອງຟ້າໄປຣວມກັນຢູ່ບ່ອນດຽວ ໃກ້ສ່ວນທີ່ສູງສຸດຂອງທ້ອງຟ້າແລະພຸ່ງຕົງອອກມາຢ່າງວ່ອງໄວເໝືອນຟ້າແມບໄປຍັງທຸກສ່ວນຂອງຂອບຟ້າ ເຖິງປານນັ້ນດວງດາວທັງປວງກໍຍັງພຸ່ງອອກໄປເລື້ອຍໆ ມີດວງດາວຫລາຍພັນດວງພຸ່ງຕາມກັນໄປເປັນທາງ ຮາວກັບວ່າມີຜູ້ສ້າງດາວຂຶ້ນມາເພື່ອໃຫ້ຕົກໃນໂອກາດ ນີ້" "ພາບດາວຕົກຄັ້ງນີ້ເໝືອນກັບໜ່ວຍໝາກເດື່ອຫລົ່ນລົງມາຈາກຕົ້ນດ້ວຍລົມແຮງພັດ"



ຄຣິສະຕຽນແບ່ງອອກເປັນສອງກຸ່ມ ກຸ່ມທຳອິດພຍາຍາມສຶກສາຊີວິດຂອງພຣະຄຣິດ ແລະພຍາຍາມດັດແປງແລະແກ້ໄຂສິ່ງຜິດຢ່າງຈິງຈັງ ແລະຮຽນແບບພຣະອົງເປັນແບບຢ່າງ ສ່ວນອີກກຸ່ມນຶ່ງຫລີກລຽງຄວາມກະຈ່າງແຈ້ງ ການປະຕິບັດຕາມຄວາມຈິງທີ່ເປີດເຜີຍຄວາມຜິດຂອງເຂົາ ເຖິງແມ່ນວ່າຄຣິສຕະຈັກຢູ່ໃນພາວະດີທີ່ສຸດຄຣິສຕະຈັກກໍບໍ່ໄດ້ປະກອບດ້ວຍຄົນທີ່ຊື່ສັດແລະຈິງໃຈທັງໝົດ ຢູດາກໍມີສ່ວນຮ່ວມເປັນສາວົກຄົນນຶ່ງ ຖ້າລາວເຮັດຕາມຄຳສັ່ງສອນແລະແບບຢ່າງຂອງພຣະຄຣິດ ລາວອາດຈະເຫັນຂໍ້ບົກຜ່ອງຂອງຕົນເອງ ແຕ່ເພາະລາວຫລົງຜິດຈຶ່ງຕົກຢູ່ໃນການທົດລອງຂອງຊາຕານ ລາວມີຄວາມໂກດເຄືອງຫລາຍເມື່ອຄວາມຜິດຖືກຕຳໜິແລະນຳລາວໄປສູ່ການທໍຣະຍົດຕໍ່ພຣະອາຈານຂອງຕົນ (ມາຣະໂກ14:10,11)

ອານາເນັຽແລະຊະຟີຣາແກ້ງເຮັດທີ່ຈະຖວາຍທຸກສິ່ງແດ່ພຣະເຈົ້າເຮັດຕາມຄຳສັນຍາຂນະທີ່ເກັບບາງສ່ວນໄວ້ເພື່ອຕົນເອງ ພຣະວິນຍານແຫ່ງຄວາມຈິງໄດ້ເປີດເຜີຍອຸປະນິສັຍທີ່ແທ້ຈິງຂອງຄົນທັງສອງແກ່ອັກຄະສາວົກ ແລະການພິພາກສາຂອງພຣະເຈົ້າເປັນການກຳຈັດຈຸດດ່າງພ້ອຍຂອງຄຣິສຕະຈັກໃຫ້ເກີດຂຶ້ນ (ກິຈການ5:1-11)

ຂະນະຜູ້ຕິດຕາມພຣະຄຣິດຖືກກົດຂີ່ຂົ່ມເຫງ ບັນດາຜູ້ຍອມລະຖິ້ມທຸກສິ່ງເພື່ອເຫັນຄວາມຈິງເທົ່ານັ້ນທີ່ປາຖນາຈະມາເປັນສາວົກຂອງພຣະອົງ ແຕ່ເມື່ອການກົດຂີ່ຂົ່ມເຫງຢຸດລົງ ມີຄົນກັບໃຈເຂົ້າມາເພີ່ມ ຄົນເຫລົ່ານັ້ນມີຄວາມຈິງໃຈນ້ອຍກວ່າແລະເປີດທາງໃຫ້ຊາຕານເຂົ້າມາຕັ້ງຖານຂອງມັນໄດ້

ເມື່ອຄຣິສະຕຽນຍິນຍອມຮວມຕົວກັບຜູ້ທີ່ກັບໃຈພຽງເຄິ່ງດຽວຈາກພວກນອກສາສນາ ຊາຕານມີຄວາມຍິນດີປີດາ ຈາກນັ້ນມັນກໍຊັກນຳໃຫ້ກົດຂີ່ຂົ່ມເຫງຜູ້ເຊື່ອທີ່ຍັງໝັ້ນໃນພຣະເຈົ້າຢ່າງແທ້ຈິງ ບັນດາຄຣິສະຕຽນຜູ້ລະຖິ້ມສາສນາຮວມຕົວກັນເຂົ້າກັບຄົນນອກສາສນາທີ່ກັບໃຈພຽງເຄິ່ງດຽວ ເຮັດສົງຄາມຕໍ່ຕ້ານຫລັກຄວາມເຊື່ອທີ່ສຳຄັນທີ່ສຸດຂອງພຣະຄຣິດ ການທີ່ຈະເອົາຊະນະເລ່ເພທຸບາຍ ແລະກຳຈັດສິ່ງທີ່ໜ້າກຽດຊັງທີ່ນຳເຂົ້າມາໃນຄຣິສະຕະຈັກ ພຣະຄັມພີບໍ່ໄດ້ຮັບການຍອມຮັບວ່າເປັນ

ມາຕະຖານຂອງຄວາມເຊື່ອອີກຕໍ່ໄປ ຫລັກຄວາມເຊື່ອກ່ຽວກັບອິສຣະພາບໃນການນັບຖືສາສນາກໍຖືກຮຽກວ່ານອກຮີດແລະຜູ້ທີ່ຍຶດຖືເຣື່ອງນີ້ຖືກເນຣະເທດ

ຫລັງຈາກທີ່ມີຄວາມຂັດແຍ່ງເປັນເວລານານ ຄົນທີ່ສັດຊື່ກໍເຫັນເຖິງຄວາມຈຳເປັນທີ່ຈະຕ້ອງອອກຈາກພວກນອກຮີດເຫລົ່ານັ້ນ ພວກເຂົາບໍ່ສາມາດອົດທົນຕໍ່ຄຳສອນຜິດທີ່ເປັນອັນຕຣາຍຕໍ່ຈິດວິນຍານ ຕໍ່ຄວາມເຊື່ອຂອງຕົນເອງແລະບຸດຫລານຕໍ່ໄປບໍ່ໄດ້ ເຂົາມີຄວາມຮູ້ສຶກວ່າສັນຕິສຸກມີຄ່າຫລາຍເກີນໄປທີ່ຈະແລກດ້ວຍການຍອມເສັຽສະລະຫລັກການ ຫາກຄວາມເປັນອັນນຶ່ງອັນດຽວກັນໄດ້ມາດ້ວຍການປະນີປະນອມກັບຄວາມເຊື່ອກໍຄວນແຍກຕົວຢູ່ຕ່າງຫາກດີກວ່າ ແລະແມ່ນຕ້ອງເຮັດສົງຄາມກັນກໍຕາມ

ທີ່ຈິງແລ້ວຄຣິສະຕຽນຍຸກແລກນັ້ນເປັນໝູ່ຊົນພິເສດ ມີຈຳນວນນ້ອຍ, ຍາກຈົນ, ບໍ່ມີຕຳແໜ່ງແລະຍົດຖາບັນດາສັກ ຄົນຊົ່ວຈຶ່ງມີຄວາມກຽດຊັງເໝືອນກັບກາອິນກຽດຊັງອາເບນ (ປະຖົມມະການ 4:1-10) ນັບຕັ້ງແຕ່ສມັຍຂອງພຣະເຢຊູຈົນເຖິງຍຸກປັດຈຸບັນສາວົກຂອງພຣະເຢຊູເປັນທີ່ກຽດຊັງ ແລະໄດ້ຮັບການຕໍ່ຕ້ານຈາກຄົນທີ່ຮັກຄວາມບາບສເມີ

ເມື່ອເປັນເຊັ່ນນີ້ແລ້ວພຣະກິຕິຄຸນຂອງພຣະຄຣິດ ຈະຮຽກວ່າເປັນຂ່າວແຫ່ງສັນຕິສຸກໄດ້ຢ່າງໃດ ເທວະດາໄດ້ຮ້ອງເພງເໜືອເມືອງເບັດເລເຮັມ "ພຣະຣັສມີຈົ່ງມີແດ່ພຣະເຈົ້າໃນທີ່ສູງສຸດ ແລະທີ່ແຜ່ນດິນໂລກຈົ່ງມີສັນຕິສຸກ ແກ່ມະນຸດທັງປວງທີ່ພຣະອົງຊົງຊອບພຣະທັຍນັ້ນ" (ລູກາ 2:14) ເບິ່ງເໝືອນວ່າຈະມີຄວາມຂັດແຍ່ງກັນລະຫວ່າງຄຳພະຍາກອນ ແລະພຣະດຳຣັດຂອງພຣະຄຣິດທີ່ວ່າ "ຢ່າຄິດວ່າເຮົາເພື່ອຈະນຳຄວາມສງົບສຸກມາສູ່ໂລກ ເຮົາບໍ່ໄດ້ນຳເອົາຄວາມສງົບສຸກມາໃຫ້ ແຕ່ເຮົາມາເພື່ອຈະໃຫ້ມີດາບ" (ມັດທາຍ 10:34) ແຕ່ເມື່ອພິຈາຣະນາໃຫ້ຖ້ວນທີ່ແລ້ວທັງສອງສິ່ງນີ້ເຂົ້າກັນໄດ້ຢ່າງສົມບູນ ຂ່າວປະເສີດເປັນຂ່າວແຫ່ງສັນຕິສຸກ ສາສນາຂອງພຣະຄຣິດນັ້ນ ຖ້າເຮົາຍອມຮັບແລະເຊື່ອຟັງກໍຈະແຜ່ຂຍາຍຄວາມສຸກແລະສັນຕິສຸກໄປທົ່ວແຜ່ນດິນໂລກ ພັນທະກິດຂອງພຣະເຢຊູຄືການນຳມະນຸດກັບຄືນດີກັບພຣະເຈົ້າ ດັ່ງນັ້ນເຮົາຈຶ່ງຕ້ອງຄືນດີກັບເພື່ອນມະນຸດດ້ວຍກັນ ແຕ່ເນື່ອງຈາກທັງໂລກນີ້ຢູ່ພາຍໃຕ້ການຄອບງຳຂອງຊາຕານສັດຕຣູຕົວສະກາດຂອງພຣະຄຣິດ ຂ່າວປະເສີດທີ່ນຳ



ເຮົາຈະລົງໂທດເຈົ້າເພາະຄວາມຕາຍຂອງເຂົາ" ມີນເລີລະນຶກເຖິງຖ້ອຍຄຳເຫລົ່ານີ້ຢູ່ໃນໃຈສເມີ "ຈົ່ງປະກາດເຣື່ອງນີ້ແກ່ມະນຸດທົ່ວໂລກ ເຈົ້າຈະຕ້ອງຮັບຜິດຊອບຖ້າເຈົ້າເຮັດໃຫ້ໂລຫິດຂອງເຂົາຕົກ" ມີນເລີລໍຢູ່ເປັນເວລານານເຖິງ 9 ປີ ແຕ່ພາລະນີ້ຍັງຄົງໜັກຍັງຢູ່ໃນຈິດວິນຍານຂອງເພິ່ນ ຈົນກະທັ່ງປີ 1831 ຈຶ່ງປະກາດໃຫ້ປະຊາຊົນຮູ້ເຖິງສາເຫດຜົນຕ່າງໆ ກ່ຽວກັບຄວາມເຊື່ອຂອງເພິ່ນຄັ້ງທຳອິດ

ຂນະນັ້ນເພິ່ນມີອາຍຸ 50 ປີແລ້ວ ບໍ່ຄ່ອຍຄຸ້ນເຄີຍກັບການເວົ້າຕໍ່ຊຸມນຸມຊົນແຕ່ງານຂອງເພິ່ນກໍໄດ້ຮັບຢ່າງຫລວງຫລາຍ ຫລັງຈາກທີ່ເພິ່ນໄດ້ເທສນາເທື່ອທຳອິດແລ້ວແລ້ວກໍມີການຕື່ນຕົວທາງສາສນາຢ່າງຫລວງຫລາຍ ມີ 13 ຄອບຄົວ ໄດ້ກັບໃຈໃໝ່ ນອກຈາກສອງຄົນເທົ່ານັ້ນທີ່ປະຕິເສດປະຊາຊົນຊັກຊວນໃຫ້ເພິ່ນໄປ ເທສນາໃນສະຖານທີ່ອື່ນໆ

ແລະທຸກແຫ່ງທີ່ເພິ່ນໄປເທສນາສັ່ງສອນກໍມີຄົນບາບກັບໃຈໃໝ່ຢ່າງຫລວງຫລາຍ

ຄຣິສຕຽນໄດ້ຖວາຍຕົວຫລາຍຂຶ້ນ ພວກເທວູເບກຂາແລະຄົນບໍ່ມີສາສນາຖືກຊັກນຳໃຫ້ມາຮູ້ຈັກຄວາມຈິງຂອງພຣະຄັມພີ ຄຳເທສນາສັ່ງສອນຂອງມີນເລີໄດ້ເລົ້າໃຈປະຊາຊົນແລະຊ່ອຍກວດສອບຄວາມສົນໃຈຝ່າຍໂລກ ແລະການຝັກໃຝ່ໃນທາງກາມາຣົມທີ່ກຳລັງເພີ່ມຂຶ້ນ

ໃນຫລາຍແຫ່ງຄຣິສຕະຈັກໂປເຕສແຕນເກືອບທຸກຄະນະ ໄດ້ເປີດໂອກາດຕ້ອນຮັບມີນເລີ ຄຳເຊີນຊວນຫລາຍກໍມາຈາກສິດຍາພິບານສອງຄະນະນິກາຍເທົ່ານັ້ນ ກົດຂອງມີນເລີມີຢູ່ວ່າເພິ່ນຈະບໍ່ໄປເທສນາສັ່ງສອນໃນສະຖານທີ່ທີ່ບໍ່ໄດ້ຮັບເຊີນໃຫ້ໄປ ແຕ່ເຖິງປານນັ້ນໃນບໍ່ຊ້າເພິ່ນກໍໄດ້ພົບວ່າຕົວເອງບໍ່ສາມາດປະຕິບັດຕາມຄຳຂໍຮ້ອງທີ່ເຂົ້າມາເປັນຈຳນວນຫລວງຫລາຍ ແມ່ນແຕ່ເຄິ່ງດຽວ ຄົນຈຳນວນຫລາຍເຊື່ອວ່າ ການສະເດັດກັບມາຂອງພຣະຄຣິດເປັນສິ່ງທີ່ແນ່ນອນແລະໃກ້ຈະເຖິງເວລານັ້ນແລ້ວ ພວກເຂົາຕ້ອງການທີ່ຈະຕຽມພ້ອມສຳລັບວັນນັ້ນ ໃນເມືອງໃຫຍ່ບາງແຫ່ງເຈົ້າຂອງຮ້ານຂາຍສຸຣາປິດກິຈການ ແລ້ວປ່ຽນຮ້ານຂອງເຂົາເປັນຫ້ອງປະຊຸມນະມັດສະການ ບ່ອນການພະນັນຖືກທຳລາຍພວກນອກສາສນາແລະພວກສຳມະເລເທເມົາກັບປະພຶດດີ ຫລາຍຄະນະນິກາຍເປີດການປະຊຸມອະທິຖານເກືອບທຸກຊົ່ວໂມງ ພວກນັກທຸລະກິດມາປະຊຸມກັນໃນທ່ຽງວັນເພື່ອອະທິຖານແລະສັນລະເສີນພຣະເຈົ້າ ບໍ່ມີການສະແດງການອາການຕື່ນເຕັ້ນຈົນເກີນຂອບເຂດ ງານຂອງມີນເລີເໝືອນກັບງານ

ມິນເລີບໍ່ໄດ້ຄາດຄິດມາກ່ອນວ່າເພິ່ນຈຶ່ງຕ້ອງສລຸບເຣື່ອງຣາວລົງໃນລັກສະນະນີ້ ເພິ່ນແທບຈະບໍ່ເຊື່ອໃນຜົນທີ່ໄດ້ຮັບຈາກການສຶກສາຂອງຕົນເອງໃນຄັ້ງນີ້ ແຕ່ຫລັກຖານໃນພຣະຄັມພີຊັດເຈນບໍ່ສາມາດຈະລະຖິ້ມໄດ້

ໃນປີ 1818 ມິນເລີມີຄວາມເຊື່ອໝັ້ນຢ່າງແນ່ນອນວ່າອີກ 25 ປີພຣະຄຣິດຈະສະເດັດມາໄຖ່ປະຊາກອນຂອງພຣະອົງ ເພິ່ນກ່າວວ່າ "ຂ້າພະເຈົ້າບໍ່ຈຳເປັນຕ້ອງເວົ້າເຖິງວ່າຂ້າພະເຈົ້າມີຄວາມຊົມຊື່ນຍິນດີໃນຈິດໃຈພຽງໃດ ເມື່ອຄິດເຖິງເຫດການໃນອານາຄົດທີ່ນຳຄວາມສຸກມາໃຫ້ນີ້ ແລະຂ້າພະເຈົ້າມີຄວາມປາຖນາອັນແຮງກ້າ ເມື່ອຈິດວິນຍານຂອງຕົນເອງຈະໄດ້ມີສ່ວນຮ່ວມໃນຄວາມຊົມຊື່ນຍິນດີທີ່ໄດ້ລອດແລ້ວ....ໂອ໋ ຄວາມຈິງທີ່ປາກົດອອກມານັ້ນຊ່າງຊັດເຈນແລະແຈ່ມແຈ້ງເຫລືອເກີນ"

"ຄຳຖາມທີ່ມີມາຍັງຂ້າພະເຈົ້າດ້ວຍຣິດທານຸພາບກ່ຽວກັບພາລະໜ້າທີ່ຕໍ່ຊາວໂລກ ຕາມຮູບພາບທີ່ໄດ້ເຫັນທີ່ເຮັດໃຫ້ເກີດຄວາມສົນໃຈ" ມິນເລີຮູ້ສຶກວ່າເປັນໜ້າທີ່ຂອງເພິ່ນທີ່ຈະຕ້ອງເຜີຍແຜ່ຄວາມຮູ້ທີ່ເພິ່ນໄດ້ຮັບໃນພຣະຄັມພີໃຫ້ກັບຜູ້ອື່ນດ້ວຍ ເພິ່ນຮູ້ສຶກດີວ່າຄຣິສະຕຽນຈະໄດ້ຖືກຂັດຂວາງຈາກຜູ້ທີ່ບໍ່ເຊື່ອພຣະເຈົ້າ ແຕ່ຄຣິສະຕຽນຄວນຊົມຊື່ນຍິນດີໃນຄວາມຫວັງທີ່ຈະໄດ້ພົບພຣະຜູ້ຊ່ອຍໃຫ້ລອດ ມິນເລີລັງເລໃຈບໍ່ກ້າປະກາດເຣື່ອງຣາວກ່ຽວກັບການຊ່ອຍໃຫ້ລອດ ເພິ່ນຢ້ານວ່າເພິ່ນຈະເຮັດຜິດແລະຊັກນຳໃຫ້ບຸກຄົນອື່ນເຮັດຜິດໄປດ້ວຍ ດັ່ງນັ້ນເພິ່ນຈຶ່ງໄດ້ພິຈາຣະນາຢ່າງຮອບຄອບໃນສິ່ງທີ່ຫຍຸ້ງຍາກທັງຫລາຍທີ່ເຂົ້າມາສູ່ຈິດໃຈຂອງເພິ່ນ ຕ້ອງໃຊ້ເວລາ 5 ປີໃນການກວດສອບເບິ່ງຫລັກຖານທີ່ໜ້າເຊື່ອຖືກ່ຽວກັບການສະເດັດມາຄັ້ງທີ່ສອງຂອງພຣະຄຣິດຈົນແນ່ໃຈແລະໃນທີ່ສຸດເພິ່ນເຫັນຢ່າງຊັດເຈນແລ້ວວ່າສິ່ງທີ່ເພິ່ນເຊື່ອນັ້ນຖືກຕ້ອງ

## "ຈົ່ງອອກໄປສັ່ງສອນຊົນທຸກຊາດ"

ມິນເລີກ່າວວ່າ "ຕລອດເວລາຂ້າພະເຈົ້າທຳງານ ມີສຽງແວ່ວຢູ່ໃນຫູຂອງຂ້າພະເຈົ້າຕລອດເວລາ "ຈົ່ງອອກໄປສັ່ງສອນຊົນທຸກຊາດເຖິງພັຍອັນຕຣາຍຂອງພວກເຂົາ" ພຣະຄັມພີຂໍ້ນີ້ຂ້າພະເຈົ້າຈຳໄດ້ສເມີ "ຖ້າເຮົາກ່າວແກ່ຄົນອະທັມວ່າໂອຄົນອະທັມເອີຍ ເຈົ້າຈະຕ້ອງຕາຍແນ່ ແຕ່ເຈົ້າກໍບໍ່ໄດ້ກ່າວຄຳຕັກເຕືອນໃຫ້ຄົນອະທັມກັບໃຈຈາກທາງຂອງເຂົາ ຄົນອະທັມນັ້ນຈະຕ້ອງຕາຍເພາະຄວາມຊົ່ວຂອງເຂົາ ແຕ່



ຫລັກການແຫ່ງຊີວິດທີ່ສົມບູນໃຫ້ແກ່ມະນຸດແຕກຕ່າງຈາກນິສັຍແລະຄວາມປາຖນາຂອງເຂົາ ພວກເຂົາຈຶ່ງລຸກຂຶ້ນຕໍ່ຕ້ານ ເຂົາກຽດຄວາມບໍຣິສຸດທີ່ຄອຍຕິຕຽນຄວາມບາບແລະເຂົາກົດຂີ່ຂົ່ມເຫງຜູ້ທີ່ກ່າວອ້າງວ່າບໍຣິສຸດນີ້ ດ້ວຍເຫດນີ້ຂ່າວປະເສີດຈຶ່ງໄດ້ເຊື່ອວ່າເປັນເໝືອນດາບ (ມັດທາຍ 10:34)

ຜູ້ທີ່ມີຄວາມເຊື່ອອ່ອນແອຈຳນວນຫລວງຫລາຍກໍພ້ອມທີ່ຈະລະຖິ້ມຄວາມໝັ້ນໃຈໃນພຣະເຈົ້າ ເພາະພຣະອົງໄດ້ຮັບຄວາມທຸກທໍຣະມານເພື່ອໃຫ້ມະນຸດຄົນບາບໄດ້ຮັບຄວາມມັ່ງຄັ່ງໃນຂນະທີ່ຄົນບໍຣິສຸດແລະຄົນດີຖືກທຳລາຍດ້ວຍອຳນາດອັນຊົ່ວຮ້າຍຂອງເພື່ອນມະນຸດດ້ວຍກັນ ເມື່ອເປັນດັ່ງນີ້ພຣະອົງຜູ້ຊົງມີອຳນາດສູງສຸດພຣະຜູ້ຊົງໄວ້ຄວາມຍຸດຕິທັມ ແລະເມດຕາຈະທົນຕໍ່ຄວາມອະຍຸດຕິທັມນີ້ໄດ້ຢ່າງໃດພຣະເຈົ້າຊົງປະທານຄວາມຮັກອັນສູງສົ່ງປາກົດໃຫ້ເຮົາເຫັນຢ່າງຊັດເຈນ ເຮົາຈຶ່ງບໍ່ຄວນມີຄວາມສົງສັຍໃນຄຸນຄວາມດີຂອງພຣະອົງ ແມ່ນຈະບໍ່ສາມາດເຂົ້າໃຈໃນການຈັດຕຽມໄວ້ຂອງພຣະອົງກໍຕາມ ພຣະຜູ້ຊ່ອຍໃຫ້ລອດຊົງຕຣັດວ່າ "ຈົ່ງລະນຶກເຖິງຄຳທີ່ເຮົາໄດ້ກ່າວແກ່ທ່ານທັງຫລາຍວ່າ ຂ້ອຍໃຊ້ບໍ່ຫ່ອນໃຫຍ່ກວ່ານາຍຂອງຕົນ ຖ້າເຂົາຂົ່ມເຫງເຮົາ ເຂົາກໍຈະຂົ່ມເຫງທ່ານທັງຫລາຍເໝືອນກັນ ຖ້າເຂົາຖືຮັກສາຂໍ້ຄວາມຂອງເຮົາ ເຂົາກໍຈະຖືຮັກສາຂໍ້ຄວາມຂອງພວກທ່ານເໝືອນກັນ" (ໂຢຮັນ 15:20) ຜູ້ທີ່ໄດ້ຮັບການຊົງຮຽກໃຫ້ມາຮັບຄວາມທໍຣະມານແລະເສັຽສະລະຊີວິດຂອງຕົນ ເທົ່າກັບວ່າໄດ້ເດີນທາງຕາມຮອຍພຣະບາດຂອງພຣະບຸດທີ່ຮັກຂອງພຣະເຈົ້າແລ້ວ

ຄົນຊອບທັມຖືກຫລອກລວງດ້ວຍເຕົາແຫ່ງຄວາມທຸກທໍຣະມານ ເພື່ອເຂົາຈະໄດ້ຮັບການຊຳຣະໃຫ້ບໍຣິສຸດ ເພື່ອແບບຢ່າງຂອງເຂົາຈະສາມາດຊະນະໃຈຜູ້ອື່ນໃຫ້ເຫັນເຖິງຄວາມເຊື່ອແລະຄວາມເຫລື້ອມໃສສັດທາທີ່ແທ້ຈິງວ່າເປັນເຊັ່ນໃດ ແລະການຢືນຢັດໃນຄວາມເຊື່ອຂອງເຂົາ ຈະເຮັດໃຫ້ຜູ້ບໍ່ມີຄວາມເຊື່ອໃນພຣະເຈົ້າໄດ້ຮັບການປະນາມ ພຣະເຈົ້າຊົງປ່ອຍຄົນຊົ່ວຮ້າຍໃຫ້ມັ່ງຄັ່ງຂຶ້ນ ເພື່ອໃຫ້ສະແດງຄວາມເປັນສັດຕຣູຕໍ່ສູ້ພຣະອົງ ເພື່ອທຸກຄົນຈະໄດ້ເຫັນເຖິງຄວາມຍຸດຕິທັມແລະຄວາມເມດຕາປານີຂອງພຣະອົງໃນວັນທີ່ເຂົາຖືກທຳລາຍການກະທຳອັນໂຫດຮ້າຍທີ່ກະທຳແກ່ບັນດາຄົນທີ່ສັດຊື່ຂອງພຣະເຈົ້າ ຈະຖືກລົງໂທດເໝືອນກັບວ່າເຂົາໄດ້ກະທຳແກ່ພຣະຄຣິດເອງ

ໂປໂລກ່າວວ່າ "ແທ້ຈິງບັນດາຄົນທີ່ປາຖນາຈະດຳເນີນຊີວິດຄຣິສະຕຽນເປັນຄົນນັບຖືພຣະເຈົ້າຢ່າງຖືກຕ້ອງກໍຈະຖືກກົດຂີ່ຂົ່ມເຫງ" (2 ຕີໂມທຽວ 3:12) ເປັນຫຍັງຈຶ່ງເປັນເຊັ່ນນັ້ນ ການຖືກກົດຂີ່ຂົ່ມເຫງເບິ່ງເໝືອນວ່າຈະບໍ່ເກີດຂຶ້ນອີກແລ້ວຫລືເຫດຜົນດຽວກໍຄືເພາະຄຣິສຕະຈັກເຮັດຮຽນແບບມາຕະຖານຂອງໂລກຈຶ່ງບໍ່ມີຄວາມຂັດແຍ່ງເກີດຂຶ້ນ ສາສນາຂອງເຮົາໃນປັດຈຸບັນຈຶ່ງບໍ່ບໍຣິສຸດແລະເປັນຄວາມເຊື່ອສັກສິດຂອງພຣະຄຣິດແລະຂອງອັກຄະສາວົກຂອງພຣະອົງ ເພາະຄວາມຈິງແຫ່ງພຣະທັມຂອງພຣະເຈົ້າໄດ້ຮັບການປະຕິບັດ ບໍ່ແຕກຕ່າງຈາກສິ່ງອື່ນ ການບໍ່ເຄັ່ງຄັດໃນພຣະສາສນາຂອງພຣະເຈົ້າໃນຄຣິສຕະຈັກ ຄຣິສຕະສາສນາຈຶ່ງກາຍເປັນສິ່ງທີ່ຊາວໂລກພາກັນນິຍົມຊົມຊອບ ຂໍໃຫ້ການຟື້ນຟູຄວາມເຊື່ອເຊັ່ນທີ່ຄຣິສຕະຈັກຍຸກກ່ອນເຄີຍມີເກີດຂຶ້ນເຖີດ ເພື່ອໄຟແຫ່ງການກົດຂີ່ຂົ່ມເຫງຈະໄດ້ລຸກໂຊດຊ່ວງຂຶ້ນມາອີກເທື່ອນຶ່ງ

ເມື່ອການທຳລາຍດ້ວຍອາວຸດບໍ່ສາມາດຢຸດຢັ້ງທັມມະໄດ້ ຊາຕານກໍຫັນມາໃຊ້ວິທີທີ່ແຍກຍົນກວ່າແຕ່ກ່ອນ ດ້ວຍການນຳເອົາລັດທິຄຳສອນທີ່ບໍ່ຖືກຕ້ອງເຂົ້າມາໃນຄຣິສຕະຈັກເຮັດໃຫ້ຜູ້ນຳໃນຄຣິສຕະຈັກເລີ່ມສົນໃຈໃນຕຳແໜ່ງແລະວິທີແບບໂລກຫລາຍຂຶ້ນ ຈົນກະທັ່ງຄຣິສຕະຈັກອ່ອນແອ ຄວາມຈິງເລີ່ມສູນຫາຍຄວາມເຊື່ອຂອງລັດທິເດັ່ງຣະຖືກໍເລີ່ມເຂົ້າມາແທນ

ໃນຍຸກນີ້ເລີ່ມມີການປົກຄອງຄຣິສຕະຈັກແບບສິງຄາທິປະໄຕ ມີເຈົ້າອະທິການຄອຍດູແລມີການປ່ຽນແປງນະມັດສະການຈາກວັນສະບາໂຕ (ວັນເສົາ) ມາເປັນວັນອາທິດ ໃນປີ ຄ.ສ. 321 (ພ.ສ. 864) ມີການຈັດຕັ້ງຄຣິສຕະຈັກທີ່ມີຜູ້ນຳຄືສັນຕະປາປາ ຜູ້ມີອຳນາດທັງຝ່າຍສາສນາຈັກແລະອານາຈັກໃນເວລາດຽວກັນ ຄຣິສຕະຈັກໄດ້ຮັບການຍອມຮັບແລະຄຣິສຕະສາສນາໄດ້ຮັບການຍອມຮັບໂດຍຈັກກະພັດຂອງໂຣມັນ ປີ ຄ.ສ. 373 (ພ.ສ. 916) ຈັກກະພັດຄອນສະແຕນຕິນກັບໃຈມາເປັນຄຣິສະຕຽນ ແຕ່ແທນທີ່ຈະເປັນຜົນດີຕໍ່ຄຣິສຕະຈັກ ກັບກາຍເປັນວ່າຄຣິສຕະຈັກອ່ອນແອດ້ານຄວາມເຊື່ອຫລາຍຂຶ້ນ ເພາະຄຣິສຕະຈັກເປີດປະຕູໃຫ້ການກາບໄຫວ້ຮູບເຄົາຣົບເຂົ້າມາແລະການເຊື່ອຖືໂຊກລາງ ການກາບໄຫວ້ນັກບຸນກໍເຂົ້າມາແທນ ການນະມັດສະການພຣະເຈົ້າດ້ວຍຈິດວິນຍານແລະຄວາມຈິງ



"ທ່ານຈະເຮັດໃຫ້ການຖວາຍສັຕວະບູຊາແລະເຄື່ອງບູຊາອື່ນໆ ຢຸດໃນເຄິ່ງສັປດາ" ໃນ ຄ.ສ 31 ສາມປີເຄິ່ງຫລັງຈາກການຮັບບັບຕິສະມາຂອງພຣະອົງ ພຣະຜູ້ເປັນເຈົ້າຂອງເຮົາຖືກຈັບຄຶງເທິງໄມ້ກາງແຂນ ເມື່ອພຣະຄຣິດໄດ້ຊົງເສັຽສະລະອັນຍິ່ງໃຫຍ່ໂດຍຍອມສະລະພຣະຊົນເທິງໄມ້ກາງແຂນແຫ່ງຄາວາລີແລ້ວ ເຄື່ອງຖວາຍທີ່ແທ້ຈິງໄດ້ທົດແທນເຄື່ອງຖວາຍຈຳລອງ ດັ່ງນັ້ນເຄື່ອງຖວາຍບູຊາແລະການສັກກາຣະບູຊາທັງໝົດຂອງພິທີກັມຕ່າງໆ ກໍສິ້ນສຸດລົງ

490 ປີຊຶ່ງໄດ້ກຳນົດໄວ້ສຳລັບພວກຢິວ ໄດ້ສິ້ນສຸດລົງໃນປີ ຄ.ສ 34 ໃນເວລານັ້ນສະພາຊັນເຮດຣິນຂອງຊາວຢິວແລະປະຊາຊົນໄດ້ສະແດງໃຫ້ຄົນທັງຫລາຍໄດ້ເຫັນວ່າຊົນຊາດນີ້ໄດ້ປະທັບຕາການປະຕິເສດຂ່າວປະເສີດດ້ວຍການສະລະຊີວິດເພື່ອສາສນາຂອງສະເຕເຟນແລະການກົດຂີ່ຂົ່ມເຫງຂອງບັນດາຜູ້ຕິດຕາມພຣະຄຣິດຫລັງຈາກນັ້ນຂ່າວປະເສີດແຫ່ງຄວາມລອດໄດ້ຖືກນຳໄປປະກາດແກ່ມະນຸດທົ່ວໂລກໂດຍພວກອັຄສາວົກທີ່ຖືກຜູ້ທີ່ກົດຂີ່ຂົ່ມເຫງ ບັງຄັບໃຫ້ໜີອອກຈາກກຸງເຢຣູຊາເລັມ "ກໍພາກັນໄປປະກາດຂ່າວປະເສີດແຫ່ງພຣະທັມຕາມບ່ອນຕ່າງໆ" (ກິຈການ 8:4)

ຄຳພະຍາກອນທັງຫລາຍທີ່ປາກົດໃນພຣະຄັມພີໄດ້ສຳເຣັດຈິງທຸກປະການຈຸດເລີ່ມຕົ້ນຂອງເຈັດສິບສັປດາຕົງກັບປີ ກ.ຄ.ສ 457 ຢ່າງບໍ່ຕ້ອງສົງສັຍແລະສິ້ນສຸດລົງໃນປີ ຄ.ສ 34 ເຈັດສິບສັປດາ (490 ວັນ) ຖືກຕັດອອກຈາກ 2,300 ວັນ ຄົງເຫລືອ 1,810 ວັນ ຫລັງຈາກສິ້ນສຸດ 490 ວັນແລ້ວຍັງຄົງ 1,810 ວັນ ຈຶ່ງສຳເຣັດຕາມນັ້ນ ນັບຕັ້ງແຕ່ປີ ຄ.ສ 34 ໄລຍະເວລາ 1,810 ປີທີ່ຍືດຍາວໄປຈົນເຖິງປີ 1844 ຜົນທີ່ເກີດຂຶ້ນກໍຄື ວັນຕາມທີ່ກ່າວໄວ້ໃນດານີເອນ 8:14 ໄດ້ສິ້ນສຸດລົງໃນປີ 1844 ເມື່ອໄລຍະເວລາແຫ່ງຄຳພຍາກອນໄດ້ສິ້ນສຸດລົງ "ສະຖານສັກສິດນັ້ນຈະກັບສູ່ສະພາບເດີມ" ດັ່ງນັ້ນເວລາທີ່ສະຖານສັກສິດບໍຣິສຸດຈະຖືກຊຳຣະ (ຫລືສູ່ສະພາບເດີມ) ຈຶ່ງເປັນສິ່ງທີ່ຄົນທົ່ວໂລກເຊື່ອວ່າຈະເກີດຂຶ້ນເມື່ອພຣະຄຣິດສະເດັດມາຄັ້ງທີ່ສອງແລະຖືກກຳນົດໄວ້ແນ່ນອນ.

## ຂໍ້ສລຸບທີ່ເຮັດໃຫ້ຕື່ນຕະໜົກ

ເຈັດສິບສັປດາເລີ່ມຕັ້ງແຕ່ "ຖ້ອຍຄຳນັ້ນອອກໄປ" ໃຫ້ສ້າງກຸງເຢຣູຊາເລັມ ຂຶ້ນໃໝ່ ຖ້າເຮົາສາມາດຄົ້ນພົບໄລຍະເວລາທີ່ມີຄຳສັ່ງໃຫ້ເຮົາສ້າງກຸງເຢຣູຊາເລັມ ນັ້ນ ເຮົາກໍ ສາມາດຊາບໄດ້ວ່າ 2,300 ວັນ ນັ້ນເລີ່ມຕົ້ນເມື່ອໃດ

ໃນເອັຊຣາບົດທີ່ 7 ກະສັດອາຣທາເຊີຊິດ ຜູ້ເປັນກະສັດຂອງເປີເຊັຽ ໄດ້ອອກກົດສະຖີປະກາດເມື່ອ ກ.ຄ.ສ 457 ກະສັດສາມອົງ ເປັນຜູ້ອອກກົດສະຖີ ກາ ແລະເປັນຜູ້ເຮັດໃຫ້ສຳເຣັດສົມບູນຕາມຄຳພະຍາກອນ ຊຶ່ງເປັນຈຸດເລີ່ມຕົ້ນຂອງ 2,300 ປີ ເລີ່ມຈາກປີ ກ.ຄ.ສ 457 ມີ "ຄຳສັ່ງ" ທຸກສິ່ງທີ່ໄດ້ກ່າວໄວ້ກ່ຽວ ກັບເຈັດສິບສັປດາໄດ້ສຳເຣັດຈິງຕາມນັ້ນທຸກປະການ (ເບິ່ງພາກຜນວກ)

"ນັບຕັ້ງແຕ່ການທີ່ຖ້ອຍຄຳນັ້ນອອກໄປໃຫ້ສ້າງກຸງເຢຣູຊາເລັມຂຶ້ນໃໝ່ ຈົນເຖິງເຈົ້າຊາຍຜູ້ຖືກເຈີມໄວ້ກໍເປັນເວລາເຈັດສັປດາ ແລະຫົກສິບສອງສັປດາ ຮວມເປັນຫົກສິບເກົ້າສັປດາ ຫລື 483 ປີ ກົດສະຖີກາຂອງພຣະຣາຊາອາຣເຊີຊິດມີຜົນບັງຄັບໃຊ້ໃນລະດູໃບໄມ້ລ່ວງປີ ກ.ຄ.ສ 457 ນັບຕັ້ງແຕ່ປີນັ້ນເປັນຕົ້ນໄປ ໄລຍະເວລາ 483 ປີກໍດຳເນີນໄປຈົນເຖິງຣະດູໃບໄມ້ລ່ວງໃນປີ ຄ.ສ 27 ໃນເວລານີ້ ເອງທີ່ເຮັດໃຫ້ຄຳພຍາກອນສຳເຣັດຈິງ ຄືໃນຣະດູໃບໄມ້ລ່ວງຂອງປີ ຄ.ສ 27 ໂຢຮັນຜູ້ໃຫ້ບັບຕິສະມາໄດ້ປະກອບພິທີບັບຕິສະມາໃຫ້ແກ່ພຣະເຢຊູແລະພຣະອົງໄດ້ຮັບການເຈີມຈາກພຣະວິນຍານບໍຣິສຸດ ຫລັງທີ່ໄດ້ຮັບບັບຕິສະມາແລ້ວ ພຣະອົງໄດ້ສະເດັດໄປຍັງກາລີເລ "ຊົງປະກາດຂ່າວປະເສີດເຣື່ອງພຣະເຈົ້າ, ແລະຊົງບອກວ່າເວລາກຳນົດມາເຖິງແລ້ວຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ" (ມາຣະໂກ 1:14,15)

## ຂ່າວປະເສີດປະກາດແກ່ມະນຸດທົ່ວໂລກ

"ທ່ານຈະເຮັດພັນທະສັນຍາເຂັ້ມແຂງກັບຄົນເປັນອັນຫລວງຫລາຍຢູ່ນຶ່ງສັປດາ ເປັນເຈັດປີສຸດທ້າຍຂອງໄລຍະເວລາທີ່ກຳນົດໄວ້ສຳລັບຊາວຢິວ ໃນເວລານີ້ນັບຕັ້ງແຕ່ ຄ.ສ 27 ຈົນເຖິງ ຄ.ສ 34 ພຣະຄຣິດແລະອັຄສາວົກຂອງພຣະອົງໄດ້ເຜີຍແຜ່ຂ່າວປະເສີດແກ່ຄົນທັງຫລາຍ ໂດຍສະເພາະຢ່າງຍິ່ງແກ່ຊາວຢິວ ພຣະຜູ້ຊ່ອຍໃຫ້ລອດໄດ້ຕຣັດສັ່ງວ່າ "ຢ່າໄດ້ເຂົ້າໄປໃນທາງຂອງພວກຕ່າງຊາດແລະຢ່າເຂົ້າໄປໃນເມືອງໃດຂອງຊາວຊາມາເຣັຽ ແຕ່ຈົ່ງໄປຫາຝູງແກະທີ່ເສັຽແລ້ວຄືກະກູນອິສຣາເອນນັ້ນດີກວ່າ. (ມັດທາຍ 10:5,6)



ບົດທີ່ 3

# ຄວາມມືດທາງຈິດວິນຍານໃນຄຣິສຕະຈັກຍຸກທຳອິດ

ອັກຄະສາວົກໂປໂລໄດ້ປະກາດໄວ້ວ່າ ວັນຂອງພຣະຄຣິດຈະມາຍັງບໍ່ເຖິງ " ເພາະວ່າວັນນັ້ນຈະບໍ່ທັນມາເຖິງ ຈົນກວ່າຈະມີການທໍຣະຍົດເກີດຂຶ້ນເສັຽກ່ອນແລະ ຜູ້ຊົ່ວຮ້າຍນັ້ນຈະອອກມາປາກົດຄືຜູ້ຖືກຊົງໝາຍໄວ້ສຳລັບຄວາມວິນາດຈິບຫາຍ ຄືຜູ້ຂັດຄ້ານແລະຍົກຕົວຂຶ້ນຕໍ່ສູ້ທຸກໆສິ່ງທີ່ມີຊື່ວ່າເປັນພຣະ ຫລືທີ່ເຂົາໄຫວ້ນະມັດສະການນັ້ນ ມັນຈຶ່ງຈະໄດ້ນັ່ງລົງໃນພຣະວິຫານຂອງພຣະເຈົ້າສະແດງຕົວເປັນເໝືອນພຣະເຈົ້າ ເພາະວ່າການຊົ່ວຮ້າຍອັນເລິກລັບກໍກຳລັງເຮັດລັບໆຢູ່ ແຕ່ຜູ້ໜ່ວງມັນຢູ່ດຽວນີ້ນັ້ນຈະຍັງໜ່ວງຢູ່ ຈົນກວ່າຈະໄດ້ອອກໄປແລ້ວ" (2 ເທຊະໂລນິກ 2:3,4 7) ຕັ້ງແຕ່ສມັຍກ່ອນໆ ພຸ້ນທ່ານອັກຄະສາທູດໄດ້ເຫັນເຖິງຄວາມຜິດພາດທີ່ຄືບຄານເຂົ້າມາເພື່ອປູທາງໃຫ້ການປົກຄອງຂອງສັນຕະປາປາ

ພຶດຕິການ "ຄວາມອະທັມອັນເລິກລັບ" ນຳເອົາການຫລອກລວງເທື່ອລະເລັກເທື່ອລະນ້ອຍ ເຄົານົບທຳນຽມປະເພນີຂອງລັດທິນອກສາສນາຖືກນຳເຂົ້າມາສູ່ໂບດຂອງຄຣິສະຕຽນ ແລະເປັນຢູ່ຢ່າງນັ້ນຊົ່ວລະຍະນຶ່ງທີ່ຄຣິສຕະຈັກຕົກຢູ່ພາຍໃຕ້ການກົດຂີ່ຂົ່ມເຫງຢ່າງທາລຸນໂຫດຮ້າຍຈາກຄົນນອກສາສນາ ແຕ່ມີການກົດຂີ່ຂົ່ມເຫງໄດ້ຢຸດໄປ ຄຣິສຕະສາສນາໄດ້ລະຖິ້ມຄວາມລຽບງ່າຍຂອງພຣະຄຣິດໄວ້ພາຍໃຕ້ຄວາມໂອ່ອ້າຂອງຜູ້ປົກຄອງ ແລະບັນດາພຣະຂອງພວກນອກສາສນາ ການກັບໃຈເປັນຄຣິສະຕຽນພຽງໃນນາມຂອງຄອນສະແຕນຕິນ ເຮັດໃຫ້ຫລາຍຄົນມີຄວາມຊົມ

ຊື່ນຍິນດີແລະແຮ່ງເຮັດໃຫ້ການທຸຈຣິດກ້າວໜ້າແຮ່ງຫລາຍຂຶ້ນ ພວກລັດທິນອກສາສນາທີ່ເບິ່ງເໝືອນວ່າຝ່າຍແພ້ກັບກາຍມາເປັນຜູ້ຊະນະ ຫລັກຄວາມເຊື່ອຂອງເຂົາກໍປະສົມກົມກືນເຂົ້າໄປໃນຄວາມເຊື່ອຂອງຄຣິສະຕຽນ

ການປະນີປະນອມກັນລະຫວ່າງຄຣິສະຕຽນ ແລະລັດທິນອກສາສນານັ້ນເປັນຜົນສືບເນື່ອງມາຈາກ "ຄົນນອກກົດໝາຍ" ຕາມທີ່ກ່າວໄວ້ໃນຄຳພະຍາກອນ ສາສນາຫຽມເທັດເປັນຜົນງານສິ້ນເອກຂອງຊາຕານຊຶ່ງພຍາຍາມທີ່ຈະນັ່ງບັນລັງປົກຄອງໂລກນີ້ຕາມທີ່ມັນປາຖນາ

ຫລັກຄວາມເຊື່ອທີ່ສຳຄັນຂໍ້ນຶ່ງຂອງລັດທິໂຣມັນກໍຄືການຄອບຄອງອຳນາດສູງສຸດຂອງສັນຕະປາປາເໜືອບິຊອບແລະສິດຍາພິບານຜູ້ຮັບໃຊ້ຂອງພຣະເຈົ້າທົ່ວໂລກ ຍິ່ງກວ່ານັ້ນສັນຕະປາປາໄດ້ຮັບຂນານນາມວ່າ "ອົງສັນຕະປາປາຜູ້ເປັນເຈົ້າ" ແລະປະກາດວ່າເປັນຜູ້ບໍ່ຮູ້ຜິດພາດ (ເບິ່ງພາກຜະໜວກ) ຄຳກ່າວອ້າງເຊັ່ນນີ້ເປັນສິ່ງດຽວກັບຊາຕານໃຊ້ປ່າແຫ່ງການທົດລອງ ຖືກມັນອ້າງໂດຍຜ່ານທາງຄຣິສຕະຈັກແຫ່ງໂຣມ ແລະມີຄົນເປັນຈຳນວນຫລວງຫລາຍທີ່ມອບຄວາມຈົງຮັກພັກດີໃຫ້ ແຕ່ສຳລັບທີ່ຜູ້ເຄົາຣົບບູຊາພຣະຜູ້ເປັນເຈົ້າ ເຂົາຈະຕໍ່ສູ້ກັບເລ່ຫລ່ຽມອັນແພວພາວນັ້ນເໝືອນກັບພຣະຄຣິດຊົງຜະເຊີນກັບສັດຕຣູເຈົ້າເລ່ນີ້ "ຈົ່ງຂາບໄຫວ້ພຣະອົງຜູ້ເປັນເຈົ້າຂອງເຈົ້າ ແລະປະຕິບັດພຣະອົງແຕ່ຜູ້ດຽວ" (ລູກາ 4:8) ພຣະເຈົ້າບໍ່ເຄີຍແຕ່ງຕັ້ງຜູ້ໃດໃຫ້ເປັນສີສະຂອງຄຣິສຕະຈັກ ອຳນາດອັນສູງສຸດຂອງສັນຕະປາປາເປັນສິ່ງທີ່ຂັດແຍ່ງກັບພຣະຄັມພີ ສັນຕະປາປາບໍ່ສາມາດມີອຳນາດເໜືອຄຣິສຕະຈັກຂອງພຣະຄຣິດນອກຈາກດ້ວຍວິທີຊ່ວງຊີງເອົາມາ ບັນດາຜູ້ເຊື່ອໃນໂຣມັນກ່າວຫາຄວາມຕ້ອງການແຍກຕົວຂອງພວກໂປເຕສແຕນວ່າ ເປັນການແຍກຕົວອອກຈາກຄຣິສຕະຈັກທີ່ແທ້ຈິງ ແຕ່ພວກເຂົາຕ່າງຫາກທີ່ໄດ້ລະຖິ້ມ "ຄວາມເຊື່ອຊຶ່ງຄັ້ງນຶ່ງພຣະເຈົ້າຊົງໂປດມອບໃຫ້ຜູ້ຮັບໃຊ້ຂອງພຣະອົງ"(ຢູດາ 3)

ຊາຕານຮູ້ດີວ່າພຣະຄຳພີອັນສັກສິດຄືສິ່ງດຽວທີ່ພຣະຜູ້ຊ່ອຍໃຫ້ລອດໃຊ້ຕໍ່ສູ້ກັບມັນໄດ້ທຸກເທື່ອທີ່ຊາຕານທົດລອງພຣະຄຣິດ ພຣະອົງຊົງໃຊ້ໂລ່ແຫ່ງຄວາມຈິງນີຣັນປ້ອງກັນຕົວ ໂດຍກ່າວວ່າ "ມີຄຳຂຽນໄວ້ວ່າ" ດັ່ງນັ້ນເພື່ອຮັກສາອຳນາດເໜືອມະນຸດ ແລະສ້າງອຳນາດການແຍ່ງຊີງໃຫ້ກັບລະບອບສັນຕະປາປາ ມັນຈະຕ້ອງ



ເຖິງປານນັ້ນພຣະເຈົ້າກໍຕຣັດສັ່ງຜູ້ຊີ້ຂ່າວຂອງພຣະອົງວ່າ "ກາບຽນເອີຍຈົ່ງເຮັດໃຫ້ຊາຍຜູ້ນີ້ເຂົ້າໃຈນິມິດເຖີດ" ເທວະດາໄດ້ກັບມາຫາດານີເອນດ້ວຍຄວາມເຊື່ອຟັງ ແລະເວົ້າວ່າ "ດານີເອນເອີຍ ຂ້າພະເຈົ້າອອກມາ ນະ ບັດນີ້ເພື່ອຈະໃຫ້ປັນຍາແລະຄວາມເຂົ້າໃຈແກ່ທ່ານ ເພາະສະນັ້ນຈົ່ງພິຈາຣະນາຄຳນັ້ນແລະເຂົ້າໃຈນິມິດນັ້ນ" ຈຸດສຳຄັນອັນນຶ່ງໃນນິມິດຂອງດານີເອນບົດທີ່ 8 ບໍ່ໄດ້ອະທິບາຍຄືນິມິດກ່ຽວກັບ 2,300 ວັນ (ເທື່ອ) ດັ່ງນັ້ນເທວະດາກາບຽນຈຶ່ງໄດ້ກັບມາອະທິບາຍອີກເທື່ອນຶ່ງໂດຍສະເພາະເຣື່ອງຂອງເວລາ

"ມີເຈັດສິບສັປດາກຳນົດໄວ້ສຳລັບຊົນຊາດຂອງທ່ານແລະນະຄອນບໍຣິສຸດຂອງທ່ານ ເຫດສະນັ້ນຈົ່ງຮູ້ແລະເຂົ້າໃຈວ່ານັບຕັ້ງແຕ່ການທີ່ຖ້ອຍຄຳນັ້ນອອກໄປ ໃຫ້ສ້າງກຸງເຢຣູຊາເລັມຂຶ້ນໃໝ່ຈົນເຖິງສມັຍຜູ້ທີ່ຖືກເຈີມໄວ້ຄືເຈົ້າຊາຍອົງນັ້ນກໍເປັນເວລາເຈັດສິບສັປດາ ຖນົນຫົນທາງແລະກຳແພງເມືອງຈະຖືກສ້າງຂຶ້ນໃໝ່ພາຍໃນເວລາຫົກສິບສອງສັປດາ ແຕ່ຫລັງຈາກຫົກສິບສອງສັປດາແລ້ວທ່ານຜູ້ທີ່ຖືກເຈີມໄວ້ຈະຕ້ອງຕັດອອກ ແຕ່ບໍ່ໃຊ້ເພື່ອຕົວທ່ານເອງ....ທ່ານຈະທຳພັນທະສັນຍາເຂັ້ມແຂງກັບຄົນເປັນອັນຫລວງຫລາຍຢູ່ນຶ່ງສັປດາ ທ່ານຈະກະທຳໃຫ້ການຖວາຍສັຕວະບູຊາແລະເຄື່ອງບູຊາອື່ນໆ ຢຸດໄປເຄິ່ງສັປດາ" (ດານີເອນ 8:16; 9:22,23, 24-27)

ເທວະດາຖືກໃຊ້ໄປຫາດານີເອນ ເພື່ອອະທິບາຍຄວາມໝາຍຂອງນິມິດທີ່ເພິ່ນບໍ່ເຂົ້າໃຈ "ຢູ່ນານສອງພັນສາມຮ້ອຍເວລາເຊົ້າແລະເວລາແລງ ແລ້ວສະຖານສັກສິດຈະຄືນສູ່ສະພາບເດີມ" (ຈະຖືກຊຳຣະໃຫ້ສະອາດ) ເທວະດາກ່າວວ່າ "ມີ ເຈັດສິບສັປດາແຫ່ງປີກຳນົດໄວ້ສຳລັບຊົນຊາດຂອງທ່ານ ແລະນະຄອນບໍຣິສຸດຂອງ ທ່ານ" ຄຳວ່າ "ກຳນົດໄວ້" ຕາມດ້ວຍອັກສອນແລ້ວໝາຍຄວາມວ່າ "ຕັດອອກ" ເຈັດສິບສັປດາຫລື 490 ປີ ຈະຖືກຕັດອອກມີສ່ວນກ່ຽວຂ້ອງພວກຢິວໂດຍສະເພາະ

## ສອງໄລຍະເວລາທີ່ເລີ່ມຕົ້ນພ້ອມກັນ

ແຕ່ໄລຍະເວລາຖືກຕັດອອກຈາກອັນໃດ ໂດຍເຫດທີ່ເວລາ 2,300 ວັນເປັນໄລຍະເວລາດຽວທີ່ກ່າວໄວ້ໃນດານີເອນທີ່ 8 ດັ່ງນັ້ນເຈັດສິບສັປດາຈຶ່ງຕ້ອງເປັນສ່ວນນຶ່ງຂອງເວລາ 2,300 ວັນ ທັງສອງໄລຍະເວລານີ້ຈຶ່ງຕ້ອງເລີ່ມຕົ້ນພ້ອມກັນ

ສຳແດງໃຫ້ປາກົດແກ່ເຮົານັ້ນ ຂ້າພະເຈົ້າບໍ່ມີສິດທີ່ຈະມອງຂ້າມໄລຍະເວລາທີ່ກ່າວໄວ້ໃນຄຳພະຍາກອນ"

ຄຳພະຍາກອນທີ່ເບິ່ງເໝືອນວ່າຊັດເຈນທີ່ສຸດຈາກການເປີດເຜີຍໃຫ້ຮູ້ກ່ຽວກັບ "ເວລາ" ແຫ່ງການສະເດັດກັບມາຄັ້ງທີ່ສອງຂອງພຣະຄຣິດຄື ດານີເອນ 8:14 "ຍັງເຫຼືອເທົ່າກັບເວລາເຜົາບູຊາທັງເຊົ້າແລະແລງຜ່ານໄປໄດ້ 2,300 ເທື່ອ ແລ້ວພຣະວິຫານຈະຄືນສູ່ສະພາບເດີມ" ການໃຊ້ພຣະຄັມພີອະທິບາຍຕົວເອງນັ້ນເຮັດໃຫ້ມິນເລີຮູ້ວ່ານຶ່ງວັນຕາມຄວາມໝາຍຂອງຄຳພະຍາກອນໝາຍເຖິງນຶ່ງປີ (ເບິ່ງພາກຜນວກ) ເພິ່ນວ່າ 2,300 ປີ ຂອງຄຳພະຍາກອນຫລື 2,300 ວັນ (ເທື່ອ) ຕາມຕົວອັກສອນບໍ່ໄດ້ໝາຍເຖິງການສິ້ນສຸດຂອງການຖວາຍເຄື່ອງເຜົາບູຊາໄຖ່ໂທດບາບຂອງຢິວໃນສະຖານບໍຣິສຸດໃນໂລກນີ້

ມິນເລີຍອມຮັບຄວາມຄິດເຫັນຂອງຄົນທົ່ວໄປວ່າ ໃນຍຸກຂອງຄຣິສະຕຽນໂລກນີ້ຄື "ສະຖານສັກສິດ" ດັ່ງນັ້ນຈຶ່ງເຂົ້າໃຈວ່າສະຖານສັກສິດທີ່ກ່າວໄວ້ໃນດານິເອນ 8:14 ນັ້ນໝາຍເຖິງການຊຳຣະໂລກນີ້ດ້ວຍໃນວັນທີ່ພຣະຄຣິດສະເດັດມາ ຖ້າຫາກເພິ່ນສາມາດກຳນົດໄດ້ວ່າຣະຍະເວລາ 2,300 ວັນ (ເທື່ອ) (2,300 ປີ) ເລີ່ມຕົ້ນເມື່ອໃດ ກໍສາມາດຈະຮູ້ໄດ້ວ່າພຣະຄຣິດຈະສະເດັດມາຄັ້ງທີ່ສອງເມື່ອໃດ

## ຄົ້ນພົບຕາລາງເວລາຄຳພະຍາກອນ

ມິນເລີໄດ້ກວດສອບຄຳພະຍາກອນຕໍ່ໄປເລື້ອຍໆເພິ່ນໃຊ້ເວລາທັງກາງເວັນແລະກາງຄືນໃນການສຶກສາຮ່ຳຮຽນສິ່ງທີ່ປາກົດໃຫ້ເຫັນໃນປັດຈຸບັນນີ້ວ່າສຳຄັນຍິ່ງໃຫຍ່ໃນດານິເອັນບົດທີ່ 8 ມິນເລີບໍ່ສາມາດພົບເງື່ອນງຳອັນໃດທີ່ຈະຊ່ອຍໃຫ້ເພິ່ນຮູ້ວ່າ 2,300 ວັນ (ເທື່ອ) ວັນເລີ່ມຕົ້ນເມື່ອໃດ ເທວະດາກາບຽນເຖິງແມ່ນວ່າຈະໄດ້ຮັບຄຳສັ່ງໃຫ້ມາຊີ້ແຈງໃຫ້ດານິເອັນເຂົ້າໃຈນິມິດ ແຕ່ກໍອະທິບາຍໃຫ້ເພິ່ນເຂົ້າໃຈພຽງບາງສ່ວນເທົ່ານັ້ນ ເມື່ອເທວະດາກາບຽນໄດ້ສຳແດງໃຫ້ຜູ້ປະກາດພຣະທັມໄດ້ເຫັນພາບການກົດຂີ່ຂົ່ມເຫງຄຣິສຕະຈັກ ດານິເອນກໍອ່ອນເພັຽ ແລະບໍ່ສາມາດທົນໄດ້ອີກຕໍ່ໄປ ດານິເອນ "ຂ້າພະເຈົ້າດານິເອນ ໄດ້ອ່ອນແຮງແລະເຈັບປ່ວຍຢູ່ເປັນເວລາຫລາຍມື້ ຈຶ່ງສາມາດລຸກໄປປະຕິບັດພາລະກິດທີ່ພຣະຣາຊາຊົງມອບໝາຍໃຫ້ໄດ້ ຂ້າພະເຈົ້າຈຶ່ງງຶດງໍ້ແລະບໍ່ເຂົ້າໃຈນິມິດນັ້ນເລີຍ" (ດານິເອນ 8:27)



ພຍາຍາມໃຫ້ມະນຸດລະເລີຍຕໍ່ພຣະທັມຂອງພຣະເຈົ້າ ຄວາມຈິງອັນສັກສິດຈະຕ້ອງຖືກປົກປິດແລະລະງັບໄວ້ ນັບເປັນເວລາຫລາຍຮ້ອຍປີທີ່ຄຣິສຕະຈັກໂຣມັນຫ້າມບໍ່ໃຫ້ມີການເຜີຍແຜ່ພຣະຄັມພີ ປະຊາຊົນຖືກຫ້າມບໍ່ໃຫ້ອ່ານພຣະຄັມພີ ບາດຫລວງແລະພຣະຣາຊາຄະນະຊັ້ນສູງ ແປຄຳສອນໄປໃນທາງທີ່ຈະສນັບສນູນຄຳຈູນຄວາມຈອມປອມຂອງພວກຕົນ ດັ່ງນັ້ນສັນຕະປາປາຈຶ່ງກາຍເປັນຜູ້ທີ່ເກືອບທົ່ວໂລກຍອມຮັບວ່າເປັນຜູ້ແທນຂອງພຣະເຈົ້າໃນໂລກນີ້

## ວັນສະບາໂຕ (ວັນສິນ) ຖືກປ່ຽນແປງຢ່າງໃດ

ຄຳພະຍາກອນໄດ້ບົ່ງບອກໄວ້ວ່າສັນຕະປາປາ "ຈະພຍາຍາມປ່ຽນແປງພະບັນຍັດແລະພິທີ" (ດານິເອນ 7:25) ໃຫ້ມີການນຳເອົາຮູບເຄົາຣົບມາຂາບໄຫວ້ ການຂາບໄຫວ້ບູຊາຮູບປັ້ນແລະວັດຖຸຄ່ອຍນຳເຂົ້າມາປະປົນກັນກັບການນະມັດສະ ການຂອງຄຣິສະຕຽນເມື່ອມີຄຳສັ່ງຈາກການປະຊຸມທົ່ວໄປ (ເບິ່ງພາກຜະໜວກ) ໃນ ທີ່ສຸດກໍມີການເລີ່ມຕັ້ງຮູບເຄົາຣົບຂຶ້ນມາ ໂຣມຄິດຈະຍົກເລີກພຣະບັນຍັດຂອງພຣະເຈົ້າຂໍ້ທີ່ສອງທີ່ຫ້າມນະມັດສະການຮູບເຄົາຣົບ ແລ້ວແບ່ງພຣະບັນຍັດຂໍ້ທີ່ສິບອອກເປັນສອງຂໍ້ເພື່ອຄົງໄວ້ຊຶ່ງຈຳນວນພຣະບັນຍັດໃຫ້ຄົບທັງສິບຂໍ້

ຜູ້ນຳຂອງຄຣິສະຕະຈັກທີ່ບໍ່ອຸທິດຕົນຢ່າງແທ້ຈິງເຫລົ່ານັ້ນ ໄດ້ແກ້ບັນຍັດຂໍ້ທີ່ສີ່ ໂດຍລະຖິ້ມວັນສະບາໂຕຊຶ່ງເປັນວັນທີ່ພຣະເຈົ້າຊົງອວຍພອນແລະຕັ້ງໄວ້ເປັນວັນບໍຣິສຸດຕັ້ງແຕ່ໂບຮານ (ປະຖົມມະການ2:2,3) ແລ້ວເອົາວັນເທດສະການທີ່ພວກນອກສາສນານັບຖືເປັນວັນ "ວັນແຫ່ງການເຄົາຣົບຍົກຍ້ອງພຣະອາທິດ" ເຂົ້າແທນ ໃນສັດຕະວັດທີ່ນຶ່ງນັ້ນ ຄຣິສະຕຽນທຸກຄົນຮັກສາວັນສະບາໂຕ ແຕ່ຊາຕານກະທຳການຂອງມັນຢ່າງໜັກ ວັນອາທິດຈຶ່ງຖືກຈັດໄວ້ເປັນວັນສລອງການຟື້ນຄືນພຣະຊົນຂອງພຣະຄຣິດ ພິທີກັມຕ່າງໆ ທາງສາສນາໄດ້ຖືກຈັດທຳຂຶ້ນໃນວັນນີ້ຖືວ່າເປັນວັນລະນຶກເຖິງການຟື້ນຄືນພຣະຊົນຂອງພຣະຄຣິດ ແຕ່ວັນສະບາໂຕກໍຍັງມີຜູ້ຮັກສາໄວ້ຢ່າງເຄັ່ງຄັດ

ກ່ອນທີ່ພຣະຄຣິດຈະສະເດັດມາເທື່ອທຳອິດ ຊາຕານໄດ້ຊັກນຳພວກຢິວບັງຄັບໃຫ້ຖືວັນສະບາໂຕຢ່າງເຂັ້ມງວດ ເຮັດໃຫ້ເປັນພາລະທີ່ໜັກໜ່ວງ ມັນສວຍໂອ

ກາດສ້າງຄວາມສວ່າງຈອມປອມ ມັນເຮັດໃຫ້ຄົນອື່ນຖືວ່າວັນສະບາໂຕເປັນເຄົານິບທຳນຽມຂອງ "ຊາວຢິວ" ໂດຍຄຣິສະຕຽນທົ່ວໄປຮັກສາວັນອາທິດຖືເປັນວັນສລອງຄວາມຊົມຊື່ນຍິນດີຂອງພວກເຂົາ ແຕ່ມັນເຮັດໃຫ້ວັນສະບາໂຕເປັນວັນທີ່ໜ້າເສົ້າໂສກເພື່ອໃຫ້ເກີດຄວາມກຽດຊັງສາສນາຢິວ

ຈັກກະພັດຄອນສະແຕນຕິນໄດ້ອອກພຣະຣາຊຖືກາໃຫ້ຖືວັນອາທິດເປັນວັນເທດສະການປະຈຳຊາດທົ່ວອານາຈັກໂຣມັນ (ເບິ່ງພາກຜະໜວກ) ວັນແຫ່ງພຣະອາທິດກາຍເປັນວັນທີ່ຄົນນອກສາສນາຂອງພຣະອົງ ແລະຄຣິສະຕຽນໃຫ້ຄວາມເຄົາຣົບບູຊາພຣະອົງກະທຳເຊັ່ນນີ້ເພາະບິຊອບ ຜູ້ນຳຂອງບາດຫລວງແຫ່ງຄຣິສຕະຈັກໂຣມັນເປັນຜູ້ພັກດັນ ເພາະແຮງດົນໃຈດ້ວຍຄວາມກະຫາຍໃນອຳນາດພຣະອົງຈຶ່ງມອງເຫັນວ່າຖ້າຄົນນອກສາສນາ ແລະຄຣິສະຕຽນຮັກສາວັນດຽວກັນຄືວັນອາທິດເປັນວັນບໍຣິສຸດ ກໍຈະເຮັດໃຫ້ຄຣິສຕະຈັກໂຣມັນມີອຳນາດຮຸ່ງເຮືອງຂຶ້ນ ຂນະດຽວກັນແມ່ນຄຣິສະຕຽນທີ່ຢຳເກງພຣະເຈົ້າຖືກຊັກຊວນໃຫ້ຖືວ່າວັນອາທິດເປັນວັນບໍຣິສຸດກໍຕາມພວກເຂົາກໍຍັງຍຶດເອົາວັນສະບາໂຕເປັນວັນບໍຣິສຸດເຊື່ອຟັງຕາມພຣະບັນຍັດຂໍ້ທີ່ສີ່

ຊາຕານເຈົ້າແຫ່ງຄວາມຫລອກລວງທຳງານຂອງມັນບໍ່ສຳເຣັດ ມັນຈຶ່ງພຍາຍາມແກ້ບັນຫາໂດຍເພີ່ມອຳນາດໃຫ້ກັບຕົວແທນຂອງມັນຄືສັນຕະປາປາຜູ້ຈອງຫອງຜູ້ອ້າງວ່າເປັນຕົວແທນຂອງພຣະຄຣິດ ມີການປະຊຸມບຸກຄົນທີ່ມີຕຳແໜ່ງສູງທົ່ວໂລກຫລາຍເທື່ອ ທຸກເທື່ອທີ່ມີການປະຊຸມຈະມີການເວົ້າເຖິງເຣື່ອງການເຮັດໃຫ້ຄວາມສຳຄັນຂອງວັນສະບາໂຕລົດນ້ອຍຖອຍລົງໄປເລື້ອຍໆ ໃນຂນະດຽວກັນກໍຍົກຄວາມສຳຄັນຂອງວັນອາທິດໃຫ້ເດັ່ນຂຶ້ນ ດັ່ງນັ້ນວັນເທດສະການສເລີມສລອງຂອງພວກນອກສາສນາ ຈຶ່ງໄດ້ຮັບການຍົກຍ້ອງໃຫ້ເປັນວັນຂອງພຣະຜູ້ເປັນເຈົ້າສ່ວນວັນສະບາໂຕໃນພຣະຄຳພີຖືກປະກາດວ່າເປັນວັນເກົ່າແກ່ພົ້ນສມັຍຂອງພວກຢິວແລະຜູ້ຮັກສາວັນສະບາໂຕຖືກປະກາດວ່າເປັນຜູ້ຖືກສາບແຊ່ງ

ຜູ້ທີ່ບໍ່ປະຕິບັດຕາມທາງຂອງພຣະຜູ້ເປັນເຈົ້າ ຈະໄດ້ຮັບຄວາມສຳເຣັດໃນການຍົກຕົວມັນເອງຂຶ້ນຕໍ່ສູ້ອັນໃດໆ ທີ່ໄດ້ຊື່ວ່າເປັນພຣະຫລືອັນໃດໆ ທີ່ເຂົາໄຫວ້ນະມັດສະການນັ້ນ (2 ເທຊະໂລນິກ 2:4) ເຂົາກັບປ່ຽນກົດບັນຍັດຂອງພຣະເຈົ້າທີ່ຊີ້ໄປຍັງພຣະຜູ້ເປັນເຈົ້າທ່ຽງແທ້ແລະຊົງພຣະຊົນຢູ່ ພຣະບັນຍັດຂໍ້ທີ່ສີ່ເປີດເຜີຍພຣະເຈົ້າ



## ຂໍ້ພຣະຄັມພີແລະການລຳດັບເວລາ

ຂໍ້ພຣະຄັມພີເຫລົ່ານີ້ແລະຂໍ້ພຣະຄັມພີອື່ນໆ ໄດ້ພິສູດໃຫ້ມິນເລີເຂົ້າໃຈຢ່າງຊັດເຈນວ່າການປົກຄອງແຫ່ງສັນຕິແລະການກໍ່ຕັ້ງອານາຈັກຂອງພຣະເຈົ້າເທິງໂລກນີ້ຈະເກີດຂຶ້ນຫລັງຈາກການສະເດັດກັບມາຄັ້ງທີ່ສອງຂອງພຣະເຢຊູ ຍິ່ງກວ່ານັ້ນສະຖານະການຕ່າງໆ ຂອງໂລກເປັນຈິງຕາມຄຳພະຍາກອນທີ່ໄດ້ບັນຍາຍເຖິງເຫດການຂອງວັນສຸດທ້າຍ ເຂົາໄດ້ສະລຸບວ່າໄລຍະເວລາທີ່ແຜ່ນດິນໂລກຕົກຢູ່ໃນສະຖານະການຢ່າງເຊັ່ນປັດຈຸບັນນີ້ຈວນຈະສິ້ນສຸດລົງແລ້ວ

ມິນເລີກ່າວວ່າ "ຂໍ້ເທດຈິງທີ່ອີກຢ່າງນຶ່ງທີ່ມີຜົນຕໍ່ຄວາມຮູ້ສຶກຂອງຂ້າພະເຈົ້າຢ່າງແຮງ ຂ້າພະເຈົ້າພົບວ່າການທຳນວາຍເຖິງເຫດການທີ່ໄດ້ສຳເຣັດແລ້ວໃນອະດີດຫລາຍເທື່ອເກີດຂຶ້ນຕາມກຳນົດເວລາ ເຫດການເຫລົ່ານັ້ນຄັ້ງນຶ່ງເປັນພຽງເຣື່ອງຂອງຄຳພະຍາກອນກໍສຳເຣັດຈິງຕາມທີ່ກຳນົດໄວ້"

ເມື່ອເພິ່ນພົບວ່າຊ່ວງເວລາທີ່ເກີດຂຶ້ນຕາມລຳດັບ ຊຶ່ງໄດ້ຍຶດເຍື້ອການສະເດັດມາຄັ້ງທີ່ສອງຂອງພຣະຄຣິດນັ້ນເພິ່ນຖືວ່າ "ເປັນເວລາທີ່ກຳນົດໄວ້" ຕາມທີ່ພຣະເຈົ້າໄດ້ສຳແດງໃຫ້ແກ່ຜູ້ຮັບໃຊ້ຂອງພຣະອົງ ໂມເຊກ່າວວ່າ "ສິ່ງທີ່ຊົງສຳແດງນັ້ນເປັນຂອງເຮົາທັງຫລາຍແລະຂອງລູກຫລານຂອງເຮົາເປັນນິດ" ພຣະຜູ້ເປັນເຈົ້າຊົງປະກາດວ່າພຣະອົງ "ຕາມຈິງແລ້ວພຣະຜູ້ເປັນເຈົ້າບໍ່ໄດ້ກະທຳສິ່ງໃດໂດຍບໍ່ໄດ້ບອກແຜນການຂອງພຣະອົງໃຫ້ຜູ້ປະກາດພຣະທັມຊຶ່ງເປັນຜູ້ຮັບໃຊ້ຂອງພຣະອົງຮູ້ກ່ອນ" (ສເລີຍທັມບັນຍັດ 29:29; ອາໂມດ 3:7) ນັກສຶກສາພຣະທັມຂອງພຣະເຈົ້າຈຶ່ງມີຄວາມໝັ້ນໃຈເຖິດວ່າເພິ່ນໄດ້ເຫັນເຫດການອັນຍິ່ງໃຫຍ່ທີ່ສຸດໃນປະຫວັດສາດຂອງມະນຸດຕາມທີ່ກຳນົດໄວ້ຢ່າງຊັດເຈນໃນພຣະຄັມພີ

ມິນເລີກ່າວວ່າ "ຂ້າພະເຈົ້າມີຄວາມໝັ້ນໃຈຢ່າງເຕັມປ່ຽມວ່າພຣະຄັມພີທຸກຕອນທີ່ພຣະເຈົ້າປະທານໃຫ້ນັ້ນມີປໂຍດ ພຣະວິນຍານບໍຣິສຸດເປັນຜູ້ຊົງດົນໃຈໃຫ້ຜູ້ຂອບທັມຊຽນ ແລະໄດ້ຂຽນໄວ້ເພື່ອ "ສັ່ງສອນເຮົາທັງຫລາຍເພື່ອເຮົາຈະໄດ້ມີຄວາມຫວັງ ໂດຍຄວາມພຽນແລະຄວາມຊູໃຈຕາມທີ່ຂຽນໄວ້ແລ້ວນັ້ນ ດັ່ງນັ້ນຂ້າພະເຈົ້າຈຶ່ງຮູ້ສຶກວ່າການພຍາຍາມເຂົ້າໃຈສິ່ງທີ່ພຣະເຈົ້າຊົງພຣະເມດຕາເຫັນສົມຄວນທີ່ຈະ

ເດັດມາຂອງພຣະອົງຫລັກຄຳສອນນີ້ໄດ້ຊັກຈູງຄົນທັງຫລາຍໃຫ້ເພີກເສີຍໃນການຕຽມຕົວ ພ້ອມທີ່ຈະຕ້ອນຮັບການສະເດັດມາຂອງພຣະຜູ້ເປັນເຈົ້າ

ມິນເລີໄດ້ຄົ້ນພົບວ່າການສະເດັດກັບມາຂອງພຣະຄຣິດໄດ້ກ່າວໄວ້ໃນພຣະຄັມພີຢ່າງຊັດເຈນ "ດ້ວຍວ່າຈະມີຄຳສັ່ງອັນດັງ,ຈະມີສຽງຂອງອັຄເທວະດາ, ແລະສຽງແກຂອງພຣະເຈົ້າ" "ແລ້ວຈະເຫັນບຸດມະນຸດກຳລັງສະເດັດມາເທິງເມກໃນທ້ອງຟ້າດ້ວຍຣິດທານຸພາບແລະສະງ່າຣາສີອັນໃຫຍ່" ດ້ວຍວ່າຟ້າແມບເຫລື້ອມອອກມາແຕ່ທິດຕາເວັນອອກສ່ອງໄປເຖິງທິດຕາເວັນຕົກຢ່າງໃດ ການທີ່ບຸດມະນຸດຈະສະເດັດກັບມາກໍເປັນຢ່າງນັ້ນ" "ເມື່ອບຸດມະນຸດຊົງພຣະຣັສມີສະເດັດມາພ້ອມດ້ວຍຝູງເທວະດາ ເມື່ອນັ້ນພຣະອົງຈະຊົງປະທັບເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງພຣະອົງ" "ພຣະອົງຈະໃຊ້ເທວະດາຂອງຕົນໄປ ດ້ວຍສຽງແກອັນດັງໃຫ້ຮວບຮວມເອົາຄົນທັງປວງທີ່ພຣະອົງຊົງເລືອກໄວ້ແລ້ວ" (1ເທຊະໂລນິກ 4: 16,17; ມັດທາຍ 24:30, 27; 25:31; 24:31) ເມື່ອພຣະຄຣິດສະເດັດມາຜູ້ຊອບທັມທີ່ຕາຍໄປແລ້ວຈະຟື້ນຂຶ້ນມາແລະຜູ້ຊອບທັມທີ່ມີຊີວິດຢູ່ຈະຖືກປ່ຽນແປງ "ເຮົາຈະບໍ່ລ່ວງລັບໄປໝົດທຸກຄົນ ແຕ່ເຮົາທັງຫລາຍຈະຖືກປ່ຽນແປງໃໝ່ໝົດທຸກຄົນ,ໃນຊົ່ວຂະນະດຽວ, ໃນພັບຕາດຽວ, ເມື່ອເປົ່າແກຄັ້ງສຸດທ້າຍນັ້ນດ້ວຍວ່າຈະມີສຽງແກ ຄົນທີ່ຕາຍແລ້ວຈະຖືກຊົງບັນດານໃຫ້ເປັນຄືນຂຶ້ນມາໂດຍບໍ່ເປື່ອຍເນົ່າແລະຝ່າຍພວກເຮົາກໍຈະຖືກຊົງຖືກປ່ຽນແປງໃໝ່.
ເພາະວ່າກາຍທີ່ເປື້ອຍເນົ່ານີ້ຕ້ອງສວມກາຍທີ່ບໍ່ຮູ້ຈັກເປື້ອຍເນົ່າ ແລະກາຍທີ່ຕາຍເປັນນີ້ຕ້ອງສວມກາຍທີ່ຕາຍບໍ່ເປັນ" "ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນຫລັງຈາກນັ້ນເຮົາທັງຫລາຍ ຜູ້ທີ່ມີຊີວິດເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ, ພວກເຮົາກໍຈະຢູ່ນຳອົງພຣະຜູ້ເປັນເຈົ້າເປັນນິດ" (1ໂກຣິນໂທ 15:51-53; 1ເທຊະໂລນິກ 4:16,17)

ມະນຸດເປັນສະພາບປັດຈຸບັນຈະຕາຍແລະເປື້ອຍເນົ່າໄປ ແຕ່ໃນອານາຈັກຂອງພຣະເຈົ້າ ເຂົາບໍ່ເປື້ອຍເນົ່າ ດັ່ງນັ້ນມະນຸດໃນສະພາບປັດຈຸບັນຈຶ່ງບໍ່ສາມາດຈະເຂົ້າໄປໃນແຜ່ນດິນຂອງພຣະເຈົ້າໄດ້ ເມື່ອພຣະເຢຊູສະເດັດມາພຣະອົງຈະປະທານອັມມະຕະພາບໃຫ້ແກ່ບັນດາປະຊາກອນຂອງພຣະອົງ ຈາກນັ້ນພຣະອົງຈະຊົງຮຽກເຂົາໃຫ້ມາຮັບແຜ່ນດິນຂອງພຣະເຈົ້າເປັນມໍຣະດົກ ຊຶ່ງແຕ່ກ່ອນນີ້ເຂົາເປັນພຽງທາຍາດເທົ່ານັ້ນ



ພຣະຜູ້ຊົງສ້າງວັນທີ່ເຈັດເປັນວັນທີ່ລະນຶກເຖິງການສ້າງໂລກ ເປັນວັນທີ່ຕັ້ງໄວ້ເປັນວັນບໍຣິສຸດເພື່ອໃຫ້ມະນຸດໄດ້ພັກຜ່ອນແລະນະມັດສະການພຣະເຈົ້າຜູ້ຊົງພຣະຊົນຢູ່ ຊາຕານພຍາຍາມຫລອກລວງມະນຸດບໍ່ໃຫ້ເຊື່ອຟັງພຣະບັນຍັດຂອງພຣະເຈົ້າ ໂດຍສະເພາະບັນຍັດຂໍ້ທີ່ສີ່ເພາະພຣະບັນຍັດຂໍ້ນີ້ຊີ້ໃຫ້ເຫັນວ່າພຣະເຈົ້າເປັນພຣະຜູ້ສ້າງ

ໃນປັດຈຸບັນ ຄຣິສຕະຈັກໂປເຕສແຕນໄດ້ຊັກຊວນໃຫ້ປະຊາຊົນລະນຶກເຖິງວັນຟື້ນຄືນພຣະຊົນຂອງພຣະຄຣິດຄືວັນອາທິດຖືເປັນວັນສະບາໂຕຂອງຄຣິສະຕຽນ ແຕ່ພຣະເຢຊູຄຣິດຫລືອັຄສາວົກບໍ່ໄດ້ໃຫ້ກຽດວັນນີ້ເປັນວັນບໍຣິສຸດການຮັກສາວັນອາທິດມີຕົ້ນກຳເນີດມາຈາກ "ອຳນາດເລິກລັບນອກກົດໝາຍ" (2 ເທຊະໂລນິກ 2:7) ຊຶ່ງເລີ່ມງານຂອງມັນຕັ້ງແຕ່ສມັຍໂປໂລມາແລ້ວມີເຫດຜົນອັນໃດທີ່ຈະປ່ຽນວັນສະບາໂຕທີ່ພຣະຄຳພີບໍ່ໄດ້ອານຸຍາດ

ໃນສັດຕະວັດທີ່ຫົກບິຊອບແຫ່ງໂຣມຖືກປະກາດໃຫ້ເປັນຜູ້ນຳຂອງຄຣິສຕະຈັກລັດທິນອກສາສນາໄດ້ມອບອຳນາດໜ້າທີ່ໃຫ້ສັນຕະປາປາ ພະຍານາກໄດ້ໃຫ້ "ຣິດເດດແລະບັນລັງກັບອຳນາດອັນໃຫຍ່ຫລວງຂອງຕົນໃຫ້ແກ່ສັດຮ້າຍນັ້ນ" (ພຣະນິມິດ 13:2) (ເບິ່ງພາກຜະໜວກ)

ບັດນີ້ເປັນການເລີ່ມຕົ້ນຂອງລະຍະເວລາ 1.260 ປີແຫ່ງການກົດຂີ່ຂົ່ມເຫງຂອງສັນຕະປາປາຕາມຄຳພະຍາກອນໃນດານີເອນແລະພຣະນິມິດ (ດານີເອນ 7:25 ພຣະນິມິດ 13:5-7) ຄຣິສະຕຽນຖືກບັງຄັບໃຫ້ເລືອກທາງໃດ ທາງນຶ່ງຄືຈະຍອມຮັບພິທີກັມແລະການນະມັດສະການຂອງສັນຕະປາປາ ຫລືຈະຍອມຖືກກັກຂັງໃນຄຸກມືດທໍຣະມານເຖິງຕາຍບັດນີ້ໄດ້ສຳເຣັດສົມຈິງຕາມຄຳຕຣັດຂອງພຣະເຢຊູ "ເຖິງແມ່ນພໍ່ແມ່ຍາດຕິພີ່ນ້ອງແລະມິດສະຫາຍກໍຈະມອບພວກທ່ານໄວ້ ແລະເຂົາຈະໃຫ້ລາງຄົນໃນພວກທ່ານເຖິງແກ່ຄວາມຕາຍ ຄົນທັງປວງຈະກຽດຊັງພວກທ່ານເພາະເຫັນແກ່ນາມຂອງເຮົາ" (ລູກາ 21:16.17)

ໂລກໄດ້ກັບກາຍເປັນສນາມຮົບອັນກວ້າງໃຫຍ່ ເປັນເວລາຫລາຍຮ້ອຍປີທີ່ຄຣິສຕະຈັກຂອງພຣະຄຣິດຕ້ອງຫາທີ່ຫລົບໄພໃນສະຖານອັນສະງົບງຽບ ເພື່ອການຫລົບຫລີ້ "ຝ່າຍຍິງນັ້ນໄດ້ໜີເຂົ້າໄປອາສັຍຢູ່ໃນປ່າທີ່ນາງມີບ່ອນຢູ່ຊຶ່ງພຣະເຈົ້າໄດ້

ຊົງຈັດຕຽມໄວ້ໃຫ້ເພື່ອນາງຈະໄດ້ຮັບການລ້ຽງດູຢູ່ທີ່ນັ້ນລະຫວ່າງພັນສອງຮ້ອຍຫົກສິບວັນ” (ພຣະນິມິດ 12:6)

ການທີ່ຄຣິສຕະຈັກໂຣມັນໄດ້ເພີ່ມພູນອິດທິພົນຫລາຍຂຶ້ນ ເປັນຈຸດເລີ່ມຕົ້ນຂອງຍຸກມືດຄວາມເຊື່ອທີ່ມີຕໍ່ພຣະຄຣິດຖືກປ່ຽນໄປເປັນຄວາມເຊື່ອຕໍ່ສັນຕະປາປາແຫ່ງກຸງໂຣມ ແທນທີ່ປະຊາຊົນຈະໄວ້ວາງໃຈພຣະບຸດຂອງພຣະເຈົ້າໃນການອະພັຍບາບແລະຊີວິດນິຣັນ ແຕ່ເຂົາເຫລົ່ານັ້ນກັບຫັນໄປຫາສັນຕະປາປາແລະບາດຫລວງພຣະສັນຕະປາປາກາຍເປັນຄົນກາງຂອງໂລກນີ້ຢືນຢູ່ໃນຕໍາແໜ່ງເປັນພຣະເຈົ້າຂອງເຂົາ ການຕີຕົວອອກຫ່າງຈາກຂໍ້ບັງຄັບຂອງສັນຕະປາປາຈະຕ້ອງຖືກລົງໂທດຢ່າງໜັກ ດັ່ງນັ້ນປະຊາຊົນຈຶ່ງພາກັນຫັນໃຫ້ພຣະເຈົ້າເຂົ້າໄປເຝົ້າມະນຸດຜູ້ລົ້ມລົງໄດ້ແລະໂຫດຮ້າຍຍິ່ງໄປກວ່ານັ້ນຍັງເປັນການເຂົ້າເຝົ້າເຈົ້າຊາຍແຫ່ງຄວາມມືດຜູ້ໃຊ້ອໍານາດໂດຍຜ່ານຄົນເຫລົ່ານັ້ນ ເມື່ອພຣະຄັມພີຖືກປິດບັງແລະມະນຸດຍົກຕົວເອງພຽງພຣະຜູ້ສູງສຸດເຮົາກໍມອງເຫັນພຶດຕິກັມສໍ້ສົນແລະຫລອກລວງແລະປິດບັງຄວາມຊົ່ວຮ້າຍຂອງຕົນເອງ

## ວັນອັນໜ້າຢ້ານຂອງຄຣິສຕະຈັກ

ບັນດາຄົນທີ່ຮັກສາມາດຕະຖານຢ່າງຊື່ສັດມີຈໍານວນນ້ອຍໃນເວລານັ້ນ ເບິ່ງເໝືອນວ່າຄວາມໄຂວ່ເຂວແຜ່ຫລາຍໄປທົ່ວ ສາສນາທີ່ແທ້ຈິງກໍາລັງຈະສາບສູນໄປຈາກໂລກ ຂ່າວປະເສີດໄດ້ສູນຫາຍໄປຈາກສາຍຕາແລະປະຊາຊົນຖືກບີບບັງຄັບຢ່າງເຂັ້ມງວດ ແລະຖືກສອນໄດ້ໄວ້ວາງໃຈໃນການຊໍາຣະບາບດ້ວຍການກະທໍາຂອງຕົນເອງໂດຍການເດີນທາງໄກເພື່ອສະແຫວງບຸນ ການທໍຣະມານຕົນເພື່ອໃຫ້ພົ້ນບາບ ການບູຊາວັດຖຸໂບຮານຄຣິສຕະຈັກຕັ້ງສິ່ງບູຊາສະຖານສັກສິດແລະແທ່ນບູຊາການຖວາຍເງິນຈໍານວນຫລວງຫລາຍໃຫ້ແກ່ຄຣິສຕະຈັກການກະທໍາທັງໝົດນີ້ ເຊື່ອວ່າເປັນການລະງັບພຣະພິໂຣດຂອງພຣະເຈົ້າແລະໃຫ້ພຣະອົງໂປດປານ

ປະມານປາຍສັດຕະວັດທີ່ 18 ສັນຕະປາປາໄດ້ກ່າວອ້າງວ່າໃນຍຸກທໍາອິດຂອງຄຣິສຕະຈັກບິຊອບແຫ່ງໂຣມ ໄດ້ຮັບອໍານາດຝ່າຍຈິດວິນຍານຢ່າງທີ່ເປັນຢູ່ໃນທຸກວັນນີ້ ແລະຂໍ້ຂຽນເກົ່າໆ ໄດ້ຖືກປອມແປງໂດຍບາດຫລວງມີການຄົ້ນພົບກົດ



ແລະພິຈາຣະນາເບິ່ງທຸກໆ ຄໍາຕາມຄວາມໝາຍໃນຂໍ້ຄວາມນັ້ນ ເມື່ອໃດທີ່ພົບຂໍ້ຄວາມທີ່ຍາກຕໍ່ການເຂົ້າໃຈ ເພິ່ນຈະພົບຄໍາອະທິບາຍໃນສ່ວນອື່ນໆ ຂອງພຣະຄັມພີເພິ່ນສຶກສາດ້ວຍ ການອະທິຖານຢ່າງຈິງໃຈ ເພື່ອຂໍໃຫ້ພຣະເຈົ້າປະທານຄວາມເຂົ້າໃຈ ມິນເລີໄດ້ມີປະສົບການໃນຄວາມຈິງຂອງພຣະທັມບົດເພງສັນລະເສີນ (ສາດຸດີ) ທີ່ວ່າ “ຄໍາສອນຂອງພຣະອົງໃຫ້ແສງສວ່າງແລະນໍາຄວາມສລຽວສລາດມາໃຫ້ຜູ້ບໍ່ມີປະສົບການ” (ເພງສັນລະເສີນ 119:130)

ມິນເລີ ສຶກສາພຣະທັມດານີເອນແລະພຣະທັມພຣະນິມິດດ້ວຍຄວາມຕັ້ງໃຈແລະພົບວ່າສັນຍາລັກແຫ່ງຄໍາພະຍາກອນນັ້ນສາມາດເຂົ້າໃຈໄດ້ ເພິ່ນເຫັນວ່າເຄື່ອງໝາຍແລະຄໍາອຸປມາຕ່າງໆ ໄດ້ຖືກອະທິບາຍໄວ້ໂດຍກົງ ຫລືກ່າວໄວ້ໃນຂໍ້ພຣະຄັມພີຂໍ້ອື່ນໆ ຫລືເຂົ້າໃຈໄດ້ຈາກຕົວອັກສອນ ເພິ່ນໄດ້ພົບຂໍ້ພຣະຄັມພີຂໍ້ແລ້ວຂໍ້ເຫລົ່າກ່ຽວໂຍງກັນເປັນລູກໂຊ້ຂອງຄວາມຈິງອັນເປັນຜົນທີ່ເກີດຈາກຄວາມພຍາຍາມ ເພິ່ນສຶກສາຄໍາພະຍາກອນທີລະຂັ້ນຕອນ ເຫລົ່າເທວະດາກໍຄອຍແນະນໍາຄວາມຄິດໃຫ້ມິນເລີມີຄວາມພໍໃຈທີ່ຄວາມຄິດເຫັນຂອງຄົນທົ່ວໄປກ່ຽວກັບລະຍະພັນປີ ກ່ອນທີ່ຈະເຖິງເວລາສຸດທ້າຍຂອງໂລກນັ້ນບໍ່ໄດ້ມີການສນັບສນູນໂດຍພຣະທັມຂອງພຣະເຈົ້າ ຫລັກຄໍາສອນທີ່ຊີ້ວ່າພັນປີແຫ່ງຄວາມສງົບສຸກກ່ອນການສະເດັດມາຂອງພຣະຜູ້ເປັນເຈົ້ານັ້ນເປັນຫລັກຄໍາສອນທີ່ຄັດແຍ້ງກັບຄໍາສອນຂອງພຣະຄຣິດແລະອັຄສາວົກຂອງພຣະອົງເພາະເຫລົ່າອັຄສາວົກປະກາດວ່າເຂົ້າສາລີແລະເຂົ້າລະມານຈະຕ້ອງຂຶ້ນຮວມຢູ່ດ້ວຍກັນຈົນເຖິງລະດູເກັບກ່ຽວ (ວາຣະສຸດທ້າຍຂອງໂລກ) “ແຕ່ຄົນຊົ່ວຮ້າຍແລະຄົນປອມຕົວຈະກໍາເລີບທະວີຂຶ້ນໄປລໍ້ລວງຄົນອື່ນໃຫ້ຫລົງແລະຕົວເຂົາເອງກໍຈະຖືກຫລອກລວງເໝືອນກັນ” (2ຕີໂມທຽວ3:13)

## ການສະເດັດກັບມາຂອງພຣະຄຣິດ

ຫລັກຄວາມເຊື່ອການກັບໃຈຂອງໂລກ ແລະການຄອບຄອງຈິດວິນຍານຂອງພຣະຄຣິດບໍ່ເປັນທີ່ຍອມຮັບໃນຄຣິສຕະຈັກຂອງອັຄສາວົກຄຣິສະຕຽນໂດຍທົ່ວໆໄປບໍ່ຍອມຮັບຫລັກຄໍາສອນນີ້ຈົນກະທັ່ງເມື່ອເລີ່ມຕົ້ນສັດຕະວັດທີ 18 ຫລັກຄໍາສອນນີ້ໄດ້ສອນຄົນທັງຫລາຍໃຫ້ເຂົ້າໃຈວ່າການສະເດັດກັບມາຂອງພຣະເຈົ້ານັ້ນເປັນເຣື່ອງຂອງອານາຄົດອັນຍາວໄກແລະຂັດຂວາງບໍ່ໃຫ້ເອົາໃສ່ຕໍ່ໝາຍສໍາຄັນຂອງການສະ

ພີ   ແລ້ວຂ້າພະເຈົ້າບໍ່ມີຫລັກຖານອັນໃດພິສູດໄດ້ເລີຍວ່າພຣະຜູ້ຊ່ອຍໃຫ້ລອດເຊັ່ນນີ້ມີຈິງຫລືແມ່ນແຕ່ສະພາບຂອງອານາຄົດວ່າເປັນຢ່າງໃດ

“ຂ້າພະເຈົ້າເຫັນວ່າພຣະຄັມພີຊ່ອຍໃຫ້ມອງເຫັນພຣະຜູ້ຊ່ອຍໃຫ້ລອດທີ່ຂ້າພະເຈົ້າຕ້ອງການ   ຂ້າພະເຈົ້າປລາດໃຈວ່າຈະພົບໜັງສືທີ່ບໍ່ໄດ້ຮັບການດົນໃຈຈະພັດທະນາຫລັກການທີ່ມີຄວາມສົມບູນເປັນທີ່ຍອມຮັບແລະຕ້ອງການຂອງໂລກທີ່ໄດ້ຫາຍໄປໄດ້  ບ່ອນໃດຂ້າພະເຈົ້າຈຳຕ້ອງຍອມຮັບວ່າພຣະຄັມພີເປັນໜັງສືທີ່ໄດ້ຮັບການສຳແດງຈາກພຣະເຈົ້າ   ຂໍ້ພຣະຄັມພີຈຶ່ງກາຍເປັນສິ່ງທີ່ນຳຄວາມຊົມຊື່ນຍິນດີມາສູ່ຂ້າພະເຈົ້າແລະຂ້າພະເຈົ້າພົບຄວາມເປັນມິດສະຫາຍໃນພຣະເຢຊູ   ພຣະຜູ້ຊ່ອຍໃຫ້ລອດກັບກາຍເປັນບຸກຄົນທີ່ສຳຄັນທີ່ສຸດໃນຖ້າມກາງຄົນໝົ່ນຄົນ   ພຣະຄັມພີຊຶ່ງແຕ່ກ່ອນເປັນສິ່ງທີ່ມືດມົນແລະຂັດແຍ້ງຕໍ່ຄວາມຄິດເຫັນຂອງຂ້າພະເຈົ້າກັບກາຍເປັນໂຄມສຳລັບສ່ອງທາງຂອງຂ້າພະເຈົ້າ  ແລະເປັນແສງສວ່າງນຳທາງຂ້າພະເຈົ້າ  ຂ້າພະເຈົ້າພົບວ່າພຣະເຈົ້າຊົງເປັນສີລາຢູ່ກາງມະຫາສະມຸດແຫ່ງຊີວິດ   ພຣະຄັມພີກັບກາຍເປັນໜັງສືທີ່ຂ້າພະເຈົ້າສຶກສາຫລາຍທີ່ສຸດ   ຂ້າພະເຈົ້າສາມາດເວົ້າດ້ວຍຄວາມຈິງໃຈວ່າຂ້າພະເຈົ້າຄົ້ນພົບພຣະຄັມພີດ້ວຍຄວາມຊື່ນຊົມຍິນດີເປັນຢ່າງຍິ່ງ   ຂ້າພະເຈົ້າສົງສັຍວ່າເປັນຫຍັງຂ້າພະເຈົ້າຈຶ່ງບໍ່ເຫັນເຖິງຄວາມງົດງາມ   ແລະສງ່າຣາສີຂອງພຣະຄັມພີແຕ່ກ່ອນ   ແລະປລາດໃຈວ່າເປັນຫຍັງຂ້າພະເຈົ້າຈຶ່ງປະຕິເສດພຣະຄັມພີ   ຂ້າພະເຈົ້າບໍ່ປາຖນາທີ່ຈະອ່ານໜັງສືອື່ນໆ   ອີກຕໍ່ໄປແລະຍອມເປີດຈິດໃຈຮັບສະຕິປັນຍາຈາກພຣະເຈົ້າ”

ມິນເລີ ໄດ້ປະກາດຕົວຮັບເຊື່ອຂອງເພິ່ນຕໍ່ໜ້າປະຊາຊົນ ແຕ່ກຸ່ມເພື່ອນນອກສາສນາທີ່ເພິ່ນເຄີຍພົບຫາສາມາຄົມບໍ່ລໍຊ້າທີ່ຈະຂັດແຍ້ງກ່ຽວກັບພຣະຄັມພີ   ຊຶ່ງຄັ້ງນຶ່ງມິນເລີເອງກໍເຄີຍກະທຳມາກ່ອນ   ມິນເລີໃຫ້ເຫດຜົນວ່າຖ້າພຣະຄັມພີເປັນໜັງສືທີ່ມາຈາກພຣະເຈົ້າກໍຍ່ອມຈະມີຄຳຕອບຢູ່ໃນຕົວເອງເພິ່ນຕັດສິນໃຈສຶກສາພຣະຄັມພີຢ່າງຈິງໃຈແລະຄົ້ນຫາໃຫ້ແນ່ຊັດວ່າມີຂໍ້ຄັດແຍ້ງອັນໃດພໍທີ່ຈະສອດຄ້ອງເຂົ້າກັນໄດ້ແດ່

ມິນເລີ ພຍາຍາມບໍ່ໃຊ້ໜັງສືອະທິບາຍຂໍ້ພຣະຄັມພີ ແຕ່ພຍາຍາມໃຊ້ຂໍ້ພຣະຄັມພີປຽບທຽບກັນໂດຍໃຊ້ຂໍ້ຄວາມທີ່ສອດຄ້ອງກັນແລະສັບສົມພັນຊ່ອຍເພິ່ນເລີ່ມອ່ານພຣະຄັມພີປະຖົມມະການທີ່ລະຂໍ້   ເມື່ອເພິ່ນພົບພຣະທັມຂໍ້ໃດທີ່ຍັງເຂົ້າໃຈບໍ່ຊັດເຈນ  ເພິ່ນຈະປຽບທຽບກັບຂໍ້ອື່ນໆ  ຊຶ່ງເບິ່ງເໝືອນວ່າຈະກ່ຽວໂຍງກັນໄດ້  ເພິ່ນອ່ານ



ເກນອັນເປັນຈາກການປະຊຸມທີ່ບໍ່ເຄີຍໄດ້ຍິນມາກ່ອນນີ້ກໍເພື່ອສ້າງອຳນາດອິດທິພົນຂອງສັນຕະປາປາຍ້ອນໄປໃນຍຸກກ່ອນ (ເບິ່ງພາກຜະໜວກ)

ຜູ້ທີ່ວາງຮາກຖານແຫ່ງຄວາມເຊື່ອທີ່ໝັ້ນຄົງສ່ວນນຶ່ງ(1ໂກຣິນໂທ 3:10,11) ມີຄວາມສັບສົນທີ່ແທ້ທີ່ຕ້ອງຕໍ່ສູ້ກັບການກົດຂີ່ຂົ່ມເຫງການຫລອກລວງ ແລະອຸປະສັກທຸກຢ່າງທີ່ຊາຕານວາງແຜນເຮັດໃຫ້ຜູ້ຊື່ສັດບາງຄົນຮູ້ສຶກໝົດກຳລັງໃຈ  ເຂົາຈຶ່ງຫັນໄປຈາກຮາກຖານອັນໝັ້ນຄົງເສັຽເພື່ອຄວາມສຸກແລະຄວາມປອດພັຍຕໍ່ຊີວິດຂອງຕົນເອງ ແຕ່ຜູ້ທີ່ຊື່ສັດຢືນຢັນໃນຄວາມເຊື່ອບາງສ່ວນກໍຫາບໍ່ໄດ້ມີຄວາມຫວາດກົວໃດໆ   ທັງສິ້ນຕໍ່ສັດຕຣູ

ການນະມັດສະການຮູບເຄົາຣົບກາຍເປັນທີ່ນິຍົມໂດຍທົ່ວໄປ ມີການຈູດທູບທຽນແລະອະທິຖານອ້ອນວອນຕໍ່ຮູບເຄົາຣົບເຫລົ່ານັ້ນ   ປະເພນີອັນໄຮ້ສາຣະນີ້ໄດ້ແຜ່ຫລາຍທົ່ວທຸກທິວລະແຫງ   ທຸກຄົນກະທຳກັນຢ່າງໄຮ້ເຫດຜົນໃນຂະນະທີ່ບັນດາພຣະຜູ້ໃຫຍ່ແລະບາດຫລວງພາກັນຫລົງລະເລີງຢູ່ກັບຄວາມສຸກຝ່າຍກາຍແລະການກິນບາດຄາດສົນບົນ  ປະຊາຊົນທີ່ຄອຍເຝົ້າຕິດສ້ອຍຫ້ອຍຕາມກໍພອຍຕົກຢູ່ໃນຫ້ວງແຫ່ງຄວາມໂງ່ຈ້າແລະຄວາມເສື່ອມໂຊມຂອງສິລທັມໄປດ້ວຍ

ໃນສັດຕະວັດທີ່ 11 ສັນຕະປາປາ ເກຣກໍຣີ ທີ່ເຈັດໄດ້ອວດອ້າງວ່າຄຣິສຕະຈັກບໍ່ເຄີຍໄດ້ກະທຳຜິດພາດແລະຈະບໍ່ມີທາງກະທຳຜິດພາດຕາມທີ່ກ່າວໃນພຣະຄັມພີ   ແຕ່ການພິສູດຂອງພຣະຄັມພີບໍ່ສອດຄ່ອງກັບຂໍ້ຢືນຢັນນີ້   ນອກຈາກນີ້ສັນຕະປາປາຍັງອວດອ້າງດ້ວຍຄວາມພູມໃຈວ່າພຣະອົງມີອຳນາດປົດຈັກກະພັດອອກຈາກຕຳແໜ່ງໄດ້ຕົວຢ່າງຂອງຄວາມມີນິສັຍເປັນຜະເດັດການແລະການບໍ່ຮູ້ພົ່ງນີ້ເຫັນໄດ້ຈາກການທີ່ພຣະອົງກະທຳກັບພຣະເຈົ້າເຮັນຣີທີສີ່ຈັກກະພັດແຫ່ງເຢຣະມັນ   ໂດຍໃຊ້ອຳນາດຂອງສັນຕະປາປາຖອດພຣະອົງອອກຈາກຣາຊສົມບັດແລະລຶບພຣະນາມຂອງພຣະອົງອອກຈາກຄຣິສຕະຈັກສັນຕະປາປາມີຄຳສັ່ງໃຫ້ເຈົ້າຟ້າຊາຍຊຶ່ງເປັນໂອຣົດຂອງຈັກກະພັດເອງທຳການກະບົດຕໍ່ພຣະອົງ

ຈັກກະພັດເຮັນຣີຊົງເຫັນຄວາມຈຳເປັນທີ່ຈະຕ້ອງສ້າງສັນຕິພາບກັບກຸງໂຣມ  ພຣະອົງພ້ອມດ້ວຍພຣະຣາຊິນີແລະຂ້າຣາຊບໍຣິພາຣະສະເດັດຂ້າມພູເຂົາແອລປີໃນກາງລະດູໜາວເພື່ອຊົງຂໍຂະມາຕໍ່ສັນຕະປາປາ   ເມື່ອສະເດັດເຖິງປາສາດຂອງ

ສັນຕະປາປາເກຣກໍຣີພຣະຈັກກະພັດຖືກເຊີນໃຫ້ລໍຢູ່ນອກປະສາດ ດ້ວຍຄວາມໜາວເຢັນໃນລະດູໜາວໂດຍບໍ່ມີຜ້າຄຸມພຣະສຽນ ແລະສລອງພຣະບາດພຣະອົງຕ້ອງຊົງອົດພຣະກາຍາຫານເປັນເວລາສາມວັນແລະຊົງສາລະພາບບາບຈົນກະທັ່ງໄດ້ຮັບການອະພັຍຈາກພຣະສັນຕະປາປາ ແຕ່ຕ້ອງຢູ່ພາຍໃຕ້ເງື່ອນໄຂວ່າອົງຈັກກະພັດຈະຕ້ອງລໍພຣະສັນຕະປາປາເປັນຜູ້ອະນຸມັດຣາຊອຳນາດ ຄືນພຣະຣາຊອິສຣິຍົດໃຫ້ ແລະຕ້ອງຈົງຮັກພັກດີຕໍ່ພຣະສັນຕະປາປາ ພຣະສັນຕະປາປາເກຣກໍຣີຊົງພຣະຊວນດ້ວຍຄວາມພໍພຣະທັຍໃນຊັຍຊະນະຂອງຕົນເອງ ແລະຕຣັດເປັນການໂອ້ອວດວ່າພຣະອົງມີໜ້າທີ່ທີ່ຈະຈຳກັດຄວາມຍິ່ງຜະຫຍອງຂອງກະສັດທັງຫລາຍ

ເຮັດໃຫ້ເຫັນຄວາມແຕກຕ່າງລະຫວ່າງສັນຕະປາປາຜູ້ຍິ່ງຍະໂສແລະພຣະຄຣິດຜູ້ຖ່ອມພຣະອົງອ້ອນວອນຢູ່ທີ່ປະຕູໃຈ ເພື່ອທີ່ຈະຊົງເຂົ້າສະຖິດໃນຈິດໃຈເຮົາ ພຣະອົງຊົງສັ່ງສອນອັຄສາວົກຂອງພຣະອົງວ່າ "ແລະຖ້າຜູ້ໃດຢາກເປັນເອກເປັນຕົ້ນໃນພວກທ່ານຜູ້ນັ້ນຈະຕ້ອງເປັນຂ້ອຍໃຊ້ຂອງພວກທ່ານ" (ມັດທາຍ 20:27)

ແມ່ນວ່າກ່ອນທີ່ຈະມີການສະຖາປານາສາສນາຂອງສັນຕະປາປາ ຫລັກຄຳສອນຂອງປຣັສຍານອກສາສນາໄດ້ສອດແຊກອິດທິພົນໃນຄຣິສຕະຈັກຢູ່ກ່ອນແລ້ວ ຄົນຈຳນວນຫລວງຫລາຍຍັງຕິດຢູ່ກັບຫລັກການຂອງນັກປຣັສຍານອກສາສນາ ແລະແຜ່ອິດທິພົນຄຳສອນນັ້ນໄປຍັງຄົນນອກສາສນາຫລັກການບໍ່ຖືກຕ້ອງທີ່ໜ້າເປັນຕາຢ້ານນີ້ຈຶ່ງໄດ້ສອດແຊກເຂົ້າສູ່ຄວາມເຊື່ອຂອງຄຣິສະຕຽນ

## ຄຳສອນທຽມເທັດເຂົ້າມາສູ່ຄຣິສຕະຈັກໄດ້ຢ່າງໃດ

ຫລັກຄວາມເຊື່ອທຽມເທັດທີ່ໂດດເດ່ນຫລາຍຄືຄວາມເຊື່ອກ່ຽວກັບຊີວິດອັນເປັນອັມມະຕະຂອງມະນຸດແລະຄົນຕາຍຍັງມີຄວາມຮູ້ສຶກມີວິນຍານ ຫລັກຄວາມເຊື່ອນີ້ມີພື້ນຖານມາຈາກໂຣມ ຊຶ່ງບັນຍັດຂຶ້ນມາເພື່ອຮຽກຮ້ອງວິນຍານຂອງນັກບຸນທັງຫລາຍ ແລະບູຊາພຣະແມ່ມາຣີ ຈາກນັ້ນຄຳສອນນອກຮີດທີ່ກ່ຽວກັບຄວາມທຸກ



ຄວາມເປັນຢູ່ຂອງທຸກຊີວິດບໍ່ປາຖນາຫລືສຳແດງພຣະອົງໃນທັມມະຊາດຫລືປະຫວັດສາດ ແຕ່ຈະຊົງພິພາກສາໂລກໃນວັນສຸດທ້າຍ) ຄົນເຫລົ່ານີ້ມີອິດທິພົນຢ່າງຫລວງຫລາຍ ເພາະພວກເຂົາສະແດງເປັນພົລເມືອງດີ ມີມະນຸດສະຍະທັມແລະມີຈິດໃຈເອື້ອເຝື້ອເພື່ອແຜ່ ໂດຍເຫດທີ່ພວກເຫລົ່ານີ້ໄດ້ອາສັຍຢ່າງຖ້າມກາງສະຖາບັນຂອງຄຣິສະຕຽນ ສິ່ງແວດລ້ອມຈຶ່ງຊ່ອຍກູດເກົາພວກເຂົາໃຫ້ມີສິນທັມແລະມີຄວາມປະພຶດດີ ຄົນເຫລົ່ານີ້ໄດ້ຮັບການຍົກຍ້ອງນັບຖືຈາກບຸກຄົນທົ່ວໄປ ເພາະເຂົາໄດ້ຮຽນຮູ້ຄຳສອນຂອງພຣະຄັມພີ ແຕ່ກົນຳຄຳສອນຂອງພຣະຄັມພີໄດ້ໃຊ້ໃນທາງທີ່ຂັດແຍ້ງຕໍ່ພຣະທັມຂອງພຣະເຈົ້າ ມິນເລີ ຈຶ່ງຖືກຊັກນຳໃຫ້ເຫັນດ້ວຍກັບຄົນເຫລົ່ານີ້

ມິນເລີ ຮູ້ສຶກວ່າຂໍ້ຄວາມໃນພຣະຄັມພີອະທິບາຍກັນໃນສມັຍນັ້ນເປັນຂໍ້ຄວາມທີ່ເຂົ້າໃຈຍາກ ແຕ່ຖ້າເພິ່ນລະຖິ້ມພຣະຄັມພີ ຄວາມເຊື່ອຢ່າງໃໝ່ກໍບໍ່ມີອັນໃດດີໄປກວ່າເພິ່ນຈຶ່ງບໍ່ມີຄວາມພໍໃຈ ເມື່ອມິນເລີອາຍຸໄດ້ 34 ປີ ພຣະວິນຍານບໍຣິສຸດໄດ້ດົນໃຈໃຫ້ເພິ່ນໄດ້ຕະໜັກວ່າເພິ່ນເປັນຄົນບາບ ເພິ່ນຍັງບໍ່ແນ່ໃຈວ່າຫລັງຈາກທີ່ຕາຍແລ້ວເພິ່ນຈະໄດ້ຮັບຄວາມສຸກອານາຄົດເບິ່ງເໝືອນຈະເລື່ອນລາງແລະມືດມົນ ມິນເລີ ໄດ້ກ່າວເຖິງຄວາມຮູ້ສຶກຂອງເພິ່ນໃນຕອນນັ້ນວ່າ "ສວັນປຽບເໝືອນແຜ່ນທອງເຫລືອງທີ່ແຜ່ຢູ່ເໜືອຫົວຂອງພຣະເຈົ້າ ແລະພື້ນດິນປຽບເໝືອນແຜ່ນເຫລັກທີ່ແຜ່ຢູ່ໃຕ້ພຣະບາດ (ຕີນ) ຂອງພຣະເຈົ້າ ຂ້າພະເຈົ້າຍິ່ງຄິດຫລາຍເທົ່າໃດ ຄວາມຄິດຂອງຂ້າພະເຈົ້າກໍຍິ່ງກະເຈີດກະຈ່າງ ຂ້າພະເຈົ້າພຍາຍາມຢຸດຄິດແຕ່ກໍບໍ່ສາມາດຄວບຄຸມຄວາມຄິດຂອງຂ້າພະເຈົ້າໄວ້ໄດ້ ຂ້າພະເຈົ້າຮູ້ສຶກເປັນທຸກຫລາຍຈິງໆ ແຕ່ກໍບໍ່ຮູ້ສຶກສາເຫດຂອງຄວາມທຸກນັ້ນ ຂ້າພະເຈົ້າໄດ້ແຕ່ຈົ່ມພືມພຳແລະຕິຕຽນ ແຕ່ກໍບໍ່ຮູ້ວ່າຈະຈົ່ມຕິຕຽນໃຜ ຂ້າພະເຈົ້າຮູ້ດີວ່າການກະທຳເຊັ່ນນີ້ເປັນສິ່ງທີ່ຜິດ ແຕ່ຂ້າພະເຈົ້າບໍ່ຮູ້ວ່າຈະຫາສິ່ງທີ່ຖືກຕ້ອງໄດ້ຢ່າງໃດແລະຫາຈາກບ່ອນໃດ

## ມິນເລີພົບສະຫາຍທີ່ດີເລີດ

ເພິ່ນກ່າວວ່າ "ທັນໃດນັ້ນຂ້າພະເຈົ້າເກີດຄວາມຮູ້ສຶກປະທັບໃຈໃນອຸປະນິສັຍຂອງພຣະຜູ້ຊ່ອຍໃຫ້ລອດ ເບິ່ງເໝືອນຈະມີຜູ້ນຶ່ງທີ່ເປັນຄົນທີ່ດີແລະຄວາມເມດຕາຊ່ອຍໄຖ່ບາບຂອງເຮົາ ແລະຊ່ອຍເຮົາໃຫ້ລອດພົ້ນຈາກຄວາມຜິດບາບ ແຕ່ແລ້ວຂ້າພະເຈົ້າກໍຖາມຕົວເອງວ່າຈະພິສູດໄດ້ຢ່າງໃດວ່າບຸກຄົນຜູ້ນັ້ນມີຈິງນອກຈາກພຣະຄັມ

## ບົດທີ່ 18

# ຄວາມສວ່າງໃໝ່ໃນໂລກໃໝ່

ຊາວນາຜູ້ຊື່ສັດແລະຊອບທັມຄົນນຶ່ງຜູ້ມີຄວາມປາຖນາທີ່ຢາກຮູ້ຄວາມຈິງຢ່າງຈິງໃຈເປັນຜູ້ທີ່ພຣະເຈົ້າຊົງເລືອກໃຫ້ເລີ່ມການປະກາດຂ່າວການສະເດັດກັບມາຄັ້ງທີ່ສອງຂອງພຣະຄຣິດ ວິນລ່ຽມ ມິນເລີ ໄດ້ຕໍ່ສູ້ກັບຄວາມຍາກຈົນຄືກັນແຄ້ນແລະຮຽນຮູ້ບົດຮຽນແຫ່ງຄວາມບໍ່ເຫັນແກ່ຕົວເຊັ່ນດຽວກັບນັກປະຕິຮູບສາສນາທັງຫລາຍ

ຕັ້ງແຕ່ຍັງເປັນວັຍເດັກ ມິນເລີ ໄດ້ສະແດງໃຫ້ເຫັນວ່າເພິ່ນເປັນເດັກທີ່ມີປັນຍາອັນສຽບແຫລມກວ່າທັມມະດາ ເມື່ອໃຫຍ່ຂຶ້ນເພິ່ນກໍຍິ່ງມີສະຕິປັນຍາອັນສລຽວສລາດເພີ່ມຂຶ້ນແລະມີຄວາມກະຫາຍວິຊາຄວາມຮູ້ຄວາມເປັນຄົນຮັກການສຶກສາຮ່ຳຮຽນຮູ້ຈັກຄວາມຄິດຢ່າງຮອບຄອບຈຶ່ງເຮັດໃຫ້ເພິ່ນເປັນຄົນຕັດສິນໃຈຢ່າງສລາດແລະເຂົ້າໃຈສິ່ງຕ່າງໆ ໄດ້ເປັນຢ່າງດີ ມິນເລີ ເປັນຜູ້ທີ່ມີສິນທັມສູງບໍ່ມີທີ່ຕິ ແລະມີຊື່ສຽງດີເພິ່ນເປັນຜູ້ປະຕິບັດໜ້າທີ່ຕ່າງໆ ທາງຝ່າຍພົລເຮືອນແລະຝ່າຍທະຫານຢ່າງໜ້າເຊື່ອຖືເບິ່ງເໝືອນວ່າເພິ່ນຈະມີໂອກາດເດີນທາງໄປສູ່ຄວາມມັ່ງຄັ່ງສົມບູນແລະກຽດຕິຍົດຊື່ສຽງ

ມິນເລີ ມີຄວາມສົນໃຈໃນເຣື່ອງສາສນາຕັ້ງແຕ່ຍັງເປັນວັຍເດັກ ເມື່ອເຕີບໂຕເປັນໜຸ່ມເພິ່ນຖືກຊັກນຳໃຫ້ຄົບຄ້າສາມາຄົມກັບພວກນັບຖືຣັດທິເທວູເບກຂານິຍົມ (ທີ່ເຊື່ອວ່າພຣະເຈົ້າຊົງເປັນພຣະຜູ້ສ້າງແລະຜູ້ພິພາກສາຄັ້ງສຸດທ້າຍເມື່ອຊົງສ້າງໂລກສຳເຣັດແລ້ວພຣະອົງບໍ່ກ່ຽວຂ້ອງກັບໂລກບໍ່ໄດ້ປົກຄອງ ຊີວິດມະນຸດບໍ່ສົນພຣະທັຍໃນ



ທໍຣະມານຊົ່ວນິຣັນດອນຂອງຜູ້ຖືກພິພາກສາລົງໂທດເກີດຂຶ້ນມາ ຄຳສອນນີ້ກໍໄດ້ຜະສົມຜະສານກັບຄວາມເຊື່ອຂອງສັນຕະປາປາຕັ້ງແຕ່ສມັຍທຳອິດ

ວິທີທາງໄດ້ຖືກຈັດຕຽມໄວ້ເພື່ອການຄົ້ນພົບຂອງລັດທິນອກສາສນາຄືເຣື່ອງຂອງແດນຊຳຣະ ເພື່ອໃຫ້ໄດ້ຮັບຄວາມທຸກທໍຣະມານຊົ່ວຄາວເພື່ອລ້າງບາບ ເຮັດໃຫ້ປະຊາຊົນຈຳນວນຫລວງຫລາຍເກີດຄວາມຢ້ານໃນຄວາມເຊື່ອທີ່ຜິດ ຄວາມເຊື່ອນອກຮີດນີ້ຢືນຢັນວ່າມີສະຖານທີ່ທໍຣະມານສຳລັບວິນຍານທີ່ບໍ່ໄດ້ເຮັດດີຈະໄດ້ຮັບການລົງໂທດສຳລັບຄວາມບາບຂອງຕົນ ແລະເມື່ອວິນຍານນັ້ນໄດ້ຮັບການສະຖານຊຳຣະໃຫ້ບໍຣິສຸດແລ້ວກໍຈະໄດ້ຮັບເຂົ້າໄປໃນສວັນ (ເບິ່ງພາກຜະໜວກ)

ນອກຈາກນີ້ຍັງມີການປັ້ນເຣື່ອງເທັດອີກຢ່າງນຶ່ງ ເພື່ອເຮັດໃຫ້ໂຣມໄດ້ຮັບຜົນປໂຍດຈາກຄວາມຢ້ານແລະຄວາມຊົ່ວຮ້າຍຂອງຕົນ ຄືຫລັກຄຳສອນກ່ຽວກັບການລ້າງບາບທັງໝົດ ທັງຄວາມບາບໃນອາດີດປັດຈຸບັນແລະໃນອານາຄົດ ມີການສັນຍາແກ່ທຸກຄົນທີ່ຈະເຂົ້າຮ່ວມເຮັດສົງຄາມກັບສັນຕະປາປາ ເພື່ອລົງໂທດສັດຕຣູຂອງຄຣິສຕະຈັກ ແລະທຳລາຍລ້າງທຸກຄົນທີ່ກ້າປະຕິເສດອຳນາດແຫ່ງໃນສາສນາຂອງພຣະອົງ ປະຊາຊົນອາດຊຳຣະຕົວເອງໃຫ້ພົ້ນບາບແລະຊ່ອຍປົດປ່ອຍວິນຍານຂອງມິດສະຫາຍທີ່ຕາຍໄປທີ່ກຳລັງຕົກຢູ່ໃນແປວໄຟແຫ່ງຄວາມທຸກທໍຣະມານ ດ້ວຍການຈ່າຍເງິນໃຫ້ແກ່ຄຣິສຕະຈັກ ການກະທຳເຊັ່ນນີ້ໝາຍຄວາມວ່າໂຣມໄດ້ເກັບຊັບສິນໄວ້ໃນຄັງຈຳນວນມະຫາສານ ແລະມີຄວາມເປັນຢູ່ຢ່າງໂອ່ອາດ ຫລູຫລາ ຟຸ່ມເຟືອຍແລະມີພຶດຕິກັມທີ່ໄຮ້ສິລທັມ ແລ້ວກໍອ້າງວ່າເປັນຕົວແທນຂອງພຣະຄຣິດຜູ້ບໍ່ມີແມ່ນແຕ່ວາງພຣະສຽນ (ເບິ່ງພາກຜະໜວກ)

ພິທີສົມມະຫາສະນິດຖືກໃຊ້ເປັນພິທີບູຊາຮູບເຄົາຣົບ ບາດຫລວງຂອງສັນຕະປາປາຜູ້ປະກອບພິທີຈະອ້າງການປ່ຽນແປງເຂົ້າໜົມປັງແລະນ້ຳອະງຸ່ນທັມມະດາໃຫ້ເປັນ “ພຣະກາຍແລະພຣະໂລຫິດທີ່ແທ້ຈິງຂອງພຣະຄຣິດ ການກ່າວອ້າງໝິ່ນປມາດພຣະຜູ້ເປັນເຈົ້າເຊັ່ນນີ້ ພຣະເຫລົ່ານັ້ນອ້າງຣິດອຳນາດແຫ່ງພຣະເຈົ້າ ພຣະອົງຜູ້ຊົງເປັນພຣະຜູ້ສ້າງຢ່າງເປີດເຜີຍ ຄຣິສະຕຽນຖືກບັງຄັບດ້ວຍຄວາມເຈັບປວດໃຫ້ຍອມຮັບຄວາມເຊື່ອນອກສາສນາທີ່ໝິ່ນປມາດຕໍ່ສວັນເຊັ່ນນີ້

ໃນສັດຕະວັດທີ່ສິບສາມ ມີການເລີ່ມກະທຳສິ່ງທີ່ຊົ່ວຮ້າຍທີ່ສຸດໃນເວລາ
ນັ້ນຂອງສັນຕະປາປາ ຄືການຕັ້ງສານສອບສວນຄວາມຜິດໃນການປະຊຸມລັບ ຊາ
ຕານແລະພັກພວກຂອງມັນໄດ້ຄວບຄຸມຈິດໃຈຂອງມະນຸດຜູ້ຊົ່ວຮ້າຍເຫລົ່ານັ້ນ ຂະນະ
ດຽວກັນເທວະດາຂອງພຣະເຈົ້າທີ່ມອງບໍ່ເຫັນກໍຢືນຢູ່ຖ້າມກາງຄົນເຫລົ່ານັ້ນ ບັນທຶກ
ຄຳສັ່ງອັນຊົ່ວຮ້າຍຂອງພວກເຂົາ ແລະຂຽນປະຫວັດການກະທຳອັນໂຫດຮ້າຍໃຫ້ປາ
ກົດແກ່ສາຍຕາມະນຸດວ່າ "ບາບີໂລນມະຫານະຄອນມຶນເມົາດ້ວຍໂດຍໂລຫິດຂອງ
ພວກທັມມະກິຊົນ" (ພຣະນິມິດ 17:5,6) ບັນດາຜູ້ທີ່ໄດ້ສະລະຊີວິດ ເພາະຢືນຢັນ
ໃນຄວາມເຊື່ອໄດ້ຮ້ອງຕໍ່ພຣະເຈົ້າເພື່ອແກ່ແຄ້ນອຳນາດຂອງການລະຖິ້ມສາສນາ
ເຫລົ່ານັ້ນເສັຽ

ລະບອບສັນຕະປາປາກາຍເປັນສິ່ງທີ່ມີອຳນາດຢ່າງເດັດຂາດ ບັນດາກະ
ສັດແລະຈັກກະພັດຍອມກົ້ມໄຫວ້ໃຫ້ແກ່ກົດຂໍ້ບັງຄັບຂອງສັນຕະປາປາແຫ່ງໂຣມເປັນ
ເວລາຫລາຍຮ້ອຍປີຫລັກຄຳສອນຂອງສັນຕະປາປາເປັນທີ່ຍອມຮັບ ນັກບວດໄດ້ຮັບ
ການເຄົາຣົບນັບຖືແລະຄ້ຳຈູນຢ່າງກວ້າງຂວາງ ບໍ່ເຄີຍມີຄັ້ງໃດທີ່ຄຣິສຕະຈັກໂຣມ
ໄດ້ຮັບກຽດຕິຍົດ ຄວາມຍິ່ງໃຫຍ່ ຫລືອຳນາດເທົ່າກັບຍຸກນີ້

ແຕ່ "ທ່ຽງວັນຂອງສັນຕະປາປາເໝືອນກັບທ່ຽງຄືນຂອງໂລກ" ເມື່ອພຣະ
ທັມຂອງພຣະເຈົ້າເກືອບບໍ່ມີໃຜຮູ້ຈັກພວກຜູ້ນຳຂອງລະບອບສັນຕະປາປາກຽດຊັງ
ແສງສວ່າງທີ່ຈະເປີດເຜີຍຄວາມຜິດບາບຂອງພວກຕົນ ພຣະບັນຍັດຂອງພຣະເຈົ້າ
ມາດຕະຖານແຫ່ງຄວາມຊອບທັມຖືກຍົກເລີກ ເຂົາກະທຳຄວາມຊົ່ວຮ້າຍໂດຍປັດ
ສະຈາກຄວາມຢັບຢັ້ງຊັ່ງໃຈ ປາສາດຂອງສັນຕະປາປາແລະພຣະສັງຂະຣາດຊັ້ນສູງ
ມີພາບຕ່າງໆ ຂອງຄວາມເຊື່ອມຊາມ ບາດຫລວງບາງອົງເຮັດຜິດທາງອາຍາຈົນ
ຜູ້ນຳຝ່າຍຄະຣາວາດໄດ້ພະຍາຍາມທີ່ຈະປົດອອກຈາກການເປັນພຣະ ເພາະທົນຕໍ່
ຄວາມຊົ່ວຊາມຕ່ຳຊ້າເຊັ່ນນັ້ນບໍ່ໄດ້ ເປັນເວລາຫລາຍສັດຕະວັດທີ່ຢຸໂຣບບໍ່ໄດ້ພັດທະ
ນາຄວາມກ້າວໜ້າ ບໍ່ວ່າຈະເປັນທາງດ້ານການສຶກສາສິລປະ ແລະອາຣະຍະທັມ
ເກີດການຢຸດສງັດດ້ານສິລທັມແລະຄວາມຮູ້ຂອງຄຣິສຕະອານາຈັກ

ສິ່ງເຫລົ່ານີ້ເປັນຜົນຂອງການລະຖິ້ມພຣະທັມຂອງພຣະເຈົ້າ



ມາບັງເກີດຂອງເມສາຊີອານເລີຍ ເທວະດາອົງນີ້ໄດ້ບິນຢູ່ເໜືອນະຄອນທີ່ພຣະເຈົ້າ
ຊົງເລືອກໄວ້ ແລະຢູ່ເໜືອວິຫານຊຶ່ງພຣະເຈົ້າຊົງສຳແດງພຣະອົງຕລອດມາ ແຕ່ເຖິງ
ແມ່ນວ່າສະຖານທີ່ນີ້ຍັງຄົງເໝືອນເດີມ ພວກປະໂຣຫິດຜູ້ເຢີ່ຍິ່ງຈອງຫອງແລະວາງທ່າ
ພູມມີຖານກໍຍັງຖວາຍເຄື່ອງບູຊາທີ່ມີມົນທິນໃນວິຫານ ພວກຟາລິຊາຍກຳລັງທັກທາຍ
ຝູງຊົນດ້ວຍສຽງອັນດັງຫລືອະທິຖານດ້ວຍອາການໂອ້ອວດຕາມແຈຖນົນສາຍຕ່າງໆ
ບັນດາກະສັດນັກປາດແລະບັນດາອາຈານທັງຫລາຍ ທຸກຄົນບໍ່ມີໃຜສົນໃຈໃນຄວາມ
ຈິງອັນໜ້າອັສຈັນ ຄືການສະເດັດມາປາກົດຂອງພຣະຜູ້ໄຖ່ເລີຍແມ່ນແຕ່ນ້ອຍດຽວ

ຂະນະທີ່ຜູ້ຊື້ຂ່າວຈາກສວັນກຳລັງຈະນຳຂ່າວທີ່ໜ້າລະອາຍກັບໄປຍັງສວັນ ກໍ
ປລາດໃຈທີ່ພົບຄົນລ້ຽງແກະກຸ່ມນຶ່ງກຳລັງເຝົ້າເບິ່ງແກະຂອງພວກເຂົາຢູ່ ຂະນະທີ່ຄົນ
ລ້ຽງແກະເຫລົ່ານັ້ນຈ້ອງມອງໄປຍັງທ້ອງຟ້າອັນເຕັມດ້ວຍດວງດາວ ກໍຫວນຄິດເຖິງຄຳ
ພະຍາກອນການມາບັງເກີດຂອງພຣະເມຊີອານ ແລະປາຖນາຈະໃຫ້ພຣະຜູ້ໄຖ່ມະ
ນຸສໂລກສະເດັດມາ ນີ້ຄືກຸ່ມຄົນທີ່ຕຽມພ້ອມທີ່ຈະຮັບຂ່າວດີຈາກສວັນ ທັນໃດນັ້ນ
ຣັສມີຂອງເທວະດາກໍສ່ອງສວ່າງຄວບຄຸມໄປທົ່ວພື້ນດິນ ເທວະດາຈຳນວນຫລາຍຈົນ
ນັບບໍ່ຖ້ວນກໍປາກົດວ່າຄວາມຊົມຊື່ນຍິນດີມີຫລາຍກວ່າເທວະດາພຽງອົງດຽວຈະນຳ
ມາຈາກສວັນໄດ້ ບັນດາຊາວສວັນຈຳນວນຫລວງຫລາຍເຫລົ່ານັ້ນໄດ້ເປັ່ງສຽງເພງ
ສັນລະເສີນ ທີ່ຈັກວັນນຶ່ງປະຊາຊາດທີ່ໄດ້ຮັບຄວາມລອດຈະຮ້ອງວ່າ "ພຣະຣັສມີຈົ່ງມີ
ແດ່ພຣະເຈົ້າໃນທີ່ສູງສຸດ ແລະແຜ່ນດິນໂລກຈົ່ງມີສັນຕິສຸກ ແກ່ມະນຸດທັງປວງທີ່ພຣະ
ອົງຊົງຊອບພຣະທັຍນັ້ນ" (ລູກາ 2:14)

ເຣື່ອງຣາວທີ່ໜ້າອັສຈັນຂອງບ້ານເບັດເລເຮັມ ຊ່າງເປັນບົດຮຽນທີ່ດີແທ້ສຳ
ລັບເຮົາແທ້ໜໍ ເປັນສິ່ງຕິຕຽນຄວາມບໍ່ເຊື່ອໃຈທີ່ເຢີ່ຍິ່ງຈອງຫອງແລະມີຄວາມເຊື່ອໝັ້ນ
ໃນຕົວເອງຂອງເຮົາ ເຣື່ອງນີ້ໄດ້ເຕືອນເຮົາໃຫ້ເຝົ້າລະວັງຢູ່ສເມີ

(ໂຢຮັນ8:12) ດວງດາວທີ່ມີຣັສມີສຸກສວ່າງຮຸ່ງເຮືອງແຫ່ງສວັນກໍຈະປະທານໃຫ້ແກ່ຄົນເຫລົ່ານັ້ນເພື່ອຈະນໍາເຂົາໄປສູ່ຄວາມຈິງທັງຫລາຍ

ເມື່ອພຣະຄຣິດສະເດັດກັບມາເທື່ອທໍາອິດ ພວກປຸໂຣຫິດແລະທັມມາຈານແຫ່ງນະຄອນອັນບໍຣິສຸດ (ກຸງເຢຣູຊາເລັມ) ໜ້າຈະສັງເກດເຫັນ "ໝາຍສໍາຄັນການສະເດັດມາຂອງພຣະອົງ" ແລະປະກາດເຖິງການສະເດັດມາຂອງພຣະຜູ້ຊົງສັນຍາໄວ້ ຜູ້ປະກາດພຣະທັມມີກາໄດ້ກ່າວໄວ້ເຖິງສະຖານທີ່ມາບັງເກີດຂອງພຣະອົງ ຜູ້ປະກາດພຣະທັມດານີເອນ ໄດ້ກ່າວເຖິງກໍານົດເວລາທີ່ພຣະອົງຈະສະເດັດມາ (ມີກາ 5:2, ດານີເອນ 9:25) ບັນດາຜູ້ນໍາຂອງຊາວຢິວຈະປະຕິເສດບໍ່ໄດ້ວ່າພວກເຂົາບໍ່ຮູ້ເຣື່ອງນີ້ ຄວາມບໍ່ຮູ້ເປັນຜົນຂອງບາບແຫ່ງການລະເລີຍບໍ່ສົນໃຈ

ບັນດາຜູ້ອາວຸໂສຂອງອິສຣະເອນ ໜ້າຈະໃຫ້ຄວາມສົນໃຈສຶກສາເຖິງສະຖານທີ່ເວລາແລະສະພາບແວດລ້ອມກ່ຽວກັບເຫດການທີ່ສໍາຄັນທີ່ສຸດໃນປະຫວັດສາດຂອງໂລກ ຄືການສະເດັດມາຂອງພຣະບຸດຂອງພຣະເຈົ້າ ປະຊາຊົນຄວນຈະໄດ້ເຝົ້າລະວັງຢູ່ເພື່ອຕ້ອນຮັບພຣະຜູ້ຊົງໄຖ່ໂລກ ແຕ່ທີ່ບ້ານເບັດເລເຮັມມີຄົນເດີນທາງໄກຄູ່ນຶ່ງຄົນທີ່ເໜັດເໜື່ອຍອ່ອນເພັຽໃນການເດີນທາງຈາກເມືອງນາຊາເຣັດ ເດີນໄປຕາມຖນົນແຄບໆ ມຸ້ງໄປທາງທິດຕາເວັນອອກຂອງເມືອງ ເພື່ອທີ່ຈະຫາທີ່ພັກຜ່ອນຫລັບນອນໃນເວລາກາງຄືນ ຖ້າວ່າບໍ່ມີໃຜເປີດປະຕູເຮືອນຕ້ອນຮັບເຂົາ ໃນທີ່ສຸດທັງສອງໄດ້ເຂົ້າພັກອາສັຍຢູ່ທີ່ຄອກງົວ ນະ ສະຖານທີ່ແຫ່ງນັ້ນ ພຣະຜູ້ຊ່ອຍໃຫ້ລອດໄດ້ປະສູດ

ບັນດາເທວະດາໄດ້ນໍາຂ່າວດີນີ້ໄປບອກແກ່ຜູ້ທີ່ຕຽມທີ່ຈະຮັບຟັງຂ່າວນີ້ ແລະນໍາໄປບອກແກ່ຜູ້ທີ່ຍິນດີຈະນໍາຂ່າວດີນີ້ບອກຕໍ່ໆ ໄປໃຫ້ກັບຄົນທັງຫລາຍດ້ວຍຄວາມຍິນດີ ພຣະຄຣິດຊົງຖ່ອມພຣະອົງລົງຖືກໍາເນີດໃນທັມມະຊາດຂອງມະນຸດ ຊົງຍອມຮັບຄວາມທຸກເພື່ອມອບຈິດວິນຍານຂອງພຣະອົງໄຖ່ບາບ ເຖິງປານນັ້ນເທວະດາກໍຍັງປາຖນາທີ່ຈະໃຫ້ການທ່ອມຕົນຂອງພຣະບຸດພຣະເຈົ້າຜູ້ສູງສຸດທີ່ມາປາກົດຕໍ່ໜ້າມະນຸດທັງຫລາຍໄດ້ຮັບກຽດແລະພຣະສີຣິສົມກັບພຣະລັກສະນະອຸປະນິສັຍຂອງພຣະອົງຫາກເປັນດັ່ງນີ້ແລ້ວເປັນໄປໄດ້ບໍ່ວ່າຈະມີບັນດາຜູ້ນໍາທີ່ຍິ່ງໃຫຍ່ແລະມີຊື່ສຽງໃນໂລກມາຊຸມນຸມກັນທີ່ເມືອງຫລວງຂອງອິສຣາເອນ ເພື່ອຕ້ອນຮັບພຣະອົງຫລືບໍ່ ເຫລົ່າເທວະດາໜ້າຈະໄດ້ມີໂອກາດແນະນໍາພຣະອົງໃຫ້ຜູ້ທີ່ເຝົ້າລໍຄອຍບໍ່

ເທວະດາອົງນຶ່ງໄດ້ມາຢ້ຽມຢາມໂລກ ເພື່ອເບິ່ງວ່າບໍ່ມີໃຜຕຽມພ້ອມທີ່ຈະຕ້ອນຮັບພຣະເຢຊູຫລືບໍ່ ແຕ່ເທວະດາອົງນັ້ນກັບບໍ່ໄດ້ຍິນສຽງສັນລະເສີນການສະເດັດ



ບົດທີ່ 4

# ວອນແດນຜູ້ພິທັກຄວາມເຊື່ອ

ໃນຊ່ວງເວລາທີ່ລະບອບສັນຕະປາປາເຮືອງອໍານາດຢູ່ນັ້ນ ມີກຸ່ມຊົນຜູ້ເປັນພະຍານເພື່ອພຣະເຈົ້າຜູ້ໄດ້ເປັນພິທັກຄວາມເຊື່ອເຣື່ອງພຣະຄຣິດ ຜູ້ເປັນຄົນກາງລະຫວ່າງພຣະເຈົ້າກັບມະນຸດໄວ້ ພວກເຂົາຢຶດເອົາພຣະຄັມພີເປັນກົດແຫ່ງການດໍາເນີນຊີວິດພຽງສິ່ງດຽວເທົ່ານັ້ນ ແລະໄດ້ຮັກສາວັນສະບາໂຕທີ່ແທ້ຈິງທີ່ເປັນວັນບໍຣິສຸດສັກສິດ ພວກເຂົາຖືກຕຣາໜ້າວ່າເປັນຜູ້ຢຶດໝັ້ນໃນສາສນານອກຮີດ ຂໍ້ຂຽນຕ່າງໆ ຂອງເຂົາຖືກຢຶດຫລືຖືກເຜີຍແຜ່ຢ່າງຜິດໆ ແລະຖືກແກ້ໄຂຕັດທອນ ເຖິງປານນັ້ນກໍຕາມພວກເຂົາກໍຍັງຄົງຢືນຢັດຢູ່ດ້ວຍຄວາມເຊື່ອຢ່າງໝັ້ນຄົງ

ບໍ່ມີການບັນທຶກເຣື່ອງຣາວຂອງຄົນເຫລົ່ານີ້ນອກໃນບັນທຶກຂອງມະນຸດນອກຈາກການກ່າວຫາຂອງພວກກົດຂີ່ຂົ່ມເຫງພວກເຂົາເທົ່ານັ້ນ ທຸກສິ່ງທຸກຢ່າງທີ່ຖືກກ່າວຫາວ່າ "ນອກຮີດ" ບໍ່ວ່າຈະເປັນຕົວບຸກຄົນຫລືຂໍ້ຂຽນຖືກພວກໂຣມຄົ້ນຫາແລະທໍາລາຍໝົດກ້ຽງ ນອກຈາກນີ້ໂຣມຍັງທໍາລາຍບັນທຶກກ່ຽວກັບຄວາມໂຫດຮ້າຍຂອງພວກຕົນທີ່ມີຕໍ່ພວກທີ່ຂັດຄ້ານເຫລົ່ານັ້ນດ້ວຍ ກ່ອນການຄິດປະດິດເຄື່ອງພິມມີໜັງສືນ້ອຍຫລາຍ ດັ່ງນັ້ນຈຶ່ງເປັນການຍາກທີ່ຈະປ້ອງກັນການກະທໍາຂອງພວກເຂົາໄດ້ ຫລັງຈາກທີ່ສັນຕະປາປາໄດ້ອໍານາດບໍ່ດົນນານກໍຍື່ນມືອອກທໍາລາຍທຸກຄົນທີ່ບໍ່ຍອມຮັບອໍານາດການປົກຄອງຂອງຕົນ

ໃນປະເທດອັງກິດ ສາສນາຄຣິສະຕຽນໃນຍຸກທຳອິດໄດ້ວາງຮາກຖານໄວ້ໝັ້ນຄົງຈຶ່ງບໍ່ຖືກຊັກນຳໄປໃນທາງຊົ່ວໂດຍສາສນາເທັດໂຣມັນ ສິ່ງທີ່ຄຣິສຕະຈັກແຫ່ງອັງກິດໄດ້ຮັບຈາກໂຣມກໍຄືການກົດຂີ່ຂົ່ມເຫງຈາກຈັກກະພັດທີ່ຖືຮີດທິນອກສາສນາ ຄຣິສະຕຽນເປັນຈຳນວນຫລວງຫລາຍໄດ້ຫລົບໜີຈາກການກົດຂີ່ຂົ່ມເຫງໃນປະເທດອັງກິດໄປຍັງສະກັອດແລນ ພຣະທັມແຫ່ງຄວາມຈິງຖືກນຳໄປເຜີຍແຜ່ທີ່ໄອແລນ ປະຊາຊົນໃນປະເທດເຫລົ່ານີ້ຍອມຮັບພຣະທັມດ້ວຍຄວາມຊົມຊື່ນຍິນດີ

ເມື່ອຊາວແຊກຊັນໄດ້ບຸກລຸກປະເທດອັງກິດ ພວກນອກສາສນາຄອບຄອງໄປທົ່ວ ແລະຄຣິສະຕຽນຖືກບັງຄັບຈຶ່ງຕ້ອງໜີໄປຢູ່ທີ່ພູເຂົາໃນສະກັອດແລນ ນຶ່ງສັດຕະວັດຕໍ່ມາແສງສວ່າງແຫ່ງພຣະທັມໄດ້ສາຍແສງໄປທົ່ວດິນແດນອັນຫ່າງໄກ ໂຄລັມບາແລະຜູ້ຮ່ວມງານຂອງລາວໄດ້ເດີນທາງຈາກເກາະໄອແລນໄປຕັ້ງຖິ່ນຖານຢູ່ທີ່ເກາະໄອໂອນາ ຈາກເກາະແຫ່ງນີ້ກາຍເປັນສູນກາງຂອງງານການປະກາດສາສນາ ມີຜູ້ນຶ່ງໃນຈຳນວນຂອງຜູ້ປະກາດຂ່າວປະເສີດເຫລົ່ານີ້ໄດ້ຮັກສາວັນສະບາໂຕຕາມພຣະຄັມພີ ຈຶ່ງເຮັດໃຫ້ປະຊາຊົນມາກມາຍໄດ້ຮຽນຮູ້ພຣະທັມແຫ່ງຄວາມຈິງ ຕໍ່ມາໄດ້ມີການສ້າງໂຮງຮຽນຂຶ້ນທີ່ເກາະໄອໂອນາແລະໂຮງຮຽນເຫລົ່ານີ້ກໍໄດ້ຜະລິດມິດຊັນນາຣີອອກໄປປະກາດຂ່າວປະເສີດຕາມປະເທດຕ່າງໆ ເຊັ່ນ ສະກັອດແລນ ອັງກິດ ເຢຣະມັນ ນິສວິຕເຊີແລນແລະຈົນເຖິງອີຕາຣີ

## ໂຣມປະເຊີນໜ້າກັບສາສນາຂອງພຣະຄັມພີ

ແຕ່ໂຣມໄດ້ຕັດສິນໃຈໃຫ້ປະເທດອັງກິດຢູ່ພາຍໃຕ້ອຳນາດຂອງຕົນ ໃນສັດຕະວັດທີ່ສິບຫົກ ມີການສົ່ງມິດຊັ່ນນາຣີໄປປະກາດສາສນາແກ່ຄົນນອກສາສນາຊາວແຊກຊັນໃຫ້ກັບໃຈເປັນພັກພວກ ເມື່ອງານຂອງເຂົາຈະເຣີນກ້າວໜ້າ ຜູ້ນຳຂອງສຳນັກສັນຕະປາປາກໍໄດ້ຜະເຊີນກັບຄຣິສະຕຽນຍຸກທຳອິດທີ່ດຳຣົງຊີວິດແບບລຽບງ່າຍອ່ອນນ້ອມຖ່ອມຕົນແລະມີອຸປະນິສັຍດີ ຍຶດຫລັກຄວາມເຊື່ອແລະການປະຕິບັດຕາມພຣະຄັມພີ ແຕ່ພວກໂຣມຜູ້ສະແດງຕົນວ່າເປັນພວກທີ່ມີຄວາມເຊື່ອທີ່ງົມງາຍວາງທ່າແລະຍິ່ງຍະໂສຂອງສັນຕະປາປາ ຊາວອັງກິດຕອບວ່າສັນຕະປາປາບໍ່ສົມຄວນທີ່



ໄຫລ ແລະຊົງນຳພວກເຂົາໃຫ້ຕຽມຕົວໃຫ້ພ້ອມສຳລັບການສະເດັດມາຂອງອົງພຣະຜູ້ເປັນເຈົ້າ

ຄຳເຕືອນນີ້ໄດ້ກ່າວໄວ້ໃນພຣະນິມິດບົດທີ່ 14 ໃນທີ່ນີ້ຈະເຫັນໄດ້ວ່າເທວະດາສາມອົງໄດ້ປະກາດອອກໄປສາມຄັ້ງ ແລະພາຍຫລັງຈາກເທວະດາສາມອົງໄດ້ປະກາດຂ່າວໄປແລ້ວ ບຸດມະນຸດຈະສະເດັດກັບມາເພື່ອເກັບກ່ຽວ “ແຜ່ນດິນໂລກ” ຜູ້ປະກາດພຣະທັມໄດ້ເຫັນເທວະດາອົງນຶ່ງບິນໄປ “ເພື່ອປະກາດຂ່າວປະເສີດອັນເປັນອັມຕະແກ່ຊົນຊາວໂລກທັງປວງ ທຸກເຜົ່າພັນ ທຸກຊາດ ທຸກພາສາ ທ່ານປະກາດດ້ວຍສຽງອັນດັງວ່າ “ຈົ່ງຢຳເກງພຣະເຈົ້າແລະຖວາຍກຽດແດ່ພຣະອົງ ເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ ແລະຈົ່ງນະມັດສະການພຣະອົງ ຜູ້ໄດ້ຊົງສ້າງຟ້າສວັນແລະແຜ່ນດິນໂລກ ທະເລ ແລະບໍ່ນ້ຳພຸທັງຫລາຍ (ພຣະນິມິດ 14:6,7)

ຂ່າວນີ້ເປັນສ່ວນນຶ່ງຂອງ “ຂ່າວປະເສີດອັນເປັນອັມຕະ” ພຣະເຈົ້າຊົງມອບໝາຍງານການເທສນາສັ່ງສອນໃຫ້ກັບມະນຸດ ເທວະດາທີ່ບໍຣິສຸດເປັນຜູ້ນຳໃນການປະກາດຂ່າວປະເສີດແຕ່ຜູ້ມີໜ້າທີ່ປະກາດຂ່າວປະເສີດທີ່ແທ້ຈິງຄືຜູ້ຮັບໃຊ້ຂອງພຣະຄຣິດໃນໂລກນີ້ ບັນດາຄົນທີ່ຊື່ສັດ ຍອມເຊື່ອຟັງຄຳຕັກເຕືອນຂອງພຣະວິນຍານບໍຣິສຸດຂອງພຣະເຈົ້າ ແລະຄຳສັ່ງສອນໃນພຣະທັມຂອງພຣະອົງຄືຜູ້ປະກາດຄຳເຕືອນນີ້ແກ່ມະນຸດໂລກ ຄົນເຫລົ່ານີ້ໄດ້ສະແຫວງຫາພຣະປັນຍາຂອງພຣະເຈົ້າແລະຖືວ່າ “ປໂຍດທີ່ໄດ້ຈາກປັນຍາມີຫລາຍກວ່າທີ່ໄດ້ຈາກເງິນຄຳມັນມີຄຸນຄ່າຫລາຍກວ່າເພັດ” “ພຣະຜູ້ເປັນເຈົ້າຊົງເປັນເພື່ອນກັບຜູ້ທີ່ຢຳເກງພຣະອົງ ແລະຊົງສັ່ງສອນເຂົາເຖິງຄຳໝັ້ນສັນຍາຂອງພຣະອົງ” (ສຸພາສິດ 3:14 ບົດ ເພງສັນລະເສີນ 25:14)

## ຂ່າວທີ່ປະກາດໂດຍຜູ້ທີ່ຖ່ອມຕົນ

ຫາກບັນດານັກສາສນາສາດເປັນຍາມທີ່ສັດຊື່ ຄົ້ນຄົ້ວພຣະຄັມພີດ້ວຍຄວາມຂຍັນຂັນແຂງແລະດ້ວຍການອະທິຖານ ກໍຄົງຈະຮູ້ກຳນົດເວລາຄຳພະຍາກອນຂອງເຫດການຕ່າງໆ ທີ່ໃກ້ຈະເກີດຂຶ້ນກໍຈະໄດ້ຮັບການເປີດເຜີຍອອກມາ ແຕ່ຂ່າວສານນັ້ນກັບປະທານໃຫ້ແກ່ບັນດາຄົນຕ່ຳຕ້ອຍ ສ່ວນບັນດາຄົນທີ່ບໍ່ສະແຫວງຫາຄວາມສວ່າງທັງທີ່ຢູ່ໃກ້ມືຈຶ່ງຖືກປ່ອຍໃຫ້ຢູ່ໃນຄວາມມືດ ແຕ່ພຣະຜູ້ຊ່ອຍໃຫ້ລອດຊົງປະກາດວ່າ “ຜູ້ທີ່ຕາມເຮົາມາຈະບໍ່ຫຽວໄປໃນທີ່ມືດ ແຕ່ຈະມີຄວາມສວ່າງແຫ່ງຊີວິດ”

ມະນຸດຈຳເປັນຈະຕ້ອງໄດ້ຮັບການປຸກໃຈໃຫ້ຕຽມຕົວໃຫ້ພ້ອມ ສັບລັບການສຳຄັນທີ່ຈະເກີດຂຶ້ນ ເມື່ອໄລຍະເວລາທີ່ພຣະກະຣຸນາຄຸນຂອງພຣະເຈົ້າຈະສິ້ນສຸດລົງ "ເພາະວ່າວັນຂອງພຣະເຈົ້າເປັນວັນໃຫຍ່ໂຕແລະໜ້າຢ້ານ ຜູ້ໃດໜໍຈະທົນຢູ່ໄດ້" ໃຜຈະທົນຢູ່ໄດ້ເມື່ອພຣະອົງປາກົດຜູ້ທີ່ "ພຣະເນດບໍຣິສຸດເກີນທີ່ຈະທອດພຣະເນດການຊົ່ວແລະຈະຊົງມອງເບິ່ງການຜິດກໍບໍ່ໄດ້" "ເຮົາຈະລົງໂທດໂລກເພາະຄວາມຊົ່ວຮ້າຍແລະຄົນອະທັມເພາະຄວາມຜິດບາບຂອງເຂົາ ເຮົາຈະກະທຳໃຫ້ຄວາມເຍີ່ຍິ່ງຂອງຄົນຈອງຫອງສິ້ນສຸດ ແລະປາບຄວາຍຍະໂສຂອງຄົນໂຫດຮ້າຍ" ເງິນຫລືທອງຂອງເຂົາກໍບໍ່ສາມາດກູ້ເຂົາໄດ້" "ຊັບສິ່ງຂອງຂອງເຂົາຈະຖືກປຸ້ນແລະເຮືອນຂອງເຂົາຈະຮ້າງເພ" (ໂຢເອນ 2:1 ຮາບາກຸ 1:13 ເອຊາຢາ 13:11 ເສຟັນຢາ 1:13,18)

## ຄຳຕັກເຕືອນໃຫ້ກັບໃຈໃໝ່

ເຫດການທີ່ເກີດວັນອັນໜ້າຢ້ານເຫລົ່ານັ້ນ ພຣະທັມຂອງພຣະເຈົ້າໄດ້ຮຽກປະຊາກອນຂອງພຣະອົງໃຫ້ຢູ່ຕໍ່ພຣະພັກຂອງພຣະອົງດ້ວຍການກັບໃຈໃໝ່ "ວັນແຫ່ງພຣະເຈົ້າກຳລັງມາແລ້ວ ໃກ້ເຂົ້າມາແລ້ວ" "ຈົ່ງຕຽມຕົວອົດອາຫານແລະຮັກຊຸມນຸມຂາບໄຫວ້ພຣະເຈົ້າ ຈົ່ງເຕົ້າໂຮມບັນດາປະຊາຊົນ ໃຫ້ຈັດເອົາເຂົາເຂົ້າຮວ່ມການປະຊຸມອັນບໍຣິສຸດ ຈົ່ງນຳພວກເຖົ້າແກ່ມາໃຫ້ເຕົ້າໂຮມ ພວກເດັກນ້ອຍແລະເດັກອ່ອນດ້ວຍ ແມ່ນແຕ່ຜູ້ແຕ່ງງານໃໝ່ໆ ກໍຕ້ອງໃຫ້ອອກຈາກຫ້ອງນອນມາ ພວກປຸໂຣຫິດຜູ້ຮັບໃຊ້ພຣະຜູ້ເປັນເຈົ້າຢູ່ໃນວິຫານລະຫວ່າງປະຕູແລະແທນບູຊາ ຕ້ອງຮ້ອງໄຫ້ແລະອ້ອນວອນວ່າ: "ຂ້າແດ່ພຣະຜູ້ເປັນເຈົ້າ ຈົ່ງສົງສານໄພ່ພົນຂອງພຣະອົງແດ່ຖ້ອນ ຂໍຢ່າໃຫ້ຊົນຊາດອື່ນດູໝິ່ນຢຽບຫຍາມຂ້ານ້ອຍແລະເວົ້າເຍາະເຍີ້ຍພວກຂ້ານ້ອຍວ່າ ພຣະເຈົ້າຂອງເຈົ້າຢູ່ໃສ?" ພຣະຜູ້ເປັນເຈົ້າຊົງກ່າວວ່າ "ເຖິງປານນັ້ນກໍດີ ຈົ່ງກັບໃຈໃໝ່ດ້ວຍຄວາມເຕັມໃຈ ໃຫ້ກັບມາຫາເຮົາ ແລະອົດອາຫານ ຮ້ອງໄຫ້ແລະຮ້ອງຄາງ ຢ່າສະແດງຄວາມເສັຽໃຈດ້ວຍການຈີກເສື້ອຜ້າຂອງຕົນ ແຕ່ຄວນໃຫ້ມີໃຈອຸກອັ່ງແທ້" (ໂຢເອນ 2:1, 15-17, 12-13) ເພື່ອຕຽມປະຊາກອນໃຫ້ພ້ອມທີ່ຈະຢືນຢັດຢູ່ໃນວັນຂອງອົງພຣະຜູ້ເປັນເຈົ້ານັ້ນ ການປະຕິຮູບສາສນາຄັ້ງຍິ່ງໃຫຍ່ຈະຕ້ອງເຮັດໃຫ້ສຳເຣັດ ໂດຍພຣະກະຣຸນາຄຸນຂອງພຣະເຈົ້າພຣະອົງຈະສົ່ງຂ່າວເພື່ອປຸກເຂົາໃຫ້ຕື່ນຈາກການຫລັບ



ຈະເປັນໃຫຍ່ໃນຄຣິສຕະຈັກ ຊາວອັງກິດຈະຍອມຮັບຜູ້ທີ່ຕິດຕາມພຣະຄັມພີເທົ່ານັ້ນເພາະພວກເຂົາບໍ່ມີເຈົ້ານາຍຄົນໃດອີກແລ້ວນອກຈາກພຣະຄຣິດ

ບັດນີ້ ທາດແທ້ຂອງສັນຕະປາປາໄດ້ປາກົດໃຫ້ເຫັນ ເມື່ອຜູ້ນຳຄົນນຶ່ງຂອງພວກເຂົາເວົ້າວ່າ "ຖ້າທ່ານບໍ່ຍອມຮັບພີ່ນ້ອງຜູ້ນຳຄວາມສັນຕິສຸກມາສູ່ທ່ານທ່ານກໍຈະຕ້ອງຜະເຊີນກັບສັດຕຣູທີ່ນຳສົງຄາມມາ" ການສົງຄາມແລະຄວາມຫລອກລວງໄດ້ຖືກນຳມາຕໍ່ສູ້ກັບຜູ້ຢືນຢັດໃນຄວາມເຊື່ອຕາມພຣະຄັມພີ ຈົນກະທັ່ງຄຣິສຕະຈັກໃນປະເທດອັງກິດຖືກທຳລາຍຫລືຖືກບັງຄັບໃຫ້ຍອມຢູ່ພາຍໃຕ້ສັນຕະປາປາ

ໃນດິນແດນທີ່ຢູ່ນອກຂອບເຂດການຄວບຄຸມອຳນາດຂອງໂຣມ ມີກຸ່ມຄຣິສະຕຽນທີ່ປອດຈາກພຶດຕິການທີ່ແຫລວແຫລກຂອງລະບອບສັນຕະປາປາເປັນເວລາຫລາຍສັດຕະວັດ ຄຣິສະຕຽນເຫລົ່ານັ້ນຍັງຖືເອົາພຣະຄັມພີເປັນຫລັກແຫ່ງຄວາມເຊື່ອ ເຊື່ອໝັ້ນໃນຄວາມເປັນອະມະຕະພາບຂອງພຣະບັນຍັດຂອງພຣະເຈົ້າແລະຮັກສາວັນສະບາໂຕພຣະບັນຍັດຂໍ້ທີ່ສີ່ ຄຣິສຕະຈັກທີ່ປະຕິບັດຕາມທີ່ກ່າວມານີ້ ອາສັຍຢູ່ທີ່ອາຟຣິກາກາງແລະໃນໝູ່ຊາວອາເມນຽນແຫ່ງເອເຊັຽ

ໃນບັນດາຜູ້ທີ່ຕໍ່ຕ້ານອຳນາດຂອງສັນຕະປາປາ ພວກວອນເດັນເປັນຜູ້ນຳໃນແຖວໜ້າ ບໍ່ວ່າດິນແດນໃດທີ່ສັນຕະປາປາຕັ້ງມີຖານຢູ່ຄຣິສຕະຈັກແຫ່ງພິດມອງກໍຄົງຄວາມເປັນອິສະຣະຂອງຕົນສເມີ ແຕ່ເມື່ອເວລາມາເຖິງໂຣມກໍພຍາຍາມທີ່ຈະຂູ່ເຂັນໃຫ້ອ່ອນນ້ອມເສັຽ ຢ່າງໃດກໍຕາມຄຣິສະຕຽນຫລາຍຄົນປະຕິເສດສັນຕະປາປາແລະບາດຫລວງຍັງຕັ້ງໝັ້ນຮັກສາໃນຄວາມບໍລິສຸດ ແລະຄວາມເຊື່ອທີ່ລຽບງ່າຍຂອງພວກຕົນ ແຕ່ແລ້ວການແບ່ງແຍກກໍເກີດຂຶ້ນມີຫລາຍຄົນທີ່ສັດທາໃນຄວາມເຊື່ອຂອງບັນພະບຸຣຸດຍອມລະຖິ້ມ ບາງຄົນກໍຖິ້ມຖິ່ນຖານພູເອັນປີໄປປັກຫລັກປະກາດຄວາມຈິງໃນດິນແດນຕ່າງຊາດອື່ນໆ ບາງຄົນກໍໄປຕັ້ງກົກຮາກຢູ່ທີ່ພູຮ໊ອກກີ່ແລະຮັກສາອິສາຣະພາບເພື່ອນະມັດສະການພຣະເຈົ້າ

ຄວາມເຊື່ອໃນສາສນາຈະພົບໄດ້ໃນຖ້ອຍຄຳແຫ່ງພຣະທັມຂອງພຣະເຈົ້າ ຊາວໄຮ່ຊາວນາຜູ້ຕ່ຳຕ້ອຍເຫລົ່ານັ້ນ ຕັດໂລກຂາດອອກຈາກໂລກພາຍນອກດຳຣົງຊີວິດຢູ່ໃນຄວາມຈິງບໍ່ໄດ້ຄົ້ນພົບຄວາມຈິງທີ່ຕໍ່ຕ້ານກັບຫລັກຄວາມເຊື່ອຂອງຄຣິສຕະຈັກທີ່ລະຖິ້ມຄວາມເຊື່ອ ແຕ່ຄວາມເຊື່ອໃນສາສນາຂອງພວກເຂົາເປັນມໍຣະດົກຕົກ

ທອດມາຈາກບັນພະບຸຣຸດ ພວກເຂົາມີຄວາມພໍໃຈໃນຄວາມເຊື່ອແບບອັຄສາວົກ ເປັນ "ຄຣິສຕະຈັກໃນປ່າທຶບ" ແລະບໍ່ເໝືອນຄຣິສຕະຈັກທີ່ປົກຄອງແບບຄະນະສົງ ຕັ້ງຢູ່ໃນເມືອງຫລວງ ແຕ່ເປັນຄຣິສຕະຈັກທີ່ແທ້ຈິງຂອງພຣະຄຣິດເປັນຜູ້ເຝົ້າສົມບັດແຫ່ງຄວາມຈິງ ທີ່ພຣະເຈົ້າໄດ້ມອບໝາຍໃຫ້ປະຊາກອນຂອງພຣະອົງເພື່ອປະກາດຄວາມຈິງນີ້ໃຫ້ແກ່ໂລກ

ສິ່ງທີ່ເປັນສາຍເຫດສຳຄັນທີ່ນຳໄປສູ່ ການແບ່ງແຍກຄຣິສຕະຈັກທີ່ແທ້ຈິງອອກຈາກຄຣິສຕະຈັກໂຣມໃນເວລາຕໍ່ມາກໍຄືຄວາມກຽດຊັງວັນສະບາໂຕ ດັ່ງຄຳພະຍາກອນໄດ້ກ່າວໄວ້ວ່າ ສັນຕະປາປາຈະໃຊ້ອຳນາດຢຽບຢ່ຳພຣະບັນຍັດຂອງພຣະເຈົ້າລົງກັບພື້ນດິນ ຄຣິສຕະຈັກທີ່ຢູ່ພາຍໃຕ້ໂຣມຈະຖືກບັງຄັບໃຫ້ນະມັດສະການໃນວັນອາທິດ ຖ້າມກາງຄວາມຊົ່ວຮ້າຍທີ່ລະບາດໄປທົ່ວໂລກນີ້ ປະຊາກອນຂອງພຣະເຈົ້າໄດ້ຮັບຄວາມລຳບາກໃຈໃນການຮັກສາວັນສະບາໂຕເປັນຢ່າງຍິ່ງ ຂນະທີ່ຮັກສາວັນສະບາໂຕ ພວກເຂົາກໍຖືກຝືນໃຈໃຫ້ຢຸດງານໃນວັນອາທິດແຕ່ເທົ່ານີ້ຍັງບໍ່ເປັນທີ່ພໍໃຈຂອງພວກຜູ້ນຳລະບອບສັນຕະປາປາ ພວກເຂົາຕ້ອງການໃຫ້ມີການລ່ວງລະເມີດວັນສະບາໂຕແລະຂັບໄລ່ຜູ້ທີ່ຍັງຝ່າຝືນຮັກສາວັນນີ້ອອກຈາກສັງຄົມດ້ວຍ

ຫລາຍຮ້ອຍປີກ່ອນມີກາບປະຕິຮູບສາສນາ ພວກວອນແດນມີພຣະຄັມພີທີ່ເປັນພາສາທ້ອງຖິ່ນໄວ້ຄອບຄອງ ສິ່ງນີ້ເປັນສາຍເຫດໃຫຍ່ຊຶ່ງນຳໃຫ້ພວກເຂົາໄດ້ຮັບການກົດຂີ່ຂົ່ມເຫງ ພວກເຂົາໄດ້ປະກາດວ່າໂຣມເປັນບາບີໂລນຜູ້ທໍຣະຍົດທີ່ກ່າວໄວ້ໃນພຣະຄັມພີພຣະນິມິດ ເຖິງແມ່ນວ່າຊີວິດຂອງພວກເຂົາຈະຕົກຢູ່ຖ້າມກາງຄວາມຊົ່ວຮ້າຍ ພວກເຂົາກໍຢືນຢັນຕໍ່ສູ້ກັບພຶດຕິການເປື້ອນເປິະຢ່າງບໍ່ຫວັ່ນໄຫວຕລອດຍຸກຂອງການທໍຣະຍົດຕໍ່ສາສນານີ້ ພວກວອນແດນໄດ້ປະຕິເສດອຳນາດຂອງສັນຕະປາປາແຫ່ງກຸງໂຣມບໍ່ຍອມຮັບການນະມັດສະການຮູບເຄົາຣົບ ແຕ່ຢືນຢັນໃນການຮັກສາວັນສະບາໂຕຢ່າງສມ່ຳສເມີ

ເບື້ອງຫລັງພູອັນສູງສະງ່າ ພວກວອນແດນໄດ້ອາສັຍເປັນທີ່ຫລົບຊ້ອນຕົວຜູ້ຫລົ້ໄພເຫລົ່ານັ້ນໄດ້ຊີ້ໃຫ້ບຸດຫລານມອງໄປຍັງພູສູງທີ່ຢູ່ເບື້ອງໜ້ານັ້ນແລະບອກໃຫ້ຮູ້ເຖິງຄວາມເປັນພຣະມະຫາກະສັດອັນຍິ່ງໃຫຍ່ຂອງພຣະເຈົ້າ ພຣະທັມຂອງພຣະອົງຕັ້ງໝັ້ນຄົງຢູ່ຕລອດໄປເປັນນິດ ເໝືອນດັ່ງຈອມພູນີ້ພຣະອົງສ້າງພູທັງຫລາຍທີ່ບໍ່ມີມື



ໄປກວ່າວັນນັ້ນເປັນແນ່ ຫລັງຈາກທ່ຽງຄືນໄປແລ້ວ ຄວາມມືດກໍຈາງຫາຍໄປ ເມື່ອດວງຈັນປາກົດຂຶ້ນກໍມີລັກສະນະຄ້າຍກັບສີເລືອດ"

ວັນທີ່ 19 ພຶສພາ ຄ.ສ. 1780 ໃນປະຫວັດສາດໄດ້ກ່າວໄວ້ວ່າເປັນ "ວັນມືດ" ຕັ້ງແຕ່ສມັຍຂອງໂມເຊບໍ່ມີເຣື່ອງຣາວບັນທຶກໄວ້ກ່ຽວກັບຄວາມມືດທີ່ແຜ່ໄປໄກແລະເປັນເວລານານເທົ່າກັບຄັ້ງນີ້ ບັນດາພະຍານທີ່ເຫັນກັບຕາໃນເຫດການຄັ້ງນັ້ນໄດ້ກ່າວໄວ້ເຊັ່ນດຽວກັບກັບຜູ້ປະກາດພຣະທັມໄດ້ບັນທຶກໄວ້ເມື່ອ 2,500 ປີທີ່ແລ້ວວ່າ "ດວງອາທິດຈະກາຍເປັນຄວາມມືດ ດວງຈັນກາຍເປັນສີເລືອດ ກ່ອນວັນຍິ່ງໃຫຍ່ທີ່ຮ້າຍແຮງຂອງພຣະເຈົ້າຈະມາເຖິງ" (ໂຢເອນ 3:31)

ພຣະຄຣິດຕຣັດວ່າ "ເມື່ອເຫດການເຫລົ່ານີ້ຕັ້ງຕົ້ນບັງເກີດຂຶ້ນນັ້ນ ທ່ານທັງຫລາຍຈົ່ງຍືດຕົວແລະເງີຍຫົວຂຶ້ນ ດ້ວຍວ່າການຊົງໄຖ່ທ່ານໃຫ້ພົ້ນກໍໃກ້ຈະເຖິງແລ້ວ." "ເມື່ອມັນປົ່ງໃບອອກແລ້ວທ່ານທັງຫລາຍກໍເຫັນແລະຮູ້ຢູ່ເອງວ່າລະດູຮ້ອນໃກ້ຈະເຖິງແລ້ວ." "ຢ່າງນັ້ນແຫລະ, ພວກທ່ານກໍເໝືອນກັນເມື່ອເຫັນເຫດການເຫລົ່ານັ້ນກຳລັງເກີດຂຶ້ນຈົ່ງຮູ້ວ່າຣາຊອານາຈັກຂອງພຣະເຈົ້າໃກ້ຈະເຖິງແລ້ວ." (ລູກາ 21:28,30,31)

ແຕ່ຄຣິສຕະຈັກ ຄວາມຮັກໃນພຣະຄຣິດແລະຄວາມເຊື່ອໃນການສະເດັດກັບມາຂອງພຣະອົງເຢັນຊາລົງໄປ ປະຊາກອນຂອງພຣະເຈົ້າກັບມືດບອດບໍ່ສົນໃຈຄຳຕຣັດຂອງພຣະຜູ້ຊ່ອຍໃຫ້ລອດ ກ່ຽວກັບເຄື່ອງໝາຍການສະເດັດມາປາກົດຂອງພຣະອົງ ພວກເຂົາລະເລີຍຫລັກຄຳສອນການສະເດັດມາຄັ້ງທີ່ສອງຂອງພຣະຄຣິດ ຈົນຄົນຫລວງຫລາຍບໍ່ເຂົ້າໃຈແລະພາກັນຫລົງລືມ ໂດຍສະເພາະຢ່າງຍິ່ງຄຣິສຕະຈັກໃນສະຫະຣັດອະເມຣິກາ ເນື່ອງຈາກປະຊາຊົນ ໃຝ່ໃຈສະແຫວງຫາແຕ່ເງິນທອງ ຫລົງໄຫລໃນອຳນາດແລະຊື່ສຽງ ເປັນສິ່ງຊັກນຳໃຫ້ພວກເຂົາຄິດວ່າວັນອັນຍິ່ງໃຫຍ່ທີ່ສັບພະສິ່ງທີ່ມີຢູ່ໃນປັດຈຸບັນຈະສູນສິ້ນໄປນັ້ນຍັງຢູ່ໄກໃນອານາຄົດ

ພຣະຜູ້ຊ່ອຍໃຫ້ລອດໄດ້ຕຣັດລ່ວງໜ້າໄວ້ແລ້ວເຖິງສະພາບການລະຖິ້ມສາສນາຈະເກີດຂຶ້ນກ່ອນທີ່ພຣະອົງຈະສະເດັດມາຄັ້ງທີ່ສອງ ພຣະຄຣິດໄດ້ຊົງຕັກເຕືອນຄົນທັງຫລາຍທີ່ມີຊີວິດໃນສມັຍນີ້ວ່າ "ແຕ່ຈົ່ງລະວັງຕົວໃຫ້ດີ ຢ້ານວ່າໃຈຂອງພວກທ່ານຈະໜັກໄປໃນການດື່ມເຫລົ້າ, ແລະມົວເມົາ, ແລະວິຕົກກັງວົນເຖິງຊີວິດນີ້ແລ້ວເວລານັ້ນຈະມາເຖິງພວກທ່ານໃນທັນທີ" "ເຫດສັນນັ້ນຈົ່ງເຝົ້າລະວັງແລະໄຫວ້ວອນຢູ່ທຸກເວລາ ເພື່ອທ່ານຈະມີກຳລັງພົ້ນຈາກເຫດການທີ່ຈະບັງເກີດມານັ້ນ ແລະຈະບໍ່ຢືນຢູ່ຕໍ່ໜ້າບຸດມະນຸດໄດ້" (ລູກາ 21 :34,36)

"ຄວາມຫວາດກົວແລະຄວາມວິຕົກກັງວົນເຂົ້າຄອບງຳຈິດໃຈຂອງຄົນທັງຫລາຍພວກຜູ້ຍິງຕ່າງຢືນຢູ່ທີ່ປະຕູມອງໄປຍັງພູມິພາກທີ່ມືດມິດພາຍນອກ ພວກຜູ້ຊາຍກໍພາກັນກັບຈາກວຽກງານຢູ່ໃນທົ່ງນາ ຊ່າງໄມ້ກໍລະຖິ້ມເຄື່ອງມື ຊ່າງຕີເຫລັກວາງມືຈາກເຕົາຫລອມ ພວກພໍ່ຄ້າຊາວຂາຍຂົນຂອງອອກຈາກໂຕະເກັບເງິນທອງຂອງເຂົາ ພວກນາຍຄຣູກໍປ່ອຍນັກຮຽນອອກຈາກໂຮງຮຽນ ນັກຮຽນກໍກັບບ້ານດ້ວຍຄວາມຫວາດກົວຕົວສັ່ນ ນັກເດີນທາງກໍຢຸດພັກຕາມບ້ານທີ່ຢູ່ຕາມທົ່ງນາທີ່ໃກ້ທີ່ສຸດ "ມີອັນໃດເກີດຂຶ້ນ" ທຸກຄົນຖາມດ້ວຍສຽງອັນດັງແລະຖາມຢູ່ໃນໃຈ ເບິ່ງເໝືອນກັບວ່າພາຍຸຮ້າຍກຳລັງຈະພັດຜ່ານຂ້າມແຜ່ນດິນ ແລະເບິ່ງເໝືອນກັບເປັນສັບພະສິ່ງຖືກທຳລາຍ

"ມີການໄຕ້ທຽນໄຂ ໄຟໃນເຕົາໄຟສ່ອງແສງເຮືອງຮອງເໝືອນຕອນກາງ ຄືນທີ່ໄຮ້ແສງເດືອນໃນລະດູໃບໄມ້ຫລົ່ນ ເປັດໄກ່ກໍເຂົ້າຄອກເຂົ້າຮັງ ຝູງງົວຄວາຍກໍກັບເຂົ້າຄອກແລະສົ່ງສຽງຮ້ອງ ພວກກົບຂຽດກໍຮ້ອງສຽງສນັ່ນຫວັ່ນໄຫວ ຝູງນົກໜູ ອຸດອນທັງຫລາຍກໍສົ່ງສຽງຮ້ອງຮາວກັບວ່າເປັນເວລາຄ່ຳແລະຝູງຄາງຄາວກໍບິນເຈີດເຈີ້ຍໄປມາ ແຕ່ມະນຸດຮູ້ດີວ່າຍັງບໍ່ເຖິງເວລາກາງຄືນ

ຜູ້ມາຮ່ວມນະມັດສະການຈຳນວນຫລວງຫລາຍ ຂໍ້ພຣະຄັມພີທີ່ໃຊ້ມາປະກອບເທສນາເປັນຂໍ້ຄວາມທີ່ກ່າວວ່າຄວາມມືດນັ້ນເກີດຂຶ້ນຈິງຕາມຄຳພະຍາກອນໃນພຣະຄັມພີ...ຫລັງຈາກເວລາ 11:00 ໂມງກົ່ວໆ ເປັນເວລາທີ່ມືດທີ່ສຸດ

"ໃນຊົນນະບົດສ່ວນຫລາຍມືດຊນິດທັງທີ່ຍັງເປັນກາງເວັນແທ້ ຈົນປະຊາຊົນບໍ່ສາມາດບອກເວລາໄດ້ຈາກໂມງທີ່ຢູ່ໃນແຂນ ແລະບໍ່ສາມາດກິນເຂົ້າແລງ ຫລືເຮັດວຽກບ້ານການເຮືອນໄດ້ຖ້າບໍ່ໄຕ້ໄຟ

## ດວງຈັນເປັນສີເລືອດ

"ຄວາມມືດໃນຕອນກາງຄືນມືດທຶບ ເປັນຕາຢ້ານຫລາຍກວ່າຕອນກາງເວັນ ແມ່ນວ່າພຣະຈັນເກືອບເຕັມດວງ ແຕ່ກໍເບິ່ງອັນໃດບໍ່ເຫັນນອກຈາກອາສັຍແສງບາງຢ່າງທີ່ມະນຸດເຮັດຂຶ້ນ ຊຶ່ງເລັດລອດອອກມາຈາກບ້ານໃກ້ເຮືອນຄຽງ ແລະຈາກສະຖານທີ່ອື່ນທີ່ຢູ່ຫ່າງໄກອອກໄປກໍເບິ່ງເໝືອນກັບຄວາມມືດທີ່ເກີດຂຶ້ນໃນເອຢິບທີ່ບໍ່ສ່ອງແສງສວ່າງໃດຈະລອດຜ່ານໄດ້" "ຫາກວັດຖຸທີ່ມີແສງສວ່າງທຸກຢ່າງໃນຈັກກະວານຖືກປົກຄຸມໃນທີ່ຮົ່ມຫລືແສງສວ່າງນັ້ນຖືກມອດ ຄວາມມືດໃນຂນະນັ້ນກໍຄົງບໍ່ມືດ



ຜູ້ໃດຈະສາມາດເຄື່ອນຍ້າຍໄດ້ ນອກຈາກພຣະຫັດທີ່ເຕັມໄປດ້ວຍຣິດທານຸພາບເທົ່ານັ້ນ ພຣະອົງຊົງສະຖາປານາພຣະບັນຍັດຂອງພຣະອົງໃນທຳນອງດຽວກັນນີ້ ມືຂອງມະນຸດບໍ່ສາມາດຈະຍົກພູທັງໜ່ວຍລົງໄປໃນທະເທເລໄດ້ສັນໃດ ພຣະບັນຍັດຂອງພຣະເຈົ້າແມ່ນແຕ່ຂໍ້ດຽວກໍບໍ່ມີມະນຸດຄົນໃດທີ່ປ່ຽນແປງໄດ້ສັນນັ້ນ ບັນດາຜູ້ສແວງອິສຣະພາບທາງສາສນາທຸກຄົນມີ ຄວາມພາກພູມໃຈກັບຜົນງານທີ່ເຂົາເຮັດມາພວກເຂົາບໍ່ເຄີຍມີຄວາມຮູ້ສຶກວ້າເຫວ່ ໃນຖ້ຳນກາງຮ່ອມພູແຫ່ງນັ້ນພວກມີຄວາມຊົມຊື່ນຍິນດີໃນອິສຣະພາບໃນການນະມັດສະການພຣະເຈົ້າ ຮ້ອງເພງສັນລະເສີນພຣະເຈົ້າດ້ວຍສຽງຄຶກຄື້ນສະທ້ອນໄປທົ່ວຮ່ອມພູຜານ້ອຍໃຫຍ່ ແລະກອງທັບຂອງໂຣມກໍບໍ່ສາມາດຢຸດສຽງຮ້ອງເພງແຫ່ງພຣະຄຸນນັ້ນໄດ້

## ຄວາມຈິງອັນລ້ຳຄ່າ

ພວກວອນແດນຖືວ່າສັດຈະທັມນັ້ນມີຄ່າເໜືອກວ່າບ້ານເຮືອນ ທີ່ແດນເພື່ອນຝູງຍາດຕິພີ່ນ້ອງຫລືແມ່ນແຕ່ຊີວິດຂອງຕົນເອງ ເດັກນ້ອຍໆຕັ້ງແຕ່ເກີດມາກໍສອນ ໃຫ້ປະຕິບັດຕາມພຣະບັນຍັດອັນສັກສິດຂອງພຣະເຈົ້າແຕ່ເນື້ອງຈາກພຣະຄັມພີມີນ້ອຍທີ່ສຸດ ດັ່ງນັ້ນພວກເຂົາຈຶ່ງຕ້ອງໃຊ້ວິທີທ່ອງຈຳມີຫລາຍຄົນທີ່ສາມາດທ່ອງຈຳທັງພຣະຄັມພີເກົ່າແລະພຣະຄັມພີໃໝ່ໄດ້ຫລາຍບົດຫລາຍຕອນ

ພວກເຂົາໄດ້ຮັບການສຶກສາມາຕັ້ງແຕ່ນ້ອຍໃຫ້ຮູ້ຈັກອົດທົນຕໍ່ຄວາມລຳບາກແລະຮູ້ຈັກຄິດຮູ້ຈັກທຳດ້ວຍຕົນເອງ ຮູ້ຈັກຮັບຜິດຊອບຮູ້ວ່າສິ່ງໃດຄວນເວົ້າແລະບໍ່ຄວນເວົ້າ ເພາະຄຳເວົ້າພຽງຄຳດຽວທີ່ເວົ້າອອກໄປໂດຍຂາດຄວາມລະມັດລະວັງ ຖ້າໄດ້ຍິນເຖິງຫູຂອງສັດຕຣູຂອງພວກເຂົາກໍອາດເປັນອັນຕຣາຍຕໍ່ຊີວິດຂອງຍາດຕິພີ່ນ້ອງນັບເປັນຮ້ອຍໄດ້ ເໝືອນດັ່ງໝາໄນລ້າເນື້ອຂອງມັນ ສັດຕຣູຂອງຄວາມຈິງກໍໄດ້ລຸກໄລ່ໂຈມຕີບັນດາຜູ້ທີ່ກ້າປະກາດອິສຣະພາບຄວາມເຊື່ອໃນສາສນາ

ພວກວອນແດນຜູ້ມີຄວາມມານະອົດທົນແລະທຳງານຢ່າງໜັກ ເພື່ອຈະໄດ້ມີອາຫານກິນ ພື້ນດິນທຸກຕອນທີ່ເໝາະສົມສຳລັບການປູກຝັງໄດ້ຖືກປັບໃຫ້ເປັນທີ່ປູກຝັງຈົນໝົດກ້ຽງ ເດັກນ້ອຍທັງຫລາຍກໍຖືກສອນໃຫ້ຮູ້ຈັກປະຢັດແລະດຳຣົງຊີວິດຢ່າງງ່າຍດາຍ ການທຳກິຈກັມທຸກຢ່າງຕ້ອງໃຊ້ແຮງງານ ແຕ່ທຸກຄົນມີສຸຂະພາບທີ່ດີທັງຮ່າງກາຍແລະຈິດໃຈ ນີ້ຄືທີ່ມະນຸດຕ້ອງການແລະຍາມຕົກທຸກໄດ້ຍາກຄົນໜຸ່ມສາວຖືກສອນໃຫ້ຮູ້ວ່າກຳລັງວັງຊາແລະຄວາມສາມາດທີ່ເຂົາມີຢູ່ນັ້ນເປັນ ພຣະເຈົ້າຊົງປະທານໃຫ້ເພື່ອພັດທະນາການຮັບໃຊ້ເພື່ອພຣະອົງ

ທຸກຄຣິສຕະຈັກຂອງຊາວວອນແດນມີຫລັກສະນະຄ້າຍຄືກັບຄຣິສຕະຈັກໃນສມັຍອັກຄະສາວົກ ພວກເຂົາຕໍ່ຕ້ານອິດທິພົນຂອງສັນຕະປາປາ ແລະບາດຫລວງໂດຍຢຶດເອົາພຣະຄັມພີເປັນອຳນາດທີ່ບໍ່ມີຜິດພາດ ສິດຍາພິບານຂອງພວກເຂົາລ້ຽງດູຝູງແກະຂອງພຣະເຈົ້າບໍ່ເໝືອນພວກບາດຫລວງແຫ່ງໂຣມໄດ້ພາກັນເຮັດມາ ສິດຍາພິບານຂອງວອນແດນບຳລຸງລ້ຽງຝູງແກະຂອງພຣະເຈົ້ານຳເຂົາໄປເຂົ້າໄປສູ່ທົ່ງຫຍ້າຂຽວສົດງົດງາມແລະດື່ມນ້ຳພຸແຫ່ງຊີວິດຄືພຣະທັມອັນສັກສິດຂອງພຣະອົງ ປະຊາຊົນມາຊຸມນຸມກັນບໍ່ແມ່ນຢູ່ໂບດອັນສະງ່າງາມ ແຕ່ເປັນທີ່ຮ່ອມພູແອນປີ່ຫລືໃນຍາມທີ່ບໍ່ປອດໄພກໍປະຊຸມກັນຢູ່ຕາມຫວ່າງຫີນເພື່ອຟັງພຣະທັມແຫ່ງຄວາມຈິງຈາກຜູ້ຮັບໃຊ້ຂອງພຣະຄຣິດຜູ້ຮັບໃຊ້ທຸກຄົນ ບໍ່ພຽງແຕ່ເທສນາສັ່ງສອນຂອງພຣະທັມຂອງພຣະເຈົ້າເທົ່ານັ້ນ ແຕ່ຢ້ຽມຢາມຄົນທີ່ເຈັບປ່ວຍແລະຜູ້ທຳງານ ເພື່ອສົ່ງເສີມຄວາມຮັກຄວາມສາມະຄີລະຫວ່າງພີ່ນ້ອງທຸກຄົນປະຕິບັດຕົນຕາມແບບຢ່າງອາຈານໂປໂລດ້ວຍການທຳງານເພື່ອລ້ຽງຊີວິດຂອງຕົນເອງ

ຄົນໜຸ່ມບ່າວສາວໄດ້ຮັບຄຳແນະນຳສັ່ງສອນຈາກສິດຍາພິບານຂອງເຂົາ ມີການໃຊ້ພຣະຄັມພີເປັນຫລັກໃນການສຶກສາຮ່ຳຮຽນທ່ອງຈຳພຣະກິຕິຄຸນມັດທາຍແລະໂຢຮັນລວມທັງຈົດໝາຍຂອງອັຄສາວົກທຸກເຫລັ້ມ ມີການຄັດລອກພຣະຄັມພີກັນຢ່າງບໍ່ຮູ້ຈັກອິດເໝື່ອຍທີລະຂໍ້ສອງຂໍ້ພາຍໃນຖ້ຳທີ່ມືດ ໂດຍໃຊ້ໂຄມໄຟສ່ອງບັນດາທູດຈາກສວັນຕ່າງກໍປົກປັກຮັກສາຜູ້ຮັບໃຊ້ທີ່ຊື່ສັດເຫລົ່ານີ້ໄວ້

ຊາຕານໄດ້ຊັກນຳບາດຫລວງ ແລະຂນະບາດຫລວງຂັ້ນຜູ້ໃຫຍ່ຂອງສັນຕະປາປາໃຫ້ຝັງພຣະທັມແຫ່ງຄວາມຈິງໄວ້ພາຍໃຕ້ຄວາມສົກກະປົກຂອງພຶດຕິການທີ່



ເວລາປະມານ 16 ນາທີເທົ່ານັ້ນມີຄົນຕາຍຫ້າໝື່ນຄົນ ທະເລທີ່ເຄີຍສງົບງຽບແລະຫາດຊາຍທີ່ເຄີຍແຫ້ງແລ້ງມາດົນນານ ທັນໃດນັ້ນກໍມີຄື້ນໃຫຍ່ຊັດຂຶ້ນສູງກວ່າລະດັບທັມມະດາເຖິງ 50 ຟຸດ

"ແຜ່ນດິນໄຫວເກີດຂຶ້ນໃນວັນສັກສິດທາງສາສນາ ປະຊາຊົນຊຸມນຸມກັນເຕັມໂບດມີບໍ່ເທົ່າໃດຄົນທີ່ມີຊີວິດລອດ" "ຄວາມຫວາດກົວຂອງປະຊາຊົນມີຫລາຍຈົນສຸດຈະພັນລະນາ ບໍ່ມີໃຜຮ້ອງໄຫ້ເພາະບໍ່ມີນ້ຳຕາຫລົງເຫລືອ ຄົນເຫລົ່ານັ້ນແລ່ນສົນລະວົນວຸ່ນວາຍ ທຸກຄົນລ້ວນແຕ່ເພີ້ຄັ່ງດ້ວຍຄວາມຫວາດກົວແລະປລາດໃຈ ພວກເຂົາເອົາມືຕີໜ້າເອິກ ຕ່າງກໍສົ່ງສຽງຮ້ອງວ່າວາຣະສຸດທ້າຍຂອງໂລກມາເຖິງແລ້ວເຫລົ່າມານດາມີລູກຂອງຕົນແລະຖືໄມ້ກາງແຂນແລ່ນໄປຮອບໆ ຫລາຍຄົນແລ່ນໄປຫລົບພັຍທີ່ໂບດ ແຕ່ສິ່ງສັກສິດທີ່ພວກເຂົາໃຊ້ຄຸ້ມຄອງນັ້ນກັບໄຮ້ປໂຍດ ຄົນທີ່ໜ້າສົງສານເຫລົ່ານັ້ນໂອບກອດແທ່ນບູຊາແຕ່ກໍໄຮ້ຜົນ ຮູບເຄົາຣົບ ບາດຫລວງແລະຄົນຖືກຝັງໄວ້ກັບຊາກສລັກຫັກພັງເຫລົ່ານັ້ນ"

## ດວງອາທິດແລະດວງຈັນມືດ

ຕໍ່ມາອີກ 25 ປີ ໝາຍສຳຄັນໄດ້ປາກົດຕາມຄຳພະຍາກອນອີກ ເມື່ອ ດວງອາທິດແລະດວງຈັນມືດ ເຫດການນີ້ໄດ້ເກີດຂຶ້ນຈິງຕາມທີ່ພຣະຜູ້ຊ່ວຍໃຫ້ລອດຊົງສົນທະນາກັບອັຄສາວົກຂອງພຣະອົງທີ່ເທິງພູໝາກກອກເທດ "ໃນວັນເຫລົ່ານັ້ນເມື່ອຄາວທຸກລຳບາກຜ່ານພົ້ນໄປແລ້ວ ດວງອາທິດຈະມືດໄປ ແລະດວງຈັນຈະບໍ່ສ່ອງແສງ" (ມາຣະໂກ 13:24) 1,260 ວັນຫລື 1,260 ປີສິ້ນສຸດລົງໃນປີ ຄ.ສ. 1780 ການກົດຂີ່ຂົ່ມເຫງເກືອບຈະສິ້ນສຸດລົງໂດຍສິ້ນເຊີງເມື່ອ 25 ປີກ່ອນໜ້ານີ້ ຫລັງຈາກການກົດຂີ່ຂົ່ມເຫງສິ້ນສຸດລົງດວງອາທິດຈະມືດໄປ ເຫດການນີ້ເກີດຂຶ້ນຈິງຕາມຄຳພະຍາກອນເມື່ອວັນທີ່ 19 ພຶສພາ ຄ.ສ. 1780

ຜູ້ເຫັນເຫດການຄົນນຶ່ງອາສັຍຢູ່ໃນເມືອງເມສຊາຊູແຊັດໄດ້ບັນຣະຍາຍເຫດການໄວ້ວ່າ "ເມກດຳມືດທຶບໄປທົ່ວທ້ອງຟ້າ ຄົງເຫລືອແຕ່ແສງຈາງໆ ຕົງແນວແຄບໆທີ່ຂອງຟ້າເວລານັ້ນມືດເທົ່າກັບຄວາມມືດປົກກະຕິຕາມເວລາເກົ້າໂມງເວລາກາງຄືນໃນລະດູຮ້ອນ

ຄຳພະຍາກອນມີພຽງແຕ່ຈະບອກລ່ວງໜ້າເຖິງລັກສະນະແລະຈຸດປະສົງ ໃນການສະເດັດມາຄັ້ງທີ່ສອງຂອງພຣະຄຣິດເທົ່ານັ້ນ ແຕ່ຍັງກ່າວເຖິງເຫດການໝາຍສຳຄັນໃຫ້ມະນຸດຮູ້ດ້ວຍວ່າ ວັນທີ່ພຣະອົງສະເດັດມານັ້ນໃກ້ມາເຖິງແລ້ວ "ຈະມີໝາຍສຳຄັນໃນດວງອາທິດ ໃນດວງຈັນແລະໃນດວງດາວທັງປວງ" (ລູກາ 21:25) "ດວງອາທິດຈະມືດໄປ ແລະດວງຈັນຈະບໍ່ສ່ອງແສງ ດວງດາວທັງປວງຈະຕົກລົງຈາກຟ້າ ແລະບັນດາສິ່ງທີ່ມີອຳນາດໃນທ້ອງຟ້າຈະທ້ານຫວັ່ນໄຫວ ເມື່ອນັ້ນເຂົາຈະເຫັນບຸດມະນຸດສະເດັດມາໃນເມກ ດ້ວຍຣິດທານຸພາບອັນໃຫຍ່ແລະສະງ່າຣາສີອັນຮຸ່ງເຮືອງ" (ມາຣະໂກ 13:24-26) ໂຢຮັນຜູ້ຂຽນພຣະຄັມພີພຣະນິມິດໄດ້ບັນຣະຍາຍເຖິງເຫດການທີ່ຈະເກີດຂຶ້ນກ່ອນການສະເດັດກັບມາຄັ້ງທີ່ສອງຂອງພຣະຄຣິດດັ່ງນີ້ "ເກີດແຜ່ນດິນໄຫວອັນໃຫຍ່ ດວງອາທິດກໍມືດດຳເໝືອນດັ່ງຜ້າຂົນສັດຫຍາບ ດວງຈັນວັນເພັງກໍກັບເກີດເປັນເລືອດ" (ພຣະນິມິດ 6:12)

## ແຜ່ນດິນໄຫວຂະເຢົ່າໂລກໃຫ້ສະເທືອນ

ເຫດການໄດ້ເກີດຂຶ້ນຈິງດັ່ງຄຳພະຍາກອນເມື່ອປີ 1755 ເມື່ອເກີດແຜ່ນ ດິນໄຫວຮ້າຍແຮງທີ່ສຸດເທົ່າທີ່ເຄີຍບັນທຶກໄວ້ ເປັນທີ່ຮູ້ກັນໂດຍທົ່ວໄປແລ້ວວ່າເປັນແຜ່ນດິນໄຫວທີ່ເມືອງລິສບອນ ແຮງຂອງແຜ່ນດິນໄຫວໃນຄັ້ງນີ້ສະເທືອນສະທ້ານໄປເຖິງຢຸໂຣບອາຟຣິກາແລະອະເມຣິກາ ນອກຈາກນັ້ນຍັງສະເທືອນໄປເຖິງກຣີນແລນ ໝູ່ເກາະອິນເດັຽຕະເວັນຕົກ ເກາະມາເດຣາ ນໍເວແລະສະວີເດນ ໝູ່ເກາະອັງກິດແລະໄອແລນ ແລະຍັງແຜ່ຜາຍໄປໄກບໍ່ນ້ອຍກວ່າສີ່ລ້ານຕາຕລາງໄມ ໃນອາຟຣິກາແຮງແຜ່ນດິນໄຫວສະເທືອນຫລາຍເທົ່າໆ ກັບໃນຢຸໂຣບສ່ວນໃຫຍ່ຂອງເມືອງແອນເຈັຽຖືກທຳລາຍ ຄື້ນທະເລໃຫຍ່ມະຫຶມາຊັດມາເຖິງຝັ່ງທະເລຂອງສະເປນແລະເມືອງ ຕ່າງໆໃນອາຟຣິກາຫລາຍເມືອງ

ພູລາງໜ່ວຍ "ໃນບັນດາພູທີ່ໃຫຍ່ທີ່ສຸດໃນປະເທດໂປຣຕຸເກດຖືກແຮງແຜ່ນດິນໄຫວສະເທືອນເຖິງຖານຮາກ ຍອດຂອງພູລາງໜ່ວຍແຍກອອກແລະຫີນອ່ອນກ້ອນໃຫຍ່ໆ ກໍຕົກລົງໄປຮ່ອມພູໃກ້ຄຽງແປວໄຟພຸ່ງອອກຈາກຈອມພູເຫລົ່ານີ້"

ທີ່ເມືອງລິສບອນ "ມີຄົນໄດ້ຍິນສຽງເໝືອນຟ້າຮ້ອງໃຕ້ພື້ນດິນແລະທັນໃດນັ້ນສ່ວນໃຫຍ່ຂອງເມືອງກໍຍັງທະລາຍລົງມາ ເພາະແຮງຂອງແຜ່ນດິນໄຫວນີ້ເອງ ໃນ



ຜິດທຳນອງຄອງທັມແລະຄວາມເຊື່ອຖືໃນຄວາມເຊື່ອຜິດ ແຕ່ພຣະທັມໄດ້ຮັບການຮັກສາໄວ້ບໍ່ໃຫ້ມີຕຳໜິຕລອດຍຸກມືດຄືເຮືອຢູ່ໃນຖ້າມກາງຂື້ນຟອງນ້ຳອັນໃຫຍ່ ພຣະທັມແຫ່ງຄວາມຈິງກໍຜ່ານພົ້ນມໍຣະສຸມໄດ້ຢ່າງປອດພັຍ ດັ່ງເໝືອນແຮ່ທີ່ມີສາຍແຮ່ທອງຄຳແລະເງິນຖືກຊ້ອນໄວ້ໃຕ້ດິນຂຸມຊັບແຫ່ງຄວາມຈິງທີ່ຖືກເກັບຊ້ອນໄວ້ຈະເປີດແກ່ທີ່ຈະຄົ້ນຫາດ້ວຍຄວາມຖ່ອມຕົນແລະດ້ວຍການອະທິຖານເທົ່ານັ້ນ ພຣະເຈົ້າຊົງຕັ້ງພຣະຄັມພີໄວ້ເພື່ອເປັນບົດຮຽນແກ່ມະນຸດຊາດ ເພື່ອເປີດເຜີຍເຖິງພຣະອົງຄວາມຈິງທຸກຢ່າງທີ່ໄດ້ພົບເຫັນເປັນການເປີດເຜີຍໃຫ້ເຫັນລັກສະນະອັນບໍຣິສຸດຂອງພຣະອົງຜູ້ປະພັນໜັງສືເຫລັ້ມນີ້

ບ່າວສາວບາງຄົນທີ່ສຶກສາຮ່ຳຮຽນທີ່ໂຮງຮຽນເທິງພູເຂົາກໍຖືກສົ່ງໄປຮຽນທີ່ຝຣັ່ງເສດຫລືໃນອິຕະລີ່ ເພື່ອພວກເຂົາຈະໄດ້ມີຄວາມຮູ້ກວ້າງຂວາງ ແລະມີປະສົບປະການຫລາຍກວ່າທີ່ຮຽນໃນບ້ານເກີດເມືອງນອນຂອງຕົນເອງ ທີ່ພູເຂົາແອນປີ່ ດັ່ງນັ້ນບ່າວສາວເຫລົ່ານີ້ຈຶ່ງຜະເຊີນການທົດລອງ ພວກເຂົາໄດ້ຕອບໂຕ້ທູດຂອງຊາຕານທີ່ພຍາຍາມຊັກຈູງໃຫ້ຍອມຮັບຄຳສັ່ງສອນທີ່ຜິດໆ ແລະການຫລອກລວງທີ່ອັນຕຣາຍ ຜົນຂອງການສຶກສາທີ່ພວກເຂົາໄດ້ຮັບຕັ້ງແຕ່ນ້ອຍໄດ້ຕຽມທຸກຄົນໃຫ້ພ້ອມກັບສິ່ງເຫລົ່ານີ້

ໃນໂຮງຮຽນທີ່ເຂົາໄປສຶກສານັ້ນພວກເຂົາຈະບໍ່ໄວ້ໃນສິ່ງອື່ນໃດເລີຍໃນເສື້ອຄຸມກໍມີບ່ອນເຊື່ອງຊັບສົມບັດມີຄ່າຫລາຍທີ່ຂອງຕົນຄືພຣະທັມຂອງພຣະເຈົ້າ ບໍ່ວ່າທີ່ໃດທີ່ມີຄົນເປີດໃຈຮັບພຣະທັມແຫ່ງຄວາມຈິງເຂົາກໍຈະນຳມອບບາງສ່ວນຂອງພຣະທັມໃຫ້ແກ່ຄົນເຫລົ່ານັ້ນ ມີຫລາຍຄົນກັບໃຈໃນໂຮງຮຽນທີ່ພວກເຂົາຮຽນຢູ່ແລະມີບາງຄັ້ງຫລັກການຂອງພຣະທັມກໍຖືກຊອກແຊກໄປທົ່ວໂຮງຮຽນ ເຖິງປານນັ້ນກໍຕາມພວກຜູ້ນຳຂອງສັນຕະປາປາກໍບໍ່ສາມາດທີ່ຈະສືບຊອກຫາຕົ້ນເຫດຂອງພວກທີ່ເຂົາກ່າວຫາວ່າເປັນຄົນນອກຮີດໄດ້

## ອິບຣິມເຍົາວະຊົນເປັນຜູ້ປະກາດ

ຄຣິສະຕຽນຊາວວອນແດນ ມີຄວາມຮູ້ສຶກທີ່ຮຶກທີ່ເອົາຈິງເອົາຈັງຕໍ່ຄວາມຮັບຜິດຊອບທີ່ຈະສາດແສງສວ່າງຂອງພວກຕົນອອກໄປ ພວກເຂົາໄດ້ພຍາຍາມທຳ

ລາຍສິ່ງຜູກມັດທີ່ໂຣມໄດ້ບັງຄັບໄວ້ໂດຍໃຊ້ອຳນາດແຫ່ງພຣະທັມຂອງພຣະເຈົ້າ ສິດຍາພິບານຊາວວອນແດນຈະຕ້ອງທຳງານໃນບ່ອນອື່ນໆ ເປັນເວລາສາມປີກ່ອນທີ່ຈະກັບໄປຮັບຜິດຊອບຄຣິສຕະຈັກທີ່ບ້ານເກີດເມືອງນອນຂອງຕົນ ຊຶ່ງເປັນຄວາມຮູ້ເບື້ອງຕົ້ນຂອງຊີວິດຂອງສິດຍາພິບານ ເພື່ອທົດສອບຈິດວິນຍານຂອງຄົນເຫລົ່ານັ້ນເຍົາວະຊົນບໍ່ໄດ້ມອງເຫັນຄວາມຮັ່ງມີແລະຄວາມຮຸ່ງເຮືອງໃນໂລກນີ້ ແຕ່ມອງເຫັນການທຳງານໜັກແລະອັນຕຣາຍແລະຫາກເປັນໄປໄດ້ກໍພ້ອມເສັຽສະລະຊີວິດ ຜູ້ປະກາດເຫລົ່ານີ້ອອກໄປປະກາດເປັນຄູ່ໆ ເໝືອນກັບທີ່ພຣະເຢຊູໄດ້ສົ່ງສາວົກ ຂອງພຣະອົງອອກໄປປະກາດສັ່ງສອນ

ການທີ່ກະທຳໃຫ້ພັນທະກິດທີ່ຮູ້ຈັກຈົນມີຄວາມແນ່ວ່າມີຊັຍຊະນະ ດັ່ງນັ້ນສິດຍາພິບານທຸກຄົນຕ້ອງມີຄວາມຮູ້ຈັກການຄ້າຂາຍຫລືອາຊີບອື່ນໆ ແລະຜູ້ເຜີຍແຜ່ສາສນາທຸກຄົນຕ້ອງການງານດ້ວຍການປົກປິດຕົນເອງ ທຳຕົນໃຫ້ເໝືອນຄົນທົ່ວໄປປົກກະຕິມັກຈະເປັນອາຊີບການຄ້າຂາຍ ຫລື ການເລາະຂາຍຂອງຕາມບ້ານ "ພວກເຂົາລຳລຽງພວກຜ້າໄໝເພັດນິນຈິນດາ ແລະສິ່ງອື່ນໆ ອອກເລາະຂາຍພວກໄດ້ຮັບການຕ້ອນຮັບໃນຖານະພໍ່ຄ້າ ແຕ່ຖ້າຫາກໄປໃນຖານະຜູ້ເຜີຍແຜ່ສາສນາແລ້ວກໍຈະໄດ້ຮັບຄວາມລັງກຽດ" ພວກເຂົາເອົາພຣະຄັມພີຕິດຕົວໄປນຳຫລືບາງສ່ວນກໍມີຄົນສົນ ໃຈເມື່ອໄດ້ອ່ານພຣະທັມຂອງພຣະເຈົ້າກໍຕື່ນຕົວຂຶ້ນ ພວກເຂົາກໍຈະມອບພຣະຄັມພີໃຫ້ຄົນທີ່ມີຄວາມສົນໃຈເຫລົ່ານັ້ນ

ບັນດາຜູ້ປະກາດເຫລົ່ານັ້ນຍ່າງດ້ວຍຕີນເປົ່າ ນຸ່ງເສື້ອຜ້າເນື້ອຫຍາບແລະເດີນທາງຈົນເສື້ອຜ້າເປີະເປື້ອນ ພວກເຂົາໄປຕາມເມືອງໃຫຍ່ຫລາຍແຫ່ງແລະເຂົ້າໄປສູ່ດິນແດນທີ່ຫ່າງໄກ ເມື່ອຜ່ານໄປທາງໃດກໍຕັ້ງຄຣິສຕະຈັກຂຶ້ນທີ່ນັ້ນຜູ້ບາງຄົນກໍສະລະຊີວິດເພື່ອສາສນາເປັນພະຍານເພື່ອຄວາມຈິງ ປະຊາຊົນຕ່າງຍອມຮັບພຣະທັມຂອງພຣະເຈົ້າຢ່າງລັບໆ ດ້ວຍຄວາມຍິນດີ

ຊາວວອນແດນເຊື່ອວ່າວະລະສຸດທ້າຍຂອງທຸກສິ່ງໃກ້ເຂົ້າມາແລ້ວ ຂນະທີ່ພວກເຂົາສຶກສາພຣະຄັມພີ ກໍມີຄວາມປະທັບໃຈໃນໜ້າທີ່ເພື່ອເຮັດໃຫ້ຄົນອື່ນໆໄດ້ຮູ້ຈັກຄວາມຈິງແຫ່ງຄວາມລອດ ພວກເຂົາໄດ້ພົບກັບຄວາມຫວັງການປະເລົ້າປະໂລມໃຈແລະສັນຕິສຸກເມື່ອມີຄວາມເຊື່ອໃນພຣະເຢຊູ ຂນະທີ່ແສງສວ່າງແຫ່ງຄວາມ



ທັມ ແລະຄວາມສັນລະເສີນງອກຂຶ້ນມາຕໍ່ໜ້າບັນດາປະຊາຊາດສັນນັ້ນ" (ເອຊາຢາ 61:11)

ຈາກນັ້ນອານາຈັກອັນສງົບສຸກຂອງພຣະເມສານ້ອຍກໍຈະຖືກສ້າງຂຶ້ນ"ເພາະວ່າພຣະເຈົ້າຈະຊົງເລົ້າໂລມດິນແດນທີ່ຮັກເພພັງທັງໝົດໃຫ້ກາຍເປັນສວນອະຍຸດທະຍານຂອງພຣະເຈົ້າ" (ເອຊາຢາ 51:3)

ການສະເດັດກັບມາຂອງອົງພຣະຜູ້ເປັນເຈົ້າເປັນຄວາມຫວັງຂອງປະຊາກອນທີ່ແທ້ຈິງຂອງພຣະອົງຕລອດທຸກຍຸກທຸກສມັຍ ໃນຖ້າມກາງຄວາມທຸກຍາກແລະການກົດຂີ່ຂົ່ມເຫງ "ການສ່ອງມາປາກົດອັນຮຸ່ງເຮືອງຂອງພຣະເຈົ້າອົງໃຫຍ່ຄືພຣະເຢຊູຄຣິດ ຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ" ເປັນ "ເປັນຄວາມຫວັງໃຈອັນໃຫ້ມີສຸກ" (ຕີໂຕ 2:13) ອັຄທູດໂປໂລກ່າວເຖິງການຟື້ນຄືນຊີບທີ່ຈະເກີດຂຶ້ນເມື່ອພຣະຜູ້ຊ່ອຍສະເດັດມາຄັ້ງທີ່ສອງ ເມື່ອນັ້ນຄົນທີ່ຕາຍໃນພຣະຄຣິດຈະຖືກຊຸບຂຶ້ນມາຈາກຄວາມຕາຍ ແລະຄົນທັງຫລາຍທີ່ມີຊີວິດຢູ່ຈະຖືກຮັບຂຶ້ນໄປພ້ອມກັບຄົນເຫລົ່ານັ້ນ ເພື່ອໄປພົບພຣະຜູ້ເປັນເຈົ້າທີ່ເທິງຟ້າສວັນ ທ່ານກ່າວວ່າ "ຢ່າງນັ້ນແຫລະ ພວກເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນນິດ ເຫດສັນນັ້ນຈົ່ງເລົ້າໂລມອອຍໃຈຊຶ່ງກັນແລະກັນ ດ້ວຍຂໍ້ຄວາມທັງຫລາຍນີ້ເທີນ" (1 ເທຊະໂລນິກ 4:17, 18)

ທີ່ເກາະປັດຕາໂມ ອັຄສາວົກໂຢຮັນຜູ້ເປັນທີ່ຮັກໄດ້ຍິນຄຳສັນຍາວ່າ "ແນ່ນອນເຮົາຈະມາໃນໄວໆ ນີ້" ໂຢຮັນ ຕອບຮັບພຣະສຸຣະສຽງນັ້ນ ຊຶ່ງເປັນຄຳອະທິຖານຂອງຄຣິສຕະຈັກວ່າ "ອາແມນ ພຣະເຢຊູເຈົ້າສະເດັດມາເທີນ" (ພຣະນິມິດ 22:20)

ຈາກຄຸກມືດໃຕ້ດິນ ຈາກເສົາຫລັກທີ່ຜູ້ມີຄວາມເຊື່ອຖືກຈັບມັດເຜົາທັງເປັນຈາກແດນປະຫານ ທີ່ຊຶ່ງທັມມະກິຊົນແລະຜູ້ສະລະຊີວິດເພື່ອສາສນາໄດ້ເປັນພະຍານເພື່ອຄວາມຈິງ ພວກເຂົາເຫລົ່ານີ້ໄດ້ເປັ່ງສຽງຮ້ອງດ້ວຍຄວາມເຊື່ອແລະຄວາມຫວັງຕລອດຫລາຍຮ້ອຍປີ "ດ້ວຍຄວາມໝັ້ນໃຈໃນການຟື້ນຄືນຊີບຂອງພຣະຄຣິດແລະການສະເດັດກັບມາຂອງພຣະອົງ ດ້ວຍເຫດນີ້ມີຄົນນຶ່ງໃນພີ່ນ້ອງຄຣິສະຕຽນເຫລົ່ານີ້ກ່າວວ່າ "ພວກເຂົາຢຽບຫຍາມຄວາມຕາຍແລະຮູ້ສຶກຕົວວ່າພວກເຂົາຢູ່ເໜືອສິ່ງເຫລົ່ານີ້ ພວກວອນເດັນກໍມີຄວາມເຊື່ອເຊັ່ນດຽວກັນນີ້ ໄວຄລິບ ລູເຕີ ຄານວິນ ຈອນນ໊ອກ ຣິດເລ່ແລະແບ໊ກສເຕີເຝົ້າມອງການສະເດັດກັບມາຂອງພຣະເຈົ້າດ້ວຍຄວາມເຊື່ອເປັນຄວາມຫວັງດຽວກັນກັບຄຣິສຕະຈັກສມັຍອັຄສາວົກ ທັງຄຣິສຕະຈັກໃນປ່າກັນດານ" ແລະຂອງບັນດານັກປະຕິຮູບສາສນາ

ນາທັງຫລາຍພ້ອມກັບທຸກໆ ສິ່ງທີ່ມີຢູ່ໃນນັ້ນ ຈົ່ງຊົມຊື່ນຍິນດີ ຕົ້ນໄມ້ທີ່ຢູ່ໃນປ່າ ຈົ່ງມີສຽງມ່ວນຊື່ນຕໍ່ພຣະພັກພຣະຜູ້ເປັນເຈົ້າ ເພາະວ່າພຣະອົງຊົງສະເດັດມາປົກຄອງໂລກນີ້ ພຣະອົງຈະປົກຄອງປະຊາຊາດທັງປວງໃນໂລກ ດ້ວຍຄວາມສັດຊື່ແລະຍຸດຕິທັມ (ບົດເພງສັນລະເສີນ 96:11-13)

ທ່ານເອຊາຍາກ່າວວ່າ "ໃນວັນນັ້ນເຂົາຈະເວົ້າກັນວ່າ ເບິ່ງແມ ນີ້ຄືພຣະເຈົ້າຂອງເຮົາ ເຮົາທັງຫລາຍໄດ້ລໍຄອຍພຣະອົງ ເພື່ອວ່າພຣະອົງຈະຊົງຊ່ອຍເຮົາໃຫ້ລອດນີ້ຄືພຣະເຈົ້າເຮົາລໍຄອຍພຣະອົງ ໃຫ້ເຮົາຍິນດີແລະຊົມຊື່ນໃນຄວາມລອດຂອງພຣະອົງ" (ເອຊາຍາ 25:9)

ພຣະຜູ້ຊ່ອຍໃຫ້ລອດໄດ້ຊົງເລົ້າໂລມໃຈອັຄສາວົກຂອງພຣະອົງດ້ວຍຄວາມໝັ້ນໃຈວ່າພຣະອົງຈະສະເດັດກັບມາອີກ "ໃນຜາສາດພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານທັງຫລາຍ, ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເໝືອນກັນ" "ເມື່ອບຸດມະນຸດຊົງພຣະຣັສມີສະເດັດມາພ້ອມດ້ວຍຝູງເທວະດາ ເມື່ອນັ້ນພຣະອົງຈະຊົງປະທັບເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງພຣະອົງ ບັນດາປະຊາຊາດຕ່າງໆ ຈະຖືກຊົງໂຮມກັນຕໍ່ພຣະພັກຂອງພຣະອົງ ແລະພຣະອົງຈະແຍກເຂົາອອກຈາກກັນ ເໝືອນຜູ້ລ້ຽງສັດແຍກຝູງແກະອອກຈາກຝູງແບ້" (ໂຢຮັນ 14:2,3 ມັດທາຍ 25:31,32)

ເທວະດາໄດ້ກ່າວແກ່ບັນດາອັຄສາວົກ ເຖິງຄຳສັນຍາການສະເດັດກັບມາຂອງພຣະເຢຊູວ່າ "ພຣະເຢຊູອົງນີ້ຊຶ່ງຊົງຮັບໄປຈາກພວກທ່ານຂຶ້ນເມືອສວັນແລ້ວຈະສະເດັດມາອີກເໝືອນຢ່າງທີ່ພວກທ່ານໄດ້ເຫັນພຣະອົງຂຶ້ນເມືອຍັງສວັນນັ້ນ" (ກິຈການ 1:11) ອັຄທູດໂປໂລໄດ້ກ່າວເປັນພະຍານວ່າ "ດ້ວຍວ່າຈະມີຄຳສັ່ງອັນດັງ ຈະມີສຽງຂອງອັຄເທວະດາແລະສຽງແກຂອງພຣະເຈົ້າ" (1 ເທຊະໂລນິກ 4:16) ຜູ້ປະກາດພຣະທັມແຫ່ງເກາະປັດຕະໂມກ່າວວ່າ "ເບິ່ງແມ່, ພຣະອົງຈະສະເດັດມາມີເມກເປັນຂະບວນແຫ່ ຕາທຸກໜ່ວຍຈະເຫັນພຣະອົງ" (ພຣະນິມິດ 1:7)

ແລະແລ້ວອຳນາດການປົກຄອງຂອງຄວາມຊົ່ວຮ້າຍທີ່ມີມານານກໍຈະຖືກທຳລາຍໄປ "ຣາຊອານາຈັກແຫ່ງພິພົບນີ້ ໄດ້ກາຍເປັນກັມມະສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ແລະເປັນຂອງພຣະຄຣິດຂອງພຣະອົງ ພຣະອົງຈະຊົງສເວີຍຣາດຕລອດໄປເປັນນິດ" (ພຣະນິມິດ 11:15) "ພຣະເຈົ້າຈະຊົງເຮັດໃຫ້ຄວາມຊອບ



ຈຶ່ງເຮັດໃຫ້ຈິດໃຈພວກເຂົາເກີດຄວາມຊື່ນຊົມຍິນດີ ພວກເຂົາກໍກະຫາຍທີ່ຈະສ່ອງແສງນີ້ຕໍ່ໄປໃຫ້ກັບຜູ້ທີ່ຢູ່ກັບຄວາມມືດແຫ່ງຄວາມຜິດຂອງສັນຕະປາປາ

ພາຍໃຕ້ການນຳຂອງສັນຕະປາປາແລະບາດຫລວງສັ່ງສອນປະຊາຊົນ ຖືກສອນໃຫ້ໄວ້ວາງໃຈໃນຄວາມລອດ ໂດຍກະທຳດີເພື່ອຈະໄດ້ລອດແຕ່ພວກເຂົາບໍ່ເຄີຍເບິ່ງຕົນເອງ ຈິດໃຈຂອງນັກບວດເຫລົ່ານັ້ນຢູ່ໃນສະພາບທີ່ເຕັມໄປດ້ວຍຄວາມຜິດບາບ ມີຄວາມທຸກທໍຣະມານທາງກາຍແລະຈິດວິນຍານແຕ່ບໍ່ຮູ້ຈັກການປົດປ່ອຍໄດ້ບ່ອນໃດ ນັບພັນຄົນທີ່ໃຊ້ຊີວິດຢູ່ຕາມຫ້ອງວັດເພື່ອການອົດອາຫານແລະທໍຣະມານກາຍດ້ວຍການເຝົ້າພາວັນນາອະທິຖານຍາມທ່ຽງຄືນຫມອບຂາບຢູ່ກັບກ້ອນຫີນທີ່ເຢັນຂຶ້ນ ເດີນທາງໄກເພື່ອສແວງບຸນຄວາມຄິດຄຳນຶງຂອງນັກບວດເຫລົ່ານັ້ນ ວິນວຽນຢູ່ກັບຄວາມຢ້ານກົວໃນພຣະພິໂຣດຂອງພຣະເຈົ້າ ມີຫລາຍອົງໄດ້ຮັບຄວາມທຸກທໍຣະມານຈົນກະທັ່ງເກີດຄວາມທໍ້ແທ້ ແລະຍອມແພ້ເມື່ອບໍ່ມີແສງສວ່າງແຫ່ງຄວາມຫວັງພວກເຂົາຈຶ່ງດຳດິ່ງສູ່ຄວາມມືດ

## ຊີ້ບອກຄົນບາບໄປຫາພຣະຄຣິດ

ພວກວອນແດນມີຄວາມປາຖນາທີ່ຈະນຳຂ່າວແຫ່ງສັນຕິສຸກ ໃນຄຳສັນຍາຂອງພຣະເຈົ້າໃຫ້ກັບຈິດວິນຍານທີ່ຫິວກະຫາຍເຫລົ່ານັ້ນ ແລະນຳໃຫ້ມາຫາພຣະຄຣິດຜູ້ເປັນຄວາມຫວັງແຫ່ງຄວາມລອດແຕ່ພຽງຜູ້ດຽວຫລັກຄຳສອນກ່ຽວກັບການທຳດີຈະລົບລ້າງຄວາມໄດ້ນັ້ນ ຖືວ່າບໍ່ໄດ້ຕັ້ງຢູ່ເທິງຮາກຖານແຫ່ງຄວາມເປັນຈິງຄວາມດີຂອງການສິ້ນພຣະຊົນເທິງໄມ້ກາງແຂນ ແລະການຟື້ນຄືນພຣະຊົນຂອງພຣະຜູ້ຊ່ອຍໃຫ້ລອດນັ້ນຄືຮາກຖານຄວາມເຊື່ອຂອງຄຣິສະຕຽນ ຈິດວິນຍານທີ່ເພິ່ງພາອາສັຍໃນພຣະຄຣິດຄວນຈະຕິດສະນິດເໝືອນກັບແຂນຂາແນບສະນິດຕິດກັບຮ່າງກາຍຫລືເໝືອນກັບກິ່ງອະງຸ່ນຕິສະນິດຢູ່ກັບຕົ້ນ

ຄຳສອນຂອງບັນດາສັນຕະປາປາແລະບາດຫລວງ ເຮັດໃຫ້ປະຊາຊົນມອງພຣະເຈົ້າແລະພຣະຄຣິດວ່າເປັນຜູ້ເຂັ້ມງວດກວດຂັນ ຈົນເຖິງເປັນຜູ້ທີ່ຂາດຄວາມ

ເຫັນອົກເຫັນໃຈ ຕໍ່ມະນຸດເຮັດໃຫ້ບາດຫລວງແລະນັກບຸນຕ້ອງອະທິຖານແລະອ້ອນວອນໃຫ້ສຳລັບຜູ້ທີ່ຕ້ອງການຈະກຳຈັດອຸປະສັກທີ່ຊາຕານກໍ່ຂຶ້ນນັ້ນ ຄົນເຫລົ່ານັ້ນສາມາດເຂົ້າຫາພຣະເຈົ້າໄດ້ດ້ວຍຕົນເອງສາຣະພາບບາບຂອງຕົນແລະຮັບການອະພັຍແລະສັນຕິສຸກຈາກພຣະອົງໄດ້

## ບຸກລຸກອານາຈັກຂອງຊາຕານ

ຜູ້ເຜີຍແຜ່ສາສນາຂອງວອນແດນໄດ້ຄັດລອກບາງສ່ວນພຣະຄັມພີ ຢ່າງລະມັດລະວັງ ແສງແຫ່ງຄວາມຈິງໄດ້ສ່ອງເຂົ້າໄປໃນຈິດໃຈທີ່ມືດມົນເປັນຈຳນວນຫລວງຫລາຍ ຈົນກະທັ່ງພຣະອາທິດແຫ່ງຄວາມຊອບທັມສາດສ່ອງເຂົ້າໄປໃນຈິດໃຈຢຽວຢາຮັກສາຈິດໃຈເຫລົ່ານັ້ນດ້ວຍແສງສວ່າງຂອງພຣະອົງ ບາງຄັ້ງຜູ້ທີ່ໄດ້ຮັບຟັງພຣະທັມແຫ່ງຄວາມຈິງປາຖນາຢາກໄດ້ຍິນຂໍ້ພຣະຄັມພີນັ້ນ ເພື່ອໃຫ້ແນ່ໃຈວ່າສິ່ງທີ່ຕົນເອງໄດ້ຍິນຖືກຕ້ອງ

ມີຜູ້ຄົນຈຳນວນຫລວງຫລາຍ ໄດ້ເຫັນເຖິງຄວາມບໍ່ມີປໂຍດຂອງມະນຸດທີ່ອ້າງຕົນວ່າເປັນຊື່ກາງແທນຄົນບາບ ພວກເຂົາໄດ້ໂຮ່ຮ້ອງດ້ວຍຄວາມຊົມຊື່ນຍິນດີວ່າ "ພຣະຄຣິດຄືປຸໂຣຫິດຂອງພຣະເຈົ້າ ພຣະໂລຫິດຂອງພຣະອົງຄືເຄື່ອງບູຊາຂອງພຣະເຈົ້າ ແທ່ນບູຊາຂອງພຣະອົງຄືການສະລະພາບບາບຂອງພຣະເຈົ້າ" ແສງສວ່າງອັນໃຫຍ່ຫລວງໄດ້ຫລັ່ງໄຫລສູ່ຄົນເຫລົ່ານັ້ນໂດຍທົ່ວ ແລະເບິ່ງເໝືອນວ່າເປັນພາຫະນະນຳທຸກຄົນໄປສູ່ສວັນ ຄວາມຢ້ານເຣື່ອງຄວາມຕາຍໄດ້ໝົດກັ່ງໄປ ພວກເຂົາບໍ່ຢ້ານທີ່ຖືກຕິດຄຸກອີກຕໍ່ໄປຖ້າການກະທຳນັ້ນເປັນການຖວາຍກຽດຕິຍົດແດ່ພຣະຜູ້ໄຖ່ຂອງຕົນ

ແມ່ນຈະເປັນທີ່ລັບລີ້ກໍມີການອ່ານພຣະທັມຂອງພຣະເຈົ້າໃຫ້ຄົນທີ່ສົນໃຈຟັງ ບາງເທື່ອກໍອ່ານໃຫ້ຄົນດຽວຟັງ ບາງເທື່ອກໍອ່ານໃຫ້ກຸ່ມນ້ອຍທີ່ກະຫາຍຄວາມສວ່າງ ບາງເທື່ອມີການອ່ານແບບນີ້ຕລອດຄືນ ມັກຈະມີຄຳສເມີວ່າ "ພຣະເຈົ້າຈະຍອມຮັບການຖວາຍຂອງຂ້ານ້ອຍຫລືບໍ່ ພຣະອົງຈະຍິ້ມພຣະສວານໃຫ້ຂ້ານ້ອຍຫລືບໍ່ ພຣະອົງຈະອະພັຍບາບໃຫ້ຂ້ານ້ອຍຫລືບໍ່ ແລ້ວກໍອ່ານຄຳຕອບ "ບັນດາຜູ້ເຮັດການໜັກໜ່ວງແລະແບກພາຣະໜັກຈົ່ງມາຫາເຮົາແລະເຮົາຈະໃຫ້ພວກທ່ານໄດ້ຮັບຄວາມເຊົາເໝື່ອຍ" (ມັດທາຍ 11:28)



ບົດທີ່ 17

# ພຣະສັນຍາແຫ່ງການສະເດັດກັບມາຂອງພຣະຄຣິດ

ພຣະສັນຍາແຫ່ງການສະເດັດກັບມາຄັ້ງທີ່ສອງຂອງພຣະຄຣິດເພື່ອຈະເຮັດໃຫ້ແຜນການໄຖ່ໃຫ້ລອດສຳເຣັດນັ້ນ ເປັນຈຸດປະສົງສຳຄັນທີ່ສຸດຂອງພຣະຄັມພີອັນສັກສິດນັບຕັ້ງແຕ່ສວນເອເດັນເປັນຕົ້ນມາ ບັນດາບຸດແຫ່ງຄວາມເຊື່ອໄດ້ເຝົ້າລະຄອຍການສະເດັດກັບມາຂອງພຣະຜູ້ຊົງສັນຍາໄວ້ ເພື່ອຈະໄດ້ນຳເອົາສວງສວັນທີ່ສູນເສັຽໄປນັ້ນກັບຄືນມາ

ເອໂນກເປັນຄົນຊົ່ວອາຍຸທີ່ເຈັດນັບຈາກອາດາມແລະເອວາ ຊຶ່ງເຄີຍອາສັຍໃນສວນເອເດນ ເພິ່ນໄດ້ດຳເນີນໄປກັບພຣະເຈົ້າໃນໂລກນີ້ນັບເປັນເວລາ 300 ປີ ປະກາດວ່າ "ເບິ່ງແມ, ອົງພຣະຜູ້ເປັນເຈົ້າໄດ້ສະເດັດມາພ້ອມກັບໄພ່ພົນຂອງພຣະອົງນັບເປັນໝື່ນໆ ເພື່ອຊົງພິພາກສາລົງໂທດຄົນທັງປວງ (ຢູດາ 14,15) ໃນຄືນທີ່ໂຢບໄດ້ຮັບຄວາມທຸກຍາກລາວໄດ້ຮ້ອງຂຶ້ນມາ "ແຕ່ຂ້ອຍຮູ້ວ່າມີພຣະຄຸ້ມຄອງອົງນຶ່ງຢູ່ໃນສວັນຊັ້ນຟ້າ ຜູ້ຊຶ່ງຈະມາຕໍ່ສູ້ຄະດີໃຫ້ຂ້ອຍໃນເວລາສຸດທ້າຍ ເຖິງແມ່ນວ່າເຊື້ອໂຣກກັດກິນຜີວໜັງຂອງຂ້ອຍແລ້ວ ໃນຊີວິດນີ້ຂ້ອຍຍັງຈະເຫັນພຣະເຈົ້າຢູ່ ຂ້ອຍຈະເຫັນພຣະອົງດ້ວຍຕາຂ້ອຍເອງແລະພຣະອົງຈະບໍ່ເປັນຜູ້ແປກໜ້າ (ໂຢບ 19:25-27) ບັນດາກະວີແລະຜູ້ປະກາດພຣະທັມຂອງພຣະຄັມພີໄດ້ພາກັນກ່າວເຖິງການສະເດັດກັບມາຂອງພຣະຄຣິດດ້ວຍຖ້ອຍຄຳທີ່ເລົ້າໃຈວ່າ "ແຜ່ນດິນໂລກແລະເທິງທ້ອງຟ້າຈົ່ງຊົມຊື່ນຍິນດີ ນ້ຳທະເລແລະທຸກໆ ສິ່ງທີ່ມີຢູ່ໃນນັ້ນ ຈົ່ງຮ້ອງສຽງສະໜັ່ນຫວັ່ນໄຫວ ທົ່ງ

ພຣະເຢຊູຄຣິດໄດ້ຊົງຕຣັດເຖິງການສະເດັດກັບມາຍັງໂລກນີ້ອີກເທື່ອນຶ່ງ ຕາມທີ່ໃນພຣະຄັມພີ ຄວາມຫວັງຂອງຄຣິສະຕຽນມານານນັບຕັ້ງແຕ່ສມັຍຂອງອັຄສາວົກທີ່ເຝົ້າລໍຄອຍພຣະອົງພຣະຄຣິດໄດ້ຊົງທຳນວາຍເຖິງເຄື່ອງໝາຍແຫ່ງການສະເດັດມາຂອງພຣະອົງທີ່ຈະເກີດຂຶ້ນ ຄື ສົງຄາມ ພັຍພິບັດທາງທັມມະຊາດ ເມື່ອວັນທີ່ 1 ພຶສຈິກາ ຄ.ສ. 1755 (ພ.ສ. 2298) ຊຶ່ງຢູ່ໃນປາຍສມັຍຂອງພຣະເຈົ້າຢູ່ຫົວບໍຣົມໂກດແຫ່ງກຸງສີອະຍຸທະຍາກ່ອນທີ່ຈະເສັຽກຸງເປັນຄັ້ງທີ່ສອງ 12 ປີ ໄດ້ເກີດເຫດ ການແຜ່ນດິນໄຫວທີ່ກຸງລິສບອນ ປະເທດຕຸຣກີເປັນເຫດ ການທີ່ໜ້າຢ້ານທີ່ສຸດແຜ່ຂຍາຍໄປເຖິງສີ່ລ້ານໄມ ທັງສາມທະວີບໄດ້ຮັບຜົນກະທົບຈາກເຫດການໃນເທື່ອນັ້ນ

ຕໍ່ມາເມື່ອວັນທີ່ 19 ພຶສພາ ຄ.ສ. 1780 (ພ.ສ. 2323) ຫລັງຈາກທີ່ກຸງສີອະຍຸທະຍາເສັຽໃຫ້ແກ່ພະມ້າ 13 ຕົງກັບສມັຍກຸງທົນບຸຣີ ສົມເດັດພຣະເຈົ້າກຸງທົນບຸຣີຄັ້ງນັ້ນໄດ້ເກີດເຫດການທາງທັມມະຊາດຂຶ້ນອີກ ເມື່ອດວງອາທິດກັບມືດແລະຕອນກາງຄືນດວງຈັນກໍກາຍເປັນສີເລືອດ

ວັນທີ່ 13 ພຶສຈິກາ ຄ.ສ. 1833 (ພ.ສ. 2376) ຕົງກັບສມັຍຂອງພຣະບາດສົມເດັດພຣະນັ່ງພຣະເຈົ້າຢູ່ຫົວ ຣັຊການທີ່ 3 ໄດ້ເກີດເຫດການທາງທັມມະຊາດອີກເທື່ອນຶ່ງ ເມື່ອດວງດາວຈຳນວນມະຫາສານຕົກຈາກຟ້າ ເປັນປາກົດການທີ່ເປັນທີ່ກ່າວຂວັນເຖິງຕາມຄຳພະຍາກອນຂອງພຣະຄັມພີ ໃນເວລາຕໍ່ມາຂ່າວການສະເດັດກັບມາຄັ້ງທີ່ສອງຂອງພຣະເຢຊູກໍໄດ້ເລີ່ມຕົ້ນເທສນາໃນສະຫະຣັດອະເມຣິກາ



ຈິດວິນຍານ ທີ່ມີຄວາມສຸກເຫລົ່ານັ້ນໄດ້ກັບກາຍໄປເຜີຍແສງສວ່າງແຫ່ງຄວາມຈິງທີ່ບ້ານເກີດເມືອງນອນຂອງຕົນ ເພື່ອບອກເລົ່າເຖິງປະສົບປະການໃໝ່ທີ່ເຂົາໄດ້ຮັບ ຖ້າເປັນໄດ້ກໍຈະເລົ່າເຖິງປະສົບປະການຂອງຕົນເອງຄົນເຫລົ່ານັ້ນໄດ້ພົບຄວາມຈິງແລະຫົນທາງທີ່ຖືກຕ້ອງ ພຣະຄັມພີໄດ້ເວົ້າກັບຈິດໃຈຂອງບັນດາຜູ້ສແວງຫາຄວາມຈິງເຫລົ່ານັ້ນ

ຜູ້ຊື້ຂ່າວແຫ່ງຄວາມຈິ່ງດຳເນີນການປະກາດຕໍ່ໄປ ຜູ້ທີ່ໄດ້ຍິນໄດ້ຟັງບໍ່ເຄີຍຖາມເລີຍວ່າຜູ້ຊື້ຂ່າວຄົນນັ້ນມາຈາກໃສຈະໄປໃສ ເພາະເຂົາຊາບຊຶ່ງໃນພຣະທັມຂອງພຣະເຈົ້າ ຈົນລືມຖາມໄປວ່າຫລືວ່າເຂົາເປັນເທວະດາທີ່ມາຈາກສວັນເພາະທຸກຄົນຕ່າງກໍສົງສັຍ

ຫລາຍຄັ້ງທີ່ຜູ້ນຳຂ່າວແຫ່ງຄວາມຈິງເດີນທາງໄປຕ່າງແດນ ຫລືສິ້ນຊີວິດໃນທີ່ຄຸມຂັງ ຫລືບາງບ່ອນເຫລືອແຕ່ກະດູກຂອງເຂົາໃນບ່ອນທີ່ເຂົາເປັນພະຍານເພື່ອຄວາມຈິງ ແຕ່ຖ້ອຍຄຳທີ່ເຂົາໄດ້ຖິ້ມໄວ້ໄດ້ທຳໜ້າທີ່ຕໍ່ໄປ

ຜູ້ນຳຂອງສັນຕະປາປາ ເຫັນອັນຕຣາຍຈາກການທຳງານຂອງຜູ້ປະກາດຂ່າວປະເສີດຜູ້ອ່ອນນ້ອມຖ່ອມຕົນເຫລົ່ານັ້ນ ແສງແຫ່ງຄວາມຈິງຈະກຳຈັດຂະເໝັ່ນແຫ່ງຄວາມຜິດພາດອັນໜາທຶບທີ່ເກີດຂຶ້ນໃນຈິດຂອງປະຊາຊົນໄປຈະນຳຈິດໃຈໄປສູ່ພຣະເຈົ້າແລະໃນທີ່ສຸດຈະທຳລາຍອິດທິພົນຂອງຄຣິສຕະຈັກແຫ່ງໂຣມໃຫ້ໝົດໄປ

ຄົນເຫລົ່ານີ້ຊຶ່ງຍຶດຖືຄວາມເຊື່ອຂອງຄຣິສຕະຈັກໃນຍຸກທຳອິດ ກາຍເປັນພະຍານເຖິງຄຳສອນຜິດຂອງໂຣມ ດັ່ງນັ້ນຈຶ່ງເປັນສາຍເຫດແຫ່ງຄວາມກຽດຊັງ ແລະການກົດຂີ່ຂົ່ມເຫງ ການທີ່ພວກເຂົາປະຕິເສດບໍ່ຍອມລະຖິ້ມພຣະທັມຂອງພຣະເຈົ້າເປັນສິ່ງທີ່ຝ່າຍໂຣມັນຄາທໍລິກຍອມຮັບບໍ່ໄດ້

## ຄຣິສຕະຈັກໂຣມຕັດສິນໃຈທຳລາຍພວກວອນແດນ

ບັດນີ້ສົງຄາມສາສນາອັນໜ້າຢ້ານທີ່ສຸດໄດ້ເກີດຂຶ້ນ ເພື່ອທຳລາຍລ້າງປະຊາກອນຂອງພຣະເຈົ້າ ຜູ້ອາສັຍຢູ່ໃນຮ່ອມພູເປັນທີ່ອາສັຍພະນັກງານສອບສວນຂອງ

ພວກໂຣມໄດ້ຮັບຄຳສັ່ງໃຫ້ເອົາຜິດແກ່ປະຊາຊົນ ຄັ້ງແລ້ວຄັ້ງເລົ່າຄົນເຫລົ່ານັ້ນຕ້ອງລະຖິ້ມບ້ານເຮືອນສະຖານນະມັດສະການແລະທີ່ທຳມາຫາກິນ ແຕ່ກໍບໍ່ມີໃຜຟ້ອງເອົາຜິດໃນຈະຣິຍາທັມຂອງຄົນເຫລົ່ານັ້ນໄດ້ ຄວາມຜິດອັນໃຫຍ່ຫລວງຂອງເຂົາກໍຄືການບໍ່ຍອມຮັບນັບນະມັດສະການພຣະເຈົ້າ ຕາມຄວາມຕ້ອງການຂອງສັນຕະປາປາ ຂໍ້ຫາ "ອາຊຍາກັມ" ທີ່ພວກເຂົາຖືກໃສ່ໄຄ່ນີ້ເອງທີ່ເຮັດພວກເຂົາຖືກດູໝິ່ນຢຽບຫຍາມ ແລະທໍຣະມານຢ່າງຮຸນແຮງສຸດແລ້ວແຕ່ມະນຸດແລະຊາຕານຈະສັນຫາຂຶ້ນ ມາທຳລາຍ

ເມື່ອຄຣິສຕະຈັກໂຣມ ໄດ້ຕັດສິນໃຈຂຸດຮາກຖອນໂຄ່ນລັດທິທີ່ພວກເຂົາກຽດຊັງ ສັນຕະປາປາມີພຣະຣາຊອົງການໃຫ້ກ່າວຫາພວກວອນແດນວ່າເປັນພວກນອກຮີດແລະໃຫ້ນຳມາປະຫານຊີວິດ ຕູ່ວ່າເພາະຖືກກ່າວຫາວ່າເປັນຄົນຂີ້ກຽດສັນຫລັງຍາວ ບໍ່ຊື່ສັດ ຫລືບໍ່ເຊື່ອຟັງ ແຕ່ພວກເຂົາຖືກປະນາມວ່າເປັນຜູ້ມີຄວາມກະຕືລືລົ້ນແລະປະຊາຊົນໃຫ້ຄວາມນັບຖື ເພື່ອຫລອກລວງລູກແກະໃນຄອກທີ່ແທ້ຈິງ "ມີການຮຽກສະມາຊິກຂອງຄຣິສຕະຈັກໃຫ້ມາໂຮມກັນເຮັດສົງຄາມສາສນາ ຕໍ່ຕ້ານພວກທີ່ຖືກວ່າເປັນພວກນອກຮີດມີການປຸກລະດົມວ່າ" ປົດປ່ອຍຜູ້ຮ່ວມການສົງຄາມສາສນາຈາກຄຳສາບານທຸກຢ່າງທີ່ເຂົາກະທຳໄປ ອອກກົດໝາຍຍອມຮັບຊັບສິນທີ່ພວກເຂົາໄດ້ມາຢ່າງຜິດກົດໝາຍ ແລະສັນຍາໃຫ້ມີການຍົກໂທດບາບແກ່ຜູ້ໃດກໍຕາມທີ່ຂ້າພວກນອກຮີດ ຍົກເລີກການຕິດຕໍ່ໃດໆ ເພື່ອພວກວອນແດນຫ້າມທຸກຄົນບໍ່ໃຫ້ຊ່ອຍເຫລືອໃດໆແກ່ຄົນເຫລົ່ານີ້ ມອບອຳນາດແກ່ທຸກຄົນຍຶດຄອງຊັບສິນທັງໝົດຂອງຊາວວອນແດນໄດ້"

ເອກກະສານນີ້ສະແດງໃຫ້ເຫັນຢ່າງຊັດເຈັນວ່າເປັນສຽງຄຳຣາມຂອງພະຍານາກບໍ່ແມ່ນພຣະສຸຣະສຽງຂອງພຣະຄຣິດ ເປັນພຶດຕິການດຽວກັບບ່ອນຄຶງພຣະເຢຊູເທິງໄມ້ກາງແຂນແລະຂ້າອັຄສາວົກແລະພັກດັນເນໂຣຜູ້ກະຫາຍເລືອດເຂັ້ນຂ້າປະຊາກອນຂອງພຣະເຈົ້າທຳໜ້າທີ່ກຳຈັດຜູ້ທີ່ພຣະເຈົ້າຊົງຮັກ

ເຖິງແມ່ນວ່າຈະມີສົງຄາມສາສນາຕໍ່ຕ້ານແລະຄົນເຫລົ່ານັ້ນຖືກເຂັ້ນຂ້າເໝືອນກັບບໍ່ແມ່ນມະນຸດທີ່ຕ້ອງຕົກເປັນເຫຍື່ອອັນໂຫດຮ້າຍ ເຫລົ່າຄົນທີ່ຢຳເກງພຣະເຈົ້າຍັງຄົງທຳໜ້າທີ່ສົ່ງຜູ້ປະກາດສາສນາອອກໄປ ເພື່ອຫວ່ານຄວາມຈິງອັນລ້ຳຄ່າຕໍ່



ຈຳນວນຂອງຜູ້ທີ່ອົບພະຍົບໄປຍັງປະເທດອະເມຣິກາໄດ້ທະວີຈຳນວນຂຶ້ນເລື້ອຍໆ ແຕ່ຄົນແຕ່ຄົນເຫລົ່ານີ້ມີເຈຕະຈຳນົງທີ່ແຕກຕ່າງໄປຈາກຜູ້ທີ່ສະແຫວງຫາແຕ່ຜົນປໂຍດທາງຝ່າຍໂລກ

ປະຊາຊົນໃນອານານິຄົມສມັຍທຳອິດອະນຸຍາດໃຫ້ສະມາຊິກຂອງຄຣິສຕະຈັກເທົ່ານັ້ນທີ່ຈະມີສິດທິອອກສຽງ ແລະທຳງານເປັນເຈົ້າໜ້າທີ່ຂອງຣັຖບານໄດ້ ການກະທຳເຊັ່ນນີ້ກໍເພື່ອທີ່ຈະຮັກສາຄວາມຍຸດຕິທັມຂອງຣັດໄວ້ ແຕ່ຜົນທີ່ບັງເກີດຂຶ້ນຄືຄຣິສຕະຈັກກັບເຊື່ອມລົງ ຫລາຍຄົນເຂົ້າມາເປັນສະມາຊິກຂອງຄຣິສຕະຈັກໂດຍບໍ່ໄດ້ກັບໃຈໃໝ່ ແມ່ນແຕ່ບັນດາຜູ້ສອນສາສນາກໍລະເລີຍຕໍ່ຣິດອຳນາດຂອງພຣະວິນຍານບໍຣິສຸດທີ່ດົນໃຈໃຫ້ມະນຸດກັບໃຈໃໝ່ ຕັ້ງແຕ່ສມັຍຈັກກະພັດຄອນສະແຕນຕິນຈົນເຖິງປັດຈຸບັນ ຄວາມພຍາຍາມທີ່ຈະສ້າງຄຣິສຕະຈັກໂດຍການຊ່ອຍເຫລືອຂອງ ຣັດອາດຈະເບິ່ງເໝືອນວ່າຈະຊ່ອຍນຳເອົາໂລກເຂົ້າມາໃກ້ຄຣິສຕະຈັກຫລາຍຂຶ້ນ ແຕ່ໃນຄວາມເປັນຈິງກັບນຳຄຣິສຕະຈັກໃຫ້ເຂົ້າໄປໃກ້ໂລກຫລາຍກວ່າ

ຄຣິສະຕະຈັກໂປເຕສແຕນແຫ່ງອະເມຣິກາ ແລະຍຸໂຣບຫລົ້ມແຫລວໃນການດຳເນີນງານຕາມແນວທາງຂອງການປະຕິຮູບສາສນາປະຊາຊົນສ່ວນຫລາຍມີຄວາມພໍໃຈທີ່ຈະເຊື່ອໃນສິ່ງທີ່ບັນພຣະບຸຣຸດຂອງພວກເຂົາເຊື່ອ ເຊັ່ນດຽວກັບພວກຢິວໃນສມັຍຂອງພຣະເຢຊູແລະໂຣມັນຄາທໍລິກ ໃນສມັຍຂອງລູເຕີກະທຳຄວາມເຊື່ອຖືໃນສິ່ງຜິດແລະເຊື່ອທີ່ງົມງາຍຍັງຄົງມີຢູ່ ການປະຕິຮູບສາສນາຄ່ອຍໆ ສູນຫາຍໄປຄຣິສຕະຈັກໂປເຕສແຕນຈຳເປັນທີ່ຈະຕ້ອງໄດ້ຮັບການປະຕິຮູບຄັ້ງຍິ່ງໃຫຍ່ເໝືອນຄຣິສຕະຈັກໂຣມັນໃນສມັຍຂອງລູເຕີ ຄຣິສະຕະຈັກທັງສອງນີ້ມີສ່ວນທີ່ຄ້າຍ ຄືກັນຄືຍົກຍ້ອງນັບຖືຄວາມຄິດເຫັນຂອງມະນຸດແລະນຳເອົາທິສະດີຂອງມະນຸດມາແທນພຣະທັມພຣະເຈົ້າ

ມະນຸດເອົາສາສນາເປັນເຄື່ອງບັງໜ້າ ຄວາມເຢີ່ຍິ່ງຈອງຫອງແລະຄວາມຟຸ້ງເຟີ້ເຮັດໃຫ້ຄຣິສຕະຈັກເຊື່ອມລົງ ການຍຶດຖືເຄົານົບທຳນຽມປະເພນີທີ່ນຳຄວາມພິນາດມາສູ່ຫລາຍລ້ານຄົນຍັງຄົງຝັງຮາກເລິກລົງໃນຄຣິສຕະຈັກ ເມື່ອຄຣິສຕະຈັກກັບເຊີດຊູສິ່ງເຫລົ່ານັ້ນ ແທນທີ່ຈະຕໍ່ສູ້ເພື່ອ "ຫລັກຄຳສອນທີ່ເຊື່ອກັນຢູ່ທີ່ໄດ້ຊົງໂປຣດມອບໄວ້ແກ່ທັມມະກິຊົນ" ດັ່ງນັ້ນຫລັກຄຳສອນຊຶ່ງບັນດານັກປະຕິຮູບສາສນາໄດ້ຍອມທົນທຸກທໍຣະມານເພື່ອໄດ້ມານັ້ນຊຶ່ງເຊື່ອມຖອຍລົງ

ແລະການສະແຫວງຫາຄວາມສຸກ" ຣັຖທັມມະນູນໄດ້ໃຫ້ຫລັກປະກັນຈິດສຳນຶກໄວ້ໂດຍບໍ່ສາມາດລ່ວງລະເມີດໄດ້ວ່າ "ຣັດສະພາຈະບໍ່ອອກກົດໝາຍໃດໆ ກ່ຽວກັບອິສາຣະພາບການຈັດຕັ້ງສາສນາຫລືຫ້າມການກະທຳໃດທີ່ກ່ຽວກັບສິ່ງເຫລົ່ານີ້"

"ຜູ້ຮ່າງຣັຖທັມມະນູນຍອມຮັບຫລັກການທີ່ດຳຣົງຢູ່ຊົ່ວນິຣັນວ່າຄວາມສຳພັນລະຫວ່າງພຣະເຈົ້າກັບມະນຸດນັ້ນຢູ່ເໜືອກົດໝາຍຂອງມະນຸດແລະສິດທິແຫ່ງຄວາມຮູ້ສຶກຜິດຊອບຊົ່ວດີຂອງເພິ່ນຈະບໍ່ມີໃຜຍາດຊີງເອົາໄປໄດ້ ຫລັກການນີ້ເປັນຫລັກການທັມມະຊາດທີ່ບໍ່ມີສິ່ງໃດຈະທຳລາຍໄດ້"

ເມື່ອຂ່າວດີກະຈາຍໄປທົ່ວຢຸໂຣບ ດິນແດນທີ່ມະນຸດຄວນຈະໄດ້ຮັບຜົນແຫ່ງການທຳງານຂອງເພິ່ນແລະເຊື່ອຟັງຄວາມສຳນຶກຜິດຊອບຂອງເພິ່ນເອງ ຜູ້ຄົນນັບຫລາຍພັນຄົນໄດ້ອົບພະຍົບມາຍັງຝັ່ງທະເລຂອງໂລກໃໝ່ໃນໄລຍະເວລາ 20 ປີ ນັບຕັ້ງແຕ່ມີການອົບພະຍົບມີຕັ້ງຖິ່ນຖານຢູ່ທີ່ພລີມັດ (ປີ ຄ.ສ. 1620) ກໍໄດ້ມີຜູ້ສະແຫວງຫາເສຣີພາບມາຕັ້ງຖິ່ນຖານຢູ່ທີ່ນິວອິງແລນເປັນຈຳນວນຫລາຍພັນຄົນ

"ພວກເຂົາບໍ່ຫວັງອັນໃດຈາກພື້ນດິນ ນອກຈາກສິ່ງຕອບແທນຂອງແຮງງານທີ່ໄດ້ທຸ່ມເທລົງໄປ ພວກເຂົາມີຄວາມອົດທົນຕໍ່ຄວາມລຳບາກໃນປ່າກັນດານ ຫົດນ້ຳຕົ້ນໄມ້ແຫ່ງເສຣີພາບດ້ວຍນ້ຳຕາແລະເຫື່ອຍາດທີ່ໄຫລອາບໜ້າຈົນກະທັ່ງມັນຢັ່ງຮາກລົງເລິກ

## ຫລັກປະກັນອັນຍິ່ງໃຫຍ່ເພື່ອຄວາມໝັ້ນຄົງແຫ່ງຊາດ

ມີການສອນຫລັກການຂອງພຣະຄັມພີຕາມເຮືອນ ໂຮງຮຽນແລະໂບດ ຜົນທີ່ປາກົດໃຫ້ເຫັນຄັກຄື ຄວາມມັດທະຍັດ ຄວາມສລຽວສລາດ ຄວາມບໍຣິສຸດ ການຮູ້ຈັກປະມານຕົນ ແລະການລະເວັ້ນຈາກການເສບຂອງມຶນເມົາ ບາງຄົນອາດຈະບໍ່ເຫັນ "ຄົນເມົາເຫລົ້າຫລືໄດ້ຍິນສະບົດຫລືພົບຄົນຂໍທານ" ເປັນເວລາຫລາຍປີ ພຣະຄັມພີຈຶ່ງເປັນຫລັກປະກັນຄວາມໝັ້ນຄົງໄດ້ດີທີ່ສຸດເພື່ອຄວາມຍິ່ງໃຫຍ່ຂອງຊາດບ້ານເມືອງອານານິຄົມທີ່ເຄີຍອ່ອນແອກໍຈະເຣີນເຕີບໂຕຈົນເປັນສະຫະຣັດທີ່ມີອຳນາດ ແລະທົ່ວໂລກພາກັນປະຫລາດໃຈໃນຄວາມຈະເຣີນຮຸ່ງເຮືອງຂອງ "ຄຣິສຕະຈັກທີ່ບໍ່ມີສັນຕະປາປາແລະຣັດທີ່ບໍ່ມີພຣະຣາຊາ" ແຫ່ງນີ້



ໄປ ແມ່ນພວກເຂົາຈະຖືກຕາມຂ້າແຕ່ໂລຫິດຂອງເຂົາໄດ້ກາຍເປັນເມັດພືດທີ່ຫວ່ານລົງໄປແລ້ວກໍເກີດຜົນ

ພວກວອນແດນໄດ້ເປັນພະຍານໃຫ້ກັບພຣະເຈົ້າຫລາຍສັດຕະວັດ ກ່ອນມາຕິນລູເຕີ ພວກເຂົາໄດ້ຫວ່ານພືດແຫ່ງການປະຕິຮູບຊຶ່ງເລີ່ມຕົ້ນໃນສມັຍຂອງໄວຄລິບຈະເຣີນເຕີບໂຕຝັງເລິກແລະກວ້າງໄກຫລາຍຂຶ້ນໃນສມັຍຂອງລູເຕີແລະຈະຕ້ອງດຳເນີນຕໍ່ໄປຈົນເຖິງວາຣະສຸດທ້າຍ

ຂນະນັ້ນ ສະຖານະການໃນຢຸໂຣບກໍເກີດໄຟແຫ່ງຄວາມຈິງພັດກະໜ່ຳຈາກແຜ່ນດິນໃຫຍ່ຢຸໂຣບໄດ້ລາມເຂົ້າໄປໃນເກາະອັງກິດ ໃນປີ ຄ.ສ. 1330 ຈອນໄວຄລິບໄດ້ຖືກກຳເນີດມາໃນໂລກ ເພິ່ນຜູ້ນີ້ໄດ້ເປັນນັກຕໍ່ສູ້ເພື່ອຄວາມຖືກຕ້ອງ ເພິ່ນຜູ້ນີ້ເປັນນັກປາດທີ່ມີຊື່ສຽງໄດ້ຂຽນໜັງສືຄັດຄ້ານການປົກຄອງຂອງສັນຕະປາປາ ວ່າບໍ່ມີພຣະຄັມພີສ່ວນໃດທີ່ຮັບຮອງອຳນາດຂອງພຣະອົງແລະຄຣິສຕະຈັກຄາທໍລິກ ເພິ່ນເຊື່ອວ່າມະນຸດທຸກຄົນຮວມທັງນັກບວດຕ່າງກໍຕ້ອງອາສັຍພຣະຄຸນຂອງພຣະເຈົ້າແລະຍັງເໜັ້ນວ່າພຣະຄັມພີເທົ່ານັ້ນເປັນທີ່ມາຂອງຫລັກຄວາມເຊື່ອທີ່ແທ້ຈິງຂອງຄຣິສຕະຈັກ

ໄວຄລິບມີຜູ້ຕິດຕາມຈຳນວນຫລວງຫລາຍທີ່ເອີ້ນຕົນເອງວ່າ "ນັກເທດຍາຈົກ" "ຫລືລອນລານ" ອັນເປັນຊື່ທີ່ຖືກລໍ້ລຽນ ແຕ່ກໍເປັນທີ່ຍອມຮັບສາວົກກຸ່ມນີ້ໄດ້ອອກໄປເທສນາສັ່ງສອນປະຊາຊົນ ແລະຖືກຄຣິສຕະຈັກຂົ່ມເຫັງຈັບໄປເຜົາທັງເປັນໂດຍໃນປີ ຄ.ສ. 1401 ຣັດສະພາໄດ້ອອກກົດໝາຍຮຽກວ່າ "ການເຜົາພວກຖືມິຈສາທິຖິ" (De Haeretuco comburendo) ໃຊ້ສິດລັຖບານປະຫານຊີວິດຄົນທີ່ຄຣິສຕະຈັກຖືວ່າໃນສິ່ງຜິດ ພວກລອນລານຈຶ່ງຄ່ອຍໆ ຫາຍສາບສູນໄປໃນກາງຄຣິສຕະວັດທີ່ 15

ບົດທີ່ 5

# ແສງສວ່າງສ່ອງປະກາຍປະເທດອັງກິດ

ພຣະເຈົ້າບໍ່ໄດ້ປ່ອຍໃຫ້ພຣະທັມຂອງພຣະອົງຖືກທຳລາຍຈົນສິ້ນຊາກ ປະຊາຊົນເປັນຈຳນວນຫລວງຫລາຍໃນປະເທດຕ່າງໆ ຂອງຢຸໂຣບໄດ້ຮັບການດົນໃຈຈາກພຣະວິນຍານຂອງພຣະເຈົ້າ ສະແຫວງຫາຄວາມຈິງດັ່ງສົມບັດທີ່ເຊື່ອງຢູ່ເມື່ອໄດ້ໂປຣດນຳພວກເຂົາໄປຍັງພຣະທັມອັນສັກສິດ ທຸກຄົນຕ່າງກໍຍິນດີຮັບແສງສວ່າງແມ່ນຈະຕ້ອງສູນເສັຽອັນໃດກໍຍອມ ເຖິງແມ່ນພວກເຂົາຈະເຫັນທຸກຢ່າງບໍ່ຊັດເຈນແຕ່ກໍສາມາດເຂົ້າໃຈຄວາມຈິງທີ່ຖືກເຊື່ອງໄວ້ມາເປັນເວລານານໄດ້

ເຖິງເວລາແລ້ວ ທີ່ຄວນມອບພຣະຄຳພີແກ່ປະຊາຊົນເປັນພາສາຂອງເຂົາເອງໂລກໄດ້ຜ່ານພົ້ນຄວາມມືດມິດແຫ່ງທ່ຽງຄືນໄປແລ້ວ ແສງອະຣຸນກຳລັງສ່ອງເຂົ້າໄປທົ່ວແຜ່ນດິນ

ໃນສັດຕະວັດທີ່ສິບສີ່ "ດາວຮຸ່ງແຫ່ງການປະຕິຮູບ" ໄດ້ເກີດຂຶ້ນໃນປະເທດອັງກິດ ຈອນ ໄວຄລິບ ຂນະທີ່ສຶກສາຢູ່ໃນວິທະຍາລັຍເປັນຜູ້ມີຄວາມຮ້ອນຮົນ ແລະມີນາມະຮ່ຳຮຽນໜັງສືດ້ວຍຄວາມເປັນຜູ້ມີການສຶກສາດ້ານປັດສະຍາວິນັຍທາງດ້ານສາສນາແລະກົດໝາຍຂອງບ້ານເມືອງ ເພິ່ນຈຶ່ງເປັນຜູ້ທີ່ພ້ອມຈະຮ່ວມຕໍ່ສູ້ຄັ້ງຍິ່ງໃຫຍ່ເພື່ອອິສາຣະພາບຂອງສາສນາແລະປະຊາຊົນ ເພິ່ນມີຄວາມຮູ້ໃນກົດວິນັຍຂອງ ໂຮງ



ມີການບັງຄັບໃຫ້ທຸກຄົນຈະຕ້ອງໄປປະຊຸມນະມັດສະການທີ່ໂບດປະຈຳຣັດ ຖ້າຜູ້ໃດຂັດຂືນຈະຕ້ອງລົງໂທດຫລືຖືກຈຳຄຸກ "ການບັງຄັບຄົນທັງຫລາຍໃຫ້ໄປຮ່ວມນະມັດສະການກັບຄົນທີ່ນັບຖືສາສນາຕ່າງກັນນັ້ນ ວິນລ່ຽມກໍເຫັນວ່າເປັນການລ່ວງລະເມີດສິດທິສ່ວນບຸກຄົນ ການຊຸດລາກຄົນບໍ່ມີສາສນາ ແລະຄົນທີ່ບໍ່ເຕັມໃຈໃຫ້ໄປນະມັດສະການທີ່ໂບດນັ້ນເບິ່ງເໝືອນໜ້າໄວ້ຫລັງຫລອກ ເຮົາບໍ່ຄວນບັງຄັບໃຫ້ຜູ້ນຶ່ງຜູ້ໃດນະມັດສະການພຣະເຈົ້າໂດຍທີ່ເຂົາບໍ່ຍອມ"

ໂຣເຈີ ວິນລ່ຽມໄດ້ຮັບຄວາມເຄົາຣົບນັບຖື ແຕ່ການຮຽກຮ້ອງເຣື່ອງເສຣີພາບໃນການນັບຖືສາສນາບໍ່ສາມາດຈະຕ້ອງອົດທົນຕໍ່ໄປໄດ້ ດັ່ງນັ້ນເພື່ອບໍ່ໃຫ້ຖືກຈັບກຸມເພິ່ນຈຶ່ງຫລົບໜີໄປໃນປ່າທຶບຖ້າມກາງພາຍຸແລະຄວາມໜາວເຢັນຂອງຣະດູໜາວ

ເພິ່ນກ່າວວ່າ "ຕລອດໄລຍະເວລາສິບສີ່ສັປດາຂ້າພະເຈົ້າໄດ້ຮັບຄວາມຍາກລຳບາກເພາະອາກາດໜາວຈັດ ໂດຍບໍ່ຊາບວ່າ ອາຫານຫລືທີ່ນອນນັ້ນໝາຍຄວາມເຖິງອັນໃດ" ແຕ່ "ກາໄດ້ລ້ຽງຂ້າພະເຈົ້າໃນປ່າກັນດານ" ແລະໄດ້ອາສັຍຫລັບນອນກ້ອງຕົ້ນໄມ້ ເພິ່ນເດີນທາງຕໍ່ໄປດ້ວຍຄວາມທຸກຍາກລຳບາກຖ້າມກາງຫິມະແລະປ່າດົບ ຈົນກະທັ່ງເພິ່ນໄດ້ໄປອາສັຍຢູ່ກັບອິນເດັຽແດງເຜົ່ານຶ່ງຊຶ່ງຮັກໃຄ່ແລະໄວ້ວາງໃຈເຂົາຫລາຍ

ວິນລ່ຽມໄດ້ກໍ່ຕັ້ງຣັດແຮກສຳລັບປັດຈຸບັນທີ່ຕະໜັກເຖິງຣັດທີ "ທຸກຄົນຄວນມີເສຣີພາບໃນການນະມັດສະການພຣະເຈົ້າຕາມຄວາມສວ່າງທີ່ເພິ່ນເຫັນວ່າຖືກຕ້ອງ" ຣັດນ້ອຍຂອງເຈີໂຣ ວິນລ່ຽມ ຄືຣັດໂຣດໄອແລນ ມີພົລເມືອງເພີ່ມຂຶ້ນແລະຈະເຣີນກ້າວໜ້າຈົນກະທັ່ງຫລັກການຕ່າງໆ ແລະເສຣີພາບໃນການນັບຖືສາສນາ ຊຶ່ງເປັນຮາກຖານຂອງຣັດນີ້ໄດ້ກາຍເປັນເໝືອນກັບສີລາມູນເອກຂອງສະຫະຣັດອະເມຣິກາໃນເວລາຕໍ່ມາ

## ເອກກະສານແຫ່ງອິສາຣະພາບ

ໃນເອກກະສານປະກາດອິສາຣະພາບຂອງອະເມຣິກາປະກາດວ່າ "ເຮົາຖືວ່າຄວາມຈິງເຫລົ່ານີ້ມີຄວາມຊັດເຈນຢູ່ໃນຕົວເອງ ຄືມະນຸດທຸກຄົນຖືກສ້າງມາໃຫ້ສເມີພາບກັນ ທຸກຄົນໄດ້ຮັບສິດທິຈາກພຣະຜູ້ຊົງສ້າງ ສິດທິເຫລົ່ານີ້ຄືຊີວິດເສຣີພາບ

ໃຫ້ຜູ້ອື່ນ ຫລັກການທີ່ສອນວ່າພຣະເຈົ້າຊົງມອບໝາຍໃຫ້ຄຣິສຕະຈັກມີສິດທິບັງຄັບໃຫ້ມະນຸດນັບຖືສາສນາຕາມທີ່ຄຣິສຕະຈັກເຫັນວ່າດີ ແລະໃຫ້ລົງໂທດພວກ ນອກຮີດນັ້ນ ເປັນຄຳສອນຜິດຂອງສັນຕະປາປາທີ່ຝັງຮາກເລິກ ແມ່ນແຕ່ນັກປະຕິຮູບສາສນາກໍຍັງໜີບໍ່ພົ້ນຈາກບັງຄັບໃຫ້ເຮັດຕາມຄວາມພໍໃຈຂອງໂຣມໄປໄດ້ໝົດ ຄວາມມືດມົນຂອງສັນຕະປາປາທີ່ຄວບຄຸມທົ່ວຄຣິສຕະອານາຈັກຍັງບໍ່ໄດ້ຖືກກຳຈັດໃຫ້ໝົດໄປ

ຄຣິສຕະຈັກປະຈຳຣັດໄດ້ຖືກກໍ່ຕັ້ງຂຶ້ນໂດຍຜູ້ທີ່ເຂົ້າໄປຄອບຄອງດິນແດນໃໝ່ຜູ້ນຳການປົກຄອງໄດ້ຮັບອຳນາດໃຫ້ກຳຈັດພວກນອກຮີດໄດ້ ດັ່ງນັ້ນອຳນາດຂອງບ້ານເມືອງຈຶ່ງຕົກຢູ່ພາຍໃຕ້ຄຣິສຕະຈັກ ວິທີປະຕິບັດເຊັ່ນນີ້ສົ່ງຜົນໃຫ້ເກີດການກົດຂີ່ຂົ່ມເຫງຢ່າງຫລີກລ່ຽງບໍ່ໄດ້

## ໂຣເຈີ ວິນລ່ຽມ

ໂຣເຈີ ວິນລ່ຽມ ໄດ້ເດີນທາງມາຍັງໂລກໃໝ່ ເພື່ອທີ່ຈະໄດ້ນັບຖືສາສນາ ແລະນະມັດສະການພຣະເຈົ້າຢ່າງເສຣີເຊັ່ນດຽວກັບພວກສະແຫວງຫາອິສາຣະພາບໃນການນັບຖືສາສນາກ່ອນເພິ່ນ ແຕ່ສິ່ງທີ່ເພິ່ນມີຄວາມເຫັນແຕກຕ່າງໄປຈາກຄົນເຫລົ່ານັ້ນ ເພິ່ນເຫັນສິ່ງທີ່ຄົນອື່ນຍັງມອງບໍ່ເຫັນ ນັ້ນກໍຄືເສຣີພາບເປັນສິດທິຂອງທຸກຄົນບໍ່ວ່າຈະເປັນຄົນຊາດໃດ ວິນລ່ຽມເປັນຜູ້ທີ່ສະແຫວງຫາຄວາມຈິງດ້ວຍຄວາມມານະ "ເພິ່ນເປັນບຸກຄົນທຳອິດໃນໝູ່ຄຣິສະຕຽນສມັຍໃໝ່ທີ່ຈັດຕັ້ງການປົກຄອງເທິງຫລັກຄວາມເຊື່ອຂອງເສຣີພາບແຫ່ງຄວາມນຶກຄິດ" ເພິ່ນກ່າວວ່າ "ປະຊາຊົນຫລືຜູ້ປົກຄອງຝ່າຍບ້ານເມືອງອາດຕັດສິນໄດ້ວ່າໜ້າທີ່ຂອງມະນຸດຫາກໍ່ປະຕິບັດຕໍ່ກັນນັ້ນຄືອັນໃດ ແຕ່ເມື່ອພວກເຂົາພຍາຍາມຕັ້ງກົດບັງຄັບກ່ຽວກັບໜ້າທີ່ຂອງມະນຸດຫາກໍ່ມີຕໍ່ພຣະເຈົ້າ ພວກເຂົາກໍເຮັດໃນສິ່ງທີ່ບໍ່ຖືກຕ້ອງແລະຈະເປັນສິ່ງທີ່ບໍ່ເໝາະ ເປັນທີ່ແນ່ຊັດແລ້ວວ່າຫາກຝ່າຍທີ່ປົກຄອງບ້ານເມືອງມີອຳນາດ ເພິ່ນອາດຈະປະກາດຄວາມຄິດເຫັນຫລັກຄວາມເຊື່ອຢ່າງນຶ່ງໃນວັນນີ້ ແລະອີກຢ່າງນຶ່ງໃນວັນໜ້າເໝືອນຢ່າງທີ່ພຣະຣາຊາແລະພຣະຣາຊະນີຫລາຍອົງໄດ້ຊົງກະທຳມາແລ້ວໃນປະເທດອັງກິດ ແລະເໝືອນຢ່າງທີ່ສັນຕະປາປາຫລາຍອົງແລະທີ່ປະຊຸມໄດ້ກະທຳມາແລ້ວໃນຄຣິສຕະຈັກໂຣມັນ"



ຮຽນເປັນຢ່າງດີເລີດ ຈຶ່ງເຮັດໃຫ້ເພິ່ນສາມາດເຂົ້າໃຈໃນກົນຍຸທະຂອງຄູບາອາ ຈານທັງຫລາຍໄດ້ເປັນຢ່າງດີ ຄວາມເປັນຜູ້ມີຄວາມຮູ້ກວ້າງຂວາງຂອງເພິ່ນ ເຮັດໃຫ້ເພິ່ນເປັນທີ່ ເຄົາຣົບນັບຖືຂອງມິດສະຫາຍແລະສັດຕຣູທົ່ວໄປ, ສັດຕຣູຂອງເພິ່ນຫລີກລ່ຽງທີ່ຈະໝິ່ນປມາດ ແລະຢັບຢັ້ງການປະຕິຮູບເພາະຄວາມບໍ່ຮູ້ ແລະຄວາມອ່ອນແອຂອງຜູ້ສນັບສນູນຂອງສັດຕຣູເຫລົ່ານັ້ນໄດ້ປາກົດໃຫ້ເຫັນຢ່າງແຈ່ມແຈ້ງ

ຂນະທີ່ໄວຄລິບສຶກສາຢູ່ວິທະຍາລັຍເພິ່ນໄດ້ເລີ່ມສຶກສາພຣະທັມຂອງພຣະເຈົ້າ ກ່ອນໜ້ານີ້ໄວຄລິບມີຄວາມຮູ້ສຶກວ່າເພິ່ນຕ້ອງຮຽນຮູ້ຫລາຍ ແມ່ນວ່າການສຶກສາດ້ານວິທະຍາການຫລືການສັ່ງສອນຂອງຄຣິສຕະຈັກກໍບໍ່ໄດ້ເຮັດໃຫ້ເພິ່ນມີຄວາມພໍໃຈແຕ່ຢ່າງໃດໃນພຣະທັມຂອງພຣະເຈົ້າ ເພິ່ນໄດ້ພຍາຍາມຄົ້ນຫາ ແຕ່ຄົ້ນຫາບໍ່ພົບບັດນີ້ເພິ່ນໄດ້ເຫັນພຣະເຢຊູຜູ້ຊົງຖືກຕັ້ງໄວ້ໃນຖານະທະນາຍຂອງມະນຸດ ເພິ່ນຈຶ່ງຕັດສິນໃຈປະກາດຄວາມຈິງທັງຫລາຍທີ່ໄດ້ຄົ້ນພົບ

ໃນການເລີ່ມງານຂອງເພິ່ນ ໄວຄລິບບໍ່ໄດ້ທຳຕົວເປັນປະຕິປັກຕໍ່ຄຣິສຕະຈັກໂຣມທັນທີ ແຕ່ເມື່ອເຫັນຂໍ້ບົກຜ່ອງຂອງສັນຕະປາປາຫລາຍເທົ່າໃດ ເພິ່ນກໍແຮ່ງເຜີຍແຜ່ຄຳສອນຂອງພຣະຄັມພີຫລາຍຂຶ້ນເທົ່ານັ້ນ ເພິ່ນມອງເຫັນໂຣມລະຖິ້ມພຣະທັມຂອງພຣະເຈົ້າແລ້ວນຳປະເພນີຂອງມະນຸດເຂົ້າມາແທນ ເພິ່ນບໍ່ຢ້ານທີ່ຈະປະນາມບາດຫລວງທັງຫລາຍທີ່ເຮັດພຣະທັມຂອງພຣະເຈົ້າ ແລະຮຽກຮ້ອງໃຫ້ນຳພຣະຄັມພີມາຄືນແກ່ປະຊາຊົນ ເພື່ອໃຫ້ສິດອຳນາດໃນຄຣິສຕະຈັກ ເພິ່ນເປັນນັກເທດທີ່ມີຄວາມສາມາດໂນ້ມນ້າວຈິດໃຈຄົນແລະຊີວິດປະຈຳວັນຂອງເຂົາສະແດງໃຫ້ເຫັນເຖິງຄວາມຈິງທີ່ເພິ່ນເທສນາ ຄວາມຮູ້ທາງດ້ານພຣະຄັມພີ ຄວາມບໍຣິສຸດແຫ່ງຊີວິດຄວາມກ້າຫານຂອງເພິ່ນແລະຄຸນງາມຄວາມດີທີ່ສົມບູນແບບຂອງເພິ່ນເຮັດໃຫ້ຄົນທົ່ວໄປພາກັນຍົກຍ້ອງ ຄົນຈຳນວນຫລວງຫລາຍມອງເຫັນຄວາມຜິດຂອງຄຣິສຕະຈັກໂຣມ ພວກເຂົາຮຽກຮ້ອງໃຫ້ໄດ້ເປີດເຜີຍຄວາມຈິງທີ່ໂຣມັນໄດ້ປົກປິດໄວ້ດົນນານຕາມທີ່ໄວຄລິບນຳມາເປີດເຜີຍ ແຕ່ກໍເຮັດໃຫ້ຜູ້ນຳຂອງສັນຕະປາປາຄຽດແຄ້ນເປັນຢ່າງໜັກໜ່ວງ ເພາະນັກປະຕິຮູບສາສນາຜູ້ນີ້ມີອິດທິພົນເໜືອກວ່າພວກຕົນ

## ຜູ້ຄົ້ນພົບຄວາມຜິດ

ໄວຄລິບເປັນນັກກວດສອບຜູ້ມີໃຈຈິດຈໍ່ ຄົ້ນຫາການເຮັດຜິດທຳນອງຄອງທັມແລະຕໍ່ຕ້ານການແຊກແຊງທີ່ບໍ່ຖືກຕ້ອງຂອງໂຣມ ຂນະທີ່ເພິ່ນດຳລົງຕຳແໜ່ງສາສນາຈານປະຈຳພຣະຣາຊວັງຂອງກະສັດ ເພິ່ນໄດ້ຢືນຢັນຕໍ່ສູ້ການເສັຽຄ່າບັນນາການທີ່ສັນຕະປາປາຮຽກຮ້ອງເອົາພາຣາຊວັງອັງກິດ ການທີ່ສັນຕະປາປາມີອິດທິພົນແລະອຳນາດເໜືອອິດທິພົນຂອງຜູ້ນຳຝ່າຍໂລກນີ້ເປັນສິ່ງທີ່ບໍ່ມີເຫດຜົນແລະ ການສນັບສນູນຈາກພຣະຄັມພີ ພຣະສັນຕະປາປາຈຶ່ງມີຄວາມແຄ້ນເຄືອງໄວຄລິບຫລາຍ ແລະຄຳສອນຂອງເພິ່ນມີອິດທິພົນຕໍ່ຄວາມຄິດຂອງປະຊາຊົນ ຈົນເຮັດໃຫ້ກະສັດແລະບັນດາຂ້າຣາຊບໍຣິພານ ປະຊາຊົນຕ່າງພາກັນປະຕິເສດການສົ່ງບັນນາການໄປໃຫ້

ມີນັກບວດຈຳນວນຫລວງຫລາຍຈາຣຶກໄປທົ່ວປະເທດອັງກິດ ພຣະເຫລົ່ານີ້ໄດ້ທຳລາຍຊື່ສຽງແລະຄວາມຮຸ່ງເຮືອງຂອງຊາດໝົດກ້ຽງ ດ້ວຍການໃຊ້ວິທີທີ່ກຽດຄ້ານແລະອອກບິນທະບາດ ບໍ່ພຽງແຕ່ບຽດບຽນຊັບສິນຂອງປະຊາຊົນເທົ່ານັ້ນ ແຕ່ຍັງເຮັດໃຫ້ການກະທຳນີ້ໄດ້ຮັບການດູຖູກຢຽບຫຍາມໄປດ້ວຍສິລທັມຂອງເຍົາວະຊົນເຊື່ອມໂຊມ ເຍົາວະຊົນຈຳນວນຫລວງຫລາຍຖືກຊັກຈູງໃຫ້ປາວາຣະນາຕົວເປັນນັກບວດ ໂດຍທີ່ບໍ່ໄດ້ຮັບຄວາມເຫັນຊອບແລະການຍິນຍອມຈາກພໍ່ແມ່ ແມ່ນວ່າຄົນເຫລົ່ານັ້ນຍິ່ງໄປກວ່ານັ້ນເຂົາບໍ່ເຂົ້າໃຈຄຳສອນຢ່າງແທ້ຈິງແລະບໍ່ເປັນໄປຕາມຄວາມປະສົງຂອງເຂົາ ຕໍ່ມາລູເຕີຂນານນາມພວກນີ້ວ່າ “ປ່າເຖື່ອນ” “ສະແດງລັກສະນະເຊັ່ນໝາປ່າແລະພວກອະມະນຸດຫລາຍກວ່າທີ່ຈະເປັນຄຣິສະຕຽນແລະມະນຸດ” ການກະທຳເຊັ່ນນີ້ເຮັດໃຫ້ຈິດໃຈເດັກນ້ອຍພອຍກະດ່າງກະເດື່ອງຕໍ່ບິດາມານດາ

ແມ່ນແຕ່ນັກສຶກສາທີ່ສຶກສາຢູ່ໃນມະຫາວິທະຍາລັຍຕ່າງໆ ກໍຖືກຫລອກລວງໃຫ້ເຮັດຕາມຄຳສັ່ງໂດຍນັກບວດເຫລົ່ານີ້ດ້ວຍ ຜູ້ໃດຕິດກັບດັກຂອງພວກເຂົາແລ້ວກໍຫວັງວ່າຈະໄດ້ຮັບການປົດປ່ອຍ ມີບິດາມານດາຫລາຍຄົນທີ່ບໍ່ຍອມສົ່ງລູກເຂົ້າຮຽນໃນມະຫາວິທະຍາລັຍ ໂຮງຮຽນຕ່າງໆຊຸດໂຊມລົງ, ຄວາມບໍ່ຮູ້ໜັງສືເກີດຂຶ້ນໄປທົ່ວ

ສັນຕະປາປາມອບອຳນາດໃຫ້ນັກບວດເຫລົ່ານີ້ຟັງຄຳສາຣະພາບບາບ ແລະລ້າງບາບຊຶ່ງເປັນແຫລ່ງແຫ່ງຄວາມຊົ່ວຮ້າຍ ເພື່ອເພີ່ມຜົນປໂຍດຂອງພວກຕົນ



ຈອນ ໂຣບິນສັນ ສິດຍາພິບານຂອງພວກເຂົາໄດ້ກ່າວຄຳອຳລາແກ່ຄົນທີ່ຈະອົບພະຍົບເຫລົ່ານັ້ນວ່າ ຂ້າພະເຈົ້າຂໍກຳຊັບທ່ານທັງຫລາຍຕໍ່ພຣະພັກຂອງພຣະເຈົ້າແລະຕໍ່ໜ້າເທວະດາຂອງພຣະອົງວ່າທ່ານທັງຫລາຍຈົ່ງເຮັດຕາມຢ່າງຂ້າພະເຈົ້າ ເໝືອນກັບທີ່ຂ້າພະເຈົ້າເຮັດຕາມພຣະຄຣິດ ຖ້າພຣະເຈົ້າຊົງສຳແດງອັນໃດແກ່ເພິ່ນໂດຍຜ່ານທາງຜູ້ຮັບໃຊ້ຄົນໃດກໍຈົ່ງພ້ອມທີ່ຈະຍອມຮັບເໝືອນກັບທີ່ທ່ານໄດ້ຍອມຮັບຄວາມຈິງທີ່ຂ້າພະເຈົ້າໄດ້ສັ່ງສອນມາ ເພາະຂ້າພະເຈົ້າມີຄວາມເຊື່ອໝັ້ນຫລາຍວ່າພຣະເຈົ້າຊົງມີຄວາມຈິງແລະຄວາມສວ່າງອີກຫລວງຫລາຍທີ່ຈະຊົງຕຣັດອອກມາຈາກພຣະທັມຂອງພຣະອົງ”

“ສຳລັບສ່ວນຂອງຂ້າພະເຈົ້າ ຂ້າພະເຈົ້າບໍ່ສາມາດຈະສະແດງຄວາມໂສກເສົ້າ ເມື່ອໄດ້ມອງເຫັນສະພາບຄຣິສຕະຈັກທີ່ມີການປະຕິຮູບທີ່ບໍ່ຍອມເຮັດສິ່ງໃດຫລາຍໄປກວ່າການເປັນເຄື່ອງມືໃນການປະຕິຮູບສາສນາ ລູເຕີບໍ່ສາມາດຮັບຮູ້ສິ່ງທີ່ຫລາຍໄປກວ່າທີ່ລູເຕີໄດ້ຮຽນຮູ້ແລະເຂົ້າໃຈ ເພິ່ນກໍເຫັນແລ້ວວ່າຜູ້ຕິດຕາມຄຳສອນຂອງຄາລວິນ ໄດ້ໝັ້ນໃຈຄຳສອນຂອງຜູ້ຮັບໃຊ້ທີ່ຍິ່ງໃຫຍ່ຂອງພຣະເຈົ້າ ຜູ້ຮັບໃຊ້ເຫລົ່ານີ້ກໍຍັງບໍ່ເຂົ້າໃຈທຸກສິ່ງທຸກຢ່າງ ເຖິງແມ່ນວ່າພວກເຂົາຈະຮ້ອນຮົນແລະສ່ອງສວ່າງໃນສມັຍຂອງເຂົາກໍຕາມ ແຕ່ກໍຫາໄດ້ເຈາະທະລຸເຂົ້າໄປໃນຄຳແນະນຳສັ່ງສອນທັງໝົດຂອງພຣະເຈົ້າບໍ່ ແຕ່ຖ້າພວກເຂົາມີຊີວິດຢູ່ໃນເວລານີ້ກໍຈະເຕັມໃຈຍອມຮັບແສງສວ່າງທີ່ເພີ່ມຫລາຍຂຶ້ນເໝືອນກັບທີ່ໄດ້ຮັບເທື່ອທຳອິດ”

“ຈົ່ງລະນຶກເຖິງຄຳສັນຍາແລະພັນທະສັນຍາທີ່ທ່ານມີຕໍ່ພຣະເຈົ້າແລະຕໍ່ພີ່ນ້ອງ ຈົ່ງຮັບເອົາແສງສວ່າງແລະຄວາມຈິງທຸກຢ່າງຕາມທີ່ໄດ້ຂຽນໄວ້ ແຕ່ຂ້າພະເຈົ້າ ຂໍຮັບທ່ານຈົ່ງລະວັງໃຫ້ດີກ່ອນທີ່ຈະຮັບເອົາຄວາມຈິງໃດໆ ຂໍໃຫ້ທ່ານໄດ້ປຽບທຽບແລະສັ່ງເບິ່ງກັບຂໍ້ອື່ນໆ ໃນພຣະຄັມພີ ເພາະມັນເປັນໄປບໍ່ໄດ້ທີ່ໂລກແຫ່ງຄຣິສະຕຽນ ຈະຮູ້ເຣື່ອງຊ້າກວ່າພວກຄວາມມືດອັນໝາທຶບທີ່ເປັນປະຕິປັກກັບຄຣິສະຕຽນ ຄວາມຮູ້ທີ່ສົມບູນປັດສະຈາກທີ່ຕິກໍຈະບັງເກີດຂຶ້ນທັນທີ”

ຄວາມປາຖນາທີ່ຢາກຈະມີເສຣີພາບໃນຄວາມສຳນຶກຜິດຊອບເປັນແຮງບັນດານໃຈໃຫ້ພວກພິວກຣິນເຂົາຂ້າມທະເລໄປຜະເຊີນກັບຄວາມທຸກຍາກໃນປ່າແລະຊ່ອຍກັນຕັ້ງຊາດທີ່ຍິ່ງໃຫຍ່ ແຕ່ພວກພິວກຣິນເຫລົ່ານີ້ກໍຍັງບໍ່ເຂົ້າໃຈໃນຫລັກການຂອງເສຣີພາບໃນການນັບຖືສາສນາ ທີ່ເຂົາໄດ້ຍອມເສັຽສະລະຊີວິດແລະຍອມທົນທຸກລຳບາກກໍເພື່ອຈະໄດ້ມາຊຶ່ງອິສາຣະພາບຂອງຕົນເອງ ແຕ່ເຂົາຍັງບໍ່ພ້ອມທີ່ຈະແບ່ງປັນ

ຂຶ້ນ ຈຶ່ງມີການສັ່ງຫ້າມການປະຊຸມທາງສາສນາໂດຍບໍ່ໄດ້ຮັບອະນຸຍາດ ຫາກຂັດຄຳສັ່ງຈະຕ້ອງຖືກຂັງຄຸກ ຖືກເນຣະເທດຫລືຖືກປະຫານຊີວິດ

ພວກພິວຣິຕັນ (ກຸ່ມທີ່ຍຶດຖືຄວາມບໍຣິສຸດ) ຖືກຕາມລ່າ ຖືກກົດຂີ່ຂົ່ມເຫງ ຖືກຂັງຄຸກ ເຂົາມອງບໍ່ເຫັນເລີຍວ່າພວກເຂົາຈະມີວັນທີ່ມີຊີວິດດີກວ່ານີ້ຂຶ້ນໄດ້ ບາງຄົນກໍຕັດສິນໃຈຫາທາງລີ້ພັຍໃນປະເທດຮອນແລນແຕ່ກໍຖືກຄົນທີ່ທໍຣະຍົດນຳພວກເຂົາໄປມອບໃຫ້ສັດຕຣູ ດ້ວຍຄວາມພຍາຍາມຢ່າງບໍ່ລົດລະໃນທີ່ສຸດພວກເຂົາກໍໄດ້ຊັຍຊະນະແລະໄດ້ທີ່ອາສັຍເທິງຝັ່ງທະເລຂອງສາທາຣະນາຣັດຮອນແລນ ປະຊາຊົນທີ່ນັ້ນສະແດງຄວາມເປັນມິດຕໍ່ພວກເຂົາເປັນຢ່າງດີ

ພວກເຂົາໄດ້ລະຖິ້ມບ້ານເມືອງແລະອາຊີບການທຳມາຫາກິນໄປເປັນຄົນແປກໜ້າໃນດິນແດນໃໝ່ ແລະຕ້ອງທຳມາຫາລ້ຽງຊີວິດດ້ວຍອາຊີບໃໝ່ຊຶ່ງພວກເຂົາບໍ່ມີຄວາມຮູ້ຄວາມຊຳນານມາກ່ອນເພື່ອຈະໄດ້ມີເງິນສຳລັບຊື້ອາຫານ ແຕ່ພວກເຂົາບໍ່ຍອມສູນເສັຽເວລາໃຫ້ກັບຄວາມກຽດຄ້ານ ທຸກຄົນຂອບຄຸນພຣະເຈົ້າສຳລັບພຣະພອນທີ່ພຣະອົງຊົງປະທານໃຫ້ແລະມີຄວາມຊົມຊື່ນຍິນດີທີ່ໄດ້ຕິດຕໍ່ສົນທະນາຝ່າຍຈິດວິນຍານກັບພຣະເຈົ້າໂດຍບໍ່ມີສິ່ງໃດມາຂວາງກັ້ນ

## ພຣະເຈົ້າຊົງຄວບຄຸມສະຖານະການ

ເມື່ອເບິ່ງເໝືອນວ່າພຣະເຈົ້າຊົງຊີ້ພຣະຫັດໃຫ້ພວກເຂົາຂ້າມທະເລໄປຍັງດິນແດນທີ່ພວກເຂົາອາດຕັ້ງຖິ່ນຖານ ແລະມອບມໍຣະດົກແຫ່ງເສຣີພາບໃນການນັບຖືສາສນາໃຫ້ລູກຫລານຂອງຕົນຕໍ່ໄປ ທຸກຄົນກໍມຸ້ງໜ້າໄປຕາມທາງທີ່ພຣະເຈົ້າຊົງຕຽມໄວ້ໃຫ້ຢ່າງບໍ່ຍໍ້ທໍ້ ການກົດຂີ່ຂົ່ມເຫງແລະການເນຣະເທດໄດ້ເປີດທົນທາງໃຫ້ພວກເຂົາເດີນໄປສູ່ອິສາລະພາບ

ເທື່ອທຳອິດທີ່ພິວຣິຕັນໄດ້ແຍກຕົວອອກຈາກຄຣິສຕະຈັກແຫ່ງອັງກິດນັ້ນ ພວກເຂົາໄດ້ຮວມຕົວກັບເຮັດພັນທະສັນຍາໃນຖານະທີ່ເປັນປະຊາກອນທີ່ມີອິສາລະພາບຂອງພຣະເຈົ້າດັ່ງນີ້ "ເພື່ອຈະຮ່ວມເດີນທາງຂອງພຣະເຈົ້າດ້ວຍກັນຕາມທີ່ພຣະອົງຊົງແຈ້ງໃຫ້ຊາບຫລືຈະຊົງແຈ້ງໃຫ້ຊາບ" ນີ້ຄືຫລັກການທີ່ສຳຄັນຂອງນິກາຍໂປເຕສແຕນ ດ້ວຍຈຸດປະສົງດັ່ງກ່າວ ນັກສະແຫວງຫາອິສາລະພາບ (ພິວກຣິມສ) ທັງຫລາຍທີ່ອອກຈາກປະເທດຮອນແລນ ເພື່ອສະແຫວງຫາຖິ່ນທີ່ອາສັຍໃນໂລກໃໝ່



ນັກບວດພິຊາຈານເຫລົ່ານັ້ນຈຶ່ງພ້ອມສເມີທີ່ຈະອະພັຍໂທດຈົນໝົດເໝືອນກັບເປັນການຂ້າປະຊາຊົນ ແທນທີ່ຈະເປັນຜົນດີ ກັບເປັນການເພີ່ມຄວາມຊົ່ວຮ້າຍຂຶ້ນຢ່າງວ່ອງໄວ, ຊັບສິ່ງຂອງຕ່າງໆ ທີ່ຄວນຈະມອບໃຫ້ຄົນເຈັບ ແລະຄົນຍາກຈົນກັບຕົກໄປຢູ່ໃນມືຂອງພວກນັກບວດຈົນໝົດ ຄວາມຮັ່ງມີຂອງນັກບວດເຫລົ່ານັ້ນເພີ່ມຂຶ້ນເລື້ອຍໆ ທັງຄະລືຫາດ ແລະໂຕະອັນໂອ່ອາດຫລູລາຂອງພວກເຂົາເປັນສິ່ງທີ່ເຮັດໃຫ້ຊາດຕ້ອງອັບຈົນລົງ ກິຈການເຫລົ່ານີ້ດຳເນີນຕໍ່ໄປຢ່າງບໍ່ຢຸດຢັ້ງ ເຂົາຫລອກລວງປະຊາຊົນໃຫ້ມີຄວາມເຊື່ອໃນພິທີກັມທຸກຢ່າງຂອງສາສນາແລະເຊີດຊູກຽດຕິຍົດຂອງສັນຕະປາປາ ບູຊານັກບຸນຕ່າງໆ ແລະການໃຫ້ສິ່ງຂອງແກ່ພວກພຣະແລະການກະທຳທຸກຢ່າງນີ້ບໍ່ມີທາງທີ່ຈະເຮັດໃຫ້ເຂົາຂຶ້ນສູ່ສວັນໄດ້

ໄວຄລິບມອງເຫັນຢ່າງທະລຸປຸໂປ່ງ ຈຶ່ງປະນາມຮາກເຫງົ້າຂອງຄວາມຊົ່ວຮ້າຍນີ້ ປະກາດໃຫ້ປະຊາຊົນຮູ້ວ່າວິທີການເຊັ່ນນີ້ເປັນສິ່ງທີ່ບໍ່ຖືກ ຕ້ອງກຳຈັດໄປໃຫ້ໝົດ ການອະພິປາຍໂຕ້ຕອບບັນຫາ ແລະການຄົ້ນຄ້ວາຫາຂໍ້ເທດຈິງເຮັດໃຫ້ເກີດການຕື່ນຕົວເຮັດໃຫ້ຫລາຍຄົນມີຂໍ້ສົງສັຍບໍ່ແນ່ໃຈວ່າຄວນຈະຂໍການອະພັຍບາບຈາກພຣະເຈົ້າຫລືວ່າຈາກສັນຕະປາປາແຫ່ງກຸງໂຣມ ບາງຄົນກ່າວວ່າ "ພວກພຣະແລະນັກເທດແຫ່ງກຸງໂຣມເກາະກິນພວກເຂົາເໝືອນກັບໂຣກມະເຮັງ ພຣະເຈົ້າຕ້ອງຊ່ອຍເຫລືອເຮົາຫາບໍ່ແລ້ວປະຊາຊົນຈະຕ້ອງພິນາດກັ້ງງ" ບັນດາພຣະທີ່ອອກຂໍຄວາມຊ່ອຍເຫລືອອ້າງວ່າພວກຕົນເຮັດຕາມແບບຢ່າງຂອງພຣະຜູ້ຊ່ອຍໃຫ້ລອດ ແລະກ່າວວ່າພຣະເຢຊູແລະອັຄສາວົກຂອງພຣະອົງໄດ້ເພິ່ງພາອາສັຍຄວາມເມດຕາຈາກປະຊາຊົນ ແລະຄຳອ້າງນີ້ກໍເປັນສາຍເຫດນຶ່ງທີ່ເຮັດໃຫ້ປະຊາຊົນພຍາຍາມຄົ້ນຫາຄວາມຈິງດ້ວຍຕົນເອງ

ໄວຄລິບຈຶ່ງເລີ່ມຂຽນແລະພິມໃບປິວຕໍ່ຕ້ານບັນດາພຣະທີ່ເລ່ລ່ອນ ພິຊາຈານເຫລົ່ານັ້ນ ເພື່ອຊັກຈູງໃຫ້ປະຊາຊົນຫັນມາສົນໃຈໃນພຣະຄັມພີ ແລະພຣະອົງຜູ້ຊົງເປັນຜູ້ປະພັນ ເພາະບໍ່ມີວິທີໃດແລ້ວທີ່ຈະໂຄ່ນອົງກອນທີ່ມີໂຄງສ້າງໃຫຍ່ໂຕມະຫຶມາໄດ້ ເນື່ອງຈາກປະຊາຊົນນັບເປັນລ້ານພາກັນຍົກຍ້ອງ ແລະຕົກເປັນທາດຂອງອົງກອນນີ້ມາດົນນານ

ໄວຄລິບໄດ້ຮຽກຮ້ອງໃຫ້ປົກຄອງສິດທິຂອງກະສັດແຫ່ງອັງກິດຕໍ່ຕ້ານການລ່ວງລ້ຳຂອງໂຣມ ເພິ່ນຈຶ່ງໄດ້ຮັບການແຕ່ງໃຫ້ເປັນອັຄຣາຊທູດປະຈຳເນເທີແລນທີ່ນີ້ເພິ່ນຖືກນຳພາໃຫ້ຮູ້ຈັກກັບພຣະສົງຈາກຝຣັ່ງເສດ ອິຕະລີ່ ແລະສະເປນ ແລະໄດ້ມີໂອກາດເຫັນເບື້ອງຫລັງພາບຕ່າງໆ ທີ່ຖືກເກັບຊ້ອນຈາກເພິ່ນໃນປະເທດອັງກິດ ເນື່ອງຈາກການທີ່ໄດ້ເປັນຕົວແທນເພື່ອໄປເຮັດຄວາມສຳພັນກັບສຳນັກສັນຕະປາປານີ້ເອງ ເຮັດໃຫ້ໄວຄລິບຮຽນຮູ້ເຖິງທາດແທ້ຂອງພວກນອກຮີດເຫລົ່ານີ້ ເມື່ອກັບໄປປະເທດອັງກິດ ເພິ່ນໄດ້ທົບທວນຄຳສອນທີ່ເຄີຍເມື່ອກ່ອນຂອງຕົນດ້ວຍຄວາມກະຕືລືລົ້ນແລະປະກາດວ່າຄວາມເຢີ່ຍິ່ງໂປ້ປົດຫລອກລວງກໍຄືພຣະເຈົ້າຂອງຄຣິສຕະຈັກໂຣມ

ຫລັງຈາກທີ່ເດີນກັບປະເທດອັງກິດ ໄວຄລິບໄດ້ຮັບພຣະຣາຊອົງການຈາກກະສັດໃຫ້ໄປທີ່ຣັດເຕີເວີດ ການກະທຳສິ່ງນີ້ສ້າງຄວາມບໍ່ພໍໃຈແກ່ຄະນະສົງເພາະການເວົ້າຢ່າງເປີດເຜີຍຂອງເພິ່ນ ອິດທິພົນຂອງໄວຄລິບສ້າງຄວາມໝັ້ນຄົງໃຫ້ແກ່ຄວາມເຊື່ອຂອງປະເທດຊາດ

ສັນຕະປາປາເລີ່ມຄຳລາມຕໍ່ຕ້ານເພິ່ນ ພຣະຣາຊອົງການຂອງສັນຕະປາປາສາມສະບັບຖືກສົ່ງໄປລະງັບຜູ້ຖືກຮຽກວ່າຄຣູຜູ້ສອນ “ນອກຮີດ” ພຣະຣາຊອົງການຂອງສັນຕະປາປາທີ່ຖືກສົ່ງໄປປະເທດອັງກິດ ເປັນຄຳສັ່ງໃຫ້ຈຳຄຸກຄົນນອກຮີດເປັນທີ່ປະຈັກແນ່ນອນວ່າອີກບໍ່ດົນໄວຄລິບຈະຕ້ອງຕົກຢູ່ໃນອັນຕຣາຍຈາກການແກ້ແຄ້ນຂອງໂຣມ ແຕ່ພຣະຜູ້ຊົງຕຣັດແກ່ບັນພະບຸຣຸດໃນອະດີດຕະການວ່າ “ຢ່າສູ່ຢ້ານເຮົາເປັນໂລ່ຂອງເຈົ້າ” (ປະຖົມມະການ 15:7) ພຣະອົງຊົງຍື່ນພຣະຫັດປົກປ້ອງຜູ້ຮັບໃຊ້ຂອງພຣະອົງ ແທນທີ່ຄວາມຕາຍຈະເກີດຂຶ້ນແກ່ນັກປະຕິຮູບ ແຕ່ກັບເປັນພຣະສັນຕະປາປາຜູ້ຊຶ່ງອອກກົດສະຖີກາໃຫ້ທຳລາຍນັກປະຕິຮູບສາສນາຕ້ອງກັບສິ້ນພຣະຊົນເອງ

ຫລັງຈາກການສິ້ນພຣະຊົນຂອງສັນຕະປາປາເກຣກໍຣີທີ່ສິບເອດກໍມີການເລືອກຕັ້ງຜູ້ດຳລົງຕຳແໜ່ງສັນຕະປາປາສອງອົງ ແຕ່ລະອົງຕ່າງກໍຫາສຽງຜູ້ສນັບສນູນຍາຊິງໄຊຊຶ່ງກັນແລະກັນມີການໃຊ້ກຳລັງທຳລາຍຄູ່ປໍລະປັກຂອງຕົນຢ່າງໂຫດຮ້າຍແລະສັນຍາທີ່ຈະໃຫ້ບຳເໜັດໃນສວັນແກ່ຜູ້ສນັບສນູນການຕໍ່ສູ້ຈົນເກີດການແຕກແຍກ



ບົດທີ່ 16

# ສະແຫວງຫາອິເສຣີພາບໃນໂລກໃໝ່

ແມ່ນວ່າອຳນາດແລະຫລັກຄວາມເຊື່ອຂອງໂຣມຖືກປະຕິເສດ ແຕ່ພິທີກັມບາງຢ່າງຂອງຄຣິສຕະຈັກໄດ້ຖືກນຳມາຮວມເຂົ້າກັບການນະມັດສະການຂອງຄຣິສຕະຈັກແຫ່ງອັງກິດ ໂດຍອ້າງວ່າສິ່ງໃດທີ່ພຣະຄັມພີບໍ່ໄດ້ຫ້າມສິ່ງນັ້ນກໍບໍ່ແມ່ນເປັນສິ່ງທີ່ຊົ່ວຮ້າຍ ການກະທຳເຊັ່ນນີ້ກໍເພື່ອລົດຊ່ອງວ່າງທີ່ແຍກເອົາຄຣິສຕະຈັກປະຕິຮູບອອກຈາກໂຣມໃຫ້ແຄບເຂົ້າມາ ຝ່າຍໂຣມມັນກໍຈຶ່ງສນັບສນູນໃຫ້ຝ່າຍໂປເຕສແຕນມີການຍອມຮັບ ແຕ່ອີກກຸ່ມນຶ່ງບໍ່ຄິດເຊັ່ນນັ້ນເພາະເຂົາຖືວ່າເຄົານິບທັມນຽມເຫລົ່ານີ້ເປັນເໝືອນສັນຍາລັກແຫ່ງການເປັນທາດທີ່ທຸກຄົນໄດ້ຫລຸດພົ້ນມາແລ້ວ ແລະພວກເຂົາບໍ່ສາມາດກັບໄປອີກ ພວກເຂົາໃຫ້ເຫດຜົນວ່າພຣະເຈົ້າຊົງຕັ້ງລະບຽບການນະມັດສະການໄວ້ໃນພຣະທັມຂອງພຣະອົງແລ້ວ ມະນຸດບໍ່ມີສິດທີ່ຈະເພີ່ມເຕີມຫລືລົດສິ່ງນຶ່ງສິ່ງໃດອອກຈາກສິ່ງເຫລົ່ານີ້ ທາງໂຣມເລີ່ມນຳສິ່ງທີ່ພຣະເຈົ້າບໍ່ໄດ້ຫ້າມເຂົ້າມາຮວມໄວ້ແລະລະຖິ້ມສິ່ງທີ່ພຣະເຈົ້າຊົງບັນຊາໄວ້ຢ່າງຊັດເຈນ

ມີຄົນເປັນຈຳນວນຫລວງຫລາຍຖືວ່າເຄົານິບທັມນຽມແລະພິທີກັມຕ່າງໆຂອງຄຣິສຕະຈັກແຫ່ງອັງກິດເປັນເໝືອນອະນຸສອນແຫ່ງການກາບໄວ້ຮູບເຄົາຣົບ ຄົນເຫລົ່ານັ້ນຈຶ່ງບໍ່ສາມາດເຂົ້າຮ່ວມນະມັດສະການດ້ວຍ ແຕ່ທາງຄຣິສຕະຈັກຊຶ່ງໄດ້ຮັບການສນັບສນູນຈາກຜູ້ມີອຳນາດປົກຄອງບ້ານເມືອງ ບໍ່ຍອມໃຫ້ມີຄວາມຂັດແຍ່ງເກີດ

ນຶ່ງໃນສມັຍເລີ່ມຕົ້ນໄດ້ເວົ້າວ່າ "ພຣະຄັມພີເປັນເໝືອນໜ້າທົ່ງຕີເຫລັກທີ່ເຮັດໃຫ້ຄ້ອນລ່ອນໄປຫລາຍອັນ"

ສິ່ງໃດທີ່ຖືກສ້າງຂຶ້ນດ້ວຍອຳນາດຂອງມະນຸດຈະມີອັນຜ່າຍແພ້ ແຕ່ສິ່ງໃດທີ່ຕັ້ງຢູ່ເທິງຮາກຖານສີລາແຫ່ງພຣະທັມຂອງພຣະເຈົ້າຈະຢັ່ງຢືນຢູ່ຕລອດໄປເປັນນິດ

ໃນຂນະທີ່ຄຣິສຕະຈັກເຕັມໄປດ້ວຍມົນທິນ ຄວາມເຊື່ອທີ່ແທ້ຈິງສູນຫາຍໄປຄົງເຫລືອແຕ່ພິທີກັມອັນບໍ່ສາມາດນຳປະຊາຊົນໄປສູ່ຄວາມຮູ້ໃນພຣະເຈົ້າກຳລັງເກີດຂຶ້ນໃນປະເທດອັງກິດ ກໍໄດ້ມີຄຣິສະຕຽນກຸ່ມນຶ່ງໃນຝ່າຍໂປເຕສແຕນ ເປັນຊົນຊັ້ນພວກພໍ່ຄ້າແລະນັກທຸຣະກິດທີ່ບໍ່ພໍໃຈໃນສະພາບຂອງສາສນາທີ່ພຣະນາງເຈົ້າເອລີຊາເບັດທີ່ 1 ເປັນຜູ້ອຸປະຖັມ ຄົນກຸ່ມນີ້ຈຶ່ງສະແຫວງຫາການຊຳຣະໃຫ້ສາສນາມີຄວາມຖືກຕ້ອງຫລາຍຂຶ້ນ ພວກເຂົາຕໍ່ຕ້ານການໃຊ້ເຄື່ອງປະດັບການຕົກແຕ່ງໂບດໃຫ້ສວຍງາມ ການແຕ່ງຕົວຂອງຜູ້ນຳດ້ານສາສນາດ້ວຍເສື້ອຜ້າຢ່າງດີຕາມຕຳແໜ່ງ ຄຣິສະຕຽນກຸ່ມນີ້ຮຽກຕົວເອງວ່າ ພິວຣິຕັນ (Puritans)

ໃນປີ ຄ.ສ. 1570 (ພ.ສ. 2104) ກົງກັບສມັຍຂອງສົມເດັດພຣະມະຫາຈັກກະພັດແຫ່ງກຸງສີອະຍຸທຍາ ພວກພິວຣິຕັນໄດ້ໂຈມຕີການປົກຄອງຂອງຄຣິສຕະຈັກແບບສັງຄາທິປະໄຕ ແລະໄດ້ອົບພະຍົບໄປຢູ່ໃນດິນແດນໃໝ່ໃນອະເມຣິກາຈົນສາມາດຕັ້ງຮາກຖານໄດ້ທີ່ດິນແດນແຫ່ງນີ້ ເພື່ອຈະໄດ້ມີສິດທິເສຣີພາບໃນການຖືສາສນາ ກຸ່ມນີ້ໄດ້ສລາຍໄປເມື່ອປີ ຄ.ສ. 1660

ອະເມຣິກາເປັນດິນແດນໃໝ່ທີ່ປະຊາຊົນໜີຈາກການກົດຂີ່ຂົ່ມເຫງພາກັນອົບພະຍົບໄປຢູ່ ໂຣເຈີ ວິນລ່ຽມ (ຄ.ສ. 1640-1683) ຜູ້ໄດ້ຊື່ວ່າເປັນຜູ້ມີຊັຍຊະນະການຖືກກົດຂີ່ຂົ່ມເຫງທາງສາສນາ ເຂົາໄດ້ຂີ່ເຮືອໄປຍັງອະເມຣິກາເພື່ອສະແຫວງຫາເສຣີພາບໃນການນັບຖືສາສນາເມື່ອປີ ຄ.ສ. 1630 (ພ.ສ. 2173) ຕົງກັບສມັຍຂອງສົມເດັດພຣະເຈົ້າປາສາດທອງແຫ່ງກຸງສີອາຍຸທະຍາ ພາຍຫລັງທີ່ເສັຽກຸງຄັ້ງທີ່ນຶ່ງແກ່ພະມ້າໄດ້ 61 ປີ

ໂຣເຈີ ວິນລ່ຽມໄດ້ຕັ້ງຄຣິສຕະຈັກທີ 1 ແບັບຕິສ ແຫ່ງທຳອິດຂອງອະເມຣິກາຂຶ້ນ ຕໍ່ມາເມືອງທີ່ເຂົາໄປຢູ່ກໍໄດ້ຊື່ວ່າ ໂຣດໄອແລນ

ອະເມຣິກາຈຶ່ງເປັນເມືອງລີ້ພັຍທີ່ພຣະເຈົ້າຈັດຕຽມໄວ້ເພື່ອຄົນທີ່ສະແຫວງຫາອິດເສຣີພາບໃນການນັບຖືສາສນາ



ຕ່າງຝ່າຍຕ່າງກໍພຍາຍາມໂຈມຕີກັນຢ່າງສຸດຄວາມສາມາດ ຈຶ່ງເຮັດໄວຄລິບມີເວລາພັກຜ່ອນໄປໄດ້ລະຍະນຶ່ງ

ຄວາມລ້າວສານຊຶ່ງເປັນສາຍເຫດໃຫ້ເກີດການທະເລາະວິວາດແລະຄວາມເຊື່ອມຊາມຄັ້ງນີ້ ເປັນການຕຽມທາງໃຫ້ກັບການປະຕິຮູບສາສນາເປັນຢ່າງດີ ເພາະເຮັດໃຫ້ປະຊາຊົນເບິ່ງເຫັນທາດແທ້ຂອງສັນຕະປາປາວ່າເປັນຢ່າງໃດ ໄວຄລິບໄດ້ຊັກຊວນໃຫ້ປະຊົນໃຫ້ພິຈາຣະນາຄຳເວົ້າຂອງສອງຜູ້ຊິງໄຊໃນຕຳແໜ່ງສັນຕະປາປາວ່າພຣະທັງສອງອົງບໍ່ໄດ້ກ່າວຄວາມຈິງໃນການປະນາມແຕ່ລະຝ່າຍວ່າເປັນປໍລະປັກຂອງພຣະຄຣິດ

ເມື່ອໄວຄລິບຕັດສິນໃຈທີ່ຈະນຳແສງສວ່າງແຫ່ງພຣະທັມໄປສູ່ທຸກສ່ວນຂອງປະເທດອັງກິດ ເພິ່ນໄດ້ຮວບຮວມນັກເທດທີ່ມີຊີວິດຢ່າງສັນໂດດແລະອຸທິດຕົນຢ່າງແທ້ຈິງ ມີຄວາມຮັກໃນຄວາມຈິງແລະປາຖນາທີ່ຈະແບ່ງປັນຄວາມຈິງແກ່ຜູ້ອື່ນ ຄົນເຫລົ່ານັ້ນໄດ້ສັ່ງສອນຕາມຕລາດ ຕາມຖນົນຫົນທາງຂອງເມືອງໃຫຍ່ໆ ແລະຕາມຊົນນະບົດຊ່ອຍເຫລືອຄົນຊະຣາ ຄົນເຈັບປ່ວຍຄົນຍາກຈົນແລະເປີດໃຫ້ເຂົາໄດ້ຮູ້ຈັກຂ່າວດີແຫ່ງພຣະຄຸນຂອງພຣະອົງ

ອ໊ອກຟ໊ອດ ໄວຄລິບໄດ້ເທສນາພຣະທັມຂອງພຣະເຈົ້າໃນຫ້ອງປະຊຸມຂອງມະຫາວິຍາລັຍ ເພິ່ນໄດ້ຮັບການນານນາມວ່າມະຫາບັນດິດຜູ້ປະກາດຂ່າວປະເສີດແຕ່ສິ່ງທີ່ສຳຄັນທີ່ສຸດໃນຊີວິດຂອງເພິ່ນຄືການແປພຣະຄັມພີເປັນພາສາອັງກິດເປັນວິທີການນຶ່ງທີ່ຈະເຮັດໃຫ້ທຸກຄົນໃນປະເທດອັງກິດໄດ້ອ່ານພຣະຣາຊກິດອັນອັສຈັນຂອງພຣະເຈົ້າ

## ໄວຄລິບປ່ວຍໜັກ

ແຕ່ທັນໃດນັ້ນງານຂອງເພິ່ນກໍຕ້ອງຢຸດໄປ ເຖິງແມ່ນຈະມີອາຍຸຍັງບໍ່ເຖິງຫົກສິບປີ ແຕ່ການຕາກຕຳທຳງານການສຶກສາແລະການຖືກໂຈມຕີຈາກສັດຕຣູຢ່າງບໍ່ຢຸດຢ່ອນຈຶ່ງເປັນສາຍເຫດເຮັດໃຫ້ເພິ່ນອ່ອນແອເບິ່ງໜ້າຕາແກ່ລົງໄປ ເພິ່ນຖືກໂຣກ

ພັຍອັນຕຣາຍຄຸກຄາມ ບັນດາພຣະ ຄິດວ່າໄວຄລິບຄົງຈະກັບໃຈຈາກກະທຳຊົ່ວຮ້າຍຕໍ່ຄຣິສຕະຈັກແນ່ນອນ ດັ່ງນັ້ນນັກບວດພິຊາຈານເຫລົ່ານັ້ນຈຶ່ງຮີບໄປຢ້ຽມໄວຄລິບເພື່ອທີ່ຈະຟັງຄຳສາຣະພາບບາບຈາກເພິ່ນ ຈຶ່ງພາກັນເວົ້າວ່າ "ເຈົ້າຕ້ອງ ຕາຍເພາະປາກຂອງເຈົ້າ" ເກີດຈາກຄວາມຜິດຂອງເຈົ້າເອງຂໍໃຫ້ຖອນຄຳເວົ້າໃສ່ຮ້າຍພວກເຮົາຕໍ່ໜ້າສາດງວນີ້"

ນັກປະຕິຮູບຟັງຢ່າງງຽບໆ ຫລັງຈາກນັ້ນເພິ່ນກໍຂໍໃຫ້ຄົນທີ່ຢູ່ຂ້າງໆ ພະຍຸງຕົວໃຫ້ລຸກຂຶ້ນນັ່ງເທິງຕຽງຈ້ອງແນມໄປຍັງນັກບວດເຫລົ່ານັ້ນ ເພິ່ນເວົ້າດ້ວຍນ້ຳສຽງທີ່ໝັ້ນຄົງແລະໜັກແໜ້ນ ສຽງທີ່ເຮັດໃຫ້ພວກເຂົາຢ້ານຈົນຕົວສັ່ນເມື່ອໄດ້ຍິນ "ຂ້າຈະບໍ່ຕາຍແຕ່ຈະມີຊີວິດຢູ່ຕໍ່ໄປ ແລະກ່າວປະນາມການກະທຳອັນຊົ່ວຮ້າຍຂອງພວກນັກບວດພິຊາຈານອີກ" ຄຳເວົ້າເຮັດໃຫ້ນັກບວດເຫລົ່ານັ້ນເຖິງກັບຕະລຶງ ແລະອັບອາຍເປັນຢ່າງຫລວງຫລາຍຈົນຕ້ອງຮີບອອກຈາກຫ້ອງໄປ

ໄວຄລິບອາສັຍຢູ່ໃນຄວາມຄູ້ມຄອງຂອງຜູ້ທີ່ມີອາວຸດອັນຊົງພະລັງທີ່ສຸດໃນການຕໍ່ສູ້ກັບໂຣມ ນັ້ນຄື ພຣະຄັມພີ ຕົວແທນແຫ່ງສວັນທີ່ໄດ້ຮັບການມອບໝາຍໃຫ້ປົດປ່ອຍ ເພື່ອຊີ້ແນວທາງແລະການປະກາດຂ່າວແກ່ປະຊາຊົນ ໄວຄລິບຮູ້ດີວ່າເພິ່ນມີໂອກາດທຳງານອີກບໍ່ເທົ່າປີເທົ່ານັ້ນ ເພິ່ນມອງເຫັນສັດຕຣູທີ່ຕ້ອງຕໍ່ສູ້ ແຕ່ເພິ່ນກໍຮັບການໜູນໃຈຈາກພຣະທັມຂອງພຣະເຈົ້າ ຈຶ່ງເດີນໜ້າຕໍ່ໄປຢ່າງບໍ່ທໍ້ຖອຍດ້ວຍຄວາມເປັນຄົນທີ່ສະຫລຽວສະຫລາດຫລັກແຫລມ ແລະມີປະສົບປະການຫລາຍພຣະເຈົ້າໄດ້ຊົງຕຽມເພິ່ນໄວ້ເພື່ອງານນີ້ ຊຶ່ງເປັນງານທີ່ຍິ່ງໃຫຍ່ທີ່ສຸດນັກປະຕິຮູບຜູ້ນີ້ພຳນັກຢູ່ໃນທີ່ພັກຂອງເພິ່ນໃນຣັດເຕີເວີດ ບໍ່ສົນໃຈໃນອັນຕຣາຍພາຍນອກໃຊ້ຄວາມຂຍັນໝັ້ນພຽນຮັບພາລະທີ່ເພິ່ນໄດ້ເລືອກທຳ

ໃນທີ່ສຸດງານແປພຣະຄັມພີເປັນພາສາອັງກິດເທື່ອທຳອິດກໍສຳເຣັດ ນັກປະຕິຮູບນີ້ໄດ້ນຳເອົາແສງສວ່າງມອບໃຫ້ແກ່ຊາວອັງກິດທີ່ຈະບໍ່ມີທາງດັບໄດ້ ເພິ່ນໄດ້ທຳລາຍໂຊ້ຕ່ວນແຫ່ງຄວາມບໍ່ຮູ້ທັງຫລາຍແລະໄດ້ປົດປ່ອຍໃຫ້ພົ້ນຈາກການເປັນທາດຂອງອະວິຊາແລະຍົກລະດັບຂອງປະເທດຂອງຕົນເອງໃຫ້ສູງຂຶ້ນບໍ່ມີຊັຍຊະນະ ຄັ້ງໃດໃນສນາມຮົບຈະເຮັດໄດ້ດີກວ່ານີ້



ກ່ຽວກັບ "ພະຍານທັງສອງ" (ພຣະຄັມພີພັນທະສັນຍາເກົ່າແລະພັນທະສັນຍາໃໝ່) ນັ້ນຜູ້ປະກາດພຣະທັມໄດ້ປະກາດຕໍ່ໄປວ່າ "ຄົນເຫລົ່ານັ້ນໄດ້ຍິນພຣະສຸຣະສຽງດັ່ງມາຈາກສວັນ ຊົງກ່າວແກ່ເຂົາວ່າ "ຈົ່ງຂຶ້ນມາທີ່ນີ້" ແລະພວກສັດຕຣູກໍໄດ້ເຫັນເຂົາຂຶ້ນເມືອໃນເມກເຂົ້າສູ່ສວັນ" (ພຣະນິມິດ 11:12) "ພະຍານທັງສອງຂອງພຣະເຈົ້າ" ໄດ້ຮັບກຽດຈາກປະຊາຊົນຊາວຝຣັ່ງເສດຢ່າງບໍ່ເຄີຍມີມາກ່ອນ ໃນປີ ຄ.ສ. 1804 ໄດ້ມີການຈັດຕັ້ງສາມາຄົມພຣະຄຣິສຕະທັມຂອງອັງກິດແລະຕ່າງປະເທດຂຶ້ນຕໍ່ມາກໍມີການຈັດຕັ້ງສາມາຄົມພຣະຄຣິສຕະທັມຂຶ້ນ ຕາມປະເທດຕ່າງໆ ໃນເອີຣົບ (ຢຸໂຣບ) ໃນປີ ຄ.ສ. 1816 ມີການຈັດຕັ້ງສາມາຄົມພຣະຄຣິສຕະທັມຂອງອະເມຣິກາຂຶ້ນ ມີການແປພຣະຄັມພີອອກເປັນພາສາຕ່າງໆ ຫລາຍຮ້ອຍພາສາ (ເບິ່ງພາກຜນວກ)

ກ່ອນປີ ຄ.ສ. 1792 ມີການສົນໃຈສົ່ງຜູ້ເຜີຍແຜ່ສາສນາໄປຕ່າງປະເທດບໍ່ຫລາຍປານໃດ ແຕ່ປາຍສັດຕະວັດທີ່ 18 ມີການປ່ຽນແປງອັນຍິ່ງໃຫຍ່ເກີດຂຶ້ນ ປະຊາຊົນບໍ່ມີຄວາມພໍໃຈໃນລັດທິເຫດຜົນແລະຕະໜັກເຖິງຄວາມສຳຄັນໃນການສຳແດງຂອງພຣະເຈົ້າແລະປະຕິບັດຕາມສາສນາຢ່າງເຄັ່ງຄັດ ຕັ້ງແຕ່ບັດນີ້ເປັນຕົ້ນມາການສົ່ງຜູ້ເຜີຍແຜ່ສາສນາອອກໄປປະກາດຂ່າວປະເສີດຍັງຕ່າງປະເທດກໍຈະເຣີນກ້າວໜ້າ (ເບິ່ງ ພາກຜນວກ)

ຄວາມຈະເຣີນກ້າວໜ້າທາງດ້ານການພິມເຮັດໃຫ້ມີການພິມພຣະຄັມພີອອກຈຳໜ່າຍໄດ້ຢ່າງວ່ອງໄວທັນໃຈຫລາຍຂຶ້ນ ເມື່ອອະຄະຕິຂອງບັນພະບຸຣຸດແລະຄວາມຍິ່ງຍະໂສຂອງຊາດໄດ້ຖືກທຳລາຍລົງ ແລະເມື່ອສັນຕະປາປາແຫ່ງໂຣມໄດ້ສູນເສັຽອຳນາດທາງການເມືອງໄປ ກໍເທົ່າກັບເປີດໂອກາດໃຫ້ພຣະທັມຂອງພຣະເຈົ້າເຂົ້າສູ່ປະເທດຕ່າງໆ ໄດ້ສະດວກຫລາຍຂຶ້ນ ຍັງຜົນໃຫ້ມີການນຳພຣະຄັມພີໄປຍັງທຸກສ່ວນຂອງໂລກ

ວອນແຕຜູ້ບໍ່ເຊື່ອຖືໃນສາສນາເຄີຍເວົ້າວ່າ "ຂ້າພະເຈົ້າເບື່ອໜ່າຍທີ່ຈະເຊື່ອຟັງປະຊາຊົນເວົ້າເຖິງຊາຍສິບສອງຄົນກໍ່ຕັ້ງຄຣິສຕະສາສນາເຫລືອເກີນຂ້າພະເຈົ້າຈະພິສູດໃຫ້ເຫັນວ່າຊາຍຄົນດຽວກໍສາມາດທຳລາຍສາສນາໄດ້" ຄົນນັບລ້ານໄດ້ຊ່ອຍກັນທຳລາຍລ້າງພຣະຄັມພີ ແຕ່ພວກເຂົາກໍບໍ່ສາມາດທຳລາຍໄດ້ ເມື່ອສມັຍຂອງວອນແຕພຣະຄັມພີກໍມີພຽງບໍ່ເທົ່າໃດຫົວແຕ່ຕອນນີ້ມີນັບເປັນລ້ານຫົວ ນັກປະຕິຮູບສາສນາຄົນ

ພຣະເຈົ້າ ກໍຄວນຈະອ່ານໜັງສືປະຫວັດສາດກ່ຽວກັບສາສນາຂອງຊົນຊາດທັງຫລາຍເປັນອຸທາຫອນ

ເມື່ອຊາຕານໃຊ້ຄຣິສຕະຈັກໂຣມັນເປັນເຄື່ອງຊັກຈູງມະນຸດບໍ່ໃຫ້ຍອມເຊື່ອຟັງພຣະເຈົ້າ ງານຂອງມັນລີ້ຊົ້ນຢູ່ໃນສິ່ງແປກປອມຈົນບໍ່ມີໃຜມອງເຫັນຫລຸ່ມຂອງມັນ ແຕ່ພຣະວິນຍານບໍຣິສຸດໄດ້ຂັດຂວາງງານຂອງມັນ ມັນຈຶ່ງເຮັດບໍ່ໄດ້ຮັບຜົນສຳເຣັດສົມບູນຕາມທີ່ໄດ້ຕັ້ງຈຸດມູ້ງໝາຍໄວ້ ປະຊາຊົນບໍ່ໄດ້ຄົ້ນຫາເບິ່ງວ່າອັນໃດເປັນສາຍເຫດນຳຄວາມທຸກຍາກມາສູ່ເຂົາ ແຕ່ເມື່ອເກີດມີການປະຕິຫວັດນັ້ນ ທີ່ປະຊຸມຂອງຄະນະຣັດຖະບານໄດ້ລະຖິ້ມພຣະບັນຍັດຂອງພຣະເຈົ້າຢ່າງເປີດເຜີຍ ໃນຍຸກຂອງທອນຣາຊພາຍຫລັງການປະຕິຫວັດໃນຝຣັ່ງເສດ ທຸກຄົນໄດ້ເຫັນສາຍເຫດແລະຜົນລັບທີ່ອອກມາຢ່າງແຈ່ມແຈ້ງ

ຜົນຂອງການລ່ວງລະເມີດພຣະບັນຍັດທີ່ຍຸດຕິທັມແລະຊອບທັມກໍຄືຄວາມພິນາດພຣະວິນຍານບໍຣິສຸດຂອງພຣະເຈົ້າ ທີ່ເຄີຍຊ່ອຍພວກເຂົາຕໍ່ສູ້ກັບອຳນາດອັນໂຫດຮ້າຍຂອງຊາຕານທີ່ຖືກແຍກອອກໄປຈາກພວກເຂົາຈົນໝົດ ຜູ້ທີ່ຊອບເຫັນຄວາມທຸກຍາກຂອງມະນຸດກໍໄດ້ຮັບອະນຸຍາດໃຫ້ເຮັດທຸກຢ່າງຕາມໃຈມັກ ພວກທີ່ສະມັກໃຈເຮັດການກະບົດກໍໄດ້ເກັບກ່ຽວຜົນທີ່ພວກເຂົາໄດ້ກະທຳໄວ້ ແຜ່ນດິນເຕັມໄປດ້ວຍອາຊະຍາກອນ ມີສຽງຮ້ອງຂອງຄວາມທຸກທໍຣະມານຢ່າງສຸດແສນອອກມາຈາກເຂດແຂວງທີ່ຖືກທຳລາຍແລະເມືອງທີ່ພັງພິນາດ ປະເທດຝຣັ່ງເສດສັ່ນສະເທືອນເໝືອນແຜ່ນດິນໄຫວ ສາສນາ, ກົດໝາຍ, ລະບຽບຂອງສັງຄົມ, ຄອບຄົວ, ຣັດ ແລະໂບດຖືກທຳລາຍດ້ວຍນ້ຳມືຂອງຜູ້ລ່ວງລະເມີດພຣະບັນຍັດຂອງພຣະເຈົ້າ

ພະຍານທັງສອງທີ່ຊື່ສັດຂອງພຣະເຈົ້າ ທີ່ຖືກຂ້າຕາຍໂດຍອຳນາດຂອງຜູ້ກ່າວໝິ່ນປມາດພຣະນາມຂອງພຣະເຈົ້າທີ່ "ຂຶ້ນມາຈາກເຫວເລິກ" ກໍບໍ່ອາດງຽບສຽງຕໍ່ໄປອີກໄດ້ "ເມື່ອສາມວັນເຄິ່ງຜ່ານພົ້ນໄປແລ້ວ ລົມຊີວິດຊຶ່ງມາຈາກພຣະເຈົ້າໄດ້ເຂົ້າໃນສົບຂອງເຂົາ ເຂົາກໍລຸກຢືນຂຶ້ນ ແລະຄົນທັງຫລາຍທີ່ໄດ້ເຫັນເຂົາກໍມີຄວາມຢ້ານກົວຢ່າງໃຫຍ່ຫລວງ" (ພຣະນິມິດ 11:11) ໃນປີ ຄ.ສ. 1793 ຄະນະທີ່ປະຊຸມຂອງປະເທດຝຣັ່ງເສດກໍໄດ້ອອກປະກາດບໍ່ໃຫ້ປະຊາຊົນອ່ານພຣະຄັມພີ ສາມປີເຄິ່ງ ຕໍ່ມາທີ່ປະຊຸມດຽວກັນນີ້ກໍ່ປະກາດການຍອມຮັບອີກເທື່ອນຶ່ງ ມະນຸດໄດ້ຕະໜັກເຖິງຄວາມຈຳເປັນທີ່ຈະຕ້ອງມີຄວາມເຊື່ອໃນພຣະເຈົ້າ ແລະພຣະທັມຂອງພຣະອົງນັ້ນເປັນຮາກຖານສຳລັບຄຸນທັມແລະຊີວິດອັນຕລອດໄປເປັນນິດ



ການທຳງານຢ່າງໜັກເທົ່ານັ້ນ ສາມາດຄັດລອກພຣະຄັມພີໄດ້ຈຳນວນຫລາຍ ຄວາມສົນໃຈຢາກໄດ້ໜັງສືມີຫລາຍຈົນສ້າງຄວາມລຳບາກໃຫ້ແກ່ຜູ້ທຳໜ້າທີ່ຄັດລອກເພື່ອໃຫ້ພຽງພໍຕາມທີ່ຕ້ອງການ ເສດຖີກໍຢາກຈະຊື້ພຣະຄັມພີທັງເຫລັ້ມຄົນອື່ນໆ ກໍຊື້ພຽງບາງສ່ວນ ແຕ່ມີຫລາຍຄອບຄົວທີ່ສະມາຊິກມາບ້ານຮວບຮວມກັນຊື້ທັງເຫລັ້ມ ຕໍ່ມາບໍ່ນານພຣະຄັມພີຂອງໄວຄລິບກໍແຜ່ຫລາຍໄປແທບທຸກຄົວເຮືອນ

ບັດນີ້ ໄວຄລິບສອນຫລັກຄວາມເຊື່ອທີ່ເປັນຈຸດເດັ່ນສະເພາະຂອງຄຣິສຕະຈັກໂປເຕສແຕນຄ໌ ຄວາມລອດໂດຍຄວາມເຊື່ອໃນພຣະເຢຊູຄຣິດແລະໃນພຣະຄັມພີໜັງສືເຫລັ້ມດຽວທີ່ບໍ່ມີຄວາມຜິດພາດ ຄວາມເຊື່ອໃໝ່ນີ້ເປັນທີ່ຍອມຮັບຂອງປະຊາຊົນເກືອບເຄິ່ງນຶ່ງຂອງປະເທດອັງກິດ

ການແຜ່ຫລາຍຂອງພຣະຄັມພີ ເຮັດໃຫ້ເຈົ້າໜ້າທີ່ມີອຳນາດຂອງຄຣິສຕະຈັກຕ້ອງຕົກຕະລຶງ ໃນເວລານັ້ນປະເທດອັງກິດຍັງບໍ່ມີກົດໝາຍຫ້າມພິມພຣະຄັມພີ ເພາະຍັງບໍ່ເຄີຍມີການພິມເປັນພາສາຂອງພວກເຂົາມາກ່ອນກົດໝາຍນີ້ໄດ້ຖືກນຳມາໃຊ້ແລະບັງຄັບຢ່າງເຂັ້ມງວດກວດຂັນ

ແລະອີກຄັ້ງນຶ່ງຜູ້ນຳຂອງສັນຕະປາປາ ໄດ້ວາງແຜນທີ່ຈະຢຸດສຽງຂອງນັກປະຕິຮູບສາສານຜູ້ນີ້ ຂັ້ນທຳອິດອົງກອນຂອງເຈົ້າອະທິການໄດ້ປະກາດວ່າຂໍ້ຂຽນຂອງໄວຄລິບວ່ານອກຮີດດ້ວຍການເອົາຊະນະໃຈຂອງກະສັດໜຸ່ມຣິຊານທີ່ 2 ເຂົ້າມາເປັນພວກ ພວກເຂົາກໍໄດ້ອອກພຣາຊກະຕິກາລົງໂທດຈຳຄຸກທຸກຄົນທີ່ເຊື່ອຟັງຫລັກຄວາມເຊື່ອທີ່ໄດ້ຮັບປະນາມນີ້

ໄວຄລິບໄດ້ຊີ້ແຈງໃຫ້ທຸກຄົນໄດ້ເຂົ້າໃຈ ຕັ້ງແຕ່ສະພາສົງຈົນເຖິງລັດສະພາເພິ່ນປະນາມບາດຫລວງລະດັບຣາຊາຄະນະໜ້າສະພາແຫ່ງຊາດຢ່າງກ້າຫານ ແລະຮຽກຮ້ອງໃຫ້ມີການປະຕິຮູບການແຊກແຊງອັນເປັນຄວາມຜິດໃຫຍ່ຫລວງທີ່ກະທຳໂດຍຄຣິສຕະຈັກເຮັດໃຫ້ສັດຕຣູຂອງເພິ່ນຕ່າງກໍພາກັນສັບສົນພາກັນຄາດວ່ານັກປະຕິຮູບຜູ້ນີ້ມີອາຍຸຫລາຍແລ້ວຢູ່ຢ່າງໂດຍໄຮ້ມິດສະຫາຍຈະຄ້ອມຫົວໃຫ້ແກ່ອຳນາດຂອງກະສັດ ແຕ່ກົງກັນຂ້າມລັດສະພາເມື່ອໄດ້ຍິນຄຳຮ້ອງຂອງໄວຄລິບເຫັນພ້ອມກັບຄຳຊີ້ແຈງແລະໄດ້ຍົກເລີກກະຕິກາດັ່ງກ່າວ ແລະເຮັດນັກປະຕິຮູບຜູ້ນີ້ໄດ້ຮັບອິດສະຣະພາບອີກຄັ້ງນຶ່ງ

ຄັ້ງທີ່ສາມທີ່ໄວຄລິບຖືກຂຶ້ນສານທີ່ພາກສາແລະຢູ່ຕໍ່ໜ້າຄະນະບາດຫລວງລະດັບສູງຂອງອານາຈັກໃນທີ່ສຸດ ບັດນີ້ງານຂອງນັກປະຕິຮູບສາສນາຕ້ອງຢຸດລົງຄັ້ງນີ້ແນ່ນອນ ບັນດາຜູ້ຕິດຕາມສັນຕະປາປາແຫ່ງໂຣມກໍຄິດເຊັ່ນນີ້ດ້ວຍ ຫາກສາມາດເຮັດສຳເຣັດຕາມທີ່ວາງໄວ້ ໄວຄລິບກໍຈະອອກຈາກສານແຫ່ງນີ້ໄປສູ່ການຖືກເຜົາໄຟເທົ່ານັ້ນ

## ໄວຄລິບປະຕິເສດຍົກເລີກການປະຕິຮູບສາສນາ

ແຕ່ໄວຄລິບບໍ່ບອມສະຍົບ ເພິ່ນຍັງຍຶດໝັ້ນຢູ່ໃນຄຳສອນຂອງຕົນເອງແລະບໍ່ຍອມຮັບຂໍ້ຮັບຂໍ້ກ່າວຫາໃດໆ ຂອງຜູ້ກົດຂີ່ຂົ່ມເຫງຂອງຕົນເອງ ເພິ່ນປຸກໃຈຜູ້ຟັງຕໍ່ໜ້າບັນລັງຂອງຜູ້ພິຈາຣະນາຄະດີໃຫ້ສັ່ງເບິ່ງລະຫວ່າງການອ້າງເຫດຜົນແລະການໂປ້ປິດມິດເຫດກັບຄວາມຈິງອັນເປັນນິຣັນດອນ ຣິດອຳນາດຂອງພຣະວິນຍານບໍຣິສຸດຢູ່ເໜືອບັນດາຜູ້ຟັງຄຳເວົ້າຂອງນັກປະຕິຮູບດັ່ງລູກທະນູທີ່ພຸ່ງອອກມາຈາກແຫລ່ງຂອງພຣະຜູ້ເປັນເຈົ້າແທງທະລຸຈິດໃຈຂອງຜູ້ຟັງຄຳກ່າວຫາວ່າເປັນຄົນນອກຮີດ ທີ່ພວກເຂົາເວົ້າເຖິງສະທ້ອນກັບໄປຫາກັບຄົນເຫລົ່ານັ້ນເອງ

ເພິ່ນກ່າວວ່າ "ທ່ານຄິດວ່າທ່ານກຳລັງຕໍ່ສູ້ກັບຜູ້ໃດ ຕໍ່ສູ້ກັບຜູ້ຊາຍແກ່ທີ່ໃກ້ລົງຂຸມຝັງສົບເຊັ່ນນີ້ຫລື ບໍ່ແນ່ນອນ ແຕ່ທ່ານຕໍ່ສູ້ກັບຄວາມຈິງ ຄວາມຈິງທີ່ມີຣິດອຳນາດຫລາຍກ່າວທ່ານແລະຈະຕ້ອງຊະນະທ່ານແນ່ນອນ" ເມື່ອເວົ້າຈົບເພິ່ນນັ່ງພັກແລະບໍ່ມີສັດຕຣູຄົນໃດກ້າທຳລາຍເພິ່ນ

ພາລາກິດຂອງໄວຄລິບເກືອບຈະສຳເຣັດແລ້ວ ແຕ່ເພິ່ນຕ້ອງຖືກນຳໄປກ່າວເປັນພະຍານ ປົກປ້ອງຂ່າວປະເສີດອີກຄັ້ງນຶ່ງ ເພິ່ນຖືກນຳໄປຕັດສິນຄະດີຕໍ່ໜ້າບັນລັງຂອງສັນຕະປາປາທີ່ກຸງໂຣມ ຊຶ່ງກາຍເປັນສະຖານທີ່ທີ່ທັມມິກກະຊົນທັມທັງຫລາຍຫລັ່ງເລືອດ ແຕ່ເພິ່ນເກີດອາການຊັອກຈົນເປັນອຳມະພາດເຮັດໃຫ້ເພິ່ນບໍ່ສາມາດເດີນທາງໄປທີ່ກຸງໂຣມໄດ້ ແຕ່ແມ່ນວ່າໂຣມຈະບໍ່ໄດ້ຍິນສຽງຂອງເພິ່ນ ເພິ່ນກໍຍັງສາມາດເວົ້າຜ່ານທາງຈົດໝາຍໄດ້ ດັ່ງນັ້ນນັກປະຕິຮູບຜູ້ນີ້ຈຶ່ງຂຽນຈົດໝາຍເຖິງສັນຕະ



ຖືກຫລ່າມໂຊ້ຜູກຕິດກັບແປ້ນມ້ານັ່ງແລະຖືກບັງຄັບໃຫ້ພາຍເຮືອ ໂຣມັນຄາທໍລິກໄດ້ຮຽນຮູ້ປະສົບການຄວາມທຸກທໍຣະມານແສນສາຫັດ ຢ່າງທີ່ພວກເຂົາໄດ້ກະທຳຢ່າງເຕັມທີ່ແກ່ບັນດາຄົນນອກຮີດຜູ້ອ່ອນສຸພາບ" (ເບິ່ງພາກຜນວກ)

"ແລະແລ້ວເວລານັ້ນກໍມາເຖິງ ເວລາທີ່ສາຍລັບໄດ້ຊຸກຊ່ອນຢູ່ທຸກສອກທຸກແຈ ເມື່ອເຄື່ອງຕັດຄໍກິໂຍຕິນທຳງານຂອງມັນຢ່າງໜັກທຸກເຊົ້າ ເວລາທີ່ຄຸກເຕັມໄປດ້ວຍນັກໂທດເໝືອນກັບທີ່ຄຸມຂັງນັກໂທດໃນເຮືອທາດ ເວລາທີ່ຟອງເລືອດໄຫລລົງສູ່ແມ່ນ້ຳເຊນ ຜູ້ທີ່ຖືກປະຫານຢືນຮຽງກັນເປັນແຖວຍາວແລະຖືກຍິງດ້ວຍກະສູນປືນໃຫຍ່ ທ້ອງເຮືອທີ່ມີຜູ້ໂດຍສານແອອັດຖືກຍິງທະລຸ ບ່າວສາວອາຍຸ 17 ປີຖືກຂ້າຕາຍໂດຍຣັດຖະບານທີ່ຄວນຖືກສາບແຊ່ງຄັ້ງນັ້ນນັບເປັນຈຳນວນຫລາຍຮ້ອຍຄົນເດັກນ້ອຍອາຍຸອ່ອນໆ ທີ່ຖືກແຍກອອກຈາກເອິກແມ່ກໍຖືກໂຍນໄປທໍຣະມານລະຫວ່າງແຖວທະຫານຂອງພວກຢາໂຄເບັງ" (ເບິ່ງພາກຜນວນ)

ເຫດການເຫລົ່ານີ້ເປັນໄປຕາມຈຸດມຸ້ງໝາຍຂອງຊາຕານ ອຸບາຍຂອງມັນຄືຄວາມຫລອກລວງ ແລະຈຸດມຸ້ງໝາຍຂອງມັນຄືນຳຄວາມຫາຍນະມາສູ່ມວນມະນຸດເພື່ອຈະທຳລາຍພຣະຫັດຖະກິດຂອງພຣະເຈົ້າ ເພື່ອທຳລາຍຈຸດມຸ້ງໝາຍຂອງຄວາມຮັກຂອງພຣະອົງ ແລະເຮັດໃຫ້ເກີດຄວາມເສົ້າໂສກໃນສວັນ ໂດຍເລ່ກົນອັນຢັບເຍີນຂອງມັນ ຊາຕານຫລອກລວງໃຫ້ມະນຸດຕິຕຽນພຣະເຈົ້າວ່າຄວາມທຸກຍາກທັງມວນເປັນຜົນມາຈາກແຜນການຂອງພຣະຜູ້ສ້າງ ເມື່ອປະຊາຊົນເຫັນວ່າຄຳສອນຂອງໂຣມັນເປັນລັດທິທີ່ຫລອກລວງ ຊາຕານກໍຖືໂອກາດຊັກຊວນໃຫ້ມະນຸດເຂົ້າໃຈວ່າທຸກສາສນາເປັນສິ່ງທີ່ຫລອກລວງແລະພຣະຄັມພີເປັນເຣື່ອງນິຍາຍ

## ບໍ່ເກີດຂອງພັຍພິບັດ

ຄວາມຜິດຢ່າງມະຫັນຊຶ່ງນຳພັຍພິບັດມາສູ່ຊົນຊາດຝຣັ່ງເສດກໍຄືການເພີກເສີຍລະເລີຍຕໍ່ຄວາມຈິງອັນຍິ່ງໃຫຍ່ ອິສາຣະພາບທີ່ແທ້ຈິງຢູ່ໃນຂອບເຂດຂອງການບໍ່ລ່ວງລະເມີດພຣະບັນຍັດຂອງພຣະເຈົ້າ "ໂອ່ຖ້າເຈົ້າບໍ່ເຊື່ອຟັງພຣະບັນຍັດຂອງເຮົາແລ້ວຄວາມສຸກສົມບູນຂອງເຈົ້າຈະເປັນເໝືອນແມ່ນ້ຳ ແລະຄວາມຊອບທັມຂອງເຈົ້າຈະເປັນເໝືອນຄື້ນທະເລ" (ເອຊາຢາ 48:18) ຜູ້ທີ່ບໍ່ຍອມອ່ານບົດຮຽນຈາກໜັງສືຂອງ

ດີແກ່ພວກເຂົາຈົນໄດ້ຮຽນຮູ້ຈາກຄວາມໂຫດຮ້າຍທາລຸນຈົນກັບມາແກ້ແຄ້ນບັນດາຄົນທີ່ເຄີຍກົດຂີ່ຂົ່ມເຫງພວກຕົນມາກ່ອນ

ປະເທດຝຣັ່ງເສດໄດ້ເກັບກ່ຽວຜົນຂອງການຍອມຢູ່ພາຍໃຕ້ອຳນາດຂອງໂຣມດ້ວຍເລືອດ ເມື່ອຢູ່ໃຕ້ລັດທິໂຣມັນ ຝຣັ່ງເສດເປັນປະເທດທຳອິດທີ່ສ້າງຫລັກປະຫານຂຶ້ນນັບຕັ້ງແຕ່ມີການເລີ່ມປະຕິຮູບສາສນາ ໃນສະຖານທີ່ນັ້ນພວກປະຕິຫວັດໄດ້ສ້າງກິໂຢຕິນເຄື່ອງຕັດຫົວຂຶ້ນແຫ່ງທຳອິດນະສະຖານທີ່ນີ້ພວກໂປເຕສແຕນກຸ່ມທຳອິດທີ່ສະລະຊີບເພື່ອສາສນາໄດ້ຖືກເຜົາທັງເປັນເມື່ອສັດຕະວັດທີ່ 16 ບັນດາຄົນທີ່ຕົກເປັນເຫຍື່ອການປະຕິຫວັດກຸ່ມທຳອິດໃນສັດຕະວັດທີ່ 18 ກໍຖືກຕັດຫົວປະຫານຊີວິດທີ່ນັ້ນດ້ວຍ ເມື່ອປະຊາຊົນບໍ່ປະພຶດຕາມພຣະບັນຍັດຂອງພຣະເຈົ້າ ປະເທດນີ້ກໍເກີດການກະບົດແລະຄວາມວຸ່ນວາຍສັບສົນ ການຕໍ່ສູ້ພຣະຄັມພີເຮັດໃຫ້ເກີດຍຸກນຶ່ງໃນປະຫວັດສາດຄືກັຍຸກຜູ້ທີ່ໄດ້ຮັບຊັຍຊະນະໃນວັນນີ້ຈະຖືກປັບໂທດໃນວັນໜ້າ

ກະສັດ ພວກນັກບວດ ແລະພວກຊຸນນາງຖືກບັງຄັບໃຫ້ຢູ່ພາຍໃຕ້ອຳນາດຂອງພົລເມືອງທີ່ບ້າຄັ່ງ ພວກທີ່ຕັດສິນປະຫານພຣະເຈົ້າຫລຸຍທີ່ 16 ກໍຖືກປະຫານຕາຍໃນບໍ່ຊ້າ ພວກນັກປະຕິຫວັດໄດ້ຕັດສິນໃຈວ່າຈະປະຫານທຸກໆ ຄົນທີ່ສົງສັຍວ່າເປັນສັດຕຣູຕໍ່ການປະຕິຫວັດ ປະເທດຝຣັ່ງເສດກາຍເປັນສນາມຣົບທີ່ກວ້າງໃຫຍ່ທີ່ມີການຊ່ວງຊີງອຳນາດກັນເພາະອາຣົມອັນເຮົ່າຮ້ອນຂອງພວກເຂົາ "ໃນກຸງປາຣີເກີດການອາລະຫົນວຸ່ນວາຍເກີດຂຶ້ນຊ້ຳແລ້ວຊ້ຳອີກ ພົລເມືອງແບ່ງແຍກອອກເປັນໝວດເປັນໝູ່ ຄົນເຫລົ່ານັ້ນເບິ່ງເໝືອນຈະບໍ່ມີຈຸດມຸ້ງໝາຍອັນໃດນອກຈາກການທຳລາຍປະເທດຊາດເກືອບຈະລົ້ມລະລາຍ ກອງທັບຮ້ອງຂໍເງິນເດືອນທີ່ຄ້າງຊຳຣະປະຊາຊົນໄດ້ຮັບຄວາມອຶດຢາກ ເຂດແຂວງຕ່າງໆ ຖືກໂຈນຜູ້ຮ້າຍປຸ້ນສະດົມ ແລະອາຣະຍະທັມເກືອບຈະສູນສິ້ນໄປ ເພາະບ້ານເມືອງຂາດຜູ້ປົກຄອງແລະພົລເມືອງໃຊ້ເສຣີພາບຢ່າງໄຮ້ຂອບເຂດ"

ພົລເມືອງຂອງຝຣັ່ງເສດໄດ້ຮຽນຮູ້ຢ່າງດີເຖິງຄວາມໂຫດຮ້າຍທາລຸນແລະການທໍຣະມານທີ່ໂຣມເຝົ້າສອນດ້ວຍຄວາມພາກພຽນ ພວກທີ່ຖືກນຳໄປເຜົາທັງເປັນໃນເວລານີ້ບໍ່ແມ່ນສາວົກຂອງພຣະເຢຊູ ເພາະພວກເຂົາຖືກເນຣະເທດແລະຕາຍໄປດົນນານແລ້ວ ແຕ່ກັບເປັນ "ເລືອດຂອງນັກບວດໄຫລນອງນະແດນປະຫານຈົນແດງສ່ານ ເຮືອໂບຮານທີ່ໃຊ້ນັກໂທດພາຍແລະຄຸກຊຶ່ງຄັ້ງນຶ່ງເຄີຍເຕັມໄປດ້ວຍພວກຮີວໂກນ໊ອດ ເວລານີ້ກັບເຕັມໄປດ້ວຍພວກທີ່ເຄີຍກົດຂີ່ຂົ່ມເຫງພວກເຂົາ ຄົນເຫລົ່ານັ້ນ



ປາປາ ດ້ວຍຂໍ້ຄວາມທີ່ໃຫ້ຄວາມເຄົາຣົບແລະດ້ວຍວິນຍານແຫ່ງຄຣິສະຕຽນ ເປັນຂໍ້ຄວາມທີ່ປະນາມຢ່າງຮຸນແຮງຕໍ່ຄວາມຫລູຫລາແລະການຖືຕົນຂອງສັນຕະປາປາ

ໄວຄລິບໄດ້ສເນີຄວາມອ່ອນໂຍນ ແລະການຖ່ອມຕົວຂອງພຣະຄຣິດຕໍ່ສັນຕະປາປາແລະພຣະຄຣິດນັ້ນບໍ່ໃຊ່ເປັນການສະແດງໃຫ້ບັນດາພຣະເຫລົ່ານີ້ເທົ່ານັ້ນແຕ່ສຳລັບອານາຈັກຄຣິສະຕຽນທົ່ວໄປ ໄດ້ເຫັນຄວາມແຕກຕ່າງລະຫວ່າງພວກຕົນແລະພຣະອາຈານຜູ້ທີ່ບັນດາພຣະເຫລົ່ານີ້ອ້າງວ່າຕົນເປັນຜູ້ແທນຂອງພຣະອົງ

ໄວຄລິບຄາດຫວັງຢ່າງເຕັມທີ່ວ່າ ຊີວິດຂອງຕົນຈະແລກກັບຄວາມຈົງຮັກພັກດີໃນຄັ້ງນີ້ເມື່ອກະສັດ ສັນຕະປາປາແລະເຈົ້າອະທິການໄດ້ຮ່ວມມືກັນທຳລາຍເພິ່ນ ແລະເບິ່ງເໝືອນວ່າຈະເປັນຈິງ ອີກບໍ່ເທົ່າໃດເດືອນເພິ່ນຈະຖືກນຳໄປມັດກັບເສົາເພື່ອເຜົາໄຟ ແຕ່ເພິ່ນກໍຍັງຢືນຢັນໝັ້ນຄົງບໍ່ທໍ້ຖອຍ

ບຸຣຸດຜູ້ນີ້ຢືນຢັດດ້ວຍຄວາມກ້າຫານຕລອດຊີວິດ ເພື່ອປົກປ້ອງຄວາມຈິງບໍ່ເຄີຍຕົກເປັນເຫຍື່ອຂອງສັດຕຣູທີ່ກຽດຊັງເພິ່ນເລີຍ ພຣະຜູ້ເປັນເຈົ້າຊົງເປັນຜູ້ພິທັກຮັກສາເພິ່ນ ແລະບັດນີ້ເມື່ອສັດຕຣູຂອງເພິ່ນແນ່ໃຈວ່າເພິ່ນຈະຕ້ອງຕົກເປັນເຫຍື່ອພຣະຫັດຂອງພຣະເຈົ້າກໍໄດ້ນຳເພິ່ນໄປ ເກີນກວ່າທີ່ເຫລົ່າສັດຕຣູເອື້ອມເຖິງໃນໂບດຂອງເພິ່ນທີ່ລັດເຕີເວີດ ຂນະທີ່ເພິ່ນຈະທຳພິທີມະຫາຊະນິດເພິ່ນລົ້ມລົງດ້ວຍໂລກອຳມະພາດແລະຫລັງຈາກນັ້ນບໍ່ທັນເທົ່າໃດກໍໄດ້ສິ້ນຊີວິດຢ່າງສະງົບ

## ທັມມະທູດແຫ່ງຍຸກໃໝ່

ພຣະເຈົ້າຊົງໃສ່ຖ້ອຍຄຳແຫ່ງຄວາມຈິງໃນປາກຂອງໄວຄລິບ ຊີວິດຂອງເພິ່ນຮັບການຄຸ້ມຄອງແລະງານຂອງເພິ່ນໄດ້ຮັບການຂຍາຍໃຫ້ຍາວນານ ຈົນກະທັ່ງກາຍເປັນຮາກຖານຂອງການປະຕິຮູບ ກ່ອນໜ້າໄວຄລິບບໍ່ເຄີຍມີຜູ້ໃດສາມາດສ້າງການປະຕິດຮູບໄດ້ຢ່າງເປັນລະບົບເໝືອນທີ່ເພິ່ນເຮັດ ເພິ່ນຄືຜູ້ປ່າວປະກາດແຫ່ງຍຸກໃໝ່ ເຖິງປານນັ້ນກໍຕາມຄວາມຈິງທີ່ເພິ່ນເຜີຍແຜ່ມີຄວາມເປັນເອກກະພາບແລະມີຄວາມສົມບູນທີ່ນັກປະຕິຮູບ ສມັຍຕໍ່ມາບໍ່ສາມາດເຮັດໄດ້ແລະບາງຄົນບໍ່ສາມາດ

ກ້າວໄປເຖິງຂະບວນການອັນຍິ່ງໃຫຍ່ທີ່ໄວຄລິບໄດ້ບຸກເບີກໄວ້ຄືການຊ່ອຍໃຫ້ປະຊາຊາດຫລຸດພົ້ນຈາກອິດທິພົນຂອງໂຣມເປັນເວລານານ ໄດ້ຕັ້ງຕົວຂຶ້ນເທິງພຣະຄັມພີນີ້ຄືຕົ້ນກຳເນີດແຫ່ງສາຍທານພຣະພອນທີ່ໄດ້ໄຫລມາຫລາຍຊົ່ວອາຍຸ ນັບຕັ້ງແຕ່ສັດຕະວັດທີ່ສິບສີ່ຈາກການທີ່ຖືກສອນໃຫ້ຍຶດຖືວ່າໂຣມກ່າວຄືອຳນາດທີ່ບໍ່ຮູ້ມີຄວາມຜິດພັ້ງແລະຍອມດ້ວຍການຍົກຍ້ອງໂດຍບໍ່ມີຂໍ້ສົງສັຍໃນຄຳສອນ ແລະປະເພນີທີ່ຍຶດຖືມານັບພັນປີ ໄວຄລິບໄດ້ນຳໃຫ້ຫັນກັບມາຈາກສິ່ງເຫລົ່ານີ້ໄປ ຟັງພຣະທັມອັນສັກສິດຂອງພຣະເຈົ້າ ແທນທີ່ຄຣິສຕະຈັກຈະເວົ້າຜ່ານທາງພຣະສັນຕະປາປາ ເພິ່ນປະກາດວ່າອຳນາດທີ່ແທ້ຈິງພຽງອຳນາດດຽວຄືພຣະສຸຣະສຽງຂອງພຣະເຈົ້າທີ່ຕຣັດຜ່ານພຣະທັມຂອງພຣະອົງ ແລະສອນວ່າພຣະວິນຍານບໍຣິສຸດຄືຜູ້ແປຄວາມໝາຍພຣະຄັມພີແຕ່ພຽງຜູ້ດຽວ

ໄວຄລິບເປັນນັກປະຕິຮູບສາສນາທີ່ຍິ່ງໃຫຍ່ທີ່ສຸດຄົນນຶ່ງ ເພິ່ນເປັນຜູ້ມີຖານະເທົ່າທຽມກັບບາງຄົນທີ່ມາທີ່ຫລັງເພິ່ນເປັນຜູ້ມີຊີວິດທີ່ບໍຣິສຸດມີຄວາມຂຍັນ ທັງໃນການສຶກສາແລະການທຳງານມີຄວາມຊື່ສັດແລະຄວາມຮັກເຊັ່ນພຣະຄຣິດເປັນການສະແດງໃຫ້ເຫັນເຖິງລັກສະນະນິສັຍຂອງນັກປະຕິຮູບຄົນທຳອິດ

ພຣະຄັມພີຄືສິ່ງທີ່ເຮັດໃຫ້ເພິ່ນເປັນຢ່າງນີ້ ການສຶກສາພຣະຄັມພີຈະເຮັດໃຫ້ຄວາມຄິດທຸກຢ່າງຄວາມຮູ້ສຶກແລະຄວາມປາຖນາທີ່ບໍ່ມີການສຶກສາໃດຈະສເມີເໝືອນເຮັດໃຫ້ເກີດຄວາມມັ່ງຄັ່ງໃນເປົ້າໝາຍມີຄວາມອົດທົນແລະແຂງແກ່ງການສຶກສາພຣະຄັມພີຢ່າງຈິງຈັງດ້ວຍການເຄົາຣົບນັບຖືຈະເຮັດໃຫ້ມະນຸດໃນໂລກນີ້ ປັນຍາທີ່ສົ່ງແຫລມອີກທັງສິລທັມອັນສູງສົ່ງຫລາຍກວ່າຜົນທີ່ໄດ້ຮັບຈາກການຝຶກຝົນທີ່ປັດຊະຍາຂອງມະນຸດຈະສາມາດໃຫ້ໄດ້

ຜູ້ຕິດຕາມຂອງໄວຄລິບ ຊຶ່ງຮູ້ຈັກກັນໃນນາມພວກໄວຄລິບແລະໂລລາຣ໌ ໄດ້ກະຈາຍອອກໄປຫລາຍຍັງດິນແດນຕ່າງໆ ນຳຂ່າວປະເສີດໄປປະກາດ ບັດນີ້ເຖິງແມ່ນຜູ້ນຳຂອງພວກເພິ່ນຈະສິ້ນຊີວິດ ແຮ່ງເຮັດໃຫ້ນັກເທດມີຄວາມຮ້ອນຮົນຫລາຍຂຶ້ນກວ່າເກົ່າປະຊາຊົນຈຳນວນຫລວງຫລາຍພາກັນຫລັ່ງໄຫລໄປຟັງ ບາງຈຳພວກກໍມາຈາກຕະກຸນສູງຫລືແມ່ນແຕ່ຊາຍາຂອງກະສັດກໍຢູ່ໃນກຸ່ມທີ່ກັບໃຈໃນຫລາຍແຫ່ງເຄື່ອງໝາຍຮູບເຄົາຣົບຂອງໂຣມັນຖືກນຳອອກໄປຈາກໂບດ



ທາງສິລທັມ ການຫ້າມບໍ່ໃຫ້ມີພຣະຄັມພີແລະລະເລີຍຖອດຖິ້ມໃຫ້ຫລົງງົມງາຍຢູ່ກັບຄວາມເຫັນແກ່ຕົວປະຊາຊົນຈຶ່ງຕົກຢູ່ໃນຄວາມໂງ່ຈ້າ ແລະຈົມຢູ່ໃນຫລັກແຫ່ງຄວາມຊົ່ວຮ້າຍຈົນບໍ່ສາມາດປົກຄອງຕົນເອງໄດ້

## ເກັບກ່ຽວຜົນດ້ວຍເລືອດ

ແທນທີ່ຈະຊັກຈູງໃຫ້ປະຊາຊົນຍອມຫລັບຫູຫລັບຕາຍຶດຖືໃນຄຳສອນຂອງຄຣິສຕະຈັກ ຜົນງານຂອງໂຣມຍິ່ງເຮັດໃຫ້ປະຊາຊົນກາຍເປັນຄົນນອກສາສນາແລະນັກປະຕິຫວັດໄປເສັຽສິ້ນ ປະຊາຊົນເຫລົ່ານັ້ນຖືວ່າຄຳສອນຂອງໂຣມເປັນກົນອຸບາຍຂອງພວກນັກບວດ ພຣະເຈົ້າອົງດຽວທີ່ພວກເຂົາຮູ້ຈັກຄືພຣະເຈົ້າແຫ່ງກຸງໂຣມ ພວກເຂົາຖືວ່າຄວາມໂລບແລະຄວາມໂຫດຮ້າຍຂອງຄຣິສຕະຈັກເປັນຜົນມາຈາກພຣະຄັມພີພວກເຂົາຈະບໍ່ຍອມຮັບຄຳເຫລົ່ານີ້

ໂຣມໄດ້ບິດເບືອນພຣະລັກສະນະອຸປະນິສັຍທີ່ແທ້ຈິງຂອງພຣະເຈົ້າ ຈົນເຮັດໃຫ້ມະນຸດປະຕິເສດພຣະຄັມພີ ແລະພຣະເຈົ້າຜູ້ຊົງປະທານພຣະຄັມພີ ວອນແຕແລະມິດສະຫາຍຂອງເພິ່ນໄດ້ລະຖິ້ມພຣະທັມຂອງພຣະເຈົ້າ ແລະສັ່ງສອນປະຊາຊາຊົນບໍ່ໃຫ້ເຊື່ອໃນສາສນາ ຄຣິສຕະຈັກແຫ່ງໂຣມໄດ້ຢຽບຢ່ຳປະຊາຊົນໃຫ້ຢູ່ພາຍໃຕ້ຕີນເຫລັກຂອງຕົນ ແລະບັດນີ້ປະຊາຊົນຊາວຝຣັ່ງເສດໄດ້ລະຖິ້ມກົດຂໍ້ບັງຄັບທັງປວງແລະໂກດເຄືອງເປັນຢ່າງຫລວງຫລາຍ ພວກເຂົາຈຶ່ງໄດ້ປະຕິເສດທັງຄວາມຈິງແລະຄວາມຫລອກລວງ

ເມື່ອເລີ່ມຕົ້ນການປະຕິຫວັດ ກະສັດແຫ່ງຝຣັ່ງເສດໄດ້ຍິນຍອມໃຫ້ປະຊາຊົນມີຖານະເໜືອກວ່າພວກຜູ້ດີແລະພວກບາດຫລວງຮວມກັນ ດັ່ງນັ້ນອຳນາດສ່ວນໃຫຍ່ຈຶ່ງຕົກຢູ່ກັບປະຊາຊົນ ແຕ່ດຸດແຫ່ງອຳນາດຍັງຢູ່ໃນມືພວກເຂົາ ແຕ່ກໍບໍ່ພ້ອມທີ່ຈະໃຊ້ອຳນາດນັ້ນດ້ວຍສະຕິປັນຍາອັນສລາດຮອບຄອບ ປະຊາຊົນທີ່ມີອຳນາດເໜືອກວ່າກໍຈະແກ້ບັນຫາໂດຍການແກ້ແຄ້ນດ້ວຍຕົນເອງ ການກົດຂີ່ຂົ່ມເຫງເປັນບົດຮຽນທີ່

ນັບເປັນເວລາຫລາຍຮ້ອຍປີທີ່ຄົນຮັ່ງມີສ້າງຄວາມທຸກຍາກຕໍ່ຄົນຈົນ ຄົນຍາກຈົນກໍພາກັນກຽດຊັງຄົນຮັ່ງມີເຫລົ່ານັ້ນ

ໃນຫລາຍແຂວງ ຄົນຮັ່ງມີເປັນເຈົ້າຂອງທີ່ດິນແລະຊົນຊັ້ນກັມມະກອນຕ້ອງດຳຣົງຊີບຂຶ້ນຢູ່ກັບຄວາມກະຣຸນາຂອງເຈົ້າທີ່ດິນເຫລົ່ານັ້ນ ພວກເຂົາຈະຕ້ອງເຮັດທຸກຢ່າງຕາມທີ່ເຈົ້າຂອງທີ່ດິນຕ້ອງການ ຄົນຊັ້ນກາງແລະຊັ້ນຕ່ຳຕ້ອງເສັຽພາສີຈຳນວນຫລາຍແກ່ຜູ້ທີ່ມີອຳນາດຂອງບ້ານເມືອງແລະນັກບວດ "ຊາວນາແລະຊາວຊົນນະບົດຈະຕ້ອງອົດມື້ກິນມື້ຢາກ ຄົນກົດຂີ່ຂົ່ມເຫງພວກເຂົາກໍບໍ່ເຄີຍສົນໃຈຊີວິດຂອງຄົນງານຕາມທົ່ງໄຮ່ທົ່ງນາຕ້ອງເຮັດການຢ່າງບໍ່ມີວັນພັກເຊົາແລະເຕັມໄປດ້ວຍຄວາມທຸກຍາກເມື່ອພວກເຂົາຈົ່ມກໍໄດ້ຮັບການດູຖູກຢຽບຫຍາມ ພວກພິພາກສາກໍຮັບແຕ່ຄ່າຈ້າງສິນບົນ ພາສີທີ່ເກັບໄດ້ກໍໄປບໍ່ເຖິງຫ້ອງພະຄັງ ຫລືກອງຄັງຂອງບໍຊອບແມ່ນແຕ່ເຄິ່ງນຶ່ງສ່ວນທີ່ເຫລືອນອກນັ້ນພວກເຂົານຳໄປໃຊ້ຈ່າຍຢ່າງງ່າຍດາຍຕາມຄວາມພໍໃຈ ແລະຄົນເຫລົ່ານີ້ເຮັດໃຫ້ພົລເມືອງກັບກາຍເປັນຄົນຍາກຈົນ ແຕ່ໃນກຸ່ມຂອງພວກຕົນກັບໄດ້ຮັບການຍົກເວັ້ນພາສີ ແລະມີສິດທິປະຕິບັດໜ້າທີ່ທຸກຢ່າງກ່ຽວກັບຣັດຕາມກົດໝາຍແລະລະບຽບຂອງບ້ານເມືອງ ເພາະການເຮັດຕາມຄວາມພໍໃຈຂອງພວກເຂົານີ້ເອງເຮັດໃຫ້ພົລເມືອງເປັນຈຳນວນຫລາຍລ້ານຄົນຕ້ອງຕົກຢູ່ໃນຖານະທີ່ຕົກຕ່ຳແລະໝົດຫວັງ"

ພຣະເຈົ້າຫລຸຍທີ່ 15 ໄດ້ຄອງຣາຊມາຫລາຍກວ່າ 50 ປີກ່ອນທີ່ຈະມີການປະຕິຫວັດ ພຣະອົງເປັນຜູ້ທີ່ມີຄວາມກຽດຄ້ານເຫລາະແຫລະແລະມົວເມົາຢູ່ໃນໂລກີເມື່ອປະເທດຊາດຕົກຢູ່ໃນພາວະລຳບາກທາງການເງິນ ແລະປະຊາຊົນມີຄວາມໂກດເຄືອງເຊັ່ນນີ້ ເຖິງແມ່ນບໍ່ມີໃຜພະຍາກອນໃຫ້ຮູ້ກໍຄົງພໍຈະຮູ້ແລ້ວວ່າຈະມີເຫດຮ້າຍແຮງເກີດຂຶ້ນ ເມື່ອມີການຮ້ອງຂໍໃຫ້ພຣະອົງປັບປຸງແກ້ໄຂພຣະອົງກໍບໍ່ຊົງເຫັນນຳດ້ວຍ ພັຍພິບັດທີ່ກຳລັງຈະພິບັດຂຶ້ນໃນປະເທດຝຣັ່ງເສດປາກົດໃຫ້ເຫັນຈາກຄຳຕອບອັນເຫັນແກ່ຕົວຂອງພຣະຣາຊາ "ເມື່ອເຮົາຕາຍແລ້ວພັຍພິບັດຈະເກີດຂຶ້ນ"

ໂຣມໄດ້ໃຊ້ອິດທິພົນຊັກຈູງໃຫ້ພຣະຣາຊາ ແລະຊົນຊັ້ນປົກຄອງຂອງບ້ານເມືອງໃຫ້ບີບບັງຄັບປະຊາຊົນໄວ້ເປັນທາດ ຈຸດປະສົງທີ່ເຊັ່ນນີ້ກໍເພື່ອຈະຜູກມັດຈິດໃຈຂອງຜູ້ປົກຄອງແລະປະຊາຊົນໃຫ້ຢູ່ພາຍໃຕ້ການຜູກມັດເໜືອຈິດວິນຍານຂອງຄົນເຫລົ່ານັ້ນ ສິ່ງທີ່ຮ້າຍແຮງຫລາຍກວ່າການທໍຣະມານທາງດ້ານຮ່າງກາຍຫລາຍຮ້ອຍຫລາຍພັນເທົ່າທີ່ສືບເນື່ອງມາຈາກນະໂຍບາຍຂອງຄຣິສຕະຈັກກໍຄືຄວາມເຊື່ອມໂຊມ



ແຕ່ບໍ່ນານເທົ່າໃດການຂົ່ມເຫງຢ່າງໄຮ້ຄວາມປານີກໍອຸບັດຂຶ້ນກັບບັນດາຜູ້ທີ່ກ້າຫານຍອມຮັບເອົາພຣະຄັມພີເປັນເຄື່ອງຊີ້ແນວທາງຂອງຕົນ ນັບເປັນເທື່ອທຳອິດໃນປະຫວັດສາດ ທີ່ປະເທດອັງກິດມີການອອກກົດໝາຍເຜົາບັນດາສາວົກຜູ້ປະກາດຂ່າວປະເສີດ ການເສັຽສະລະຊີວິດເພື່ອສາສນາເກີດຂຶ້ນຕາມມາແລ້ວມາອີກ ຖືກຕາມລ່າໃນຖານເປັນສັດຕຣູຕໍ່ຄຣິສຕະຈັກແລະເປັນກະບົດຕໍ່ແຜ່ນດິນ ແຕ່ຜູ້ອຸທິດຊີວິດໃຫ້ຄວາມຈິງຍັງຄົງເທສນາ ໃນທີ່ລັບລີ້ໄປຫລົບອາສັຍຢູ່ຕາມເຮືອນຂອງຄົນທີ່ຍາກຈົນແລະຫລາຍເທື່ອຕ້ອງລີ້ຕົວຢູ່ຕາມຖ້ຳຕາມອຸໂມງ

ການຕໍ່ສູ້ດ້ວຍຄວາມອົດທົນດ້ວຍຄວາມສະງົບ ເພື່ອປົກປ້ອງການທຳລາຍຫລັກຄວາມເຊື່ອຂອງສາສນາດຳເນີນໄປເປັນເວລານານຫລາຍສັດຕະວັດຄຣິສະຕຽນໃນຍຸກທຳອິດໄດ້ຮຽນຮູ້ເຖິງຄວາມຮັກໃນພຣະທັມຂອງພຣະເຈົ້າ ແລະທົນທຸກຍາກລຳບາກເພື່ອເຫັນແກ່ພຣະທັມນັ້ນ ຄົນຈຳນວນຫລວງຫລາຍໄດ້ສະລະຊັບສົມບັດຝ່າຍໂລກເພື່ອພຣະຄຣິດ ຄົນທີ່ໄດ້ຮັບການອະນຸຍາດໃຫ້ອາສັຍຢູ່ໃນເຮືອນຂອງຕົນກໍຍອມໃຫ້ພີ່ນ້ອງທີ່ຖືກຂັບໄລ່ອອກຈາກບ້ານເຮືອນຂອງເຂົາເຂົ້າພັກອາສັຍດ້ວຍຄວາມຍິນດີ ແຕ່ເມື່ອພວກເຂົາຖືກຂັບໄລ່ກໍຍິນດີຮັບເຄາະກັມນັ້ນດ້ວຍກັນ ມີຄົນຈຳນວນບໍ່ນ້ອຍທີ່ກ້າເປັນພະຍານເພື່ອຄວາມຈິງ ຖືກກັກຂັງໃນຫ້ອງມືດ ຕົກຢູ່ທ່າມກາງການທໍຣະມານແລະຖືກເຜົາທັງເປັນຕ່າງກໍຊົມຊື່ນຍິນດີທີ່ຮູ້ວ່າເຂົາຖືກນັບເປັນຜູ້ "ມີສ່ວນຮ່ວມໃນຄວາມຕາຍຂອງພຣະອົງ

ຄວາມກຽດຊັງຂອງສັນຕະປາປາຈະບໍ່ມີທາງໝົດສິ້ນໄປ ຫາກຮ່າງຂອງໄວຄລິບຍັງນອນຢູ່ໃນຂຸມຝັງສົບ ເປັນເວລານານກວ່າສີ່ສິບປີຫລັງຈາກທີ່ເພິ່ນຕາຍກະດູກຂອງເພິ່ນຖືກຂຸດຂຶ້ນມາແລະເຜົາຕໍ່ໜ້າຊຸມຊົນສ່ວນເຖົ່າຖ່ານກໍຖືກນຳໄປຖິ້ມໃນແມ່ນ້ຳລຳທານ ນັກຂຽນສມັຍໂບຮານ ບັນລະຍາຍໄວ້ວ່າ ແມ່ນ້ຳລຳທານແຫ່ງນີ້ໄດ້ພັດພາເຖົ່າຖ່ານກະດູກຂອງໄວຄລິບໄປຍັງເອວອນ ຈາກເອວອນກໍຖືກພັດພາຍໄປຍັງເຊເວີຣ໌ ຈາກເຊເວີຣ໌ ກໍໄຫລໄປລົງທະເລແຄບໆ ແລະໄຫລລົງສູ່ສະມຸດອັນກວ້າງໃຫຍ່ ດັ່ງນັ້ນເຖົ່າຖ່ານກະດູກຂອງໄວຄລິບຈຶ່ງເປັນເໝືອນສັນຍາລັກແຫ່ງຫລັກຄວາມເຊື່ອຂອງເພິ່ນທີ່ໄດ້ແຜ່ກະຈາຍໄປທົ່ວໂລກ"

ດ້ວຍຂໍ້ຂຽນຂອງໄວຄລິບເຮັດໃຫ້ ຈອນ ຮັດ ແຫ່ງໂບຣີເມັຽໄດ້ຍົກເລີກຫລັກຄຳສອນທີ່ຜິດອັນມີຢູ່ມາກມາຍຂອງລັດທິສາສນາແຫ່ງໂຣມ ງານຂອງເພິ່ນໄດ້ແຜ່ຂຍາຍຈາກໂບຣີເມັຽໄປຍັງປະເທດອື່ນອີກຫລາຍແຫ່ງ ທັ່ງນີ້ເພາະພຣະທັດອັນຊົງຣິດຂອງພຣະເຈົ້າໄດ້ຊົງຕຽມທາງເພື່ອການປະຕິຮູບສາສນາຄັ້ງຍິ່ງໃຫຍ່

ຈອນ ຮັນ (ຄ.ສ. 1372-1415) ໄດ້ເລີ່ມການສັ່ງສອນຄວາມຈິງຂອງພຣະເຈົ້າແກ່ປະຊາຊົນ ເພິ່ນໄດ້ຮັບອິດທິພົນຫລັກຄຳສອນມາຈາໄວຄລິບຈຶ່ງເລີ່ມສັ່ງສອນສິ່ງທີ່ຕົນໄດ້ຮັບມາ ແລະແມ່ນວ່າຈະໄດ້ຮັບຮອງຄວາມປອດພັຍຈາກກະສັດ ເພິ່ນກໍບໍ່ວາຍຖືກຈັບຂໍ້ຫາສັ່ງສອນຜິດແລະຖືກເຜົາທັງເປັນໃນເມື່ອວັນທີ່ 6 ກໍຣະກະດາ ຄ.ສ. 1415

ເຈີໂຣມ ແຫ່ງປຣາກ (ຄ.ສ. 1370-1416) ສິດຂອງໄວຄລິບ ຜູ້ຜ່ານການສຶກສາຈາກມະຫາວິທະຍາລັຍອ໊ອກຟ໊ອດ ເພິ່ນນຳເອົາຫລັກຄວາມເຊື່ອທີ່ໄດ້ຮັບໄປສັ່ງສອນສົມທົບກັບ ຈອນ ຮັນ ແຕ່ເພິ່ນກໍຖືກຈັບໄດ້ ແມ່ນວ່າເຄີຍຍອມຮັບອຳນາດຂອງສັນຕະປາປາ ແຕ່ຕໍ່ມາກັບປ່ຽນໃຈປະຕິເສດການຍອມຮັບນີ້ ເພິ່ນຈຶ່ງຖືກຈັບມັດເຜົາໄຟທັງເປັນ



ຈົນຕາຍ ຫລາຍພັນຄົນ ໜີເອົາຕົວລອດຕົນປອດພັຍຕລອດເວລາ 250 ປີ ນັບຕັ້ງແຕ່ມີການປະຕິຮູບ

"ຕລອດເວລາອັນຍາວນານນັ້ນ ບໍ່ມີຊາວຝຣັ່ງເສດຊົ່ວອາຍຸນຶ່ງໄດ້ເຫັນສາວົກແຫ່ງຂ່າວປະເສີດຜູ້ຊື່ສັດຕໍ່ຄວາມຈິງ ພວກເຂົາໜີພົ້ນຄວາມໂຫດຮ້າຍທາຣຸນ ຂອງພວກກົດຂີ່ຂົ່ມເຫງເສັຽກ່ອນ ຄົນເຫລົ່ານີ້ໄດ້ນຳເອົາສະຕິປັນຍາສິນລະປະ ຄວາມຂຍັນຂັນແຂງແລະຄວາມມີລະບຽບວິນັຍໄປພັດທະນາຍັງດິນແດນທີ່ພວກເຂົາຫລົບພັຍຢູ່ນັ້ນໃຫ້ຈະເຣີນຮຸ່ງເຮືອງ ຫາກສິ່ງດັ່ງກ່າວນີ້ຍັງຢູ່ກໍຈະເຮັດໃຫ້ປະເທດຝຣັ່ງເສດກ້າວໜ້າ ມີຄວາມສງົບສຸກແລະເປັນແບບຢ່າງຂອງປະເທດທັງຫລາຍ ແຕ່ຄົນທີ່ຕາບອດ ຄົນໄຮ້ຄວາມເມດຕາທີ່ດື້ດຶງພາກັນຂັບໄລ່ບັນດາຄຣູບາອາຈານຜູ້ມີລະບຽບແລະມີຄວາມຊື່ສັດຕໍ່ບັນລັງຂອງກະສັດ ໃນທີ່ສຸດປະເທດກໍຖືກທຳລາຍຈົນໝົດກ້ຽງ" ແລະຜົນທີ່ເກີດຂື້ນກໍຄືການປະຕິຫວັດອັນນອງເລືອດໃນປະເທດຝຣັ່ງເສດ

## ສິ່ງທີ່ອາດເກີດຂື້ນໄດ້

"ເມື່ອພວກຮີວໂກນ໊ອດພາກັນຫລົບອອກຈາກປະເທດ ຄວາມເຊື່ອມໂຊມກໍເກີດຂື້ນແກ່ປະເທດຝຣັ່ງເສດ ເມືອງທີ່ຈະເຣີນກ້າວໜ້າທາງດ້ານອຸດສາຫະກັມຫລາຍເມືອງເລີ່ມຊຸມໂຊມ ມີຜູ້ປະມານວ່າ ເມື່ອເລີ່ມຕົ້ນຂອງປະຕິຫວັດ ມີຄົນຂໍທານສອງແສນຄົນໃນກຸງປາຣີທີ່ອ້າງສິດຂໍທານຈາກພຣະຫັດຂອງພຣະຣາຊາ ບາດຫລວງຄະນະເຢຊູອິດອັນເປັນຊົນກຸ່ມດຽວທີ່ຈະເຣີນຮຸ່ງເຮືອງຖ້າມກາງຄວາມເຊື່ອມລົງຂອງປະເທດຊາດ"

ຂ່າວປະເສີດໜ້າຈະໄດ້ນຳປະເທດຝຣັ່ງເສດສາມາດແກ້ໄຂບັນຫາທັງຫລາຍທີ່ບັນດານັກບວດ ກະສັດແລະນັກກົດໝາຍຕ່າງກໍພາກັນງຸນງົງ ຈົນໃນທີ່ສຸດປະເທດຊາດຕົກຢູ່ໃນຄວາມພິນາດ ແຕ່ພາຍໃຕ້ການປົກຄອງຂອງໂຣມ ປະຊາຊົນໄດ້ສູນເສັຽບົດຮຽນແຫ່ງການເສັຽສະລະຄວາມສຸກສ່ວນຕົວແລະຄວາມຮັກທີ່ບໍ່ເຫັນແກ່ຕົວຂອງພຣະຜູ້ຊ່ອຍໃຫ້ລອດ ຄົນຮັ່ງມີກົດຂີ່ຂົ່ມເຫງຄົນຍາກຈົນໂດຍບໍ່ມີໃຜຕິຕຽນ ຄົນຍາກຈົນທີ່ບໍ່ໄດ້ຮັບການຊ່ວຍເຫລືອ ຄວາມເຫັນແກ່ຕົວແລະອຳນາດຂອງຜູ້ຮັ່ງມີນັບວັນມີແຕ່ຈະຫລາຍຂື້ນ ບໍ່ມີໃຜຊ່ອຍເຫລືອຄົນຍາກຈົນໃນຄວາມຕົກຕ່ຳຂອງພວກເຂົາ

ຄຳສອນຂອງສັນຕະປາປາໄດ້ເລີ່ມຕົ້ນ ນຳຄວາມສຳເຣັດມາໃຫ້ຣັດທີ່ບໍ່ນັບຖືພຣະເຈົ້າແລະນຳປະເທດຝຣັ່ງເສດດຳເນີນໄປສູ່ຄວາມພິນາດຢ່າງວ່ອງໄວ ນັກຂຽນຫລາຍຄົນໄດ້ຂຽນເຖິງການປະຕິຫວັດອັນໜ້າຢ້ານກົວວ່າ ທັງໝົດນີ້ຈະຕ້ອງໂທດກະສັດ ແລະຄຣິສຕະຈັກ ທີ່ເຮັດໃຫ້ເຣື່ອງຫຍຸ້ງຍາກນີ້ເກີດຂຶ້ນ ຄຳສອນຂອງສັນຕະປາປາເປັນເໝືອນຢາພິດຕໍ່ຄວາມຄິດຂອງບັນດາກະສັດໃຫ້ຂັດຂວາງການປະຕິຮູບສາສນາ ຄວາມສລຽວສລາດຂອງໂຣມໄດ້ບັນດານໃຫ້ເກີດຄວາມໂຫດຮ້າຍແລະການກົດຂີ່ຂົ່ມເຫງເຫລົ່ານີ້ໂດຍຕົງຈາກກະສັດ

ບໍ່ວ່າແຫ່ງໃດທີ່ມີການຍອມຮັບຂ່າວປະເສີດ ຄວາມຄິດຂອງປະຊາຊົນກໍມີການຕື່ນຕົວ ພວກເຂົາເຫລີ່ມລະຖິ້ມພັນທະນາການທີ່ຜູ້ມັດເຂົາໃຫ້ຕົກເປັນທາດແຫ່ງຄວາມຊົ່ວແລະຄວາມເຊື່ອທີ່ຜິດໆ ບັນດາກະສັດມອງເບິ່ງດ້ວຍຄວາມຢ້ານວ່າລະບອບພະເດັດການຂອງຕົນຈະໄດ້ຮັບຄວາມກະທົບກະເທືອນ

ຄວາມອິດສາຫວັ່ນເກງກໍເກີດຂຶ້ນກັບທາງໂຣມ ໃນປີ ຄ.ສ. 1525 ພຣະສັນຕະປາປາໄດ້ເວົ້າກັບຜູ້ສຳເຣັດຣາຊການແຫ່ງຝຣັ່ງເສດ "ໂຣກຮ້າຍນີ້ (ໂປເຕສແຕນ) ຈະບໍ່ພຽງແຕ່ເຮັດໃຫ້ເກີດຄວາມສັບສົນວຸ່ນວາຍແລະທຳລາຍສາສນາເທົ່ານັ້ນ ແຕ່ຈະທຳລາຍກົດເກນພູມທັມອັນສູງສົ່ງ ກົດໝາຍ ຄວາມຮຽບຮ້ອຍແລະຊົນຊັ້ນອີກດ້ວຍ" ຕົວແທນຂອງສັນຕະປາປາໄດ້ທູນເຕືອນກະສັດວ່າ "ຄຣິສຕະຈັກໂປເຕສແຕນຈະເຮັດໃຫ້ລະບຽບວິນັຍຂອງບ້ານເມືອງແລະສາສນາຕ້ອງປັ້ນປ່ວນ ບັນລັງຕົກຢູ່ໃນອັນຕຣາຍຫລາຍເທົ່າກັບແທນບູຊາ" ໂຣມໄດ້ຊັກຈູງໃຫ້ປະເທດຝຣັ່ງເສດຂັດຂວາງການປະຕິຮູບສາສນາເປັນຜົນສຳເຣັດ

ຄຳສອນໃນພຣະຄັມພີທີ່ຈະປູກຝັງຢູ່ໃນຈິດໃຈຂອງປະຊາຊົນ ຄວາມຍຸຕິທັມການຮູ້ຈັກປະມານຕົນແລະຄວາມຈິງ ຄຳສອນເຫລົ່ານີ້ປຽບເໝືອນເສົາຫລັກແຫ່ງຄວາມຈະເຣີນຮຸ່ງເຣືອງຂອງຊາດ "ຄວາມຊອບທັມເຊີດປະຊາຊາດ" ເພາະວ່າ "ພຣະທີ່ນັ່ງນັ້ນຖືກສະຖາປານາໄວ້ດ້ວຍຄວາມຊອບທັມ" (ສຸພາສິດ 14:34, 16:12 ເອຊາຢາ 32:17) ຜູ້ທີ່ເຊື່ອຟັງພຣະບັນຍັດຂອງພຣະເຈົ້າເຂົາຈະເປັນຜູ້ທີ່ເຊື່ອຟັງກົດໝາຍຂອງບ້ານເມືອງດ້ວຍ ຝຣັ່ງເສດຫ້າມບໍ່ໃຫ້ປະຊາຊົນອ່ານພຣະຄັມພີ ສັດຕະວັດແລ້ວສັດຕະວັດອີກ ທີ່ ບຸກຄົນທີ່ມີຄວາມຊື່ສັດ,ມີສະຕິປັນຍາ,ມີສິລທັມເຂັ້ມແຂງມີຄວາມເຊື່ອ ຕ້ອງໄດ້ຮັບການທົນທຸກທໍຣະມານເພື່ອຄວາມຈິງ ຍອມເຮັດການໜັກຄືກັບທາດເທິງເຮືອຮົບ ພວກເຂົາຖືກນຳໄປເຜົາທັງເປັນ ແລະຖືກກັກຂັງໃນຫ້ອງໃຕ້ດິນ



ບົດທີ່ 6

# ສອງວິຣະບຸຣຸດຜະເຊີນກັບຄວາມຕາຍ

ຕົ້ນສັດຕະວັດທີ່ສິບເກົ້າໄດ້ມີການແປພຣະຄັມພີແລະມີການນະມັດສະການໃນທີ່ຊຸມຊົນໃນພາສາທ້ອງຖິ່ນຂອງໂບຮີເມັຽ ແຕ່ເກຣກໍຣີທີ່ເຈັດຕ້ອງການໃຫ້ປະຊາຊົນຕົກເປັນທາດແລະໄດ້ມີອົງການສັນຕະປາປາ ຫ້າມບໍ່ໃຫ້ຊຸມຊົນນະມັດສະການເປັນພາສາໂບຮີເມັຽ ພຣະສັນຕະປາປາຊົງປະກາດວ່າ "ພຣະຜູ້ຊົງຣິດທານຸພາບຊົງພໍພຣະທັຍໃນການນະມັດສະການພຣະອົງເປັນພາສາທີ່ມະນຸດບໍ່ຮູ້ຈັກ" ແຕ່ສວັນໄດ້ຈັດຕຽມຜູ້ແທນຂອງພຣະອົງເພື່ອ ການພິທັກຄຣິສຕະຈັກຂອງພຣະອົງຊາວວອນແດນແລະແອນບີເຈນທີ່ໜີການຖືກກົດຂີ່ຂົ່ມເຫງໄດ້ມາຍັງໂບຮີເມັຽ ພວກເຂົາໄດ້ທຳງານດ້ວຍຄວາມຂຍັນຂັນແຂງໃນທີ່ລັບ ດ້ວຍເຫດນີ້ຄວາມເຊື່ອທີ່ແທ້ຈິງຈຶ່ງໄດ້ຮັບການຮັກສາໄວ້

ກ່ອນສມັຍຂອງຮັດ ມີຫລາຍຄົນໃນໂບດຣີເມັຽໂຈມຕີການຄົດໂກງໃນຄຣິສຕະຈັກຄວາມຫວັ່ນເກງໄດ້ເລົ້າຄະນະສົງແລະໄດ້ເປີດໃຫ້ມີການກັ້ນແກ້ງທຳລາຍຂ່າວປະເສີດ ຫລັງຈາກນັ້ນບໍ່ນານມີກົດສະຖີກາອອກມາປະກາດວ່າຜູ້ໃດທີ່ລະຖິ້ມການນະມັດສະການແບບໂຣມັນຈະຖືກເຜົາ ແຕ່ຄຣິສຕະຈັກທັງຫລາຍເຝົ້າລໍຄອຍຊັຍຊະນະຈາກການຂອງພວກເຂົາ ມີຄົນນຶ່ງໄດ້ປະກາດຂນະທີ່ກຳລັງຈະສິ້ນໃຈວ່າ "ຈົ່ງມີຜູ້ນຶ່ງໃນຖ້າມກາງປະຊາຊົນທັມມະດາຈະບໍ່ມີດາບຫລືອຳນາດໃດຈະຕໍ່ສູ້ເຂົາໄດ້" ມີຜູ້ນຶ່ງ

ໄດ້ເກີດຂື້ນມາແລ້ວຄຳພະຍານຕໍ່ຕ້ານໂຣມຂອງເພິ່ນຈະປຸກຮຽກປະຊາຊາດຂອງໃຫ້ຕື່ນຕົວ

ຈອນ ຮັດ ບັງເກີດຂື້ນມາໃນທີ່ຕ່ຳຕ້ອຍແລະກຳພ້າພໍ່ຕັ້ງແຕ່ນ້ອຍ ໆ ມານດາຜູ້ເຄັ່ງຄັດໃນສາສນາຂອງເພິ່ນຖືວ່າການສຶກສາແລະຄວາມຢຳເກງພຣະເຈົ້າເປັນຊັບສົມບັດອັນມີຄ່າໄດ້ຮັກສາມໍຣະດົກນີ້ໄວ້ແກ່ບຸດຂອງນາງ ຮັດຮຽນທີ່ໂຮງຮຽນປະຈຳແຂວງ ຫລັງຈາກນັ້ນໄປສຶກສາຕໍ່ໃນມະຫາວິທະຍາລັຍທີ່ກຸງປຣາກ ໂດຍໄດ້ຮັບທຶນການສຶກສາຈາກກອງທຶນສົງເຄາະ

ຂນະທີ່ສຶກສາໃນມະຫາວິທະຍາລັຍ ຮັດ ເປັນທີ່ຮູ້ຈັກດີ ຈາກການຮຽນຮູ້ໄດ້ຢ່າງວ່ອງໄວຄວາມເປັນສຸພາບບຸຣຸດຂອງເພິ່ນ ເຮັດໃຫ້ເພິ່ນເປັນທີ່ຍອມຮັບໄປທົ່ວໂລກ ເພິ່ນມີຄວາມຈິງໃຈຕໍ່ຄຣິສຕະຈັກໂຣມຫລາຍແລະສແວງຫາພຣະພອນທາງດ້ານຈິດວິນຍານຢ່າງເອົາຈິງເອົາຈັງຕາມທີ່ອ້າງວ່າຈະປະທານໃຫ້ ຫລັງຈາກທີ່ຈົບມະຫາວິທະຍາລັຍແລ້ວເພິ່ນຈຶ່ງບວດເປັນພຣະ ແລະກາຍເປັນຜູ້ມີຊື່ສຽງດີໄດ້ເຂົ້າໄປຢູ່ໃນພຣະຣາຊວັງຂອງກະສັດ ນອກຈາກນີ້ເພິ່ນໄດ້ຮັບການແຕ່ງຕັ້ງໃຫ້ເປັນສາສນາຈານ ແລະຕໍ່ມາເປັນອະທິການບໍດີຂອງມະຫາວິທະຍາລັຍ ນັກສຶກສາທີ່ສຳເຣັດຈາກການສຶກສາດ້ວຍຄວາມຊ່ອຍເຫລືອຈາກກອງທຶນສົງເຄາະໄດ້ກາຍເປັນຜູ້ມີຊື່ສຽງເປັນທີ່ພາກພູມໃຈຂອງປະເທດຊື່ສຽງຂອງຮັດໄດ້ດັງດັງໄປທົ່ວຢຸໂຣບ

ເຈີໂຣມ ຜູ້ຊຶ່ງພາຍຫລັງໄດ້ເປັນເພື່ອນຮ່ວມງານກັບຮັດໄດ້ນຳຂໍ້ຂຽນຂອງໄວຄລິບຈາກປະເທດອັງກິດມາທີ່ໂບຮີເມັຽດ້ວຍພຣະຣາຊີນີແຫ່ງອັງກິດ ຜູ້ຊຶ່ງກັບໃຈເຊື່ອໃນພຣະຄຣິດ ເພາະລັກຄຳສອນຂອງໄວຄລິບນັ້ນເປັນເຈົ້າຍິງແຫ່ງໂບຮີເມັຽໂດຍອິດທິພົນຂອງພຣະອົງການຂອງນັກປະຕິຮູບສາສນາໄດ້ແຜ່ຫລາຍໄປທົ່ວປະເທດ ຮັດກໍມີຄວາມໂນ້ມອຽງສນັບສນູນການປະຕິຮູບກວ່າເພິ່ນຈະຮູ້ສຶກຕົວ ເພິ່ນກໍໄດ້ກ້າວເດີນບົນເສັ້ນທາງທີ່ນຳເພິ່ນຫ່າງຈາກສາສນາຂອງໂຣມໄປໄກແສນໄກແລ້ວ

## ຮັດປະທັບໃຈໃນສອງພາບ



"ຄົນໂງ່ເຂົາຄິດໃນໃຈຂອງເຂົາວ່າບໍ່ມີພຣະເຈົ້າ" ແລະພຣະຜູ້ເປັນເຈົ້າວ່າ " ເພາະວ່າຄວາມໂງ່ຂອງເຂົານັ້ນຈະປາກົດແກ່ຄົນທັງປວງ" (ເພງສັນລະເສີນ14: 1, 2 ຕີໂມທຽວ 3:9) ຫລັງຈາກຊາວຝຣັ່ງເສດໄດ້ປະກາດເລີກລົ້ມນະມັດສະການພຣະເຈົ້າຜູ້ຊົງປະຊົນຢູ່ ພວກເຂົາກໍໄດ້ລົດຕົວລົງຍົກຍ້ອງການກາບໄຫວ້ຮູບເຄົາຣົບດ້ວຍການນະມັດສະການ "ພຣະແມ່ແຫ່ງເຫດຜົນ" ຊຶ່ງເປັນຍິງເສເພແລະນີ້ຄືຕົວແທນຂອງການຮ່ວມຊາດ "ນີ່ງໃນຈຳນວນພິທີອັນບ້າຄັ່ງນີ້ ໄຮ້ສາຣະແລະບໍ່ຖືກຕາມທຳນອງຄອງທັມຢ່າງບໍ່ມີພິທີໃດສເມີເໝືອນ ປະຕູຂອງສາລາທີ່ປະຊຸມເປີດກວ້າງ ພວກເທສມົນຕຣີແຫ່ຂະບວນເຂົ້າມາດ້ວຍທ່າທາງງຽບສງົບ ຮ້ອງເພງສັນລະເສີນເສຣີພາບ ແລະນຳເອົາສະຕຣີຄົນນຶ່ງມີຜ້າຄຸມໜ້າເຂົ້າມາໃນຫ້ອງ ເຂົາເອີ້ນນາງວ່ານີ້ຄືພຣະແມ່ທີ່ຈະນະມັດສະການກາບໄຫວ້ໃນອານາຄົດ ຊຶ່ງພວກເຂົາຂນານນາມວ່າ "ພຣະແມ່ແຫ່ງເຫດຜົນ" ພໍເຂົ້າມາໃນຫ້ອງແລ້ວກໍເອົາຜ້າຄຸມໜ້າຂອງນາງອອກ ແລະໃຫ້ນາງຢືນຢູ່ເບື້ອງຂວາຂອງປະທານປະຊຸມ ຄົນທັງຫລາຍທີ່ເຫັນກໍຈຳໄດ້ວ່ານາງຄືຍິງສາວທີ່ເຕັ້ນລະບຳໃນການສະແດງອຸປາກອນ"

## ພຣະແມ່ແຫ່ງເຫດຜົນ

"ການຕັ້ງພຣະແມ່ແຫ່ງເຫດຜົນໄດ້ຮັບການສົ່ງເສີມແລະມີການຮຽນແບບໄປທົ່ວປະເທດ ໃນສະຖານທີ່ເຫລົ່ານັ້ນປະຊາຊົນທີ່ຢາກຈະສະແດງວ່າພວກເຂົາຕ່າງກໍມີຄວາມສເມີພາບໃນການປະຕິຫວັດຈະມາຮວມກັນ"

ເມື່ອພວກເຂົານຳພຣະແມ່ເຂົ້າມາໃນທີ່ປະຊຸມແລ້ວໂຄສົກກໍຈັບມືນາງແລ້ວປິ່ນໜ້າໄປທາງຜູ້ທີ່ມາປະຊຸມແລະກ່າວວ່າ "ມະນຸດທີ່ຕ້ອງຕາຍທັງຫລາຍ ຢ່າໄດ້ຫວັ່ນໄຫວຕໍ່ສຽງຟ້າຮ້ອງທີ່ຈະປັດສະຈາກອຳນາດຂອງພຣະເຈົ້າອົງໃດອີກແລ້ວນອກຈາກເຫດຜົນ ຂ້າພະເຈົ້າຂໍສເນີຮູບທີ່ສູງສົ່ງແລະບໍຣິສຸດໃຫ້ແກ່ທ່ານ ຫາກທ່ານຕ້ອງການມີສິ່ງກາບໄຫວ້ ທ່ານກໍຈົ່ງກາບໄຫວ້ຮູບເຄົາຣົບເຊັ່ນນີ້ເຖີດ"

"ພາຍຫລັງທີ່ປະທານທີ່ປະຊຸມໄດ້ສວມກອດພຣະແມ່ແຫ່ງເຫດຜົນແລ້ວເພິ່ນກໍນຳເທພີຂຶ້ນຣົດຄັນງາມ ແລ້ວຂັບມຸ່ງໜ້າຕົງໄປຍັງພຣະວິຫານນອດເທີດັມເພື່ອນຳໄປຕັ້ງໄວ້ແທນທີ່ພຣະຜູ້ເປັນເຈົ້າ ເຂົາກໍນຳເທພີວາງໄວ້ທີ່ແທ່ນບູຊາສູງແລະຮັບການກາບໄຫວ້ເທີດທູນຈາກປະຊາຊົນທີ່ມາເຝົ້າ"

ຄາມຕໍ່ສູ້ກັບພຣະເຈົ້າແລະພຣະທັມຂອງພຣະອົງ ທີ່ປະຊຸມແຫ່ງຊາດໄດ້ລົ້ມເລີກການນະມັດສະການພຣະເຈົ້າ ພວກເຂົາໄດ້ຮວບຮວມພຣະຄັມພີໄປເຜົາໄຟຕໍ່ໜ້າສາທາຣະນະຊົນ ສະຖາບັນສອນພຣະຄັມພີຫລາຍແຫ່ງຖືກທຳລາຍ ມີການເລີກລົ້ມວັນພັກປະຈຳສັບປະດາ ແທນທີ່ຈະມີການພັກການທຸກສັບປະດາ ແຕ່ພວກເຂົາກັບລ້ຽງກັນຢ່າງສນຸກສນາມຣື່ນເລີງທຸກ 10 ວັນ ການຮັບສົນບັບຕິສະມາແລະພິທີມະຫາຊະນິດກໍຖືກຍົກເລີກ ມີການຕິດປະກາດຕາມຂຸມຝັງສົບມີຂໍ້ຄວາມວ່າ “ຄວາມຕາຍຄືການນອນຫລັບອັນຕລອດໄປເປັນນິດ” ມີຄຳສັ່ງຫ້າມບໍ່ໃຫ້ມີການນະມັດສະ ການທຸກຢ່າງທີ່ກ່ຽວກັບສາສນາ ນອກຈາກການນະມັດສະການ “ເສຣີພາບ” ແລະປະເທດຊາດ ບິຊອບແຫ່ງປາຣີຖືກນຳຕົວມາໃນທີ່ປະຊຸມ ແລະຖືກບັງຄັບໃຫ້ປະກາດວ່າສາສນາທີ່ທ່ານໄດ້ສອນມາຫລາຍປີນັ້ນເປັນພຽງກົນລະຍຸດຂອງບາດຫລວງເທົ່ານັ້ນ ບໍ່ມີຮາກຖານທັງທາງປະຕິຫວັດສາສນາແລະຄວາມຈິງອັນສັກສິດ ບິຊອບບອກປັດອອກໄປໃຫ້ໝົດຍອມຮັບວ່າພຣະເຈົ້າທີ່ຕົນໄດ້ຮັບນະມັດສະການ ແລະຖວາຍສັກກາຣະບູຊານັ້ນບໍ່ມີຕົນບໍ່ມີຕົວຈິງ”

ແລະບັນດາຊາວໂລກຈະຊົມຊື່ນຍິນດີເພາະເຂົາ ຈະສນຸກມ່ວນຊື່ນ ຈະໃຫ້ຂອງຂວັນຊຶ່ງກັນແລະກັນ ເພາະຜູ້ປະກາດພຣະທັມທັງສອງນີ້ໄດ້ທໍຣະມານຊາວໂລກທັງຫລາຍ (ພຣະນິມິດ 11:10) ປະຊາຊົນຂອງຝຣັ່ງເສດທີ່ບໍ່ເຊື່ອພຣະເຈົ້າໄດ້ລະງັບສຽງແຫ່ງພະຍານທັງສອງຂອງພຣະເຈົ້າ ພຣະທັມແຫ່ງຄວາມຈິງນອນ “ຕາຍ” (ເຜົາໄຟຖິ້ມ) ເທິງທ້ອງຖນົນ ຜູ້ທີ່ກຽດຊັງພຣະບັນຍັດຂອງພຣະເຈົ້າດີອົກດີໃຈເປັນລ້ານເປັນພັນ ຄົນເຫລົ່ານັ້ນໄດ້ເຮັດໃຫ້ພຣະມະຫາກະສັດແຫ່ງສວັນໝົດຄວາມບໍຣິສຸດສັກສິດຢ່າງແຈ່ມແຈ້ງ

## ບັງອາດກ່າວໝິ່ນປມາດພຣະເຈົ້າ

ບາດຫລວງຂອງກຸ່ມໃຫຍ່ຮູບນຶ່ງກ່າວວ່າ “ຂ້າແດ່ພຣະເຈົ້າຖ້າພຣະອົງຊົງມີພຣະຊົນຢູ່ຈິງແທ້ ຂໍໃຫ້ພຣະອົງຊົງແກ້ແຄ້ນຜູ້ໝິ່ນປມາດພຣະນາມຂອງພຣະອົງ ຂ້າພຣະອົງທ້າທາຍພຣະອົງແຕ່ພຣະອົງຊົງງຽບຢູ່ ພຣະອົງບໍ່ກ້າປະຫັກປະຫານສັດຕຣູແລ້ວໃຜໜໍຈະເຊື່ອວ່າພຣະອົງຊົງມີຈິງ” ຄຳເວົ້າເຊັ່ນນີ້ຊ່າງເໝືອນກັບຄຳເວົ້າຂອງຟາໂຣ ທີ່ກ່າວວ່າ “ພຣະເຈົ້ານັ້ນເປັນຜູ້ໃດໜໍເຮົາຈຶ່ງຈະຕ້ອງຟັງຄຳຂອງພຣະເຈົ້າ”



ໃນເວລານັ້ນຍັງມີຊາຍແປກໜ້າຈາກປະເທດອັງກິດ ເປັນຜູ້ມີການສຶກສາໄດ້ຮັບແສງແຫ່ງສວ່າງຄວາມຈິງ ໄດ້ນຳສິ່ງນັ້ນມາເຜີຍແຜ່ໃນກຸງປຣາກ ຕໍ່ມາບໍ່ນານກໍງຽບຫາຍໄປ ແຕ່ທັງສອງບໍ່ຍອມເລີກຄວາມມຸ້ງໝັ້ນເພີ່ນງ່າຍໆ ຈຶ່ງພຍາຍາມຫາວິທີການອື່ນຕໍ່ໄປ ການທີ່ເພິ່ນເປັນນັກເທດແລະນັກແຕ້ມຮູບຈຶ່ງໄດ້ແຕ້ມຮູບພາບສອງຮູບພາບໃນທີ່ສາທາຣະນະໃຫ້ຄົນໄດ້ເຫັນຮູບພາບນຶ່ງເປັນຮູບພາບທີ່ພຣະເຢຊູກຳລັງສະເດັດເຂົ້າກຸງເຢຣູຊາເລັມ “ໂດຍພຣະທັຍອ່ອນສຸພາບປະທັບເທິງຫລັງລໍ ”(ມັດ ທາຍ 21:5) ຕິດຕາມດ້ວຍອັຄສາວົກຂອງພຣະອົງທີ່ສວມເສື້ອຄຸມສຳລັບເດີນທາງທີ່ຂາດແລະຍ່າງດ້ວຍຕີນເປົ່າ ສ່ວນອີກຮູບພາບນຶ່ງສະແດງໃຫ້ເຫັນຂະບວນຂອງສັນຕະປາປາ ອົງສັນຕະປາປາສວມເສື້ອຄຸມທີ່ມີຣາຄາແພງສວມມົງກຸດປະທັບເທິງຫລັງມ້າທີ່ປະດັບປະດາດ້ວຍສີສັນສວຍສົດງົດງາມມີຄົນເປົ່າແກນຳໜ້າແລະຕິດຕາມດ້ວຍພຣະຄາດິນັນແລະບາດຫລວງຊັ້ນສູງຕ່າງກໍສວມເສື້ອຜ້າທີ່ງາມຫລູຫລາແລະສະອາດຕາ

ປະຊາຊົນພາກັນຫລຽວເບິ່ງຮູບພາບທັງສອງຢ່າງລົ້ນເຫລືອ ບໍ່ມີໃຜເບິ່ງບໍ່ເຫັນຄວາມຜິດຖືກຈຶ່ງເກີດມີຄວາມສັບສົນວຸ່ນວາຍຢ່າງໃຫຍ່ຫລວງໃນນະຄອນປຣາກຊາຍແປກໜ້າທັງສອງຄົນຈຳເປັນຕ້ອງຈາກໄປ ແຕ່ຮັດປະທັບໃຈໃນຮູບພາບທັງສອງນັ້ນຢ່າງເລິກຊຶ້ງເຮັດໃຫ້ເພິ່ນຫັນມາສຶກສາພຣະຄັມພີແລະຂໍ້ຂຽນຂອງໄວຄລິບຫລາຍຂຶ້ນ

ເຖິງແມ່ນວ່າເພິ່ນຍັງບໍ່ພ້ອມທີ່ຈະຍອມຮັບການປະຕິຮູບທຸກຢ່າງທີ່ໄວຄລິບສນັບສນູນກໍຕາມ ແຕ່ເພິ່ນກໍມອງເຫັນເຖິງພຶດຕິການທີ່ແທ້ຈິງຂອງລະບອບສັນຕະປາປາ ແລະປະນາມຄວາມຍິ່ງຍະໂສ ຄວາມທະເຍີທະຍານແລະການສຸດຈະຣິດຂອງຄະນະສົງ

## ກຸງປຣາກພາຍໃຕ້ຄຳສັ່ງຫ້າມ

ຂ່າວນີ້ໄດ້ຖືກສົ່ງໄປຍັງກຸງໂຣມ ຣັດຖືກຮຽກໃຫ້ເຂົ້າເຝົ້າພຣະສັນຕະປາປາ ຫາກເພິ່ນເຊື່ອຟັງຄົງຈະຕ້ອງເຖິງແກ່ຄວາມຕາຍແນ່ນອນ ກະສັດແລະພຣາຊີນີແຫ່ງໂບຮີເມັຽ ທາງມະຫາວິທະຍາລັຍສະມາຊິກຂຸນນາງແລະເຈົ້າໜ້າທີ່ຂອງລັຖບານໄດ້ຮວມຕົວກັນຮຽກຮ້ອງຕໍ່ສັນຕະປາປາແຫ່ງໂຣມ ເພື່ອຈະຂໍອານຸຍາດໃຫ້ຣັດຢູ່ທີ່ນະຄອນປຣາກ ແລະຂໍໃຫ້ຕົວແທນຣັດເປັນຜູ້ໄປຕອບຄຳຖາມແທນ ແຕ່ສັນຕະປາປາກັບດຳເນີນຕັດສິນເອງ ປະນາມຣັດແລະປະກາດໃຫ້ກຸງປຣາກຕົກຢູ່ພາຍໃຕ້ຄຳສັ່ງຫ້າມການປະກອບພິທີທາງສາສນາ

ໃນຍຸກນັ້ນການຕັດສິນເຊັ່ນນີ້ສ້າງຄວາມຕື່ນຕົວ ປະຊາຊົນມອງສັນຕະປາປາໃນຖານະຕົວແທນຂອງພຣະເຈົ້າ ຜູ້ຖືກະແຈສວັນແລະນະຣົກຄອບຄອງອຳນາດການພິພາກສາລົງໂທດແຕ່ພຽງຜູ້ດຽວ ເຊື່ອກັນວ່າຖ້າເຮັດໃຫ້ເປັນທີ່ຊອບພຣະທັຍຂອງສັນຕະປາປາເທົ່ານັ້ນ ທີ່ຈະເຮັດໃຫ້ພົ້ນຈາກຄຳສັ່ງການຖືກໄລ່ອອກຈາກສາສນາໄດ້ ຄົນຕາຍກໍຈະບໍ່ໄດ້ເຂົ້າສູ່ຄວາມສຸກສຳຣານ ພິທີກັມຕ່າງໆ ທາງສາສນາຖືກສັ່ງໃຫ້ຢຸດຊົ່ວຄາວ ໂບດທົ່ວໄປຕ້ອງປິດລົງ ພິທີສົມຣົດຕ້ອງທຳກັນທີ່ສນາມບໍຣິເວນ ໂບດສົບຖືກຝັງໄວ້ຕາມທົ່ງນາ, ທົ່ງຫຍ້າແລະທໍ່ລະບາຍນ້ຳ ໂດຍບໍ່ໄດ້ປະກອບພິທີ ທາງສາສນາ

ກຸງປຣາກເຕັມໄປດ້ວຍຄວາມສັບສົນວຸ່ນວາຍ ຄົນພາກັນປະຕິເສດຣັດແລະສັ່ງໃຫ້ເພິ່ນຍອມຈຳນົນຕໍ່ໂຣມ ເພື່ອຈະເຮັດໃຫ້ພະຍຸຮ້າຍສະງົບລົງ ນັກປະຕິຮູບຈຶ່ງຖອນຕົວຊົ່ວໄລຍະນຶ່ງໄປອາສັຍຢູ່ໃນໝູ່ບ້ານຂອງຕົນ ເພິ່ນບໍ່ຍອມຢຸດທຳງານແຕ່ທ່ອງທ່ຽວໄປທົ່ວປະເທດເທສນາສັ່ງສອນແກ່ຝູງຊົນທີ່ສົນໃຈ ເມື່ອຄວາມວຸ່ນວາຍໃນນະຄອນປຣາກສະງົບລົງແດ່ແລ້ວ ຣັດຈຶ່ງໄດ້ຫວນກັບໄປເພື່ອເທສນາສັ່ງສອນພຣະທັມຂອງພຣະເຈົ້າຕໍ່ໄປ ສັດຕຣູຂອງເພິ່ນມີຈຳນວນຫລວງຫລາຍ ແຕ່ເພິ່ນກໍມີພຣະຣາຊີນີແລະບັນດາຂຸນນາງເປັນມິດສະຫາຍທີ່ດີແລະປະຊາຊົນທົ່ວໄປສ່ວນຫລາຍກໍຍັງຢູ່ຝ່າຍເພິ່ນ

ຣັດຍືນຍັດໃນການທຳງານແຕ່ພຽງຜູ້ດຽວ ບັດນີ້ເຈີໂຣມໄດ້ເຂົ້າຮ່ວມງານການປະຕິຮູບດ້ວຍ ຕັ້ງແຕ່ນັ້ນເປັນຕົ້ນມາທັງສອງຮ່ວມເປັນຮ່ວມຕາຍແລະໃນຄວາມຕາຍເພິ່ນບໍ່ໄດ້ແຍກຈາກກັນໃນຄວາມເປັນຜູ້ມີຄຸນຄ່າຕ່າງໆ ເຫລົ່ານີ້ໄດ້ຮ່ວມກັນເປັນ



ຫານທີ່ໜ້າຢ້ານກົວ ຂນະທີ່ຄຣິສະຕຽນໂປເຕສແຕນນັບພັນຄົນກຳລັງນອນຫລັບຢ່າງສະບາຍໃນຕອນກາງຄືນ ຖືກລາກອອກໄປປະຫານໃຫ້ໝົດ

ໃນກຸງປາຣີ ການປະຫານໝູ່ໄດ້ດຳເນີນໄປເປັນເວລາເຈັດວັນ ພຣະຣາຊາໄດ້ຣັບສັ່ງໃນທຳການປະຫານໝູ່ນີ້ໄປທຸກເມືອງທີ່ມີຄຣິສະຕຽນໂປເຕສແຕນຢູ່ ທັງຂຸນນາງແລະຊາວນາ ທັງຄົນຊະຣາແລະເຍົາວະຊົນ ທັງຜູ້ເປັນແມ່ແລະລູກຖືກຂ້າຕາຍພ້ອມກັນຢ່າງໜ້າອະເນັດອະນາດ ປະຊາຊົນເປັນຜູ້ມີຄວາມສາມາດຍອດຢ້ຽມຂອງປະເທດທີ່ຖືກຂ້າຕາຍເຖິງ 70,000 ຄົນ

“ເມື່ອຂ່າວການສັງຫານໝູ່ຖືກສົ່ງໄປເຖິງກຸງໂຣມ ບັນດາບາດຫລວງຕ່າງກໍຍົກຍ້ອງສັນລະເສີນການກະທຳເທື່ອນີ້ ຄາດີນັນແຫ່ງລໍເຣນໄດ້ບຳເໜັດລາງວັນໃຫ້ຜູ້ກະທຳການສັງຫານໝູ່ເທື່ອນີ້ຢ່າງງົດງາມ ປືນໃຫຍ່ແຫ່ງເຊນແອງເຈນໂລຍິງສລຸດ ສະແດງຄວາມຊົມຊື່ນຍິນດີ ສຽງລະຄັງດັງກັງວານຈາກຫໍລະຄັງທຸກແຫ່ງມີການຈຸດໄຟສວ່າງສໄວສໍາກັບກາງເວັນ ສັນຕະປາປາເກຣກໍຣີ່ທີ່ 13 ຕິດຕາມດ້ວຍບັນດາຄານດີນັນແລະຜູ້ມີສົມມະນາສັກຝ່າຍສາສນາ ພາກັນເດີນຂະບວນໄປຍັງໂບດເຊນຫລຸຍຊຶ່ງຄາດີນັນແຫ່ງລໍເຣນໄດ້ສູດມົນພາວັນນາ ເທ ເດອຸມ (Te Deum) ພວກເຂົາໄດ້ເຮັດຫລຽນຕຣາທີ່ລະນຶກສຳລັບການສັງຫານໝູ່ໃນເທື່ອນີ້ ບາດຫລວງຊາວຝຣັ່ງເສດອົງນຶ່ງກໍໄດ້ກ່າວໃນວັນນັ້ນດ້ວຍຄວາມຊົມຊື່ນຍິນດີຢ່າງເຫລືອລົ້ນ ເມື່ອສັນຕະປາປາໄດ້ຮັບຂ່າວການສັງຫານໝູ່ໃນເທື່ອນີ້ໄດ້ສະເດັດເຂົ້າໄປໃນຫ້ອງເພື່ອອະທິຖານຂອບພຣະຄຸນພຣະເຈົ້າແລະນັກບຸນຫລຸຍ

ຜູ້ນຳຢູ່ເບື້ອງຫລັງ ນຳໄປສູ່ການສັງຫານໝູ່ໃນວັນເຊນບາໂຕໂລມິວ ເປັນບຸກຄົນດຽວກັນໃນເຫດການຂອງການປະຕິຫວັດ ພຣະເຢຊູຄຣິດຖືກກ່າວຫາວ່າເປັນຜູ້ຫລອກລວງ ບັນດາພົລເມືອງຝຣັ່ງເສດທີ່ບໍ່ເຫລື້ອມໃສໃນສາສນາກໍຮ້ອງຂື້ນວ່າ “ທຳລາຍຜູ້ຫລອກລວງນັ້ນສາ” (ໝາຍເຖິງພຣະຄຣິດ) ການໝິ່ນປມາດພຣະເຈົ້າ ແລະຄວາມຊົ່ວຮ້າຍໄປດ້ວຍກັນ ທຸກຢ່າງນີ້ເປັນຜົນງານຂອງຊາຕານ ກົງການຂ້າມພຣະຄຣິດຜູ້ຊົງເປັນຄວາມຈິງຄວາມບໍຣິສຸດ ແລະຄວາມຮັກທີ່ບໍ່ເຫັນແກ່ຕົວ ຊົງຖືກ “ຄຶງເທິງໄມ້ກາງແຂນ”

ສັດຮ້າຍທີ່ຂື້ນມາຈາກເຫວເລິກນັ້ນ ກໍຈະສູ້ຮົບກັບເຂົາ ຈະຊະນະເຂົາ ແລະຈະຂ້າເຂົາ (ພຣະນິມິດ 11:7) ອຳນາດຂອງການບໍ່ເຊື່ອວ່າມີພຣະເຈົ້າໄດ້ຄອບງຳໃນປະເທດຝຣັ່ງເສດ ລະຫວ່າງທີ່ມີການປະຕິຫວັດການປົກຄອງອັນໂຫດຮ້າຍ ໄດ້ເຮັດສິ່ງ

ເສີດຂອງພຣະເຈົ້າ ຝຣັ່ງເສດໄດ້ຄຶງພຣະຄຣິດອີກເທື່ອນຶ່ງດ້ວຍຊີວິດຂອງບັນດາສາວົກຂອງພຣະຄຣິດ

ສັດຕະວັດແລ້ວສັດຕະວັດອີກ ໂລຫິດຂອງບັນດາທັມມະກິຊົນໄດ້ຫລັ່ງໄຫລ ເມື່ອພວກວອນເດນໄດ້ຍອມສະລະຊີວິດເທິງພູແຫ່ງພີດມອງ "ເພື່ອເປັນພະຍານໃຫ້ກັບພຣະຄຣິດ" ການເປັນພະຍານເຊັ່ນດຽວກັນນີ້ໄດ້ເກີດຂຶ້ນກັບພວກອັນບີເຈນເຊັ່ນກັນ ບັນດາຜູ້ເຊື່ອການປະຕິຮູບສາສນາກໍຖືກຂ້າຕາຍຢ່າງໂຫດຮ້າຍທາຣຸນທັງກະສັດ ແລະພວກຂຸນນາງ ສະຕຣີຜູ້ເກີດໃນຕະກຸນສູງ ຍິງສາວວັຍແຮກຣຸ່ນຕ່າງກະຫາຍເຝົ້າເບິ່ງຄວາມທຸກທໍຣະມານຂອງຜູ້ສະລະຊີບເພື່ອພຣະເຢຊູ ພວກຮິວໂກ ນ໊ອກ ຜູ້ກ້າຫານໄດ້ຫລັ່ງເລືອດລົງເທິງສນໍຣະພູມ ແລະຖືກຕາມລ່າສໍ່າກັບວ່າລ່າສັດ

ໃນສັດຕະວັດທີ່ 18 ລູກຫລານຂອງຄຣິສະຕຽນໃນສມັຍໂບຮານຍັງຄົງຫລົງເຫລືອຢູ່ໃນປະເທດຝຣັ່ງເສດໄດ້ໜີໄປຫລົ້ໂຕຢູ່ທີ່ພູທາງພາກໃຕ້ ເພື່ອດໍາຣົງຄວາມເຊື່ອຂອງບັນພຣະບຸຣຸດຂອງພວກເຂົາໄວ້ ກໍຖືກນໍາໄປເປັນຊະເລີຍໃນເຮືອຕລອດຊີວິດ ຜູ້ບໍຣິສຸດແລະສລຽວສລາດທີ່ສຸດໃນຝຣັ່ງເສດຖືກຫລ່າມໂຊ້ ຖືກທໍຣະມານຢ່າງໂຫດຮ້າຍທາຣຸນຖ້າມກາງພວກໂຈນ ແລະພວກຜູ້ຮ້າຍຂ້າຄົນ ບາງຄົນຖືກຍິງຕາຍແບບເລືອດເຢັນໃນຂນະທີ່ພວກເຂົາຄຸເຂົ່າອະທິຖານ ບ້ານເມືອງຂອງເຂົາຖືກທໍາລາຍດ້ວຍດາບ ຂວານແລະດົ້ນຟືນ "ກາຍເປັນປ່າກັນດານອັນມືດມົນທີ່ກວ້າງໃຫຍ່ພັຍສານ" ຄວາມໂຫດຮ້າຍທາຣຸນນີ້ບໍ່ໄດ້ກະທໍາໃນສມັຍຍຸກມືດ ແຕ່ກະທໍາໃນສມັຍຮຸ່ງເຮືອງຂອງພຣະເຈົ້າຫລຸຍທີ່ 14 ມີການສຶກສາດ້ານວິທະຍາສາດ ການຂຽນໜັງສືແລະຄວາມຮູ້ກໍລ້ວນຈະເຣີນຮຸ່ງເຮືອງ ໃນພຣະຣາຊສໍານັກແລະໃນເມືອງຫລວງຕ່າງກໍມີຄົນທີ່ມີການສຶກສາແລະເກັ່ງກາດ ພວກເຂົາມີສ່ວນສັ່ງສອນປະຊາຊົນ ຮຽນຮູ້ເຖິງຄວາມອ່ອນສຸພາບແລະມີໃຈເອື້ອເຟື້ອເພື່ອແຜ່

## ອາຊຍາກັມທີ່ຮ້າຍແຮງທີ່ສຸດ

ແຕ່ສິ່ງທີ່ໜ້າຂົນຫົວພອງທີ່ສຸດໃນບັນດາການກະທໍາທີ່ຫ້ຽມໂຫດໃນຮອບສັດຕະວັດກໍຄືການສັງຫານໝູ່ໃນວັນສລອງນັກບຸນບາໂລມິວ ບັນດາບາດຫລວງຂອງຄຣິສຕະຈັກໂຣມເປັນຜູ້ສນັບສນູນໃຫ້ພຣະຣາຊາແຫ່ງຝຣັ່ງເສດໄດ້ອະນຸຍາດໃຫ້ກະທໍາອາຊຍາກັມເທື່ອນີ້ ສຽງລະຄັງດັງກັງວານໃນຍາມດຶກ ເປັນສັນຍານແຫ່ງການປະ



ພະລັງທີ່ແທ້ຈິງແຫ່ງອຸປະນິສັຍ ຮັດເປັນຜູ້ຍິ່ງໃຫຍ່ກວ່າໃຜ ເຈີໂຣມ ຜູ້ມີຄວາມຖ່ອມຕົນຮູ້ດີຂອງຄຸນຄ່າຂອງຮັດແລະຂໍຄໍາປຶກສາຈາກເພິ່ນສເມີ ເພາະພາຍໃຕ້ການຮ່ວມກັນທໍາງານເຮັດໃຫ້ງານປະຮູບສາສນາກ້າວໜ້າໄປຢ່າງວ່ອງໄວ

ພຣະເຈົ້າ ຊົງປະທານແສງສວ່າງອັນຍິ່ງໃຫຍ່ສ່ອງເຂົ້າສູ່ຈິດໃຈຂອງຊາຍທັງສອງຜູ້ໄດ້ຮັບການເລືອກສັນເປີດເຜີຍໃຫ້ຮູ້ຄວາມຜິດຕ່າງໆ ຂອງໂຣມ ແຕ່ທັງສອງກໍຍັງບໍ່ໄດ້ຮັບແສງສວ່າງທັງໝົດແກ່ຊາວໂລກ ພຣະເຈົ້າຊົງນໍາປະຊາຊົນໃຫ້ອອກຈາກຄວາມມືດຂອງຄວາມບໍ່ຖືກຕ້ອງແຫ່ງໂຣມ ແລະພຣະອົງຊົງນໍາເພິ່ນທີລະຂັ້ນຕາມທີ່ຈະສາມາດເຮັດໄດ້ ເໝືອນຜູ້ທີ່ຢູ່ໃນຄວາມມືດມາດົນນານ ຫາກຖືກແສງດວງອາທິດຕອນທ່ຽງອັນສ່ອງຈ້າທັນທີທັນໃດ ຍ່ອມເຮັດໃຫ້ເພິ່ນທົນບໍ່ໄດ້ຕ້ອງຫລົບໜີໄປ ດັ່ງນັ້ນພຣະອົງຈຶ່ງຊົງສໍາແດງທີລະເລັກລະນ້ອຍຕາມຄວາມສາມາດຂອງປະຊາຊົນຈະຮັບໄດ້

ການແຕກຄວາມສາມັກຄີໃນຄຣິສຕະຈັກຍັງດໍາເນີນຕໍ່ໄປ ມີສັນຕະປາປາສາມອົງກໍາລັງຊ່ວງຊີງຄວາມເປັນໃຫຍ່ ຄວາມຄັດແຍ່ງຂອງທ່ານເຫລົ່ານັ້ນເຮັດໃຫ້ອານາຈັກຄຣິສະຕຽນທົ່ວໄປເກີດຄວາມສັບສົນວຸ່ນວາຍ ຕ່າງຝ່າຍຕ່າງກໍກ່າວຫາກັນດ້ວຍຄວາມຫຍາບຄາຍແຕ່ລະຝ່າຍກໍຫາເງິນເພື່ອຊື້ອາວຸດແລະຈ້າງທະຫານ ແນ່ນອນຈະຕ້ອງມີເງິນທອງເພື່ອການນີ້ ເພື່ອໃຫ້ໄດ້ສິ່ງເຫລົ່ານີ້ມາຖວາຍເຄື່ອງໃຊ້ໄມ້ສອຍແລະສິ່ງມີຄ່າຂອງຄຣິສຕະຈັກຈຶ່ງຖືກນໍາອອກມາຂາຍ

ດ້ວຍຄວາມກ້າຫານທີ່ເພີ່ມຫລາຍຂຶ້ນ ຮັດລຸກຂຶ້ນປະນາມຄວາມໜ້າສະອິດສະອຽນທີ່ແຝງໃນນາມຂອງສາສນາ ປະຊາຊົນທົ່ວໄປກ່າວຫາໂຣມຢ່າງເປີດເຜີຍວ່າເປັນສາຍເຫດໃຫ້ເກີດຄວາມວຸ່ນວາຍແກ່ອານາຈັກຄຣິສະຕຽນອີກເທື່ອນຶ່ງ ທີ່ນະຄອນປຣາກເກືອບຈະເປັນຄວາມຂັດແຍ່ງທີ່ນອງເລືອດ ເຊັ່ນດຽວກັບໃນສມັຍຂອງພຣະຄັມພີທີ່ຜູ້ຮັບໃຊ້ຂອງພຣະຖືກກ່າວຫາວ່າ "ນີ້ຕົວເຈົ້າຫລືເຈົ້າຜູ້ນໍາຄວາມລໍາບາກໃຫ້ອິສາຣະເອນ" (1ພົງກະສັດ 18:17) ນະຄອນແຫ່ງນີ້ຕົກຢູ່ພາຍໃຕ້ຄໍາສັ່ງຫ້າມແລະຮັດໄດ້ຖອນຕົວກັບໄປຢູ່ໝູ່ບ້ານເດີມຂອງເພິ່ນ ເພິ່ນຈຶ່ງເວົ້າຈາກສະຖານທີ່ໆກວ້າງໃຫຍ່ກວ່ານີ້ ເພື່ອອານາຈັກຄຣິສະຕຽນທັງຫລາຍກ່ອນທີ່ຈະວາງຮ່າງຂອງຕົນໃນຖານະພະຍານເພື່ອຄວາມຈິງ

ສະມາຊິກສະພາທ້ອງຖິ່ນໄດ້ຖືກຮຽກໃຫ້ມາຊຸມນຸມກັນທີ່ເມືອງຄອນສະແຕນ (ພາກຕະເວັນຕົກສຽງໃຕ້ຂອງເຢຣະມັນນີ) ຜູ້ທີ່ດຳເນີນການຮຽກຮ້ອງໃຫ້ມາປະຊຸມກັນຄັ້ງນີ້ຄືສັນຕະປາປານຶ່ງໃນສາມທີ່ຊ່ວງຊີງກັນເປັນໃຫຍ່ ສັນຕະປາປາຈອນທີ່ 23 ຜູ້ມີອຸປະນິສັຍແລະນະໂຍບາຍທີ່ບໍ່ມັກການສອບສວນແຕ່ກໍບໍ່ກ້າທີ່ຄັດພະບັນຊາຂອງຈັກກະພັດໄຊຈິສະມັນ ເຣື່ອງທີ່ສຳຄັນສຸດຍອດໃນການປະຊຸມເທື່ອນີ້ຄືກຳຈັດຄວາມແຕກແຍກໃນຄຣິສຕະຈັກ ແລະຖອນຮາກຖອນໂຄ່ນພວກ "ນອກຮີດ" ສັນຕະປາປາສອງອົງທີ່ຕໍ່ຕ້ານກັນຮວມທັງຈອນຮັດກໍຖືກຮຽກໃຫ້ປາກົດຕໍ່ທີ່ປະຊຸມດ້ວຍ ສັນຕະປາປາໄດ້ໄປເອງແຕ່ແຕ່ງຕັ້ງຜູ້ແທນເຂົ້າປະຊຸມ ສັນຕະປາປາ ຈອນສະເດັດມາກັງວົນແລະຫວາດກົວວ່າຈະຖືກໄຕ່ສວນໄປເຖິງຄວາມຊົ່ວຮ້າຍ ຊຶ່ງອາດເກີດຄວາມປະຍົດອົດສູຕໍ່ຕຳແໜ່ງສັນຕະປາປາຂອງພຣະອົງແລະກຳເວນທີ່ກໍ່ໄວ້ ເພື່ອໃຫ້ໄດ້ຕຳແໜ່ງນັ້ນມາ ເຖິງປານນັ້ນກໍຕາມພຣະອົງກໍຍັງເດີນຂະບວນເຂົ້າສູ່ເມືອງຄອນສະແຕນຢ່າງຍິ່ງໃຫຍ່ ພ້ອມທັງບາດຫລວງແລະຂ້າຣາຊບໍຣິພານເໜືອຫົວຂອງພຣະອົງມີລົດເຮັດດ້ວຍທອງຄຳ ຖືໂດຍຂ້າຣາຊການຝ່າຍປົກຄອງສ່ວນທ້ອງຖິ່ນສີ່ຄົນມີກອງທະຫານນຳໜ້າຂະບວນຊຸດເສື້ອຜ້າຣາຄາແພງຂອງຄາຣ໌ນັນແລະຂອງຜູ້ສູງສົ່ງທັງຫລາຍເຮັດໃຫ້ເບິ່ງຫລູຫລາສະງ່າງາມ

ໃນຂນະດຽວກັນນັກເດີນທາງຜູ້ນຶ່ງມຸ້ງໜ້າສູ່ເມືອງຄອນສະແຕນ ເຊັ່ນດຽວກັນຮັດຕ້ອງຈາກເພື່ອນໆ ໄປເໝືອນວ່າເພິ່ນຈະບໍ່ມີວັນໄດ້ພົບກັນອີກ ເພິ່ນຮູ້ສຶກວ່າການເດີນທາງມຸ່ງສູ່ແດນປະຫານ ເພິ່ນໄດ້ຮັບການຄຸ້ມກັນຈາກກະສັດແຫ່ງໂບຮີເມັຽ ແລະຈັກກະພັດໄຊຈິສະມັນ ແຕ່ເພິ່ນກໍຕຽມພ້ອມທີ່ຈະຜະເຊີນກັບຄວາມຕາຍທີ່ອາດເກີດຂຶ້ນໄດ້

## ການຄຸ້ມກັນຈາກກະສັດ

ໃນຈົດໝາຍທີ່ຂຽນເຖິງເພື່ອນໆ ຂອງເພິ່ນວ່າ "ພີ່ນ້ອງຂອງຂ້າພະເຈົ້າ ຂ້າພະເຈົ້າໄດ້ຮັບການຄຸ້ມຄອງຈາກກະສັດໃນການເດີນທາງເພື່ອພົບກັບສັດຕຣູ ມະນຸດຜູ້ຕ້ອງຕາຍຈຳນວນຫລວງຫລາຍຂອງຂ້າພະເຈົ້າເທື່ອນີ້ ພຣະເຢຊູຄຣິດໄດ້ຮັບຄວາມ



ໄປຕາມຄຳພະຍາກອນໃນພຣະຄັມພີເປັນທີ່ສຳເຣັດຕາມທີ່ຜູ້ປະກາດພຣະທັມໄດ້ກ່າວໄວ້ແລ້ວວ່າກ່ອນ ຄ.ສ. 1798 ນ້ອຍນຶ່ງ ອຳນາດອັນຊົ່ວຮ້າຍຂອງຊາຕານບາງສ່ວນຈະລຸກຂຶ້ນເຮັດສົງຄາມຕໍ່ສູ້ພຣະຄັມພີ ແລະດິນແດນແຫ່ງນີ້ "ພະຍານທັງສອງ" ຂອງພຣະເຈົ້າຈະຖືກລະງັບສຽງ ແລະຈະສຳແດງໃຫ້ເຫັນເຖິງການບໍ່ເຊື່ອພຣະເຈົ້າເຊັ່ນດຽວກັບຟາໂຣ ແລະປະພຶດຊົ່ວຮ້າຍເຊັ່ນດຽວກັບເມືອງໂຊໂດມ ຄຳພະຍາກອນສຳເຣັດສົມບູນ

ຄຳພະຍາກອນນີ້ໄດ້ສຳເຣັດຈິງທຸກຢ່າງໃນປະຫວັດສາດຂອງປະເທດຝຣັ່ງເສດໃນລະຫວ່າງການປະຕິຫວັດເມື່ອປີ ຄ.ສ. 1793 "ຝຣັ່ງເສດເປັນຊາດດຽວໃນໂລກທີ່ອອກກົດໝາຍປະກາດວ່າບໍ່ມີພຣະເຈົ້າ ພົລເມືອງທັງໝົດໃນເມືອງຫລວງແລະພົລເມືອງສ່ວນຫລາຍໃນສ່ວນອື່ນໆ ຂອງປະເທດທັງຊາຍແລະຍິງຮ້ອງເພງແລະເຕັ້ນລຳຢ່າງສນຸກສນານເມື່ອເຂົາໄດ້ຟັງຄຳປະກາດນີ້"

ຝຣັ່ງເສດໄດ້ສະແດງໃຫ້ເຫັນເຖິງອຸປນິສັຍທຸກຢ່າງເໝືອນກັບເມືອງໂຊໂດມ ນັກປະຫວັດສາດໄດ້ກ່າວເຖິງການຮວມເຂົ້າກັບລັດທິທີ່ບໍ່ເຊື່ອໃນພຣະເຈົ້າແລະຄວາມເຊື່ອມຊາມທາງສິລທັມຂອງປະເທດຝຣັ່ງເສດເຂົ້າໄວ້ດ້ວຍກັນເຊັ່ນນີ້ "ນອກຈາກກົດໝາຍທີ່ກ່ຽວຂ້ອງກັບສາສນາແລ້ວຍັງມີກົດໝາຍທີ່ລົດຄວາມຜູກພັນໃນການສົມຣົດອັນເປັນພິທີອັນສັກສິດທີ່ສຸດມະນຸດສາມາດກະທຳໄດ້ ການຢູ່ດ້ວຍກັນຕລອດໄປຂອງສາມີພັນລະຍາເປັນຫລັກປະກັນຂອງສັງຄົມ ແຕ່ເມື່ອຣັດທີ່ມີພົລເມືອງເປັນຜູ້ກະທຳໜ້າທີ່ຜູກພັນພຽງຊົ່ວຄາວໃຜກໍໄດ້ພຽງສອງຄົນທີ່ມາຢູ່ຮ່ວມກັນແລະແຍກກັນຢູ່ຊົ່ວຄາວເພື່ອສະແຫວງຫາຄວາມສຸກຕາມຄວາມພໍໃຈ ໂຊຟີ ອາໂນລ ດາຣາລະຄອນຜູ້ມີຊື່ສຽງດ້ານການຕລົກໄດ້ບັນຣະຍາຍການສົມຣົດຂອງທີ່ຣັຖບານຈັດຂຶ້ນວ່າເໝືອນກັບ "ພິທີລ່ວງປະເວນີ"

## ສັດຕຣູຂອງພຣະຄຣິດ

"ອົງພຣະຜູ້ເປັນເຈົ້າຂອງເຮົາຖືກຄຶງດ້ວຍ" ປະຊາຊົນໃນປະເທດຝຣັ່ງເສດໄດ້ເຮັດໃຫ້ຄຳພະຍາກອນນີ້ສຳເຣັດບໍ່ມີປະຊາຊົນຂອງປະເທດໃດທີ່ໄດ້ຕໍ່ສູ້ຂັດຂວາງພຣະທັມແຫ່ງຄວາມຈິງຢ່າງຮ້າຍແຮງເທົ່ານີ້ ມີການກົດຂີ່ຂົ່ມເຫງຜູ້ທີ່ຍອມຮັບຂ່າວປະ

"ເຂົາຈະປະກາດພຣະທັມຕລອດພັນສອງຮ້ອຍຫົກສິບວັນ ແລະໃຫ້ເຂົາແຕ່ງຕົວດ້ວຍຜ້າເນື້ອຫຍາບ" ເມື່ອປະຊາຊົນຖືກສັ່ງຫ້າມບໍ່ໃຫ້ມີການອ່ານພຣະຄັມພີ ຄຳພະຍານຂອງພຣະຄັມພີກໍຖືກບິດເບືອນຄວາມໝາຍໄປໃນທາງທີ່ຜິດ ເມື່ອຜູ້ທີ່ກ້າຫານປະກາດຄວາມຈິງຖືກທໍຣະຍົດ ຖືກທໍຣະມານ ແລະສະລະຊີວິດເພື່ອຄວາມເຊື່ອຂອງພວກເຂົາ ຫລືຖືກບີບບັງຄັບໃຫ້ໜີໃນເວລານີ້ເທົ່າກັບວ່າບັນດາ "ພະຍານ" ທີ່ຊື່ສັດໄດ້ "ນຸ່ງຮົ່ມຜ້າເນື້ອຫຍາບ" ກ່າວຄຳພະຍາກອນໃນເວລາທີ່ມີຄວາມທຸກຍາກທີ່ສຸດພຣະເຈົ້າຊົງປະທານສະຕິປັນຍາແລະສິດອຳນາດໃຫ້ກ່າວພຣະທັມຂອງພຣະອົງ

"ຖ້າຜູ້ໃດຢາກທຳຮ້າຍພະຍານທັງສອງນັ້ນ ໄຟກໍຈະພຸ່ງອອກຈາກປາກຂອງເຂົາເຜົາຜານສັດຕຣູນັ້ນ ແມ່ນແລ້ວ ຖ້າຜູ້ໃດຢາກທຳຮ້າຍເຂົາ ຜູ້ນັ້ນກໍຕ້ອງຕາຍຢ່າງນັ້ນ" (ພຣະນິມິດ 11:5) ມະນຸດທີ່ຢຽບຢ່ຳພຣະທັມຂອງພຣະເຈົ້າຍ່ອມໄດ້ຮັບໂທດ

"ເມື່ອຄຳພະຍານຂອງເຂົາຈົບແລ້ວ" ຂນະທີ່ພະຍານທັງສອງໄດ້ທຳງານ ຢ່າງງຽບໆ ໃກ້ຈະຈົບລົງແລ້ວ "ສັດຮ້າຍນັ້ນທີ່ຂຶ້ນມາຈາກເຫວອັນເລິກ" ໄດ້ເຮັດສົງຄາມສູ້ຮົບກັບເຂົາສິ່ງນີ້ເປີດເຜີຍໃຫ້ເຫັນເຖິງອຳນາດອັນຊົ່ວຮ້າຍຢ່າງໃໝ່ຂອງຊາຕານ

ນະໂຍບາຍຂອງຄຣິສຕະຈັກໂຣມຄືໃຫ້ຍົກຍ້ອງນັບຖືພຣະຄັມພີເກັບຮັກສາຮັກສາໄວ້ໃຫ້ເປັນພາສາທີ່ບໍ່ມີໃຜຮູ້ ເຊື່ອງໄວ້ຈາກປະຊາຊົນ ພາຍໃຕ້ການປົກຄອງຂອງຄຣິສຕະຈັກນີ້ພະຍານທັງສອງໄດ້ນຸ່ງຫົ່ມເສື້ອຜ້າເນື້ອຫຍາບກ່າວຄຳພະຍາກອນແຕ່ "ສັດຮ້າຍນັ້ນທີ່ເຫວເລິກ" ໄດ້ອອກມາສູ້ຮົບກັບພຣະທັມຂອງພຣະເຈົ້າ

"ເມືອງໃຫຍ່" ຊຶ່ງພະຍານທັງສອງຖືກຂ້າຕາຍເທິງທ້ອງຖນົນ ແລະທີ່ຊຶ່ງສົບຂອງພະຍານທັງສອງຢູ່ນັ້ນຄື ອີຢີບຝ່າຍ "ຈິດວິນຍານ" ໃນບັນດາປະເທດຕ່າງໆ ໃນປະຫວັດສາດຂອງພຣະຄັມພີນັ້ນ ອີຢີບເປັນຊາດທີ່ປະຕິເສດການເປັນຜູ້ຊົງພຣະຊົນຢູ່ຂອງພຣະເຈົ້າ ແລະຕໍ່ຕ້ານພຣະບັນຍັດຂອງພຣະອົງຫລາຍກວ່າຊາດໃດ ບໍ່ມີກະສັດຂອງຊາດໃດທີ່ກ້າກະບົດຕໍ່ພຣະເຈົ້າແຫ່ງສວັນເທົ່າກັບກະສັດຟາໂຣແຫ່ງອີຢີບ "ເຮົາບໍ່ຮູ້ຈັກພຣະຜູ້ເປັນເຈົ້າດອກ ເຮົາຈະບໍ່ປ່ອຍໃຫ້ຄົນອິສຣາເອນໄປເດັດຂາດ" (ອົບພຍົບ 5:2) ນີ້ຄືຜູ້ທີ່ບໍ່ເຊື່ອວ່າມີພຣະເຈົ້າ ແລະປະເທດໃດທີ່ອີຢີບເປັນເຄື່ອງໝາຍເລັງເຖິງປະເທດນັ້ນກໍຈະປະຕິເສດພຣະເຈົ້າດຽວກັບຟາໂຣ

"ເມືອງໃຫຍ່" ກໍຖືກປຽບທຽບວ່າເປັນເມືອງໂຊໂດມຝ່າຍ "ຈິດວິນຍານ" ເຊັ່ນດຽວກັນ ຄວາມເຊື່ອມຊາມຂອງເມືອງໂຊໂດມກໍສະແດງໃຫ້ເຫັນເຖິງການກະທຳທີ່ເໝືອນກັບເມືອງບໍ່ມີຂື່ມີແປ ຄວາມບາບຊະນິດນີ້ກໍຄືພຶດຕິກັມຂອງປະເທດທີ່ເປັນ



ທຸກທໍຣະມານເພື່ອບຸກຄົນທີ່ພຣະອົງຮັກ ດ້ວຍເຫດນີ້ສົມຄວນບໍທີ່ເຮົາຈະປລາດໃຈໃນແບບຢ່າງທີ່ພຣະອົງວາງໄວ້ໃຫ້ ເຫດສະນັ້ນພີ່ນ້ອງທີ່ຮັກຖ້າຄວາມຕາຍຂອງຂ້າພະເຈົ້າຈະເປັນສິ່ງທີ່ເຊີດຊູກຽດຕິຍົດຂອງພຣະອົງ ຂ້າພະເຈົ້າກໍອະທິຖານຂໍໃຫ້ຄວາມຕາຍນັ້ນມາເຖິງໂດຍເລວດ້ວຍເຖີດ ເພື່ອພຣະອົງຈະຊົງຊ່ອຍໃຫ້ຂ້າພະເຈົ້າຜະເຊີນຕໍ່ຄວາມຫາຍນະຂອງຂ້າພະເຈົ້າດ້ວຍຄວາມແນ່ວແນ່ ຂໍໃຫ້ເຮົາອະທິຖານຕໍ່ພຣະຜູ້ເປັນເຈົ້າ ເພື່ອຂ້າພະເຈົ້າຈະບໍ່ຢຽບຢ່ຳແມ່ນແຕ່ສ່ວນອັນເລັກນ້ອຍທີ່ສຸດຂອງຄວາມຈິງອັນບໍຣິສຸດ ເພື່ອເປັນແບບຢ່າງທີ່ດີທີ່ພີ່ນ້ອງຄວນປະຕິບັດຕາມ"

ໃນຈົດໝາຍອີກສະບັບນຶ່ງຮັດຊຽນດ້ວຍຄວາມຖ່ອມຕົນ ກ່າວເຖິງຄວາມຜິດຫວັງຂອງເພິ່ນ ຕຳໜິຕົວເອງວ່າ "ມີຄວາມພໍໃຈໃນການສວມເສື້ອຜ້າຫລູຫລາ ແລະການທຳງານເຫລາະແຫລະເສັຽເວລາ" ເພິ່ນກ່າວຕໍ່ໄປວ່າຂໍພຣະຜູ້ເປັນເຈົ້າຜູ້ຊົງພຣະສະງ່າຣາສີແລະຄວາມລອດແຫ່ງຈິດວິນຍານທັງຫລາຍ ຊົງຄອບຄອງຈິດໃຈຂອງເພິ່ນບໍ່ແມ່ນການຄອບຄອງສົມບັດພັດສະຖານ ຂໍໃຫ້ລະມັດລະວັງຢ່າເມົາແຕ່ປະດັບປະດາບ້ານເຮືອນຫລາຍກວ່າການປະດັບປະດາຈິດວິນຍານຂອງເພິ່ນເອງ ແລະເໜືອສິ່ງອື່ນໃດທັງໝົດ ຈົ່ງມອບຊີວິດຈິດໃຈຢູ່ພາຍໃຕ້ການດູແລໂຄງສ້າງຝ່າຍຈິດວິນຍານ ຂໍໃຫ້ມີຄວາມເຄັ່ງຄັດໃນສາສນາແລະຖ່ອມຕົນກັບຜູ້ຍາກຈົນແລະບໍ່ຮັບປະທານອາຫານລະຫວ່າງພິທີອົດອາຫານ"

ນະ ເມືອງຄອນສະແຕນ ຮັດໄດ້ຮັບອິສາຣະພາບເຕັມທີ່ ການຄຸ້ມຄອງຈາກກະສັດໄດ້ເພີ່ມຄວາມໝັ້ນໃຈໃນການປົກປ້ອງອັນຕຣາຍຈາກສັນຕະປາປາ ແຕ່ເນື່ອງຈາກການຝ່າຝືນຕໍ່ຖະແຫລງການຊ້ຳເທື່ອນີ້ ນັກປະຕິຮູບສາສນາຈຶ່ງຖືກຈັບຕາມຄຳສັ່ງຂອງສັນຕະປາປາແລະຄາຣ໌ດິນັນ ຖືກກັກຂັງໃນຫ້ອງມືດຫລັງຈາກນັ້ນບໍ່ນານກໍຖືກນຳໄປຂັງໄວ້ທີ່ປະສາດແຫ່ງນຶ່ງ ຊຶ່ງຢູ່ກົງກັນຂ້າມແມ່ນ້ຳໄຣ ຕໍ່ມາສັນຕະປາປາກໍຖືກຈັບໄປຂັງທີ່ປະສາດແຫ່ງນີ້ດ້ວຍ ເພາະຖືກກ່າວຫາວ່າກະທຳຄວາມຜິດຢ່າງຮ້າຍແຮງວ່າການເຮັດຮ້າຍແຮງທີ່ສຸດ ນອກເໜືອຈາກຄາດຕະກັມການຊື້ຂາຍຕຳແໜ່ງຜູ້ທີ່ເຮັດການຕໍ່ຕ້ານທັງສອງກໍຖືກປົດອອກຈາກຕຳແໜ່ງເຊັ່ນກັນແລະມີການເລືອກສັນຕະປາປາອົງໃໝ່ຂຶ້ນແທນ

ເຖິງແມ່ນວ່າສັນຕະປາປາຈະມີຄວາມຜິດໃນຖານະອາຊະຍາກອນຫລາຍກວ່າທີ່ຣັດໄດ້ກ່າວໂຈມຕີຄວາມຜິດຂອງພວກພຣະໄວ້ກໍຕາມ ເຖິງປານນັ້ນສະມາຊິກສະພາຊຸດດຽວກັນທີ່ໄດ້ຖອດຍົດສັນຕະປາປາ ກໍຫັນໄປບີບຄັ້ນນັກປະຕິຮູບອີກ ການກັກຂັງຣັດເຮັດໃຫ້ປະຊາຊົນໃນໂບຣິເມັຽມີຄວາມຄຽດແຄ້ນຫລາຍ ຈັກກະພັດຜູ້ພຣະຣາຊທານໃບຄຸ້ມກັນໃຫ້ກັບຣັດໄດ້ຄັດຄ້ານການກະທຳຄັ້ງນີ້ ແຕ່ສັດຕຣູຂອງນັກປະຕິຮູບກໍໂຕ້ແຍ່ງເພື່ອພິສູດວ່າ "ຄວາມສັດທາໃນສາສນາບໍ່ຄວນຈະປົນກັບຄຳສອນນອກຮີດຫລືບຸກຄົນທີ່ສົງສັຍວ່າເປັນຄົນນອກຮີດ ເຖິງແມ່ນວ່າພວກເຂົາຈະໄດ້ຮັບໃບຄຸ້ມກັນຈາກຈັກກະພັດແລະກະສັດກໍຕາມ"

ຄວາມອ່ອນເພັຽເນື່ອງຈາກຄວາມເຈັບປ່ວຍ ເພາະຣັດຖືກຂັງໃນຫ້ອງມືດທີ່ຊື້ນແສະເຮັດໃຫ້ເພິ່ນປ່ວຍໄຂ້ຈົນເກືອບເສັຽຊີວິດ ໃນທີ່ສຸດຣັດຖືກນຳໄປຢືນຕໍ່ໜ້າສະພາຖືກລ່າມໂຊ້ຢືນຢູ່ຕໍ່ໜ້າພຣະພັກຂອງຈັກກະພັດຜູ້ໃຫ້ຄຳໝັ້ນສັນຍາວ່າຈະປົກປ້ອງຄຸ້ມຄອງເພິ່ນ ຣັດຍຶດໝັ້ນຢູ່ໃນຄວາມຈິງຢ່າງໝັ້ນຄົງແລະກ່າວຄຳຕໍ່ຕ້ານການທຸຈະຣິດຂອງຄະນະສົງດ້ວຍຄວາມອາດຫານ ເພິ່ນຖືກບັງຄັບໃຫ້ເລືອກເອົາລະຫວ່າງການລະຖິ້ມຫລັກຄຳສອນຂອງເພິ່ນຫລືຄວາມຕາຍ ເພິ່ນພຍາມເລືອກທີ່ຈະສະລະຊີວິດເພື່ອສາສນາ

ພຣະຄຸນຂອງພຣະເຈົ້າຈູນເພິ່ນໄວ້ ໃນລະຫວ່າງສັບປະດາທີ່ເພິ່ນໄດ້ຮັບຄວາມທຸກທໍຣະມານ ກ່ອນທີ່ເພິ່ນທີ່ຈະຖືກຕັດສິນພິພາກສານັ້ນ ສັນຕິສຸກແຫ່ງສວັນໄດ້ສວມທັບຈິດວິນຍານຂອງເພິ່ນ ເພິ່ນຂຽນຈົດໝາຍເຖິງເພື່ອນວ່າ "ຂ້າພະເຈົ້າຂຽນຈົດໝາຍນີ້ໃນຄຸກດ້ວຍມືທີ່ລ່າມໂຊ້ໄວ້ຄິດວ່າ ຂ້າພະເຈົ້າຄົງຖືກຕັດສິນປະຫານຊີວິດໃນມື້ອື່ນນີ້ ດ້ວຍຄວາມຊ່ອຍເຫລືອຂອງພຣະເຢຊູຄຣິດເຈົ້າ ເຮົາຈະໄດ້ພົບກັນໃນຊີວິດໜ້າທີ່ມີສັນຕິສຸກ ທ່ານຈະໄດ້ຮູ້ວ່າພຣະເຈົ້າມີພຣະຄຸນແກ່ຂ້າພະເຈົ້າຫລາຍສ່ຳໃດ ແລະຊົງຊ່ອຍເຫລືອຂ້າພະເຈົ້າຫລາຍເທົ່າໃດ ໃນຂນະທີ່ຖືກທົດລອງແລະໃນການທໍຣະມານ"

## ມອງເຫັນຊັຍຊະນະລ່ວງໜ້າ



ໂລກ. ຖ້າຜູ້ໃດຢາກທຳຮ້າຍພະຍານທັງສອງນັ້ນ ໄຟກໍພຸ່ງອອກມາຈາກປາກຂອງເຂົາເຜົາຜານສັດຕຣູນັ້ນ ແມ່ນແລ້ວ ຖ້າຜູ້ໃດຢາກທຳຮ້າຍເຂົາຜູ້ນັ້ນກໍຕ້ອງຕາຍຢ່າງນັ້ນ ຝ່າຍພະຍານທັງສອງນັ້ນມີສິດອຳນາດອັດທ້ອງຟ້າໄວ້ເພື່ອບໍ່ໃຫ້ຝົນຕົກໃນລະຫວ່າງວັນເຫລົ່ານັ້ນ ທີ່ເຂົາກຳລັງປະກາດພຣະທັມແລະມີສິດອຳນາດໃຫ້ນ້ຳກາຍເປັນເລືອດໄດ້ ທັງມີສິດອຳນາດບັນດານໃຫ້ພັຍອັນຕຣາຍທຸກຢ່າງທໍຣະມານແຜ່ນດິນໂລກໄດ້ທຸກເວລາຕາມຄວາມປາຖນາ ເມື່ອການພະຍານຂອງເຂົາສິ້ນສຸດແລ້ວ ສັດຮ້າຍທີ່ຂຶ້ນມາຈາກເຫວເລິກນັ້ນກໍຈະສູ້ຮົບກັບເຂົາ ຈະຊະນະເຂົາ ແລະຈະຂ້າເຂົາ ແລະສົບຂອງເຂົາຈະຢູ່ທີ່ຖນົນໃນມະຫານະຄອນນັ້ນ ຊຶ່ງຕາມຄວາມປຽບທຽບເອີ້ນວ່າເມືອງໂຊໂດມ ແລະເມືອງເອຢິບ ອັນເປັນເມືອງທີ່ອົງພຣະຜູ້ເປັນເຈົ້າຂອງເຂົາຊົງຖືກຄຶງໄວ້ທີ່ໄມ້ກາງແຂນ ຄົນຫລາຍຊາດ ຫລາຍຕະກຸນ ຫລາຍພາສາ ແລະຫລາຍປະເທດ ຈະເຫັນສົບຂອງເຂົາຕລອດສາມວັນເຄິ່ງ ແລະຈະບໍ່ຍອມໃຫ້ເອົາສົບເຫລົ່ານັ້ນບັນຈຸໄວ້ໃນອຸໂມງ ແລະບັນດາຊາວໂລກຈະຊົມຊື່ນຍິນດີເພາະເຂົາ ຈະສນຸກມ່ວນຊື່ນຈະໃຫ້ຂອງຂວັນເຊິ່ງກັນແລະກັນເພາະຜູ້ປະກາດພຣະທັມທັງສອງນີ້ໄດ້ທໍຣະມານຊາວໂລກ ທັງຫລາຍເມື່ອສາມວັນເຄິ່ງຜ່ານພົ້ນໄປແລ້ວລົມຊີວິດຊຶ່ງມາຈາກພຣະເຈົ້າໄດ້ເຂົ້າໃນສົບຂອງເຂົາ ເຂົາກໍລຸກຢືນຂຶ້ນ ແລະຄົນທັງຫລາຍທີ່ໄດ້ເຫັນເຂົາກໍມີຄວາມຢ້ານກົວຢ່າງໃຫຍ່ຫລວງ" (ພຣະນິມິດ 11:2-11)

"ສີ່ສິບສອງເດືອນ" ແລະ "ນຶ່ງພັນສອງຮ້ອຍຫົກສິບວັນ" ນັບເປັນໄລຍະເວລາເທົ່າກັນກັບໄລຍະເວລາທີ່ຄຣິສຕະຈັກຂອງພຣະຄຣິດໄດ້ຮັບການກົດຂີ່ຂົ່ມເຫງຈາກແຫ່ງໂຣມໄລຍະເວລາ 1260 ປີ ເລີ່ມຕົ້ນຕັ້ງແຕ່ປີ ຄ.ສ. 538 ແລະສິ້ນສຸດໃນປີ ຄ.ສ. 1798 (ເບິ່ງພາກຜນວກ) ໃນຂນະນັ້ນເອງກອງທັບຂອງຝຣັ່ງເສດໄດ້ຈັບເອົາພຣະສັນຕະປາປາໄປຈຳຈອງແລະສິ້ນພຣະຊົນໃນຂນະຖືກເນຣະເທດ ຕັ້ງແຕ່ບັດນີ້ເປັນຕົ້ນມາສັນຕະປາປາກໍບໍ່ມີອຳນາດສິດຂາດເໝືອນແຕ່ກ່ອນ

ການກົດຂີ່ຂົ່ມເຫງຄຣິສຕະຈັກບໍ່ໄດ້ມີຕລອດທັງ 1260 ປີ ພຣະເຈົ້າຊົງພຣະເມດຕາຕໍ່ປະຊາກອນຂອງພຣະອົງ ຊົງຍ້ອນໄລຍະເວລາທຸກຍາກແສນສາຫັດຂອງພວກເຂົາ ໂດຍອາສັຍອິດທິພົນຂອງນັກປະຕິຮູບສາສນາ

"ພະຍານທັງສອງ" ໝາຍເຖິງພຣະຄັມພີພັນທະສັນຍາເດີມແລະພັນທະສັນຍາໃໝ່ຊຶ່ງເປັນພະຍານທີ່ສຳຄັນຂອງແຫລ່ງທີ່ມາແລະຄວາມເປັນອັມມະຕະຂອງພຣະບັນຍັດຂອງພຣະເຈົ້າ ແລະເປັນພະຍານເຖິງແຜນການແຫ່ງຄວາມລອດ

ບົດທີ່ 15

# ເຫດຂອງຄວາມໂຫດຮ້າຍໃນຝຣັ່ງເສດ

ຫລາຍປະເທດຍອມຮັບການປະຕິຮູບສາສນາສະເໝືອນນຶ່ງເປັນຂ່າວຈາກສວັນ ສ່ວນປະເທດອື່ນໆ ນອກນັ້ນປະຕິເສດບໍ່ຍອມຮັບແສງແຫ່ງຄວາມຮູ້ຈາກພຣະຄັມພີ ມີປະເທດນຶ່ງທີ່ມີການຕໍ່ສູ້ກັນຫລາຍສັດຕະວັດລະຫວ່າງຄວາມຈິງແລະຄວາມເທັດເພື່ອຄວາມເປັນໃຫຍ່ ແຕ່ໃນທີ່ສຸດຄວາມຈິງແຫ່ງສວັນກໍຖືກກຳຈັດໃຫ້ສູນສິ້ນໄປ ພຣະວິນຍານບໍຣິສຸດຂອງພຣະເຈົ້າຖືກແຍກອອກໄປຈາກປະຊາກອນທີ່ດູໝິ່ນຢຽບຫຍາມຂອງປະທານແຫ່ງພຣະຄຸນຂອງພຣະອົງ ແລະທົ່ວໂລກໄດ້ເຫັນເຖິງຜົນຂອງການຈິງໃຈປະຕິເສດແສງສວ່າງ

ສົງຄາມຕໍ່ສູ້ກັບພຣະຄັມພີໃນປະເທດຝຣັ່ງເສດລົງເອີຍດ້ວຍການປະຕິຫວັດເປັນຜົນຂອງການຕາກົດໝາຍຫ້າມພຣະຄັມພີຂອງຄຣິສຕະຈັກໂຣມ (ເບິ່ງພາກຜນວກ) ສິ່ງນີ້ໄດ້ກາຍເປັນຕົວຢ່າງພະຍານໃນຄຳສອນຂອງຄຣິສຕະຈັກໂຣມທີ່ຊີ້ໃຫ້ເຫັນໄດ້ຄັກທີ່ສຸດຢ່າງທີ່ບໍ່ເຄີຍປາກົດມາກ່ອນ (ໂຢຮັນ) ຜູ້ຂຽນພຣະທັມພຣະນິມິດໄດ້ທຳນວາຍໄວ້ລ່ວງໜ້າ ເຖິງຜົນຮ້າຍທີ່ຈະເກີດຂຶ້ນກັບຝຣັ່ງເສດເປັນພິເສດ ເນື່ອງຈາກການປົກຄອງຂອງ "ຄົນຊົ່ວ"

"ເຂົາຈະຢຽບຢ່ຳນະຄອນສັກສິດໃນລະຫວ່າງສີ່ສິບສອງເດືອນ. ເຮົາຈະອະນຸຍາດພະຍານທັງສອງຂອງເຮົາແລະເຂົາຈະນຸ່ງຫົ່ມຜ້າຫຍາບແລະປະກາດພຣະທັມໄປຕລອດພັນສອງຮ້ອຍຫົກສິບວັນ. ພະຍານທັງສອງນັ້ນຄືຕົ້ນໝາກກອກເທດສອງຕົ້ນ ແລະເຄື່ອງຮອງຕີນໂຄມສອງອັນທີ່ຕັ້ງຢູ່ຕໍ່ພຣະພັກພຣະຜູ້ເປັນເຈົ້າຂອງແຜ່ນດິນ



ຂນະທີ່ຖືກຂັງຢູ່ໃນຫ້ອງມືດ ເພິ່ນໄດ້ມອງເຫັນໄຊຍຊະນະຂອງຄວາມເຊື່ອທີ່ແທ້ຈິງ ໃນຄວາມຝັນເພິ່ນມອງເຫັນສັນຕະປາປາແລະບິດຊອບລຶບຮູບພາບຂອງພຣະຄຣິດທີ່ຮັດແຕ້ມຕິດໄວ້ທີ່ຝາພະນັງຫ້ອງປະຊຸມໃນນະຄອນປຣາກ ນິມິດນີ້ເຮັດໃຫ້ເພິ່ນລັນທົມໃຈ ແຕ່ພໍວັນໃໝ່ຂຶ້ນເພິ່ນກໍເຫັນນັກແຕ້ມຮູບເພີ່ມຂຶ້ນຫລາຍຄົນມາຊ່ອຍກັນແຕ້ມໃຫ້ດີຂຶ້ນກວ່າເກົ່າ ແລະມີສີສັນງາມຂຶ້ນກວ່າເກົ່າ ນັກຈິນຕະກອນເຫລົ່ານັ້ນຖືກອ້ອມລ້ອມດ້ວຍຝູງຊົນ ຕ່າງກໍຮ້ອງຂຶ້ນວ່າ "ຂໍໃຫ້ສັນຕະປາປາແລະບິດຊອບມາເຖາະ ຄາວນີ້ພວກເພິ່ນບໍ່ມີວັນຈະລຶບຮູບເຫລົ່ານີ້ໄດ້ອີກ" ຮັດເວົ້າວ່າ "ພຣະສາຍາຂອງພຣະຄຣິດຈະບໍ່ມີວັນລຶບໄດ້ ເຖິ່ງແມ່ນເພິ່ນຈະທຳລາຍຮູບເຫລົ່ານັ້ນແຕ່ຮູບເຫລົ່ານັ້ນກໍຈະຖືກແຕ້ມຂຶ້ນໃໝ່ໃນຈິດໃຈຂອງຄົນທັງຫລາຍໂດຍນັກເທດທີ່ດີກວ່າຂ້າພະເຈົ້າ"

ຄັ້ງສຸດທ້າຍຮັດຖືກນຳໄປເປັນພະຍານຕໍ່ໜ້າສະພາ ແລະຄະນະປະຊຸມຜູ້ປາດເປື້ອງເປັນຈຳນວນຫລາຍ ມີຈັກກະພັດບັນດາເຈົ້ານາຍແຫ່ງຈັກກະວານ,ຂ້າຣາຊການຂອງຣາຊວັງ, ພຣະຄາຣ໌ນັນບິຊອບ, ບາດຫລວງ ແລະຝູງຊົນຈຳນວນຫລາຍ

ໃນທີ່ສຸດຮັດຕັດສິນໃນຄັ້ງສຸດທ້າຍ ເພິ່ນປະກາດປະຕິເສດທີ່ຈະເລີກລົ້ມຄວາມຄິດເຫັນຂອງເພິ່ນ ເພິ່ນຈ້ອງມອງໄປຍັງຈັກກະພັດຜູ້ລະຖິ້ມຄຳໝັ້ນສັນຍາທີ່ເຄີຍໃຫ້ໄວ້ຢ່າງໜ້າລະອາຍເພິ່ນປະກາດວ່າ "ຂ້າພະເຈົ້າໄດ້ຕັດສິນໃຈດ້ວຍຕົນເອງຢ່າງເປັນອິສະຣະທີ່ຂ້າພະເຈົ້າໄດ້ມາຢືນຢູ່ຕໍ່ໜ້າສະພານີ້ ພາຍໃຕ້ການປົກຄອງຂອງປະຊາຊົນແລະຄວາມເຊື່ອໃນຈັກກະພັດຜູ້ປະທັບຢູ່ທີ່ນີ້" ໄຊຈິສະມັນມີພຣະພັກແດງດ້ວຍອັບອາຍ, ອັບອາຍໃນຂນະທີ່ສາຍຕາທຸກດວງຕ່າງເບິ່ງໄປຍັງພຣະອົງ

ຄຳຕັດສິນຄະດີຖືກປະກາດ ແລະພິການລິດຊັ້ນຕຳແໜ່ງກໍເລີ່ມຂຶ້ນ ຮັດຖືກເຕືອນໃຫ້ເລີກລົ້ມຄວາມຄິດ ແລະຫລັກຄຳສອນອີກເທື່ອນຶ່ງ ເພິ່ນຕອບແລະຫັນໜ້າໄປທາງປະຊາຊົນຕອບວ່າ "ແລ້ວຂ້າພະເຈົ້າຈະເອົາໜ້າໄປໄວ້ໃສ ຈະເບິ່ງຟ້າສວັນໄດ້ຢ່າງໃດ ຂ້າພະເຈົ້າຈະເບິ່ງໜ້າປະຊາຊົນທັງຫລາຍທີ່ເຄີຍເທສນາຂ່າວປະເສີດອັນບໍຣິສຸດໃຫ້ເຂົາຟັງໄດ້ຢ່າງໃດ ບໍ່ແມ່ນດອກ ຂ້າພະເຈົ້າຂໍເຊີດຊູຄວາມລອດຂອງພວກເຂົາ ຫລາຍກວ່າຮ່າງກາຍອັນເຊື່ອມຊາມຂອງຂ້າພະເຈົ້າທີ່ຈະຕ້ອງຕາຍນີ້ ຊຸດນັກບວດຂອງເຂົາຖືກຖອດອອກເທື່ອລະອັນ ຂນະທີ່ປະກອບພິທີບິຊອບ ແລະແຕ່ລະອົງ

ກໍກ່າວຄຳປ່ອຍດ່າໄປດ້ວຍ ໃນທີ່ສຸດ "ພວກບາດຫລວງເຫລົ່ານັ້ນກໍສວມມົງກຸດໃຫ້ກັບຮັດ ເປັນມົງກຸດກະດາດປີຣະມິດມີຮູບພາບແຕ້ມຂອງຜີສາດທີ່ໜ້າຢ້ານມີຂໍ້ຄວາມຂຽນເປັນຈຸດເດັ່ນດ້ານໜ້າວ່າ" "ອັຄເດັຽຣະຕິ" (ຫົວໜ້າສາສນານອກຮີດຄົນສຳຄັນ) ຮັດກ່າວດ້ວຍຄວາມຊົມຊື່ນຍິນດີວ່າ "ໂອ່ພຣະເຢຊູເຈົ້າ ພຣະອົງຊົງສວມມົງກຸດໜາມເພື່ອຂ້າພະອົງ ຂ້າພະອົງຂໍສວມມົງກຸດແຫ່ງຄວາມອັບອາຍນີ້ເພື່ອພຣະອົງ

## ຮັດຖືກມັດຕິດເສົາເຜົາຈົນຕາຍ

ບັດນີ້ເພິ່ນຖືກນຳຕົວໄປ ໂດຍມີການເດີນຂະບວນຢ່າງໃຫຍ່ຫລວງເມື່ອທຸກຢ່າງຮຽບຮ້ອຍພ້ອມທີ່ຈະຈູດໄຟເຜົາຜູ້ຍອມຕາຍເພື່ອສາສນາ ເພິ່ນມີໂອກາດກ່າວເປັນຄັ້ງສຸດທ້າຍເພື່ອປົກປ້ອງຊີວິດຂອງຕົນ ໂດຍການປະກາດຍອມຮັບຄວາມຜິດທີ່ກະທຳ ແຕ່ຮັດກ່າວວ່າ "ມີຄວາມຜິດຢ່າງໃດທີ່ຂ້າພະເຈົ້າຕ້ອງປະກາດຍົກເລີກ ຂ້າພະເຈົ້າຮູ້ຕົວເອງດີວ່າບໍ່ມີຄວາມຜິດອັນໃດ ຂໍໃຫ້ພຣະຜູ້ເປັນເຈົ້າເປັນພະຍານວ່າທຸກສິ່ງທີ່ຂ້າພະເຈົ້າໄດ້ຂຽນແລະເທສນາໄປນັ້ນ ເປັນສິ່ງທີ່ຈະຊ່ອຍຈິດວິນຍານທັງຫລາຍໃຫ້ລຸດພົ້ນຈາກຜິດບາບແລະຄວາມພິນາດ ດັ່ງນັ້ນຂ້າພະເຈົ້າຈຶ່ງມີຄວາມສຸກຢ່າງທີ່ສຸດບໍ່ໄດ້ທີ່ຈະຮັບຮອງຄວາມຈິງທີ່ຂ້າພະເຈົ້າຂຽນແລະເທດນັ້ນດ້ວຍເລືອດຂອງຂ້າພະເຈົ້າເອງ"

ຂນະທີ່ແປວໄຟກຳລັງລຸກໄໝ້ຢູ່ນັ້ນ ເພິ່ນເລີ່ມຮ້ອງເພງດັ່ງນີ້ "ພຣະເຢຊູພຣະອົງເປັນບຸດຂອງດາວິດ ໂປຣດເມດຕາຂ້າພະອົງດ້ວຍ" ເຂົາຮ້ອງເພງນີ້ຈົນກະທັ່ງສຽງງຽບຫາຍໄປຊົ່ວນິຣັນດອນ ບັນດາຜູ້ນຳແຫ່ງໂຣມຜູ້ນຶ່ງກ່າວເຖິງຄວາມເປັນວິຣະບຸຣຸດຂອງຮັດແລະເຈີໂຣມ ຜູ້ຊຶ່ງສິ້ນຊີວິດຫລັງຈາກຮັດບໍ່ນານວ່າ "ເພິ່ນທັງສອງໄດ້ຕຽມຕົວສຳລັບການຖືກເຜົາຮາວກັບວ່າຕຽມຕົວໄປງານລ້ຽງໃນງານແຕ່ງງານ ເພິ່ນບໍ່ເຄີຍເອີ່ຍປາກຮ້ອງສະແດງຄວາມເຈັບປວດ ຂນະທີ່ໄຟກຳລັງກຸ່ມຂຶ້ນຄົນທັງສອງເລີ່ມຮ້ອງເພງ ແມ່ນຄວັນຂອງໄຟກໍບໍ່ສາມາດເຮັດໃຫ້ພວກເພິ່ນຢຸດຮ້ອງເພງໄດ້"



ຂນະເວສເລ່ ເທສນາຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້ານັ້ນ ເພິ່ນໄດ້ກະທຳເຊັ່ນດຽວກັບພຣະອາຈານຜູ້ໄດ້ພຍາຍາມ "ເຊີດຊູພຣະທັມແລະກະທຳໃຫ້ພຣະທັມນັ້ນມີກຽດ (ເອຊາຢາ 42:21) ເພິ່ນໄດ້ທຳງານດ້ວຍຄວາມສຳເຣັດເປັນຢ່າງດີແລະທຸກຄົນຍົກຍ້ອງເຊີດຊູເພິ່ນ ເວລາໃນການທຳງານຮັບໃຊ້ພຣະເຈົ້ານານຫລາຍກວ່າ 50 ປີ ມີຜູ້ປະພຶດຕາມຄຳສອນຂອງເພິ່ນຫລາຍກວ່າຫ້າແສນຄົນ ແຕ່ເຮົາບໍ່ຮູ້ຈຳນວນທີ່ແນ່ນອນຂອງຄົນທັງຫລາຍທີ່ໄດ້ລອດພົ້ນຈາກຄວາມພິນາດເພາະຄວາມຜິດບາບແລະກັບມາດຳເນີນຊີວິດໃນທາງບໍຣິສຸດນັ້ນໄດ້ຈົນກວ່າທຸກຄົນໃນຄອບຄົວຂອງບັນດາທັມມະກິຊົນຈະໄດ້ຢູ່ຮ່ວມກັນໃນແຜ່ນດິນຂອງພຣະເຈົ້າ ຊີວິດຂອງເວສເລ່ເປັນບົດຮຽນທີ່ຫາຄ່າບໍ່ໄດ້ສຳລັບຄຣິສະຕຽນທຸກຄົນ

ເພິ່ນປາຖນາທີ່ຈະເຫັນສະມາຊິກຂອງຄຣິສຕະຈັກສມັຍນີ້ໄດ້ມີຄວາມເຊື່ອມີຄວາມກະຕືລືລົ້ນ ເປັນຄົນທີ່ບໍ່ເຫັນແກ່ຕົວ ແລະອຸທິດຕົວເໝືອນຜູ້ຮັບໃຊ້ທີ່ຊື່ສັດຂອງພຣະຄຣິດຜູ້ນີ້ຫລືບໍ່

ການປະຕິຫວັດໃນປະເທດຝຣັ່ງເສດເກີດຈາກການທີ່ຜູ້ນຳປະເທດແລະປະຊາຊົນພາກັນລະຖິ້ມພຣະເຈົ້າ ພວກເຂົາໄດ້ຮັບອິດທິພົນຄຳສອນຂອງວອນແດມ (ຄ.ສ. 1694-1778) ແລະຈັງ ຈາດ ຣຸດໂຊ (1712-1778) ທີ່ໃຊ້ເຫດຜົນໃນການດຳເນີນຊີວິດ ເພິ່ນເປັນຜູ້ຕໍ່ຕ້ານຄຳສອນຂອງຄານວິນທີ່ວ່າມະນຸດເປັນຄົນເລວຊາມຊຶ່ນເຊິ່ງພຣະເຈົ້າເທົ່ານັ້ນທີ່ຈະເຮັດໃຫ້ເພິ່ນເປັນຄົນດີໄດ້ ຣຸດໂຊ ສອນວ່າມະນຸດເກີດມາດີແຕ່ອາຣະຍະທັມຈອມປອມເຮັດໃຫ້ເພິ່ນກາຍເປັນຄົນຊົ່ວ ເພິ່ນເຫັນວ່າກະສັດແລະພຣະເປັນພວກທີ່ເຫັນແກ່ຕົວ ຂນະນັ້ນຕົງກັບສມັຍທີ່ພຣະບາດສົມເດັດພຣະພຸທຍອມຟ້າຈຸລາໂລກມະຫາຣາຊຄອງຣາຊກໍໄດ້ມີການປະຕິຫວັດໃນປະເທດຝຣັ່ງເສດ ແລະໃນປີ ພ.ສ. 2336-2337 ພວກປະຕິຫວັດໄດ້ທຳລາຍສາສນາ ໂບດໄດ້ຖືກຍຶດແລະທຳລາຍຈຶ່ງຮຽກຊ່ວງເວລານັ້ນເປັນ "ຍຸກແຫ່ງຄວາມຢ້ານກົວ" ມີການດູໝິ່ນສາສນາ ແລະຄຣິສະຕຽນທີ່ຊື່ສັດຕ້ອງຖືກຂ້າຕາຍເປັນຈຳນວນຫລວງຫລາຍ ທັງນີ້ກໍມາຈາກສາເຫດທີ່ສາສນາຈັກບໍ່ໄດ້ສອນປະຊາຊົນເຖິງຄວາມຈິງ ໃຊ້ອຳນາດໃນທາງສາສນາສະແຫວງຫາຜົນປໂຍດຈົນກໍ່ໃຫ້ເກີດຄວາມບໍ່ພໍໃຈມາສູ່ປະຊາຊົນ

ຮູ້ຈັກຂ່າວປະເສີດ ຂນະດຽວກັບຂ່າວປະເສີດຈະຊ່ອຍໃຫ້ເຮົາປະພຶດຕາມພຣະບັນຍັດໄດ້ສຳເຣັດຄົບຖ້ວນ ເຊັ່ນພຣະບັນຍັດສອນໃຫ້ເຮົາຮັກພຣະເຈົ້າ ຮັກເພື່ອນບ້ານຂອງເຮົາເອງ ໃຫ້ເຮົາມີໃຈອ່ອນໂຍນຖ່ອມຕົນຫລືເປັນຜູ້ບໍຣິສຸດຊ່ອຍໃຫ້ເຮົາຮູ້ສຶກວ່າບໍ່ມີຄວາມສາມາດທີ່ຈະເປັນຜູ້ມີຄຸນສົມບັດຢ່າງນີ້ໄດ້ ແຕ່ເຮົາໄດ້ເຫັນພຣະສັນຍາຂອງພຣະເຈົ້າທີ່ປະທານຄວາມຮັກນັ້ນ ແລະຊົງຊ່ອຍໃຫ້ເຮົາເປັນຜູ້ມີຄວາມຮັກເຮັດໃຫ້ຖ່ອມຕົວລົງ ມີຄວາມສຸພາບອ່ອນໂຍນແລະມີຄວາມບໍຣິສຸດ ເມື່ອເຮົາທັງຫລາຍເຊື່ອໝັ້ນໃນຂ່າວດີທີ່ໜ້າຊົມຊື່ນຍິນດີເຫລົ່ານີ້ "ຄວາມຊອບທັມຂອງພຣະບັນຍັດສຳເຣັດບໍຣິບູນໃນຕົວເຮົາ ໂດຍຄວາມເຊື່ອໃນພຣະເຢຊູຄຣິດ"

ເວສເລ່ກ່າວວ່າ "ສັດຕຣູທີ່ຮ້າຍກາດຂອງຂ່າວປະເສີດຂອງພຣະຄຣິດຄືຜູ້ທີ່ສອນມະນຸດໃຫ້ລ່ວງລະເມີດພຣະບັນຍັດ ບໍ່ແມ່ນພຽງແຕ່ພຣະບັນຍັດຂໍ້ດຽວ ແຕ່ໃຫ້ລະຖິ້ມທຸກຂໍ້ ບໍ່ວ່າພຣະບັນຍັດນັ້ນຈະສຳຄັນຫລາຍຫລືນ້ອຍກໍຕາມ ພວກເຂົາຖວາຍກຽດຕິຍົດພຣະອົງເຊັ່ນດຽວກັບຢູດາເມື່ອລາວເວົ້າວ່າ "ພຣະອາຈານເຈົ້າຂ້າແລະຈູບພຣະອົງ" ການຕັ້ງແສງສວ່າງເທິງສ່ວນໃດຂອງພຣະບັນຍັດຂອງພຣະອົງດ້ວຍການແກ້ງປະກາດວ່າຂ່າວປະເສີດຂອງພຣະອົງໃຫ້ກ້າວໜ້າ ບໍ່ຜິດໄປຈາກການທໍຣະຍົດພຣະອົງດ້ວຍການຈູບ ເວົ້າເຖິງພຣະໂລຫິດແຕ່ເອົາມົງກຸດອອກໄປ"

## ຄວາມສອດຄ່ອງຂອງພຣະບັນຍັດແລະຂ່າວປະເສີດ

ເວສເລ່ກ່າວຕອບຄົນທັງຫລາຍທີ່ສອນວ່າ "ການເທສນາຂ່າວປະເສີດຕອບຄຳຖາມກ່ຽວກັບການສິ້ນສຸດຂອງພຣະບັນຍັດ" ເພິ່ນກ່າວວ່າ "ບໍ່ໄດ້ຊ່ອຍໃຫ້ພຣະບັນຍັດສຳເຣັດບໍຣິບູນແມ່ນແຕ່ນ້ອຍດຽວ ພຣະບັນຍັດເຮັດໃຫ້ມະນຸດຍອມຮັບຄວາມບາບ ແລະຊ່ອຍປຸກຜູ້ທີ່ກຳລັງຫລັບໄຫລຢູ່ໃນຮົມເຫວນະຮົກໃຫ້ຕື່ນຂຶ້ນ ດັ່ງນັ້ນການທີ່ເພິ່ນຈະນຳທ່ານໝໍໄປປົວຄົນທີ່ບໍ່ສະບາຍ ຫລືແມ່ນຄົນທີ່ຄິດວ່າຕົນປ່ວຍຈຶ່ງເປັນສິ່ງທີ່ໜ້າຂັນ ກ່ອນອື່ນເພິ່ນຈະຕ້ອງຊີ້ແຈງໃຫ້ພວກເຂົາເຫັນວ່າພວກເຂົາປ່ວຍແທ້ ເສັຽກ່ອນບໍ່ດັ່ງນັ້ນແລ້ວພວກເຂົາກໍຈະບໍ່ຂອບຄຸນທ່ານທີ່ອຸດສາພາໝໍໄປປົວພວກເຂົາ ເທົ່າກັບການທີ່ເພິ່ນຈະນຳເຣື່ອງຂອງພຣະເຢຊູຄຣິດໄປປະກາດແກ່ຄົນທີ່ຈິດໃຈທີ່ບໍ່ເຄີຍແຕກລ້າວເປັນສິ່ງທີ່ໜ້າຂັນເໝືອນກັນ"



ຫລັງຈາກຮ່າງຂອງຮັດຖືກເຜົາໄໝ້ແລ້ວ ເຖົ່າຖ່ານຂອງເພິ່ນກໍຖືກນຳໄປຖິ້ມທີ່ແມ່ນ້ຳໄລ ເຫດສະນັ້ນຈຶ່ງເປັນເໝືອນເມັດພືດທີ່ຖືກຫວ່ານໄປທຸກປະເທດທົ່ວໂລກແມ່ນໃນດິນແດນທີ່ບໍ່ເຄີຍໄດ້ຮັບຮູ້ເຖິງຄວາມຈິງມາກ່ອນກໍໄດ້ຮັບຮູ້ໂດຍການເປັນພະຍານຂອງຮັດ ສຽງຂອງເພິ່ນທີ່ກ່າວໃນຫ້ອງໃຫຍ່ຂອງສະພາແຫ່ງຄອນສະແຕນຍັງດັງສະທ້ອນຢູ່ທຸກຍຸກທຸກສມັຍ ແບບຢ່າງຂອງຮັດເປັນສິ່ງໜູນໃຈຢ່າງດີຕໍ່ມວນຊົນທີ່ຢືນຢັດໃນການຜະເຊີນຕໍ່ການທໍຣະມານແລະຄວາມຕາຍຢ່າງໝັ້ນຄົງ ການຖືກລົງໂທດປະຫານຊີວິດຂອງຮັດນັ້ນໄດ້ສະແດງໃຫ້ໂລກເຫັນເຖິງຄວາມໂຫດຮ້າຍຂອງໂຣມ ສັດຕຣູຂອງຄວາມຈິງຜູ້ມຸ້ງຫວັງໃຫ້ຄວາມຈິງກ້າວໜ້າຕໍ່ໄປ ແຕ່ພວກເຂົາກັບຫາທາງທຳລາຍຄວາມຈິງນັ້ນເອງ

ເຖິງຢ່າງນັ້ນກໍຕາມເລືອດຂອງພະຍານຄົນອື່ນໆ ຈະຕ້ອງເປັນພະຍານເພື່ອຄວາມຈິງຕໍ່ໄປ ເຈີໂຣມ ໄດ້ສອນໃຫ້ຮັດມີຄວາມກ້າຫານແລະໝັ້ນຄົງແລະປະກາດວ່າຖ້າຮັດຕ້ອງຕົກຢູ່ໃນອັນຕຣາຍ ເພິ່ນຈະຕ້ອງຮີບຊ່ອຍທັນທີເມື່ອໄດ້ຍິນຂ່າວວ່າຮັດຖືກຄຸມຂັງສາວົກຜູ້ຊື່ສັດຈຶ່ງຕຽມຕົວເຮັດຕາມຄຳສັນຍາຂອງເພິ່ນທັນທີ ເພິ່ນເດີນທາງໄປຄອນສະແຕນໂດຍບໍ່ມີການຄຸ້ມຄອງໃດໆ ເມື່ອເດີນທາງເຖິງຄອນສະແຕນເພິ່ນໄດ້ຮັບການເຕືອນວ່າກຳລັງເດີນເຂົ້າສູ່ອັນຕຣາຍ ເພິ່ນຈະຊ່ອຍຮັດຢ່າງໃດບໍ່ໄດ້ເລີຍ ເຈີໂຣມພຍາຍາມໜີ ແຕ່ກໍຕ້ອງຖືກຈັບແລະຖືກນຳໄປລ່າມໂຊ້ ເທື່ອທຳອິດທີ່ເພິ່ນຕ້ອງປະກາດຕໍ່ໜ້າສະພາ ຄວາມພະຍາຍາມໃນການຕອບຄຳຖາມຖືກສວນກັບດ້ວຍສຽງຮ້ອງຂຶ້ນວ່າ "ເຜົາດ້ວຍກັນເລີຍ" ເຈີໂຣມຖືກຂັງໃນຫ້ອງມືດແລະໄດ້ຮັບອາຫານພຽງເຂົ້າໜົມປັງກັບນ້ຳ ຄວາມທາລຸນໂຫດຮ້າຍຄັ້ງນີ້ເຮັດໃຫ້ເພິ່ນຕ້ອງລົ້ມປ່ວຍລົງຈົນເກືອບເສັຽຊີວິດ ພວກສັດຕຣູຂອງເພິ່ນຢ້ານວ່າເພິ່ນຈະໜີໄປຈຶ່ງພະຍາຍາມທາລຸນນ້ອຍລົງແມ່ນວ່າເພິ່ນຈະຢູ່ໃນຄຸກພຽງນຶ່ງປີ

## ເຈີໂຣມຖືກນຳຕົວມອບຕໍ່ທີ່ປະຊຸມສະພາ

ການເຮັດຜິດທີ່ຂໍ ຂໍການອະພັຍໂທດໃຫ້ກັບຮັດເທື່ອນີ້ ໄດ້ຍຸຍົງອາຣົມຄຽດແຄ້ນຫລາຍຂຶ້ນ ທາງສະມາຊິກສະພາໄດ້ຕັດສິນວ່າແທນທີ່ຈະເຜົາ ເຈີໂຣມ ກັບບັງ

ຄັບໃຫ້ເພິ່ນຍອມລະຖິ້ມສິ່ງເຊື່ອເສັ້ງ ເພິ່ນໄດ້ຮັບການສເນີໃຫ້ເລືອກລະຫວ່າງການປະຕິເສດແລະຄວາມຕາຍດ້ວຍຄວາມເຈັບປ່ວຍ ເນື່ອງຈາກຖືກກັກຂັງຢ່າງທາລຸນການທໍຣະມານເນື່ອງຈາກຄວາມວິຕົກກັງວົນແລະຄວາມເປັນຫ່ວງ ຄວາມຫ່າງໄກຈາກເພື່ອນຝູງແລະສູນເສັ້ຽຄວາມໝັ້ນໃຈ ເນື່ອງຈາກການຕາຍຂອງຣັດເຮັດໃຫ້ເຈີໂຣມໝົດຄວາມອົດທົນ ເພິ່ນໃຫ້ຄຳປະຕິຍານທີ່ຈະຄ້ອຍຕາມຫລັກຄວາມເຊື່ອຂອງໂຣມຍອມຮັບຂໍ້ສເນີຂອງສະພາໃຫ້ການປະນາມໄວຄລິບແລະຮັດຍິກເວັ້ນ "ຄວາມຈິງອັນສັກສິດ" ທີ່ໄດ້ສັ່ງສອນ

ແຕ່ໃນຂນະທີ່ຢູ່ໂດດດ່ຽວໃນຫ້ອງມືດ ເພິ່ນໄດ້ມອງເຫັນຢ່າງຊັດເຈນໃນສິ່ງທີ່ກະທຳໄປ ເພິ່ນຫວນຄິດເຖິງຄວາມກ້າຫານແລະຄວາມຈິງຮັກພັກດີຂອງຮັດແລະໄຕ່ຕອງເຖິງການປະຕິເສດຄວາມຈິງຂອງຕົນເອງ ເພິ່ນຄິດເຖິງການທີ່ພຣະອາຈານໄດ້ຍອມສູ້ທົນເທິງໄມ້ກາງແຂນເພື່ອເພິ່ນ ກ່ອນທີ່ເພິ່ນຈະລະຖິ້ມຄວາມເຊື່ອ ເພິ່ນໄດ້ຮັບການປະເລົ້າປະໂລມຖ້າມກາງຄວາມທຸກຍາກໃນຫລັກປະກັນແຫ່ງຄວາມຮັກຂອງພຣະເຈົ້າ ແຕ່ຂນະນີ້ຄວາມສຳນຶກຜິດແລະຄວາມບໍ່ແນ່ໃຈທໍຣະມານຈິດວິນຍານຂອງເພິ່ນຫລາຍ ເພິ່ນຮູ້ດີວ່າຈະຕ້ອງມີການລະຖິ້ມຄວາມເຊື່ອອີກຫລາຍຢ່າງກວ່າທີ່ເພິ່ນຈະມີສັນຕິສຸກກັບໂຣມໄດ້ ຫົນທາງທີ່ເພິ່ນກຳລັງເດີນໄປຄືງຈະສິ້ນສຸດລົງທີ່ການລະຖິ້ມຄວາມເຊື່ອໃນຄວາມຈິງຢ່າງສິ້ນເຊີງ

## ເຈີໂຣມກັບໃຈແລະມີກຳລັງໃຈຫລາຍຂຶ້ນ

ຕໍ່ມາເຈີໂຣມກໍຖືກນຳໄປສເນີຕໍ່ສະພາອີກເທື່ອນຶ່ງ ການແກ້ຄະດີຂອງເພິ່ນຕໍ່ສະພາຄັ້ງນີ້ເຮັດໃຫ້ບໍ່ເປັນທີ່ພໍໃຈຂອງຜູ້ພິພາກສາ ພຽງແຕ່ເພິ່ນຈະຍອມລະຖິ້ມຄວາມຈິງເທົ່ານັ້ນ ເຈີໂຣມກໍສາມາດຮັກສາຊີວິດຂອງເພິ່ນ ແຕ່ເພິ່ນໄດ້ຕັດສິນໃຈຢ່າງແນ່ວແນ່ທີ່ຍຶດເອົາຄວາມເຊື່ອໄວ້ຢ່າງໝັ້ນຄົງຕາມຢ່າງຂອງລຸ່ນອ້າຍຂອງເພິ່ນຜູ້ຍອມສະລະຊີວິດເພື່ອສາສນາຈົນຖືກເຜົາດ້ວຍໄຟ



ຄຳສອນທີ່ຊົ່ວຮ້າຍເຫລົ່ານີ້ ມີຄວາມສຳຄັນຫລາຍເທົ່າກັບຄຳສອນໃນເວລາຕໍ່ມາທີ່ກ່າວວ່າ ພຣະບັນຍັດຂອງພຣະເຈົ້າປ່ຽນແປງໄດ້ຕາມມາຕຖານຂອງຄວາມຖືກຕ້ອງສິລທັມຈາຣະຍານັ້ນສັງຄົມຂອງມະນຸດເປັນຜູ້ກຳນົດແລະປ່ຽນແປງໄດ້ຄວາມຄິດເຫລົ່ານີ້ຖືກແນະນຳໂດຍຜູ້ທີ່ເຄີຍຢູ່ຖ້າມກາງປະຊາກອນຜູ້ໄດ້ຮັບບາບແຫ່ງສວັນ ເມື່ອເລີ່ມງານການລ່ວງລະເມີດກົດຂໍ້ບັງຄັບອັນຊອບທັມແຫ່ງພຣະບັນຍັດຂອງພຣະເຈົ້າ

ຫລັກຄວາມເຊື່ອໃນບັນຍັດຂອງພຣະເຈົ້າຊຶ່ງເປັນເຄື່ອງກຳນົດອຸປນິສັຍຂອງມະນຸດເຮັດໃຫ້ຫລາຍຄົນບໍ່ຍອມຮັບພຣະບັນຍັດຂອງພຣະເຈົ້າ ເວສເລ່ໄດ້ຂັດຂວາງຄວາມເຊື່ອຢ່າງຜິດໆ ທີ່ວ່າ "ທຸກຄົນລອດໂດຍຄວາມເຊື່ອໂດຍບໍ່ຮັກສາບັນຍັດຂອງພຣະເຈົ້າ" ແລະເວສເລ່ເຫັນວ່າຄຳສອນນີ້ເປັນຄຳສອນທີ່ຂັດແຍ່ງກັບພຣະຄັມພີ "ເພາະວ່າພຣະຄຸນຂອງພຣະເຈົ້າໄດ້ສ່ອງມາປາກົດແລ້ວ ເພື່ອນຳຄວາມພົ້ນມາໃຫ້ຄົນທັງປວງ...ການເຮັດແນວນັ້ນເປັນການດີແລະເປັນທີ່ຊອບພຣະທັຍພຣະເຈົ້າຜູ້ຊົງໂຜດໃຫ້ພົ້ນຂອງເຮົາທັງຫລາຍ, ຜູ້ຊົງມີພຣະປະສົງໃຫ້ຄົນທັງປວງພົ້ນແລະໃຫ້ສັງເກດຮູ້ຄວາມຈິງ. ດ້ວຍເຫດວ່າມີພຣະເຈົ້າອົງດຽວແລະມີຜູ້ກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ຄືພຣະເຢຊູຄຣິດຜູ້ຊົງສະພາບເປັນມະນຸດ, ຜູ້ໄດ້ຊົງສະລະພຣະອົງເອງເປັນຄ່າໄຖ່ສຳລັບຄົນທັງປວງ ຊຶ່ງການນີ້ເປັນພະຍານໃນເວລາອັນເໝາະສົມ... ອັນນີ້ຄືຄວາມສວ່າງອັນແທ້ຈິງທີ່ຂນະກຳລັງເຂົ້າມາໃນໂລກແລະສ່ອງເຖິງຄົນທັງປວງ" (ຕີໂຕ 2:11, 1ຕີໂມທຽວ 2:3-6, ໂຢຮັນ 1:9) ມະນຸດບໍ່ໄດ້ຮັບຄວາມລອດເພາະເຂົາປະຕິເສດຂອງປະທານແຫ່ງຊີວິດດ້ວຍໃຈສມັກຂອງຕົນເອງ

## ປົກປ້ອງພຣະບັນຍັດຂອງພຣະເຈົ້າ

ໃນການຕອບຂໍ້ອ້າງທີ່ວ່າເມື່ອພຣະຄຣິດສິ້ນພຣະຊົນແລ້ວຄຳສອນຂອງພຣະບັນຍັດສິບປະການກໍເລີກລົ້ມໄປພ້ອມກັບບັນຍັດກ່ຽວກັບພິທີກັມຕ່າງໆ (ຂອງໂມເຊ) ເວສເລ່ກ່າວວ່າ "ພຣະອົງບໍ່ໄດ້ລົບລ້າງພຣະບັນຍັດກ່ຽວກັບສິລທັມທີ່ມີຢູ່ໃນພຣະບັນຍັດສິບປະການ ແລະບັນດາຜູ້ປະກາດພຣະທັມໄດ້ສົ່ງເສີມໃຫ້ປະຕິບັດພຣະບັນຍັດນີ້ຈະບໍ່ສາມາດທຳລາຍໄດ້ແລະຢືນຍັດເປັນພະຍານອັນສັດຊື່ໃນສວັນ"

ເວສເລ່ໄດ້ປະກາດຄວາມເປັນອັນນຶ່ງອັນດຽວຢ່າງສົມບູນລະຫວ່າງພຣະບັນຍັດແລະຂ່າວປະເສີດວ່າ "ອີກປະການນຶ່ງພຣະບັນຍັດເປັນເຄືອນຳທາງແລະຊີ້ເຮົາໃຫ້

ໜ້ອຍນຶ່ງເສື້ອນັ້ນກໍຂາດຕິດມືລາວເສື້ອອີກຂ້າງນຶ່ງຊຶ່ງມີເງິນຢູ່ໃນຖົງຖືກຈີກຂາດໄປ ເຄິ່ງນຶ່ງຊາຍຮູບຮ່າງລໍາສັນຄົນນຶ່ງຢູ່ທາງຫລັງເອົາໄມ້ໂອກອັນໃຫຍ່ຕີຂ້າພະເຈົ້າຫລາຍເທື່ອ ຖ້າລາວຕີຂ້າພະເຈົ້າທີ່ງ່ອນດົ້ນພຽງເທື່ອດຽວລາວກໍບໍ່ຕ້ອງຫຍຸ້ງຍາກອີກຕໍ່ໄປ ແຕ່ລາວຕີຜິດໄປທຸກເທື່ອ ຂ້າພະເຈົ້າບໍ່ເຂົ້າໃຈວ່າອັນໃດຈຶ່ງເປັນແນວນີ້ ເພາະຂ້າເຈົ້າບໍ່ສາມາດຍ້າຍຕົວໄປຂ້າງຂວາແລະຂ້າງຊ້າຍໄດ້”

ພີ່ນ້ອງເມທໍດິສໃນສມັຍເລີ່ມຕົ້ນນັ້ນຕ້ອງໄດ້ຮັບການເຢາະເຢີ້ຍ ແລະການກົດຂີ່ຂົ່ມເຫງ ແລະຖືກພວກອັນຕະພານກໍ່ກວນຢູ່ເລື້ອຍໆ ລາງເທື່ອມີປ້າຍປະກາດໄວ້ໃນທີ່ສາທາຣະນະຊັກຊວນຄົນທັງຫລາຍທີ່ຢາກຈະຊ່ອຍໃຫ້ການທຸບແວ່ນປ່ອງຢ້ຽມ ແລະ ປຸ້ນບ້ານເຮືອນຂອງພວກເມທໍດິສໃຫ້ມາພ້ອມພຽງກັນຕາມເວລາ ແລະສະຖານທີ່ ທີ່ກໍານົດໄວ້ ເພື່ອເຮັດການກົດຂີ່ຂົ່ມເຫງຕໍ່ຜູ້ທີ່ເຂົາຖືວ່າມີຄວາມຜິດເພາະພຍາຍາມຊັກຈູງຄົນບາບໃຫ້ກັບໃຈມາສູ່ທາງທີ່ບໍຣິສຸດ

ຄວາມເຊື່ອມທັງຈິດວິນຍານໃນອັງກິດກ່ອນສມັຍຂອງເວສເລ່ ສືບເນື່ອງມາຈາກຫລາຍຄົນມີຄວາມເຊື່ອວ່າພຣະຄຣິດໄດ້ເລີກລົ້ມພຣະບັນຍັດແຫ່ງສິລທັມ ແລະຄຣິສະຕຽນຈຶ່ງບໍ່ຢູ່ພາຍໃຕ້ກົດເກນໃດ ບໍ່ຕ້ອງຖືພຣະບັນຍັດອີກຕໍ່ໄປ ສ່ວນບາງຄົນປະກາດວ່າບັນດາຜູ້ສອນສາສນາບໍ່ຈໍາເປັນຕ້ອງສອນປະຊາຊົນໃຫ້ຍອມເຊື່ອຟັງແລະປະພຶດຕາມຄໍາສອນໃນບັນຍັດ ເພາະວ່າຄົນທັງຫລາຍທີ່ພຣະເຈົ້າຊົງເລືອກສັນໄວ້ໃຫ້ໄດ້ຮັບຄວາມລອດ “ສາມາດຈະເຮັດຄວາມດີແລະເປັນຄົນເຄັ່ງຄັດໃນສາສນາໄດ້” ສ່ວນຄົນທັງຫລາຍທີ່ຕ້ອງຖືກປັບໂທດຕລອດຊົ່ວນິຣັນ “ບໍ່ມີກໍາລັງທີ່ຈະເຊື່ອຟັງແລະປະພຶດຕາມພຣະບັນຍັດຂອງພຣະເຈົ້າ”

ຄົນອື່ນຊຶ່ງຖືວ່າ “ຜູ້ທີ່ພຣະເຈົ້າຊົງເລືອກສັນໄວ້ແລ້ວບໍ່ສາມາດຫລົ່ນຫາຍຈາກພຣະຄຸນຫລືສູນເສັຽຈາກການເປັນທີ່ພໍພຣະທັຍຂອງພຣະອົງ” ໄດ້ສລຸບຄວາມໜ້າກຽດວ່າ “ຄວາມຊົ່ວຮ້າຍທີ່ພວກເຂົາໄດ້ກະທໍາບໍ່ແມ່ນຄວາມຜິດບາບທີ່ແທ້ຈິງ ຜົນທີ່ໄດ້ຮັບກໍຄືເຂົາບໍ່ມີໂອກາດທີ່ຈະສາຣະພາບຄວາມຜິດບາບ ຫລືລະຖິ້ມຄວາມຜິດບາບນັ້ນໂດຍການກັບໃຈໃໝ່” ດັ່ງນັ້ນພວກເຂົາຈຶ່ງປະກາດວ່າ ແມ່ນວ່າຄວາມຜິດບາບອັນຊົ່ວຮ້າຍທີ່ສຸດ “ຊຶ່ງຄົນທົ່ວໂລກຖືວ່າເປັນການລ່ວງລະເມີດພຣະບັນຍັດຢ່າງຮ້າຍແຮງກໍບໍ່ໄດ້ເປັນຄວາມຜິດບາບໃນສາຍພຣະເນດຂອງພຣະເຈົ້າ” ຖ້າລ່ວງລະເມີດໂດຍຜູ້ທີ່ພຣະເຈົ້າຊົງເລືອກສັນໄວ້ “ພວກເຂົາບໍ່ສາມາດຈະເຮັດສິ່ງນຶ່ງສິ່ງໃດບໍ່ເປັນທີ່ພໍພຣະທັຍຂອງພຣະເຈົ້າ ຫລືເປັນສິ່ງທີ່ພຣະບັນຍັດຫ້າມໄວ້”



ເພິ່ນຖອນຄໍາເວົ້າການລະຖິ້ມຄວາມເຊື່ອທີ່ໄດ້ກ່າວໄວ້ແຕ່ກ່ອນ ໃນຂນະທີ່ກໍາລັງເຈັບປ່ວຍໄດ້ຮ້ອງຂໍຢ່າງຂຶງຂັງໃຫ້ມີໂອກາດໄດ້ເວົ້າປົກປ້ອງຕົນເອງ ແຕ່ພວກບາດຫລວງລະດັບສູງຢືນຢັນເພິ່ນຈະຕ້ອງເລືອກເອົາວ່າຈະຮັບຫລືປະຕິເສດຂໍ້ກ່າວຫາຂອງເພິ່ນເທົ່ານັ້ນ ເຈີໂຣມກ່າວຕໍ່ຕ້ານຄວາມບໍ່ຍຸດຕິທັມທີ່ຊົ່ວຮ້າຍຄັ້ງນີ້ວ່າ “ພວກທ່ານໄດ້ກັກຂັງຂ້າພະເຈົ້າເປັນເວລາສາມຮ້ອຍສີ່ສິບວັນໃນຫ້ອງທີ່ໜ້າຢ້ານແລະດຽວນີ້ນໍາຂ້າພະເຈົ້າຢືນຢູ່ຕໍ່ໜ້າທ່ານທັງຫລາຍ ທ່ານຍອມຟັງສັດຕຣູຜູ້ຈະຕ້ອງຕາຍຂອງຂ້າພະເຈົ້າ ແຕ່ບໍ່ຍອມຟັງຂ້າພະເຈົ້າເວົ້າຂໍໃຫ້ໃສ່ໃຈທີ່ຈະບໍ່ເຮັດບາບຕໍ່ສູ້ກັບຄວາມຍຸດຕິທັມ ແລະຂ້າພະເຈົ້າເອງເປັນພຽງຄົນອ່ອນແອຄົນນຶ່ງທີ່ຈະຕ້ອງຕາຍ ຊີວິດຂອງຂ້າພະເຈົ້າມີຄວາມສໍາຄັນພຽງນ້ອຍດຽວ ແລະຂ້າພະເຈົ້າຂໍຮ້ອງທ່ານທັງຫລາຍຢ່າງຕັດສິນຄະດີຢ່າງຍຸດຕິທັມ ຂ້າພະເຈົ້າເວົ້າເພື່ອຕົວເອງນ້ອຍກວ່າທີ່ເວົ້າເພື່ອທ່ານອີກ

ໃນທີ່ສຸດຂໍ້ຮຽກຮ້ອງຂອງເພິ່ນກໍໄດ້ຮັບອະນຸມັດ ໃນການຢືນຕໍ່ໜ້າຜູ້ພິພາກສາຂອງເພິ່ນ ເຈີໂຣມຄຸເຄົ່າອະທິຖານເພື່ອພຣະວິນຍານບໍຣິສຸດຈະຄອບຄຸມຄວາມຄິດຂອງເພິ່ນ ເພື່ອເພິ່ນຈະບໍ່ໄດ້ເວົ້າຢ່າງໃດທີ່ເປັນສິ່ງກົງກັນຂ້າມກັບຄວາມຈິງ ຫລືເວົ້າໃນສິ່ງທີ່ເຮັດໃຫ້ພຣະອາຈານໄດ້ຮັບຄວາມເຊື່ອມເສັຽ ສໍາລັບເຈີໂຣມແລ້ວ ວັນນັ້ນເປັນວັນທີ່ພະສັນຍາສໍາເຣັດ “ແຕ່ເມື່ອເຂົາຈະມອບທ່ານໄວ້ນັ້ນຢ່າຄິດອຸກໃຈວ່າຈະເວົ້າຢ່າງໃດຫລືຈະກ່າວອັນໃດ ເພາະວ່າຄໍາທີ່ທ່ານຈະກ່າວນັ້ນ ພຣະເຈົ້າຈະຊົງປະທານ ໃຫ້ແກ່ທ່ານໃນໂມງນັ້ນ ເພາະບໍ່ແມ່ນພວກທ່ານເອງຈະເປັນຜູ້ກ່າວ ແຕ່ແມ່ນພຣະວິນ ຍານແຫ່ງພຣະບິດາຂອງພວກທ່ານຊົງເປັນຜູ້ກ່າວໃຫ້ທ່ານ” (ມັດທາຍ 10:19-20)

ຕລອດທັງປີທີ່ເຈີໂຣມຖືກຂັງຢູ່ໃນຫ້ອງມືດ ເພິ່ນບໍ່ສາມາດອ່ານຫລືມອງເຫັນອັນໃດໄດ້ ແຕ່ຂໍ້ໂຕ້ແຍ່ງຂອງເພິ່ນເຮັດໃຫ້ມອງເຫັນຢ່າງຊັດເຈນແລະມີອໍານາດຮາວກັບວ່າເພິ່ນບໍ່ຖືກລົບກວນເວລາໃນການສຶກຮໍ່າຮຽນເລີຍ ເພິ່ນຊີ້ໃຫ້ຜູ້ຟັງໄດ້ມອງເຫັນເຖິງບັນດາຜູ້ບໍລິສຸດທີ່ໄດ້ຮັບການພິພາກສາຈາກຜູ້ພິພາກສາທີ່ຍຸດຕິທັມ ເກືອບທຸກຍຸກທຸກສມັຍຜູ້ທີ່ສະແຫວງຫາທາງ ຍົກລະດັບຈະຣິຍາທັມຂອງປະຊາຊົນມັກຈະຖືກຂັບໄລ່ ພຣະຄຣິດເອງກໍຖືກປະນາມວ່າເປັນຜູ້ປະພຶດຜິດໂດຍການພິຈາຣະນາຄະດີທີ່ບໍ່ຊອບທັມ

ເຈີໂຣມປະກາດການກັບໃຈຂອງເພິ່ນ ໂດຍການເປັນພະຍານເຖິງຄວາມເປັນຜູ້ໄຮ້ມົນທິນແລະຄວາມບໍຣິສຸດຂອງຮັດຜູ້ເສັຽສະລະຊີວິດເພື່ອສາສນາວ່າ "ຂ້າພະເຈົ້າຮູ້ຈັກເພິ່ນຕັ້ງແຕ່ເພິ່ນຍັງເປັນເດັກນ້ອຍ ເພິ່ນເປັນຄົນທີ່ດີເລີດບໍລິສຸດແລະຊອບທັມ ເພິ່ນຖືກປະນາມທັງບໍ່ມີມົນທິນຫຍັງເລີຍແມ່ນແຕ່ນ້ອຍດຽວ ຂ້າພະເຈົ້າພ້ອມທີ່ຈະຕາຍ ຂ້າພະເຈົ້າຢ້ານຕໍ່ຄວາມເຈັບປວດທີ່ສັດຕຣູແລະຜູ້ເປັນພະຍານເທັດຕຽມໄວ້ໃຫ້ເພື່ອຂ້າພະເຈົ້າ ຜູ້ທີ່ວັນນຶ່ງຈະຕ້ອງລາຍງານຄວາມລວງຂອງພວກເຂົາຕໍ່ພຣະເຈົ້າ ພຣະອົງຜູ້ບໍ່ມີໃຜຈະຫລອກລວງໄດ້"

ເຈີໂຣມກ່າວຕໍ່ໄປວ່າ "ຄວາມບາບທຸກຢ່າງທີ່ຂ້າພະເຈົ້າໄດ້ເຮັດມາຕັ້ງ ແຕ່ເປັນໜຸ່ມບໍ່ມີບາບຫຍັງທີ່ເຮັດໃຫ້ໜັກໃຈ ແລະເຮັດໃຫ້ຂ້າພະເຈົ້າຮູ້ສຳນຶກດ້ວຍຄວາມເຈັບປວດຍິ່ງກວ່າບາບທີ່ກະທຳໃນສະຖານທີ່ອັນຮ້າຍແຮງຢ່າງນີ້ ເມື່ອຂ້າພະເຈົ້າເຫັນດ້ວຍກັບການຕັດສິນຄະດີຕໍ່ຕ້ານໄວຄລິບຢ່າງບໍ່ຍຸດຕິທັມແລະຕໍ່ສູ້ກັບບຸຣຸດຍອມສະລະຊີວິດເພື່ອສາສນາຢ່າງ ຈອນ ຮັດ ຜູ້ເປັນທັງອາຈານແລະເພື່ອນຂອງຂ້າພະເຈົ້າ ຂ້າພະເຈົ້າຈຶ່ງຂໍສະຣະພາບຈາກໃຈຈິງຂອງຂ້າພະເຈົ້າ ແລະຂໍປະກາດດ້ວຍຄວາມເສັຽໃຈເປັນຢ່າງຍິ່ງທີ່ໄດ້ທຳລາຍຊື່ສຽງຂອງທັງສອງທ່ານເພາະຢ້ານຕາຍ ຂ້າພະເຈົ້າໄດ້ປະນາມຫລັກຄຳສອນຂອງທ່ານ ດັ່ງນັ້ນຂ້າພະເຈົ້າຂໍວິງວອນຕໍ່ພຣະຜູ້ຊົງຣິດໄດ້ໂປຣດອະພັຍຄວາມຜິດບາບຂອງຂ້າພະເຈົ້າ ແລະໂດຍສະເພາະບາບນີ້ຊຶ່ງເປັນບາບທີ່ຊົ່ວຮ້າຍທີ່ສຸດ

ເພິ່ນຊີ້ໄປທີ່ບັນດາຜູ້ຕັດສິນຄະດີແລ້ວກ່າວຢ່າງໜັກແໜ້ນວ່າ "ທ່ານກ່າວປະນາມໄວຄລິບແລະຈອນ ຮັດ ໃນສິ່ງທີ່ທັງສອງໄດ້ພິສູດວ່າເປັນຄວາມຈິງແລະຂໍ້ເທັດຈິງທີ່ບໍ່ອາດຫັກລ້າງໄດ້ ຂ້າພະເຈົ້າກໍຄິດແລະຂໍກ່າວຢ່າງຄົນທັງສອງເຊັ່ນກັນ"

ຄຳເວົ້າຂອງເພິ່ນຕ້ອງຖືກຂັດຈັງວະ ພວກບາດຫລວງລະດັບຫົວໜ້າຕົວສັ່ນດ້ວຍຄວາມຄຽດພາກັນຮ້ອງຂຶ້ນວ່າ "ມີອັນໃດຕ້ອງພິສູດຕໍ່ໄປອີກ ພວກເຮົາທຸກຄົນປະຈັກແລ້ວວ່າເພິ່ນເປັນຜູ້ຍຶດໝັ້ນສາສນານອກຮີດທີ່ດື້ດັ້ນທີ່ສຸດ

ເຈີໂຣມບໍ່ຫວັ່ນໄຫວຕໍ່ອາຣົມອັນຮ້ອນຮົນສັດຕຣູເພິ່ນເປັ່ງສຽງດັງວ່າ "ແມ່ນຫຍັງ ທ່ານຄິດວ່າຂ້າພະເຈົ້າຢ້ານຕາຍຢ່າງນັ້ນຫລື ພວກທ່ານໄດ້ກັກຂັງຂ້າພະເຈົ້າທັງປີໃນຫ້ອງມືດທີ່ໜ້າຢ້ານ ມັນໂຫດຮ້າຍຍິ່ງກວ່າຄວາມຕາຍເສັຽອີກ ຂ້າພະເຈົ້າບໍ່



ບັນດາລູກແກະເຫລົ່ານີ້ຈະຕ້ອງໄດ້ຮັບການຄຸ້ມຄອງໃຫ້ພົ້ນຈາກຝູງໝາປ່າ ເວສເລ່ບໍ່ເຄີຍຄິດຈະຕັ້ງນິກາຍໃໝ່ ແຕ່ເພິ່ນໄດ້ຮວບຮວມຜູ້ທີ່ເຊື່ອຖືໃຫ້ຢູ່ພາຍໃຕ້ກຸ່ມເມທໍດິສ

ບັນດານັກເທດເຫລົ່ານີ້ໄດ້ຮັບຄວາມຍາກລຳບາກ ເພາະຄຣິສຕະຈັກທີ່ມີຢູ່ກ່ອນແລ້ວ ເພິ່ນໄດ້ຕໍ່ສູ້ຢ່າງເຂັ້ມແຂງ ແຕ່ເຖິງປານນັ້ນຄວາມຈິງກໍຍັງເຜີຍແຜ່ເຂົ້າໄປເຖິງແມ່ນວ່າປະຕູຖືກປິດຕາຍແລ້ວກໍຕາມ ບັນດາສາສນາຈານສິດຍາພິບານຫລາຍຄົນໄດ້ຮັບການເລົ້າໃຈໃຫ້ເລີກຈາກການປະພຶດຕົນທີ່ບໍ່ເຄັ່ງຄັດໃນສິລທັມແລະກາຍເປັນນັກເທດທີ່ມີຈິດໃຈຮ້ອນຮົນປະກາດສັ່ງສອນໃນທ້ອງຖິ່ນຂອງພວກເຂົາເອງ

ໃນສມັຍຂອງເວສເລ່ ບັນດາຜູ້ມີຂອງປະທານທີ່ແຕກຕ່າງກັນບໍ່ມີຄວາມເຫັນກົງກັນໃນທຸກເຣື່ອງຂອງຫລັກຄວາມເຊື່ອຄວາມຄິດເຫັນທີ່ແຕກຕ່າງກັນລະຫວ່າງໄວຟິນແລະຕະກຸນເວສເລ່ເກືອບຈະເຮັດໃຫ້ບຸກຄົນທັງສາມຕ້ອງແຕກແຍກກັນ ແຕ່ເມື່ອພວກເຂົາໄດ້ຮຽນຮູ້ເຖິງຄວາມມີໃຈອ່ອນສຸພາບໃນໂຮງຮຽນຂອງພຣະຄຣິດ ທຸກຄົນກໍມີໃຈອົດທົນຮູ້ຈັກຜ່ອນໜັກຜ່ອນເບົາແລະມີໃຈເອື້ອເຟື້ອຕໍ່ກັນແລະກັນ ກັບຄືນດີຕໍ່ກັນອີກເພາະບໍ່ມີເວລາທີ່ຈະມາໂຕ້ຖຽງກັນ ໃນຂນະທີ່ມີຄວາມເຊື່ອຖືຢ່າງຜິດໆ ແລະຄວາມຊົ່ວຮ້າຍມີຢູ່ທົ່ວທຸກຫົນທຸກແຫ່ງ

## ເວສເລ່ລອດຕາຍຢ່າງຫວຸດຫວິດ

ພວກທີ່ມີອິດທິພົນໃຊ້ອຳນາດຕໍ່ສູ້ບັນດາຜູ້ຮັບໃຊ້ພຣະເຈົ້າ ຜູ້ສອນສາສນາຫລາຍຄົນໄດ້ສະແດງຕົນເປັນປະຕິປັກ ຄຣິສຕະຈັກຫລາຍແຫ່ງບໍ່ຍອມຮັບຄວາມເຊື່ອທີ່ບໍຣິສຸດ ບັນດາສິດຍາພິບານປະຕິເສດບໍ່ໃຫ້ພວກເຂົາເທສນານຳໄປສູ່ຄວາມມືດມົນແລະຄວາມຊົ່ວຮ້າຍ ພຣະເຈົ້າຊົງພຣະເມດຕາໂປຣດໃຫ້ຈອນ ເວສເລ່ ລອດ ພົ້ນຈາກຄວາມຕາຍອີກແລ້ວອີກເລົ່າດ້ວຍການອັສຈັນ ບາງເທື່ອເມື່ອເບິ່ງເໝືອນວ່າຈະໜີບໍ່ພົ້ນໄດ້ ເທວະດາສວມຮ່າງຂອງມະນຸດກໍໄດ້ຊ່ອຍເຫລືອເພິ່ນໄວ້ ຝູງຊົນທີ່ຈະທຳຮ້າຍເພິ່ນກໍຖອຍອອກໄປ ຜູ້ຮັບໃຊ້ຂອງພຣະຄຣິດໄດ້ເດີນຜ່ານພົ້ນອັນຕຣາຍໄປຢ່າງປອດພັຍ

ເວສເລ່ໄດ້ເລົ່າເຖິງເຫດການຄັ້ງນຶ່ງທີ່ພຣະເຈົ້າຊົງຊ່ອຍໃຫ້ລອດພົ້ນອັນຕຣາຍວ່າ "ເຖິງແມ່ນວ່າຫລາຍຄົນຈະດຶງຄໍເສື້ອຂອງຂ້າພະເຈົ້າເພື່ອຈະໃຫ້ລົ້ມລົງພວກເຂົາກໍບໍ່ສາມາດດຶງຢູ່ໄດ້ນານ ຊາຍຄົນຄົນນຶ່ງດຶງເສື້ອຂອງຂ້າພະເຈົ້າໄວ້ແໜ້ນ

ທີ່ເວສເລ່ນີ່ງຟັງ ຄວາມເຊື່ອໄດ້ເກີດຂື້ນໃນຈິດວິນຍານຂອງເພິ່ນ ເວສເລ່ກ່າວວ່າ "ຂ້າພະເຈົ້າຮູ້ສຶກວ່າຈິດໃຈມີຄວາມອົບອຸ່ນຢ່າງໜ້າອັສຈັນ ຂ້າພະເຈົ້າຮູ້ສຶກວ່າມີຄວາມໄວ້ວາງໃຈໃນພຣະຄຣິດ ພຣະຄຣິດອົງດຽວເທົ່ານັ້ນ ເພື່ອຈະໄດ້ຄວາມລອດມາຈາກພຣະອົງ ແລະຂ້າພະເຈົ້າໝັ້ນໃຈວ່າພຣະອົງຊົງຮັບເອົາຄວາມຜິດບາບຂອງຂ້າພະເຈົ້າໄປ ແລະແມ່ນແຕ່ຕົວຂອງຂ້າພະເຈົ້າແລະຊົງຊ່ອຍໃຫ້ຂ້າພະເຈົ້າລອດພົ້ນຈາກກົດແຫ່ງຄວາມບາບ ແລະຄວາມຕາຍ"

ບັດນີ້ເພິ່ນໄດ້ພົບພຣະຄຸນຊຶ່ງໄດ້ໃຊ້ຄວາມພຍາຍາມຢ່າງໜັກເພື່ອຈະໄດ້ມາໂດຍການອະທິຖານ ການຖືສິນອົດອາຫານ ແລະສະລະລະຖິ້ມສິ່ງທີ່ອຳນວຍຄວາມສຸກໃຫ້ແກ່ຕົນເອງເປັນຂອງປະທານທີ່ເພິ່ນໄດ້ມາ "ໂດຍບໍ່ຕ້ອງເສັຽເງິນ" ເພິ່ນມີໃຈຮ້ອນຮົນທີ່ຈະປະກາດໃຫ້ປະຊາຊົນທຸກຫົນທຸກແຫ່ງໄດ້ຊາບເຖິງຂ່າວປະເສີດແຫ່ງພຣະຄຸນຂອງພຣະເຈົ້າ ທີ່ມະນຸດທັງຫລາຍສາມາດຈະໄດ້ຮັບໂດຍບໍ່ຕ້ອງເສັຽຄ່າອັນໃດເລີຍ "ຂ້າພະເຈົ້າຖືວ່າດິນແດນທົ່ວໂລກນີ້ຄືທີ່ຂ້າພະເຈົ້າຈະຕ້ອງອອກໄປເຜີຍແຜ່" ເວສເລ່ກ່າວ "ບໍ່ວ່າຂ້າພະເຈົ້າຈະຢູ່ໃນສະຖານທີ່ໃດ ຂ້າພະເຈົ້າຖືໜ້າທີ່ຂອງຂ້າພະເຈົ້າຄືຕ້ອງປະກາດຂ່າວດີແກ່ຄວາມລອດອັນໜ້າຊົມຊື່ນຍິນດີນີ້ແກ່ທຸກຄົນທີ່ເຕັມໃຈຮັບຟັງ"

ເວສເລ່ຍັງດຳເນີນຊີວິດຕໍ່ໄປຢ່າງມີລະບຽບເຄັ່ງຄັດແລະບໍ່ມີຄວາມເຫັນແກ່ຕົວ ການທີ່ເພິ່ນດຳເນີນຊີວິດບັດນີ້ບໍ່ແມ່ນພື້ນຖານ (ຂອງຄວາມລອດ) ແຕ່ເປັນຜົນແຫ່ງຄວາມເຊື່ອ ບໍ່ແມ່ນຮາກແຕ່ເປັນຜົນແຫ່ງຄວາມບໍຣິສຸດ ພຣະຄຸນຂອງພຣະເຈົ້າໃນພຣະຄຣິດຈະສຳແດງອອກມາໃນຄວາມເຊື່ອຟັງ ເວສເລ່ໄດ້ອຸທິດຊີວິດປະກາດສັ່ງສອນຄວາມຈິງອັນຍິ່ງໃຫຍ່ທີ່ເພິ່ນໄດ້ຮັບ ຄືຄວາມຊອບທັມໂດຍຄວາມເຊື່ອໃນພຣະໂລຫິດຂອງພຣະຄຣິດໄດ້ໄຖ່ໄວ້ແລ້ວ ແລະຣິດເດດຂອງພຣະວິນຍານບໍຣິສຸດຊຶ່ງດົນໃຈໃຫ້ຄົນທັງຫລາຍກັບໃຈໃໝ່ເຮັດໃຫ້ບັງເກີດຜົນໃນຊີວິດ ເມື່ອເພິ່ນປະຕິບັດຕາມແບບຢ່າງຂອງພຣະຄຣິດ

ໄວຟີນ ແລະສອງພີ່ນ້ອງຕະກຸນເວສເລ່ຖືກເພື່ອນນັກຮຽນທີ່ບໍ່ເຄົາຣົບຢຳເກງພຣະເຈົ້າພາກັນດູໝິ່ນຢຽບຫຍາມແລະຮຽກທັງສາມວ່າເປັນພວກ "ເມທໍດິສ" (ພວກເຈົ້າລະບຽບ ຊຶ່ງໃນປັດຈຸບັນນີ້ເປັນຊື່ທີ່ໄດ້ຮັບການຍົກຍ້ອງນັບຖືພຣະວິນຍານບໍຣິສຸດໄດ້ຊົງດົນໃຈໃຫ້ທັງສາມປະກາດສັ່ງສອນເຖິງເຣື່ອງພຣະຄຣິດແລະການສິ້ນພຣະຊົນເທິງໄມ້ກາງແຂນຂອງພຣະອົງ ຄົນນັບພັນໄດ້ກັບໃຈຢ່າງແທ້ຈິງ ສິ່ງທີ່ສຳຄັນກໍຄື



ສາມາດຢຸດເວົ້າ ແຕ່ຈະສະແດງອອກໃຫ້ເຫັນເຖິງຄວາມບໍ່ເຂົ້າໃຈວ່າເປັນຫຍັງຈຶ່ງຕ້ອງເຮັດການປ່າເຖື່ອນຕໍ່ຄຣິສະຕຽນຢ່າງນັ້ນ"

## ຖືກຄຸມຂັງແລະຄວາມຕາຍ

ອີກຄັ້ງນຶ່ງທີ່ພວກເຂົາບັນດານໂທສະເຈີໂຣມຖືກຮັບນຳໄປກັກຂັງ ແຕ່ມີຫລາຍຄົນທີ່ປະທັບໃຈໃນຄຳເວົ້າຂອງເພິ່ນຫລາຍແລະຕ້ອງການທີ່ຈະຊ່ອຍຊີວິດເພິ່ນໄວ້ ເຈົ້າໜ້າທີ່ຕຳແໜ່ງສູງທາງດ້ານສາສນາຫລາຍຄົນໄປຢຽມເພິ່ນແລະຂໍໃຫ້ເພິ່ນຍອມຈຳນົນຕໍ່ສະພາ ພ້ອມກັບນຳເອົາຄວາມຫວັງອັນຮຸ່ງເຮືອງມາສເນີໃຫ້ເຂົາເປັນລາງວັນ

ແຕ່ເຈີໂຣມກ່າວວ່າ "ລອງພິສູດໃນຂ້າພະເຈົ້າເບິ່ງກ່ອນວ່າພຣະຄັມພີອັນສັກສິດຢູ່ໃສທີ່ບອກວ່າການກະທຳຂອງຂ້າພະເຈົ້າຜິດ ແລ້ວຂ້າພະເຈົ້າຈະຍອມຍົກເລີກຄວາມຄິດນັ້ນເສັຽ"

"ພຣະຄັມພີອັນສັກສິດ" ຄົນນຶ່ງທີ່ໄປຢ້ຽມເພິ່ນຮ້ອງຂື້ນ "ຖ້າຢ່າງນັ້ນທຸກຢ່າງກໍຕ້ອງຖືກຕັດສິນໂດຍພຣະຄັມພີອັນສັກສິດ ແລ້ວໃຜຈະເຂົ້າໃຈໄດ້ຫາກຄຣິສຕະຈັກບໍ່ອະທິບາຍຄວາມໝາຍເຫລົ່ານັ້ນ

ເຈີໂຣມຈຶ່ງຕອບວ່າ "ຖ້າຢ່າງນັ້ນປະເພນີຕ່າງໆ ຂອງມະນຸດມີຄ່າຫລາຍກວ່າຂ່າວປະເສີດຂອງພຣະຜູ້ຊ່ອຍໃຫ້ລອດຂອງເຮົາຢ່າງນັ້ນຫລື"

ຄຳຕອບທີ່ໄດ້ຮັບກໍຄື "ຄວາມເຊື່ອນອກຮີດ" ຜູ້ທີ່ມາຢ້ຽມເພິ່ນເວົ້າຂື້ນວ່າ "ຂ້າພະເຈົ້າປ່ຽນໃຈແລ້ວ ເຮົາມາອ້ອນວອນເຈົ້າເປັນເວລານານ ເຮົາເຫັນວ່າເຈົ້າຖືກຊັກຈູງໂດຍຊາຕານ"

ຫລັງຈາກນັ້ນບໍ່ນານເທົ່າໃດ ເພິ່ນກໍຖືກນຳໄປສະຖານທີ່ທີ່ຮັດເຄີຍຖວາຍຊີວິດມາແລ້ວ ເຈີໂຣມຮ້ອງເພງຕລອດທາງທີ່ເພິ່ນເດີນໄປ ໃບໜ້າຂອງເພິ່ນບົ່ງບອກເຖິງຄວາມຊົມຊື່ນຍິນດີ ແລະສັນຕິສຸກສຳລັບເພິ່ນແລ້ວຄວາມຕາຍໝົດຄວາມໜ້າ

ຢ້ານ ຂນະທີ່ເພັດຊະຄາດຜູ້ຈູດໄຟກ້າວອອກໄປຢູ່ເບື້ອງຫລັງຂອງເຈີໂຣມຜູ້ສະລະຊີວິດເພື່ອສາສນາກໍຮ້ອງຂຶ້ນວ່າ "ຈົ່ງຈູດໄຟຕໍ່ໜ້າຂອງຂ້າພະເຈົ້າເຖີດຖ້າຂ້າພະເຈົ້າຢ້ານຕາຍຂ້າພະເຈົ້າຄົງບໍ່ມາຢູ່ທີ່ນີ້ດອກ"

ຖ້ອຍຄຳສຸດທ້າຍຂອງເພິ່ນຄືຄຳອະທິຖານ "ຂ້າແດ່ພຣະບິດາຜູ້ຊົງຣິດຂໍຊົງໂປຣດເມດຕາຂ້າພະອົງດ້ວຍເຖີ້ນ ແລະໂປຣດອະພັຍຄວາມຜິດບາບຂອງຂ້າພະອົງດ້ວຍເພາະພຣະອົງຊົງຊາບດີວ່າຂ້າພະອົງຮັກຄວາມຈິງຂອງພຣະອົງສເມີ" ເຖົ່າຖ່ານຈາກຮ່າງຂອງຜູ້ສະລະຊີວິດເພື່ອສາສນາຖືກໄປຖິ້ມລົງແມ່ນ້ຳໄລເຊັ່ນດຽວກັບຮັດຜູ້ຖືແສງສວ່າງທັງຫລາຍຂອງພຣະເຈົ້າກໍຈົບຊີວິດລົງດ້ວຍປະການນີ້

ການປະຫານຊີວິດຮັດໄດ້ຈູດປະກາຍໄຟແຫ່ງຄວາມຄຽດແຄ້ນແລະຄວາມຢ້ານກົວແກ່ຊາວໂບຮີເມັຽຢ່າງຫລວງຫລາຍ ປະຊາຊົນທັງປະເທດຕ່າງກໍປະກາດວ່າເພິ່ນໄດ້ເປັນຄຣູຜູ້ຊື່ສັດຂອງຄວາມຈິງສ່ວນສະມາຊິກສະພາກ່າວຫາວ່າເປັນຄາດຕະກອນຫລັກຄຳສອນຂອງຮັດເຮັດໃຫ້ເປັນທີ່ສົນໃຈຂອງຄົນທົ່ວໄປຫລາຍກວ່າແຕ່ກ່ອນຫລາຍຄົນຍອມຮັບການປະຕິຮູບຄວາມເຊື່ອສັນຕະປາປາແລະຈັກກະພັດຮ່ວມກັນທຳລາຍລ້າງກຸ່ມຄົນເຫລົ່ານັ້ນ ກອງທະຫານຂອງຈັກກະພັດໄຊຈິສະມັນຖືກບັນຊາໃຫ້ໄປໂຈມຕີໂບຮີເມັຽ

ແຕ່ຜູ້ຊ່ອຍເຫລືອກໍເກີດຂຶ້ນ ຊິສະຄາ ນາຍພົນຜູ້ກ້າຫານທີ່ສຸດຄົນນຶ່ງເປັນຜູ້ນຳຂອງຊາວໂບຮີເມັຽ ໂດຍເຊື່ອໃນການຊ່ອຍເຫລືອຂອງພຣະເຈົ້າ ພວກເຂົາຈະສາມາດຕໍ່ຕ້ານກອງທັບອັນກຽງໄກຂອງຂ້າເສິກທີ່ກຳລັງຈະຍົກມາຕໍ່ສູ້ພວກຕົນໄດ້ ຄັ້ງແລ້ວຄັ້ງເລົ່າຈັກກະພັດບຸກລຸກໂບຮີເມັຽ ແຕ່ກໍຕ້ອງຖອຍກັບໄປ ຄົນທີ່ສັດທາໃນຮັດບໍ່ຢ້ານຄວາມຕາຍຍືນຢັດຕໍ່ສູ້ຢ່າງອາດຫານ ຊິສະຄາຜູ້ກ້າຫານສິ້ນຊີວິດ ໂພຣໂຄພີຫັດກໍຂຶ້ນເປັຜູ້ນຳແທນແລະເປັນຜູ້ນຳທີ່ມີຄວາມສາມາດເປັນທີ່ຍອມຮັບຫລາຍຂຶ້ນ

ສັນຕະປາປາປະກາດເຮັດສົງຄາມສາສນາຕໍ່ຕ້ານສະນຸສິດຂອງຮັດ ມີການໂຈມຕີໂດຍສັບພັນໃນໂບຮີເມັຽ ແຕ່ກໍປະສົບຄວາມຜ່າຍແພ້ຫລັງຈາກນັ້ນກໍມີການປະກາດສົງຄາມສາສນາອີກເທື່ອນຶ່ງ ໃນເທື່ອນີ້ທຸກປະເທດໃນຢູໂຣບທີ່ຢູ່ພາຍໃຕ້ການປົກຄອງຂອງສັນຕະປາປາມີການຮວມກຳລັງຄົນ ກຳລັງຊັບ ແລະອາວຸດຍຸດໂທປະກອນປະຊາຊົນຈຳນວນຫລວງຫລາຍໄດ້ຮວມຕົວກັນເຂົ້າໄປຢູ່ຝ່າຍຂອງສັນຕະປາປາ



ທັຍຂອງພຣະເຈົ້າ ເພື່ອຈະໄດ້ຫລຸດພົ້ນຈາກການປັບໂທດບາບຫລືທຳລາຍອຳນາດແຫ່ງຄວາມບາບ ແຕ່ກໍຫລົ້ມແຫລວ

ໄຟແຫ່ງຄວາມຈິງຂອງພຣະເຈົ້າ ຊຶ່ງຈວນຈະມອດໄປຈາກແທ່ນບູຊາຂອງໂປດເຕສແຕນ ໄດ້ຖືກຈູດຂຶ້ນມາອີກເທື່ອນຶ່ງຈາກຄົບເພີງທີ່ຖືກັນມາໂດຍຄຣິສະຕຽນຊາວໂບຮີເມັຽ ທີ່ລີ້ພັຍອາສັຍຢູ່ໃນແຊັກໂຊນີແລະຮັກສາຄວາມເຊື່ອດັ່ງເດີມໄວ້ ແສງສວ່າງຈາກຄຣິສະຕຽນກຸ່ມນີ້ໄດ້ຖືກນຳໄປຍັງເວສເລ່

ຈອນແລະຊານ ເວສເລ່ໄດ້ຖືກສົ່ງໄປທຳງານພັນທະກິດທີ່ອະເມຣິກາ ໃນເຮືອລຳດຽວກັນມີພວກໂມຣາວຽນຮ່ວມເດີນທາງໄປດ້ວຍ ລະຫວ່າງການເດີນທາງເກີດພາຍຸຮ້າຍ ຂນະເມື່ອຈອນຕ້ອງຜະເຊີນກັບຄວາມຕາຍຢູ່ນັ້ນ ເພິ່ນຮູ້ສຶກວ່າບໍ່ມີຄວາມໝັ້ນໃຈວ່າຈະໄດ້ຮັບສັນຕິສຸກຈາກພຣະເຈົ້າ ຕົງກັນຂ້າມກັບຊາວເຢຣະມັນທີ່ມີແຕ່ຄວາມສງົບເຢືອກເຢັນ ແລະມີຄວາມໄວ້ວາງໃຈຊຶ່ງເພິ່ນບໍ່ເຄີຍເຫັນມາກ່ອນເລີຍຈອນກ່າວວ່າ "ຂ້າພະເຈົ້າໄດ້ເຝົ້າສັງເກດຄວາມປະພຶດຢ່າງມີລະບຽບເຄັ່ງຄັດຂອງພີ່ນ້ອງນີ້ມານານແລ້ວ ແລະຄາວນີ້ມີໂອກາດທີ່ເພິ່ນຈະໄດ້ພິສູດໃຫ້ເຫັນວ່າເພິ່ນໄດ້ຮັບຊ່ວຍເຫລືອໃຫ້ພົ້ນຈາກຄວາມຢ້ານ ແລະຈາກຄວາມເຢີ່ຍິ່ງຄວາມໂກດແລະການແກ້ແຄ້ນຫລືບໍ່ ຂນະທີ່ພວກເພິ່ນຮ້ອງເພງສັນລະເສີນພຣະເຈົ້າໄດ້ເກີດພາຍຸໃຫຍ່ຄື້ນຊັດພັດຖ້ວມເຮືອແລະເຮືອຂາດອອກເປັນຊິ້ນນ້ອຍໆ ນ້ຳໄຫລຖ້ວມຂຶ້ນມາເທິງດາດຟ້າສຳກັບວ່າທະເລເລິກໄດ້ກືນເຮົາໄວ້ສຽງໂຫ່ຮ້ອງດ້ວຍຄວາມຢ້ານດັງຂຶ້ນ ໃນໝູ່ຄົນອັງກິດ ແຕ່ຊາວເຢຣະມັນຍັງຮ້ອງເພງຕໍ່ໄປດ້ວຍຈິດໃຈເຢືອກເຢັນ ຕໍ່ມາຂ້າພະເຈົ້າໄດ້ຖາມຄົນນຶ່ງໃນພວກເຂົາວ່າ "ທ່ານບໍ່ຢ້ານບໍ່" ເພິ່ນຕອບວ່າ "ຂໍຂອບພຣະຄຸນພຣະເຈົ້າ" ຂ້ອຍບໍ່ຢ້ານເລີຍ ຂ້າພະເຈົ້າຖາມອີກວ່າ "ແລ້ວພວກຜູ້ຍິງແລະເດັກນ້ອຍ ຢ້ານຫລືບໍ່ເຂົາຕອບຢ່າງສຸພາບວ່າ ບໍ່ຢ້ານດອກພວກຜູ້ຍິງແລະເດັກນ້ອຍໃນພວກເຮົາບໍ່ຢ້ານຕາຍ

## ຈິດໃຈຂອງເວສເລ່ "ມີຄວາມອົບອຸ່ນຢ່າງອັສຈັນ"

ເມື່ອເດີນກັບໄປປະເທດອັງກິດ ເວສເລ່ກໍໄດ້ເຂົ້າໃຈຄວາມເຊື່ອໃນພຣະຄັມພີຊັດເຈນຫລາຍຂຶ້ນຈາກການສອນຂອງຊາວໂມຣາວຽນ ໃນການປະຊຸມຄັ້ງນຶ່ງຂອງຊາວໂມຣາວຽນໃນລອນດອນ ມີຊາຍຜູ້ນຶ່ງໄດ້ອ່ານຂໍ້ຄວາມຈາກໜັງສືຂອງລູເຕີ ຂນະ

ເຄັ່ງຄັດ ສ່ວນຊົນຊັ້ນຕ່ຳບໍ່ມີໃຜເອົາໃຈໃສ່ຈຶ່ງເຮັດໃຫ້ພວກເຂົາປະພຶດຊົ່ວຮ້າຍ ທາງຄຣິສະຕະຈັກບໍ່ມີກຳລັງໃຈຫລືຄວາມເຊື່ອທີ່ຈະຊ່ອຍສິ່ງເສີມງານແຫ່ງຄວາມຈິງທີ່ລົ້ມແຫລວໄປ

## ຊອບທັມໂດຍຄວາມເຊື່ອ

ຫລັກຄວາມເຊື່ອອັນຍິ່ງໃຫຍ່ກ່ຽວກັບ "ການຊອບທັມໂດຍຄວາມເຊື່ອ" ຊຶ່ງລູເຕີໄດ້ສອນໄປຢ່າງຊັດເຈນເກືອບຈະເລືອນຫາຍໄປ ຫລັກການຂອງໂຣມກ່ຽວກັບຄວາມລອດໂດຍການກະທຳດີໄດ້ເຂົ້າມາແທນ ໄວພິນແລະສອງພີ່ນ້ອງເວສເລ່ໄດ້ພຍາຍາມສະແຫວງຫາການເປັນທີ່ຊອບພຣະທັຍຂອງພຣະເຈົ້າ ພວກເຂົາຖືກສອນວ່າການທີ່ຈະເຮັດສິ່ງນີ້ໃຫ້ສຳເຣັດໄດ້ນັ້ນຈະຕ້ອງດຳເນີນຊີວິດໃນທາງຊອບທັມຕາມກົດຂໍ້ບັງຄັບແລະພິທີຕ່າງໆ ກ່ຽວກັບສາສນາ

ຄັ້ງນຶ່ງເມື່ອຊານ ເວສເລ່ ລົ້ມປ່ວຍແລະຄິດວ່າເພິ່ນຄົງຈະຕາຍ ມີຄົນຖາມເພິ່ນວ່າເພິ່ນມີຄວາມຫວັງໃນສິ່ງໃດເພື່ອຈະໄດ້ຮັບຊີວິດນິຣັນ ເພິ່ນຕອບວ່າ "ຂ້າພະເຈົ້າບົວລະບັດຮັບໃຊ້ພຣະເຈົ້າຢ່າງດີທີ່ສຸດແລ້ວ" ແຕ່ເບິ່ງເໝືອນວ່າເພື່ອນຂອງເພິ່ນບໍ່ມີຄວາມພໍໃຈໃນຄຳຕອບເທົ່າໃດ ເວສເລ່ຄິດໃນໃຈວ່າ "ອັນໃດກັນ ເພິ່ນຈະແຍ່ງຊີງເອົາຄວາມພຍາຍາມຈາກຂ້າພະເຈົ້າຫລື ຖ້າເປັນເຊັ່ນນັ້ນຂ້າພະເຈົ້າກໍບໍ່ມີອັນໃດທີ່ຂ້າພະເຈົ້າຈະຕ້ອງໄວ້ວາງໃຈແລ້ວ" ນີ້ຄືຄວາມມືດທີ່ໜາຕຶບຊຶ່ງປົກຄຸມຄຣິສຕະຈັກໄວ້ຊັກຈູງໃຈມະນຸດທັງຫລາຍໃຫ້ຫັນໄປຈາກຄວາມຫວັງໃນພຣະໂລຫິດຂອງພຣະຜູ້ໄຖ່ທີ່ຖືກຄຶງເທິງໄມ້ກາງແຂນ

ເວສເລ່ແລະຜູ້ຮ່ວມງານຂອງເພິ່ນໄດ້ຮັບການຊັກຈູງໃຫ້ມີຄວາມເຊື່ອວ່າພຣະບັນຍັດຂອງພຣະເຈົ້າມີອຳນາດເໜືອຄວາມຄິດຂອງມະນຸດ ທັງຄຳເວົ້າແລະການກະທຳຂອງເພິ່ນ ພວກເຂົາຈຶ່ງໄດ້ພຍາຍາມບັງຄັບບໍ່ໃຫ້ຈິດໃຈເກີດຄວາມຄິດຊົ່ວຮ້າຍດ້ວຍຄວາມພາກພຽນແລະດ້ວຍການອະທິຖານ ດຳເນີນຊີວິດດ້ວຍການເສັຽສະລະແລະຖ່ອມຕົວ ພຍາຍາມຮັກສາກົດຂໍ້ບັງຄັບໃຫ້ຖືກຕ້ອງທຸກປະການ ຄິດວ່າຈະພໍພຣະ



ກອງທະການຈຳນວນມະຫາສານມຸ່ງສູ່ໂບຮີເມັຽ ປະຊາຊົນໃນໂບຮີເມັຽຈຶ່ງຮ່ວມກັນຕໍ່ຕ້ານກອງທະຫານເຫລົ່ານັ້ນ ກອງກຳລັງທັງສອງຝ່າຍມຸ່ງປະຈັນໜ້າກັນຈົນໃນທີ່ສຸດມີແມ່ນ້ຳເທົ່ານັ້ນກັ້ນລະຫວ່າງກອງກຳລັງທັງສອງ "ສົງຄາມສາສນາຄັ້ງນີ້ນັບວ່າມີກອງກຳລັງທີ່ຍິ່ງໃຫຍ່ ແຕ່ແທນທີ່ຈະເຄື່ອນກຳລັງຂ້າມແມ່ນ້ຳເພື່ອປິດສາກສົງຄາມຄັ້ງນີ້ ດ້ວຍການຂະຍີ້ພວກສະນຸສິດຂອງຮັດໃຫ້ໝົດໄປ ຕາມທີ່ພວກເຂົາຕັ້ງໃຈໄວ້ພວກເຂົາກັບໄດ້ແຕ່ຢືນເບິ່ງຂ້າເສິກຢ່າງງຽບສງົບ"

ທັນໃດນັ້ນສິ່ງທີ່ເລິກລັບໜ້າຢ້ານໜ້າກົວກໍເກີດຂຶ້ນກັບຊາວໂບຮີເມັຽ ໂດຍທີ່ຍັງບໍ່ທັນໃຊ້ອາວຸດເລີຍພວກຂ້າເສິກກໍແຕກກະຈັດກະຈາຍເໝືອນກັບວ່າພວກທະຫານຖືກຂັບໄລ່ໂດຍອຳນາດອັນເລິກລັບ ດັ່ງນັ້ນບັນດາສິດຂອງຮັດຈຶ່ງລົງມືຂັບໄລ່ພວກຂ້າເສິກ ສິ່ງຂອງຕ່າງໆຂອງຂ້າເສິກຈຶ່ງຕົກເປັນຂອງພວກເຂົາໝົດສົງຄາມຄັ້ງນັ້ນແທນທີ່ຈະເຮັດໃຫ້ຊາວໂບຮີເມັຽຕ້ອງຍາກຈົນລົງກັບເຮັດໃຫ້ພວກເຂົາຮັ່ງມີຂຶ້ນ

ຫລັງຈາກນັ້ນບໍ່ເທົ່າໃດປີພາຍໃຕ້ການປົກຄອງຂອງສັນຕະປາປາອົງໃໝ່ກໍຍັງມີສົງຄາມສາສນາເກີດຂຶ້ນອີກເທື່ອນຶ່ງ ກອງທະຫານກອງໃຫຍ່ຍົກກຳລັງມຸ້ງສູ່ໂບຮີເມັຽ ທະຫານຂອງສິດຮັດຖອຍກຳລັງໄປຕໍ່ໜ້າຂ້າເສິກ ເຮັດໃຫ້ພວກສັດຕຣູຄິດວ່າພວກ ຕົນໄດ້ຮັບຊັຍຊະນະແລ້ວ

ໃນທີ່ສຸດກອງທະຫານຂອງໂພຣໂຄພີອັດກໍຍົກອອກສູ່ສະໜາມຣົບ ຂນະທີ່ສຽງຂອງກອງທັບທີ່ເຄື່ອນເຂົ້າມາຕັ້ງຂຶ້ນ ແມ່ນກ່ອນທີ່ຈະເຫັນທະຫານຂອງສິດຂອງຮັດ ທະຫານຂອງກອງທັບສາສນາກໍເກີດຄວາມຫວາດຫວັ່ນຕົກໃຈ ບັນດາເຈົ້າຊາຍນາຍພົນແລະທະຫານພາຍໃຕ້ບັງຄັບບັນຊາຕ່າງໆກໍຖິ້ມອາວຸດແລະແລ່ນໜີເອົາຕົວລອດໄປຄົນລະທິດລະທາງ ເມື່ອການແຕກຜ່າຍຢ່າງຢັບເຢີນສິ້ນສຸດລົງຊັບສິນຈຳນວນຫລວງຫລາຍຂອງສະເລັຽເສິກກໍຕົກເປັນຂອງຊາວໂບຮີເມັຽອີກຄັ້ງນຶ່ງ

ນັບເປັນຄັ້ງທີ່ສອງທີ່ທະຫານຈາກກອງທັບທີ່ໄດ້ຮັບການຝຶກແອບມາຢ່າງດີເພື່ອການເສິກສົງຄາມຕ້ອງແລ່ນໜີໂດຍທີ່ຍັງບໍ່ໄດ້ສູ້ຮົບຕໍ່ໜ້າຊົນຊາດທີ່ນ້ອຍແລະອ່ອນກຳລັງ ພວກບຸກລຸກເຫລົ່ານັ້ນຖືກທຳລາຍໂດຍອຳນາດອັນເລິກລັບ ພຣະອົງຜູ້ຊົງມອບຂ້າເສິກຊາວມີດຽນຢູ່ໃນອຸ້ງມືຂອງກີເດໂອນແລະທະຫານຂອງເພິ່ນພຽງສາມ

ຮ້ອຍຄົນໄດ້ຊີງຍື່ນພຣະຫັດຂອງພຣະອົງອີກເທື່ອນຶ່ງ (ຜູ້ວິນິສັຍ 7:19-25 ເພງສັນລະເສີນ 53:5)

## ຫລອກລວງໂດຍວິທີທາງການທູດ

ໃນທີ່ສຸດພວກຜູ້ນຳຂອງສາສນາຂອງໂຣມ ກໍໃຊ້ມາດຕະການທັງການທູດ ໃຊ້ວິທີການປະນີປະນອມເຂົ້າຫລອກລວງຊາວໂບຮີເມັຽໃຫ້ຕົກຢູ່ພາຍໃຕ້ອຳນາດຂອງ ໂຣມ ຊາວໂບຮີເມັຽໄດ້ຕັ້ງເງື່ອນໄຂໄວ້ສີ່ປະການເພື່ອສ້າງສັນຕິພາບກັບໂຣມດັ່ງນີ້

1 ໃຫ້ມີການເທສນາພຣະທັມຂອງພຣະເຈົ້າໄດ້ຢ່າງອິສະຣະ

2 ໃຫ້ສິດທິຄຣິສຕະຈັກໃຊ້ເຂົ້າໜົມປັງແລະນ້ຳອະງຸ່ນໃນພິທີສິນມະຫາສະນິດ ແລະໃຊ້ພາສາທ້ອງຖິ່ນໃນການນະມັດສະການ

3 ບໍ່ໃຫ້ບາດຫລວງຍຸ້ງກ່ຽວກັບການທຳງານແລະອຳນາດທາງຄາລະວາດ

4 ເມື່ອມີອັດສະຍາກັມລູກຂຸນຂອງບ້ານເມືອງຄວນຕັດສິນຄະດີໄດ້ທັງຄະດີຂອງບາດຫລວງແລະຄາລະວາດໃຫ້ເໝືອນກັນ

ທາງຝ່າຍສັນຕະປາປາຍອມຮັບເງື່ອນໄຂທາງສີ່ປະການ “ແຕ່ສິດທິໃນການຕີຄວາມຂອງເງື່ອນໄຂທັງສີ່ເປັນຂອງສະພາ ຫລືອີກໃນນຶ່ງຄືຄວນເປັນສັນຕະປາປາແລະຈັກກະພັດ” ໂຣມໄດ້ຮັບຜົນປໂຍດໂດຍໃຊ້ການອຳພາງແລະການສໍ້ໂກງແກ້ແຄ້ນທີ່ສູນເສັຽໃນການເຮັດສົງຄາມ ການຕີຄວາມໝາຍໃນເງື່ອນໄຂຂອງຊາວໂບຮີເມັຽເໝືອນກັບການຕີຄວາມໝາຍພຣະຄັມພີຄຣິສຕະຈັກກໍສາມາດບິດເບືອນຄວາມໝາຍໃຫ້ເປັນໄປຕາມຄວາມຕ້ອງການ

ປະຊາຊົນທຸກຊັ້ນວັນນະໃນໂບຮີເມັຽຮູ້ຄືວ່າວິທີນີ້ເປັນການທໍຣະຍົດຕໍ່ເສຣີພາບຂອງພວກເຂົາຈຶ່ງບໍ່ເຫັນດ້ວຍກັບຂໍ້ຕົກລົງນີ້ເກີດມີຂໍ້ຄິດເຫັນແຕກແຍກຂຶ້ນ ເຮັດ



ໂຣມຍັງມີຢູ່ ອຳນາດສູງສຸດຂອງສັນຕະປາປາຖືກປະຕິເສດ ແຕ່ໃນພຣະຣາຊວັງຍັງຍົກໃຫ້ພຣະອົງເປັນຜູ້ນຳຄຣິສຕະຈັກ ແລະຄຣິສຕະຈັກຍັງຢູ່ຫ່າງຈາກຄວາມບໍຣິສຸດຂອງຂ່າວປະເສີດຢ່າງຫລວງຫລາຍ ຍັງບໍ່ເຂົ້າໃຈເຣື່ອງຂອງເສຣີພາບໃນການນັບຖືສາສນາ ແມ່ນວ່າຄວາມທາຣຸນໂຫດຮ້າຍທີ່ຄຣິສຕະຈັກໂຣມເຄີຍນຳມາໃຊ້ຍັງມີຢູ່ ແຕ່ຜູ້ນຳສາສນາໂປເຕສແຕນບໍ່ຄ່ອຍຈະໃຊ້ຫລາຍເທົ່າໃດ ແຕ່ສິດທິຂອງມະນຸດທີ່ຈະນະມັດສະການພຣະເຈົ້າຕາມສຳນຶກຜິດຊອບຂອງປະຊາຊົນຍັງບໍ່ເປັນທີ່ຍອມຮັບ ຄົນທີ່ບໍ່ຍອມປະຕິບັດຕາມ ຕ້ອງຖືກກົດຂີ່ຂົ່ມເຫງເປັນເວລານັບຮ້ອຍປີ

## ຜູ້ຮັບໃຊ້ຖືກປົດອອກຈາກຕຳແໜ່ງ

ໃນສັດຕະວັດທີ່ 17 ສາສນາຈານແລະສິດຍາບິບານຫລາຍພັນຄົນຖືກປົດອອກຈາກຕຳແໜ່ງແລະປະຊາຊົນຖືກຫ້າມບໍ່ໃຫ້ເຂົ້າຮ່ວມປະຊຸມກ່ຽວກັບທາງສາສນານອກເສັຽຈະເປັນການປະຊຸມທີ່ທາງຄຣິສຕະຈັກຈັດຂຶ້ນໃນທີ່ກຳບັງໃນດົງໜາປ່າດິບ ບຸດທັງຫລາຍຂອງພຣະເຈົ້າທີ່ຖືກກົດຂີ່ຂົ່ມເຫງໄດ້ມາປະຊຸມກັນ ເພື່ອການທູນຂໍດ້ວຍການອະທິຖານແລະສັນລະເສີນພຣະເຈົ້າ ຫລາຍຄົນຕ້ອງທົນທຸກທໍຣະມານ ເພາະຄວາມເຊື່ອຂອງເຂົາ ໃນຄຸກເຕັມໄປດ້ວຍຜູ້ຕ້ອງຂັງ ຄອບຄົວຕ້ອງແຕກແຍກກັນ ແຕ່ການກົດຂີ່ຂົ່ມເຫງບໍ່ສາມາດຈະຢັບຢັ້ງການເປັນພະຍານຂອງພວກເຂົາ ຫລາຍຄົນຖືກຂັບໄລ່ຂ້າມມະຫາສະມຸດໄປຍັງອະເມຣິກາແລະພວກເຂົາກໍໄດ້ຕັ້ງຮາກຖານແລະວາງຮາກຖານເສຣີພາບຂອງສາສນາແລະປະຊາຊົນຂຶ້ນ

ໃນຄຸກໃຕ້ດິນທີ່ເຕັມໄປດ້ວຍພວກນັກໂທດມະຫັນຕະໂທດ ຈອນ ບັນຍັນໄດ້ສູດເອົາບັນຍາກາດແຫ່ງສວັນແລະຂຽນເຣື່ອງປຽບທຽບທີ່ອັສຈັນຂອງການເດີນທາງເພື່ອສະແຫວງບຸນ ຈາກດິນແດນທີ່ພິນາດໄປຍັງເມືອງບໍຣິມສຸຂເສມ ເປັນໜັງສືຊື່ “ປິສນາທັມ” (Pilgrim’s Progress) ແລະ Grace Abounding to the Chief of Sinners (ພຣະຄຸນອັນອຸດົມເພື່ອຕົວເອກແຫ່ງຄົນບາບທັງຫລາຍ) ໄດ້ນຳຄົນຫລວງຫລາຍໃຫ້ດຳເນີນໄປສູ່ທາງແຫ່ງຊີວິດທີ່ຖືກຕ້ອງ

ໃນສມັຍທີ່ຈິດວິນຍານຂອງຄົນທັງຫລາຍຕົກຢູ່ໃນຄວາມມືດມົນນັ້ນ ໄວຟິນແລະສອງພີ່ນ້ອງຕະກຸນເວສເລ່ໄດ້ເປັນຜູ້ຖືດວງປະທີບເພື່ອພຣະເຈົ້າ ພາຍໃຕ້ກົດຂໍ້ບັງຄັບຂອງຄຣິສຕະຈັກ ປະຊາຊົນໄດ້ຖລຳຕົວຢູ່ພາຍໃຕ້ກົດບັງຄັບຂອງຣັດຈົນແຍກບໍ່ອອກຈາກລັດທິນອກສາສນາ ຊົນຊັ້ນສູງພາກັນເຍາະເຍີ້ຍພວກທີ່ນັບຖືສາສນາຢ່າງ

ເທື່ອນີ້ ໄດ້ມີບຸຣຸດນຶ່ງເກີດຂື້ນ ແມ່ນແຕ່ແປວໄຟກໍ່ບໍ່ອາດຈະງັບສຽງຂອງເພິ່ນໄດ້ ເພິ່ນຜູ້ນີ້ຢູ່ພາຍໃຕ້ການຊົງນຳຂອງພຣະເຈົ້າເພື່ອຢຸດສຽງລະຄັງມໍຣະນາຂອງສັນຕະປາປາໃນສກ໊ອດແລນ

ບັນດາເພື່ອນຂອງເພິ່ນໄດ້ສນັບສນູນໃຫ້ເທສນາ ແຕ່ເພິ່ນຮູ້ສຶກຢ້ານແລະ ບໍ່ກ້າຮັບໜ້າທີ່ນີ້ ຫລາຍວັນຫລັງຈາກຕໍ່ສູ້ກັບຄວາມຂັດແຍ້ງພາຍໃນຢ່າງໜັກ ເພິ່ນຈຶ່ງຍອມຮັບໜ້າທີ່ນີ້ ແລະເມື່ອເພິ່ນຮັບໜ້າທີ່ນີ້ແລ້ວກໍເດີນໜ້າທຳງານດ້ວຍໃຈກ້າຫານ ນັກປະຕິຮູບສາສນາຜູ້ມີໃຈຊື່ສັດຄົນນີ້ບໍ່ເຄີຍເກງກົວໜ້າໃຜ ເມື່ອຖືກນຳຕົວໄປເຝົ້າສະເດັດພຣະຣາຊານີແຫ່ງສກ໊ອດແລນ ຈອນ ນ໊ອກ ບໍ່ຍອມໃຫ້ໃຜຊະນະໃຈເພິ່ນດ້ວຍຖ້ອຍຄຳທີ່ອ່ອນຫວານ ເພິ່ນບໍ່ຮູ້ສຶກຢ້ານເມື່ອຖືກຂູ່ ພຣະຣາຊານີຊົງຕຣັດວ່າເພິ່ນໄດ້ສອນປະຊາຊົນໃຫ້ນັບຖືສາສນາທີ່ຣັດສັ່ງຫ້າມແລະລະເມີດຄຳບັນຊາຂອງພຣະເຈົ້າທີ່ສອນໃຫ້ພົລເມືອງຍອມເຊື່ອຟັງເຈົ້າບ້ານຜ່ານເມືອງ ຈອນ ນ໊ອກ ທູນຕອບຢ່າງໜັກແໜ້ນວ່າ "ຖ້າຫາກລູກຫລານທຸກຄົນຂອງອັບບຣາຮາມໄດ້ນັບຖືສາສນາຂອງຟາໂຣພວກເຂົາຈະເປັນພົລເມືອງຂອງຜູ້ໃດ ຂ້າພຣະບາດທູນຕອບຕໍ່ພຣະອົງວ່າຈະມີສາສນາເຫລືອຢູ່ໃນໂລກນີ້ໄດ້ບໍ່ ຖ້າຫາກຄົນທັງຫລາຍໃນສມັຍຂອງອັຄສາວົກນັບຖື ສາສນາຂອງຈັກກະພັດແຫ່ງໂຣມແລ້ວຈະມີສາສນາໃດຢູ່ໃນໂລກ"

ພຣະນາງມາຣີຕຣັດວ່າ "ເຈົ້າໄດ້ແປຄວາມໝາຍຂອງພຣະຄັມພີຢ່າງນຶ່ງ ສ່ວນພວກທ່ານ (ໂຣມັນຄາທໍລິກ) ຕີຄວາມໝາຍຂອງພຣະຄັມພີໄປອີກຢ່າງນຶ່ງ ແລ້ວຈະໃຫ້ເຮົາເຊື່ອຜູ້ໃດ ໃຜຈະເປັນຜູ້ຕັດສິນ"

"ພຣະຣາຊານີຄວນເຊື່ອພຣະເຈົ້າ ເຣື່ອງນີ້ກ່າວໄວ້ແລ້ວຢ່າງຊັດເຈນໃນພຣະຄັມພີ" ນັກປະຕິຮູບທູນຕອບວ່າ "ພຣະທັມຂອງພຣະເຈົ້າມີຄຳສອນທີ່ຊັດເຈນຢູ່ໃນຕົວເອງ ຖ້າມີຂໍ້ຄວາມຕອນໃດຄຸ້ມເຄືອພຣະວິນຍານບໍຣິສຸດຊຶ່ງບໍ່ເຄີຍຂັດແຍ້ງພຣະອົງເອງເລີຍຈະຊົງອະທິບາຍຂໍ້ຄວາມຕອນນັ້ນໃຫ້ຊັດເຈນຍິ່ງຂື້ນໃນຂໍ້ອື່ນໆ ຂອງພຣະຄັມພີເອງ"

ດ້ວຍຄວາມມີຈິດໃຈກ້າຫານທັງທີ່ຊີວິດກຳລັງຕົກຢູ່ໃນພັຍອັນຕຣາຍ ນັກປະຕິຮູບກໍຍັງຄົງປະຕິບັດຕາມຈຸດມຸ້ງໝາຍຂອງເຂົາຈົນກະທັ່ງສກ໊ອດແລນໄດ້ຫລຸດພົ້ນຈາກຄຳສອນຂອງສັນຕະປາປາ

ໃນປະເທດອັງກິດກໍ່ຕັ້ງສາສນາໂປເຕສແຕນໃຫ້ເປັນສາສນາປະຈຳຊາດໄດ້ລົດລົງ ແຕ່ກໍບໍ່ເຖິງກັບຢຸດເລີຍ ການກົດຂີ່ຂົ່ມເຫງຍັງມີຢູ່ ພິທີຕ່າງໆ ຂອງສາສນາ



ໃຫ້ມີການຂັດແຍ່ງກັນເອງ ພວກໂພຣໂຄພີອັດໄດ້ຮັບຄວາມຫລົ້ມແຫລວເສຣີພາບຂອງໂບຮີເມັຽຖືກທຳລາຍ

ພວກຂ້າເສິກຈິງຍົກກຳລັງມຸ້ງສູ່ໂບຮີເມັຽອີກເທື່ອນຶ່ງ ແລະບັນດາຜູ້ທີ່ຊື່ສັດຕໍ່ຂ່າວປະເສີດໄດ້ຮັບການກົດຂີ່ຂົ່ມເຫງຢ່າງນອງເລືອດ ເຖິງປານນັ້ນຄວາມຍຶດໝັ້ນຂອງເຂົາບໍ່ມີການຫວັ່ນໄຫວ ພວກເຂົາໜີຫລົບໄພຢູ່ຕາມຖ້ຳແລະຍັງນະມັດສະການແລະອ່ານພຣະທັມຂອງພຣະເຈົ້າ ໂດຍການສົ່ງຂ່າວອັນປະເສີດໄປຍັງປະເທດຕ່າງໆຢ່າງລັບໆ ພວກເຂົາຈຶ່ງໄດ້ຮຽນຮູ້ວ່າ "ນະ ພູແອນປີເປັນຄຣິສຕະຈັກເກົ່າແກ່ແລະທີ່ຕັ້ງຢູ່ເທິງຮາກຖານຂອງພຣະຄັມພີຕໍ່ຕ້ານການນະມັດສະການຮູບເຄົາຣົບຂອງໂຣມພວກເຂົາມີຄວາມຊົມຊື່ນຍິນດີເປັນຢ່າງຍິ່ງທີ່ໄດ້ມີການຕິດຕໍ່ກັບກຸ່ມຄຣິສະຕຽນວອນແດນ"

ດ້ວຍການຢືນຢັດໃນຫລັກຄຳສອນຂອງຂ່າວປະເສີດ ຊາວໂບຮີເມັຽກຳລັງລໍຄອຍທີ່ຈະພົ້ນຈາກດົນແຫ່ງການກົດຂີ່ຂົ່ມເຫງ ເຖິງແມ່ນຈະຢູ່ຊ່ວງເວລາແຫ່ງຄວາມມືດມິດ ພວກເຂົາກໍຈ້ອງມອງໄປຍັງຂອບຟ້າເພື່ອລໍເວລາແຫ່ງຮຸ່ງອາຣຸນ

ໃນສມັຍຂອງສົມເດັດພຣະບໍຣົມໄຕຣໂລກນາດແຫ່ງຣາຊວົງສຸພັນນະພູມປົກຄອງກຸງສີອະຍຸທະຍານັ້ນ ມາຕິນລູເຕີ (ຄ.ສ. 1483-1546) ໄດ້ເລີ່ມຊີວິດໄວເດັກແລະຍ່າງສູ່ໄວຜູ້ໃຫຍ່ຈົນເພິ່ນໄດ້ເຂົ້າບວດເປັນພຣະບາດຫລວງແລະໄດ້ຄົ້ນພົບຄວາມຈິງແຫ່ງຄວາມເຊື່ອອັນຍິ່ງໃຫຍ່ທີ່ສຸດ ຄວາມລອດທີ່ໄດ້ຮັບໂດຍພຣະຄຸນພຣະເຈົ້າບໍ່ແມ່ນດ້ວຍການກະທຳ

ໃນທີ່ສຸດເພິ່ນກໍເລີ່ມງານການປະຕິຮູບໃນປີ ຄ.ສ. 1507 ຊຶ່ງຕົງກັບສມັຍຂອງສົມເດັດພຣະຣາມາທິບໍດີທີ່ສອງແຫ່ງກຸງສີອະຍຸທະຍາ ລູເຕີໄດ້ປະກາດຂໍ້ຄວາມທີ່ຂັດແຍ່ງກັນກັບຄຳສອນຂອງຄຣິສຕະຈັກຕິດໄປໄວ້ທີ່ປະຕູວິຫານວິດເຕນເບີກຕໍ່ມາເມື່ອປີ ຄ.ສ. 1529 ຕົງກັບສມັຍຂອງສົມເດັດພຣະບໍຣົມຣາຊາທິຣາດທີ່ 4 (ໜໍ່ພຸດທາກູນ) ຂະບວນການຄຣິສະຕຽນຂອງລູເຕີ ກໍໄດ້ຮັບເຊື່ອວ່າ "ໂປເຕສແຕນ" (Protestant) ຊຶ່ງແປວ່າ "ຜູ້ຄັດຄ້ານ" ເພາະພວກເຂົາຄັດຄ້ານຄຳສອນຂອງຄຣິສະຕະຈັກໂຣມ ແລະເຊື່ອເປັນທີ່ຮູ້ຈັກກັນມາຈົນທຸກວັນນີ້

ໃນການປະຊຸມເພື່ອຊີ້ແຈງ ຄວາມເຊື່ອຂອງຕົນທີ່ເມືອງເວີມ ລູເຕີ ໄດ້ກ່າວປິດທ້າຍຄຳໃຫ້ການທີ່ຈະຕັ້ງໝັ້ນໃນຄວາມເຊື່ອຂອງຕົນຈົນກາຍເປັນປໂຍດແຫ່ງປະຫວັດສາດວ່າ "ຂ້າພະເຈົ້າຂໍຢືນຢັດດັ່ງນີ້ບໍ່ປ່ຽນແປງ ພຣະເຈົ້າໂປຣດຊ່ອຍຂ້າພະເຈົ້າເຖີດ ອາແມນ" (Hie stehe ich Ich kan nicht anders. Gott helff mir. Amen)

ບົດທີ່ 7

## ມາຕິນລູເຕີບຸຣຸດຜູ້ເໝາະສົມກັບເວລາ

ໃນບັນດານັກປະຕິຮູບສາສນາທີ່ພຣະເຈົ້າຊົງເລືອກ ເພື່ອນຳຄຣິສຕະຈັກຫລຸດພົ້ນຈາກຄວາມມືດຂອງສັນຕະປາປາໄປສູ່ແສງສວ່າງແຫ່ງຄວາມເຊື່ອທີ່ບໍຣິສຸດນັ້ນມາຕິນລູເຕີນັບເປັນຜູ້ຢືນຢູ່ແຖວໜ້າເປັນທີ່ຮູ້ຈັກກັນດີວ່າເພິ່ນບໍ່ຢ້ານຜູ້ໃດນອກຈາກ ພຣະເຈົ້າເທົ່ານັ້ນ ແລະບໍ່ຍອມຮັບຮາກຖານແຫ່ງຄວາມຍາກ ອື່ນໃດນອກຈາກພຣະຄັມພີອັນສັກສິດ ລູເຕີຈຶ່ງເປັນບຸຣຸດຜູ້ເໝາະສົມກັບການສມັຍຂອງເພິ່ນ

ຊີວິດໃນຍາມເປັນໜຸ່ມລູເຕີເກີດແລະໃຊ້ຊີວິດໃນຄອບຄົວຊາວນາເຢຣະມັນຜູ້ຕ່ຳຕ້ອຍ ບິດາຂອງເພິ່ນຢາກໃຫ້ເພິ່ນເປັນນັກກົດໝາຍ ແຕ່ພຣະເຈົ້າຊົງມີພຣະປະສົງຈະສ້າງເພິ່ນໃຫ້ເປັນຜູ້ສ້າງວິຫານອັນຍິ່ງໃຫຍ່ທີ່ກຳລັງຈະເກີດຂຶ້ນຊ້າໆ ນັບເປັນເວລາຫລາຍສັດຕະວັດ ໂຮງຮຽນທີ່ພຣະຜູ້ຊົງມີພຣະບັນຍາອັນມີຮູບສິ້ນສຸດຈັດຕຽມໄວ້ສຳລັບລູເຕີ ເພື່ອພັນທະກິດສຳລັບຊີວິດຂອງເພິ່ນນັ້ນເຕັມໄປດ້ວຍຄວາມທຸກຍາກລຳບາກຄວາມຂາດແຄນແລະລະບຽບວິໄນທີ່ເຄັ່ງຄັດ

ບິດາຂອງລູເຕີນັ້ນເປັນບຸຣຸດທີ່ມີຄວາມຄິດສລາດຫລັກແຫລມ ຄວາມເປັນຄົນດີມີຄວາມໜັກແໜ້ນຂອງເພິ່ນມີເຫດຜົນເຮັດໃຫ້ເພິ່ນມອງເບິ່ງວົງການຂອງພຣະ



ຝ່າຍຂອງຜູ້ນຳເຫລົ່ານີ້ໄດ້ຍຶດຖືມາກ່ອນ ຄືສິດທິອຳນາດທີ່ບໍ່ມີຜິດພາດຂອງພຣະຄັມພີເພິ່ນໃຊ້ຄຳສອນນີ້ເປັນເຄື່ອງພິສູດຫລັກຄຳສອນແລະຂໍ້ອ້າງທຸກຢ່າງຄວາມເຊື່ອໃນພຣະທັມຂອງພຣະເຈົ້າຊ່ອຍຄ້ຳຈູນຜູ້ບໍຣິສດ ຊອບທັມເຫລົ່ານີ້ຈົນຍອມເສັຽສະລະຊີວິດດ້ວຍຖືກຜູກມັດຕິດກັບເສົາເຜົາທັ້ງເປັນ "ຈົ່ງຊື່ນຊົມຍິນດີເຖີດ" ລາຕີເມີເວົ້າກັບເພື່ອນຜູ້ເສັຽສະລະຊີວິດເພື່ອສາສນາ ຂນະທີ່ແປວໄຟລຸກໄໝ້ຢູ່ຈົນສຽງຂອງພວກເພິ່ນໄດ້ຫາຍໄປ "ໂດຍພຣະຄຸນຂອງພຣະເຈົ້າ ວັນນີ້ເຮົາຈະຈູດແສງສວ່າງເໝືອນດັ່ງແສງທຽນໃນປະເທດອັງກິດ ຂ້າພະເຈົ້າເຊື່ອວ່າຈະບໍ່ມີໃຜດັບແສງສວ່າງນີ້ໄດ້"

ເປັນເວລາຫລາຍຮ້ອຍປີທີ່ຄຣິສຕະຈັກຕ່າງໆ ໄດ້ຍອມຢູ່ພາຍໃຕ້ອຳນາດຂອງໂຣມ ຂນະທີ່ຄຣິສຕະຈັກໃນສກ໊ອດແລນຍັງມີເສຣີພາບໃນການນະມັດສະການພຣະເຈົ້າ ຢ່າງໃດກໍຕາມໃນສັດຕະວັດທີ່ 12 ຄຣິສຕະຈັກຂອງສັນຕະປາປາໄດ້ມາ ຕັ້ງໃນສກ໊ອດແລນ ບໍ່ມີປະເທດໃດທີ່ຈະມີຄວາມມືດມົນຫລາຍເທົ່ານກັບປະເທດນີ້ ເຖິງປານນັ້ນກໍຍັງມີແສງສວ່າງທີ່ສ່ອງລອດອອກມາຈາກຄວາມມືດໄດ້ ພວກໂລລາດໄດ້ນຳພຣະຄັມພີແລະຄຳສອນຂອງໄວຄຣິບມາຍັງປະເທດອັງກິດ ຄົນເຫລົ່ານັ້ນໄດ້ຊ່ອຍກັນຮັກສາຄວາມຮູ້ຂອງຂ່າວປະເສີດໄວ້ ໜັງສືຂອງລູເຕີແລະພຣະຄັມພີພັນທະສັນຍາໃໝ່ເປັນພາສາອັງກິດຂອງທິນເດນໄດ້ຊ່ອຍເປີດການປະຕິຮູບສາສນາຜູ້ຊີ້ຂ່າວເຫລົ່ານີ້ໄດ້ທ່ອງທ່ຽວໄປຢ່າງງຽບໆ ໄປຕາມພູຜາປ່າດອນທັງຫລາຍ ເພື່ອຈູດໄຟແຫ່ງຄວາມຈິງໃຫ້ກັບຊີວິດໃໝ່ທີ່ເກືອບຈະດັບແລະເກືອບຈະດຳເນີນຕໍ່ບໍ່ໄດ້ຫລັງຈາກຖືກກົດຂີ່ມາຕລອດໄລຍະເວລາ 400 ປີ

ແລະແລ້ວບັນດາຜູ້ນຳຂອງສັນຕະປາປາກໍມີການຕື່ນຕົວເຖິງພັຍອັນຕຣາຍທີ່ຈະມາເຖິງພວກຕົນຈຶ່ງຈັບຜູ້ມີສິລທັມບາງຄົນຂອງສກ໊ອດແລນໄປເຜົາທັ້ງເປັນຖ້ອຍຄຳຂອງຜູ້ທີ່ກຳລັງຈະຕາຍເຫລົ່ານີ້ໄດ້ເປັນພະຍານໃຫ້ທຸກຄົນໄດ້ຮູ້ໄປທົ່ວແຜ່ນດິນ ໄດ້ເລົ້າໂລມຈິດວິນຍານຂອງປະຊາຊົນທີ່ຈະຢຶດໝັ້ນໃນຈຸດມຸ້ງໝາຍທີ່ບໍ່ມີວັນສູນສລາຍຄືການປົດເປື້ອງພັນທະນາການແຫ່ງໂຣມໃຫ້ໝົດໄປ

## ຈອນ ນ໊ອກ

ຮາມິນຕັນແລະວິດຊາ ພ້ອມດ້ວຍສາວົກຜູ້ຕ່ຳຕ້ອຍອີກຫລາຍຄົນໄດ້ເສັຽສະລະຊີວິດຂອງພວກເຂົາເພື່ອສາສນາ ແຕ່ເນື່ອງຈາກວິດຊາໄດ້ຖືກເຜົາທັ້ງເປັນໃນ

ພຣະທັມຂອງພຣະເຈົ້າຖືກນຳໄປທີ່ລອນດອນຢ່າງລັບໆ ແລະແຈກຈ່າຍໄປທົ່ວປະເທດ ພວກຝ່າຍຂອງສັນຕະປາປາພຍາຍາມຂັດຂວາງຄວາມຈິງແຕ່ບໍ່ໄດ້ຜົນ ຄົນບິດຊອບແຫ່ງເມືອງເດີແຮມໄດ້ຊື້ພຣະຄັມພີທັງໝົດຈາກຮ້ານຂາຍໜັງສື ເພື່ອຈະໄດ້ນຳໄປທຳລາຍແລະຄິດວ່າໂດຍການກະທຳເຊັ່ນນີ້ຈະເປັນການຂັດຂວາງງານປະກາດຂ່າວປະເສີດໄດ້ກົງກັນຂ້າມທິນເດນໄດ້ໃຊ້ເງິນທີ່ໄດ້ມານັ້ນ ຊື້ເຈັ້ຽແລະວັດຖຸອຸປະກອນເພື່ອພິມພຣະຄັມພີທີ່ມີຄຸນນະພາບດີກວ່າເກົ່າ ເມື່ອທິນເດນຖືກຂັງຄຸກ ເຈົ້າໜ້າທີ່ໄດ້ສເນີເງື່ອນໄຂໃຫ້ເພິ່ນວ່າຈະໃຫ້ອິສາຣະພາບແກ່ເພິ່ນ ຖ້າຫາກເພິ່ນບອກລາຍຊື່ຂອງຜູ້ທີ່ຊ່ອຍຄ່າໃຊ້ຈ່າຍໃນການພິມພຣະຄັມພີໃຫ້ແກ່ເພິ່ນ ທິນເດນຕອບໄປວ່າບິຊອບແຫ່ງເດີແຮມເປັນຜູ້ຊ່ອຍເພິ່ນຫລາຍກວ່າຄົນອື່ນໆ ໂດຍຊື້ໜັງສືທັງໝົດທີ່ເພິ່ນມີເປັນເງິນຈຳນວນຫລວງຫລາຍ

ໃນທີ່ສຸດທິນເດນກໍໄດ້ເປັນພະຍານໃຫ້ກັບຄວາມເຊື່ອຂອງເພິ່ນໂດຍຍອມສະລະຊີວິດເພື່ອສາສນາ ແຕ່ອາວຸດທີ່ເພິ່ນຈັດຕຽມໄວ້ຄືພຣະຄັມພີສາມາດເຮັດໃຫ້ທະຫານຄົນອື່ນໆ ເຮັດສົງຄາມຕລອດໄລຍະເວລາຫລາຍຮ້ອຍປີ ຈົນເຖິງສມັຍຂອງເຮົາ

ລາຕິນເມີໄດ້ຢືນຢັນຈາກທັມມາດວ່າປະຊາຊົນຄວນຈະອ່ານພຣະຄັມພີເປັນພາສາຂອງຕົນເອງ "ຂໍຢ່າໃຫ້ເຮົາຫລົບລຽງເດີນໄປທີ່ອື່ນ ແຕ່ໃຫ້ພຣະທັມຂອງພຣະເຈົ້າຊົງນຳທາງເຮົາ ຢ່າເດີນຕາມແນວທາງຂອງບັນພບຸຣຸດຂອງເຮົາ ຫລືພຍາຍາມກະທຳຕາມທີ່ບັນພະບຸຣຸດຂອງເຮົາໄດ້ເຮັດມາແລ້ວ ແຕ່ເຮັດຕາມໃນສິ່ງທີ່ພວກເຂົາຄວນຈະເຮັດ"

ບານ ແລະຟຣິດ ຣິດເລ ແລະເຄຣນເມີເປັນຜູ້ນຳການປະຕິຮູບສາສນາຂອງປະເທດອັງກິດ ເປັນຜູ້ມີຄວາມຮູ້ມີຈິດໃຈຮ້ອນຮົນແລະໄດ້ຮັບຄວາມເຄົາຣົບຍົກຍ້ອງໃນສັງຄົມຂອງໂຣມັນຄາທໍລິກ ພວກເຂົາໄດ້ຕໍ່ສູ້ຂັດຂວາງສັນຕະປາປາເປັນຜົນມາຈາກທີ່ຮູ້ຄວາມຜິດຂອງໂຮລີຊີ (Holy See ຫລືສັນຕະປາປາ)

## ສິດທິອຳນາດຂອງພຣະຄັມພີທີ່ບໍ່ມີຄວາມຜິດພາດ

ຫລັກເກນທີ່ສຳຄັນຍິ່ງຊຶ່ງບັນດານັກປະຕິຮູບສາສນາເຫລົ່ານີ້ໄດ້ຍຶດຖືເປັນສິ່ງດຽວກັບທີ່ພວກວອນເນ ໄວຄຣິບ ຈອນຮັດ ລູເຕີ ສວິງລີແລະຄົນທັງຫລາຍທີ່ເປັນ



ສິ່ງດ້ວຍຄວາມບໍ່ເຊື່ອຖືຈຶ່ງຮູ້ສຶກບໍ່ພໍໃຈເປັນ ເມື່ອລູເຕີບວດເປັນພຣະໂດຍບໍ່ໄດ້ຮັບຍິນຍອມຈາກເພິ່ນ ເປັນເວລານານເຖິງສອງປີກວ່າທີ່ບິດາຍອມຮັບບຸດຊາຍຂອງຕົນ ແຕ່ເປັນປານນັ້ນກໍຕາມຄວາມເຫັນຂອງເພິ່ນກໍຍັງເໝືອນເດີມ

ບິດາມານດາຂອງລູເຕີໄດ້ພຍາຍາມສັ່ງສອນລູກໆ ໃຫ້ມີຄວາມຮູ້ເຣື່ອງພຣະເຈົ້າສເມີ ຄວາມໝາຍຂອງເພິ່ນດ້ວຍຄວາມຕັ້ງໃຈຈິງແລະດ້ວຍຄວາມພາກພຽນກໍເພື່ອຕຽມຕົວລູກໆ ໃຫ້ຮູ້ຈັກການດຳລົງຊີວິດຢ່າງມີຄຸນຄ່າ ບາງເທື່ອທັງສອງອາດຈະເປັນກວດຂັນຈົນເກີນໄປ ແຕ່ນັກປະຕິຮູບສາສນາຄົນນີ້ພົບວ່າການຝຶກຝົນວິໄນນັ້ນເປັນການສັ່ງສອນຫລາຍກວ່າຈະເປັນການລົງໂທດ

ໃນໂຮງຮຽນລູເຕີໄດ້ຮັບການປະຕິບັດຢ່າງເຂັ້ມງວດແລະບາງເທື່ອເພິ່ນກໍຮຸນແຮງຫລາຍເທື່ອທີ່ເພິ່ນຕ້ອງທົນທຸກທໍຣະມານເພາະຄວາມຫິວ ຄວາມຄິດທີ່ຄຸ້ນເຄືອງແລະຄວາມເຊື່ອເຣື່ອງໂຊກລາງຂອງສາສນາເຮັດໃຫ້ເພິ່ນເກີດຄວາມຫວາດກົວຕອນກາງຄືນເພິ່ນຈະນອນລົງດ້ວຍຈິດໃຈເປັນທຸກເຮັດໃຫ້ເພິ່ນຄິດວ່າເປັນຫຍັງພຣະເຈົ້າຈຶ່ງເປັນຜູ້ໂຫດຮ້າຍ ຫລາຍກວ່າຈະເປັນພຣະບິດາແຫ່ງສວັນຜູ້ມີຄວາມເມດຕາປານີ

ເມື່ອເພິ່ນເຂົ້າໄປຮຽນທີ່ມະຫາວິທະຍາລັຍແຫ່ງເອີເຟີຣ ຄວາມຫວັງພາຍໜ້າຂອງເພິ່ນເບິ່ງຈະສົດໃສກວ່າຊີວິດໃນຍາມຍັງນ້ອຍ ເພາະວ່າບິດາມານດາຂອງເພິ່ນເປັນຄົນມັດທະຍັດແລະທຳງານຢ່າງດຸໝັ່ນ ຈຶ່ງສາມາດຈັດຫາສິ່ງທີ່ຈຳເປັນໃຫ້ລູເຕີໄດ້ ແລະຢ່າງນ້ອຍເພື່ອນທີ່ມີຄວາມສຸກຂຸມ ຮອບຄອບຂອງເພິ່ນກໍຊ່ອຍເຮັດໃຫ້ຄິດທີ່ໝົດຫວັງ ອັນເປັນຜົນກະທົບຈາກການຝຶກຝົນເມື່ອກ່ອນໝົດໄປດ້ວຍອິດທິພົນທີ່ອຳນວຍ ເຮັດໃຫ້ສະໝອງຂອງເພິ່ນພັດທະນາຂຶ້ນຢ່າງວ່ອງໄວການໃຊ້ສະຕິປັນຍາຢ່າງມີປໂຍດນີ້ເຮັດໃຫ້ເພິ່ນມີຕຳແໜ່ງທີ່ກ້າວໜ້າຫລາຍກວ່າເພື່ອນຝູງ

ລູເຕີບໍ່ເຄີຍລະເລີຍການເລີ້ມຕົ້ນແຕ່ລະວັນດ້ວຍການອະທິຖານທົ່ວໃຈຂອງເພິ່ນໄດ້ແຕ່ເຝົ້າອ້ອນວອນຂໍການຊົງນຳເພິ່ນກ່າວສເມີວ່າ "ການອະທິຖານທີ່ດີເທົ່າກັບຮຽນດີໄປແລ້ວເທື່ອນຶ່ງ"

ວັນນຶ່ງໃນຫໍສະມຸດຂອງມະຫາວິທະຍາລັຍ ເພິ່ນໄດ້ພົບພຣະຄັມພີພາສາລາຕິນຫົວນຶ່ງເປັນໜັງສືທີ່ເພິ່ນບໍ່ເຄີຍເຫັນມາກ່ອນ ເພິ່ນເຄີຍໄດ້ຍິນບາງສ່ວນຂອງພຣະ

ກິດຕິຄຸນ ແລະຈົດໝາຍຝາກຂອງອັກຄະສາວົກທີ່ເພິ່ນຄິດວ່າເປັນພຣະຄັມພີທີ່ສົມບູນແລ້ວ ເທື່ອນີ້ເປັນເທື່ອທຳອິດທີ່ເພິ່ນໄດ້ເຫັນພຣະທັມຂອງພຣະເຈົ້າທັງເຫລັ້ມ ພໍເປີດພຣະທັມອັນສັກສິດອ່ານພຣະທັມແຫ່ງຊີວິດດ້ວຍຄວາມເກງຂາມແລະປລາດໃຈ ເພິ່ນຢຸດອ່ານນ້ອຍນຶ່ງແລະກ່າວວ່າ "ໂອ່ຫາກພຣະເຈົ້າຈະຊົງປະທານໜັງສືເຫລັ້ມນີ້ໃຫ້ແກ່ຂ້ານ້ອຍ" ເທວະດາໄດ້ຢູ່ຄຽງຂ້າງລູເຕີ ແສງສວ່າງແຫ່ງຜູ້ເປັນເຈົ້າໄດ້ເປີດເຜີຍຂຸມຊັບແຫ່ງຄວາມຈິງແກ່ຄວາມເຂົ້າໃຈຂອງເພິ່ນ ຄວາມຮູ້ສຶກຜິດເລິກໆ ໃນສະພາບຂອງຄົນບາບເກີດຂື້ນກັບເພິ່ນຢ່າງບໍ່ເຄີຍເປັນມີມາກ່ອນ

## ສັນຕິສຸກກັບພຣະເຈົ້າ

ຄວາມປາຖນາທີ່ຈະສະແຫວງຫາສັນຕິສຸກກັບພຣະຜູ້ເປັນເຈົ້ານຳເພິ່ນໃຫ້ອຸທິດຕົວເອງໃຊ້ຊີວິດເປັນນັກບວດທີ່ນີ້ເພິ່ນຖືກບັງຄັບໃຫ້ທຳງານທີ່ໜ້າເບື່ອແລະຕ້ອງອອກທຽວໄປບິນພຣະບາດຕາມບ້ານເຮືອນ ເພິ່ນຍອມອົດທົນຕໍ່ການຖ່ອມຕົນນີ້ດ້ວຍເຊື່ອວ່າເປັນສິ່ງທີ່ຈຳເປັນເພາະຄວາມບາບທັງຫລາຍຂອງຕົນ

ລູເຕີນັກສຶກສາພຣະທັມຂອງພຣະເຈົ້າຢ່າງຈິງຈັງ ອົດຫລັບອົດນອນ ແມ່ນໃນເວລາຮັບປະທານອາຫານ ເພິ່ນພົບພຣະຄັມພີຖືກລ່າມໂຊ້ຕິດກັບຝາພະນັງຂອງໂບດແລະເພິ່ນມາອ່ານຢູ່ທີ່ນັ້ນຢູ່ເລື້ອຍໆ

ລູເຕີດຳເນີນຊີວິດຢ່າງເຄັ່ງຄັດ ດ້ວຍການພຍາຍາມອົດອາຫານຄອຍເຝົ້າລະວັງແລະທໍຣະມານຕົວເອງເພື່ອບັງຄັບສັນດານຊົ່ວຂອງຕົນ ພາຍຫລັງຕໍ່ມາເພິ່ນກ່າວວ່າ "ຖ້າຫາກການບວດເປັນພຣະແລະປະຕິບັດທັມສາມາດຊ່ອຍໃຫ້ໄປສວັນ ໄດ້ຂ້າພະເຈົ້າຄົງຈະມີຊື່ທີ່ຫວັງ...ຖ້າເຮັດຢ່າງນີ້ຕໍ່ໄປ ຂ້າພະເຈົ້າກໍຄົງຈະເສັຽໃຈໄປຈົນຕາຍ" ດ້ວຍຄວາມພຍາຍາມທັງໝົດຂອງເພິ່ນກໍພົບວ່າບໍ່ໄດ້ປົດເປື້ອງຈິດວິນຍານທີ່ມີພາລະໜັກໃນການທໍຣະມານ ໃນທີ່ສຸດເພິ່ນກໍເກີດຄວາມຮູ້ສຶກຖໍ້ຖອຍແລະແທບຈະໝົດຫວັງ



ຄຳເທສນາສັ່ງສອນຂອງທິນເດນເຮັດໄດ້ສ້າງຄວາມສົນໃຈຢ່າງໃຫຍ່ຫລວງ ແຕ່ພວກບາດຫລວງພຍາຍາມທຳລາຍການທຳງານຂອງເພິ່ນ ເພິ່ນຮ້ອງຂື້ນວ່າ "ເຮົາຈະເຮັດແນວໃດດີ ຂ້າພະເຈົ້າບໍ່ສາມາດຢູ່ທຸກຫົນທຸກແຫ່ງໄດ້ໃນເວລາດຽວກັນ ຖ້າຄຣິສະຕຽນມີພຣະຄັມພີອັນສັກສິດເປັນພາສາຂອງຕົນເອງ ພວກເຂົາກໍຈະສາມາດຕໍ່ສູ້ກັບກົນອຸບາຍເຫລົ່ານີ້ໄດ້ ຖ້າບໍ່ມີພຣະຄັມພີເຮົາກໍບໍ່ສາມາດສ້າງຄຮາວາດໃຫ້ຄວາມຈິງຂື້ນມາໄດ້"

ທິນເດີນມີຄວາມມູ້ງໝາຍຢ່າງໃໝ່ໃນໃຈ ເພິ່ນກ່າວວ່າ "ເປັນຫຍັງຂ່າວປະເສີດຈະປະກາດເປັນພາສາອັງກິດບໍ່ໄດ້ຫລື ຄຣິສະຕະຈັກຈະໄດ້ຮັບແສງສວ່າງຍາມທ່ຽງວັນນ້ອຍກວ່າຍາມເຊົ້າໄດ້ຢ່າງໃດ ຄຣິສະຕຽນຈະຕ້ອງອ່ານພຣະຄັມພີພັນທະສັນຍາໃໝ່ເປັນພາສາຂອງຕົນເອງ" ມະນຸດຈະເຂົ້າໃຈຄວາມຈິງຂອງພຣະເຈົ້າໄດ້ໂດຍອາສັຍພຣະຄັມພີເທົ່ານັ້ນ

ມີບາດຫລວງໂຣມັນຄາທໍລິດອົງນຶ່ງຜູ້ມີຄວາມຮູ້ດີໄດ້ຂັດຂວາງທິນເດນແລະໄດ້ເວົ້າວ່າ "ເຮົາບໍ່ມີພຣະບັນຍັດຂອງພຣະເຈົ້າດີກວ່າຫາກບໍ່ມີບັນຍັດຂອງສັນຕະປາປາ" ທິນເດນຈຶ່ງຕອບວ່າ "ຂ້າພະເຈົ້າຕໍ່ຕ້ານສັນຕະປາປາແລະບັນຍັດຂອງພຣະອົງ ຖ້າພຣະເຈົ້າຈະໃຫ້ຊີວິດຂອງຂ້າພະເຈົ້າຍືນຍາວຕໍ່ໄປ ຂ້າພະເຈົ້າຈະເຮັດໃຫ້ເດັກໄຖນາໄດ້ຮູ້ພຣະຄັມພີຫລາຍກວ່າເພິ່ນອີກ

## ທິນເດນແປພຣະຄັມພີພັນທະສັນຍາໃໝ່ເປັນພາສາອັງກິດ

ທິນເດນໄດ້ໄດ້ຮັບການກົດຂີ່ຂົ່ມເຫງຈົນຖືກຂັບໄລ່ອອກຈາກບ້ານເກີດເມືອງນອນ ເພິ່ນໜີໄປທີ່ລອນດອນແລະທຳງານຢູ່ທີ່ນັ້ນໄລຍະນຶ່ງໂດຍບໍ່ມີໃຜຮົບກວນ ແຕ່ກໍຖືກຝ່າຍຂອງສັນຕະປາປາກົດຂີ່ຂົ່ມເຫງອີກເທື່ອນຶ່ງຈົນເພິ່ນຕ້ອງໜີໄປເບິ່ງເໝືອນວ່າທຸກຄົນໃນອັງກິດບໍ່ຍອມຕ້ອນຮັບ ເພິ່ນເລີ່ມພິມພຣະຄັມພີໃໝ່ເປັນພາສາອັງກິດທີ່ເຢຣະມັນ ເມື່ອຖືກຫ້າມພິມພຣະຄັມພີໃນເມືອງນຶ່ງເພິ່ນກໍໜີໄປອີກເມືອງນຶ່ງ ໃນທີ່ສຸດທິນເດນເດີນທາງໄປເມືອງເວີມ ທີ່ນັ້ນເອງເມື່ອສອງສາມປີກ່ອນລູເຕີໄດ້ຕໍ່ສູ້ປົກປ້ອງຂ່າວປະເສີດຕໍ່ໜ້າທີ່ປະຊຸມ ໃນເມືອງນັ້ນມີຫລາຍຄົນທີ່ເປັນພັກພວກຂອງນັກປະຕິຮູບສາສນາ ທິນເດນໄດ້ພິມພຣະຄັມພີໃໝ່ 3,000 ເຫລັ້ມ ແລະຕໍ່ມາກໍພິມເພີ່ມອີກ

ບົດທີ່ 14

# ຄວາມຮຸ່ງເຮືອງຂອງຄວາມເປັນຈິງໃນອັງກິດ

ຂນະທີ່ລູເຕີກຳລັງເປີດອ່ານພຣະຄັມພີທີ່ຖືກປິດບັງມານານແກ່ປະຊາຊົນໃນເຢຣະມັນຢູ່ນັ້ນ ພຣະວິນຍານບໍຣິສຸດໄດ້ດົນໃຈໃຫ້ທິນເດນກະທຳຢ່າງດຽວກັນແກ່ປະຊາຊົນໃນອັງກິດ ພຣະຄັມພີຂອງໄວຄລິບທີ່ແປມາຈາກພາສາລາຕິນນັ້ນມີຂໍ້ຄວາມທີ່ຜິດຢູ່ຫລາຍຕອນ ຕົ້ນສະບັບຂອງພຣະຄັມພີນີ້ມີຣາຄາແພງຫລາຍ ຈຶ່ງແຈກຈ່າຍໄດ້ບໍ່ຫລາຍປານໃດ

ໃນປີ ຄ.ສ. 1516 ໄດ້ມີການພິມພຣະຄັມພີໃໝ່ເປັນພາສາກຣີກຂຶ້ນເປັນເທື່ອທຳອິດ ມີການແກ້ໄຂຂໍ້ຜິດພາດຂອງສະບັບກ່ອນໆ ດ້ວຍ ເຮັດໃຫ້ຂໍ້ຄວາມສະລະສລາຍຊັດເຈນຫລາຍຂຶ້ນ ເຮັດໃຫ້ຄົນທີ່ມີການສຶກສາໄດ້ຮຽນຮູ້ແລະເຂົ້າໃຈ ຄວາມຈິງຫລາຍຂຶ້ນ ແລະເປັນພະລັງໃຫ້ງານການປະຕິຮູບສາສນາ ແຕ່ສາມັນຊົນຍັງບໍ່ໄດ້ຮຽນຮູ້ພຣະທັມຂອງພຣະເຈົ້າ ທິນເດນໄດ້ທຳງານທີ່ໄວຄລິບເຮັດໄວ້ແລ້ວໃຫ້ສຳເຣັດ ຄືການໃຫ້ພຣະຄັມພີແກ່ເພື່ອນຮວ່ມຊາດຂອງເພິ່ນ

ເພິ່ນໄດ້ປະກາດສັ່ງສອນໃນສິ່ງທີ່ເພິ່ນເຊື່ອຖືໂດຍບໍ່ເກງກົວ ທາງຝ່າຍຂອງສັນຕະປາປາອ້າງວ່າຄຣິສະຕະຈັກເປັນຝ່າຍໃຫ້ພຣະຄັມພີ ແລະຄຣິສະຕະຈັກເທົ່ານັ້ນທີ່ສາມາດອະທິບາຍພຣະຄັມພີໄດ້ ທິນເດນ ໂຕ້ຕອບວ່າ "ແທນທີ່ທ່ານຈະໃຫ້ພຣະຄັມພີແກ່ເຮົາ ເພິ່ນກັບເປັນຜູ້ເຊື່ອງໄວ້ຈາກເຮົາ ເພິ່ນເອງທີ່ໄດ້ເຜົາຄົນທີ່ສອນພຣະຄັມພີ ແລະຫາກເພິ່ນເຮັດໄດ້ກໍຄືງຈະເຜົາພຣະຄັມພີອີກດ້ວຍຊ້ຳ"



ເມື່ອຮູ້ສຶກວ່າສູນສິ້ນທຸກສິ່ງແລ້ວ "ພຣະເຈົ້າໄດ້ຊົງຫາເພື່ອນໃຫ້ເພິ່ນ" ສະຕໍພິດໄດ້ເປີດພຣະທັມຂອງພຣະເຈົ້າໃຫ້ແກ່ຈິດໃຈຂອງລູເຕີແລະບອກໃຫ້ຢ່າມອງເບິ່ງຕົນເອງ ແຕ່ໃຫ້ມອງໄປທີ່ພຣະເຢຊູໃຫ້ເພິ່ນເລີກຄິດເຖິງຕົວເອງໃຫ້ມອງໄປທີ່ພຣະເຢຊູຄຣິດ "ແທນທີ່ຈະທໍຣະມານຕົວເອງ ເພາະຄວາມຜິດບາບຂອງເພິ່ນຈົ່ງທອດກາຍລົງອ້ອມແຂນຂອງພຣະຜູ້ໄຖ່ ຈົ່ງວາງໃຈໃນພຣະອົງໃນຄວາມຊອບທັມແຫ່ງຊີວິດຂອງພຣະອົງ ໃນການສິ້ນພຣະຊົນຂອງພຣະອົງ...ພຣະບຸດຂອງພຣະເຈົ້າຈະບັງເກີດເປັນມະນຸດ ເພື່ອໃຫ້ທ່ານມີຄວາມໝັ້ນໃຈວ່າພຣະເຈົ້າຊົງພຣະກະຣຸນາ...ຈົ່ງຮັກພຣະອົງຜູ້ຊົງຮັກທ່ານກ່ອນ" ຖ້ອຍຄຳຂອງເພິ່ນສ້າງຄວາມປະທັບໃຈຢ່າງເລິກຊຶ້ງແກ່ຄວາມຄິດຂອງລູເຕີ ສັນຕິສຸກຈຶ່ງເຂົ້າມາສູ່ຈິດໃຈທີ່ວຸ່ນວາຍຂອງເພິ່ນ

ເມື່ອໄດ້ບວດເປັນພຣະແລ້ວ ລູເຕີກໍຖືກຮຽກໃຫ້ໄປເປັນສາດສະດາຈານທີ່ມະຫາວິທະຍາລັຍວິດເຕນເບີກ ເພິ່ນເລີ່ມສອນວິຊາພຣະທັມສະດຸດີ ພຣະກິດຕິຄຸນແລະຈົດໝາຍຝາກຂອງອັຄສາວົກ ແກ່ປະຊາຊົນທີ່ຮັບຟັງດ້ວຍຄວາມຍິນດີ ສະຕໍພິດຜູ້ຊຶ່ງເຖິງແມ່ນວ່າຈະເກັ່ງກວ່າລູເຕີ ກໍພຍາຍາມສນັບສນູນໃຫ້ລູເຕີຂຶ້ນທັມມາດເທສນາ ແຕ່ລູເຕີກັບຮູ້ສຶກວ່າເພິ່ນບໍ່ເໝາະສົມທີ່ຈະເທສນາສັ່ງສອນຝູງຊົນ ແທນທີ່ພຣະຄຣິດ ພາຍຫລັງທີ່ພຍາຍາມຮວບຮວມຄວາມກ້າຢູ່ເປັນເວລາດົນນານ ລູເຕີຈຶ່ງຍິນຍອມປະຕິບັດຕາມຄຳຂໍຮ້ອງຂອງເພື່ອນ ເພິ່ນເປັນຜູ້ມີຄວາມແກ່ນສານໃນພຣະຄັມພີແລະພຣະຄຸນຂອງພຣະເຈົ້າສະຖິດຢູ່ເໜືອເພິ່ນ ຄວາມຊັດເຈນແລະອຳນາດໃນການສເນີຄວາມຈິງນັ້ນຊະນະຄວາມເຂົ້າໃຈຂອງປະຊາຊົນ ແລະຄວາມສັດທາຢ່າງແຮງກ້າຂອງເພິ່ນເປັນທີ່ປະທັບໃຈຂອງຜູ້ຄົນ

ລູເຕີຍັງຄົງເປັນເຊັ່ນບຸດທີ່ຊື່ສັດຂອງຄຣິສຕະຈັກຂອງສັນຕະປາປາ ແລະບໍ່ເຄີຍຄິດຈະປ່ຽນແປງເປັນຢ່າງອື່ນ ສິ່ງນີ້ນຳເພິ່ນໄປຢ້ຽມກຸງໂຣມ ເພິ່ນເດີນທາງດ້ວຍຕີນແລະເຊົາພັກຄ້າງຄືນຕາມໂບດຕາມເສັ້ນທາງທີ່ຜ່ານໄປ ເພິ່ນມີຄວາມປະຫລາດໃຈໃນຄວາມໂອ່ອ່າແລະຫລູຫລາຟຸ່ມເຟືອຍຕາມໂບດທີ່ເພິ່ນພົບ ເຫັນບາດຫລວງເຫລົ່ານັ້ນອາສັຍໃນສະຖານທີ່ງົດງາມ ແຕ່ງກາຍດ້ວຍເສື້ອຜ້າຣາຄາແພງແລະຮັບປະທານອາຫານອັນເລີດລົດ ຄວາມຄິດຂອງລູເຕີກໍເກີດຄວາມງຸນງົງສົງສັຍເປັນຢ່າງຍິ່ງ

ໃນທີ່ສຸດເພິ່ນກໍມອງເຫັນເມືອງທີ່ຕັ້ງຢູ່ເທິງຈອມພູເຈັດໜ່ວຍຢູ່ໃນລະຍະໄກ ລູເຕີກົ້ມກາບລົງກັບພື້ນດິນແລະຮ້ອງອຸທານຂຶ້ນວ່າ "ກຸງໂຣມອັນບໍຣິສຸດ ຂ້າພະເຈົ້າຂໍຄຳນັບເພິ່ນ" ເພິ່ນໄປຢ້ຽມຕາມໂບດຕ່າງໆ ໄດ້ຟັງບັນດາບາດຫລວງເລົ່າເຣື່ອງລາວອັນໜ້າພິດສະວົງຕ່າງໆ ແລະເຂົ້າຮວ່ມພິທີທາງສາສນາທຸກຢ່າງຕາມທີ່ກຳນົດທຸກທີ່ນທຸກແຫ່ງທີ່ເພິ່ນໄປໄດ້ພົບເຫັນພາບເຮັດໃຫ້ເພິ່ນເກີດປລາດໃຈ ບັນດາພຣະເຫລົ່ານັ້ນເຕັມໄປດ້ວຍຄວາມຊົ່ວຊ້າ ພຣະສົງລະດັບສູງກໍກ່າວແຕ່ເຣື່ອງຕລົກຫຍາບຄາຍ ເພິ່ນເກີດຄວາມຕົກໃຈຢ້ານໃນການລ່ວງລະເມີດ ສິ່ງສັກສິດຂອງບັນດາພຣະເຫລົ່ານັ້ນແມ່ນໃນຂນະທີ່ປະກອບພິທີມິດຊາເພິ່ນໄດ້ ເຫັນການເສເພທຳລາຍຄວາມບໍຣິສຸດເພິ່ນຈຶ່ງບັນທຶກໄວ້ວ່າ "ບໍ່ມີໃຜຈິນຕະນາການໄດ້ວ່າມີຄວາມຜິດບາບແລະການກະທຳອັນເລວຊາມອັນໃດທີ່ກະທຳກັນໃນໂຣມ ... ພວກເຂົາເວົ້າຈົນຕິດປາກວ່າ "ຖ້ານະຣົກມີຈິງໂຣມກໍຖືກສ້າງຢູ່ເທິງນັ້ນ"

## ຄວາມຈິງເທິງບັນໄດຂອງປີລາດ

ສັນຕະປາປາສັນຍາຍົກຄວາມຜິດບາບໃຫ້ແກ່ທຸກຄົນທີ່ຄານຂຶ້ນຕາມ "ບັນໄດຂອງປີລາດ" ເຊື່ອກັນວ່າມີຜູ້ນຳບັນໄດດັ່ງກ່າວນີ້ຈາກກຸງເຢຣູຊາເລັມ ມາໄວ້ທີ່ກຸງໂຣມຢ່າງໜ້າອັສຈັນ ວັນນຶ່ງຂນະທີ່ລູເຕີປີນຂຶ້ນບັນໄດນີ້ເບິ່ງເໝືອນວ່າມີສຽງນຶ່ງເວົ້າກັບເພິ່ນສຳກັບສຽງຟ້າຮ້ອງວ່າ "ຜູ້ທີ່ຊົງຖືວ່າເປັນຄົນຊອບທັມເພາະດ້ວຍຄວາມເຊື່ອ" (ໂຣມ 1:17) ເພິ່ນກະໂດດລຸກຢືນຂຶ້ນດ້ວຍຄວາມລະອາຍໃຈແລະຫວາດກົວ ນັບຕັ້ງແຕ່ນັ້ນມາເພິ່ນເຂົ້າໃຈຢ່າງຊັດເຈນຫລາຍຂຶ້ນກວ່າເກົ່າ ເຖິງຄວາມເຂົ້າໃຈຜິດທີ່ເຊື່ອໃນການກະທຳຂອງມະນຸດເພື່ອໃຫ້ໄດ້ຄວາມລອດ ເພິ່ນບ່າຍໜ້າອອກໄປຈາກກຸງໂຣມ ນັບຈາກນັ້ນເປັນຕົ້ນມາການແຍກຕົວອອກມາກໍເລີ່ມກໍ່ຕົວຂຶ້ນຈົນສຸດທີ່ເພິ່ນຈະເລີກກ່ຽວຂ້ອງຢ່າງເດັດຂາດຈາກຄຣິສຕະຈັກຂອງສັນຕະປາປາ

ຫລັງຈາກທີ່ກັບຈາກໂຣມ ລູເຕີກໍໄດ້ຮັບປະຣິນຍາເອກດ້ານສາສນາ ເວລານີ້ເພິ່ນສະລະທີ່ຈະອຸທິດຕົນເພື່ອພຣະຄັມພີທີ່ເພິ່ນຮັກ ເພິ່ນໄດ້ກ່າວຄຳປະຕິຍານຕົນຢ່າງໜັກແໜ້ນໝັ້ນຄົງວ່າ ຈະປະກາດພຣະທັມຂອງພຣະເຈົ້າບໍ່ແມ່ນຫລັກຄຳສອນຂອງສັນຕະປາປາແລະເພິ່ນບໍ່ຖືຕົວເອງວ່າເປັນບາດຫລວງອີກຕໍ່ໄປ ແຕ່ເປັນຜູ້ໄດ້ຮັບ



ພວກເຂົາບໍ່ແມ່ນຄົນທີ່ບໍ່ມີການສຶກສາ ບໍ່ແມ່ນເປັນຄົນໃຈແຄບ ບໍ່ແມ່ນຄົນທີ່ເວົ້າໂຕ້ແຍ້ງ ແຕ່ເປັນຜູ້ທີ່ສຶກສາພຣະທັມຂອງພຣະເຈົ້າແລະຮູ້ຈັກວິທີໃຊ້ອາວຸດທີ່ໄດ້ຮັບຈາກສາງອາວຸດຂອງພຣະຄັມພີ ພວກເຂົາເປັນນັກສຶກສາຄົ້ນຄ້ວາໃນລະບຽບແຜນຂອງຂ່າວປະເສີດແຫ່ງຄວາມຈິງແລະເປັນຜູ້ມີຊັຍຊະນະເໜືອພວກອາຈານໃນໂຮງຮຽນແລະຜູ້ມີອຳນາດຂອງຄຣິສະຕະຈັກໂຣມ"

ພຣະຣາຊາແຫ່ງສະວີດເດນຍອມຮັບຄວາມເຊື່ອຂອງໂປເຕສແຕນ ຕໍ່ມາທີ່ປະຊຸມແຫ່ງຊາດກໍຍອມຮັບດ້ວຍທັງສອງພີ່ນ້ອງໄດ້ແປພຣະຄັມພີທັງສອງເຫລັ້ມຕາມພຣະຣາຊປະສົງຂອງພຣະຣາຊາ ທີ່ປະຊຸມແຫ່ງຊາດໄດ້ອອກຄຳສັ່ງໃຫ້ຜູ້ສອນສາສນາອະທິບາຍຂໍ້ຄວາມໃນພຣະຄັມພີກ່າວແກ່ປະຊາຊົນທົ່ວຣາຊອານາຈັກແລະໂຮງຮຽນຄວນຈະສອນພຣະຄັມພີແກ່ເດັກນ້ອຍດ້ວຍ

ເມື່ອໄດ້ລອດພົ້ນຈາກບົບບັງຄັບຂອງຄຣິສະຕະຈັກໂຣມແລ້ວ ຊົນຊາດສະວີດເດນກໍມີກຳລັງເຂັ້ມແຂງແລະມີອຳນາດຍິ່ງໃຫຍ່ຢ່າງທີ່ບໍ່ເຄີຍປາຖນາມາກ່ອນເລີຍອີກນຶ່ງສັດຕະວັດຕໍ່ມາຊາດນ້ອຍໆ ທີ່ເຄີຍເປັນຊາດທີ່ອ່ອນກຳລັງມາກ່ອນໄດ້ເປັນຊາດດຽວໃນຢຸໂຣບທີ່ກ້າຍື່ນມືຊ່ອຍເຫລືອປະເທດເຢຣະມັນທີ່ສູ້ຮົບໃນສົງຄາມເປັນເວລາເຖິງ 30 ປີ ຊາດຕ່າງໆ ທາງພາກເໜືອຂອງຢຸໂຣບເບິ່ງເໝືອນວ່າຈະຕົກຢູ່ພາຍໃຕ້ຄວາມໂຫດຮ້າຍທາຣຸນຂອງກຸງໂຣມອີກເທື່ອນຶ່ງ ກອງທັບຂອງສະວີດເດນໄດ້ຊ່ອຍປະເທດເຢຣະມັນຕໍ່ສູ້ກອງທັບຂອງສັນຕະປາປາແຫ່ງໂຣມຈົນໄດ້ຊັຍຊະນະ ເພື່ອຝ່າຍໂປເຕສແຕນ ແລະເພື່ອກອບກູ້ອິສາຣະພາບແຫ່ງຄວາມຮູ້ສຶກຜິດຊອບຂອງບັນດາຊາດຕ່າງໆ ທີ່ຍອມຮັບການປະຕິຮູບສາສນາ

ເພິ່ນເທສນາຢ່າງໜາແໜ້ນ ພຣະຄັມພີໃໝ່ໃນພາສາແດນມາກຖືກແຈກຈ່າຍແກ່ປະຊາຊົນຈຳນວນຫລວງຫລາຍໄດ້ມີຄວາມພຍາຍາມຈະທຳລາຍການເຜີຍແຜ່ນີ້ ແຕ່ຜົນທີ່ໄດ້ຮັບກັບຕົງກັນຂ້າມກັບຍິ່ງແຜ່ຫລາຍຂຶ້ນ ຕໍ່ມາອີກບໍ່ນານພົລເມືອງຂອງແດນມາກກໍປະກາດຮັບເຊື່ອທີ່ໄດ້ຮັບການປະຕິຮູບ

## ຄວາມຈະເຣີນກ້າວໜ້າໃນສະວີດເດນ

ໃນສະວິດເດນຊາວໜຸ່ມທີ່ເດີນທາງມາຈາກວິດເຕນເບີກໄດ້ນຳເອົານ້ຳແຫ່ງຊີວິດມາສູ່ພີ່ນ້ອງຮ່ວມຊາດຂອງເພິ່ນດ້ວຍ ຜູ້ນຳປະຕິຮູບສາສນາສອງຄົນໃນສະວິດເດນ ຄື ໂອລາບ ແລະລໍເຣນຕິອັດ ເພັດທີໄດ້ສຶກສາຫລັກຄຳສອນຂອງລູເຕີແລະເມນແລງທອນ ທັງໂອລາບແລະລໍເຣນຕິອັດ ໄດ້ປະຕິບັດເຊັ່ນດຽວກັບລູເຕີນັກປະຕິຮູບສາສນາຜູ້ຫຍິ່ງໃຫຍ່ ດ້ວຍການຊັກຈູງປະຊາຊົນໃຫ້ເຊື່ອຖືຫລັກຄຳສອນຂອງເພິ່ນດ້ວຍຄຳໂວຫານອັນໄພເຣາະ ສ່ວນລໍເຣນຕິອັດກະທຳເຊັ່ນດຽວກັບເມນແລງທອນ ຄືເປັນຄົນຊ່າງຄິດແລະອາຣົມເຢືອກເຢັນ ທັງສອງມີກຳລັງໃຈເຂັ້ມແຂງໃນການເຜີຍແຜ່ຄວາມຈິງ ຂນະທີ່ບາດຫລວງໄດ້ຍຸຍົງຝູງຊົນທີ່ບໍ່ຮູ້ເຣື່ອງຣາວແລະເຊື່ອຖືຄຳສອນຜິດຫລາຍຄັ້ງທີ່ໂອລາບແລະເພັດຕີຕ້ອງໜີແບບເອົາຕົວບໍ່ລອດ ແຕ່ຢ່າງໃດກໍຕາມນັກປະຕິຮູບສາສນາທັງສອງກໍໄດ້ຮັບການຄຸ້ມຄອງຈາກພຣະຣາຊາຜູ້ຊຶ່ງຕັດສິນພຣະທັຍຍອມເຊື່ອໃນຄຳສອນທີ່ໄດ້ຮັບການປະຕິຮູບແລະຊຶ່ງຍິນດີທີ່ຈະຊ່ອຍນັກປະຕິຮູບສາສນາຕໍ່ສູ້ກັບຝ່າຍໂຣມ

ໂອລາບແລະເພັດຕີໄດ້ຢືນຢູ່ຕໍ່ໜ້າພຣະພັກຂອງຈັກກະພັດແລະຕໍ່ໜ້າບັນດາຜູ້ນຳຂອງປະເທດສະວິດເດນນັ້ນ ກ່າວປົກປ້ອງຄວາມເຊື່ອຝ່າຍປະຕິຮູບເພິ່ນປະກາດວ່າປະຊາຊົນຈະຍອມຮັບຄຳສອນຂອງພວກບາດຫລວງກໍຕໍ່ເມື່ອຄຳສອນນັ້ນສອດຄ່ອງກັບພຣະຄັມພີຄືຫລັກຄຳສອນແຫ່ງຄວາມເຊື່ອນັ້ນມີກ່າວໄວ້ໃນພຣະຄັມພີຢ່າງຊັດເຈນເພື່ອທຸກຄົນສາມາດເຂົ້າໃຈໄດ້

ຈາກການຕໍ່ສູ້ນີ້ສະແດງໃຫ້ເຮົາເຫັນວ່າ "ບັນດາບຸຣຸດທີ່ຣວມຕົວກັນເປັນກອງທັບຂອງນັກປະຕິຮູບທີ່ມີຕຳແໜ່ງແລະເຂົ້າແຖວເປັນລະບຽບນັ້ນເປັນຢ່າງໃດ



ອຳນາດໃຫ້ປະກາດແຫ່ງພຣະຄັມພີ ຮຽກຕົນເອງວ່າເປັນຜູ້ລ້ຽງຝູງແກະຂອງພຣະເຈົ້າທີ່ກຳລັງຫິວກະຫາຍຫາຄວາມຈິງ ເພິ່ນກ່າວຢ່າງໜັກແໜ້ນວ່າຄຣິສະຕຽນບໍ່ຄວນຮັບເອົາຫລັກຄວາມເຊື່ອອື່ນໃດນອກຈາກທີ່ມີຢູ່ຕາມສິດທິອຳນາດແຫ່ງພຣະທັມອັນສັກສິດຂອງພຣະເຈົ້າ

ປະຊາຊົນທີ່ຮ້ອນຮົນພາກັນຍຶດໝັ້ນໃນຖ້ອຍຄຳຂອງລູເຕີ ຂ່າວດີແຫ່ງຄວາມຮັກຂອງພຣະຜູ້ຊ່ອຍໃຫ້ລອດ ຫລັກປະກັນຂອງການໃຫ້ອະພັຍແລະສັນຕິສຸກໂດຍການຊຳຣະຂອງພຣະໂລຫິດເຮັດໃຫ້ຈິດໃຈຂອງເຂົາເຫລົ່ານັ້ນຊົມຊື່ນຍິນດີ ທີ່ວິດເຕນເບີກແສງສວ່າງໄດ້ຖືກຈູດຂຶ້ນລັງສີນີ້ຈະເພີ່ມຄວາມສວ່າງໄປຈົນເຖິງເວລາສຸດທ້າຍ ແຕ່ລະຫວ່າງຄວາມຈິງແລະຄວາມເທັດ ມີຄວາມຂັດແຍ່ງກັນ ພຣະຜູ້ຊ່ອຍໃຫ້ລອດຂອງເຮົາຊຶ່ງຕຣັດດ້ວຍພຣະອົງເອງວ່າ "ຢ່າຄິດວ່າເຮົາມາເພື່ອຈະນຳຄວາມສະງົບສຸກສູ່ໂລກ ເຮົາບໍ່ໄດ້ມາເພື່ອນຳຄວາມສະງົບສຸກມາໃຫ້ ແຕ່ເຮົາມາເພື່ອຈະໃຫ້ມີດາບ" (ມັດທາຍ 10:34) ລູເຕີກ່າວໄວ້ບໍ່ທັນເທົ່າໃດປີພາຍຫລັງການປະຕິຮູບສາສນາວ່າ "ຂ້າແດ່ພຣະເຈົ້າ...ຂໍຊົງພັກດັນໃຫ້ຂ້ານ້ອຍໄປຂ້າງໜ້າ...ຂ້ານ້ອຍປາຖນາຈະມີຊີວິດຢູ່ຢ່າງສງົບ ແຕ່ຂ້ານ້ອຍຕົກລົງໄປ ຖ້າມກາງຄວາມສັບສົນວຸ່ນວາຍແລະການປະຕິຫວັດ

## ຂາຍໃບລ້າງບາບ (ໃບບຸນ)

ຄຣິສຕະຈັກໂຣມເຮັດໃຫ້ພຣະຄຸນຂອງພຣະເຈົ້າກາຍເປັນສິນຄ້າ ພາຍໃຕ້ການຂໍສົມທົບທຶນເພື່ອການສ້າງວິຫານເໝືອນເຊັ່ນປີເຕີໃນກຸງໂຣມ ມີການສເນີຂາຍການຍົກໂທດບາບໂດຍເຈົ້າໜ້າທີ່ຂອງສັນຕະປາປາ ພຣະວິຫານເພື່ອການນະມັດສະການພຣະເຈົ້າຖືກສ້າງຂຶ້ນດ້ວຍຄ່າຂອງການລ່ວງລະເມີດສິລທັມ ດ້ວຍສິ່ງນີ້ທີ່ໄດ້ປຸກໃຈສັດຕຣູຂອງສັນຕະປາປາ ແລະນຳໄປສູ່ການຕໍ່ສູ້ທີ່ຂະເຫຍົ່າບັນລັງແລະມົງກຸດສາມຊັ້ນເທິງພຣະສຽນຂອງອົງເທັດເຊນເຈົ້າໜ້າທີ່ຜູ້ທີ່ໄດ້ຮັບມອບໝາຍໃຫ້ຂາຍໃບລ້າງບາບໃນເຢຣະມັນ ເພິ່ນໄດ້ເຮັດຄວາມຜິດຂັ້ນພື້ນຖານຕໍ່ສັງຄົມແລະພຣະບັນຍັດ

ຂອງພຣະເຈົ້າ ແຕ່ເພິ່ນຖືກໃຊ້ໃຫ້ເຮັດໜ້າທີ່ໃນໂຄງການແຫ່ງຄວາມໂລບຂອງພຣະສັນຕະປາປາເປຣະມັນຕໍ່ໄປ ເທັດເຊນໄດ້ບັງອາດກ່າວເທັດຢ່າເປີດເຜີຍແລະເລົ່າເຣື່ອງຣາວທີ່ໜ້າອັສຈັນເພື່ອຫລອກລວງປະຊາຊົນທີ່ບໍ່ຮູ້ເຣື່ອງຣາວ ແລະເຂົ້າໃຈຜິດຫາກປະຊາຊົນໄດ້ມີພຣະທັມຂອງພຣະເຈົ້າແລ້ວເຂົາຄົງຈະບໍ່ຖືກຫລອກລວງ ແຕ່ພຣະຄັມພີຖືກປິດບັງໄປຈາກເຂົາໝົດ

ຂນະທີ່ເທັດເຊນເຂົ້າໄປໃນເມືອງນຶ່ງ ກໍມີຜູ້ຊື່ຂ່າວເດີນນຳໜ້າປະກາດວ່າ "ພຣະຄຸນຂອງພຣະເຈົ້າ ແລະແຫ່ງພຣະບິດາຜູ້ບໍຣິສຸດ ໄດ້ມາເຖິງປະຕູບ້ານເຮືອນຂອງທ່ານແລ້ວ" ປະຊາຊົນພາກັນຕ້ອນຮັບພວກຄົນຫລອກລວງທີ່ກ່າວໝິ່ນປມາດພຣະເຈົ້າເຫລົ່ານັ້ນ ສຳຄັນວ່າພວກເຂົາເປັນພຣະເຈົ້າເອງ ເທັດເຊນຂຶ້ນກ່າວເທິງທັມມາດໃນໂບດ ກ່າວຍົກຍ້ອງເຊີດຊູໃບລ້າງບາບວ່າເປັນຂອງປະທານອັນມີຄ່າທີ່ສຸດຂອງພຣະເຈົ້າ ເພິ່ນປະກາດວ່າຜົນປໂຍດຂອງໃບປະກາດຮັບຮອງການຍົກໂທດຂອງເຂົານັ້ນ "ຫລັງຈາກນີ້ແລ້ວ" ຫາກຜູ້ຊື້ປາຖນາຈະໄດ້ຮັບການອະພັຍເຂົາກໍຈະໄດ້ຮັບຕາມນັ້ນແລະເຂົາ "ບໍ່ຈຳເປັນຕ້ອງກັບໃຈອີກ" ເພິ່ນໃຫ້ຄຳໝັ້ນໃຈແກ່ຜູ້ຟັງວ່າໃບລ້າງບາບຂອງເພິ່ນມີອຳນາດຊ່ອຍຄົນທີ່ຕາຍແລ້ວໃຫ້ລອດໄດ້ທັນທີ ທີ່ເງິນຫລົ່ນເຖິງພື້ນຫີບເງິນຂອງເພິ່ນວິນຍານທີ່ໄດ້ຮັບການຈ່າຍຄ່າໄຖ່ໃຫ້ແລ້ວກໍຈະຫລຸດພົ້ນຈາກແດນຊຳຣະແລະມຸ້ງໜ້າໄປຍັງສວັນທັນທີທັງເງິນແລະທອງຈຶ່ງຫລັ່ງໄຫລລົງສູ່ຄັງຂອງເທັດເຊນ ຄວາມລອດທີ່ໄດ້ມາດ້ວຍການຊື້ດ້ວຍເງິນນັ້ນໄດ້ມາຢ່າງງ່າຍດາຍຍິ່ງກວ່າການທີ່ຕ້ອງກັບໃຈໃໝ່ ຄວາມເຊື່ອແລະຄວາມພຽນພຍາຍາມທີ່ຈະຕໍ່ສູ້ແລະເອົາຊັຍຊະນະຄວາມຜິດບາບ

ລູເຕີຮູ້ສຶກຂຍ່ະຂແຍງເປັນຢ່າງຍິ່ງ ມີສະມາຊິກໃນໂບດຂອງເພິ່ນກໍໄດ້ຊື້ໃບຮັບຮອງການຍົກໂທດນີ້ດ້ວຍ ຕໍ່ມາພວກເຂົາກໍເຂົ້າມາຫາສິດຍາພິບານຂອງຕົນສາຣະພາບບາບທັງຫລາຍແລະຫວັງວ່າຈະໄດ້ຮັບການອະພັຍທັງໝົດບໍ່ແມ່ນເພາະພວກເຂົາຮູ້ສຶກເສັຽໃຈທີ່ໄດ້ກະທຳຜິດແລະຢາກຈະແກ້ໄຂໃໝ່ ແຕ່ຕັ້ງຢູ່ເທິງພື້ນຖານຂອງການເຮັດຕາມໃຈຕົນເອງ ລູເຕີປະຕິເສດແລະຕັກເຕືອນພວກເຂົາວ່ານອກຈາກທຸກຄົນຈະກັບໃຈແລະປ່ຽນແປງໃໝ່ ພວກເຂົາກໍຈະຕ້ອງພິນາດເພາະຄວາມບາບຂອງຕົນ ພວກເຂົາຈຶ່ງພາກັນໄປຫາເທັດເຊນ ແລະຕໍ່ວ່າຖືກຜູ້ທີ່ຮັບຟັງສາຣະພາບບາບປະຕິເສດໃບຮັບຮອງຂອງເຂົາແລະລາງຄົນກ້າຂໍເງິນຄືນ ພຣະຮູບນີ້ຮູ້ສຶກໂກດເຄືອງ



ເໜືອໄດ້ຫັນຫລັງໃຫ້ກັບການສໍ້ໂກງແລະຄວາມເຊື່ອທີ່ຜິດຂອງໂຣມຕ້ອນຮັບ ແສງສວ່າງແຫ່ງຄວາມຈິງທີ່ໃຫ້ຊີວິດນິຣັນຂອງພຣະຄັມພີ

ທາວເຊນ "ນັກປະຕິຮູບແດນມາກ" ໄດ້ສະແດງອອກເຖິງຄວາມເປັນຜູ້ມີສະຕິປັນຍາຫລັກແຫລມ ຕັ້ງແຕ່ນ້ອຍເພິ່ນໄດ້ເຂົ້າໄປອາສັຍຢູ່ໃນໂບດ ຜົນການສອບສະແດງໃຫ້ເຫັນວ່າເພິ່ນມີຄວາມສາມາດ ຕໍ່ໄປພາຍໜ້າຈະມີໂອກາດໃນໂບດໄດ້ຢ່າງດີ ທາວເຊນໄດ້ຮັບອະນຸຍາດໃຫ້ເລືອກຕາມໃຈມັກວ່າຈະຮຽນທີ່ມະຫາວິທະຍາລັຍໃນເຢຣະມັນທີ່ເນເທີແລນ ແຕ່ມີເງື່ອນໄຂວ່າເພິ່ນບໍ່ຕ້ອງໄປທີ່ມະຫາວິທະຍາລັຍວິດເຕນເບີກ ເພາະຈະຖືກຊັກຈູງໃຫ້ເຊື່ອໃນລັດທິນອກຮີດທີ່ເປັນພັຍອັນຕຣາຍ ບາດຫລວງໄດ້ກ່າວເຕືອນເຊັ່ນນັ້ນ

ທາວເຊນເດີນທາງໄປທີ່ເມືອງໂຄໂລນ ຊຶ່ງເປັນທີ່ໝັ້ນຂອງຄຳສອນຂອງໂຣມແຫ່ງນຶ່ງ ທີ່ນີ້ເອງຕໍ່ມາເພິ່ນຮູ້ສຶກເບື່ອໜ່າຍ ປະມານເວລາດຽວກັນນີ້ເອງເພິ່ນໄດ້ອ່ານໜັງສືຂອງລູເຕີດ້ວຍຄວາມຍິນດີ ມີຄວາມປາຖນາຢ່າງແຮງກ້າທີ່ຈະໄດ້ຮັບຄຳສອນຈາກນັກປະຕິຮູບສາສນາ ແຕ່ຖ້າເພິ່ນຈະເຮັດຢ່າງທີ່ເພິ່ນປາຖນາເພິ່ນກໍສ່ຽງຕໍ່ການສູນເສັຽຜູ້ອຸປະຖັມໄປ ໃນບໍ່ນານເພິ່ນກໍຕັດສິນໃຈຢ່າງແນ່ວແນ່ ໂດຍການສະມັກເຂົ້າສຶກສາທີ່ວິດເຕນເບີກ

ເມື່ອທາວເຊນກັບມາເຖິງແດນມາກເພິ່ນບໍ່ໄດ້ເປີດເຜີຍໃຫ້ໃຜຮູ້ເຖິງຄວາມລັບ ແຕ່ໄດ້ພຍາຍາມຊັກຈູງເພື່ອນໆ ໃຫ້ຫັນມານັບຖືຄວາມເຊື່ອທີ່ແທ້ຈິງແລະບໍຣິສຸດວ່າເພິ່ນເປີດພຣະຄັມພີເທສນາເຣື່ອງພຣະເຢຊູຄຣິດແກ່ຄົນເຫລົ່ານັ້ນໃຫ້ຊາບວ່າພຣະອົງເທົ່ານັ້ນທີ່ເປັນຄວາມຫວັງແຫ່ງຄວາມລອດຂອງຄົນບາບຮອງເຈົ້າອາວາດຂອງວັດໂກດເຄືອງຍິ່ງຂຶ້ນເພາະທ່ານມີຄວາມຫວັງຢ່າງສູງ ທາວເຊນຈະເປັນຜູ້ປົກປ້ອງຂອງໂຣມ ເພິ່ນຖືກຍ້າຍອອກຈາກໂບດທີ່ອາສັຍໄປຍັງອີກໂບດນຶ່ງທັນທີ ແລະຖືກຄວບຄຸມຢູ່ໃນທີ່ພັກຢ່າງເຂັ້ມງວດກວດຂັນ ທາວເຊນໄດ້ຕິດຕໍ່ກັບເພື່ອນໆ ໃຫ້ຮຽນຮູ້ຄວາມຈິງຂອງພຣະເຈົ້າຈາກຊ່ອງຊີກກົງເຫລັກທີ່ກັ້ນຫ້ອງຂັງ ຫາກບາດຫລວງຊາວແດນມາກເຫລົ່ານັ້ນມີຄວາມຮອບຮູ້ໃນແຜນການຂອງໂບດກ່ຽວກັບການລົງໂທດ ຄົນນອກຮີດກໍຄົງບໍ່ມີໃຜໄດ້ຍິນສຽງຂອງທາວເຊນອີກຕໍ່ໄປ ແຕ່ແທນທີ່ບາດຫລວງເຫລົ່ານັ້ນຈະຈັບທາວເຊນໄປຂັງໄວ້ໃນຄຸກໃຕ້ດິນກັບຂັບໄລ່ເພິ່ນອອກຈາກໂບດ

ທາງຣາຊການໄດ້ອອກປະກາດຄຸ້ມຄອງຄຣູສອນຫລັກຄວາມເຊື່ອໃໝ່ ດັ່ງນັ້ນຄຣິສຕະຈັກຕ່າງໆ ເປີດຕ້ອນຮັບທາວເຊນເປັນຢ່າງດີ ປະຊາຊົນພາກັນມາຟັງ

ຖືກລົງໂທດເຖິງຕາຍ ປະຊາຊົນຫລາຍພັນຄົນຖືກຂ້າຕາຍໃນຣັຊສມັຍຂອງຈັກກະພັດຊານແລະຟີລິບທີ່ 2

ຄັ້ງນຶ່ງມີຄອບຄົວນຶ່ງຖືກນຳໄປຕໍ່ໜ້າພະນັກງານສອບສວນຖືກກ່າວຫາວ່າບໍ່ເຂົ້າຮ່ວມພິທີມີຊາໃນໂບດແລະນະມັດສະການຢູ່ເຮືອນ ລູກຊາຍຂອງຄົນສຸດທ້ອງຂອງຄອບຄົວນີ້ໄດ້ຕອບວ່າ "ເຮົາໄດ້ຊຸເຂົ່າລົງແລະອະທິຖານຕໍ່ພຣະເຈົ້າເພື່ອຂໍໃຫ້ພຣະອົງຊົງປະທານຄວາມຮູ້ຄວາມເຂົ້າໃຈໃນພຣະທັມຂອງພຣະອົງແລະຂໍຊົງອະພັຍຄວາມຜິດບາບຂອງເຮົາ ເຮົາອະທິຖານເພື່ອພຣະມະຫາກະສັດຂອງເຮົາ ໃຫ້ຣາຊການຂອງພຣະອົງຈະເຣີນຮຸ່ງເຮືອງແລະຊີວິດຂອງພຣະອົງຊົງພຣະກະເສມສຳຣານເຮົາອະທິຖານຂໍພຣະເຈົ້າຊົງພິທັກຮັກສາບັນດາຜູ້ພິພາກສາຂອງເຮົາໄວ້"

ມີພຽງແຕ່ພວກຜູ້ຊາຍເທົ່ານັ້ນທີ່ໄດ້ສະແດງຄວາມກ້າຫານຢ່າງບໍ່ຢ້ານພັຍອັນຕຣາຍແຕ່ພວກຜູ້ຍິງທີ່ຄີງບາງຮ່າງນ້ອຍແລະບັນດາຍິງຮັບໃຊ້ກໍໄດ້ສະແດງຄວາມກ້າຫານດ້ວຍ "ບັນດາຜູ້ທີ່ເປັນພັລຍາທັງຫລາຍທີ່ຢືນຢູ່ເບື້ອງຫລັງເສົາຫລັກທີ່ສາມີຖືກຜູກມັດເພື່ອເຜົາທັງເປັນ ຂນະທີ່ສາມີທຸກທໍຣະມານດ້ວຍຄວາມຮ້ອນຂອງໄຟທີ່ເຜົາຜານຮ່າງກາຍພວກເຂົາໄດ້ກະຊິບປອບໂຍນສາມີ ແລະຮ້ອງເພງສັນລະເສີນເພື່ອໃຫ້ເຂົາມີຈິດໃຈລ່າເລີງ ສ່ວນບັນດາຍິງຮັບໃຊ້ທັງຫລາຍນອນລົງທີ່ຫລຸມຝັງສົບສຳກັບວ່າໄດ້ເຂົ້າໄປສູ່ຫ້ອງນອນໃນເວລາກາງຄືນຫລືບໍ່ກໍແຕ່ງຕົວດ້ວຍຜ້າທີ່ດີທີ່ສຸດແລະຍ່າງເຂົ້າສູ່ກອງໄຟສຳກັບວ່າພວກເຂົາກຳລັງເດີນເຂົ້າສູ່ພິທີສົມຣົດ"

ການກົດຂີ່ຂົ່ມເຫງເປັນສາຍເຫດໃຫ້ມີຜູ້ເປັນພະຍານເພື່ອຄວາມຈິງທະວີຂຶ້ນປີແລ້ວປີເລົ່າທີ່ຈັກກະພັດໄດ້ເພີ່ມຄວາມທາລຸນໂຫດຮ້າຍຫລາຍຂຶ້ນແຕ່ກໍໄຮ້ຜົນ ໃນທີ່ສຸດເຈົ້າຊາຍວິນລຽມແຫ່ງໂອເຣນກໍຈະຊົງນຳອິສາຣະພາບໃນການນະມັດສະການພຣະເຈົ້າມາສູ່ຊາວຮໍລັນດາອີກເທື່ອນຶ່ງ

## ການປະຕິຮູບສາສນາໃນແດນມາກ

ໃນປະເທດຕ່າງໆ ທາງພາກເໜືອຂອງຢຸໂຣບ ການປະກາດຂ່າວປະເສີດໄດ້ເຜີຍແຜ່ເຂົ້າໄປດ້ວຍຄວາມສະດວກ ເມື່ອນັກສຶກສາຈາກວິດເຕນເບີກເດີນທາງກັບບ້ານ ພວກເຂົາໄດ້ນຳເອົາຄຳສອນການປະຕິຮູບໄປຍັງສະແກນດິເນເວັຽ ໜັງສືຂອງລູເຕີກໍໄດ້ຊ່ອຍກະຈາຍຄວາມສວ່າງເຊັ່ນກັນປະຊາຊົນຜູ້ມີຄວາມອົດທົນທີ່ຢູ່ທາງ ພາກ



ຫລາຍ ເພິ່ນໄດ້ສາບແຊ່ງຢ່າງໜ້າກົວເຮັດໃຫ້ເກີດການຈູດໄຟໃຫ້ສວ່າງໃນສີ່ແຍກກາງສາທາຣະນະແລະປະກາດວ່າເພິ່ນ "ໄດ້ຮັບຄຳສັ່ງຈາກສັນຕະປາປາໃຫ້ເຜົາຄົນນອກສາສນາທຸກຄົນທີ່ບັງອາດຂັດຂວາງການຊື້ຂາຍໃບລ້າງບາບຂອງເພິ່ນ"

## ລູເຕີເລີ່ມງານ

ສຽງຂອງລູເຕີໄດ້ຍິນຈາກທັມມາດດ້ວຍການຕັກເຕືອນຢ່າງຈິງຈັງ ເພິ່ນໃຫ້ປະຊາຊົນໄດ້ເຫັນລັກສະນະຂອງການບາບທີ່ໜ້າລັງກຽດແລະສອນວ່າເປັນໄປບໍ່ໄດ້ທີ່ມະນຸດຈະລົດຄວາມຜິດນັ້ນດ້ວຍການກະທຳຂອງຕົນເອງ ຫລືຫລີກພົ້ນຈາກການຖືກລົງໂທດບໍ່ມີສິ່ງອື່ນໃດນອກຈາກການກັບໃຈໃໝ່ຕໍ່ພຣະເຈົ້າແລະເຊື່ອໃນພຣະຄຣິດຈຶ່ງຈະສາມາດຊ່ອຍຄົນບາບໃຫ້ລອດໄດ້ ພຣະຄຸນຂອງພຣະຄຣິດບໍ່ສາມາດຊື້ໄດ້ ເປັນຂອງປະທານທີ່ໃຫ້ລ້າໆ ລູເຕີ ແນະນຳປະຊາຊົນບໍ່ໃຫ້ຊື້ໃບລ້າງບາບແຕ່ໃຫ້ເບິ່ງໄປທີ່ພຣະຜູ້ໄຖ່ຜູ້ສະຣະພຣະຊົນດ້ວຍຄວາມເຊື່ອ ເພິ່ນໄດ້ເລົ່າໃຫ້ປະຊາຊົນຟັງເຖິງປະສົບປະການອັນເຈັບປວດຂອງຕົນແລະໃຫ້ຄວາມໝັ້ນໃຈແກ່ຜູ້ຟັງວ່າເພາະໂດຍການເຊື່ອໃນພຣະຄຣິດເພິ່ນຈຶ່ງມີສັນຕິສຸກແລະຄວາມຍິນດີ

ຂນະທີ່ເທັດເຊນຍັງຄົງດຳເນີນການແຊກແຊງໃຫ້ກ່າວອ້າງຢ່າງບໍ່ເຄົາຣົບນັ້ນລູເຕີຕັດສິນໃຈທີ່ຈະຕໍ່ຕ້ານໃຫ້ໄດ້ຜົນຫລາຍຂຶ້ນໃນໂບດຂອງປະສາດທີ່ວິດເຕັນເບີກມີວັດຖຸໂບຮານຊຶ່ງມີການເປີດໃຫ້ປະຊາຊົນໄດ້ເຂົ້າຊົມໃນວັນບໍຣິສຸດທາງສາສນາມີການໃຫ້ແກ່ທຸກຄົນທີ່ເຂົ້າໂບດໄດ້ຮັບການຊຳຣະຄວາມບາບ ແລະເຮັດການສາຣະພາບບາບ ສິ່ງນຶ່ງທີ່ສຳຄັນທີ່ສຸດໃນໂອກາດນີ້ຄືງານສລອງນັກບຸນທັງຫລາຍກໍກຳລັງຈະມາເຖິງ ລູເຕີເຂົ້າຮ່ວມກັບຝູງຊົນພ້ອມທີ່ຈະເດີນທາງໄປດ້ວຍກັນທີ່ໂບດແລ້ວຕິດຂໍ້ຄວາມຕໍ່ຕ້ານຫລັກຄຳສອນເຣື່ອງໃບລ້າງບາບຈຳນວນ 95 ຂໍ້ທີ່ປະຕູໂບດ

ຂໍ້ຄວາມທີ່ລູເຕີປະກາດເປັນທີ່ສົນໃຈຂອງປະຊາຊົນທົ່ວໄປ ທຸກຄົນໄດ້ອ່ານແລະອ່ານຊ້ຳອີກທຸກຂໍ້ ສ້າງຄວາມຕື່ນເຕັ້ນໄປທົ່ວເມືອງນັ້ນກໍສະແດງວ່າອຳນາດການອະພັຍບາບແລະການລົງໂທດຄວາມຜິດບໍ່ເຄີຍມອບໃຫ້ສັນຕະປາປາ ຫລືແກ່ມະນຸດ

ຄົນໃດເລີຍ ເປັນການສະແດງໃຫ້ເຫັນຢ່າງຊັດເຈນແລ້ວວ່າພຣະຄຸນຂອງພຣະເຈົ້າຊົງປະທານໃຫ້ລ້າໆ ແກ່ບັນດາຜູ້ສະແຫວງຫາດ້ວຍການກັບໃຈ ແລະດ້ວຍຄວາມເຊື່ອ

ຄຳປະກາດຂອງລູເຕີໄດ້ກະຈາຍໄປທົ່ວເຢຣະມັນແລະພຽງບໍ່ເທົ່າໃດອາທິດກໍໄດ້ເລົ່າລືໄປທົ່ວຢູໂຣບຜູ້ເຊື່ອຂອງໂຣມັນທີ່ເຄັ່ງຄັດໃນສາສນາ ຫລາຍຄົນໄດ້ອ່ານດ້ວຍຄວາມຊື່ນບານແລະຕະໜັກດີວ່າຂໍ້ຄວາມເຫລົ່ານັ້ນເປັນພຣະສຸຣະສຽງຂອງພຣະເຈົ້າ ພວກເຂົາຮູ້ສຶກວ່າພຣະເຈົ້າຊົງຍົກພຣະຫັດຂອງພຣະອົງ ເພື່ອໜ່ຽວລັ້ງກະແສແຫ່ງຄວາມຜິດບາບທີ່ສູງຂຶ້ນຂອງຄວາມບໍ່ບໍຣິສຸດທີ່ອອກມາຈາກໂຣມ ພວກເຈົ້ານາຍແລະຂ້າຣາຊການຕ່າງພາກັນແອບຊື່ນບານຢ່າງງຽບທີ່ມີການກວດສອບທີ່ທີ່ອວດອ້າງອຳນາດຜູ້ນີ້ທີ່ປະຕິເສດການຮ້ອງຂໍດ້ວຍການຕັດສິນໃຈຂອງຕົນເອງ ບາດຫລວງຜູ້ເຕັມໄປດ້ວຍເຫລ່ຫລ່ຽມເຫັນຜົນປໂຍດຂອງພວກຕົນກຳລັງຢູ່ໃນອັນຕຣາຍຈຶ່ງໂກດເຄືອງ ນັກປະຕິຮູບສາສນາຕ້ອງຜະເຊີນກັບພວກທີ່ກ່າວຫາເພິ່ນຢ່າງຮຸນແຮງ ເພິ່ນຕອບວ່າ "ມີໃຜທີ່ບໍ່ຮູ້ວ່າບຸກຄົນທີ່ນຳຄວາມຄິດໃໝ່ໆອອກເຜີຍແຜ່ໂດຍບໍ່ຖືກກ່າວຫາວ່າເຮັດໃຫ້ເກີດການທະເລາະວິວາດ ເປັນຫຍັງພຣະຄຣິດແລະຜູ້ສະຣະຊີບເພື່ອສາສນາຈຶ່ງຖືກຂ້າຕາຍ...ກໍເພາະວ່າທ່ານເຫລົ່ານັ້ນໄດ້ນຳເອົາຂອງໃໝ່ເຂົ້າມາໂດຍບໍ່ຂໍຄວາມແນະນຳຄວາມຄິດເຫັນຈາກຄຳສັ່ງສອນຂອງຄົນລຸນກ່ອນ"

ພວກສັດຕຣູຂອງລູເຕີຈູ່ໂຈມເພິ່ນດ້ວຍການບິດເບືອນເປົ້າໝາຍຕ່າງໆ ຂອງເພິ່ນແລະການສະທ້ອນສິ່ງຊົ່ວຮ້າຍກ່ຽວກັບອຸປະນິສັຍຂອງເພິ່ນກໍເກີດຂຶ້ນສ່ຳກັບນ້ຳທີ່ໄຫລບ່າ ເພິ່ນເຄີຍມີຄວາມຮູ້ສຶກໝັ້ນໃຈວ່າພວກຜູ້ນຳຕ່າງໆ ຄົງຈະຍິນດີຮ່ວມມືກັບເພິ່ນໃນການປະຕິຮູບ ເພິ່ນຄາດການລ່ວງໜ້າວ່າວັນອັນສົດໃສກຳລັງຈະເລີ່ມເກີດຂຶ້ນກັບຄຣິສຕະຈັກແລ້ວ

ແຕ່ແລ້ວຖ້ອຍຄຳທີ່ໜ້າຈະກ່າວສນັບສນູນ ກັບກາຍເປັນຄຳຕຳນິຕິຕຽນຜູ້ມີອຳນາດທາງດ້ານສາສນາ ແລະລັດຖະບານໄດ້ປະຈັກໃນເວລາຕໍ່ມາວ່າການຍອມຮັບຄວາມຈິງນີ້ກໍເທົ່າກັບເປັນການທຳລາຍອຳນາດຂອງສັນຕະປາປາແຫ່ງກຸງໂຣມເໝືອນກັບຢຸດສາຍນ້ຳນັບພັນສາຍທີ່ກຳລັງໄຫລໄປສູ່ຄັງສົມບັດຂອງຄຣິສຕະຈັກ ແລະຍັງເປັນການຈຳກັດຄວາມຟູມເຟືອຍຫລູຫລາຂອງບັນດາຜູ້ນຳ ການສອນປະຊາຊົນໃຫ້ມອງໄປທີ່ພຣະຄຣິດຜູ້ດຽວ ເພື່ອຈະໄດ້ຮັບຄວາມລອດນັ້ນຈະເປັນການໂຄ່ນບັນລັງ



ປະຊາຊົນພົລເມືອງໃນເນເທີແລນ ທີ່ມີຄວາມໃສສັດທາໃນຫລັກຄຳສອນຂອງລູເຕີໄດ້ເທສນາສັ່ງສອນຂ່າວປະເສີດດ້ວຍຄວາມຮ້ອນຮົນແລະຊື່ສັດ ເມນໂນ ຊີມມອນ ຊຶ່ງເປັນຜູ້ໄດ້ຮັບການສຶກສາຈາກໂບດຄາທໍລິກ ແລະບວດເປັນບາດຫລວງ ເພິ່ນໄດ້ມີຄວາມຮູ້ເຣື່ອງຂອງພຣະຄັມພີແລະບໍ່ກ້າອ່ານເພາະຢ້ານວ່າຈະຖືກຫລອກລວງໃຫ້ເຊື່ອໃນຫລັກຄຳສອນຜິດ ເພິ່ນພຍາຍາມທີ່ຈະຢຸດສຽງຮຽກຮ້ອງໃນຈິດສຳນຶກຂອງເພິ່ນໃຫ້ໝົດໄປ ແຕ່ກໍໄຮ້ຜົນ ຕໍ່ມາເພິ່ນກໍໄດ້ຮັບການແນະນຳໃຫ້ສຶກສາພຣະຄັມພີພັນທະສັນຍາໃໝ່ພ້ອມດ້ວຍໜັງສືຂອງລູເຕີ ເຮັດໃຫ້ເພິ່ນຍອມຮັບຫລັກຄວາມເຊື່ອຂອງໂປເຕສແຕນ

ຫລັງຈາກນີ້ບໍ່ນານເທົ່າໃດເພິ່ນໄດ້ເຫັນຊາຍຄົນນຶ່ງຖືກລົງໂທດເຖິງຕາຍເພາະຮັບສິນບັບຕິສະມາຊ້ຳອີກເທື່ອນຶ່ງ ເຫດການເທື່ອນີ້ເປັນເຫດຈູງໃຈໃຫ້ເພິ່ນສຶກສາພຣະຄັມພີກ່ຽວກັບການໃຫ້ສິນບັບຕິສະມາໃຫ້ແກ່ເດັກອ່ອນເພິ່ນຊາບວ່າເງື່ອນໄຂສຳລັບການຮັບບັບຕິສະມາຄືຜູ້ທີ່ຈະຮັບຈະຕ້ອງກັບໃຈໃໝ່ແລະມີຄວາມເຊື່ອ

ເມນໂນ ລາອອກຈາກຄຣິສະຕະຈັກໂຣມັນ ແລະອຸທິດຊີວິດຂອງເພິ່ນໃຫ້ກັບການສັ່ງສອນຄວາມຈິງທີ່ໄດ້ຮັບທັງໃນປະເທດເຢຣະມັນແລະເນີເທີແລນໄດ້ມີພວກຄັ່ງສາສນາເກີດຂຶ້ນ ກໍ່ຄວາມວຸ່ນວາຍແລະການກະທຳສິ່ງທີ່ບໍ່ບັງຄວນ ນຳປະຊາຊົນຄິດກະບົດ ເມນໂນຕໍ່ສູ້ຂັດຂວາງຄຳສອນທີ່ຜິດແລະແຜນການທີ່ຊົ່ວຮ້າຍຂອງຜູ້ທີ່ຄັ່ງສາສນາເຫລົ່ານີ້ ເປັນເວລາ 25 ປີທີ່ເພິ່ນໄດ້ເດີນທາງໄປໃນປະເທດເນເທີແລນແລະພາກເໜືອຂອງເຢຣະມັນ ພຍາຍາມຂຍາຍອິດທິພົນຂອງຕົນໃຫ້ກວ້າງໄກດຳເນີນຊີວິດໃຫ້ເປັນແບບຢ່າງທີ່ດີສອດຄ່ອງກັບສິ່ງທີ່ເພິ່ນສັ່ງສອນ ເພິ່ນເປັນບຸຣຸດມີຄວາມໝັ້ນຄົງຖ່ອມຕົນແລະສຸພາບອ່ອນໂຍນມີຄວາມຊື່ສັດແລະຈິງໃຈ ມີຄົນຫລວງຫລາຍກັບໃຈໃໝ່ເພາະການທຳງານຂອງເພິ່ນ

ໃນປະເທດເຢຣະມັນຈັກກະພັດຊານທີ່ 5 ໄດ້ຫ້າມການປະຕິຮູບສາສນາແຕ່ພວກເຈົ້ານາຍໄດ້ລຸກຂຶ້ນໃນຖານະຜູ້ຂັດຂວາງການກະທຳທີ່ທາລຸນໂຫດຮ້າຍຂອງພຣະອົງ ໃນປະເທດເນເທີແລນພຣະຈັກກະພັດຊານມີອຳນາດຫລາຍກວ່າໃນປະເທດເຢຣະມັນ ພຣະອົງໄດ້ອອກປະກາດໃຫ້ມີການກົດຂີ່ຂົ່ມເຫງທີ່ໄດ້ຮັບຄວາມສຳເຣັດຢ່າງລວດເລວ ຜູ້ທີ່ອ່ານພຣະຄັມພີຜູ້ທີ່ຟັງຫລືເທສນາພຣະທັມຂອງພຣະເຈົ້າ ຜູ້ອະທິຖານຕໍ່ພຣະເຈົ້າໃນທີ່ລັບລີ້ ຜູ້ທີ່ບໍ່ຍອມກາບໄຫວ້ຮູບເຄົາຣົບແລະຜູ້ຮ້ອງເພງສະດຸດີ

ບົດທີ່ 13

# ໃນປະເທດເນເທີແລນ ແລະສະແກນດິເນເວັຽ

ໃນປະເທດເນເທີແລນອຳນາດອັນໂຫດຮ້າຍທາຣຸນຂອງສັນຕະປາປາໄດ້ຖືກຕໍ່ຕ້ານມາກ່ອນເຈັດຮ້ອຍປີ ພຣະບິຊອບສອງອົງໄດ້ຖືກສົ່ງໄປເປັນຣາຊທູດທີ່ກຸງໂຣມ ແລະໄດ້ຮຽນຮູ້ເຖິງລັກສະນະນິສັຍອັນແທ້ຈິງຂອງສັນຕະປາປາ (Holy See) ຈຶ່ງໄດ້ກ່າວຕິຕຽນໂດຍປັດສະຈາກຄວາມເກງກົວວ່າ “ເພິ່ນຍົກຍ້ອງຕົວເອງຂຶ້ນເປັນຜູ້ມີອຳນາດໃນວິຫານຂອງພຣະເຈົ້າ ແທນທີ່ຈະເປັນຜູ້ລ້ຽງ ທ່ານກັບກາຍເປັນໝາປ່າທີ່ຄອຍກັດກິນຝູງແກະ ເພິ່ນຄວນຈະເປັນຜູ້ຮັບໃຊ້ຂອງບັນດາຜູ້ຮັບໃຊ້ທັງຫລາຍຕາມທີ່ເພິ່ນຮຽກຕົນເອງ ແຕ່ເພິ່ນກັບພຍາຍາມເຮັດຕົວເປັນເຈົ້ານາຍເໜືອເຈົ້ານາຍທັງຫລາຍ ເພິ່ນໄດ້ໝິ່ນປມາດພຣະບັນຊາຂອງພຣະເຈົ້າ”

ຄົນອື່ນໆ ກໍລຸກຂຶ້ນສັດຕະວັດແລ້ວສັດຕະວັດເລົ່າ ເພື່ອສະທ້ອນການສຽງຕໍ່ຕ້ານນີ້ ພວກເຂົາແປຂໍ້ພຣະຄັມພີຂອງວອນເດນເປັນພາສາຮອນລັນດາ ປະກາດວ່າ “ພຣະຄັມພີເປັນໜັງສືທີ່ມີປໂຍດມະຫາສານບໍ່ມີເຣື່ອງຈະເວົ້າຄືບຂັນບໍ່ມີນິທານທີ່ປັ້ນຂຶ້ນຕາມເຈຕນາການ ບໍ່ມີເຣື່ອງໄຮ້ສາຣະ ບໍ່ມີການຫລອກລວງ ແຕ່ເປັນພຣະທັມແຫ່ງຄວາມຈິງ” ນີ້ຄືຂໍ້ຂຽນຂອງພີ່ນ້ອງຄຣິສະຕຽນໃນສັດຕະວັດທີ່ 12

ໃນເວລານີ້ພວກໂຣມໄດ້ເລີ່ມກົດຂີ່ຂົ່ມເຫງ ແຕ່ຜູ້ທີ່ເຊື່ອຖືກໍຍັງເພີ່ມຈຳນວນຫລາຍຂຶ້ນເລື້ອຍໆ ພວກເຂົາປະກາດວ່າພຣະຄັມພີເປັນໜັງສືເຫລັ້ມດຽວທີ່ຫລັກຄຳສອນດ້ານສາສນາທີ່ມີສິດທິອຳນາດ ບໍ່ມີຜິດພາດແລະ “ບໍ່ຄວນມີຜູ້ໃດຖືກບັງຄັບໃຫ້ເຊື່ອ ແຕ່ຄວນເກີດຄວາມເຊື່ອໂດຍຄຳເທສນາສັ່ງສອນ”



ຂອງສັນຕະປາປາແລະໃນທີ່ສຸດຈະທຳລາຍອຳນາດຂອງຄົນເຫລົ່ານັ້ນ ດ້ວຍເຫດນີ້ຄົນພວກເພິ່ນຮ່ວມກັນຕໍ່ຕ້ານພຣະຄຣິດແລະຄວາມຈິງດ້ວຍການຂັດຂວາງບຸຣຸດຜູ້ທີ່ພຣະອົງຊົງໃຊ້ມາເພື່ອໃຫ້ຄວາມສວ່າງແກ່ພວກເຂົາ

ເມື່ອເບິ່ງຕົວເອງ ລູເຕີກໍຫວັ່ນເກງ ຊາຍຄົນດຽວທີ່ຕໍ່ຕ້ານອຳນາດອັນຍິ່ງໃຫຍ່ຂອງໂລກ ເພິ່ນຂຽນວ່າ “ຂ້າພະເຈົ້າເປັນໃຜທີ່ຕໍ່ສູ້ກັບອຳນາດຂອງສັນຕະປາປາຜູ້ທີ່ບັນດາກະສັດແລະຄົນທັງໂລກຢ້ານກົວບໍ່ມີໃຜສາມາດຮູ້ວ່າໃນໄລຍະສອງປີນີ້ຈິດໃຈຂອງຂ້າພະເຈົ້າທຸກທໍຣະມານພຽງໃດແລະຂ້າພະເຈົ້າມີຄວາມທໍ້ຖອຍຈົນອາດຈະເວົ້າໄດ້ວ່າຂ້າພະເຈົ້າຕົກຢູ່ໃນສະພາບທີ່ໝົດຫວັງ” ແຕ່ເມື່ອການສນັບສນູນຂອງມະນຸດຫລົມແຫລວ ເພິ່ນເພິ່ງພິງຢ່າງປອດພັຍໃນພຣະຫັດອັນຊົງຣິດ ລູເຕີຂຽນຈົດໝາຍເຖິງເພື່ອນວ່າ “ໜ້າທີ່ຢ່າງທຳອິດທີ່ທ່ານຄວນເຮັດຄືການອະທິຖານຢ່າຫວັງທີ່ໄດ້ອັນໃດຈາກການກະທຳຫລືຄວາມເຂົ້າໃຈຂອງຕົວເອງ ຈົ່ງໄວ້ວາງໃຈໃນພຣະເຈົ້າແຕ່ພຽງຜູ້ດຽວແລະໄວ້ວາງໃຈໃນອຳນາດພຣະວິນຍານຂອງພຣະອົງ ນີ້ເປັນບົດຮຽນທີ່ສຳຄັນຍິ່ງສຳລັບບັນດາຜູ້ທີ່ພຣະເຈົ້າຊົງຮຽກໃຫ້ເຂົານຳຄວາມຈິງສເນີແກ່ຄົນທັງຫລາຍໃນຍຸກນີ້ ການຕໍ່ສູ້ກັບອຳນາດຄວາມຊົ່ວຮ້າຍຈຳເປັນທີ່ຈະຕ້ອງມີອັນໃດແດ່ຫລາຍກວ່າສະຕິບັນຍາ ແລະຄວາມສລຽວສລາດຂອງມະນຸດ

## ລູເຕີຢຶດເອົາພຣະຄັມພີເທົ່ານັ້ນເປັນຫລັກ

ເມື່ອພວກສັດຕຣູອ້າງເຖິງເຄົານິບທຳນຽມປະເພນີ ແລະຄຳສອນທີ່ສືບຕໍ່ກັນມາ ລູເຕີກໍໂຕ້ຕອບການຖົກຖຽງດ້ວຍພຣະຄັມພີຢ່າງດຽວທີ່ພວກເຂົາບໍ່ສາມາດຕອບໄດ້ ຈາກຄຳເທສນາແລະໜັງສືທີ່ເພິ່ນຂຽນເປັນລຳແສງທີ່ສ່ອງແສງແກ່ຄົນນັບພັນແລະປຸກທຸກຄົນໃຫ້ຕື່ນຕົວ ພຣະທັມຂອງພຣະເຈົ້າປຽບເໝືອນດາບສອງຄົມຊຶ່ງແທງທະລຸຫົວໃຈຄົນທັງຫລາຍ ບັດນີ້ຜູ້ທີ່ມອງເຫັນແຕ່ພິທີກັມຕ່າງໆ ຂອງມະນຸດແລະຄົນທີ່ອ້າງຕົວເປັນຄົນກາງຫັນມາຫາສັດທາໃນພຣະຄຣິດແລະການສິ້ນພຣະຊົນເທິງໄມ້ກາງແຂນຂອງພຣະອົງ

ການທີ່ປະຊາຊົນມີຄວາມສົນໃຈໃນຄຳສອນຂອງລູເຕີຢ່າງມາກມາຍເຊັ່ນນີ້ເຮັດໃຫ້ຜູ້ມີອຳນາດທາງຝ່າຍສັນຕະປາປາຢ້ານກົວ ລູເຕີໄດ້ຮັບຄຳສັ່ງໃຫ້ໄປກຸງໂຣມ ຄຳສັ່ງນີ້ເຮັດໃຫ້ເພື່ອນໆ ຂອງເພິ່ນມີຄວາມຢ້ານ ເພາະທຸກຄົນຮູ້ວ່າມີພັຍອັນຕຣາຍຄຸກຄາມລູເຕີຢູ່ຮອບດ້ານໃນເມືອງອັນຊົ່ວຮ້າຍນີ້ ເມືອງທີ່ມືນເມົາດ້ວຍໂລຫິດຂອງບັນດາຜູ້ສະລະຊີວິດເພື່ອສາສນາຂອງພຣະຄຣິດ ເພື່ອນຂອງລູເຕີຂໍຮ້ອງໃຫ້ເພິ່ນຮັບການພິຈາຣະນາສອບສວນໃນປະເທດເຢຣະມັນ

ການຮຽກຮ້ອງຂອງບັນດາເພື່ອນຂອງລູເຕີໄດ້ຮັບຜົນສຳເຣັດ ສັນຕະປາປາໄດ້ແຕ່ງຕັ້ງຕົວແທນມາຟັງການພິຈາຣະນາສອບສວນ ສັນຕະປາປາໄດ້ສັ່ງຜູ້ແທນຄົນນັ້ນວ່າ ລູເຕີຖືກປະກາດວ່າເປັນຄົນນອກຮີດແລ້ວ ດັ່ງນັ້ນຜູ້ແທນຂອງສັນຕະປາປາຈຶ່ງໄດ້ຮັບຄຳສັ່ງ "ໃຫ້ຈັດການບັງຄັບລູເຕີຢຸດປະກາດຫລັກຄຳສອນຂອງເພິ່ນຢ່າງເດັດຂາດໂດຍບໍ່ລໍຊ້າ" ຕົວແທນຂອງສັນຕະປາປາໄດ້ຮັບອຳນາດໃຫ້ປະກາດວ່າ "ລູເຕີບໍ່ໄດ້ຢູ່ໃນຄວາມຄຸ້ມຄອງຂອງກົດໝາຍທົ່ວປະເທດເຢຣະມັນໃຫ້ເນຣະເທດແລະສາບແຊ່ງໃຫ້ຂັບໄລ່ບັນດາຄົນທີ່ກ່ຽວຂ້ອງກັບເພິ່ນອອກຈາກສາສນາ" ຜູ້ໃດທີ່ລະເລີຍບໍ່ຍອມຈັບຕົວລູເຕີແລະພັກພວກຂອງເພິ່ນແລະນຳຕົວໄປມອບໃຫ້ແກ່ຜູ້ມີຄວາມພຍາບາດແຫ່ງໂຣມ ບໍ່ວ່າຈະເປັນພຣະຜູ້ມີສົມສັກຫລືຜູ້ນຳບ້ານເມືອງກໍໃຫ້ໄລ່ທຸກຄົນອອກຈາກສາສນາດ້ວຍຍົກເວັ້ນຈັກກະພັດ

ຈາກເອກກະສານນີ້ເຮັດໃຫ້ເຫັນຢ່າງຊັດເຈນວ່າບໍ່ໃຊ່ວິທີການຂອງຄຣິສະຕຽນຫລືການພິຈາຣານາພິພາກສາໂດຍທົ່ວໄປ ທັງນີ້ເພາະລູເຕີຍັງບໍ່ມີໂອກາດອະທິບາຍຫລືກ່າວເພື່ອປົກປ້ອງຕົວເອງເລີຍ ແຕ່ເພິ່ນກໍກັບຖືກປະກາດວ່າເປັນຄົນນອກຮີດໄປເສັຽແລ້ວ ແລະໃນວັນດຽວກັນກໍຖືກຂູ່ເຂັນ ຖືກກ່າວຮ້າຍ ຖືກຕັດສິນລົງໂທດແລະຖືກປະນາມ

ຂນະທີ່ລູເຕີຕ້ອງການຄຳແນະນຳ ແລະຄຳປຶກສາຫາລືຈາກເພື່ອນ ພຣະເຈົ້າຊິງສິ່ງເມນແລງທອນໄປທີ່ວິດເຕນເບີກ ໂດຍທີ່ເມນແລງທອນເປັນຄົນສຸກຂຸມຮອບຄອບແລະບໍຣິສຸດຊອບທັມ ຄົນທັງຫລາຍຈຶ່ງຍົກຍ້ອງນັບຖືເພິ່ນ ໃນບໍ່ຊ້າເມນແລງທອນໄດ້ກາຍເປັນເພື່ອນທີ່ໄວ້ວາງໃຈທີ່ສຸດ ດ້ວຍຄວາມອ່ອນໂຍນຄວາມລະມັດ



ເມືອງຂອງຄານວິນກາຍເປັນທີ່ຫລົບພັຍສຳລັບນັກປະຕິຮູບສາສນາທີ່ຢຸໂຣບຕະເວັນຕົກ ທຸກຄົນໄດ້ຮັບການຕ້ອນຮັບແລະການດູແລເປັນຢ່າງດີ ພວກເຂົາໄດ້ຕັ້ງກົກຮາກຢູ່ໃນເມືອງນີ້ ແລະເພິ່ນໄດ້ສນອງຄຸນຂອງເມືອງນີ້ດ້ວຍການຊ່ອຍກັນເຮັດໃຫ້ຈະເຣີນຮຸ່ງເຮືອງດ້ວຍຄວາມສາມາດ ດ້ວຍການສຶກສາທີ່ເພິ່ນມີແລະດ້ວຍຄວາມຂຍັນຂັນແຂງ ບັນດາຄົນເຫລົ່ານີ້ເຊັ່ນ ຈອນ ນັອກ ນັກປະຕິຮູບຜູ້ກ້າຫານຈາກສະກັອດແລນ ພວກພິວຣິຕັນຈາກອັງກິດຈຳນວນນຶ່ງ ພວກໂປເຕສແຕນຈາກຮອນແລນແລະສະເປນ ແລະຮິວໂກນັອດຈາກຝຣັ່ງເສດ ໄດ້ພາກັນຖືຄົບເພີງແຫ່ງຄວາມຈິງເພື່ອຈູດໄຟຂັບໄລ່ຄວາມມືດຈາກບ້ານເກີດເມືອງນອນຂອງຕົນເອງ

ໃນປະເທດເນີເທີແລນ ເມນໂນ ຊິມມອນ (ຄ.ສ. 1496 - 1561) ເພິ່ນເປັນພຣະຈາກດັສໄຟຣສແລນທີ່ປະກາດບໍ່ຍອມກ່ຽວຂ້ອງກັບຄຣິສະຕະຈັກຄາທໍລິກ ແລະເຂົ້າຮ່ວມກັບພວກແບັບຕິສເປັນຜູ້ທີ່ສອນເນັ້ນຄວາມສເມີພາບໃນການປົກຄອງຂອງສະມາຊິກໃນຄຣິສະຕະຈັກໃຫ້ສະຕີມີສິດທີເທົ່າທຽມກັບຊາຍໃນການນະມັດສະ ການ ແລະເນັ້ນການມີຊີວິດຢູ່ຢ່າງທັມມະດາ ກິນຢູ່ງ່າຍໆ ໃນຊ່ວງສັດຕະວັດທີ່ 18 ກຸ່ມນີ້ມີຈຳນວນຫລວງຫລາຍແລະກໍມີອິດທິພົນຫລາຍໃນຮອນແລນ ປັດຈຸບັນພວກເມນໂນກໍຍັງມີຫລົງເຫລືອຢູ່ສ່ວນໃຫຍ່ຈະອາສັຍຢູ່ໃນຣັດເພນຊິນວາເນັຽໃນສະຫະຣັດອາເມຣິກາ

ໃນປະເທດເດັນມາກກໍມີນັກປະຕິຮູບເກີດຂຶ້ນເຊັ່ນກັນ ຄືຮານ ທອນເຊັນ (ຄ.ສ. 1494-1561) ຜູ້ໄດ້ຊື່ວ່າເປັນ "ລູເຕີແຫ່ງເດັນມາກ" ເພິ່ນໄດ້ຮັບອິດທິພົນຈາກມາຕິນ ລູເຕີ ຄັ້ງທີ່ເດີນທາງໄປສຶກສາໃນເຢຣະມັນ ເມື່ອກັບໄປເດັນມາກແລ້ວກໍໄດ້ທຳງານເປັນອຸນຸສາດທຳງານຢູ່ໃນພຣະຣາຊວັງຂອງພຣະເຈົ້າເຟຣເດີຣິດ 1 ທາວເຊນແລະຜູ້ຕິດຕາມໄດ້ຂຽນບົດຄວາມວ່າດ້ວຍການກັບໃຈໃໝ່ 43 ບົດຄວາມດ້ວຍກັນ

ໃນສະວີເດັນກໍມີນັກປະຕິຮູບໂດຍສິດຄົນນຶ່ງຂອງລູເຕີ ຄືໂອລາບ ເພຕຣີ (ຄ.ສ. 1493-1552) ເພິ່ນມີຄວາມເຊື່ອໃນຄຳສອນຂອງລູເຕີຫລາຍ ຈົນກາຍເປັນຜູ້ປຸ່ງນຄວາມເຊື່ອຂອງຊາວສະວີເດັນທີ່ມີຜູ້ຕິດຕາມຢ່າງຫລວງຫລາຍ

ເພື່ອທີ່ຈະໃຫ້ພວກເຢຊູອິດມີອຳນາດຫລາຍຍິ່ງຂຶ້ນ ຝ່າຍຂອງສັນຕະປາປາໄດ້ປະກາດໃຫ້ຕັ້ງສາສນາສຳລັບພິພາກສາລົງໂທດຄົນນອກສາສນາອີກ ບັນດາຜູ້ປົກຄອງບ້ານເມືອງທີ່ນັບຖືສາສນາຂອງໂຣມໄດ້ຕັ້ງສາສນານີ້ຂຶ້ນອີກ ເມື່ອພວກນອກສາສນາກະທຳຜິດ ສານນີ້ຈະພິພາກສາລົງໂທດຈັບໄປຂັງໄວ້ໃນຫ້ອງມືດໃຕ້ດິນ ໃນຫລາຍປະເທດປະຊາຊົນຫລາຍພັນຫລາຍໝື່ນຄົນທີ່ເປັນຜູ້ມີກຽດຊື່ສຽງຂອງຊາດພວກທີ່ມີສະຕິປັນຍາຫລັກແຫລມແລະມີການສຶກສາສູງຖືກຂ້າຕາຍຫລືໜີໄປຢູ່ໃນດິນແດນອື່ນ (ເບິ່ງພາກຜນວກ)

## ຊັຍຊະນະແຫ່ງການປະຕິຮູບສາສນາ

ນີ້ຄືວິທີການທີ່ໂຣມໃຊ້ເປັນເຄື່ອງມືທຳລາຍແສງສວ່າງແຫ່ງການປະຕິຮູບສາສນາ ເພື່ອນຳອະວິຊາຄືຄວາມບໍ່ຮູ້ແລະການເຊື່ອໃນສິ່ງທີ່ຜິດຂອງຍູກມືດກັບຄືນມາອີກ ແຕ່ດ້ວຍພຣະພອນຂອງພຣະເຈົ້າແລະການທຳງານຢ່າງໜັກຂອງຜູ້ສອນສາສນາທີ່ພຣະອົງຊົງເລືອກສັນໄວ້ໃຫ້ທຳການທຳງານແທນລູເຕີ ຄວາມເຊື່ອໂປເຕສແຕນຈຶ່ງບໍ່ຖືກທຳລາຍບໍ່ໃຊ້ເພາະຍຸດໂທປະກອນຂອງພວກເຈົ້ານາຍ ແຕ່ເນື່ອງຈາກຊາດທີ່ດ້ອຍອຳນາດທີ່ສຸດກັບເປັນປ້ອມປະການທີ່ໝັ້ນຄົງ ເມືອງນ້ອຍໆ ເຊັ່ນເມືອງເຈນີວາແລະຮອນແລນໄດ້ຕໍ່ສູ້ກັບຄວາມທາລຸນໂຫດຮ້າຍຂອງສະເປນ ປະເທດສະວີເດນຈຶ່ງໄດ້ຢູ່ໃນຖິ່ນທຸລະກັນດານເປັນປະເທດທີ່ນຳຊັຍຊະນະມາສູ່ການປະຕິຮູບສາ ສນາ

ເກືອບສາມສິບປີທີ່ຄານວິນໄດ້ເຮັດການປະກາດສາສນາໃນເມືອງເຈນີວາເຮັດໃຫ້ການປະຕິຮູບສາສນາຈະເຣີນຮຸ່ງເຮືອງໄປທົ່ວຢຸໂຣບ ເຖິງແມ່ນວ່າຄານວິນຈະເປັນຜູ້ນຳ ແຕ່ກິຈການຂອງເພິ່ນແມ່ນວ່າຈະດີຈົນຫາຂໍ້ບົກຜ່ອງບໍ່ໄດ້ຫລີກຫລັກຄຳສອນຂອງເພິ່ນຈະຖືກຕ້ອງສເມີໄປ ແຕ່ເນື່ອງຈາກເພິ່ນເປັນເຄື່ອງມືທີ່ພຣະເຈົ້າຊົງເລືອກໃຊ້ໃຫ້ເຜີຍແຜ່ຄວາມຈິງທີ່ມີຄວາມສຳຄັນເປັນພິເສດ ເພື່ອປົກປ້ອງຄວາມເຊື່ອໂປເຕສແຕນໃຫ້ຕັ້ງໄວ້ໝັ້ນຄົງ ບໍ່ໃຫ້ສາສນາຖືກທຳລາຍເມື່ອສັນຕະປາປາກັບມີອຳນາດອີກ ເພື່ອສົ່ງເສີມໃຫ້ຄຣິສະຕະຈັກມີການປະຕິຮູບຟື້ນຟູໃໝ່ເພື່ອຈະມີຊີວິດບໍຣິສຸດແລະງ່າຍດາຍ

ຈາກເມືອງເຈນີວາ ທັງສິ່ງພິມແລະບັນດາຜູ້ສອນສາສນາທັງຫລາຍໄດ້ອອກໄປເຜີຍແຜ່ຫລັກຄວາມເຊື່ອຂອງການປະຕິຮູບສາສນາ ພວກທີ່ຖືກກົດຂີ່ຂົ່ມເຫງໃນທຸກໆ ປະເທດໄດ້ຮັບຄຳແນະນຳສັ່ງສອນແລະໄດ້ຮັບການໜູນໃຈເປັນຢ່າງຫລາຍ



ລະວັງ ແລະຄວາມລະອຽດອ່ອນຂອງເພິ່ນ ເປັນສິ່ງໜູນໃຈແລະເພີ່ມກຳລັງແກ່ລູເຕີຫລາຍຍິ່ງຂຶ້ນ

ອົອກສະເບີກໄດ້ຖືກກຳນົດໃຫ້ເປັນສະຖານທີ່ພິຈາຣະນາກວດສອບ ແລະນັກປະຕິຮູບຕ້ອງເດີນທາງດ້ວຍຕີນໄປທີ່ນັ້ນ ບັນດາເພື່ອນຂອງເພິ່ນຢ້ານວ່າເພິ່ນຈະຖືກລອບຂ້າໃນລະວ່າງທາງຈຶ່ງຂໍຮ້ອງບໍ່ໃຫ້ລູເຕີສ່ຽງພັຍເດີນທາງໄປໃນຄັ້ງນີ້ ແຕ່ລູເຕີກ່າວວ່າ "ຂ້າພະເຈົ້າເປັນເໝືອນຜູ້ປະກາດພຣະທັມເຢເຣມີ ບຸຣຸດຜູ້ຕໍ່ສູ້ດີ້ນຮົນແລະໂຕ້ແຍ່ງຍິ່ງພວກເຂົາຂູ່ຂ້າພະເຈົ້າຫລາຍເທົ່າໃດ ຂ້າພະເຈົ້າກໍຍິ່ງມີຄວາມຍິນດີຫລາຍເທົ່ານັ້ນ ພວກເຂົາໄດ້ທຳລາຍກຽດຕິຍົດແລະຊື່ສຽງຂອງຂ້າພະເຈົ້າແລ້ວແຕ່ພວກເຂົາບໍ່ສາມາດທຳລາຍຈິດວິນຍານຂອງຂ້າພະເຈົ້າໄດ້ຜູ້ທີ່ປາຖນາຈະປະກາດພຣະທັມຂອງພຣະຄຣິດໃຫ້ແກ່ມະນຸດໂລກຕ້ອງພ້ອມທີ່ຈະຜະເຊີນກັບຄວາມຕາຍສເມີ"

ຜູ້ແທນຂອງສັນຕະປາປາມີຄວາມເພິ່ງພໍໃຈຫລາຍ ເມື່ອໄດ້ຮູ້ຂ່າວວ່າລູເຕີໄດ້ເດີນທາງໄປເຖິງເມືອງອົອກສະເບີກ ບັດນີ້ຄົນນອກຮີດຜູ້ກໍ່ເຣື່ອງຫຍຸ້ງຍາກທີ່ຄົນທົ່ວໂລກໃຫ້ຄວາມສົນໃຈເບິ່ງເໝືອນຈະຕົກຢູ່ພາຍໃຕ້ອຳນາດຂອງສັນຕະປາປາແລ້ວເພິ່ນຈະໜີໄປບໍ່ໄດ້ ຂນະຜູ້ແທນຕັ້ງໃຈວ່າຈະບັງຄັບໃຫ້ລູເຕີເລີກຖອນສິ່ງທີ່ເຄີຍສັ່ງສອນຫລືຫາກເພິ່ນເຮັດເຣື່ອງນີ້ບໍ່ສຳເຮັດເຂົາຈະນຳລູເຕີໄປທີ່ກຸງໂຣມໃຫ້ຮັບໂທດເຊັ່ນດຽວກັບເຈີໂຣມແລະຮັດ ເພາະສະນັ້ນຈຶ່ງໃຊ້ໃຫ້ພັກພວກຂອງຜູ້ແທນເກັ່ງກ່ອມລູເຕີໃຫ້ໄປພົບເພິ່ນໂດຍບໍ່ມີການຮັບຮອງຄວາມປອດພັຍໃຫ້ເຊື່ອໃນຄວາມປານີຂອງເພິ່ນແຕ່ລູເຕີປະຕິເສດທີ່ຈະເຮັດຕາມເພິ່ນຈະບໍ່ຍອມໄປພົບທູດຂອງສັນຕະປາປາເປັນເດັດຂາດ ຈົນກວ່າຈະໄດ້ຮັບເອກກະສານທີ່ສະແດງວ່າຈະກະພັດຈະຄຸ້ມຄອງເພິ່ນໃຫ້ໄດ້ຮັບຄວາມປອດພັຍ

ນີ້ເປັນອຸບາຍ ຜູ້ແທນຂອງສັນຕະປາປາຈຶ່ງວາງແຜນທີ່ຈະເອົາຊະນະລູເຕີໂດຍສະແດງຄວາມສຸພາບອ່ອນໂຍນຕໍ່ເພິ່ນ ພຍາຍາມສະແດງຄວາມເປັນມິດຕໍ່ລູເຕີແຕ່ເພິ່ນຕ້ອງຍອມຢູ່ພາຍໃຕ້ອຳນາດຂອງຄຣິສຕະຈັກແລະໃຫ້ຍອມເຮັດຕາມໂດຍບໍ່ໂຕ້ແຍ່ງຫລືຖາມຄຳຕອບຂອງລູເຕີໄດ້ສະແດງໃຫ້ເຫັນເຖິງຄວາມເຄົາຣົບທີ່ເພິ່ນມີຕໍ່ຄຣິສຕະຈັກ ຄວາມປາຖນາຈະຮູ້ຄວາມຈິງເພິ່ນພ້ອມທີ່ຈະຊີ້ແຈງຄຳສອນຂອງເພິ່ນແກ່ຜູ້ທີ່ຂັດຂວາງແລະມອບຫລັກຄວາມເຊື່ອໃຫ້ແກ່ມະຫາວິທະຍາລັຍທີ່ສຳ

ຄັນ ຫລາຍແຫ່ງທີ່ພິຈາຣະນາຕັດສິນວ່າຄຳສອນຂອງເພິ່ນນັ້ນຖືກຫລືຜິດ ແຕ່ເພິ່ນບໍ່ເຫັນດ້ວຍຕໍ່ຄຳຮຽກຮ້ອງຂອງບັນດາພຣະຄາດິນັນທີ່ໃຫ້ເພິ່ນຍົກເລີກຄຳສອນຂອງເພິ່ນໂດຍບໍ່ໄດ້ພິສູດກ່ອນມີອັນໃດຜິດ

ຄຳຕອບດຽວທີ່ລູເຕີໄດ້ຮັບກໍຄື "ຈົ່ງຍົກເລີກຄຳສອນ ຈົ່ງຍົກເລີກຄຳສອນ" ນັກປະຕິຮູບສາສນາໄດ້ສະແດງໃຫ້ເຫັນວ່າການກະທຳຂອງເພິ່ນມີພຣະຄັມພີສນັບສນູນເພິ່ນບໍ່ອາດທີ່ຈະລະຖິ້ມຄວາມຈິງໄດ້ ຜູ້ແທນຂອງສັນຕະປາປາບໍ່ສາມາດຫາເຫດຜົນມາກ່າວໂຕ້ແຍ່ງລູເຕີໄດ້ ຈຶ່ງເວົ້າຕິຕຽນເຢາະເຢີ້ຍຖາກຖາງແລະເວົ້າຫວ່ານລ້ອມລູເຕີດ້ວຍການອ້າງອີງ ເຄົານັບທຳນຽມປະເພນີທີ່ກະທຳສືບຕໍ່ກັນມາແລະຖ້ອຍຄຳຂອງສັນຕະປາປາ ຈົນລູເຕີບໍ່ມີໂອກາດທີ່ຈະກ່າວ ໃນທີ່ສຸດລູເຕີຈຶ່ງຂໍອະນຸຍາດໃຫ້ເພິ່ນໂຕ້ຕອບເປັນຂໍ້ຂຽນແທນຄຳເວົ້າຢ່າງບໍ່ຄ່ອຍຈະເຕັມໃຈ

ໃນຈົດໝາຍທີ່ຂຽນເຖິງເພື່ອນຄົນນຶ່ງເພິ່ນຂຽນວ່າ "ຂໍ້ຄວາມອັນໃດທີ່ຂຽນລົງເປັນລາຍລັກອັກສອນອາດຈະຖືກນຳໄປໃຫ້ຜູ້ອື່ນພິຈາຣະນາ ປະການທີ່ສອງຄົນຂຽນມີໂອກາດດີທີ່ຈະເຮັດໃຫ້ເກີດຄວາມຢ້ານກົວ ຖ້າບໍເກີດກັບຄວາມສຳນຶກຜິດຊອບກັບຄວາມຍິ່ງຈອງຫອງແລະຖ້ອຍຄຳຂົ່ມຂູ່ອັນບໍ່ເປັນສາຣະ ຫລືອີກໃນນຶ່ງເພິ່ນກໍຈະມີອຳນາດເໜືອນຄົນອື່ນໂດຍການໃຊ້ພາສາສະແດງອຳນາດເໜືອຜູ້ອື່ນຂອງເພິ່ນ"

ໃນການສອບສວນຄັ້ງຕໍ່ມາ ລູເຕີໄດ້ນຳສເນີຂອງເພິ່ນຢ່າງຊັດເຈນ ຮວມຮັດແລະມີເຫດມີຜົນສນັບສນູນດ້ວຍພຣະຄັມພີ ພາຍຫລັງທີ່ໄດ້ອ່ານເອກກະສານນີ້ດ້ວຍສຽງດັງແລ້ວ ເພິ່ນກໍນຳເອກກະສານສເນີຕໍ່ຄາດິນັນຜູ້ສະແດງອາການຢຽບຢ່ຳບໍ່ຍອມພິຈາຣະນາເອກກະສານນັ້ນ ປະກາດວ່າເປັນພຽງແຕ່ຂໍ້ດຽວທີ່ໄຮ້ສາຣະແລະການອ້າງພຣະຄັມພີກໍບໍ່ຕົງປະເດັນ ຂນະນັ້ນລູເຕີຜະເຊີນກັບພຣະຄາດິນັນຜູ້ຍິ່ງຍະໂສດ້ວຍຕົນເອງລະຫວ່າງເຄົານັບທຳນຽມກັບຄຳສອນຂອງຄຣິສຕະຈັກແລະກ່າວຄຳເວົ້າລົບລ້າງຂໍ້ສເນີຂອງເພິ່ນ

ພຣະຄາດິນັນບໍ່ສາມາດຄວບຄຸມຕົນເອງໄດ້ແລະຮ້ອງຂຶ້ນມາດ້ວຍຄວາມຄຽດແຄ້ນ "ຈົ່ງຖອນຄຳເວົ້າບໍ່ດັ່ງນັ້ນເຮົາຈະສົ່ງເຈົ້າໄປກຸງໂຣມ" ແລະໃນທີ່ສຸດທ່ານຜູ້ນັ້ນກໍປະກາດດ້ວຍນ້ຳທີ່ຮ້າຍກາດແລະແກ່ອຳນາດວ່າ "ຈົ່ງຖອນຄຳເວົ້າດຽວນີ້ບໍ່ດັ່ງນັ້ນກໍຢ່າກັບມາອີກ"



ຄວາມຈິງໄວ້ເພື່ອຜະເຊີນຕໍ່ການຖືກຈັບຂັງຢູ່ໃນເຄື່ອງຄຶງຕີນແລະແຂນ ຫລືຖືກຂັງໄວ້ໃນຄຸກໃຕ້ດິນຫລືຖືກເຜົາທັງເປັນລັດທິເຢຊູອິດໄດ້ສອນຄົນທັງຫລາຍທີ່ເຊື່ອຖືດ້ວຍຄຳສອນທີ່ເຮັດໃຫ້ຄັ່ງໃນສາສນາວ່າພວກເຂົາສາມາດທີ່ຈະທົນຕໍ່ສິ່ງທີ່ເປັນອັນຕຣາຍເຫລົ່ານີ້ໄດ້ເຊັ່ນກັນ ພວກເຂົາໄດ້ຕໍ່ສູ້ຂັດຂວາງອິດທານຸພາບຂອງຄວາມຈິງດ້ວຍອາວຸດແຫ່ງການຫລອກລວງ ບໍ່ມີອາຊຍາກັມໃດທີ່ຊົ່ວຮ້າຍເກີນກວ່າທີ່ຄົນກຸ່ມນີ້ຈະກະທຳບໍ່ໄດ້

ບໍ່ມີການຫລອກລວງໃດທີ່ໃຫຍ່ເກີນກວ່າທີ່ພວກເຂົາຈະປະພຶດແລະບໍ່ມີການໃຊ້ວິທີປອມແປງໃດໆ ທີ່ຈະເຮັດບໍ່ໄດ້ຈຸດມຸ້ງໝາຍຂອງພວກເຢຊູອິດກໍຄືການທຳລາຍໂປເຕສແຕນໃຫ້ສິ້ນຊາກແລະສ້າງຄວາມຍິ່ງໃຫຍ່ແກ່ສັນຕະປາປາອີກເທື່ອນຶ່ງ

ພວກເຢຊູອິດສວມເສື້ອຜ້າຂອງນັກພົດໄປທ່ຽວຢ້ຽມຢາມນັກໂທດໃນຄຸກແລະຄົນເຈັບປ່ວຍທີ່ໂຮງໝໍຊ່ອຍຮັກສາປິ່ນປົວຜູ້ທີ່ເຈັບປ່ວຍແລະຊ່ອຍເຫລືອຄົນຍາກຈົນອ້າງວ່າມາກະທຳດີໃນນາມຂອງພຣະເຢຊູຜູ້ອອກໄປສ້າງຄວາມດີ ແຕ່ສິ່ງທີ່ເຊື່ອງຊ້ອນຢູ່ພາຍໃນຂອງພວກເຂົາຄືຄວາມເປັນອາຊຍາກອນແລະແຜນການອັນຊົ່ວຮ້າຍ

ບາດຫລວງຄະນະນີ້ຍຶດຫລັກສຳຄັນຢ່າງນຶ່ງຄືການກະທຳໃດໆບໍ່ວ່າຈະເປັນການກະທຳທີ່ບໍ່ຖືກຕ້ອງ ແຕ່ຖ້າເກີດຜົນປໂຍດກໍເປັນສິ່ງຫາກໍກະທຳການເວົ້າມຸສາການລັບຊັບການລ່ວງລະເມີດຄຳປະຕິຍານຕົນແລະການລອບຂ້າຄົນ ເປັນສິ່ງທີ່ຄວນເຮັດໄດ້ ຫາກເຮັດເພື່ອຄຣິສະຕະຈັກ ພວກເຢຊູອິດປອມແປງດ້ວຍວິທີຕ່າງໆ ເພື່ອທີ່ຈະປູທາງໃຫ້ພວກຕົນເຂົ້າໄປກ່ຽວຂ້ອງກັບເຣື່ອງບ້ານເມືອງພຍາຍາມຂຍັບຖານະຕົນເອງໃຫ້ຂຶ້ນເປັນທີ່ປຶກສາຂອງກະສັດທັງຫລາຍແລະຫາວິທີດຳເນີນນະໂຍບາຍຂອງຊາດຍອມເປັນທາດຮັບໃຊ້ກໍເພື່ອເປັນສາຍລັບຈັບຕາເບິ່ງການກະທຳຂອງນາຍສ້າງວິທະຍາລັຍສຳລັບລູກຫລານຂອງເຈົ້ານາຍແລະຂຸນນາງທັງຫລາຍສ້າງໂຮງຮຽນສຳລັບລູກຫລານຂອງປະຊາຊົນທັມມະດາ ສ່ວນລູກຫລານຂອງພໍ່ແມ່ທີ່ເປັນຜູ້ນັບຖືໂປເຕສແຕນຖືກນຳໄປເຂົ້າ ເຂົ້າຮ່ວມພິທີກັມຂອງຜູ້ຕິດຕາມສັນຕະປາປາ ດັ່ງນັ້ນອິສາຣະພາບໃນການນະມັດສະການພຣະເຈົ້າທີ່ພໍ່ແມ່ໄດ້ຕໍ່ສູ້ດີ້ນຣົນຫາມາດ້ວຍການທຳງານຢ່າງໜັກ ແລະດ້ວຍເລືອດເນື້ອຈຶ່ງຕ້ອງມາສູນສລາຍໄປດ້ວຍລູກຫລານຂອງພວກເຂົາ ຢູ່ໃສກໍຕາມທີ່ມີພວກເຢຊູອິດຜ່ານໄປປະຊາຊົນກໍຫັນກັບມານັບຖືສາສນາຂອງໂຣມອີກ

ຕິຮູບແລ້ວກໍຈິງ ການບັງເກີດໃໝ່ຕ້ອງເກີດຂື້ນຈິດໃຈໂດຍອາສັຍຣິດເດດຂອງພຣະວິນຍານບໍຣິສຸດ ບໍ່ແມ່ນໂດຍຄໍາປະກາດຂອງທີ່ປະຊຸມ ແມ່ນວ່າປະຊາຊົນໃນເມືອງເຈນີວາໄດ້ປົດປ່ອຍຕົນເອງໃຫ້ພົ້ນຈາກອໍານາດຂອງໂຣມແລ້ວ ພວກເຂົາຍັງບໍ່ພ້ອມທີ່ຈະລະຖິ້ມຄວາມຊົ່ວທີ່ປະພຶດມາຕລອດໄລຍະເວລາທີ່ຢູ່ພາຍໃຕ້ອໍານາດນັ້ນ

ໃນນາມຂອງພຣະຜູ້ເປັນເຈົ້າ ຟາເຣນໄດ້ຂໍໃຫ້ຄານວິນຜູ້ເຜີຍແຜ່ສາສນາໜຸ່ມໄດ້ທໍາງານທີ່ເມືອງເຈນີວາຕໍ່ໄປ ຄານວິນຕົກໃຈຢ້ານເພາະເພິ່ນບໍ່ກ້າທີ່ຈະຕິດຕໍ່ກ່ຽວຂ້ອງກັບຊາວເມືອງເຈນີວາທີ່ມີຄວາມກ້າຫານແລະມີອາຣົມຮຸນແຮງເຊັ່ນນັ້ນ ເພິ່ນຢາກຈະຫາບ່ອນທີ່ສງົບສໍາລັບສຶກສາ ແລະໃນສະຖານທີ່ນັ້ນເພິ່ນຈະໃຫ້ໂຮງພິມໜັງສືທີ່ເພິ່ນຂຽນແລະຈັດຕັ້ງຄຣິສະຕະຈັກຫລາຍແຫ່ງເພື່ອເທສນາສັ່ງສອນບັນດາຜູ້ເຊື່ອຖືທັງຫລາຍ ຄານວິນບໍ່ກ້າທີ່ຈະປະຕິເສດຄໍາຂໍຮ້ອງຂອງຟາເຣນເບິ່ງເໝືອນວ່າ "ພຣະຫັດຂອງພຣະເຈົ້າຍື່ນລົງມາຈາກສວັນແລະຍຶດເພິ່ນໄວ້ແໜ້ນຈົນບໍ່ອາດຈະໜີຈາກເມືອງທີ່ເພິ່ນບໍ່ຢາກຈະຢູ່ແຫ່ງນີ້

## ການບັງຄັບຂູ່ເຂັນ

ການບັງຄັບຂູ່ເຂັນຂອງສັນຕະປາປາມີຕໍ່ຊາວເມືອງເຈນີວາ ແລ້ວເມືອງນ້ອຍໆ ແຫ່ງນີ້ຈະຕໍ່ຕ້ານສັນຕະປາປາຜູ້ມີອໍານາດບັງຄັບກະສັດແລະຈັກກະພັດຢູ່ໃຕ້ອໍານາດໄດ້ຢ່າງໃດ

ພາຍຫລັງທີ່ຊັຍຊະນະເທື່ອທໍາອິດຂອງການປະຕິຮູບສາສນາໄດ້ຜ່ານພົ້ນໄປແລ້ວ ໂຣມໄດ້ໃຊ້ອໍານາດຢ່າງໃໝ່ບັງຄັບໂດຍມຸ້ງຫວັງຈະທໍາລາຍການປະຕິຮູບສາສນາ ໄດ້ມີຄໍາສັ່ງໃຫ້ຕັ້ງຄະນະເຢຊູອິດຂື້ນມາອັນເປັນຄະນະບາດຫລວງທີ່ໂຫດຮ້າຍທີ່ສຸດ ປັດສະຈາກສິລທັມແລະມີອໍານາດຫລາຍທີ່ສຸດໃນບັນດາບາດຫລວງທຸກໆຄະນະຂອງໂຣມເປັນຜູ້ທີ່ມີຄວາມຕາຍດ້ານຕໍ່ຄວາມຮັກບໍ່ມີຄວາມສໍານຶກຜິດຊອບໃດໆ ບໍ່ຮູ້ຈັກກົດຂໍ້ບັງຄັບແລະບໍ່ມີຄວາມສໍາພັນໃດໆ ນອກຈາກກົດຂໍ້ບັງຄັບແລະຄວາມສໍາພັນພາຍໃນຄະນະຂອງຕົວເອງ (ເບິ່ງພາກຜນວກ)

ຂ່າວປະເສີດຂອງຄຣິສະຕະຈັກເຮັດໃຫ້ຄົນທັງຫລາຍທີ່ຕິດຕາມພຣະອົງສາມາດຜະເຊີນຕໍ່ພັຍອັນຕຣາຍແລະທົນຕໍ່ຄວາມລໍາບາກໄດ້ ບໍ່ມີຄວາມຮູ້ສຶກຢ້ານກົວຕໍ່ຄວາມໜາວ ຄວາມຫິວໂຫຍ ຫານທໍາງານໜັກ ແລະຄວາມຍາກຈົນເພື່ອເຊີດຊູ



ນັກປະຕິຮູບແລະເພື່ອນຂອງເພິ່ນຈຶ່ງພາກັນໄປຈາກທີ່ປະຊຸມທັນທີ ການກະທໍາເຊັ່ນນີ້ເທົ່າກັບປະກາດຢ່າງຊັດເຈນວ່າເພິ່ນຈະບໍ່ຖອນຄໍາເວົ້າເປັນເດັດຂາດ ສິ່ງນີ້ບໍ່ແມ່ນເປັນເປົ້າໝາຍຂອງພຣະຄາດິນັນຄາດຄິດໄວ້ ບັດນີ້ກໍເຫລືອແຕ່ຜູ້ສນັບສນູນຂອງຕົນເທົ່ານັ້ນ ຕ່າງກໍເບິ່ງໜ້າກັນດ້ວຍຄວາມລະອາຍໃຈບໍ່ຄາດຄິດວ່າແຜນການຈະຫລົມແຫລວເຊັ່ນນີ້

ການປະຊຸມເທື່ອນີ້ນັບວ່າເປັນໂອກາດດີທີ່ເຮັດໃຫ້ຜູ້ທີ່ມາປະຊຸມໄດ້ປຽບທຽບລະຫວ່າງບຸກຄົນທັງສອງ ແລະຕັດສິນໃຈເຖິງທາດແທ້ທີ່ທັງສອງໄດ້ສະແດງອອກມາພ້ອມທັງຄວາມເຂັ້ມແຂງແລະຄວາມຈິງໃຈຕໍ່ຖານະຂອງທັງສອງຝ່າຍວ່າແຕກຕ່າງກັນຢ່າງໃດ ຝ່າຍນັກປະຕິຮູບສາສນານັ້ນດໍາລົງຊີວິດຢ່າງງ່າຍດາຍ ອ່ອນນ້ອມຖ່ອມຕົນມັນຄົງໜັກແໜ້ນແລະມີຄວາມຈິງ ສ່ວນຜູ້ແທນຂອງສັນຕະປາປານັ້ນຖືຕົວວ່າເປັນຄົນສໍາຄັນວາງອໍານາດບໍ່ມີເຫດຜົນບໍ່ເຄີຍອ້າງຂໍ້ພຣະຄັມພີໃນການໂຕ້ແຍ່ງແຕ່ຍັງຮ້ອງຢ່າງຮ້າຍກາດວ່າ "ຈົ່ງຖອນຄໍາເວົ້າ ບໍ່ດັ່ງນັ້ນຈະຖືກສົ່ງໄປລົງໂທດທີ່ກຸງໂຣມ"

## ໜີຈາກເມືອງອ໊ອກສະເບີກ

ບັນດາເພື່ອນຂອງລູເຕີແນະນໍາວ່າ ເພິ່ນຄວນຈະກັບໄປເມືອງວິດເຕນເບີກໂດຍບໍ່ລໍຊ້າ ເພາະບໍ່ມີປໂຍດຢ່າງໃດທີ່ເພິ່ນຈະຢູ່ຕໍ່ໄປແລະເພິ່ນຄວນລະມັດລະວັງຕົວໃຫ້ດີ ລູເຕີເຮັດຕາມທີ່ເພື່ອນແນະນໍາໂດຍຂີ່ມ້າອອກຈາກອ໊ອກສະເບີກກ່ອນແຈ້ງພ້ອມດ້ວຍຜູ້ນໍາທາງພຽງຄົນດຽວຊຶ່ງຜູ້ພິພາກສາຈັດຫາໃຫ້ເພິ່ນດ້ວຍຢ້ານວ່າຈະເກີດພັຍອັນຕຣາຍ ເພິ່ນອອກເດີນທາງໄປຕາມຖນົນທີ່ມືດຂອງເມືອງ ເພາະບັນດາສັດຕຣູທີ່ໂຫດຮ້າຍວາງແຜນຄອຍຈ້ອງຫາໂອກາດທໍາລາຍເພິ່ນ ເປັນຊ່ວງເວລາແຫ່ງຄວາມກັງວົນແລະອະທິຖານດ້ວຍໃຈຮ້ອນຮົນ ເພິ່ນຂີ່ມ້າໄປເຖິງປະຕູເຫລັກທີ່ກໍາແພງເມືອງປະຕູຖືກເປີດອອກຕ້ອນຮັບເພິ່ນ ລູເຕີພ້ອມກັບຜູ້ນໍາທາງກໍຂີ່ມ້າອອກປະຕູໄປກ່ວາທີ່ພຣະຄາດິນັນຈະຮູ້ວ່າລູເຕີໜີອອກຈາກເມືອງເພິ່ນກໍເດີນທາງໄປໄກເກີນກວ່າພວກທີ່ກົດຂີ່ຂົ່ມເຫງຈະຕາມທັນ

ເມື່ອພຣະຄາດີນັນຊາບວ່າການຫລົບໜີຂອງລູເຕີ ກໍມີຄວາມແປກໃຈແລະຄຽດແຄ້ນຫລາຍ ເພາະພຣະອົງຫວັງວ່າຈະໄດ້ຮັບກຽດອັນຍິ່ງໃຫຍ່ໃນຄວາມໝັ້ນຄົງຂອງຕົນທີ່ສາມາດກຳຈັດຜູ້ກໍ່ຄວາມວຸ້ນວາຍໃນຄຣິສຕະຈັກໄດ້ໃນຈົດໝາຍທີ່ຂຽນໄປເຖິງເຟຣເດີຣິດຜູ້ໄດ້ຮັບການເລືອກໄວ້ແຫ່ງແຄວັນແຊັກໂຊນີ ພຣະອົງໄດ້ກ່າວປະນາມລູເຕີຢ່າງຮຸນແຮງ ແລະມີຄຳສັ່ງໃຫ້ເຈົ້າຊາຍເຟຣເດີຣິດ ສົ່ງລູເຕີໄປທີ່ກຸງໂຣມຫລືບໍ່ກໍເນຣະເທດເພິ່ນອອກຈາກແຄວັນແຊັກໂຊນີ

ໃນເວລານັ້ນເຈົ້າຊາຍເຟຣເດີຣິດມີຄວາມຮູ້ກ່ຽວກັບຫລັກຄຳສອນຂອງການປະຕິຮູບສາສນາພຽງເລັກນ້ອຍ ແຕ່ເພິ່ນກໍປະທັບໃຈໃນຄຳເວົ້າຂອງລູເຕີທີ່ໄດ້ກ່າວຢ່າງໜັກແໜ້ນແລະຊັດເຈນ ເຟຣເດີຣິດຈຶ່ງຮັບທີ່ຈະເປັນຜູ້ຄຸ້ມຄອງລູເຕີຈົນກວ່າຈະພິສູດໄດ້ວ່າ ເພິ່ນມີຄວາມຜິດໃນຈົດໝາຍທີ່ຂຽນຕອບໄປ ເຟຣເດີຣິດມີໃຈຄວາມ ວ່າ "ເພິ່ນໜ້າຈະພໍໃຈເພາະ ດຣ. ມາຕິນໄດ້ໄປພົບເພິ່ນທີ່ເມືອງອ໊ອກສະເບີກແລ້ວເຮົາບໍ່ຄິດວ່າເພິ່ນຈະບັງຄັບໃຫ້ຍົກເລີກຫລັກຄຳສອນໂດຍທີ່ບໍ່ໄດ້ເຮັດໃຫ້ໝັ້ນໃຈເຊື່ອວ່າຄຳສອນຂອງເພິ່ນນັ້ນຜິດແທ້ໆ ບັນດາຄົນທັງຫລາຍທີ່ມີຄວາມຮູ້ໃນເມືອງຂອງເຮົາບໍ່ມີໃຜຈັກຄົນບອກຂ້າພະເຈົ້າວ່າຫລັກຄຳສອນຂອງມາຕິນຜິດຫລັກສາສນາຫລືຂັດແຍ່ງຕໍ່ຄຳສອນຂອງຄຣິສະຕຽນ ຫລືເປັນຄຳສອນນອກຮີດ" ເຟຣເດີຣິດເຫັນວ່າງານການປະຕິຮູບສາສນານັ້ນເປັນສິ່ງຈຳເປັນ ເພິ່ນຮູ້ສຶກຊື່ນບານຢ່າງງຽບໆ ທີ່ອິດທິພົນຂອງສິ່ງທີ່ດີກວ່າບໍ່ເກີດຂຶ້ນໃນຄຣິສຕະຈັກ

ເວລາຜ່ານໄປພຽງປີດຽວ ນັບຕັ້ງແຕ່ລູເຕີໄດ້ເອົາຂໍ້ຄວາມທີ່ເພິ່ນປະກາດຂັດຄ້ານໄປຕິດໄວ້ທີ່ໂບດ ຂໍ້ຂຽນເຫລົ່ານັ້ນກໍໄດ້ຊັກຈູງໃຫ້ປະຊາຊົນທົ່ວທຸກທົ່ນທຸກແຫ່ງເກີດຄວາມສົນໃຈໃນພຣະຄຳພີອັນບໍຣິສຸດ ບໍ່ພຽງແຕ່ນັກສຶກສາທີ່ມາຈາກທົ່ວທຸກແຫ່ງຂອງປະເທດເຢຣະມັນເທົ່ານັ້ນທີ່ມາສຶກສາໃນມະຫາວິທະຍາລັຍ ແຕ່ເປັນນັກສຶກສາຈາກປະເທດອື່ນດ້ວຍ ບັນດາຊາຍໜຸ່ມເຫລົ່ານັ້ນທີ່ໄດ້ເຫັນເມືອງວິເຕນເບີກເປັນເທື່ອທຳອິດກໍ "ຍົກມືຂຶ້ນສູ່ສວັນແລະສັນລະເສີນພຣະເຈົ້າທີ່ພຣະອົງຊົງໃຫ້ແສງສວ່າງແຫ່ງຄວາມຈິງສ່ອງອອກມາຈາກເມືອງນີ້"

ແມ່ນລູເຕີຈະຫັນກັບຈາກຄຳສອນຜິດຂອງໂຣມັນ ແຕ່ກໍເປັນພຽງບາງສ່ວນເທົ່ານັ້ນ ເພິ່ນຂຽນວ່າ "ຂ້າພະເຈົ້າກຳລັງອ່ານຫລັກຄຳສອນຂອງສັນຕະປາປາແລະບໍ່



ປະຊຸມບັນດາພຣະຊັ້ນຜູ້ໃຫຍ່ ບາດຫລວງເຫລົ່ານັ້ນເຊື່ອງອາວຸດໄວ້ໃນເສື້ອຄຸມຕົວຂອງຕົນຕັດສິນໃຈວ່າຈະຂ້າຟາເຣນ ຝູງຊົນທີ່ໂກດເຄືອງເຝົ້າເບິ່ງໃຫ້ແນ່ໃຈວ່າເພິ່ນໜີອອກຈາກທີ່ປະຊຸມຈະຖືກຂ້າຕາຍແນ່ ແຕ່ຢ່າງໃດກໍຕາມພວກຕຸລາການແລະພວກກອງທະຫານທີ່ມີອາວຸດຄົບມືຊື່ງຢູ່ໃນທີ່ປະຊຸມດ້ວຍຊ່ອຍໃຫ້ເພິ່ນລອດພົ້ນອັນຕຣາຍຕອນເຊົ້າວັນໃໝ່ພວກເຂົາໄດ້ພາຟາເຣນຂ້າມທະເລສາບໄປຍັງສະຖານທີ່ອັນປອດພັຍ ດັ່ງນັ້ນການປະກາດຂ່າວປະເສີດໃນເຈນີວາເທື່ອທຳອິດຂອງເພິ່ນຈຶ່ງສິ້ນສຸດລົງ

ຕໍ່ຈາກຟາເຣນພຣະເຈົ້າຊົງເລືອກຜູ້ທີ່ຕໍ່າຕ້ອຍກວ່າເພິ່ນ ເພື່ອເປັນເຄື່ອງມືສຳລັບເພື່ອບົວລະບັດຮັບໃຊ້ພຣະອົງ ຊາຍໜຸ່ມຜູ້ທີ່ເປັນຜູ້ທີ່ມີບຸກຄະລິກລັກສະນະທັມມະດາຄົນນຶ່ງ ບໍ່ວ່າແຕ່ນັກປະຕິຮູບສາສນາດ້ວຍກັນກໍບໍ່ສົນໃຈໃນຕົວຂອງເພິ່ນພໍເທົ່າໃດ ແຕ່ເພິ່ນຈະເຮັດອັນໃດໄດ້ເພາະແມ່ນແຕ່ຟາເຣນກໍຍັງຖືກປະຕິເສດ "ແຕ່ພຣະເຈົ້າໄດ້ຊົງເລືອກເອົາສິ່ງທີ່ມະນຸດຖືວ່າໂງ່ນັ້ນ ເພື່ອຈະໃຫ້ຄົນສລາດອັບອາຍ ແລະໄດ້ຊົງເລືອກເອົາສິ່ງທີ່ມະນຸດອ່ອນກຳລັງ ເພື່ອໃຫ້ຄົນທີ່ມີກຳລັງຖືກອັບອາຍ" (1ກຣິນໂທ 1:27)

## ໂຟຣເມນໃນຖານະຄຣູໃຫຍ່

ໂຟຣເມນເລີ່ມທຳງານໃນຖານະຄຣູໃຫຍ່ທີ່ໂຮງຮຽນ ຄວາມຈິງທີ່ເພິ່ນສອນລູກສິດທີ່ໂຮງຮຽນພວກເຂົາຈະນຳໄປທ່ອງຈຳຢູ່ເຮືອນຂອງເຂົາດ້ວຍ ຕໍ່ມາພໍ່ແມ່ຂອງນັກຮຽນເຫລົ່ານັ້ນກໍໄດ້ມາຂໍໃຫ້ເພິ່ນອະທິບາຍພຣະຄັມພີໃຫ້ຟັງ ມີການແຈກໃບປິວແລະພຣະຄັມພີລ້າໆ ຕໍ່ມາຜູ້ຮັບໃຊ້ຄົນນີ້ກໍຕ້ອງຖືກບັງຄັບໃຫ້ໜີອອກຈາກເມືອງນີ້ ແຕ່ຄວາມຈິງທີ່ເພິ່ນສອນຍັງຝັງເລິກຢູ່ໃນຈິດໃຈຂອງປະຊາຊົນ ການປະຕິຮູບສາສນາໄດ້ເລີ່ມຝັງຮາກທີ່ນີ້ ພວກນັກເທດທັງຫລາຍໄດ້ກັບຄືນມາອີກ ໃນທີ່ສຸດກໍມີການນະມັດສະການຂອງນິກາຍໂປເຕສແຕນຂຶ້ນທີ່ເຈນີວາ

ປະຊາຊົນທົ່ວທັງເມືອງໄດ້ປະກາດຍອມຮັບການປະຕິຮູບສາສນາແລ້ວເມື່ອຄາລວິນເຂົ້າມາໃນເມືອງເຈນີວາ ຂນະນັ້ນເພິ່ນກຳລັງເດີນທາງໄປຍັງເມືອງບາເຊນແຕ່ຈຳເປັນຕ້ອງປ່ຽນທິດທາງຜ່ານເມືອງເຈນີວາ

ໃນການທີ່ແຫວະມາຢ້ຽມຢາມເມືອງເຈນີວາເທື່ອນີ້ຟາເຣນໄດ້ເຫັນພຣະຫັດຂອງພຣະເຈົ້າ ເຖິງແມ່ນວ່າປະຊາຊົນໃນເມືອງນີ້ຍອມຮັບຄວາມເຊື່ອທີ່ໄດ້ຮັບການປະ

ມະນຸດໄດ້ຮຽນຮູ້ເຖິງຫລັກການແຫ່ງສວັນ ເມື່ອຊາວຝຣັ່ງເສດບໍ່ຍອມຮັບຂອງປະທານແຫ່ງສວັນ ພວກເຂົາໄດ້ຫວ່ານເມັດພືດແຫ່ງຄວາມວິບັດ ຜົນທີ່ເກີດຂຶ້ນຢ່າງຫລີກລ້ຽງບໍ່ພົ້ນ ເນື່ອງຈາກການກະທຳຂອງເຂົາກໍຄືການປະຕິຫວັດແລະການປົກຄອງທີ່ສຍົດສຍອງ

ຟາເຣນຜູ້ກ້າຫານແລະມີໃຈຮ້ອນຮົນຖືກບັງຄັບໃຫ້ໜີອອກຈາກປະເທດບ້ານເກີດຂອງເພິ່ນໄປຢູ່ທີ່ປະເທດສະວິດເຊີແລນ ເຖິງປານນັ້ນເພິ່ນກໍຍັງມີອິດທິພົນເໜືອການປະຕິຮູບສາສນາໃນປະເທດຝຣັ່ງເສດດ້ວຍຄວາມຊ່ອຍເຫລືອຂອງຜູ້ພັດຖິ່ນຄົນອື່ນໆ ມີການແປໜັງສືຂອງນັກປະຕິຮູບສາສນາຊາວເຢຣະມັນເປັນພາສາຝຣັ່ງເສດ ແລະໄດ້ຈັດພິມພຣະຄັມພີພາສາຝຣັ່ງເສດ ແລະໜັງສືດັ່ງກ່າວເປັນຈຳນວນຫລວງຫລາຍຄົນຂາຍໜັງສືໄດ້ນຳໄປຈຳໜ່າຍຢ່າງແຜ່ຫລາຍ

ຟາເຣນໄດ້ເລີ່ມງານຂອງເພິ່ນໃນປະເທດສະວິດເຊີແລນຢ່າງຖ່ອມຕົວດ້ວຍການເປັນຄຣູເພື່ອບັງໜ້າແລະນຳເອົາຄວາມຈິງຂອງພຣະຄັມພີມາສອນດ້ວຍຄວາມລະມັດລະວັງ ມີຫລາຍຄົນເຊື່ອຖື ແຕ່ຖືກພວກບາດຫລວງໄດ້ຂັດຂວາງປະຊາຊົນໄດ້ເຊື່ອໃນສິ່ງທີ່ຜິດໆ ຖືກຍຸຍົງໃຫ້ຕໍ່ສູ້ຂັດຂວາງ ພວກບາດຫລວງກ່າວເຕືອນວ່າ "ນີ້ບໍ່ແມ່ນຂ່າວປະເສີດຂອງພຣະຄຣິດບໍ່ແມ່ນສິ່ງທີ່ຈະນຳສັນຕິສຸກມາໃຫ້ ແຕ່ເຮັດໃຫ້ເກີດສົງຄາມ"

ຟາເຣນໄດ້ເດີນທາງໄປຕາມໝູ່ບ້ານຕ່າງໆ ຕ້ອງທົນຕໍ່ຄວາມຫິວ ຄວາມໜາວແລະອ່ອນເພັຽ ທຸກຫົນທຸກແຫ່ງທີ່ເພິ່ນເດີນທາງໄປຕ້ອງຜະເຊີນຕໍ່ພັຍອັນຕຣາຍຢູ່ສເມີ ເພິ່ນເທສນາກາງຕລາດ ໃນໂບດຕ່າງໆ ບໍ່ວ່າແຕ່ເທິງທັມມາດໂບດຂອງໂຣມັນຄາທໍລິກ ຖືກຂົ່ມຂູ່ຕີເກືອບເສັຽຊີວິດຫລາຍຄັ້ງ ແຕ່ເພິ່ນກໍຍັງມຸ້ງໜ້າຕໍ່ໄປ ເພິ່ນໄດ້ເຫັນເມືອງແລ້ວເມືອງເລົ່າທີ່ເປັນຖານສຳຄັນຂອງສັນຕະປາປາໄດ້ເປີດປະຕູຕ້ອນ ຮັບຂ່າວປະເສີດ

ຟາເຣນມີຄວາມປາຖນາທີ່ຈະປູກຝັງມາຕຖານຂອງໂປເຕສແຕນໃນເມືອງເຈນີວາ ຖ້າເພິ່ນສາມາດຊະນະເມືອງນີ້ໄດ້ກໍຈະກາຍເປັນສູນກາງຂອງການປະຕິຮູບສາສນາໃນປະເທດຝຣັ່ງເສດ ສະວິດເຊີແລນ ອິຕລີ ປະຊາຊົນອີກຫລາຍເມືອງແລະຫລາຍໝູ່ບ້ານທີ່ຢູ່ຮອບໆ ຈະໄດ້ຮັບປໂຍດຢ່າງຫລາຍ

ຟາເຣນໄດ້ເຂົ້າໄປໃນເມືອງເຈນີວາພ້ອມກັບເພື່ອນຄົນນຶ່ງ ແຕ່ເພິ່ນໄດ້ຮັບອະນຸຍາດໃຫ້ເທສນາພຽງສອງເທື່ອເທົ່ານັ້ນ ບາດຫລວງໄດ້ຮຽກເພິ່ນເຂົ້າໄປໃນການ



ຮູ້ວ່າອົງສັນຕະປາປາເປັນປໍລະປັກຂອງພຣະຄຣິດຫລືວ່າເປັນສາວົກທີ່ຕໍ່ຕ້ານເພາະຫລັກຄຳສອນເຫລົ່ານັ້ນໄດ້ກ່າວເຖິງພຣະຄຣິດແລະການສິ້ນພຣະຊົນເທິງໄມ້ກາງແຂນຂອງພຣະອົງຄາດເຄື່ອນຈາກຄວາມເປັນຈິງ"

ແຮ່ງຫລາຍວັນທາງກຸງໂຣມ ແລະສັດຕຣູຂອງລູເຕີທີ່ມົວເມົາໃນສາສນາກໍແຮ່ງໂກດເຄືອງເພາະການໂຈມຕີຂອງລູເຕີ ຈົນກະທັ່ງບັນດາສາດສະດາຈານຕາມມະຫາວິທະຍາລັຍຕ່າງໆ ໃນໂຣມໄດ້ປະກາດວ່າຖ້າໃຜຂ້າພຣະອົງນີ້ໄດ້ຈະບໍ່ມີບາບ ແຕ່ພຣະເຈົ້າຊົງປົກປ້ອງລູເຕີ ຫລັກຄຳສອນຂອງເພິ່ນແຜ່ຂຍາຍໄປທົ່ວທຸກຫົນທຸກແຫ່ງໃນກະທ່ອມແລະໂບດຂອງໂຣມ ໃນປະສາດຂອງຂຸນນາງທັງໃນມະຫາວິທະຍາລັຍແລະໃນພຣະຣາຊວັງຂອງກະສັດ

ໃນຂນະດຽວກັນ ລູເຕີໄດ້ມີໂອກາດຮັບຊາບຄວາມຈິງອັນຍິ່ງໃຫຍ່ກ່ຽວກັບການເປັນຄົນຊອບທັມໂດຍຄວາມເຊື່ອນັ້ນ ຮັດ ນັກປະຕິຮູບສາສນາຊາວໂບຮີມຽງໄດ້ເຊື່ອຢ່າງນີ້ມານານ ລູເຕີກ່າວວ່າ "ເຮົາມີໝົດແລ້ວບໍ່ວ່າເປັນໂປໂລຫລືອ໊ອກກັດສະຕິນຫລືຂ້າພະເຈົ້າເອງເຮົາຕ່າງກໍພວກຂອງຮັດໂດຍບໍ່ຮູ້ແລ້ວ" "ຄວາມຈິງໄດ້ຮັບການປະກາດເມື່ອສັດຕະວັດທີ່ຜ່ານມາແຕ່ຖືກເຜົາໝົດ"

ລູເຕີໄດ້ຂຽນກ່ຽວກັບມະຫາວິທະຍາລັຍເຫລົ່ານັ້ນວ່າ "ຂ້າພະເຈົ້າຢ້ານເຫລືອເກີນວ່າມະຫາວິທະຍາລັຍເຫລົ່ານີ້ຈະເປັນປະຕູນາຮົກບານໃຫຍ່ນອກຈາກວ່າບັນດາຄະນະຈານທັງຫລາຍຈະພາກພຽນອະທິບາຍພຣະຄັມພີໃຫ້ແກ່ເຍົາວະຊົນແລະຈາລຶກຂໍ້ຄວາມເຫລົ່ານັ້ນໄວ້ໃນໃຈຂອງພວກເຂົາ ບໍ່ວ່າສະຖາບັນໃດກໍຕາມບໍ່ມີການສຶກສາພຣະທັມຂອງພຣະເຈົ້າ ບ່ອນນັ້ນຄຸນທັມຍອມເຊື່ອມຊາມ"

ຄຳຮ້ອງຂໍ້ນີ້ໄດ້ເຜີຍແຜ່ໄປທົ່ວປະເທດເຢຣະມັນ ຊົນທັງຊາດເລີ່ມເຄື່ອນໄຫວເຫລົ່າສັດຕຣູຂອງລູເຕີຈຶ່ງເລັ່ງລັດໃຫ້ພຣະສັນຕະປາປາຕັດສິນໃຈລົງໂທດ ເພິ່ນຢ່າງເດັດຂາດຈຶ່ງມີການອອກກົດປະນາມຫລັກຄຳສອນຂອງລູເຕີທັນທີວ່າຫາກເພິ່ນແລະພັກພວກບໍ່ຍອມຍົກເລີກຫລັກຄຳສອນນີ້ ທຸກຄົນກໍຈະຖືກຂັບໄລ່ອອກຈາກຄຣິສຕະຈັກ

# ວິກິດການຮ້າຍແຮງ

ນັບວ່າເປັນວິກິດການທີ່ຮ້າຍແຮງຫລາຍສຳລັບນັກປະຕິຮູບສາສນາ ລູເຕີບໍ່ໄດ້ລະຄວາມສົນໃຈໃນພະຍຸຮ້າຍທີ່ໃກ້ຈະພັດກະໜ່ຳ ແຕ່ເພິ່ນໄດ້ວາງໃຈໃນພຣະຄຣິດໃຫ້ພຣະອົງສນັບສນູນແລະໂລ່ຄຸ້ມຄອງຊີວິດ "ຂ້າພະເຈົ້າບໍ່ຮູ້ວ່າແມ່ນຫຍັງຈະເກີດຂຶ້ນ ຫລືບໍ່ກັງວົນວ່າຈະມີອັນໃດເກີດຂຶ້ນ ໃບໄມ້ທີ່ຮ່ວງລົ່ນໄປບໍ່ມີຈັກໃບທີ່ພຣະອົງບໍ່ຊົງຫ່ວງແລ້ວພຣະອົງຈະບໍ່ຊົງສົນພຣະທັຍໃນພວກເຮົາຜູ້ມີຄ່າຫລາຍກວ່າໃບໄມ້ນັ້ນຫລືການຍອມຕາຍເພື່ອພຣະທັມນັ້ນເປັນເຣື່ອງເລັກນ້ອຍ ໃນເມື່ອພຣະທັມຊຶ່ງບັງເກີດເປັນເນື້ອໜັງ ພຣະອົງເອງກໍຊົງສິ້ນພຣະຊົນເໝືອນກັນ"

ເມື່ອອົງການຂອງສັນຕະປາປາໄປເຖິງລູເຕີ ເພິ່ນກໍກ່າວວ່າ "ຂ້າພະເຈົ້າຂໍປະນາມແລະຕໍ່ວ່າອົງການນີ້ວ່າຢຽບຢ່ຳພຣະເຈົ້າຫລອກລວງ...ພຣະຄຣິດເອງຊົງຖືກປະນາມຂ້າພະເຈົ້າຮູ້ວ່າມີເສຣີພາບໃນຈິດໃຈຫລາຍກວ່າເກົ່າ ເພາະໃນທີ່ສຸດຂ້າພະເຈົ້າກໍຮູ້ແລ້ວວ່າສັນຕະປາປາຄືປໍລະປັກຂອງພຣະຄຣິດ ແລະບັນລັງຂອງພຣະອົງກໍຄືບັນລັງຂອງຊາຕານ"

ເຖິງຢ່າງນັ້ນກໍຕາມຄຳສັ່ງຂອງໂຣມແມ່ນວ່າບໍ່ເກີດຜົນກະທົບໃດໆ ຄົນທີ່ອ່ອນແອແລະມີຄວາມເຊື່ອຜິດໆ ຕ່າງຫວາດກົວຈົນຕົວສັ່ນຕໍ່ຄຳສັ່ງຂອງສັນຕະປາປາຫລາຍຄົນມີຄວາມຮູ້ສຶກວ່າຊີວິດມີຄ່າເກີນກວ່າທີ່ຈະເອົາໄປສ່ຽງງານຂອງນັກປະຕິຮູບສາສນາຈະສິ້ນສຸດລົງແລ້ວຫລື

ແຕ່ລູເຕີບໍ່ຮູ້ສຶກຢ້ານເລີຍ ທັງນີ້ດ້ວຍອຳນາດອັນຍິ່ງໃຫຍ່ທີ່ພຣະເຈົ້າຊົງນຳເພິ່ນ ລູເຕີກ່າວປະນາມໂຕ້ຕອບອຳນາດອັນຊົ່ວຮ້າຍກັບໄປຍັງໂຣມແລະເຜົາອົງການຂອງສັນຕະປາປາຕໍ່ໜ້າຝູງຊົນທຸກຊັ້ນວັນນະ ເພິ່ນກ່າວວ່າ "ການຕໍ່ສູ້ຢ່າງຈິງຈັງໄດ້ເລີ່ມຕົ້ນມານານແລ້ວແລະບັດນີ້ຂ້າພະເຈົ້າພຽງແຕ່ສະແດງຄູ່ກັບສັນຕະປາປາເທົ່ານັ້ນຂ້າພະເຈົ້າໄດ້ເລີ່ມງານນີ້ໃນພຣະນາມຂອງພຣະເຈົ້າແລະຈະສຳເຣັດໂດຍລັດທິອຳນາດຂອງພຣະອົງໂດຍບໍ່ຕ້ອງມີຂ້າພະເຈົ້າ ມີໃຜແດ່ທີ່ຈະຮູ້ໄດ້ວ່າພຣະເຈົ້າບໍ່ໄດ້ຊົງເລືອກແລະຮຽກຂ້າພະເຈົ້າ ແລະຖ້າເຂົາບໍ່ມີຄວາມຢ້ານໃນການດູໝິ່ນຂ້າພຣະເຈົ້າເຂົາບໍ່ຢ້ານຫລືວ່າຕົນເອງກຳລັງໝິ່ນປມາດພຣະເຈົ້າ"



ຕົກເປັນເຫຍື່ອແຫ່ງການຫລອກລວງຕົວເອງໂດຍເຈຕນາ ມີແສງສວ່າງທີ່ຈະຊ່ອຍໃຫ້ພົ້ນຈາກການຫລອກລວງ ພົ້ນຈາກຈິດວິນຍານທີ່ເປິະເປື້ອນດ້ວຍໂລຫິດທີ່ຜິດບາບພວກເຂົາກັບປະຕິເສດແສງສວ່າງນັ້ນຢ່າງບໍ່ໃຍດີ

ມີການຈັດຂະບວນແຫ່ອີກເທື່ອນຶ່ງ "ບ່ອນປະຫານຖືກສ້າງຂຶ້ນມີໄລຍະຫ່າງກັນເປັນຊ່ວງໆ ຄຣິສະຕຽນໂປເຕສແຕນບາງຄົນຕ້ອງຖືກເຜົາທັງເປັນ ມີການກຳນົດໄວ້ໃຫ້ຈູດໄຟໃນຂນະທີ່ພຣະຣາຊາຊົງດຳເນີນມາໃກ້ ເພື່ອທີ່ແຫ່ຂະບວນນັ້ນຈະຢຸດເບິ່ງ ເປັນພະຍານໃນການປະຫານ" ພວກທີ່ຖືກປະຫານມີຄວາມເຊື່ອໝັ້ນຄົງເມື່ອໄດ້ຮັບຄຳແນະນຳໃຫ້ລະຖິ້ມຄວາມເຊື່ອ ຄົນນຶ່ງໃນພວກເຂົາຕອບວ່າ "ຂ້າພະເຈົ້າເຊື່ອແຕ່ສິ່ງທີ່ຜູ້ປະກາດພຣະທັມແລະອັຄສາວົກໄດ້ສັ່ງສອນໄວ້ ແລະເຊື່ອທຸກຢ່າງທີ່ບັນດາສິດທິຊົນໄດ້ເຊື່ອແລະສັດທາ ຄວາມເຊື່ອຂອງຂ້າພະເຈົ້າຍຶດໝັ້ນຄົງຢູ່ໃນພຣະເຈົ້າ ອັນເປັນສິ່ງຕໍ່ຕ້ານອຳນາດແຫ່ງນະຣົກ"

ເມື່ອຂະບວນແຫ່ນັ້ນເຄື່ອນໄປເຖິງພຣະຣາຊວັງ ຝູງຊົນກໍແຍກຍ້າຍກັນໄປສ່ວນພຣະຣາຊາແລະບາດຫລວງກໍພາກັນກັບ ແຕ່ກໍສະແດງຄວາມຍິນດີຕໍ່ກັນທີ່ງານນີ້ຈະຕ້ອງດຳເນີນຕໍ່ໄປ ເພື່ອການທຳລາຍພວກ "ນອກຮີດ" ໃຫ້ໝົດກ້ຽງ

ຂ່າວປະເສີດແຫ່ງສັນຕິສຸກຊຶ່ງປະເທດຝຣັ່ງເສດບໍ່ຍອມຮັບ ຄວນຖືກກຳຈັດອອກຈາກປະເທດນີ້ຢ່າງແນ່ນອນ ແລະຜົນກໍຄືເຫດການທີ່ສຍົດສຍອງຈະເກີດຂຶ້ນຕາມມາໃນວັນທີ່ 21 ມົກກະຣາ ຄ.ສ. 1793 ມີການແຫ່ຂະບວນໄປຕາມຖນົນຕ່າງໆໃນກຸງປາຣີອີກ "ອີກເທື່ອນຶ່ງທີ່ພຣະຣາຊາຊົງເປັນຜູ້ນຳໃນການເດີນຂະບວນເທື່ອນີ້ມີສຽງຕະໂກນແລະຄວາມໂກຣາຫົນວຸ່ນວາຍ ມີສຽງຮຽກຮ້ອງຫາຜູ້ທີ່ຈະຖືກປະຫານຫລາຍຂຶ້ນ ແລະອີກຄັ້ງທີ່ມີການຕັ້ງແດນປະຫານສີດຳແລະເຫດການເວັ້ນນັ້ນຈົບລົງດ້ວຍການປະຫານທີ່ສຍົດສຍອງ ພຣະເຈົ້າຫລຸຍທີ່ 16 ຊົງຕໍ່ສູ້ດີ້ນຣົນຂນະທີ່ຜູ້ຄຸມແລະຜູ້ປະຫານຊຸດລາກພຣະອົງໄປທີ່ປະຫານ ແລ້ວໃຊ້ກຳລັງຈັບ ພຣະອົງໄວ້ແໜ້ນຈົນກະທັ່ງແຜ່ນມີດຕົກລົງມາຕັດພຣະສຽນຂາດກະເດັນແລະພຣະສຽນຂອງຄົນຊົ່ວຮ້າຍກໍກິ້ງຢູ່ເທິງທີ່ປະຫານນັ້ນ" ແລະໃກ້ທີ່ພຣະເຈົ້າຫລຸຍຖືກປະຫານ ມີປະຊາຊົນອີກ 2,800 ຄົນຖືກປະຫານດ້ວຍເຄື່ອງກີໂຍຕິນ (ເຄື່ອງມືປະຫານໂດຍວິທີໃຊ້ມີດລົ່ນລົງມາຕັດຄໍ)

ການປະຕິຮູບສາສນາໄດ້ນຳເອົາພຣະຄັມພີອອກມາເປີດເຜີຍໃຫ້ຄົນທັງຫລາຍໃນໂລກໄດ້ຮຽນຮູ້ຄວາມຮັກອັນບໍ່ມີສິ້ນສຸດຂອງພຣະເຈົ້າ ຖືກເປີດອອກໃຫ້

ພຣະເຈົ້າຟຣານສິດ 1 ຊົງມີຄວາມໂສມະນັດຍິນດີທີ່ໄດ້ຮວບຮວມບັນດາຜູ້ຮູ້ໜັງສືຈາກທຸກໆ ປະເທດມາໄວ້ໃນຣາຊສຳນັກ ແຕ່ພຣະອົງມີພຣະທັຍຮ້ອນຮົນທີ່ຈະທຳລາຍລັດທິນອກຮີດ ແມ່ນວ່າຈະເປັນນັກການສຶກສາ ແຕ່ພຣະອົງກໍຍັງອອກປະກາດໃຫ້ເລີກການພິມໜັງສືທົ່ວປະເທດຝຣັ່ງເສດ ພຣະເຈົ້າຟຣານສິດທີ່ 1 ໄດ້ສະແດງໃຫ້ເຫັນວ່າແມ່ນໃນສັງຄົມທີ່ສົ່ງເສີມສະຕິບັນຍາແລະຄວາມຮູ້ກໍບໍ່ໄດ້ເຮັດໃຫ້ເລີກກົດຂີ່ຂົ່ມເຫງແລະບີບບັງຄັບໃນການນັບຖືສາສນາ

ພວກບາດຫລວງໄດ້ຂໍຮ້ອງໃຫ້ມອບຄົນທີ່ດູຖູກເຫລົ່ານັ້ນແກ່ສວັນເບື້ອງເທິງໃນຖານທີ່ປະນາມພິທີມິຊາດ້ວຍເລືອດ ໂດຍຖືເອົາວັນທີ່ 21 ມົກກະຣາ ຄ.ສ. 1535 ເປັນວັນກຳໜົດພິທີທີ່ໜ້າຢ້ານນີ້ ໜ້າບ້ານທຸກຫລັງຄາເຮືອນມີກະບອງຈູດແສງສວ່າງສໄວເພື່ອເປັນກຽດແກ່ "ພິທີອັນບໍຣິສຸດ" ກ່ອນຮຸ່ງເຊົ້າມີການຈັດຂະບວນແຫ່ທີ່ພາຣາຊວັງຂອງພຣະຣາຊາ

"ບິຊອບແຫ່ງກຸງປາຣີເດີນນຳຂະບວນພາຍໃຕ້ກົດສີສວຍສິດ ຖືເປັນເຈົ້າແຫ່ງໂລຫິດສີ່ອົງ ພຣະຣາຊາຊົງສະເດັດຕາມມາ ໃນວັນນັ້ນພຣະເຈົ້າຟຣານສິດທີ່ 1 ບໍ່ຊົງມົງກຸດແລະບໍ່ຊົງສລອງພຣະອົງສຳລັບອອກພິທີ" ພຣະຣາຊາຊົງໂຄ້ງຄຳນັບຢ່າງຖ່ອມພຣະອົງຕໍ່ໜ້າແທ່ນບູຊາທຸກໆ ແທ່ນ ບໍ່ແມ່ນເພື່ອຄວາມຊົ່ວຮ້າຍທີ່ເຮັດໃຫ້ຈິດວິນຍານຂອງພຣະອົງເປັນມົນທິນ ບໍ່ແມ່ນເພື່ອໂລຫິດຂອງຜູ້ບໍຣິສຸດທີ່ເປິະເປື້ອນພຣະຫັດຂອງພຣະອົງ ແຕ່ກະທຳເພື່ອ "ບາບທີ່ມີໂທດເຖິງຕາຍ" ຂອງພົລເມືອງທີ່ບັງອາດກ່າວຕິຕຽນພິທີມິຊາ

ພຣະຣາຊາຊົງມີພຣະຣາຊປະຕິສັນຍາໃນຫ້ອງໂຖງໃຫຍ່ໃນວັງຂອງບິຊອບດ້ວຍຖ້ອຍຄຳອັນສະແດງເຖິງຄວາມເສັຽຢ່າງສຸດຊຶ້ງ "ຄວາມຜິດຢ່າງຮ້າຍແຮງການສິບປມາດວັນແຫ່ງຄວາມໂສກເສົ້າແລະຄວາມອັບປະຍົດອົດສູ" ທີ່ເກີດຂຶ້ນແກ່ປະເທດຊາດ ແລະພຣະອົງຊົງຮ້ອງໃຫ້ພົລເມືອງທີ່ຈົງຮັກພັກດີທຸກຄົນໃຫ້ຮ່ວມມືໃນການທຳລາຍລ້າງພວກ "ນອກຮີດ" ຊຶ່ງນຳພັຍພິບັດມາສູ່ປະເທດຝຣັ່ງເສດ ພຣະຣາຊາຕຣັດດ້ວຍນ້ຳສຽງສັ່ນເຄືອແລະກັນແສງທຸກຄົນໃນທີ່ປະຊຸມຮ້ອງໄຫ້ຕາມພຣະອົງແລະຮ້ອງຂຶ້ນເປັນສຽງດຽວກັນວ່າ "ເຮົາຈະຢູ່ແລະຈະຕາຍເພື່ອສາສນາຄາທໍລິກ!"

"ພຣະຄຸນຂອງພຣະເຈົ້າທີ່ນຳຄວາມລອດມາ" ໄດ້ປາກົດຂຶ້ນ ແຕ່ຝຣັ່ງເສດຊຶ່ງໄດ້ຮັບແສງສວ່າງຈາກດວງໄຟນັ້ນລະຖິ້ມໄປແລະເລືອກຄຳຄວາມມືດແທນຄວາມສວ່າງ ພວກເຂົາຮຽກວ່າຄວາມຊົ່ວເປັນຄວາມດີ ແລະຮຽກຄວາມດີເປັນຄວາມຊົ່ວ ຈົນ



"ພຣະເຈົ້າບໍ່ໄດ້ຊົງເລືອກປຸໂຣຫິດຫລືບຸກຄົນສຳຄັນທັງຫລາຍໃຫ້ເປັນຜູ້ປະກາດພຣະທັມຂອງພຣະເຈົ້າ ແຕ່ຊົງເລືອກຄົນສາມັນທີ່ຕ່ຳຕ້ອຍແລະຖືກດູໝິ່ນຢຽມຫຍາມ ຕັ້ງນີ້ງພຣະອົງຊົງເລືອກແມ່ນກະທັ່ງອາໂມດຜູ້ລ້ຽງແກະຕລອດທຸກຍຸກທຸກສມັຍ ບັນດາທັມມິກະຊົນຕ້ອງຍອມສ່ຽງຊີວິດໄປວ່າກ່າວຕິຕຽນຜູ້ມີອຳນາດຍິ່ງໃຫຍ່ບັນດາກະສັດ ເຈົ້ານາຍ ປຸໂຣຫິດ ແລະນັກປາດ ຂ້າພະເຈົ້າບໍ່ໄດ້ເວົ້າວ່າຂ້າພະເຈົ້າເປັນຜູ້ປະກາດພຣະທັມ ແຕ່ຂ້າພະເຈົ້າເວົ້າວ່າພວກເຂົາຄວນຈະຢ້ານເພາະຂ້າພະເຈົ້າມີຢູ່ພຽງຄົນດຽວ ແລະພວກເຂົາມີຫລາຍຄົນຂ້າພະເຈົ້າແນ່ໃຈວ່າພຣະທັມຂອງພຣະເຈົ້າຢູ່ກັບຂ້າພະເຈົ້າບໍ່ໄດ້ຢູ່ກັບເຂົາ"

ເຖິງປານນັ້ນລູເຕີກໍຕ້ອງຕໍ່ສູ້ກັບຕົວເອງຢ່າງທໍຣະຫົດ ໃນການຕັດສິນໃຈເປັນຄັ້ງສຸດທ້າຍທີ່ຈະແຍກຕົວໄປຈາກຄຣິສຕະຈັກ "ຂ້າພະເຈົ້າມີຄວາມເຈັບໃຈເປັນຢ່າງຍິ່ງ ແມ່ນວ່າຂ້າພະເຈົ້າມີພຣະຄັມພີຢູ່ຝ່າຍຂ້າພະເຈົ້າ ເພື່ອພິສູດວ່າສົມຄວນຫລືບໍ່ທີ່ຂ້າພະເຈົ້າຈະຕ້ອງຢືນຢັດຕໍ່ສູ້ກັບສັນຕະປາປາແຕ່ລຳພັງຜູ້ດຽວແລະຖືວ່າສັນຕະປາປາເປັນປໍລະປັກຂອງພຣະຄຣິດ ຈັກເທື່ອແລ້ວທີ່ຂ້າພະເຈົ້າຖາມຕົວເອງດ້ວຍຄຳຖາມທີ່ຂົມຂື່ນເຊັ່ນນີ້ ຄຳຖາມທີ່ເວົ້າເຖິງເລື້ອຍໆ ກ່ຽວກັບສັນຕະປາປາຄື "ເພິ່ນເປັນຄົນສລາດແຕ່ພຽງຜູ້ດຽວບໍ່ ທຸກຄົນສາມາດເຮັດຜິດພາດໄດ້ບໍ່ ແມ່ນຫຍັງຈະເກີດຂຶ້ນ ຖ້າເພິ່ນເອງເປັນຜູ້ເຮັດຜິດ ແລະໄດ້ຊັກຈູງໃຫ້ອີກຫລາຍໆຄົນເຮັດຜິດໄປດ້ວຍຜູ້ໃດໜໍຈະຖືກສາບແຊ່ງຕລອດການ ດັ່ງຂ້າພະເຈົ້າຈຶ່ງຕ້ອງຕໍ່ສູ້ກັບຕົວເອງແລະກັບຊາຕານເຊັ່ນນີ້ ຈົນກະທັ່ງພຣະຄຣິດໄດ້ຊົງປ້ອງກັນຈິດໃຈຂ້າພະເຈົ້າໄວ້ໃຫ້ພົ້ນຈາກຄວາມສົງສັຍເຫລົ່ານີ້ໂດຍພຣະທັມອັນບໍ່ມີຜິດພາດຂອງພຣະອົງ"

ອົງການໃໝ່ໄດ້ປະກາດອີກຄັ້ງນຶ່ງວ່ານັກປະຕິຮູບສາສນາໄດ້ແຍກຕົວອອກຈາກຄຣິສຕະຈັກໂຣມແລ້ວໂດຍເດັດຂາດ ປະກາດປະນາມລູເຕີວ່າເປັນທີ່ສາບແຊ່ງແຫ່ງສວັນ ແລະທຸກຄົນທີ່ຍອມຮັບຫລັກຄວາມເຊື່ອຂອງເພິ່ນຈະຕ້ອງໄດ້ຮັບຄຳສາບແຊ່ງນີ້ເໝືອນກັນ

ການຂັດຂວາງທີ່ມີຢູ່ຫລວງຫລາຍເກີດຂຶ້ນກັບຜູ້ທີ່ພຣະເຈົ້າຊົງໃຊ້ໃຫ້ນຳສເນີຄວາມຈິງຂອງພຣະອົງສເນີ ໂດຍສະເພາະຄວາມຈິງທີ່ຕ້ອງໃຊ້ໃນສມັຍຂອງບຸກຄົນນັ້ນໃນສມັຍຂອງລູເຕີມີການເຜີຍແຜ່ຄວາມຈິງຢ່າງໃດ ຄຣິສຕະຈັກໃນທຸກວັນນີ້ກໍ

ຕ້ອງມີການເຜີຍແຜ່ຄວາມຈິງເໝືອນກັນ ແຕ່ຄົນສ່ວນຫລາຍໃນທຸກວັນນີ້ກໍບໍ່ຢາກຈະຮັບຄວາມຈິງຂອງພຣະເຈົ້າ ຫລາຍໄປກວ່າຜູ້ທີ່ນັບຖືສັນຕະປາປາທີ່ໄດ້ຕໍ່ສູ້ກັບລູເຕີ ດັ່ງນັ້ນບັນດາຜູ້ປະກາດຄວາມຈິງຂອງພຣະເຈົ້າໃນປັດຈຸບັນນີ້ເພິ່ງສັງວອນແລະບໍ່ຄວນຄາດຫວັງວ່າຄົນທັງຫລາຍຈະຍິນດີຍອມຮັບຄວາມຈິງຫລາຍໄປກວ່າໃນສມັຍຂອງນັກປະຕິຮູບສາສນາໃນຍຸກທຳອິດ ການຕໍ່ສູ້ອັນຍິ່ງໃຫຍ່ລະຫວ່າງຄວາມຈິງແລະຄວາມເທັດແລະລະຫວ່າງພຣະຄຣິດກັບຊາຕານຈະທະວີຄວາມຮູນແຮງຍິ່ງຂຶ້ນຈົນເຖິງສິ້ນຍຸກແຫ່ງປະຫວັດສາດໂລກ “ຖ້າທ່ານທັງຫລາຍເປັນຂອງຝ່າຍໂລກ ໂລກກໍຈະຮັກແພງສິ່ງທີ່ເປັນຂອງມັນ ແຕ່ເພາະທ່ານທັງຫລາຍບໍ່ເປັນຂອງຝ່າຍໂລກ ແລະຝ່າຍເຮົາໄດ້ເລືອກເອົາພວກທ່ານອອກຈາກໂລກ ສະນັ້ນໂລກຈຶ່ງກຽດຊັງພວກທ່ານຈົ່ງລະນຶກເຖິງຄຳທີ່ເຮົາໄດ້ກ່າວແກ່ທ່ານທັງຫລາຍວ່າຂ້ອຍໃຊ້ບໍ່ທ່ອນໃຫຍ່ກວ່ານາຍຂອງຕົນ ຖ້າເຂົາຂົ່ມເຫງເຮົາເຂົາກໍຈະຂົ່ມເຫງທ່ານທັງຫລາຍເໝືອນກັນ ຖ້າເຂົາຖືຮັກສາຂໍ້ຄວາມຂອງເຮົາເຂົາກໍຈະຖືຮັກສາຂໍ້ຄວາມຂອງທ່ານເໝືອນກັນ” “ທ່ານທັງຫລາຍຈົ່ງມີຄວາມເມດຕາກະຣຸນາເໝືອນຢ່າງພຣະບິດາຂອງທ່ານຊົງມີພຣະທັມເມດຕາກະຣຸນາ” (ໂຢຮັນ 15:19-20 ລູກາ 6:26)

ໃນຊ່ວງເວລາແຫ່ງການຕໍ່ສູ້ເພື່ອໃຫ້ໄດ້ມາຊຶ່ງຄວາມຈິງນັ້ນມາຕົນລູເຕີຕ້ອງຜະເຊີນກັບບັນຫາສາຣະພັດ ນັບຕັ້ງແຕ່ການປະກາດຂໍ້ປະທ້ວງ 95 ຂໍ້ເພິ່ນກໍຖືກທາງຄຣິສຕະຈັກຄາທໍລິກສອບສວນແລະໝາຍປອງເອົາຊີວິດ ແຕ່ລູເຕີກໍອົດທົນຕ້ອງໃຊ້ວິທີຫລົບຫລີກຈາກກົນວິທີໝາບປອງເອົາຊີວິດຂອງເພິ່ນ ຈົນບາງຄັ້ງຕ້ອງໜີໄປຫລົບຊ້ອນຕົວ ຄັ້ງນຶ່ງລູເຕີຕ້ອງເດີນທາງໄປຍັງເມືອງເວີມໄດ້ມີຊາວບ້ານຮ້ອງບອກເພິ່ນໃຫ້ລະມັດລະວັງຕົວຢ້ານວ່າຈະຖືກຈັບເຜົາໄຟທັງເປັນ ລູເຕີຕອບວ່າ “ຂ້າພະເຈົ້າຈະເດີນຜ່ານແປວໄຟໃນນາມຂອງອົງພຣະຜູ້ເປັນເຈົ້າ

ໃນການປະຊຸມຊັກຟອກນັ້ນລູເຕີກໍເໝືອນກັບລູກແກະຖ່າມກາງສັດຮ້າຍລຳພັງຕົວເອງເພິ່ນຄົງຈະຕໍ່ສູ້ບໍ່ໄດ້ແນ່ນອນ ແຕ່ດ້ວຍຄວາມຊ່ອຍເຫລືອຂອງສວັນທີ່ຕ້ອງການປົດໂຊ້ຕວນອອກຈາກຄຣິສຕະຈັກ ລູເຕີຈຶ່ງມີກຳລັງຕໍ່ສູ້ກັບຄົນເຫລົ່ານັ້ນດ້ວຍຄວາມກ້າຫານ



ພວກທີ່ຖືກຈັບໄດ້ຮັບການທໍຣະມານຢ່າງທາຣຸນໂຫດຮ້າຍຈົນເສັຽຊີວິດເຈົ້າໜ້າທີ່ໄດ້ມີຄຳສັ່ງພິເສດໃຫ້ລົດຄວາມຮ້ອນຂອງໄຟທີ່ເຜົາລົງເພື່ອຈະໃຫ້ໄດ້ຮັບຄວາມຈັບປວດທໍຣະມານໃຫ້ຫລາຍຂຶ້ນ ແຕ່ຄົນເຫລົ່ານັ້ນຕາຍຢ່າງມີຊັຍ ພວກເຂົາມີຄວາມເຊື່ອໝັ້ນຄົງແລະສັນຕິສຸກຂອງພວກເຂົາບໍ່ມີອັນໃດມາປິດບັງໄດ້ ພວກທີ່ກົດຂີ່ຂົ່ມເຫງເຫລົ່ານັ້ນຮູ້ສຶກຕົວວ່າເປັນຜູ້ຜ່າຍແພ້ “ປະຊາຊົນທົ່ວປາຣີໄດ້ເຫັນວ່າຄວາມເຊື່ອໃໝ່ສ້າງຄົນໃຫ້ເປັນຄົນເຊັ່ນໃດ ບໍ່ມີທັມມາດໃດທີ່ມີອຳນາດຈູງໃຈປະຊາຊົນໄດ້ຫລາຍເໝືອນກອງໄຟທີ່ເຜົາຜານຜູ້ທີ່ຍອມເສັຽຊີວິດເພື່ອສາສນາເຫລົ່ານັ້ນ ຄວາມຊົມຊື່ນຍິນດີເຮັດໃຫ້ໃບໜ້າຂອງຄົນເຫລົ່ານັ້ນອີ່ມເອີບ ຂນະທີ່ພວກເຂົາເດີນໄປສູ່ແດນປະຫານ ທຸກຄົນຕ່າງພາກັນທູນຂໍເພື່ອຂ່າວປະເສີດດ້ວຍຖ້ອຍຄຳທີ່ຈັບໃຈ”

ພວກໂປເຕສແຕນຖືກໃສ່ຄວາມວ່າເປັນຜູ້ວາງແຜນຈະປະຫານໝູ່ຝ່າຍຄາທໍລິກລົ້ມຣັຖບານແລະລອບປົງພຣະຊົນພຣະຣາຊາ ແຕ່ບໍ່ມີຫລັກຖານອັນໃດສນັບສນູນຄຳກ່າວຫານີ້ແມ່ນແຕ່ນ້ອຍດຽວ ການທີ່ພວກເຂົາລົງໂທດພວກໂປເຕສແຕນຜູ້ບໍຣິສຸດຢ່າງໂຫດຮ້າຍທາຣຸນຈະໄດ້ຮັບໂທດເປັນການຕອບແທນ ຫລັງຈາກຫລາຍຮ້ອຍປີກະສັດຄະນະຣັຖບານແລະພົລເມືອງຂອງພຣະອົງຕ້ອງໄດ້ຮັບໂທດຕາມທີ່ພວກເຂົາໄດ້ທຳນວາຍໄວ້ ແຕ່ເກີດຈາກການກະທຳຂອງຄົນນອກສາສນາແລະຄົນຂອງສັນຕະປາປາເອງ ການກົດຂີ່ຂົ່ມເຫງຄຣິສະຕຽນໂປເຕສແຕນເຮັດໃຫ້ຝຣັ່ງເສດຕ້ອງປະສົບກັບພັຍພິບັດອັນຮ້າຍກາດເຊັ່ນນີ້

ປວງຊົນທຸກຊັ້ນວັນນະຕ່າງກໍມີຄວາມລະແວງສົງສັຍ ມີຄວາມບໍ່ໄວ້ວາງໃຈກັນແລະກັນແລະຢ້ານກົວ ປະຊາຊົນນັບເປັນຮ້ອຍໆ ຄົນໜີອອກຈາກກຸງປາຣີ ພວກເຂົາໜີອອກຈາກບ້ານເກີດເມືອງນອນດ້ວຍຄວາມສະມັກໃຈ ມີຫລາຍຄົນໄດ້ສະແດງໃຫ້ເຫັນວ່າພວກເຂົາມີຄວາມນິຍົມໃນຄວາມເຊື່ອຂອງຝ່າຍປະຕິຮູບເປັນເທື່ອທຳອິດຝ່າຍຜູ້ສນັບສນູນສັນຕະປາປາເກີດຄວາມປະຫລາດໃຈເພາະບໍ່ເຄີຍຄາດຄິດມາກ່ອນວ່າຈະມີ “ຄົນນອກຮີດ” ຢູ່ຖ້າມກາງພວກຕົນ

## ປະກາດຍົກເລີກການພິມໜັງສື

ວັນນຶ່ງນັກປະຕິຮູບສາສນາທັງຫລາຍໄດ້ຕິດປະກາດຕິຽນພິທີມິຊາທົ່ວປະເທດຝຣັ່ງເສດ ອັນເປັນການກະທຳທີ່ຮ້ອນຮົນແຕ່ຂາດສະຕິຮອບຄອບນີ້ເຮັດໃຫ້ພວກຂອງສັນຕະປາປາມີເຫດເຫດຜົນໃນການທຳລາຍ "ພວກນອກຮີດ" ໂດຍອ້າງວ່າພວກນີ້ເປັນພັຍຕໍ່ຣາຊບັນລັງແລະກໍ່ກວນຄວາມສງົບສຸກຂອງຊາດ

ຄຳປະກາດແຜ່ນນຶ່ງຖືກຕິດໄວ້ທີ່ປະຕູຫ້ອງ ສ່ວນພຣະອົງຂອງພຣະຣາຊາການກະທຳຢ່າງອາດຫານທີ່ບໍ່ເຄີຍມີແບບຢ່າງປະກົດມາກ່ອນນີ້ເຮັດໃຫ້ພຣະຣາຊາຊົງຄຽດຫລາຍ ເມື່ອຊົງທອດພະເນດເຫັນແຜ່ນໃບປິວດ້ວຍຄວາມພິໂຣດພຣະຣາຊາໄດ້ຕຣັດຖ້ອຍຄຳທີ່ໜ້າຢ້ານວ່າ "ຈົ່ງຈັບທຸກຄົນທີ່ສົງສັຍໂດຍບໍ່ຕ້ອງແຍກວ່າເປັນພວກລູເຕີນອກຮີດ ເຮົາຈະທຳລາຍລ້າງພວກເຂົາໃຫ້ສິ້ນຊາກ" ພຣະຣາຊາໄດ້ຕຣັດສິນພຣະທັຍຢ່າງເຕັມທີ່ທີ່ຈະຢູ່ຝ່າຍຂອງໂຣມ

## ການປົກຄອງອັນໜ້າຢ້ານ

ຜູ້ເຫລື້ອມໃສໃນການປະຕິຮູບທີ່ໂຊກຮ້າຍຜູ້ນຶ່ງຖືກຈັບກຸມຂນະທີ່ເພິ່ນໄດ້ໄປເຊີນຊວນຜູ້ເຊື່ອໄປຮ່ວມປະຊຸມໃນທີ່ລັບແຫ່ງນຶ່ງ ດ້ວຍຄວາມຢ້ານວ່າຕົວເອງຈະຖືກຂ້າຕາຍດ້ວຍການມັດຕິດເສົາເຜົາທັງເປັນ ເພິ່ນຖືກພວກຂອງສັນຕະປາປາບັງຄັບໃຫ້ນຳທູດລັບໄປສືບເບິ່ງເຮືອນຂອງພວກໂປເຕສແຕນໃນເມືອງທຸກຫລັງ ດ້ວຍຄວາມຢ້ານວ່າຈະຖືກເຜົາທັງເປັນ ເພິ່ນຈຶ່ງຕົກລົງໃຈທໍຣະຍົດຕໍ່ພີ່ນ້ອງໂປເຕສແຕນດ້ວຍກັນ ມໍຣົນນັກສືບຈາກຣາຊສຳນັກແລະຊາຍຜູ້ທໍຣະຍົດໄດ້ຍ່າງໄປຕາມຖນົນໃນເມືອງຢ່າງຊ້າໆ ແລະມິດງຽບ ເມື່ອມາເຖິງເຮືອນຂອງລູເຕີແຣນຊາຍຜູ້ທໍຣະຍົດໃຫ້ສັນຍາໃຫ້ນັກສືບໂດຍບໍ່ເວົ້າອັນໃດທັງສິ້ນ ເມື່ອຄົນຍຸດລໍພວກທະຫານກໍລູ່ເຂົ້າໄປໃນເຮືອນທຸກຄົນໃນຄອບຄົວນັ້ນກໍຖືກຈັບລ່າມໂຊ້ ແລ້ວຊາຍຜູ້ທໍຣະຍົດກໍນຳໜ້າຂະບວນໄປ ເພື່ອທີ່ຈະຫາເຫຍື້ອຜູ້ຕໍ່ໄປ "ມໍຣົນເຮັດໃຫ້ທຸກຄົນໃນເມືອງຕົກໃຈຢ້ານຈົນຕົວສັ່ນມັນເປັນພຶດຕິການແຫ່ງຄວາມສຍົດສຍອງອັນໜ້າຢ້ານທີ່ສຸດ"



ໃນປີ ຄ.ສ. 1520 ຕົງກັບສມັຍສົມເດັດພຣະບໍຣົມຣາຊາທິຣາດທີ່ 2 ຂອງກຸງສີອະຍຸທະຍາ ລູເຕີກໍໄດ້ຖືກຂັບໄລ່ໄດ້ຂຽນໜັງສືຂຍາຍຄວາມຄິດຂອງຕົນເອງແລະໃນປີດຽວກັນນີ້ ລູເຕີກໍຖືກບັບພາຊະນີກັມ (ເລີກຕິດຕໍ່) ຈາກທາງຄຣິສຕະຈັກ ແຕ່ເພິ່ນກໍບໍ່ຖໍ້ຖອຍຍັງຄົງມຸ້ງໜ້າຕໍ່ໄປ

ບົດທີ່ 8

# ຜູ້ຊະນະແຫ່ງຄວາມຈິງ

ຈັກກະພັດອົງໃໝ່ຊານທີ່ 5 ໄດ້ຂຶ້ນຄອງຣາຊສົມບັດໃນປະເທດເຢຣະມັນເປັນໜີ້ບຸນຄຸນເຈົ້າຊາຍເຟຣເດີຣິດແຫ່ງແຄວ້ນແຊັກໂຊນີເປັນຢ່າງຫລວງຫລາຍ ເຈົ້າຊາຍເຟຣເດີຣິດໄດ້ຂໍຮ້ອງຈັກກະພັດຊານບໍ່ໃຫ້ເຮັດການຮຸນແຮງຕໍ່ລູເຕີ ຈົນກວ່າຈະໄດ້ຟັງເພິ່ນແກ້ຄະດີກ່ອນ ຈັກກະພັດຈຶ່ງຕົກຢູ່ໃນສະພາບທີ່ມືດແປດດ້ານກືນບໍ່ເຂົ້າຄາຍບໍ່ອອກ ເພາະຊົງຮູ້ດີວ່າຝ່າຍຂອງສັນຕະປາປາຈະບໍ່ພໍໃຈຈົນກວ່າລູເຕີຕາຍ ດັ່ງນັ້ນເຈົ້າຊາຍເຟຣເດີຣິດຈຶ່ງໄດ້ປະກາດຢ່າງໜັກແໜ້ນວ່າ "ດຣ. ລູເຕີ ຄວນຈະໄດ້ໃບຮັບຮອງຄວາມປອດພັຍເພື່ອເພິ່ນຈະໄດ້ປາກົດຕົວຕໍ່ໜ້າສານຂອງບັນດາຕຸລາການຜູ້ມີຄວາມຮູ້ ຜູ້ເຄັ່ງຄັດໃນສາສນາແລະຜູ້ພິພາກສາທີ່ຍຸດຕິທັມ

ມີການຈັດປະຊຸມທີ່ເມືອງເວີມ ເປັນຄັ້ງທຳອິດທີ່ເຈົ້ານາຍແຫ່ງເຢຣະມັນຈະໄດ້ເຂົ້າເຝົ້າຈັກກະພັດໜຸ່ມໃນທີ່ປະຊຸມ ບັນດາບຸກຄົນສຳຄັນໆ ທີ່ມີຕຳແໜ່ງສູງທັງຈາກຄຣິສຕະຈັກແລະຣັຖບານແລະທູດຕະນຸທູດຈາກດິນແດນຕ່າງປະເທດຕ່າງພາກັນໄປຊຸມນຸມທີ່ເມືອງເວີມແລະຫົວຂໍ້ທີ່ທຸກຄົນມີຄວາມສົນໃຈຫລາຍທີ່ສຸດຄືເຣື່ອງຂອງນັກປະຕິຮູບສາສນາ

ຈັກກະພັດຊານຊົງແນະນຳໃຫ້ເຈົ້າຊາຍເຟຣເດີຣິດ ພາລູເຕີໄປຮ່ວມປະຊຸມທີ່ເມືອງເວີມກັບທ່ານດ້ວຍ ຈັກກະພັດຊົງຮັບຮອງວ່າຈະຄຸ້ມຄອງລູເຕີ ແລະສັນຍາວ່າຈະໃຫ້ເພິ່ນມີອິສະຣະໃນການອະພິປາຍຄຳຖາມຕ່າງໆ ທີ່ຖືກກ່າວຫາຢ່າງເຕັມທີ່ລູເຕີຂຽນເຖິງເຟຣເດີຣິດວ່າ "ເມື່ອຈັກກະພັດຊົງຮຽກຂ້າພະເຈົ້າ ຂ້າພະເຈົ້າຈຶ່ງບໍ່ສົງສັຍເລີຍວ່ານັ້ນເປັນການຮຽກຂອງພຣະເຈົ້າ ຖ້າພວກເຂົາປາຖນາທີ່ຈະທຳລາຍຂ້າພະເຈົ້າ ຂ້າພະເຈົ້າກໍຂໍມອບເຣືອງນີ້ໄວ້ໃນພຣະຫັດຂອງພຣະເຈົ້າ ຖ້າພຣະອົງບໍ່ຊົງຊ່ອຍຂ້າພະເຈົ້າ ຊີວິດຂອງຂ້າພະເຈົ້າກໍບໍ່ມີຄ່າຫຍັງ ຖ້າອາດຈະຫວັງທຸກສິ່ງທຸກຢ່າງຈາກຂ້າພະເຈົ້າໄດ້ ແຕ່ທີ່ຈະໃຫ້ຂ້າພະເຈົ້າໜີແລະຍົກເລີກຫລັກຄຳສອນຂອງຂ້າພະເຈົ້ານັ້ນຢ່າໄດ້ຫວັງເລີຍເຣື່ອງໜີໄປນັ້ນຂ້າພະເຈົ້າບໍ່ເຮັດແລະຈະໃຫ້ຍົກເລີກຫລັກຄຳສອນນັ້ນກໍແຮ່ງບໍ່ສາມາດເຮັດໄດ້ເລີຍ"

ເມື່ອຂ່າວທີ່ລູເຕີຈະໄປປະກົດຕົວຕໍ່ໜ້າທີ່ປະຊຸມຂອງຈັກກະພັດ ແຜ່ຜາຍໄປທົ່ວເມືອງເວີມ ປະຊາຊົນທົ່ວໄປກໍຮູ້ສຶກຕື່ນເຕັ້ນ ອາລິນເດີ ຜູ້ແທນຂອງສັນຕະປາປາເກີດຄວາມຕົກໃຈແລະໂກດເຄືອງຢ່າງຍິ່ງ ເພາະການຈັກກະພັດຍອມໃຫ້ມີການພິຈາຣະນາສອບສວນເຣື່ອງທີ່ສັນຕະປາປາໄດ້ຕັດສິນໃຈລົງໂທດແລ້ວນັ້ນ ນັບວ່າເປັນການດູໝິ່ນອຳນາດຂອງສັນຕະປາປາ ຍິ່ງໄປກວ່ານັ້ນການເວົ້າໂຕ້ແຍ່ງຢ່າງມີເຫດຜົນຂອງລູເຕີ ອາດຈະຊັກຈູງໃຫ້ເຈົ້ານາຍຫລາຍອົງເອົາໃຈອອກຫ່າງຈາກສັນຕະປາປາ ອາລິນເດີຈຶ່ງພຍາຍາມເວົ້າຄັດຄ້ານບໍ່ໃຫ້ຈັກກະພັດຊານຮຽກຕົວລູເຕີໃຫ້ໄປທີ່ເມືອງເວີມ ແລະຊັກຊວນໃຫ້ຈັກກະພັດຍອມຈຳນົນ

ອາລິນເດີຍັງບໍ່ພໍໃຈໃນຊັຍຊະນະຄັ້ງນີ້ ເພິ່ນຍັງພຍາຍາມຢ່າງໜັກເພື່ອຫາທາງລົງໂທດລູເຕີໃຫ້ໄດ້ ໂດຍກ່າວຫາວ່າເພິ່ນເປັນຜູ້ "ຍຸງຍົງໃຫ້ເກີດການທະເລາະວິວາດ ເປັນກະບົດບໍ່ເຄົາຣົບແລະໝິ່ນປມາດພຣະເຈົ້າ ການທີ່ຜູ້ແທນຂອງສັນຕະປາ



ຄວາມກຽດຄ້ານ ແມ່ນວ່າແຕ່ຄົນຍອມຮັບຂ່າວປະເສີດ ແຕ່ກໍຍັງມີປະຊາຊົນສ່ວນຫລາຍຕ້ອງຖືກປິດລົງແລະເສົາຫລັກເຜົາຄົນກໍຖືກຕັ້ງຂຶ້ນມາອີກ

ຄານວິນຍັງຄົງຢູ່ໃນປາຣີ ໃນທີ່ສຸດຜູ້ມີອຳນາດຕັດສິນໃຈວ່າຈະນຳເຂົາໄປເຜົາທັງເປັນ ຂນະທີ່ເພິ່ນບໍ່ເຄີຍຄາດຄິດວ່າຈະຕົກຢູ່ໃນອັນຕຣາຍນັ້ນເອງ ພວກເພື່ອນຂອງເພິ່ນໄດ້ຮີບນຳຂ່າວມາບອກທີ່ຫ້ອງວ່າເຈົ້າໜ້າທີ່ກຳລັງເດີນທາງມາຈັບກຸມຕົວເພິ່ນ ທັນໃດກໍມີສຽງເຄາະດັງທີ່ປະຕູຊັ້ນນອກ ພວກເຂົາຈະຊັກຊ້າຕໍ່ໄປບໍ່ໄດ້ອີກແລ້ວເພື່ອນບາງຄົນພຍາຍາມຢັບຢັ້ງເຈົ້າໜ້າທີ່ໄວ້ທີ່ປະຕູ ຂນະທີ່ຄົນອື່ນໆ ຊ່ອຍ ຄານວິນໃຫ້ຫລົບໜີລົງທາງປ່ອງຢ້ຽມແລະຮີບໜີໄປຍັງຕູບຂອງກຳມະກອນຜູ້ນຶ່ງເປັນມິດຕໍ່ການປະຕິຮູບ ເພິ່ນໄດ້ປອມຕົວໂດຍການນຸ່ງເສື້ອຜ້າຂອງຊາຍເຈົ້າຂອງຕູບແລະແບກຈົກອອກເດີນທາງໄປຍັງພາກໃຕ້ ຕໍ່ມາກໍພຳນັກຢູ່ໃນແຄວັນທີ່ເຈົ້າຍິງມາກາເຣັດ ມີອຳນາດປົກຄອງ

ຄານວິນບໍ່ສາມາດທີ່ຈະຢູ່ເສັຍໄດ້ດົນ ທັນທີທີ່ພາຍຸຮ້າຍຄ່ອຍສງົບລົງແລ້ວເພິ່ນຈຶ່ງຫາທາງໄປທຳງານໃນທ້ອງທີ່ໃໝ່ໃນເມືອງປອຍເຕັຽ ຊຶ່ງຊາວເມືອງຕ່າງກໍຊື່ນຊອບຕໍ່ຄວາມຄິດເຫັນໃໝ່ນີ້ມາກ່ອນແລ້ວ ປະຊາຊົນທຸກຊັ້ນວັນນະຮັບຟັງຂ່າວປະເສີດດ້ວຍຄວາມຊົມຊື່ນຍິນດີ ເມື່ອມີຜູ້ສົນໃຈຮັບຟັງຂ່າວປະເສີດຫລາຍຂຶ້ນ ຂນະທີ່ຈຳນວນຜູ້ຟັງເພີ່ມຫລາຍຂຶ້ນ ຈຶ່ງຄິດວ່າຄວນປະຊຸມນອກເມືອງຈະປອດພັຍກວ່າ ເພິ່ນໄດ້ເລືອກຖ້ຳແຫ່ງນຶ່ງຊຶ່ງຢູ່ໃນຮ່ອມພູທີ່ເລິກແລະແຄບ ມີຕົ້ນໄມ້ແລະຫີນຍ້ອຍປົກຄຸມສະຖານທີ່ນັ້ນໄວ້ຢ່າງມິດຊິດເປັນທີ່ປະຊຸມ ໃນສະຖານທີ່ເລັ້ນລັບນີ້ພຣະຄັມພີໄດ້ຖືກເປີດອອກມາອ່ານແລະອະທິບາຍແລະສະຖານທີ່ນີ້ອີກເຊັ່ນກັນທີ່ພວກໂປເຕສແຕນຂອງຟຣັ່ງເສດໄດ້ທຳພິທີມະຫາສະນິດຂຶ້ນເປັນເທື່ອທຳອິດ ຜູ້ເຜີຍແຜ່ສາສນາທີ່ຊື່ສັດຫລາຍຄົນໄດ້ຖືກສົ່ງອອກຈາກໂບດນ້ອຍໆ ແຫ່ງນີ້ໄປເຜີຍແຜ່ສາສນາ

ຄານວິນໄດ້ກັບມາຍັງປາຣີອີກເທື່ອນຶ່ງ ແຕ່ເພິ່ນໄດ້ພົບວ່າການເຜີຍແຜ່ສາສນາເກືອບທຸກດ້ານໄດ້ປິດໃນທີ່ສຸດເພິ່ນຈຶ່ງຕຣັດສິນໃຈເດີນທາງໄປປະເທດເຢຣະມັນ ເພິ່ນອອກຈາກຝຣັ່ງເສດໄປດ້ວຍຄວາມຫວາດກົວຂນະເມື່ອພາຍຸຮ້າຍໄດ້ພັດກະໜ່ຳຝ່າຍໂປເຕສແຕນ ບັນດານັກປະຕິຮູບສາສນາຊາວຝຣັ່ງເສດຕັດສິນໃຈຈະທຳລາຍການເຊື່ອສິ່ງທີ່ຜິດຂອງໂຣມດ້ວຍຄວາມກ້າຫານເພື່ອກະຕຸ້ນຄົນທັງຊາດໃນຄືນ

ພຣະອິງຊົງສຳພັດຈິດໃຈຂອງຂ້ານ້ອຍ ເພື່ອຂ້ານ້ອຍຈະບໍ່ໄດ້ຍຶດໝັ້ນໃນສິ່ງທີ່ໜ້າລັງກຽດນອກຈາກຄຸນຄວາມດີຂອງພຣະເຢຊູ"

ບັດນີ້ ຄານວິນຕັດສິນໃຈຈະອຸທິດຊີວິດເພື່ອການປະກາດຂ່າວປະເສີດ ແຕ່ເນື່ອງຈາກເພິ່ນເປັນຄົນທີ່ຂາດຄວາມເຊື່ອໝັ້ນໃນຕົວເອງ ແລະມີໃຈປາຖນາທີ່ຈະສຶກສາຮ່ຳຮຽນ ຢ່າງໃດກໍຕາມເມື່ອຄານວິນຖືກເພື່ອນຝູງຂໍຮ້ອງໜັກຂຶ້ນເພິ່ນຈຶ່ງຍອມເທສນາສັ່ງສອນ ບັນດາຖ້ອຍຄຳຂອງເພິ່ນນັ້ນປຽບເໝືອນນ້ຳຄ້າງທີ່ໃຫ້ຄວາມຊຸ່ມຊື່ນແກ່ແຜ່ນດິນໂລກ ບັດນີ້ເພິ່ນອາສັຍຢູ່ໃນຊົນນະບົດແຫ່ງນຶ່ງພາຍໃຕ້ຄວາມຄອບຄຸມຂອງເຈົ້າຍິງມາກາເຣັດຜູ້ຮັກຂ່າວປະເສີດຂອງພຣະເຈົ້າ ແລະພຣະອົງຊົງໃຫ້ຄວາມຄຸ້ມຄອງແກ່ສາວົກແຫ່ງຂ່າວປະເສີດດ້ວຍງານຂອງຄານວິນເລີ່ມຈາກເທສນາສັ່ງສອນປະຊາຊົນຕາມບ້ານເຮືອນ ບັນດາປະຊາຊົນເມື່ອໄດ້ຍິນໄດ້ຟັງຄຳເທສນາຂອງເພິ່ນກໍພາກັນນຳຂ່າວດີນັ້ນບອກຄົນອື່ນຕໍ່ໆ ໄປ ເພິ່ນມຸ້ງປະກາດສັ່ງສອນຕໍ່ໄປເລື້ອຍໆ ແລະໄດ້ວາງຮາກຖານຂອງຄຣິສະຕະຈັກຫລາຍແຫ່ງໄດ້ເປັນພະຍານເພື່ອຄວາມຈິງດ້ວຍຄວາມກ້າຫານ

ພົລເມືອງໃນປາຣີໄດ້ຮັບຟັງຂ່າວປະເສີດອີກເທື່ອນຶ່ງ ຫລັງຈາກທີ່ພວກເຂົາເຄີຍປະຕິເສດຂ່າວປະເສີດທີ່ເລີແຟແລະຟາເຣນປະກາດ, ແຕ່ຂາວປະເສີດນັ້ນ ໄດ້ປະກາດໃຫ້ຊົນທຸກຊັ້ນໃນນະຄອນໃຫຍ່ແຫ່ງນີ້ໄດ້ຟັງກັນທົ່ວ ຂນະນັກສຶກສາຍັງບໍ່ໄດ້ເຂົ້າຂ້າງສັນຕະປາປາແຫ່ງໂຣມເພື່ອຕໍ່ສູ້ຂັດຂວາງການປະຕິຮູບສາສນາ ເຈົ້າຍິງມາກາເຣັດຕັ້ງພຣະທັຍວ່າຈະໃຫ້ມີການເທສນາກ່ຽວກັບຣັດທິໂປເຕສແຕນໃນກຸງປາຣີ ເຈົ້າຍິງຈຶ່ງຕຣັດສັ່ງໃຫ້ບັນດາສາສນາໂປເຕສະແຕນໃນກຸງປາຣີສັ່ງສອນໃນໂບດຫລາຍແຫ່ງ ແຕ່ຜູ້ມີອຳນາດຝ່າຍສັນຕະປາປາຫ້າມບໍ່ໃຫ້ກະທຳເຊັ່ນນີ້ ເຈົ້າຍິງຈຶ່ງໂປດໃຫ້ເປີດພຣະຣາຊວັງແລະຊົງປະກາດວ່າໃຫ້ມີການເທສນາທຸກວັນແລະເຊີນປະຊາຊົນໃຫ້ມາຟັງ ທຸກວັນຈຶ່ງມີປະຊາຊົນຫລວງຫລາຍມາຮ່ວມປະຊຸມນະມັດສະການ

ພຣະຣາຊາຕຣັດສັ່ງໃຫ້ເປີດໂບດອີກສອງແຫ່ງໃນປາຣີ ບໍ່ເຄີຍມີເທື່ອໃດທີ່ພຣະທັມຂອງພຣະເຈົ້າເປັນທີ່ຈັບໃຈຂອງພົລເມືອງເຖິງພຽງນີ້ ການລະເວັ້ນຈາກຂອງມຶນເມົາ ຄວາມບໍຣິສຸດ ຄວາມເປັນລະບຽບຮຽບຮ້ອຍແລະການທຳງານຢ່າງຂຍັນຂັນແຂງ ໄດ້ເຂົ້າມາແທນທີ່ການເສບສຸຣາການສຳມະເລເທເມົາ ການແກ່ງແຍ່ງຊີງດີແລະ



ປາມີອາຣົມທີ່ຮຸນແຮງເຊັ່ນນີ້ສະແດງໃຫ້ເຫັນຊັດເຈນວ່າທາດແທ້ຂອງເພິ່ນເປັນເຊັ່ນໃດ ຄົນທົ່ວໄປພາກັນກ່າວວ່າ "ເພິ່ນກະທຳການເຊັ່ນນີ້ເພາະຄວາມກຽດຊັງແລະຄິດທີ່ຈະແກ້ແຄ້ນຫລາຍກວ່າ"

ອາລີນເດີມີໃຈຮ້ອນຣົນຫລາຍຂຶ້ນ ແລະໄດ້ສນັບສນູນໃຫ້ຈັກກະພັດຈັດການລົງໂທດລູເຕີ ຕາມຄຳສັ່ງຂອງສັນຕະປາປາ ໃນທີ່ສຸດຈັກກະພັດຊານກໍຕ້ອງຍອມຈຳນົນຕໍ່ຄຳຂໍຮ້ອງຂອງຜູ້ແທນສັນຕະປາປາແລະນຳເຣື່ອງທີ່ເພິ່ນກ່າວຫາລູເຕີສເນີຕໍ່ທີ່ປະຊຸມສະພາ ຄົນທັງຫລາຍທີ່ເຂົ້າຂ້າງລູເຕີມີຄວາມຢ້ານກົວແລະເປັນຫ່ວງລໍຄອຍຟັງຄຳປາສັຍຂອງອາລີນເດີເຈົ້າຊາຍເຟຣເດີຣິດບໍ່ໄດ້ມາໃນການປະຊຸມຄັ້ງນີ້ ແຕ່ໄດ້ຊົງສັ່ງໃຫ້ທີ່ປຶກສາບາງຄົນຂອງພຣະອົງຮ່ວມປະຊຸມເພື່ອບັນທຶກຟັງຄຳປາສັຍຈາກທູດຂອງສັນຕະປາປາ

## ລູເຕີຖືກກ່າວຫາວ່າເປັນຄົນນອກຮີດ

ອາລີເດີນັ້ນເປັນຜູ້ມີການສຶກສາດີ ແລະໃຊ້ສຳນວນໂວຫານຄ່ອງແຄ້ວ ເພິ່ນໄດ້ກ່າວຫາລູເຕີວ່າເປັນສັດຕຣູຂອງຄຣິສຕະຈັກແລະຂອງລັດໂດຍກ່າວວ່າ "ຄວາມຜິດຂອງລູເຕີມີຫລາຍ" ເພິ່ນປະກາດເຊັ່ນນີ້ເພື່ອເປັນເຫດຜົນໃນການເຜົາ "ຄົນນອກຮີດອີກແສນຄົນ"

"ຄົນທີ່ເຊື່ອຄຳສອນຂອງລູເຕີເຫລົ່ານີ້ແມ່ນຜູ້ໃດມາຈາກໃສ ພວກນີ້ເປັນຄຣູຍະໂສໂອຫັງເປັນບາດຫລວງບາດທີ່ຄົດໂກງມົວເມົາຢູ່ໃນຄວາມຊົ່ວຫລືເປັນທະນາຍຄວາມທີ່ໂງ່ຈ້າແລະເປັນຂຸນນາງທີ່ຊົ່ວຊ້າເລວຊາມແມ່ນບໍ່...ກົງກັນຂ້າມກັບຄາທໍລິກທີ່ມີຈຳນວນຫລາຍມີຄວາມສາມາດແລະມີອຳນາດຫລາຍກວ່າຄົນເຫລົ່ານັ້ນຫລາຍປານໃດໜໍ ຄຳປະກາດສິດທີ່ເຮັດໃຫ້ມີການຊຸມນຸມຢ່າງພ້ອມພຽງ ຄັ້ງນີ້ເປັນແສງສວ່າງແກ່ຄົນທົ່ວໄປ ເຕືອນຄົນທີ່ບໍ່ສລາດໃຫ້ຄົນທີ່ອ່ອນແອໄດ້ຕັດສິນໃຈແລະຊ່ອຍໃຫ້ຄົນອ່ອນແອມີກຳລັງ

ທຸກວັນນີ້ຍັງມີການກ່າວຫາຢ່າງດຽວກັນ ຕໍ່ວ່າຄົນທັງຫລາຍທີ່ປະກາດສັ່ງສອນຄວາມຈິງແຫ່ງພຣະທັມຂອງພຣະເຈົ້າ "ພວກທີ່ປະກາດຫລັກຄຳສອນໃໝ່ນີ້ເປັນຜູ້ໃດມາຈາກໃສ ເພິ່ນເປັນພວກທີ່ມີຄວາມຮູ້ນ້ອຍມີຈຳນວນນ້ອຍແລະມາຈາກຊົນຊັ້ນທີ່ຍາກຈົນ ແຕ່ພວກເພິ່ນກໍອ້າງວ່າມີຄວາມຈິງແລະເປັນຄົນທີ່ພຣະເຈົ້າຊົງເລືອກໄວ້ເພິ່ນເປັນຄົນໂງ່ເທົ່າໃດ" ປັດຈຸບັນຂໍ້ໂຕ້ແຍ່ງເຫລົ່ານີ້ບໍ່ມີທີ່ສິ້ນສຸດບໍ່ນ້ອຍໄປກວ່າສມັຍ ຂອງລູເຕີ

ລູເຕີບໍ່ໄດ້ຢູ່ໃນທີ່ປັດຊຸມຄັ້ງນີ້ດ້ວຍ ເພິ່ນຈຶ່ງມີໂອກາດໄດ້ກ່າວຄວາມຈິງແຫ່ງພຣະທັມຂອງພຣະເຈົ້າເພື່ອເອົາຊະນະການຕໍ່ສູ້ຂອງສັນຕະປາປາ ມີການເປີດເຜີຍຄວາມປະສົງບໍ່ພຽງແຕ່ການກ່າວປະນາມລູເຕີ ແລະຫລັກຄຳສອນທີ່ເພິ່ນສອນເທົ່ານັ້ນ ຖ້າເປັນໄປໄດ້ພວກເຂົາຕ້ອງການທີ່ຈະຖອນຮາກຖອນໂຄນຄົນນອກຮີດຄົນນີ້ດ້ວຍ ຜູ້ແທນຂອງສັນຕະປາປາ ມີໂອກາດກ່າວທຸກສິ່ງທຸກຢ່າງທີ່ຕ້ອງການ ຕັ້ງແຕ່ນີ້ໄປກໍຈະຍິ່ງມອງເຫັນຄວາມແຕກຕ່າງລະຫວ່າງຄວາມຈິງກັບຄວາມເທັດ ໄດ້ຊັດເຈນຫລາຍຂຶ້ນ ສຳກັບວ່າຈະເປີດເສິກສົງຄາມໃຫ້ພື້ນທີ່ອັນກວ້າງຂວາງ

ບັດນີ້ພຣະເຈົ້າໄດ້ຊົງເຄື່ອນໄຫວສະມາຊິກຄົນນຶ່ງໃນສະພາໃຫ້ຢືນຂຶ້ນຕໍ່ໜ້າທີ່ປະຊຸມເພື່ອບັນລະຍາຍເຖິງຄວາມຈິງກ່ຽວກັບຄວາມທະລຸນໂຫດຮ້າຍ ການຫລອກລວງແລະຄວາມປະພຶດທີ່ຊົ່ວຮ້າຍຂອງສັນຕະປາປາ ເໝືອນຈອນແຫ່ງແຊັກໂຊນີ ຢືນຂຶ້ນຕໍ່ໜ້າທີ່ປະຊຸມຂອງບັນດາເຈົ້ານາຍແລະຊີ້ລົງໄປເຖິງຄວາມຈິງກ່ຽວກັບການຫລອກລວງແລະສິ່ງອັນໜ້າສະອິດສະອຽນຂອງສັນຕະປາປາ

"ທາລຸນ...ຈິ່ງຮ້ອງຂຶ້ນ ຕໍ່ຕ້ານໂຣມ ຄວາມອັບອາຍທັງໝົດຖືກປັດຖິ້ມໄປ ແລະຈຸດມຸ້ງໝາຍດຽວຂອງພວກເຂົາກໍຄື ເງິນ ເງິນ ເງິນ ດັ່ງນັ້ນຈາກນັກເທສນາ ຜູ້ຄວນເທສນາສັ່ງສອນຄວາມຈິງກັບບໍ່ກ່າວເຖິງອັນໃດນອກຈາກຄວາມເທັດ ບໍ່ພຽງແຕ່ຍອມຮັບເທົ່ານັ້ນ ແຕ່ຍັງໃຫ້ລາງວັນອີກດ້ວຍ ເພາະຍິ່ງພວກເຂົາມຸສາຫລາຍເທົ່າໃດກໍຍິ່ງໄດ້ຮັບປໂຍດຫລາຍຂຶ້ນ ຈາກບໍ່ນ້ຳພຸນີ້ເອງທີ່ນ້ຳສົກກະປົກໄຫລພຸ່ງອອກມາ ຄວາມເສເພນີ້ຂຍາຍຄວາມໂລບໃຫ້ອອກໄປ..ອະນິດຈາສິ່ງອັນໜ້າລະອາຍນີ້ເກີດມາຈາກນັກບວດທີ່ໂຍນຈິດວິນຍານອັນໜ້າສົງສານຈຳນວນຫລວງຫລາຍລົງໄປໃນການຖືກປະນາມນິຣັນ ດັ່ງນັ້ນຈຶ່ງຈຳເປັນຕ້ອງມີການປະຕິຮູບແກ້ໄຂໃຫ້ຖືກຕ້ອງ" ຄວາມ



ໂດຍການກະທຳດີ ສາສນາຢ່າງທີ່ສອງຄືສາສນາທີ່ເປີດເຜີຍໃນພຣະຄັມພີເປັນສາສນາທີ່ສອນໃຫ້ມະນຸດສະແຫວງຫາຄວາມລອດຈາກພຣະຄຸນທີ່ໄດ້ມາໂດຍບໍ່ເສັຽຄ່າຂອງພຣະເຈົ້າ"

ຄານວິນຕອບວ່າ "ຂ້າພະເຈົ້າຈະບໍ່ຍອມຮັບຄຳສອນໃໝ່ຂອງເພິ່ນ ເພິ່ນຄິດວ່າຂ້າພະເຈົ້າມີຊີວິດຢູ່ໃນສິ່ງທີ່ຜິດຕລອດມາຫລື" ແຕ່ເມື່ອຄານວິນຢູ່ໃນຫ້ອງຕາມລຳພັງເພິ່ນໄດ້ຄຸ່ນຄິດເຖິງຄຳເວົ້າຂອງຍາດຂອງເພິ່ນ ແລະມອງເບິ່ງຕົວເອງຢືນຢູ່ຕໍ່ພຣະພັກຂອງຜູ້ພິພາກສາຜູ້ບໍຣິສຸດ ແລະຍຸດຕິທັມໂດຍບໍ່ມີໃຜແກ້ແທນເພິ່ນ ການກະທຳດີພິທີກຳຕ່າງໆ ຂອງຄຣິສະຕະຈັກທຸກຢ່າງບໍ່ມີຣິດອຳນາດທີ່ຈະໄຖ່ຄວາມຜິດບາບໄດ້ ການສາຣະພາບບາບແລະການທໍຣະມານຕົວເອງບໍ່ສາມາດຈະເຮັດໃຫ້ຈິດວິນຍານຂອງເພິ່ນກັບຄືນດີກັບພຣະເຈົ້າໄດ້

## ຄານວິນເຫັນການເຜົາທັງເປັນ

ວັນນຶ່ງຄານວິນມີໂອກາດໄດ້ໄປທີ່ຈະຕຸຣັດໃນເມືອງ ເພິ່ນໄດ້ເຫັນການເຜົາຄົນນອກຮີດທັງເປັນ ແມ່ນໃນຂນະທີ່ຊາຍຄົນນັ້ນຕ້ອງໄດ້ຮັບໂທດຢ່າງໜັກໃນຄຣິສະຕະຈັກ ຖືກທໍຣະມານຈົນເຖິງຕາຍຢ່າງໜ້າຢ້ານນັ້ນ ເພິ່ນຍັງຄົງສະແດງຄວາມເຊື່ອແລະກຳລັງໃຈທີ່ເຂັ້ມແຂງຢ່າງເດັດດ່ຽວ ຄານວິນ ນັກສຶກສາໜຸ່ມໄດ້ນຳສິ່ງຕ່າງໆເຫລົ່ານີ້ມາປຽບທຽບກັບຄວາມໝົດຫວັງແລະຄວາມທຸກຍາກຂອງເພິ່ນດ້ວຍຄວາມເຈັບປວດ ເພິ່ນຮູ້ດີວ່າຊາຍຄົນທີ່ຖືກກ່າວຫາວ່າເປັນ "ຄົນນອກຮີດ" ຈົນຖືກເຜົາທັງເປັນນັ້ນມີຄວາມເຊື່ອໃນພຣະຄັມພີ ເພິ່ນຈຶ່ງຕັດສິນໃຈສຶກສາພຣະຄັມພີເພື່ອຄົ້ນຄົ້ວຫາເຄັດລັບແຫ່ງຄວາມສຸກຂອງບັນດາຄົນທີ່ຖືກກ່າວຫາວ່າເປັນຄົນເຫລົ່ານັ້ນ

ຄານວິນໄດ້ພົບພຣະຄຣິດໃນພຣະຄັມພີ ເພິ່ນຮ້ອງຂຶ້ນມາວ່າ "ໂອ່ພຣະບິດາການເສັຽສະລະຂອງພຣະຄຣິດຊ່ອຍໃຫ້ພຣະພິໂຣດຂອງພຣະອົງສງົບລົງ ພຣະໂລຫິດຂອງພຣະອົງໄດ້ຊຳຣະຄວາມຊົ່ວຮ້າຍຂອງຂ້ານ້ອຍ ໄມ້ກາງແຂນຂອງພຣະຄຣິດໄດ້ຮັບຄຳສາບແຊ່ງຂອງຂ້ານ້ອຍ ຄວາມຕາຍຂອງພຣະຄຣິດໄຖ່ບາບຂອງຂ້ານ້ອຍ

ບັນດາຜູ້ສອນສາສນາໂປເຕສແຕນໄດ້ແຍກຍ້າຍກັນໄປຍັງທ້ອງຖິ່ນອື່ນໆ ເລີແຟເດີນທາງຍັງປະເທດເຢຣະມັນ ຟາເຣນເດີນທາງກັບໄປຍັງບ້ານເກີດເມືອງນອນທາງຝາກຕະເວັນອອກຂອງຝຣັ່ງເສດ ແລະປະກາດພຣະທັມຂອງພຣະເຈົ້າໃນບ້ານທີ່ເພິ່ນເຄີຍອາສັຍຕັ້ງແຕ່ຍັງນ້ອຍ ມີຄົນຫລວງຫລາຍໄດ້ມາຟັງຄວາມຈິງທີ່ເພິ່ນສັ່ງສອນ ແຕ່ໃນບໍ່ເທົ່າໃດເພິ່ນກໍໄດ້ຖືກຂັບໄລ່ອອກໄປຈາກເມືອງນັ້ນ ເພິ່ນທ້ອງທ່ຽວໄປຕາມໝູ່ບ້ານຕ່າງໆ ປະກາດສັ່ງສອນຕາມບ້ານເຮືອນສ່ວນຕົວຂອງຊາວເມືອງ ແລະໃນທ້ອງທົ່ງທີ່ຢູ່ຫ່າງໄກຈາກຍ່ານຊຸມຊົນ ຟາເຣນໄປອາສັຍໃນປ່າແລະບ່ອນທີ່ເພິ່ນເຄີຍທ່ຽວຫລິ້ນໃນຍາມເປັນເດັກເໝືອນສມັຍຂອງອັຄສາວົກ ການກົດຂີ່ຂົ່ມເຫງ "ທີ່ອຸບັດຂຶ້ນກັບຂ້າພະເຈົ້ານັ້ນໄດ້ກັບເປັນເຫດໃຫ້ຂ່າວປະເສີດແຜ່ກວ້າງອອກໄປ" (1:12) ບັນດາຜູ້ເຊື່ອຖືທີ່ຖືກຂັບໄລ່ອອກຈາກປາຣີແລະມິວ "ຊຶ່ງກະຈັດກະຈາຍໄປກໍທ່ຽວປະກາດພຣະທັມນັ້ນ" (ກິຈການ 8:4) ດ້ວຍເຫດນີ້ ແສງສວ່າງໄດ້ເຜີຍແຜ່ເຂົ້າໄປໃນແຄວັນທີ່ຢູ່ຫ່າງໄກຫລາຍແຫ່ງໃນຝຣັ່ງເສດ

## ການຊິງຮຽກຄານວິນ

ໃນໂຮງຮຽນແຫ່ງນຶ່ງໃນປາຣີ ມີເດັກໜຸ່ມຄົນນຶ່ງຜູ້ຊຶ່ງມີອຸປະນິສັຍຊ່າງຄິດແລະງຽບງັດ ເພິ່ນມີຊີວິດທີ່ບໍຣິສຸດຊອບທັມແລະເຄັ່ງຄັດໃນສາສນາ ຄວາມເປັນຜູ້ມີສະຕິປັນຍາຫລັກແຫລມແລະເອົາໃຈໃສ່ໃນການສຶກສາຮໍ່າຮຽນເຮັດໃຫ້ເພິ່ນເປັນ ທີ່ພາກພູມໃຈຂອງວິທະຍາລັຍ ທຸກຄົນມີຄວາມໝັ້ນໃຈວ່າວັນນຶ່ງຈອນຄານວິນຈະເປັນຜູ້ມີຄວາມສາມາດໃນການປົກປ້ອງຄຣິສະຕະຈັກຄົນນຶ່ງ

ແຕ່ແສງສວ່າງແຫ່ງສວັນ ໄດ້ສ່ອງສວ່າງທະລຸກໍາແພງແຫ່ງຣັດທິການຍຶດໝັ້ນໃນປະເພນີແລະຄວາມເຊື່ອຜິດທີ່ອ້ອມລ້ອມຄານວິນໄວ້ ຍາດສະນິດຂອງເພິ່ນຊື່ໂອລິບຕັນ ໄດ້ເຂົ້າຮ່ວມກັນບນັກປະຕິຮູບສາສນາ ທັງສອງໄດ້ໂອ່ລົມກັນເຖິງເຣື່ອງເຫດການວຸ່ນວາຍທີ່ເກີດຂຶ້ນກັບອານາຈັກຂອງຄຣິສະຕຽນ "ມີສາສນາຢູ່ສອງສາສນາໃນໂລກ" ໂອລິບຕັນຜູ້ນັບຖືໂປເຕສແຕນເວົ້າ "ສາສນາຢ່າງແຮກຄືສາສນາທີ່ມະນຸດຕັ້ງຂຶ້ນມາເອງ ເປັນສາສນາທີ່ມະນຸດຊ່ອຍຕົນເອງໃຫ້ລອດໂດຍພິທີກໍາຕ່າງໆ ແລະ



ຈິງທີ່ສັດຕຣູຂອງນັກປະຕິຮູບກ່າວເຮັດໃຫ້ຖ້ອຍຄໍາຂອງລູເຕີມີອໍານາດຊັກຈູງຫລາຍຂຶ້ນ

ເທວະດາຂອງພຣະເຈົ້າສ່ອງແສງສວ່າງ ເພື່ອຊ່ອຍກໍາຈັດຄວາມມືດແຫ່ງຄວາມເຊື່ອທີ່ຜິດ ແລະຊົງຊ່ອຍເປີດຈິດໃຈຂອງຄົນທັງຫລາຍໃຫ້ຍອມຮັບຄວາມຈິງ ອໍານາດຂອງພຣະເຈົ້າແຫ່ງຄວາມຈິງຄວບຄຸມແມ່ນກະທັ່ງປະຕິປັກຂອງນັກປະຕິຮູບສາສນາແລະຕຽມທາງໄວ້ສໍາລັບງານໃຫຍ່ທີ່ກໍາລັງທີ່ຈະປະສົບຄວາມສໍາເຣັດ ທຸກຄົນໃນທີ່ປະຊຸມນັ້ນໄດ້ຍິນພຣະສຸຣະສຽງຂອງພຣະອົງຜູ້ຍິ່ງໃຫຍ່ກວ່າລູເຕີ

ທີ່ປະຊຸມໄດ້ຈັດຕັ້ງຄະນະກັມມະການຂຶ້ນເພື່ອຈັດຕຽມທໍາລາຍງານ ເຣື່ອງການໃຊ້ອໍານາດບີບບັງຄັບຢ່າງໜັກຂອງສັນຕະປາປາຕໍ່ຊາວເຢຣະມັນ ຣາຍການນີ້ຖືກນໍາສເນີຕໍ່ຈັກກະພັດພ້ອມທັງຂໍຮ້ອງໃຫ້ພິຈາຣະນາເພື່ອແກ້ໄຂການກະທໍາຜິດເຫລົ່ານີ້ ບັນດາຄົນທີ່ຍື່ນຄໍາຮ້ອງກ່າວວ່າ "ຂ້າພະບາດທັງຫລາຍມີໜ້າທີ່ປ້ອງກັນຄວາມພິນາດແລະຄວາມບໍ່ຊື່ສັດຂອງປະຊາຊົນ ດ້ວຍເຫດຜົນດັ່ງກ່າວເຫລົ່າຂ້າພະບາດຈຶ່ງທູນຂໍຕໍ່ພຣະອົງດ້ວຍຖ່ອມຕົນ ແຕ່ຂໍຊົງໂປຣດມີພຣະບັນຊາໃຫ້ມີການປະຕິຮູບທົ່ວໄປໂດຍໄວ ແລະຂໍຊົງໂປຣດໃຫ້ການປະຕິຮູບຄັ້ງນີ້ເປັນຜົນສໍາເຣັດດ້ວຍ"

## ລູເຕີຖືກຮຽກໃຫ້ປາກົດຕົວ

ບັດນີ້ທີ່ປະຊຸມສະພາໄດ້ຮຽກຮ້ອງໃຫ້ນັກປະຕິຮູບໃຫ້ໄປປາກົດຕົວທີ່ ປະຊຸມໃນທີ່ສຸດຈັກກະພັດກໍຊົງເຫັນດ້ວຍ ແລະລູເຕີກໍໄດ້ຮັບການຮຽກ ໃນການຮຽກຕົວນັ້ນກໍມີການອອກໃບຮັບຮອງຄວາມປອດພັຍໃຫ້ທັງໝົດນີ້ຖືກນໍາອອກຈາກວິດ ເຕນເບີກໂດຍຄົນຖືກສານທີ່ໄດ້ຮັບຄໍາສັ່ງໃຫ້ນໍາຕົວລູເຕີໄປຍັງເມືອງເວີມ

ບັນດາມິດສະຫາຍຂອງລູເຕີຮູ້ດີວ່າພວກທີ່ມາຮ່ວມປະຊຸມມີອະຄະຕິແລະເປັນສັດຕຣູຕໍ່ລູເຕີ ຈຶ່ງຢ້ານວ່າແມ່ນແຕ່ໃບຮັບຮອງຄວາມປອດພັຍທີ່ອົງຈັກກະພັດຊົງປະທານໃຫ້ກໍບໍ່ສາມາດທີ່ຈະປ້ອງກັນເພິ່ນໃຫ້ພົ້ນອັນຕຣາຍໄດ້ ແຕ່ລູເຕີຕອບວ່າ "ພຣະຄຣິດຈະຊົງປະທານພຣະວິນຍານບໍຣິສຸດໃຫ້ຂ້າພະເຈົ້າ ເພື່ອເອົາຊະນະຜູ້ສອນ

ສາສນາທີ່ມີຄວາມເຊື່ອຢ່າງຜິດໆ ເຫລົ່ານັ້ນ ຂ້າພະເຈົ້າຂໍດູໝິ່ນຄົນເຫລົ່ານັ້ນຕລອດຊີວິດຂອງຂ້າພະເຈົ້າ ຂ້າພະເຈົ້າຈະຊະນະພວກເຂົາດ້ວຍຄວາມຕາຍຂອງຂ້າພະເຈົ້າ ພວກເຂົາກຳລັງທຳງານຢ່າງຂມັກຂເມ່ນທີ່ເມືອງເວີມ ເພື່ອທີຈະບັງຄັບໃຫ້ຂ້າພະເຈົ້າຍົກເລີກຫລັກຄຳສອນ ຄຳປະກາດຂອງຂ້າພະເຈົ້າມີດັ່ງນີ້ ເມື່ອກ່ອນທີ່ຂ້າພະເຈົ້າເຄີຍກ່າວວ່າສັນຕະປາປາເປັນຕົວແທນຂອງພຣະຄຣິດ ແຕ່ບາດນີ້ຂ້າພະເຈົ້າຂໍປ່ຽນຄຳເວົ້າໃໝ່ວ່າສັນຕະປາປາເປັນປໍລະປັກຂອງພຣະອົງພຣະຜູ້ເປັນເຈົ້າແລະເປັນສາວົກຂອງຊາຕານ”

ນອກຈາກຜູ້ຊື່ຂ່າວຂອງຈັກກະພັດແລ້ວເພື່ອນອີກສາມຄົນຂອງລູເຕີກໍຕັດສິນໃຈຮ່ວມເດີນໄປກັບເພິ່ນດ້ວຍ ຈິດໃຈຂອງແມນແລງທອນມີຄວາມຜູກພັນກັບລູເຕີຫລາຍ ແລະເພິ່ນກໍຢາກຕິດຕາມໄປກັບເພິ່ນແຕ່ຄຳຂໍຮ້ອງຂອງເພິ່ນໄດ້ຮັບການປະຕິເສດ ລູເຕີກ່າວວ່າ “ຖ້າຂ້າພະເຈົ້າບໍ່ກັບມາແລະພວກສັດຕຣູຂ້າ ຂ້າພະເຈົ້າຕາຍກໍໃຫ້ທ່ານສັ່ງສອນແລະຢືນຢັດຢູ່ໃນຄວາມຈິງຕໍ່ໄປ ຂໍໃຫ້ທຳງານແທນຂ້າພະເຈົ້າດ້ວຍຖ້າຫາກທ່ານຍັງມີຊີວິດຢູ່ຄວາມຕາຍຂອງຂ້າພະເຈົ້າກໍບໍ່ສຳຄັນ”

ຈິດໃຈຂອງປະຊາຊົນເຕັມໄປດ້ວຍຄວາມທຸກເພາະຢ້ານວ່າຈະເກີດອັນຕຣາຍຕໍ່ລູເຕີ ຄົນເຫລົ່ານັ້ນຮູ້ວ່າໜັງສືຂອງລູເຕີຈະຕ້ອງໄດ້ຮັບການປະນາມທີ່ເມືອງເວີມ ຜູ້ຊື່ຂ່າວກໍຢ້ານຄວາມປອດພັຍຂອງລູເຕີຄະນະປະຊຸມສະພາຈຶ່ງຖາມເພິ່ນວ່າເພິ່ນຍັງຢາກຈະເດີນທາງຕໍ່ໄປຫລື ລູເຕີຕອບວ່າ “ເຖິງແມ່ນວ່າຂ້າພະເຈົ້າຈະຖືກສັ່ງຫ້າມທຸກໆ ເມືອງ ຂ້າພະເຈົ້າກໍຈະເດີນທາງຕໍ່ໄປໆ”

ທີ່ເມືອງອອຶກເຟຣິດ ລູເຕີໄດ້ເດີນໄປຕາມຖນົນຫລາຍສາຍທີ່ເພິ່ນເຄີຍເດີນຜ່ານໄປເລື້ອງໆ ເພິ່ນແວະຢ້ຽມໂບດທີ່ເພິ່ນເຄີຍອາສັຍຢູ່ແລະຄິດເຖິງອະດີດທີ່ຕ້ອງຕໍ່ສູ້ດີ້ນຣົນທີ່ໄດ້ກາຍເປັນແສງສວ່າງກຳລັງສ່ອງໄປທົ່ວປະເທດເຢຣະມັນໃນຂນະນີ້ລູເຕີຖືກຂໍຮ້ອງໃຫ້ເທສນາ ເພິ່ນເຄີຍຖືກຫ້າມບໍ່ໃຫ້ກະທຳເຊັ່ນນັ້ນ ແຕ່ຜູ້ຊື່ຂ່າວທີ່ພາມາໄດ້ໃຫ້ອະນຸຍາດ ບາດຫລວງຊຶ່ງຄັ້ງນຶ່ງເຄີຍທຳງານຮັບໃຊ້ຢ່າງໜັກໃນໂບດນີ້ ບັດນີ້ໄດ້ເດີນຂຶ້ນສູ່ທັມມາດ

ຝູງຊົນຕັ້ງໃຈຟັງສົ່າກັບວ່າຖືກສະກົດ ລູເຕີໄດ້ນຳອາຫານແຫ່ງຊີວິດອອກແຈກຈ່າຍແກ່ຈິດວິນຍານທີ່ຫິວກະຫາຍເຫລົ່ານັ້ນ ຕໍ່ໜ້າຝູງຊົນເຫລົ່ານັ້ນພຣະຄຣິດ



ຕັດສິນປະຫານຊີວິດເພິ່ນໃນວັນດຽວທີ່ປະກາດໂທດ ເວລາທ່ຽງເບີແກງຖືກນຳໄປຍັງສະຖານທີ່ປະຫານ ຝູງຊົນພາກັນມາຢ່າງໜາແໜ້ນເພື່ອເປັນພະຍານໃນເຫດການຫລາຍຄົນມອງເບິ່ງດ້ວຍຄວາມຕົກຕະລຶງຕໍ່ເຫດການເຫລົ່ານັ້ນເພາະວ່າຜູ້ທີ່ຖືກປະຫານຊີວິດເທື່ອນີ້ເປັນຜູ້ທີ່ຖືກເລືອກຈາກຄອບຄົວຜູ້ສູງສັກແລະກ້າຫານທີ່ສຸດຂອງຝຣັ່ງເສດສິ່ງທີ່ໜ້າອັສຈັນໃຈກໍຄືໃບໜ້າຂອງຝູງຊົນເຫລົ່ານັ້ນເຕັມໄປດ້ວຍຄວາມໂກດເຄືອງສະແດງການດູໝິ່ນຢຽບຫຍາມແລະກຽດຊັງ ແຕ່ໃບໜ້າຂອງຜູ້ນຶ່ງເບີແກງກັບບໍ່ມີແວວຂອງຄວາມໝົ້ນໝອງແມ່ນແຕ່ນ້ອຍດຽວ ຜູ້ຍອມສະລະຊີວິດເພື່ອສາສນາຂອງຕົນເອງ ຮູ້ສຶກແຕ່ພຽງວ່າການສະຖິດຂອງພຣະອົງພຣະຜູ້ເປັນເຈົ້າເທົ່ານັ້ນ

ໃບໜ້າຂອງເບີແກງນັ້ນເຕັມໄປດ້ວຍຣັສມີແຫ່ງສວັນ ເພິ່ນແຕ່ງກາຍດ້ວຍເສື້ອຜ້າຢ່າງດີ “ເສື້ອຄຸມກຳມະຫຍີ່ ເສື້ອແພຕ່ວນລວດລາຍງາມວິຈິດແລະໂສ້ງຮັດຮູບສີທອງ” ເພິ່ນກຳລັງເປັນພະຍານຕໍ່ພຣະພັກຂອງພຣະຈອມກະສັດບໍ່ມີອາການຂອງຄວາມເສົ້າໂສກມາປິດບັງຄວາມຊື່ນຊົມຍິນດີຂອງເພິ່ນແມ່ນແຕ່ນ້ອຍດຽວ ຂນະທີ່ຂບວນປະຫານເຄື່ອນຊ້າໆ ໄປຕາມຖນົນທີ່ແອອັດໄປດ້ວຍຝູງນັ້ນ ຄົນເຫລົ່ານັ້ນພາກັນປະຫລາດໃຈໃນຊັຍຊະນະທີ່ໜ້າຊື່ນຊົມຍິນດີຂອງເບີແກງ ພວກເຂົາເວົ້າກັນວ່າ “ເພິ່ນເປັນເໝືອນຄົນທີ່ນັ່ງຢູ່ໃນໂບດແລ້ວອະທິຖານພາວັນນາເຖິງສິ່ງບໍຣິສຸດ”

## ເບີແກງທີ່ແດນປະຫານ

ເມື່ອໄປເຖິງທີ່ປະຫານ ເບີແກງພຍາຍາມຈະກ່າວປາສັຍກັບຝູງຊົນສອງສາມຄຳ ແຕ່ບາດຫລວງເລີ່ມສົ່ງສຽງຮ້ອງຕະໂກນແລະພວກທະຫານກໍເອົາອາວຸດກະທົບກັນສຽງດັງເພື່ອກົບສຽງຜູ້ສະລະຊີວິດເພື່ອສາສນາ ດັ່ງນັ້ນໃນປີ 1529 ຜູ້ມີອຳນາດສູງສຸດທາງດ້ານສາສນາໃນປາຣີໄດ້ “ຕັ້ງເປັນທັມນຽມສຳລັບປະຊາຊົນໃນປີ ຄ. ສ. 1793 ໃຫ້ເຮັດສຽງດັງເພື່ອບໍ່ໃຫ້ຝູງຊົນໄດ້ຍິນຖ້ອຍຄຳອັນສັກສິດຂອງຜູ້ທີ່ກຳລັງຈະຕາຍ ນະແດນປະຫານ” ເບີແກງຖືກແຂວນຄໍແລະຮ່າງກາຍຂອງເພິ່ນຖືກເຜົາໄຟ

## ເບີແກງຜູ້ກ້າຫານ

ແຕ່ເບີແກງກັບມີໃຈຮ້ອນຮົນຫລາຍຂຶ້ນ ເພິ່ນໄດ້ຕັດສິນໃຈແນ່ວແນ່ທີ່ຈະທຳງານດ້ວຍຄວາມກ້າຫານ ບໍ່ພຽງແຕ່ຢືນຢັນຕໍ່ສູ້ເພື່ອຄວາມຈິງເທົ່ານັ້ນ ແຕ່ຈະກ່າວປະນາມຄວາມບໍ່ຖືກຕ້ອງອີກດ້ວຍ ປໍລະປັກທີ່ຮ້າຍກາດເພິ່ນກໍຄືພວກບາດຫລວງສາສນາຈານຄະນະສາສນາສາດຂອງມະຫາວິທະຍາລັຍແຫ່ງປາຣີ ຊຶ່ງເປັນມະຫາວິທະຍາລັຍທີ່ສອນກ່ຽວກັບສາສນາຊັ້ນສູງສຸດແຫ່ງນຶ່ງຂອງຊາດ ຈາກໜັງສືທີ່ສາສນາຈານເຫລົ່ານີ້ຂຽນໄວ້ ເບີແກງໄດ້ນຳເອົາຂໍ້ສເນີ 12 ປະການອອກມາເປີດເຜີຍແກ່ສາທາຣະນະຊົນ ເພິ່ນປະກາດວ່າຂັດແຍ່ງກັບພຣະຄັມພີ" ເພິ່ນໄດ້ທູນຂໍໃຫ້ພຣະຣາຊາໄດ້ຕັດສິນໃຈໃນຂໍ້ກໍຣະນີຜິດພາດຄັ້ງນີ້

ພຣະຣາຊາຊົງຍິນດີທີ່ມີໂອກາດທີ່ຈະເຮັດໃຫ້ບາດຫລວງຜູ້ເຫຍີຍິ່ງເຫລົ່ານີ້ຖ່ອມຕົວລົງ ຈຶ່ງຕຣັດສັ່ງໃຫ້ຝ່າຍໂຣມໃຊ້ພຣະຄັມພີເປັນການຕໍ່ສູ້ປ້ອງກັນຄຳສອນຂອງພວກເຂົາ ທຸກຄົນຮູ້ດີວ່າອາວຸດນີ້ຈະຊ່ອຍເພິ່ນໄດ້ພຽງເລັກນ້ອຍເທົ່ານັ້ນ ເພາະນັກບວດເຫລົ່ານີ້ຮູ້ຈັກໃຊ້ອາວຸດສຳລັບທໍຣະມານຄົນແລະເຜົາຄົນທັງເປັນໄດ້ດີກວ່າ ເວລານີ້ພວກເຂົາຮູ້ດີວ່າກຳລັງຕົກຫລຸມພາງທີ່ຫວັງຈະໃຫ້ເບີແກງຖລຳລົງໄປ ຈຶ່ງໄດ້ມອງຫາຫົນທາງເພື່ອຈະໜີເອົາຕົວລອດ

"ໃນເວລານັ້ນເອງຮູບປັ້ນຂອງພຣະແມ່ຊືອາທີ່ແຈຖນົນສາຍນຶ່ງຖືກຕັດແຂນ" ປະຊາຊົນພາກັນຈັບກຸ່ມມອງເບິ່ງດ້ວຍຄວາມເສົ້າໂສກແລະໂກດເຄືອງ ພຣະຣາຊາຮູ້ສຶກສະເທືອນພຣະທັຍຢ່າງຫລວງຫລາຍ ບາດຫລວງອີງນຶ່ງຮ້ອງວ່າ "ນີ້ຕ້ອງເປັນເພາະຜົນຫລັກຄຳສອນຂອງເບີແກ່ງແນ່ນອນ ພວກທີ່ຖືຄຳສອນຂອງລູເຕີມີແຜນຮ້າຍທີ່ຈະທຳລາຍທຸກສິ່ງທຸກຢ່າງ ທັງສາສນາ ກົດໝາຍ ແລະຣາຊບັນລັງ"

ເມື່ອພຣະຣາຊາສະເດັດໄປຈາກປາຣີ ບັນດາບາດຫລວງມີອິສາຣະຈະເຮັດອັນໃດໄດ້ຕາມຄວາມພໍໃຈ ເບີແກງຖືກພິຈາຣະນາສອບສວນແລະຖືກຕັດສິນປະຫານຊີວິດ ພຣະເຫລົ່ານັ້ນເກງວ່າພຣະເຈົ້າຟຣານຊິສຈະມາຊ່ອຍເບີແກງໃຫ້ພົ້ນໂທດ ຈຶ່ງ



ໄດ້ຮັບການຍົກຍ້ອງຂຶ້ນເໜືອສັນຕະປາປາ, ຂ້າຣາຊການ, ຈັກກະພັດ ແລະກະສັດລູເຕີ ບໍ່ເວົ້າເຖິງເຫດອັນຕຣາຍທີ່ເກີດຂຶ້ນກັບເພິ່ນເລີຍ ເພິ່ນວາງໃຈໃນພຣະຄຣິດ ຈົນລືມນຶກເຖິງຕົວເອງ ແລະຫລີ້ຕົວຢູ່ຂ້າງຫລັງບຸຣຸດແຫ່ງຄານວາລີສະແຫວງຫາວິທີທີ່ຈະສະແດງ ໃຫ້ຮູ້ວ່າພຣະເຢຊູເປັນພຣະຜູ້ໄຖ່ຄົນບາບເທົ່ານັ້ນ

## ຄວາມກ້າຫານຂອງຜູ້ສະລະຊີບເພື່ອສາສນາ

ຂນະທີ່ນັກປະຕິຮູບເດີນທາງຕໍ່ໄປ ຝູງຊົນພາກັນຈ້ອງມອງເບິ່ງເພິ່ນດ້ວຍຄວາມສົນໃຈ ສຽງທີ່ສະແດງຄວາມເປັນມິດເຕືອນໃຫ້ເພິ່ນກ່ຽວກັບພັກພວກສັນຕະປາປາວ່າ "ພວກເຂົາຈະເຜົາເພິ່ນແລະທຳລາຍເພິ່ນຈົນເຫລືອແຕ່ເຖົ່າຖ່ານເໝືອນກັບເຂົາໄດ້ເຜົາຈອນຮັດ" ລູເຕີຕອບພວກເຂົາໄປວ່າ "ແມ່ນວ່າພວກເຂົາຈະກໍ່ໄຟຕລອດທາງຈາກເມືອງເວີມເຖິງເມືອງວິດເຕນເບີກ ຂ້າພະເຈົ້າກໍຈະເດີນຜ່ານແປວໄຟໄປໃນນາມຂອງພຣະຜູ້ເປັນເຈົ້າ ຂ້າພະເຈົ້າຈະຕ້ອງຢືນຕໍ່ໜ້າພວກເຂົາເພື່ອປະກາດພຣະນາມຂອງພຣະເຢຊູຄຣິດເຈົ້າ"

ຂ່າວທີ່ລູເຕີຈະໄປເມືອງເວີມ ກໍໃຫ້ເກີດຄວາມສັບສົນວຸ່ນວາຍໄປທົ່ວ ບັນດາເພື່ອນຂອງເພິ່ນຢ້ານກົວວ່າລູເຕີຈະໄດ້ຮັບອັນຕຣາຍ ພວກສັດຕຣູກໍຢ້ານວ່າພວກເຂົາຈະທຳງານບໍ່ສຳເຣັດເຈົ້າໜ້າຂອງສັນຕະປາປາໄດ້ແນະນຳໃຫ້ລູເຕີໄປພັກຢູ່ທີ່ປະສາດຂອງອັສວິນຜູ້ເປັນມິດແລະປະກາດວ່າ ພວກເຂົາຈະຈັດການເຣື່ອງຫຍຸ້ງຍາກທັງຫລາຍຢ່າງເປັນມິດ ເພື່ອນໆ ຂອງລູເຕີ ພຍາຍາມພັນລະນາເຖິງອັນຕຣາຍທີ່ຈະເກີດແກ່ເພິ່ນ ເຖິງຢ່າງນັ້ນເພິ່ນກໍກ່າວຕອບຢ່າງບໍ່ພັນພຶ່ງວ່າ "ເຖິງແມ່ນວ່າໃນເມືອງເວີມຈະມີມານຫລາຍເທົ່າກັບກະເບື້ອງເທິງຫລັງຄາ ຂ້າພະເຈົ້າກໍຍັງຈະເຂົ້າໄປໃນເມືອງນັ້ນ"

ເມື່ອລູເຕີໄປເຖິງເມືອງເວີມ ຝູງຊົນຫລວງຫລາຍພາກັນໄປຕ້ອນຮັບເພິ່ນທີ່ປະຕູເມືອງ ທຸກຄົນມີຄວາມຕື່ນເຕັ້ນເປັນຢ່າງຫລວງຫລາຍ ຂນະທີ່ລົງມາຈາກຣົດມ້າເພິ່ນກ່າວວ່າ "ພຣະເຈົ້າຈະຊົງປົກປ້ອງຂ້າພະເຈົ້າ" ການໄປເຖິງເມືອງເວີມຂອງ

ເພິ່ນຄັ້ງນີ້ເຮັດໃຫ້ພັກພວກຂອງສັນຕະປາປາພາກັນຕົກຕະລຶງ ຈັກກະພັດໄດ້ຮຽກທີ່ປຶກສາຂອງພຣະອົງມາປະຊຸມປຶກສາຫາລືວ່າຄວນຈະຈັດການຢ່າງໃດຕໍ່ໄປ ຜູ້ສນັບສນູນສັນຕະປາປາຜູ້ເຂັ້ມແຂງທ່ານນຶ່ງໄດ້ປະກາດວ່າ "ເຮົາປຶກສາຫາລືເຣື່ອງກັນມານານແລ້ວຂໍໃຫ້ຈັກກະພັດກຳຈັດບຸກຄົນຜູ້ນີ້ທັນທີ ຈັກກະພັດໄຊຈິດສະມັນເປັນຜູ້ຕຣັດສັ່ງໃຫ້ເຜົາຈອນຮັດບໍ່ແມ່ນຫລື ເຮົາບໍ່ມີຂໍ້ຜູກມັດໃດໆ ທີ່ຈະໄດ້ຫລືຮັກສາສັນຍາກ່ຽວກັບໃບຮັບຮອງຄວາມປອດພັຍຂອງຄົນນອກຮີດ" ຈັກກະພັດຕຣັດວ່າ "ແຕ່ເຮົາເຮັດເຊັ່ນນັ້ນບໍ່ໄດ້ເຮົາຕ້ອງຮັກສາສັນຍາຂອງເຮົາ" ໃນທີ່ສຸດທີ່ປະຊຸມຈຶ່ງຕົກລົງກັນວ່າຈະຍອມຮັບຟັງຄຳແກ້ຄະດີຂອງນັກປະຕິຮູບ

ທຸກຄົນໃນເມືອງຕ່າງມີຄວາມກະຕືລືລົ້ນຢາກຈະເຫັນຊາຍຜູ້ໜ້າສົນໃຈຄົນນີ້ ລູເຕີຊຶ່ງມີຄວາມເໜັດເໜື່ອຍເນື່ອງຈາກການເດີນທາງຫລາຍວັນຕ້ອງການພັກຜ່ອນງຽບໆ ແຕ່ເພິ່ນພັກຜ່ອນພຽງບໍ່ເທົ່າໃດຊົ່ວໂມງພວກຂຸນນາງອັສວິນບາດຫລວງແລະປະຊາຊົນກໍມາອ້ອມລ້ອມເພິ່ນ ໃນບັນດາຄົນເຫລົ່ານີ້ມີພວກຂຸນນາງຫລາຍຄົນທີ່ກ້າຂໍຮ້ອງໃຫ້ຈັກກະພັດແກ້ໄຂການໃຊ້ອຳນາດທາງສາສນາໃນທາງທີ່ຜິດ ພວກສັດຕຣູແລະບັນດາມິດສະຫາຍພາກັນມາມອງເບິ່ງບາດຫລວງຜູ້ກ້າຫານ ກິຣິຍາທ່າທາງຂອງລູເຕີໄດ້ສະແດງໃຫ້ເຫັນວ່າເພິ່ນມີໃຈໜັກແໜ້ນແລະເຂັ້ມແຂງໃບໜ້າທີ່ຊູບຊີບ ແລະບອບບາງຂອງເພິ່ນສະແດງໃຫ້ເຫັນເຖິງຄວາມເມດຕາ ແລະຄວາມຊົມຊື່ນຍິນດີຖ້ອຍຄຳທີ່ເພິ່ນກ່າວຢ່າງເອົາຈິງເອົາຈັງມີພະລັງອຳນາດ ຈົນແມ່ນແຕ່ສັດຕຣູກໍບໍ່ສາມາດທົນໄດ້ ບາງຄົນເຊື່ອວ່າພຣະເຈົ້າຊົງສະຖິດຢູ່ກັບເພິ່ນ ບາງຈຳພວກກໍເວົ້າເໝືອນກັບພວກຟາລີຊາຍທີ່ກ່າວຫາພຣະຄຣິດວ່າ "ມັນມີຜີສິງຢູ່ແລະເປັນບ້າແລ້ວ" (ໂຢຮັນ 10:20)

ໃນວັນໃໝ່ຕໍ່ມາເຈົ້າໜ້າທີ່ຂອງຈັກກະພັດໄດ້ຮັບມອບໝາຍໃຫ້ນຳລູເຕີໄປຍັງຫ້ອງປະຊຸມ ຖນົນທຸກສາຍເຕັມໄປດ້ວຍຝູງຊົນຜູ້ກະຫາຍຢາກຈະເຫັນບາດຫລວງຜູ້ກ້າຕໍ່ສູ້ຂັດຂວາງສັນຕະປາປາ ແມ່ທັບຊະລາຜູ້ນຶ່ງຊຶ່ງເຄີຍອອກສູ້ຮົບມາຫລາຍຄັ້ງໄດ້ເວົ້າກັບລູເຕີດ້ວຍຄວາມປານີວ່າ "ບາດຫລວງທີ່ໜ້າສົງສານເອີຍ ທ່ານກຳລັງຈະເຮັດໃນສິ່ງທີ່ກ້າຫານຍິ່ງກວ່າຂ້າພະເຈົ້າຫລື ຍິ່ງກວ່າແມ່ທັບທັງຫລາຍທີ່ເຄີຍຜ່ານການສົງຄາມນອງເລືອດໄດ້ກະທຳມາແລ້ວ ແຕ່ຖ້າການກະທຳຂອງທ່ານຍຸດຕິທັມຂໍ



ຄັມພີອັນສັກສິດອ່ານ ພວກທີ່ທຳງານໃນທົ່ງນາ ພວກຊ່າງສິລປະທີ່ທຳງານໃນຮ້ານມີຄວາມສນຸກສນານໃນການທຳງານປະຈຳວັນຂອງພວກເຂົາດ້ວຍການສົນທະນາກັນເຖິງຄວາມຈິງອັນລ້ຳຄ່າໃນພຣະຄັມພີໄປດ້ວຍ ບໍ່ວ່າຈະເປັນຊາວນາຊົນຊັ້ນທີ່ຕ່ຳຕ້ອຍດ້ອຍການສຶກສາ ແລະທຳງານໜັກກໍຕາມຄວາມປ່ຽນແປງໂດຍຣິດທານຸພາບແຫ່ງພຣະຄຸນຂອງພຣະເຈົ້າກໍປາກົດໃຫ້ເຫັນໃນຊີວິດຂອງພວກເຂົາເຫລົ່ານັ້ນ

ແສງສວ່າງທີ່ຖືກຈູດໃນເມືອງມົວໄດ້ສ່ອງສວ່າງໄປໄກ ໃນແຕ່ລະວັນມີຄົນກັບໃຈເພີ່ມຂຶ້ນເລື້ອຍໆ ຄວາມຄຽດແຄ້ນແລະການກົດຂີ່ຂົ່ມເຫງຂອງພັກພວກຂອງສັນຕະປາປາໄດ້ສງົບໄປຊົ່ວໄລຍະນຶ່ງເພາະພຣະຣາຊາຄອຍຊ່ອຍເຫລືອ ແຕ່ໃນທີ່ສຸດພວກຜູ້ນຳຂອງສັນຕະປາປາກໍມີຊັຍຊະນະມີການຕັ້ງເສົາຂຶ້ນມາຫລາຍຄົນທີ່ເປັນພະຍານໃຫ້ກັບຄວາມຈິງຖືກຈັບໄປເຜົາທັງເປັນ

ໃນຫ້ອງໂຖງຫລາຍແຫ່ງຂອງປະສາດຂອງພວກເຈົ້ານາຍຍັງມີບຸກຄົນທີ່ມີເຊື້ອສາຍຂອງກະສັດຊຶ່ງຍົກຍ້ອງເຊີດຊູຄວາມຈິງວ່າເປັນສິ່ງມີຄ່າເໜືອກວ່າຊັບສົມບັດ ຍົດຖາບັນດາສັກບໍ່ວ່າແຕ່ຊີວິດ ຫລຸຍ ເດີ ເບີແກງ ເກີດໃນຕະກຸນຜູ້ດີເປັນຜູ້ໃຝ່ໃນການສຶກສາ ມີກິຣິຍາມາຣະຍາດສຸພາບຮຽບຮ້ອຍບໍ່ມີຕຳນິໃນເຣື່ອງສິລທັມອັນດີງາມ " ເພິ່ນມີຄຸນຄວາມດີອື່ນໆ ຢູ່ຢ່າງຄົບຖ້ວນ ເພິ່ນຖືວ່າຄຳສອນຂອງລູເຕີເປັນສິ່ງທີ່ໜ້າລັງກຽດເປັນຢ່າງຍິ່ງ" ແຕ່ເມື່ອໄດ້ສຶກສາພຣະຄັມພີກໍເກີດຄວາມອັສຈັນໃຈເມື່ອພົບວ່າ "ບໍ່ແມ່ນຫລັກຄວາມເຊື່ອຂອງໂຣມ ແຕ່ເປັນຫລັກຄວາມເຊື່ອຂອງລູເຕີ" ເພິ່ນຈຶ່ງຖວາຍຕົວເອງໃນການທຳງານປະກາດຂ່າວປະເສີດ

ຜູ້ທີ່ນັບຖືສາສນາໂຣມ ໃນຝຣັ່ງຈັບເບີແກງຂັງຄຸກຖານເປັນຄົນນອກຮີດ ແຕ່ພຣະຣາຊາຊົງປົດປ່ອຍເພິ່ນ ເປັນເວລາຫລາຍປີພຣະເຈົ້າຟຣານຊິສທີ່ 1 ມີພຣະທັຍໂລເລ ບາງເທື່ອກໍຢູ່ຝ່າຍສັນຕະປາປາບາງເທື່ອກໍຢູ່ຝ່າຍນັກປະຕິຮູບສາສນາ ເບີແກງຖືກຜູ້ມີອຳນາດຝ່າຍສັນຕະປາປາຈຳຄຸກເຖິງສາມເທື່ອ ພຣະຣາຊາຊົງຜູ້ບໍ່ຍອມໃຫ້ຄະນະສົງທີ່ປະສົງຮ້າຍນຳຕົວເຂົາໄປລົງໂທດ ມີຜູ້ເຕືອນເບີແກງໃຫ້ຮູ້ລ່ວງໜ້າຫລາຍເທື່ອ ເຖິງພັຍອັນຕຣາຍທີ່ຈະເກີດຂຶ້ນແກ່ເພິ່ນໃນປະເທດຝຣັ່ງເສດແລະໄດ້ຮັບຄຳແນະນຳໃຫ້ປະຕິບັດເໝືອຄົນທັງຫລາຍຄືໃຫ້ໜີໄປຢູ່ບ່ອນອື່ນເພື່ອຄວາມປອດພັຍ

ຄຸນໄມ້ກາງແຂນຂອງພຣະຄຣິດເທົ່ານັ້ນທີ່ສາມາດເປີດປະຕູສວັນແລະປິດປະຕູນາຣົກ"

ດ້ວຍການກັບໃຈໃໝ່ເຊັ່ນດຽວກັບໂປໂລ ຟາເຣນໄດ້ໜີຈາກການເປັນທາດຂອງຂນົບທັມນຽມປະເພນີເພື່ອຮັບເອົາອິສາຣະພາບມາເປັນບຸດຂອງພຣະເຈົ້າ "ແທນທີ່ຈະມີຈິດໃຈໂຫດຮ້າຍເໝືອນໝາປ່າ ແຕ່ກັບອ່ອນສຸພາບແລະບໍ່ມີພິດພັຍເໝືອນລູກແກະເພິ່ນໄດ້ຖອນຕົວຈາກສັນຕະປາປາຢ່າງສິ້ນເຊີງ ແລ້ວມອບຈິດໃຈທັງໝົດໃຫ້ພຣະເຢຊູຄຣິດ"

ຂນະທີ່ເລີແຟໄດ້ເຜີຍແຜ່ແສງສວ່າງແກ່ນັກສຶກສາຂອງເພິ່ນ ຟາເຣນອອກໄປປະກາດຄວາມຈິງແກ່ປະຊາຊົນ ຕໍ່ມາບໍ່ດົນບັນດາຜູ້ນຳທີ່ມີຕຳແໜ່ງສູງໃນຄຣິສຕະຈັກແລະບິດຊອບແຫ່ງເມືອງມົວກໍເຂົ້າຮ່ວມປະກາດຄວາມຈິງກັບພວກເຂົາດ້ວຍ ນອກຈາກນັ້ນບັນດາອາຈານຄົນອື່ນກໍໄດ້ຮ່ວມສົມທົບປະກາດຂ່າວປະເສີດຄົນທຸກຊັ້ນວັນນະທັງພວກຊ່າງຝີມືແລະຄົນຍາກຈົນໄປຈົນເຖິງຜູ້ທີ່ຢູ່ຣາຊວັງຂອງກະສັດຕ່າງຍອມຮັບຂ່າວປະເສີດຂອງພຣະເຈົ້າ ພຣະຂະນິສຖາຂອງພຣະເຈົ້າຟຣານ ຊິສທີ່ 1 ໄດ້ຍອມຮັບຄຳສອນຂອງການປະຕິຣູບສາສນາ ນັກປະຕິຣູບສາສນາຕ່າງກໍຕັ້ງຄວາມຫວັງໄວ້ຢ່າງສູງວ່າເວລາຈະມາເຖິງຂ່າວປະເສີດຈະຊະນະຝຣັ່ງເສດ

## ພຣະຄັມພີພັນທະສັນຍາໃໝ່ພາສາຝຣັ່ງເສດ

ແຕ່ຄວາມມຸ່ງຫວັງຂອງພວກເຂົາບໍ່ໄດ້ເປັນຜົນສຳເຣັດເລີຍ ຄວາມຍາກລຳບາກແລະການກົດຂີ່ຂົ່ມເຫງລໍຄອຍສາວົກຂອງພຣະຄຣິດຢູ່ແລ້ວ ຢ່າງໃດກໍຕາມຊ່ວງເວລາແຫ່ງສັນຕິເກີດຂຶ້ນຊົ່ວຂນະນຶ່ງ ເພື່ອພວກເຂົາມີເວລາເສີມກຳລັງເພື່ອປະເຊີນກັບເຫດການຫຍຸ້ງຍາກໃນວັນຂ້າງໜ້າ ການປະຕິຣູບສາສນາໄດ້ຈະເຣີນກ້າວໜ້າໄປຢ່າງວ່ອງໄວ ເລີແຟໄດ້ແປພຣະຄັມພີໃໝ່ເປັນພາສາຝຣັ່ງເສດໃນເວລາດຽວກັນກັບພຣະຄັມພີພາສາເຢຣະມັນຂອງລູເຕີ ໄດ້ຈັດພິມຂຶ້ນທີ່ເມືອງວິດເທນເບີກ ພຣະຄັມພີໃໝ່ພາສາຝຣັ່ງເສດໄດ້ຈັດພິມຂຶ້ນທີ່ເມືອງມົວ ບໍ່ດົນຕໍ່ມາຊາວນາເມືອງມົວກໍມີພຣະ



ໃຫ້ເຮັດຕໍ່ໄປໃນພຣະນາມຂອງພຣະເຈົ້າໂດຍບໍ່ຕ້ອງຫວັ່ນເກງຕໍ່ສິ່ງໃດ ພຣະເຈົ້າຈະບໍ່ລະຖິ້ມທ່ານ

## ລູເຕີຕໍ່ໜ້າທີ່ປະຊຸມ

ຈັກກະພັດປະທັບຢູ່ເທິງພຣະທີ່ນັ່ງ ແວດລ້ອມໄປດ້ວຍບຸກຄົນສຳຄັນໃນຣາຊອານາຈັກ ບັດນີ້ ມາຕິນລູເຕີ ຕ້ອງຕອບຄຳຖາມກ່ຽວກັບຄວາມເຊື່ອຂອງເພິ່ນ "ການປາກົດຕົວຄັ້ງນີ້ເປັນສັນຍານໃນຕົວບອກເຖິງຊັຍຊະນະເໜືອສັນຕະປາປາພຣະອົງໄດ້ກ່າວໂທດຊາຍຄົນນີ້ ແລະບັດນີ້ຊາຍຄົນນັ້ນກໍມາຢືນຢູ່ຕໍ່ໜ້າສານຊຶ່ງຖືວ່າມີອຳນາດເໜືອສັນຕະປາປາ ພຣະສັນຕະປາປາເຄີຍຕັດສິນລົງໂທດລູເຕີໂດຍຕັດເພິ່ນອອກຈາກສັງຄົມຂອງມະນຸດທັງໝົດ ແຕ່ເພິ່ນກໍຖືກຮຽກຕົວມາໃຫ້ປາກົດຕໍ່ໜ້າທີ່ປະຊຸມດ້ວຍຖ້ອຍທີ່ສະແດງການໃຫ້ກຽດ ແລະໄດ້ຮັບການຕ້ອນຮັບຕໍ່ໜ້າບັນດາຜູ້ມີອຳນາດຜູ້ສູງສະງ່າຂອງໂລກ ໂຣມກຳລັງເຊື່ອມອຳນາດເພາະສຽງຂອງບາດຫລວງອົງນຶ່ງທີ່ເຮັດໃຫ້ໄດ້ຮັບຄວາມອັບອາຍ"

ນັກປະຕິຣູບສາສນາຜູ້ເກີດມາໃນຖານະທີ່ຕ່ຳຕ້ອຍເບິ່ງເໝືອນວ່າຈະຮູ້ສຶກປະຫວັ່ນພັ່ນພຶງ ແລະລຳບາກໃຈທີ່ມີເຈົ້ານາຍເຂົ້າໃຫ້ເພິ່ນ ແລະມີອົງນຶ່ງກະຊິບວ່າ "ຢ່າສູ່ຢ້ານຜູ້ທີ່ຂ້າໄດ້ແຕ່ກາຍ ແຕ່ຈະຂ້າຈິດວິນຍານບໍ່ໄດ້" ແລະອີກອົງນຶ່ງກໍກ່າວວ່າ "ເຂົາຈະພາພວກທ່ານໄປຫາເຈົ້າເມືອງແລະກະສັດເພາະເຫັນແກ່ເຮົາເພື່ອໃຫ້ເປັນພະຍານແກ່ເຂົາແລະແກ່ຄົນຕ່າງຊາດເໝືອນກັນ" (ມັດທາຍ 10:18,19, 29)

ພາຍໃນຫ້ອງປະຊຸມທີ່ມີຜູ້ຄົນຢູ່ເຕັມນັ້ນງຽບສະງັດ ຈາກນັ້ນຂ້າຣາຊການຄົນນຶ່ງໄດ້ຢືນຂຶ້ນຊີ້ມືໄປຍັງບັນດາໜັງສືທີ່ລູເຕີຂຽນແລະຂໍໃຫ້ເພິ່ນຕອບຄຳຖາມສອງຂໍ້ຄືລູເຕີຈະຍອມຮັບວ່າໜັງສືເຫລົ່ານັ້ນເປັນໜັງສືຂອງເພິ່ນຫລືບໍ່ ແລະເພິ່ນຈະຍອມຍົກເລີກຄວາມຄິດເຫັນທີ່ໄດ້ຂຽນໄວ້ໃນໜັງສືເຫລົ່ານັ້ນຫລືບໍ່ ເມື່ອເຈົ້າໜ້າທີ່ອ່ານຊື່ໜັງສືເຫລົ່ານັ້ນແລ້ວ ລູເຕີຕອບຄຳຖາມຂໍ້ທຳອິດວ່າໜັງສືເຫລົ່ານັ້ນເປັນໜັງສືຂອງເພິ່ນ "ສ່ວນຄຳຖາມຂໍ້ທີ່ສອງນັ້ນ" ລູເຕີກ່າວວ່າ "ຂ້າພະເຈົ້າຈະຕ້ອງຄິດໃຫ້ລອບ

ຄອບເສັຽກ່ອນທີ່ຈະຕອບເພາະຖ້າບໍ່ດັ່ງນັ້ນແລ້ວ ຂ້າພະເຈົ້າອາດຈະຢືນຢັນນ້ອຍກວ່າກໍຣະນີແວດລ້ອມຕ້ອງການຫລືຫລາຍກວ່າທີ່ຄວາມຈິງກຳນົດດ້ວຍເຫດຜົນ ດັ່ງກ່າວຂ້າພະເຈົ້າຈຶ່ງທູນວິງວອນຂໍອົງຈັກກະພັດດ້ວຍຄວາມຖ່ອມໃຈລົງຂໍໃຫ້ຂ້າພະເຈົ້າມີເວລາຄິດຫາຄຳຕອບເພື່ອຈະບໍ່ເປັນທີ່ຄັດຄ້ານຕໍ່ພຣະທັມຂອງພຣະເຈົ້າ"

ລູເຕີເຮັດໃຫ້ທີ່ປະຊຸມໝັ້ນໃຈວ່າ ເພິ່ນບໍ່ໄດ້ເຮັດຫຍັງທີ່ເປັນການເອົາແຕ່ໃຈຕົນເອງຫລືດ້ວຍອາຣົມວູບວາບ ຄວາມສຸກຂຸມເຢືອກເຢັນ ແລະຄວບຄຸມຕົວເອງຄວາມກ້າຫານທີ່ບໍ່ອາດຄິດແລະບໍ່ຍອມປານີປານອມເຮັດໃຫ້ລູເຕີຕອບຄຳຖາມດ້ວຍສະຕິບັນຍາແລະດ້ວຍການຕັດສິນໃຈຢ່າງເດັດຂາດ ຈົນເຮັດໃຫ້ສັດຕຣູຂອງເພິ່ນປລາດ ໃຈແລະກາຍເປັນການກ່າວຕິຕຽນຄວາມຍິ່ງຍະໂສຂອງພວກເຂົາເອງ

ໃນວັນໃໝ່ ລູເຕີຈະຕ້ອງປະກາດຕໍ່ໜ້າທີ່ປະຊຸມເພື່ອໃຫ້ຄຳຕອບເປັນຄັ້ງສຸດທ້າຍຊົ່ວລະຍະນຶ່ງເພິ່ນກໍຮູ້ສຶກຫວາດກົວຢູ່ໃນໃຈ ສັດຕຣູຂອງເພິ່ນເບິ່ງເໝືອນຈະໄດ້ຮັບຊັຍຊະນະເມກໝອກຫຸ້ມລ້ອມເພິ່ນໄວ້ແລະເໝືອນກັບຈະແຍກເພິ່ນອອກຈາກພຣະອົງດ້ວຍຄວາມທຸກທໍຣະມານດ້ວຍສຸດແສນສາຫັດໃນຈິດໃຈ ລູເຕີຮ້ອງຂໍຕໍ່ພຣະເຈົ້າດ້ວຍຄວາມເຈັບປວດທີ່ບໍ່ມີໃຜສາມາດເຂົ້າໃຈໄດ້ນອກຈາກພຣະອົງ

ເພິ່ນວິງວອນຕໍ່ພຣະເຈົ້າວ່າ "ຂ້າແດ່ພຣະເຈົ້າຜູ້ຊົງຣິດທານຸພາບອົງນິຣັນດອນ ຫາກຂ້ານ້ອຍໄວ້ວາງໃຈໃນກຳລັງຂອງໂລກນີ້ເທົ່ານັ້ນທຸກສິ່ງທຸກຢ່າງກໍສິ້ນສຸດລົງແລ້ວ ຊົ່ວໂມງສຸດທ້າຍຂອງຂ້ານ້ອຍມາເຖິງແລ້ວໂທດຂອງຂ້ານ້ອຍຖືກປະກາດແລ້ວ ຂ້າແດ່ພຣະເຈົ້າ ຂໍຊົງໂປຣດຊ່ອຍຂ້ານ້ອຍຕໍ່ສູ້ກັບຜູ້ມີສະຕິບັນຍາທັງຫລາຍໃນໂລກນີ້ ກິຈການນີ້ເປັນຂອງພຣະອົງເປັນກິຈການແຫ່ງຄວາມຊອບທັມແລະຊີວິດນິຣັນດອນ ຂ້າແດ່ພຣະເຈົ້າ ໂປຣດຊ່ອຍຂ້ານ້ອຍດ້ວຍພຣະອົງເປັນຜູ້ຊົງສັດຊື່ແລະບໍ່ປ່ຽນແປງ ຂ້ານ້ອຍບໍ່ມີຄວາມໄວ້ວາງໃຈໃນມະນຸດຄົນໃດພຣະອົງຊົງເລືອກຂ້ານ້ອຍໃຫ້ກະທຳການນີ້ ຂໍຊົງປະທັບຢູ່ຄຽງຂ້າງພຣະອົງເພື່ອເຫັນແກ່ພຣະເຢຊູຄຣິດພຣະບຸດທີ່ຮັກຂອງພຣະອົງເປັນຜູ້ຄຸ້ມຄອງເປັນໂລ່ເປັນປ້ອມປະການອັນໝັ້ນຄົງຂອງຂ້ານ້ອຍ"

ເຖິງປານນັ້ນບໍ່ແມ່ນຢ້ານວ່າຕົວເອງຈະຕ້ອງໄດ້ຮັບຄວາມທຸກຍາກທໍຣະມານ ຫລືຄວາມຕາຍທີ່ຄອບງຳເພິ່ນໃຫ້ຮູ້ສຶກຢ້ານກົວ ແຕ່ຮູ້ສຶກວ່າຕົວເອງມີກຳລັງບໍ່ພໍທີ່ຈະຕໍ່ສູ້ກັບພັຍອັນຕຣາຍເຫລົ່ານີ້ໄດ້ ເກງວ່າຄວາມອ່ອນແອຂອງເພິ່ນອາດເຮັດໃຫ້



ໃນປະເທດຝຣັ່ງເສດ ຜູ້ໄດ້ຮັບແສງສວ່າງຄົນທຳອິດຄືເລີແຟ ສາສນາຈານຂອງມະຫາວິທະຍາລັຍແຫ່ງປາຣີໃນການຄົ້ນຄົ້ວວິໃຈກ່ຽວກັບວັນນະຄະດີໂບຮານເພິ່ນຫັນໄປໃຫ້ຄວາມສົນໃຈພຣະຄັມພີ ແລະໄດ້ແນະນຳໃຫ້ນັກສຶກສາຂອງເຂົາຫັນຄືນມາສຶກສາພຣະຄັມພີ ເລີແຟໄດ້ຮຽບຮຽງປະຫວັດຂອງນັກບຸນແລະຜູ້ສະລະຊີບເພື່ອສາສນາຕາມທີ່ໄດ້ກ່າວໄວ້ໃນຕຳນານຂອງຄຣິສຕະຕັກ ເມື່ອເພິ່ນຂຽນເຣື່ອງນີ້ຈົນສຳເຣັດໄປແດ່ແລ້ວຈຶ່ງຄິດວ່າອາດຈະໄດ້ປໂຍດຈາກພຣະຄັມພີເພິ່ນຈຶ່ງເຫລີ້ມສຶກສາພຣະຄັມພີຢ່າງຈິງຈັງ ເພິ່ນໄດ້ອ່ານພົບເຣື່ອງຣາວຂອງນັກບຸນໃນພຣະຄັມພີ ແຕ່ເຣື່ອງເຫລົ່ານີ້ບໍ່ເໝືອນກັບທີ່ໂຣມັນຄາທໍຣິກໄດ້ກຳນົດໄວ້ຕາມປະຕິທິນຂອງຄຣິສະຕະຈັກ ເລີແຟເກີດຄວາມເບື່ອໜ່າຍ ເພິ່ນຈຶ່ງຖິ້ມສິ່ງທີ່ເພິ່ນຄິດເຮັດນັ້ນ ແລ້ວໃຊ້ເວລາໃນການສຶກສາພຣະທັມຂອງພຣະເຈົ້າຫລາຍຂຶ້ນ

ໃນປີ ຄ.ສ. 1512 ກ່ອນທີ່ລູເຕີແລະສວິງລີເລີ່ມງານປະຕິຮູບສາສນານັ້ນເລີແຟໄດ້ຂຽນໄວ້ວ່າ "ໂດຍຄວາມເຊື່ອ ພຣະຜູ້ເປັນເຈົ້າຈຶ່ງຊົງປະທານຄວາມຊອບທັມໃຫ້ເຮົາໂດຍພຣະຄຸນຂອງພຣະອົງເທົ່ານັ້ນທີ່ຊຳຣະຄວາມຜິດບາບຂອງເຮົາ ເພື່ອເຮັດໃຫ້ເຮົາໄດ້ຊີວິດນິຣັນ" ຂນະທີ່ເລີແຟສອນວ່າ ພຣະສິຣິແຫ່ງຄວາມລອດເປັນຂອງພຣະເຈົ້າແຕ່ອົງດຽວແຕ່ໜ້າທີ່ຂອງມະນຸດຄືການເຊື່ອຟັງ

ມີບາງຄົນໃນບັນດານັກສຶກສາຂອງເລີແຟທີ່ຟັງຄຳສອນຂອງເພິ່ນຢ່າງກະຫາຍບໍ່ນານເທົ່າໃດຫລັງຈາກສຽງອາຈານງຽບລົງ ພວກເຂົາກໍປະກາດຄວາມຈິງຕໍ່ໄປວົນລ່ຽມ ຟາເຣນເປັນຜູ້ນຶ່ງໃນຈຳນວນນີ້ ຟາເຣນເປັນບຸດຂອງຄອບຄົວຜູ້ນັບຖືຄາທໍລິກທີ່ເຄັ່ງສາສນາ ເພິ່ນເປັນຜູ້ນັບຖືສາສນາຂອງໂຣມຢ່າງເຄັ່ງຄັດ ເພິ່ນມີໃຈຮ້ອນຮົນທີ່ຈະທຳລາຍທຸກຄົນທີ່ບັງອາດຕໍ່ສູ້ຂັດຂວາງຄຣິສຕະຈັກໂຣມັນ ຟາເຣນ ກ່າວວ່າ "ຂ້າກັດແຂ້ວກ໊ອດໆ ເໝືອນໝາປ່າທີ່ດຸຮ້າຍ ເມື່ອໄດ້ຍິນຜູ້ນຶ່ງຜູ້ໃດກ່າວໃສ່ຮ້າຍແກ່ສັນຕະປາປາ" ແຕ່ການເຄົາຣົບບູຊານັກບຸນ ນະມັດສະການຮູບເຄົາຣົບ ທີ່ແທ່ນບູຊາແລະຖວາຍເຄື່ອງບູຊາແກ່ສະຖານອັນທີ່ສັກສິດບໍ່ສາມາດໃຫ້ຈິດໃຈເກີດສັນຕິສຸກໄດ້ ຟາເຣນຮູ້ສຶກຕົວເອງວ່າເພິ່ນເປັນຄົນຜິດບາບ ແມ່ນວ່າຈະໃຊ້ວິທີທໍຣະມານຕົວເອງຫລາຍຢ່າງເພິ່ນກໍຍັງຮູ້ສຶກວ່າບໍ່ສາມາດແຍກເອົາຄວາມຜິດບາບອອກຈາກຈິດໃຈຂອງຕົນໄດ້ ດັ່ງນັ້ນເມື່ອເພິ່ນໄດ້ຟັງຖ້ອຍຄຳຂອງເລີແຟກ່າວວ່າ "ຄວາມລອດເປັນພຣະ

ບົດທີ່ 12

# ອະລຸນເບີກຟ້າໃນຝຣັ່ງເສດ

ຫລັງຈາກທີ່ມີການຄັດຄ້ານທີ່ເມືອງສະປາຍ ແລະການປະກາດຄວາມເຊື່ອທີ່ເມືອງອ໊ອກສະເບີກ ຄວາມຂັດແຍ່ງກໍເກີດຂຶ້ນຕາມມາແລະເຕັມໄປດ້ວຍຄວາມມືດມົນເມື່ອໄປເຕສແຕນ ແຕກແຍກອອກເປັນພັກເປັນພວກເປັນສາຍເຫດເຮັດໃຫ້ເກີດຄວາມອ່ອນແອແລະດູເໝືອນວ່າຈະຖືກທຳລາຍໄປໂດຍສິ້ນເຊີງ

ຂນະທີ່ຮູ້ສຶກວ່າພຣະອົງໄດ້ຊັຍຊະນະ ແຕ່ກັບຕ້ອງຜ່າຍແພ້ ແລະໃນທີ່ສຸດພຣະອົງຈຳເປັນຕ້ອງຍອມໃຫ້ພົລເມືອງມີເສຣີພາບໃນການນັບຖືສາສນາ ຊຶ່ງເປັນສິ່ງທີ່ຕລອດຊີວິດຂອງພຣະອົງຊົງປາຖນາທີ່ຈະທຳລາຍ ອົງຈັກກະພັດຊົງມອງເຫັນກອງທັບຂອງພຣະອົງສູນເສັຽໄປໃນການສູ້ຮົບໂດຍໄຮ້ປໂຍດ ຊັບສົມບັດໃນຄັງກໍໝົດໄປອານາຈັກຂອງພຣະອົງກໍເກີດກະບົດໄປທົ່ວ ແຕ່ໃນຂນະດຽວກັນຫລັກຄວາມເຊື່ອຂອງລັດທິສາສນາ ທີ່ພຣະອົງຕ້ອງການທຳລາຍນັ້ນກັບແຜ່ໄປທົ່ວທຸກທົ່ນທຸກແຫ່ງພຣະເຈົ້າຊານທີ່ 5 ໄດ້ສຳແດງຄວາມຕໍ່ສູ້ກັບພຣະເຈົ້າຜູ້ຊົງຣິດທານຸພາບ ພຣະເຈົ້າຕຣັດວ່າ "ຈົ່ງເກີດຄວາມສວ່າງ" ແຕ່ຈັກພັດຊົງສະແຫວງຫາຄວາມມືດເພື່ອບໍ່ໃຫ້ມີແສງສວ່າງ ເມື່ອເຖິງວັຍຊະຣາແລະເໜັດເໜື່ອຍເພາະການຕໍ່ສູ້ພຣະອົງຈຶ່ງຊົງສະລະສົມບັດເກັບຕົວຢູ່ແຕ່ໃນໂບດ

ໃນປະເທດເຊີວິສເຊີແລນ ຂນະທີ່ປະຊາຊົນໃນຫລາຍຣັດຍອມຮັບຄວາມເຊື່ອທີ່ແທ້ຈິງ ແຕ່ອີກຫລາຍຣັດທີ່ຍັງຄົງເຊື່ອຖືສາສນາຂອງໂຣມຢູ່ການກົດຂີ່ຂົ່ມເຫງເຮັດໃຫ້ເກີດສົງຄາມກາງເມືອງຂຶ້ນ ສວິງລີແລະຫລາຍຄົນທີ່ເຂົ້າຮ່ວມໃນການປະຕິຮູບສາສນາໄດ້ສູນເສັຽຊີວິດໃນສະໜາມຮົບທີ່ເມືອງແຄບເພນ ໂຣມໄດ້ຮັບຊັຍຊະນະແລະໄດ້ຫລາຍເມືອງທີ່ສູນເສັຽກັບຄືນມາ ແຕ່ພຣະເຈົ້າບໍ່ຊົງລະຖິ້ມແຜນການຂອງພຣະອົງຫລືປະຊາກອນຂອງພຣະອົງ ພຣະເຈົ້າຊົງເລືອກຄົນງານຂອງພຣະອົງໃນດິນແດນອື່ນໆ ໃຫ້ກະທຳກິຈການກ່ຽວກັບການປະຕິຮູບສາສນາຕໍ່ໄປ



ກິຈການຂອງຄວາມຈິງຜ່າຍແພ້ ລູເຕີຈຶ່ງປຳສູ້ກັບພຣະເຈົ້າບໍ່ແມ່ນເພື່ອຄວາມປອດພັຍຂອງຕົວເອງແຕ່ເພື່ອຊັຍຊະນະແຫ່ງຂ່າວປະເສີດຂອງພຣະເຈົ້າ ຂນະທີ່ຮູ້ສຶກຕົວວ່າເພິ່ນອ່ອນກຳລັງຄວາມເຊື່ອຂອງເພິ່ນມັດຢູ່ໃນພຣະຄຣິດພຣະຜູ້ຊົງຊ່ອຍກູ້ຜູ້ຊົງທານຸພາບ ເພິ່ນຈະບໍ່ຢືນຢູ່ຕໍ່ໜ້າທີ່ປະຊຸມແຕ່ພຽງລຳພັງສັນຕິສຸກກັບມາສູ່ຈິດໃຈຂອງເພິ່ນອີກເທື່ອນຶ່ງ ແລະມີຄວາມຊົມຊື່ນຍິນດີທີ່ໄດ້ເຊີດຊູພຣະທັມຂອງພຣະເຈົ້າຕໍ່ໜ້າບັນດາຜູ້ປົກຄອງຊົນຊາດທັງປວງ

ລູເຕີຄິດເຖິງຄຳຕອບຂອງເພິ່ນກວດເບິ່ງຂໍ້ຄວາມໃນໜັງສືຂອງທີ່ເພິ່ນຂຽນແລະນຳຂໍ້ພຣະຄັມພີທີ່ເໝາະສົມໃຊ້ພິສູດແລະສນັບສນູນຄຳຕອບຂອງເພິ່ນ ຈາກນັ້ນເພິ່ນກໍວາງມືຊ້າຍລົງເທິງພຣະຄັມພີອັນສັກສິດ ສ່ວນມືຂວາເພິ່ນຍົກຊູຂຶ້ນສູ່ສວັນແລະປະຕິຍານວ່າ "ຈະຊື່ສັດຕໍ່ພຣະຂ່າວປະເສີດແລະກ່າວເຖິງຄວາມເຊື່ອຂອງເພິ່ນຢ່າງບໍ່ປິດບັງໄວ້ ແມ່ນວ່າຈະຕ້ອງປະທັບຕາຄຳພະຍານນີ້ດ້ວຍເລືອດຂອງເພິ່ນກໍຕາມ

## ລູເຕີປາກົດຕົວຕໍ່ໜ້າທີ່ປະຊຸມອີກເທື່ອນຶ່ງ

ເມື່ອຖືກນຳຕົວເຂົ້າໄປໃນສະພາອີກເທື່ອນຶ່ງ ສີໜ້າຂອງເພິ່ນສະແດງຄວາມເຢືອກເຢັນແລະສະງົບ ແຕ່ກໍອົງອາດແລະສງ່າຜ່າເຜີຍສົມກັບທີ່ເປັນພະຍານໃຫ້ພຣະເຈົ້າຖ້າມກາງບຸກຄົນສຳຄັນແຫ່ງແຜ່ນດິນໂລກ ເຈົ້າໜ້າທີ່ຂອງຈັກກະພັດຂໍໃຫ້ລູເຕີຕັດສິນໃຈວ່າເພິ່ນຈະຍອມເລີກຫລັກຄຳສອນຂອງຕົນເອງຫລືບໍ່ ລູເຕີຕອບຄຳຖາມດ້ວຍສຽງສະແດງຄວາມອ່ອນນ້ອມຖ່ອມຕົນ ບໍ່ມີຄວາມໂກດເຄືອງ ຫລືກ່າວວາຈາຮຸນແຮງ ກິຣິຍາທ່າທາງຂອງເພິ່ນອ່ອນສຸພາບດີສະແດງຄວາມເຄົາຣົບ ເຖິງປານນັ້ນກໍຕາມເພິ່ນກໍໄດ້ສະແດງອອກເຖິງຄວາມໝັ້ນໃຈແລະຄວາມຊົມຊື່ນຍິນດີເຮັດໃຫ້ທີ່ປະຊຸມປລາດໃຈ

ລູເຕີທູນວ່າ "ຂ້າແດ່ອົງຈັກກະພັດຜູ້ສູງສົ່ງ ເຈົ້ານາຍຜູ້ຊົງກຽດຂຸນນາງຜູ້ສູງສັກຜູ້ປະກອບດ້ວຍເມດຕາຈິດ ຂ້າພະເຈົ້າມາປາກົດຕໍ່ໜ້າທ່ານທັງຫລາຍໃນວັນນີ້ເພື່ອປະຕິບັດຕາມຄຳສັ່ງທີ່ໄດ້ຮັບຈາກທ່ານມື້ວານນີ້ ຫາກຂ້າພະເຈົ້າລ່ວງລະເມີດຕໍ່

ເຄົາລົບທຳນຽມປະເພນີແລະກະທຳຜິດລະບຽບວິນັຍຂອງຣາຊສຳນັກ ໂດຍຄວາມໂງ່ຊ້າຂອງຂ້າພະເຈົ້າແລ້ວ ກໍຂໍວິງວອນທ່ານໄດ້ໂປຣດອະພັຍໂທດໃຫ້ຂ້າພະເຈົ້າດ້ວຍເພາະຂ້າພະເຈົ້າບໍ່ໄດ້ຮັບການອົບລົມລ້ຽງດູໃນຣາຊວັງຂອງກະສັດ ແຕ່ໄດ້ຮັບການລ້ຽງດູພາຍໃນຮອບຮົ້ວຂອງໂບດ”

ລູເຕີໄດ້ກ່າວເຖິງໜັງສືທີ່ເພິ່ນຂຽນ ທີ່ເວົ້າເຖິງຄວາມເຊື່ອແລະປະພຶດທີ່ດີງາມ ແມ່ນແຕ່ສັດຕຣູຂອງເພິ່ນເອງກໍເຫັນວ່າຂໍ້ຂຽນເຫລົ່ານີ້ມີປໂຍດ ການທີ່ຈະໃຫ້ຍົກເລີກຄຳສອນໃນໜັງສືເຫລົ່ານີ້ກໍເທົ່າກັບປະນາມຄວາມຈິງທີ່ຄົນທຸກຄົນຍອມຮັບ ໜັງສືປະເພດທີ່ສອງຂຽນຂຶ້ນເພື່ອເປີດເຜີຍໃຫ້ເຫັນເຖິງການສໍ້ກົງແລະຈຸດບົກຜ່ອງຂອງສັນຕະປາປາ ຖ້າຍົກເລີກຂໍ້ຄວາມທີ່ເພິ່ນຂຽນເຫລົ່ານີ້ກໍເທົ່າກັບສົ່ງເສີມໃຫ້ສັນຕະປາປາແຫ່ງກຸງໂຣມມີຄວາມໂຫດຮ້າຍທາລຸນຫລາຍຂຶ້ນ ແລະເປີດຊ່ອງທາງໃຫ້ຄົນທັງຫລາຍບໍ່ເຄົາຣົບເລື້ອມໃສໃນພຣະສາສນາແລະພຣະຜູ້ເປັນເຈົ້າ ສ່ວນໜັງສືປະເພດທີ່ສາມນັ້ນລູເຕີໄດ້ກ່າວໂຕ້ແຍ່ງແຕ່ລະຄົນທີ່ພຍາຍາມປົກປ້ອງຄວາມຊົ່ວຮ້າຍທີ່ມີຢູ່ ເພິ່ນຍອມຮັບວ່າໃນໜັງສືເຫລົ່ານີ້ໄດ້ເພາະສັດຕຣູຂອງຄວາມຈິງຈະຖືໂອກາດທຳລາຍປະຊາກອນຂອງພຣະເຈົ້າດ້ວຍຄວາມໂຫດຮ້າຍທາລຸນຫລາຍຂຶ້ນ

ເພິ່ນກ່າວຕໍ່ໄປວ່າ “ຂ້າພະເຈົ້າຈະຕໍ່ສູ້ປ້ອງກັນຕົວເອງເຊັ່ນດຽວກັບພຣະຄຣິດໄດ້ກະທຳມາແລ້ວ ຖ້າຂ້າພະເຈົ້າກ່າວຊົ່ວຮ້າຍ ຂ້າພະເຈົ້າຈະເປັນພຍານແຫ່ງຄວາມຊົ່ວຮ້າຍ ໂດຍພຣະເມດຕາຄຸນຂອງພຣະເຈົ້າ ຂ້າພະເຈົ້າວິງວອນຂໍຮ້ອງອົງຈັກກະພັດຜູ້ສູງສຸດ ເຈົ້ານາຍຜູ້ມີກຽດສັກສີແລະບັນດາຊົນທຸກຊັ້ນໄດ້ພິສູດຈາກໜັງສືຂອງບັນດາຜູ້ປະກາດພຣະທັມ ແລະຂອງອັຄສາວົກທັງຫລາຍໃຫ້ເຫັນວ່າຂ້າພະເຈົ້າທຳຜິດ ຖ້າຫາກຂໍ້ຂຽນຂອງຂ້າພະເຈົ້າມີຜິດບ່ອນໃດ ຂ້າພະເຈົ້າກໍຍົກເລີກທຸກຂໍ້ທັນທີແລະຂ້າພະເຈົ້າຈະເປັນຄົນທຳອິດທີ່ຈະໂຍນໜັງສືເຫລົ່ານັ້ນເຂົ້າກອງໄຟ

ແທນທີ່ຂ້າພະເຈົ້າຈະຮູ້ສຶກຢ້ານ ຂ້າພະເຈົ້າກັບມີຄວາມຊົມຊື່ນຍິນດີທີ່ໄດ້ເຫັນຂ່າວປະເສີດຂອງພຣະເຈົ້າເປັນສາຍໃຫ້ເກີດຄວາມຫຍຸ້ງຍາກແລະການທຸ່ມຖຽງກັນເໝືອນສມັຍກ່ອນ ນີ້ຄືຄຸນລັກສະນະແລະຈຸດໝາຍປາຍທາງແຫ່ງພຣະທັມຂອງພຣະເຈົ້າດັ່ງທີ່ພຣະຄຣິດໄດ້ຕຣັດວ່າ “ເຮົາບໍ່ໄດ້ມາເພື່ອຈະນຳຄວາມສະງົບສຸກມາສູ່ແຜ່ນດິນໂລກ ແຕ່ເພື່ອໃຊ້ດາບ” ຈົ່ງລະວັງໃຫ້ດີດ້ວຍການພຍາຍາມລະງັບຂໍ້ຄິດເຫັນ



ຫລຸຍ ເບີແກ່ງ ຈາກຄອບຄົວຕະກຸນຜູ້ສູງສັກຂອງຝຣັ່ງເສດກໍໄດ້ຕໍ່ຕ້ານຄຳສອນຂອງຄຣິສຕະຈັກຈົນໃນທີ່ສຸດເພິ່ນກໍຖືກຈັບພິພາກສາໃຫ້ປະຫານຊີວິດດ້ວຍການເຜົາທັງເປັນ

ຈອນ ຄານວິນ (ຄ.ສ. 1509-1564) ນັກປະຕິຮູບຜູ້ມີຊື່ສຽງຫລາຍຄົນນຶ່ງຂອງໂລກ ເກີດທີ່ເມືອງນົວຍອງໃນປີກາດີ ເພິ່ນໄດ້ຍິນເຣື່ອງການປະຕິຮູບຂອງລູເຕີຕັ້ງແຕ່ນ້ອຍ ເພິ່ນສຶກສາສາສນາສາດໃນປາຣີ ແລະບວດເປັນພຣະໄດ້ກາຍມາເປັນໂປເຕສແຕນ ເມື່ອປີ ຄ.ສ. 1533 ຕໍ່ມາເພິ່ນເລີ່ມງານປະຕິຮູບ ເມື່ອມີຄວາມຮູ້ສຶກວ່າໄດ້ຮັບການຊົງຮຽກໃຫ້ປັບປຸງຄຣິສຕະຈັກໃຫ້ສະອາດບໍຣິສຸດເຮັດໃຫ້ຂ້າຣາຊການລະດັບສູງຍອມຮັບເຫລື້ອມໃສໃນລັດທິໃໝ່ຂອງເພິ່ນຫລາຍ ແຕ່ຄານວິນກໍຕ້ອງໜີຈາກຝຣັ່ງເສດໄປເພາະຢ້ານຈະຖືກຂົ່ມເຫງ

ຄານວິນໄດ້ພິມໜັງສືຊື່ “ຫລັກຄຳສອນຂອງສາສນາ” ເປັນໜັງສືທີ່ໄດ້ຮັບການຍອມຮັບໃນໂບດໂປເຕສແຕນເປັນຢ່າງຫລວງຫລາຍ ຖືໄດ້ວ່າເພິ່ນເປັນຜູ້ສ້າງສາສນາສາດລະບົບໃຫ້ແກ່ໂບດໂປເຕສແຕນ ເຊັ່ນການຍອມຮັບພຣະຄັມພີເປັນທີ່ມາແຫ່ງຄວາມເຊື່ອພຽງຢ່າງດຽວ ຄວາມລອດໄດ້ຈາກຄວາມເຊື່ອບໍ່ແມ່ນການປະພຶດການລົ້ມລົງຂອງມະນຸດຕໍ່ຄວາມບາບເປັນຕົ້ນ

ຕໍ່ມາພາຍຫລັງທີ່ລູເຕີ ອ້າງເຖິງອິງກອນທີ່ພວກເຈົ້ານາຍນັກປະຕິຮູບສາສນາຄິດຕັ້ງຂຶ້ນເພື່ອປົກປ້ອງຂ່າວປະເສີດຂອງພຣະເຈົ້ານັ້ນ ເພິ່ນໄດ້ປະກາດວ່າອາວຸດຢ່າງດຽວທີ່ຄວນຈະນຳມາໃນການສູ້ຮົບຄື "ພຣະແສງຂອງພຣະວິນຍານບໍຣິສຸດ "ລູເຕີໄດ້ຂຽນຈົດໝາຍເຖິງເຈົ້າຊາຍເຟຣເດີຣິກແຫ່ງແຊັກໂຊນີວ່າ "ຕາມຄວາມຮູ້ສຶກຜິດຊອບຂອງເຮົາ ເຮົາບໍ່ເຫັນນຳດ້ວຍໃນການທີ່ບັນດາເຈົ້ານາຍຈະຮ່ວມຕົວກັນຕໍ່ສູ້ເພື່ອປ້ອງກັນຂ່າວປະເສີດຂອງພຣະເຈົ້າ ເຮົາຕ້ອງແບກກາງແຂນຂອງພຣະຄຣິດຂໍໃຫ້ພຣະອົງຢ່າໄດ້ຫວາດກົວ ເຮົາຈະຕໍ່ສູ້ໂດຍການອະທິຖານຂອງເຮົາຫລາຍກວ່າການໂອ້ອວດຂອງພວກສັດຕຣູ"

ພະລັງອັນຍິ່ງໃຫຍ່ທີ່ຂະເຫຍ່າໂລກໃນການປະຕິຮູບສາສນານັ້ນມາຈາກຄຳອະທິຖານໃນທີ່ລັບລີ້ຂອງປະຊາກອນແຫ່ງພຣະເຈົ້າທີ່ເມືອງອ໊ອກສະເບີກ ລູເຕີ "ບໍ່ຍອມໃຫ້ແຕ່ລະວັນຜ່ານເລີຍໄປໂດຍທີ່ບໍ່ໄດ້ໃຊ້ເວລາຢ່າງນ້ອຍສາມຊົ່ວໂມງໃນການອະທິຖານ" ພາຍໃຕ້ຫ້ອງສ່ວນຕົວຂອງລູເຕີມີຜູ້ໄດ້ຍິນເພິ່ນອະທິຖານຕໍ່ພຣະເຈົ້າດ້ວຍຖ້ອຍຄຳ "ທູນທຸກສິ່ງທຸກຢ່າງຈາກຈິດໃຈຕໍ່ພຣະເຈົ້າດ້ວຍຖ້ອຍຄຳທີ່ເຕັມໄປດ້ວຍຄວາມຍົກຍ້ອງເທີດທູນດ້ວຍຄວາມຢຳເກງແລະຄວາມຫວັງ" ເພິ່ນຂຽນເຖິງເມນແລງທອນວ່າ "ຖ້າກິຈການນັ້ນບໍ່ຍຸດຕິທັມຈົ່ງລະຖິ້ມ ຖ້າຫາກກິຈການນັ້ນຍຸດຕິທັມເຮັດໃຫ້ເຮົາຈະຕ້ອງເວົ້າເທັດກ່ຽວກັບຫລັກສັນຍາຂອງພຣະອົງຜູ້ຕຣັດສັ່ງໃຫ້ເຮົານອນຫລັບໂດຍບໍ່ຕ້ອງຢ້ານນັກປະຕິຮູບສາສນາໂປເຕສແຕນໄດ້ ຕັ້ງຮາກຖານຢູ່ເທິງພຣະຄຣິດແມ່ນປະຕູນະຣົກກໍບໍ່ສາມາດຈະເອົາຊະນະເພິ່ນໄດ້!

ໃນຂນະທີ່ເຢຣະມັນມາຕິນ ລູເຕີແລະທີ່ສະວິດເຊີແລນມີອູຣິກ ສະວິງລີເປັນຜູ້ນຳໃນການປະຕິຮູບຄຣິສຕະຈັກໃນຝຣັ່ງໄດ້ເກີດແສງແຫ່ງຄວາມຈິງແລະເລີ່ມການປະຕິຮູບມີນັກປະຕິຮູບຫລາຍຄົນ ເຊັ່ນຢາໂຄບັດ ເລີແຟ (1455-1536) ຊາວຝຣັ່ງເສດຜູ້ວິພາກວິຈານຄຣິສຕະຈັກເປັນຜູ້ແປພຣະຄັມພີເປັນພາສາຝຣັ່ງເສດແລະພິມອອກຈຳໜ່າຍທີ່ເມືອງມົວຈະເຮັດໃຫ້ຊາວນາກໍສາມາດມີພຣະຄັມພີເປັນຂອງຕົນເອງ



ຄັດແຍ່ງໂດຍພິນລະການນັ້ນ ອາດຈະເປັນການທຳລາຍພຣະທັມຂອງພຣະເຈົ້າແລະການກະທຳເຊັ່ນນີ້ແຫລະທີ່ຈະນຳພັຍພິບັດມາສູ່ທ່ານເອງຕລອດການ"

ລູເຕີໄດ້ກ່າວເຣື່ອງນີ້ເປັນພາສາເຢຣະມັນ ທີ່ປະຊຸມໄດ້ຂໍຮ້ອງໃຫ້ເພິ່ນກ່າວຖ້ອຍຄຳຢ່າງດຽວກັນຊ້ຳອີກເປັນພາສາລາຕິນ ເພິ່ນໄດ້ກ່າວຊ້ຳອີກເທື່ອນຶ່ງຢ່າງຊັດເຈນເໝືອນເທື່ອແລ້ວ ພຣະເຈົ້າຊົງນຳທາງລູເຕີໃນການກະທຳນີ້ເຈົ້ານາຍຫລາຍອົງມີຄວາມເຊື່ອທີ່ຜິດແລະຫລົງງົມງວາຍໃນການເຊື່ອຖືໄຊກລາງຈຶ່ງບໍ່ເຂົ້າໃຈໃນເຫດຜົນທີ່ລູເຕີກ່າວໃນເທື່ອແລ້ວ ແຕ່ການກ່າວຊ້ຳອີກຄັ້ງນຶ່ງເຮັດໃຫ້ເຈົ້ານາຍເຫລົ່ານັ້ນເຂົ້າໃຈໃນສິ່ງທີ່ລູເຕີສອນ

ບັນດາຜູ້ມີຈິດໃຈດື້ດຶງປິດຕາຕົວເອງຈາກແສງສວ່າງນັ້ນ ຕ່າງກໍພາກັນດື້ດ້ານຕໍ່ຖ້ອຍຄຳອັນເຕັມໄປດ້ວຍອຳນາດຂອງລູເຕີ ໂຄສົກຂອງສະພາກ່າວດ້ວຍຄວາມໂມໂຫວ່າ "ທ່ານບໍ່ໄດ້ຕອບສິ່ງທີ່ເຮົາຖາມໄປ ເຮົາຕ້ອງການໃຫ້ທ່ານຕອບໃຫ້ຊັດເຈນແລະກົງໄປກົງມາທ່ານຈະຍອມຍົກເລີກຄຳສອນຂອງທ່ານຫລືບໍ່"

ນັກປະຕິຮູບສາສນາກໍຕອບວ່າ "ຫາກອົງຈັກກະພັດແລະເຈົ້ານາຍຊົງປາຖນາຈະໄດ້ຮັບຄຳຕອບທີ່ຊັດເຈນເຂົ້າໃຈໄດ້ງ່າຍ ແລະຖືກຕ້ອງຂ້າພະເຈົ້າກໍຈະຂໍຕອບດັ່ງນີ້ວ່າ ຂ້າພະເຈົ້າບໍ່ສາມາດຈະມອບຄວາມເຊື່ອຖືຂອງຂ້າພະເຈົ້າໄວ້ພາຍໃຕ້ສັນຕະປາປາຫລືທີ່ປະຊຸມໄດ້ ເພາະຂ້າພະເຈົ້າໄດ້ເຫັນຢ່າງຊັດເຈນສຳກັບກາງເວັ້ນວ່າພວກເຂົາໄດ້ເຮັດຜິດແລະມີຂໍ້ຄິດເຫັນຄັດແຍ່ງກັນເລື້ອຍໆ ຖ້າຂ້າພະເຈົ້າບໍ່ໄດ້ຮັບພະຍານຫລັກຖານໃນພຣະຄັມພີວ່າ ຂ້າພະເຈົ້າຜິດຂ້າພະເຈົ້າຈະບໍ່ຍອມຮັບແລະຈະບໍ່ຍອມເລີກລົ້ມເປັນອັນຂາດ ເພາະການເວົ້າອັນໃດເປັນທີ່ຄັດແຍ່ງຕໍ່ຄວາມຮູ້ສຶກຜິດຊອບຊົ່ວດີເປັນສິ່ງທີ່ບໍ່ປອດພັຍຕໍ່ຜູ້ທີ່ເປັນຄຣິສະຕຽນນີ້ຄືຈຸດຢືນຂອງຂ້າພະເຈົ້າແລະຈະບໍ່ມີວັນເປັນອື່ນໄດ້ຢ່າງແນ່ນອນ ຂໍພຣະເຈົ້າຊົງຊ່ອຍຂ້າພະເຈົ້າດ້ວຍອາແມນ"

ບຸຣຸດຜູ້ຊອບທັມຈຶ່ງຢືນຂຶ້ນຢ່າງອົງອາດ ຄວາມແຂງແກ່ງແລະຄວາມບໍຣິສຸດແຫ່ງຈິດໃຈຂອງເພິ່ນ ສັນຕິສຸກແລະຄວາມຊົມຊື່ນຍິນດີໃນຈິດໃຈຂອງເພິ່ນປາກົດແກ່ສາຍຕາຂອງທຸກຄົນ ຂນະທີ່ເພິ່ນກ່າວເປັນພະຍານເຖິງອຳນາດອັນຍິ່ງໃຫຍ່ຂອງຄວາມເຊື່ອທີ່ມີຊັຍຊະນະໂລກ

ເມື່ອລູເຕີກ່າວຕອບເທື່ອທຳອິດນັ້ນ ພິ່ນເວົ້າດ້ວຍນ້ຳສຽງແຜ່ວເບົາສະແດງຄວາມເຄົາຣົບນົບນ້ອມແລະກິຣິຍາຂອງເພິ່ນເບິ່ງເໝືອນວ່າເພິ່ນຍອມຈຳນົນ ບັນດາຜູ້ແທນຈາກໂຣມັນເຫລົ່ານັ້ນຄິດວ່າການທີ່ລູເຕີຂໍຕົວບໍ່ຍອມຕອບຄຳຖາມທັນທີກໍເພິ່ນຕຽມຕົວຈະປະກາດເລີກລົ້ມຄຳສອນຂອງຕົນເອງ ຈັກກະພັດຊານເອງມີຄວາມຮູ້ສຶກສັງເວດໃຈ ເມື່ອສັງເກດເຫັນຮູບຮ່າງທີ່ຜ່າຍຜອມເຄື່ອງແຕ່ງກາຍລຽບໆ ແລະຖ້ອຍຄຳທີ່ລູເຕີເວົ້າຢ່າງຕົງໄປຕົງມາ ຈັກກະພັດໄດ້ຕຣັດວ່າ "ບາດຫລວງອີງນີ້ບໍ່ມີວັນຈະຊັກຈູງໃຫ້ເຮົາກາຍເປັນຄົນນອກຮີດໄດ້" ແຕ່ເວລານີ້ທຸກຄົນໃນທີ່ປະຊຸມພາກັນປະຫລາດໃຈເປັນຢ່າງຍິ່ງທີ່ເຫັນລູເຕີມີກຳລັງໃຈເຂັ້ມແຂງ ແລະໜັກແໜ້ນໝັ້ນຄົງຖ້ອຍຄຳທີ່ເພິ່ນກ່າວມີອຳນາດແລະເຫດຜົນທີ່ໜ້າເຊື່ອຖືໄດ້ ຈັກກະພັດເກີດຄວາມນິຍົມໃນຕົວລູເຕີຫລາຍ ຕຣັດວ່າ "ບາດຫລວງອີງນີ້ເວົ້າດ້ວຍຈິດໃຈທີ່ກ້າຫານແລະບໍ່ມີຄວາມຫວາດຫວັ່ນ"

ຫລັງຈາກທີ່ບັນດາເຈົ້າໜ້າທີ່ຂອງໂຣມຕ້ອງຜ່າຍແພ້ ພວກເຂົາໄດ້ພຍາຍາມຫາທາງທີ່ຈະດຳລົງໄວ້ ຊຶ່ງອຳນາດໂດຍບໍ່ໄດ້ປະຕິບັດຕາມພຣະຄັມພີ ແຕ່ໂດຍການໃຊ້ຄຳຂູ່ເຂັນຊຶ່ງເປັນວິທີການໂຣມໃຊ້ຕລອດມາ ໂຄສົກທີ່ປັດຊຸມກໍກ່າວຂຶ້ນວ່າ "ຖ້າທ່ານບໍ່ຍອມເລີກຫລັກຄຳສອນຂອງທ່ານ ອີງຈັກກະພັດແລະລັດທັງຫລາຍຂອງຣາຊອານາຈັກຈະພິຈາຣະນາເບິ່ງວ່າຄວນຈະຈັດການກັບພວກນອກຮີດຢ່າງທ່ານສະຖານໃດ"

ລູເຕີກ່າວຢ່າງສຸກຂຸມເຍືອກເຢັນວ່າ "ຂໍໃຫ້ພຣະເຈົ້າຊົງເປັນຜູ້ຊ່ອຍຂອງຂ້າພະເຈົ້າ ເພາະຂ້າພະເຈົ້າບໍ່ສາມາດຍົກເລີກຄຳສອນໃດໆ ໄດ້"

ເພິ່ນໄດ້ຮັບຄຳແນະນຳໃຫ້ອອກຈາກທີ່ປະຊຸມ ໃນຂນະທີ່ບັນດາເຈົ້ານາຍກຳລັງປຶກສາຫາລືກັນ ເພາະການທີ່ລູເຕີປະຕິເສດເລີກລົ້ມຄຳສອນຂອງເພິ່ນອາດຈະມີຜົນກະທົບກະເທືອນປະຫວັດສາດຂອງຄຣິສຕະຈັກທຸກຍຸກທຸກສມັຍທີ່ປະຊຸມຈຶ່ງໄດ້ຕົກລົງກັນວ່າຈະໃຫ້ເພິ່ນມີໂອກາດເລີກລົ້ມຫລັກຄຳສອນອີກເທື່ອນຶ່ງ ຈຶ່ງມີຄຳຖາມອີກວ່າ ເພິ່ນຈະຍອມເລີກລົ້ມຫລັກຄຳສອນຂອງເພິ່ນຫລືບໍ່ລູເຕີຕອບວ່າ "ຂ້າພະເຈົ້າບໍ່ມີອັນໃດທີ່ຈະຕອບທ່ານອີກນອກຈາກສິ່ງທີ່ໄດ້ຕອບທ່ານໄປແລ້ວ"



ເມື່ອເວລາທີ່ກຳນົດມາເຖິງ ພຣະເຈົ້າຊານທີ່ 5 ປະທັບເທິງພຣະທີ່ນັ່ງຊຶ່ງແວດລ້ອມໄປດ້ວຍເຈົ້ານາຍແລະຂ້າຣາຊບໍຣິພານ ເພື່ອຄອຍຟັງຄຳກ່າວຂອງພວກນັກປະຕິຮູບສາສນາໂປເຕສແຕນໃນການປະຊຸມຄັ້ງນີ້ຄວາມຈິງແຫ່ງຂ່າວປະເສີດໄດ້ຖືກນຳອອກມາເປີດເຜີຍຢ່າງຊັດເຈນ ຄວາມຜິດຂອງຄຣິສຕະຈັກສັນຕະປາປາກໍຖືກຊີ້ໃຫ້ເຫັນວັນນີ້ເປັນວັນທີ່ໄດ້ປະກາດເຖິງ "ວັນອັນຍິ່ງໃຫຍ່ທີ່ສຸດຂອງການປະຕິຮູບສາສນາເປັນວັນອັນຮຸ່ງເຮືອງທີ່ສຸດໃນປະຫວັດສາດຂອງຄຣິສະຕຽນແລະມະນຸດຊາດ"

ບາດຫລວງແຫ່ງເມືອງວິດແຕນເບີກ (ລູເຕີ) ຜູ້ເຄີຍຢືນຍັດຢູ່ແຕ່ພຽງຄົນດຽວທີ່ເມືອງເວີມ ບັດນີ້ເຈົ້ານາຍຜູ້ມີອຳນາດທັງຫລາຍໃນຈັກກະພົບໄດ້ຢືນຢັດແທນເພິ່ນ ລູເຕີຂຽນວ່າ "ຂ້າພະເຈົ້າມີຄວາມຊື່ນຊົມຍິນດີຢ່າງເຫລືອລົ້ນທີ່ຂ້າພະເຈົ້າມີຊີວິດຢູ່ຈົນກະທັ່ງຊົ່ວໂມງນີ້ ເພາະໄດ້ເຫັນເຈົ້ານາຍຜູ້ມີຍົດສັກທັງຫລາຍໄດ້ກ່າວເຊີດຊູພຣະຄຣິດຢ່າງເປີດເຜີຍຕໍ່ທີ່ປະຊຸມ"

ຄຳພຍານຊຶ່ງຈັກກະພັດຫ້າມບໍ່ໃຫ້ເທສນາເທິງທຳທັມມາດໄດ້ ຖືກປະກາດພາຍໃນພຣະຣາຊວັງ ຖ້ອຍຄຳທີ່ຫລາຍຄົນຄິດວ່າແມ່ນແຕ່ຄົນຮັບໃຊ້ກໍບໍ່ຄວນຈະຟັງໄດ້ກາຍເປັນຖ້ອຍຄຳທີ່ພວກເຈົ້ານາຍແລະພວກຂຸນນາງຂອງຈັກກະພັດຮັບຟັງດ້ວຍຄວາມອັສຈັນໃຈ ເຈົ້າຟ້າຊາຍອົງນຶ່ງກຸດຣາຊກຸມມານຫລາຍອົງກັບກາຍເປັນນັກເທດຄຳເທສນາກັບກາຍເປັນຄວາມຈິງຂອງພຣະມະຫາກະສັດແຫ່ງສວັນ ນັກຂຽນຄົນນຶ່ງກ່າວວ່າ "ນັບຕັ້ງແຕ່ສມັຍອັຄສາວົກມາບໍ່ເຄີຍມີກິຈການໃດທີ່ສຳຄັນຫລາຍກວ່ານີ້ຫລືມີການກັບໃຈອັນດີເລີດເຊັ່ນນີ້ເລີຍ"

ຫລັກການທີ່ສຳຄັນທີ່ສຸດຢ່າງນຶ່ງຊຶ່ງລູເຕີຢຶດໝັ້ນຄືຈະມີການໃຊ້ອຳນາດທາງຝ່າຍໂລກມາສນັບສນູນການປະຕິຮູບສາສນາ ເພິ່ນມີຄວາມຊື່ນຊົມທີ່ບັນດາເຈົ້ານາຍແຫ່ງຈັກກະພັດຍອມຮັບຂ່າວປະເສີດ ແຕ່ເມື່ອເຈົ້ານາຍຕົກລົງກັນວ່າຈະມີການຮວມກຳລັງເພື່ອຕໍ່ສູ້ຜູ້ປ້ອງກັນການປະຕິຮູບສາສນາ ລູເຕີກໍປະກາດວ່າ "ຫລັກຄຳສອນຂອງຂ່າວປະເສີດຈະຕ້ອງໄດ້ຮັບການປົກປ້ອງໂດຍພຣະເຈົ້າເທົ່ານັ້ນ" "ເພິ່ນຄິດວ່າການໃຊ້ຜູ້ມີອຳນາດທາງການເມືອງຄອຍເຝົ້າລະວັງແລະຕໍ່ສູ້ປ້ອງກັນການປະຕິຮູບສາສນານັ້ນຈະເຮັດໃຫ້ຄົນທັງຫລາຍມີຄວາມຢ້ານແລະບໍ່ໄວ້ວາງໃຈເປັນສິ່ງໄຮ້ຄ່າແລະບໍ່ຖືກຕ້ອງ"

ໃຫ້ເຈົ້ານາຍມີຈິດໃຈທີ່ກ້າຫານແລ້ວກິຈການຂອງພຣະເຈົ້າຈະປອດໄພ" ລູເທີກ່າວ ວ່າ "ພຣະເຈົ້າຊົງສັດຊື່ພຣະອົງຈະຊົງບໍ່ລະຖິ້ມເຮົາ"

ເຈົ້າຊາຍເຟຣເດີຣິກຕັດສິນພຣະທັຍສະເດັດໄປເມືອງອ໊ອກສະເບີກມີຫລາຍຄົນທີ່ເດີນທາງນຳໜ້າພຣະອົງໄປ ຕ່າງມີຄວາມກັງວົນແລະທຸກໃຈແຕ່ລູເທີຊຶ່ງຕິດຕາມໄປດ້ວຍ ເດີນທາງໄປເຖິງເມືອງໂຄເບີກກໍໄດ້ຟື້ນຟູຄວາມເຊື່ອຂອງພວກເຂົາດ້ວຍການຮ້ອງເພງທີ່ເພິ່ນຂຽນຂຶ້ນໃນຂນະເດີນທາງ "ພຣະເຢໂຮວາເປັນປ້ອມປະການ" (A Mighty Fortress Is Our God) ນ້ຳສຽງທີ່ຮ້ອງນັ້ນບັນດານຈິດໃຈທີ່ມີພາລະໜັກໃຫ້ໄດ້ຮັບການບັນເທົາ

ບັນດາເຈົ້ານາຍນັກປະຕິຮູບສາສນາ ໄດ້ຕັດສິນໃຈທີ່ຈະນຳຄວາມຄິດເຫັນຂອງພວກເຂົາພ້ອມດ້ວຍຫລັກຖານສນັບສນູນຈາກຂໍ້ພຣະຄັມພີໄປສເນີຕໍ່ສະພາທີ່ປະຊຸມໂດຍມອບໝາຍໃຫ້ລູເທີ ເມນແລງທອນແລະຜູ້ຊ່ອຍຂອງເພິ່ນ ຮ່າງຂໍ້ສເນີນີ້ຝ່າຍຄົນທີ່ນັບຖືໂປເຕສແຕນທຸກຄົນຍອມຮັບແລະໄດ້ລົງຊື່ໃນເອກກະສານສຳຄັນນີ້

ບັນດານັກປະຕິຮູບສາສນາ ໄດ້ຂໍຮ້ອງບໍ່ໃຫ້ນຳການກະທຳຂອງພວກເຂົາໄປກ່ຽວຂ້ອງກັບຄຳຖາມດ້ານການເມືອງ ຂນະທີ່ເຈົ້ານາຍຄຣິສະຕຽນທະຍອຍກັນເຊັນຊື່ໃນເອກກະສານນັ້ນ ເມນແລງທອນກ່າວແຊກຂຶ້ນວ່າ "ເປັນໜ້າທີ່ຂອງນັກສາສນາສາດແລະສາສນາຈານທີ່ຄວນສເນີຂໍ້ຄິດເຫັນໃນເຣື່ອງນີ້ ຂໍຢ່າໃຫ້ຜູ້ມີອຳນາດໃນໂລກມາຫຍຸ້ງກ່ຽວກັບເຮົາໃນເຣື່ອງນີ້" ເຈົ້າຊາຍຈອນແຫ່ງແຊ໊ກໂຊນີ ຕຣັດວ່າ "ຂໍພຣະເຈົ້າຊົງຫ້າມເຖີດ ເປັນຫຍັງທ່ານກີດກັນບໍ່ໃຫ້ເຮົາຫຍຸ້ງກ່ຽວກັບເຣື່ອງນີ້ ຂ້າພະເຈົ້າຕັ້ງໃຈກະທຳໃນສິ່ງທີ່ຖືກໂດຍທີ່ບໍ່ໄດ້ນຶກເຖິງຕຳແໜ່ງຂອງຕົວເອງແຕ່ນ້ອຍດຽວ ຂ້າພະເຈົ້າປາຖນາຈະສາຣະພາບຕໍ່ພຣະຜູ້ເປັນເຈົ້າ ໝວກປະຈຳຕຳແໜ່ງແລະເສື້ອຄຸມຂົນເອີມິນຂອງຂ້າພະເຈົ້າຍັງບໍ່ມີຄ່າເທົ່າກັບໄມ້ກາງແຂນຂອງພຣະເຢຊູຄຣິດ" ເຈົ້ານາຍອີກອົງນຶ່ງຕຣັດຂນະທີ່ຈັບປາກກາຂຶ້ນຂຽນວ່າ "ຫາກເປັນຄວາມຕ້ອງການເພື່ອເຊີດຊູພຣະກຽດຂອງພຣະເຢຊູຄຣິດ ຂ້າພະເຈົ້າກໍພ້ອມທີ່ຈະສະລະຊັບສົມບັດແລະຊີວິດຂອງຂ້າພະເຈົ້າ" "ຂ້າພະເຈົ້າຍອມສະລະພົລເມືອງແລະລັດຂອງຂ້າພະເຈົ້າແລະລະຖິ້ມປະເທດຂອງບັນພະບຸຣຸດຂອງຂ້າພະເຈົ້າດີກວ່າທີ່ຈະຍອມຮັບຄຳສອນອື່ນນອກຈາກຫລັກຄຳສອນທີ່ຂຽນໄວ້ໃນເອກກະສານນີ້"



ບັນດາຜູ້ແທນຂອງສັນຕະປາປາຮູ້ສຶກຢາກອາຍ ທີ່ບາດຫລວງຜູ້ຕ່ຳຕ້ອຍໄດ້ຢຽບຫຍາມອຳນາດຂອງພວກຕົນ ລູເທີກ່າວກັບທຸກຄົນໃນທີ່ປະຊຸມດ້ວຍຄວາມເຍືອກເຢັນ ແລະມີກິຣິຍາສະງ່າຜ່າເຜີຍຕາມແບບຢ່າງຂອງຄຣິສະຕຽນ ຖ້ອຍຄຳຂອງເພິ່ນບໍ່ໄດ້ສະແດງຄວາມຄຽດແລະບິດເບືອນຄວາມຈິງແຕ່ປະການໃດ ລູເທີບໍ່ຄິດວ່າຕົນເອງຢູ່ຕໍ່ໜ້າບຸກຄົນສຳຄັນ ແຕ່ຮູ້ສຶກວ່າຢືນຢູ່ສະເພາະພຣະພັກຂອງພຣະຜູ້ຊົງຣິດທານຸພາບທີ່ຍິ່ງໃຫຍ່ກວ່າບັນດາສັນຕະປາປາ ກະສັດແລະຈັກກະພັດພຣະວິນຍານບໍຣິສຸດຂອງພຣະເຈົ້າສະຖິດຢູ່ໃນທີ່ປະຊຸມນັ້ນ ແລະຊົງບັນດານໃຫ້ເຫລົ່າຜູ້ນຳຂອງຣາຊອານາຈັກຮູ້ສຶກປະທັບໃຈ

ພວກເຈົ້ານາຍຫລາຍອົງໄດ້ຍອມຮັບຢ່າງກ້າຫານວ່າ ການກະທຳຂອງລູເທີນັ້ນຍຸດຕິທັມ ແຕ່ກໍມີບຸກຄົນອີກຈຳນວນນຶ່ງທີ່ໃນຕອນທຳອິດບໍ່ສະແດງຄວາມເຊື່ອຕໍ່ມາກໍກາຍເປັນຜູ້ສນັບສນູນການປະຕິຮູບສາສນາຢ່າງບໍ່ເກງກົວ

ເຈົ້າຊາຍເຟຣເດີຣິກແຫ່ງແຊ໊ກໂຊນີໄດ້ຟັງການເວົ້າຂອງລູເທີ ດ້ວຍຄວາມຮູ້ສຶກສະເທືອນໃຈຊົງຮູ້ສຶກຊົມຊື່ນຍິນດີ ພາກພູມໃຈໃນຄວາມກ້າຫານແລະຄວາມເປັນຕົວຂອງຕົວເອງຂອງລູເທີ ຊົງຕັດສິນພຣະທັຍທີ່ຈະປົກປ້ອງເພິ່ນຫລາຍຂຶ້ນພຣະອົງຊົງເຫັນວ່າອຳນາດຄວາມຈິງຂອງພຣະເຈົ້າເຮັດໃຫ້ສະຕິປັນຍາຂອງສັນຕະປາປາກະສັດແລະບາດພຣະບາດຫລວງກາຍເປັນສິ່ງທີ່ໄຮ້ຄຸນຄ່າໄປໝົດ

ເມື່ອຜູ້ແທນຂອງສັນຕະປາປາໄດ້ສັງເກດເຫັນວ່າ ຖ້ອຍຄຳທີ່ລູເທີ ກ່າວຕອບທີ່ປະຊຸມນັ້ນມີຜົນຢ່າງໃດ ຈຶ່ງສັ່ງການໃຫ້ເຮັດທຸກວິທີທາງທີ່ສາມາດຈະລົບລ້າງຄຳກ່າວຂອງນັກປະຕິຮູບເສັຽ ເພິ່ນຈຶ່ງໃຊ້ໂວຫານອັນໄພເລາະແລະຊັ້ນເຊີງທາງການເວົ້າຈາຫວ່ານລ້ອມຈັກກະພັດໜຸ່ມໃຫ້ຊົງເຫັນວ່າການທີ່ພຣະອົງເຫັນແກ່ຜົນປໂຍດຂອງບາດຫລວງອົງນຶ່ງແລະຕີຕົວອອກຫ່າງຈາກອຳນາດຂອງສັນຕະປາປາແຫ່ງໂຣມນັ້ນນັບເປັນອັນຕຣາຍຫລາຍ

ວັນໃໝ່ຕໍ່ມາພາຍຫລັງທີ່ລູເທີໄດ້ກ່າວຕໍ່ໜ້າທີ່ປະຊຸມແລ້ວ ຈັກກະພັດຊານໄດ້ປະກາດຕໍ່ໜ້າທີ່ປະຊຸມວ່າ ພຣະອົງຊົງຕັ້ງພຣະທັຍທີ່ຈະຍັງຄົງຄຸ້ມຄອງຂອງສາສນາແຫ່ງໂຣມຕໍ່ໄປ ແລະຊົງກ່າວວ່າລູເທີສົມຄວນທີ່ຈະໄດ້ຮັບການພິຈາຣະນາລົງໂທດຢ່າງໜັກທີ່ສຸດ ແລະຫລັກຄຳສອນນອກຮີດທີ່ເພິ່ນສອນ "ຂ້າພະເຈົ້າຍອມເສັຽສະລະ

ຣາຊອານາຈັກຂອງຂ້າພະເຈົ້າ ຊັບສິນ ມິດສະຫາຍຮ່າງກາຍ ໂລຫິດ ຈິດວິນຍານ ແລະຊີວິດຂອງຂ້າພະເຈົ້າເພື່ອຈະຕໍ່ສູ້ຂັດຂວາງເພິ່ນແລະພັກພວກຂອງເພິ່ນໃນຖານະທີ່ເປັນຄົນນອກຮີດທີ່ດື້ດຶງ ໂດຍຕັດເພິ່ນອອກຈາກການເປັນສະມາຊິກຂອງຄຣິສຕະຈັກແລະສັງຄົມແລະໃຊ້ວິທີທຸກຢ່າງ ເພື່ອທຳລາຍຄົນເຫລົ່ານັ້ນ" ແຕ່ຢ່າງໃດກໍຕາມ ຈັກກະພັດປະກາດວ່າທາງຝ່າຍບ້ານເມືອງຄົງຕ້ອງຖືວ່າໃບຮັບຮອງຄວາມປອດພັຍຂອງລູເຕີເປັນສິ່ງສຳຄັນ ເພິ່ນຈຶ່ງຕ້ອງກັບໄປເຖິງບ້ານໂດຍປອດພັຍ

## ຮັບຮອງຄວາມປອດພັຍຂອງລູເຕີທີ່ຕ້ອງສ່ຽງຊີວິດ

ອີກຄັ້ງນຶ່ງທີ່ຜູ້ແທນຂອງສັນຕະປາປາໄດ້ຂໍຮ້ອງໃຫ້ທີ່ປະຊຸມຖືວ່າໃບຮັບຮອງຄວາມປອດພັຍເປັນສິ່ງທີ່ສຳຄັນ "ແມ່ນຳໄຮຄວນຈະເປັນທີ່ຮັບຮອງເຖົ່າກະດູກຂອງລູເຕີເໝືອນຢ່າງທີ່ເຄີຍເປັນທີ່ຮັບຮອງເຖົ່າກະດູກຂອງຈອນຮັດ ເມື່ອຫລາຍສັດຕະວັດທີ່ຜ່ານມາ" ພວກເຈົ້ານາຍໃນເຢຣະມັນ ແມ່ນວ່າຈະເປັນສັດຕຣູຂອງລູເຕີກໍຍັງຕໍ່ຕ້ານພຶດຕິການທີ່ບໍ່ຊື່ສັດຕໍ່ປະຊາຊົນ ເຊັ່ນນັ້ນພວກເຈົ້ານາຍໄດ້ຊີ້ໃຫ້ເຫັນເຫດຮ້າຍທີ່ເກີດຂຶ້ນພາຍຫລັງຄວາມຕາຍຂອງຈອນຮັດ ພວກເຂົາບໍ່ກ້າທີ່ຈະເຮັດໃຫ້ເຢຣະມັນຕ້ອງຕົກຢູ່ພາຍໃຕ້ເຫດການອັນຊົ່ວຮ້າຍນັ້ນອີກ

ຈັກກະພັດເອງໄດ້ຕຣັດຕອບຄຳແນະນຳອັນຊົ່ວຮ້າຍນັ້ນວ່າ "ເຖິງແມ່ນວ່າກຽດຕິຍົດແລະຄວາມເຊື່ອຈະຖືກກຳຈັດອອກໄປຈາກໂລກນີ້ ແຕ່ກຽດຕິຍົດແລະຄວາມເຊື່ອເຫລົ່ານັ້ນກໍຈະຍັງຢູ່ໃນພຣະທັຍຂອງເຈົ້ານາຍທັງຫລາຍ" ຜູ້ແທນຂອງສັນຕະປາປາສັດຕຣູຂອງລູເຕີຍັງບໍ່ລົດລະຍັງຄົງທູນແນະນຳຈັກກະພັດໃຫ້ປະຕິບັດຕໍ່ເພິ່ນເຊັ່ນດຽວກັບທີ່ຈັກກະພັດໄຊຈິສະມັນໄດ້ປະຕິບັດຕໍ່ຮັດ ແຕ່ຈັກກະພັດຊານຊຶງລະນຶກເຖິງເຫດການເມື່ອຄັ້ງທີ່ຮັດໄດ້ຊີ້ໃຫ້ຈັກກະພັດໄຊຈິສະມັນທອດພຣະເນດເບິ່ງໂຊ້ຕ່ວນທີ່ລ່າມເພິ່ນໄວ້ແລະເຕືອນຈັກກະພັດອົງນັ້ນໃຫ້ລະນຶກເຖິງຄຳສັນຍາຂອງເພິ່ນ ໃນທີ່ສຸດຈັກກະພັດຊານທີ່ 5 ຈຶ່ງປະກາດວ່າ "ເຮົາບໍ່ຢາກຈະອັບອາຍຂາຍໜ້າເໝືອນຢ່າງໄຊຈິສະມັນ"



ຄຣິສຕະຈັກທີ່ມອງເຫັນດ້ວຍຕາ ບັນດາຜູ້ປະກາດພຣະທັມແລະອັຄສາວົກກ່າວວ່າ "ເຮົາຕ້ອງເຊື່ອຟັງພຣະເຈົ້າຫລາຍກວ່າເຊື່ອຟັງມະນຸດ ໂປເຕສແຕນຍົກຍ້ອງເຊີດຊູມົງກຸດຂອງພຣະຄຣິດຂຶ້ນຕໍ່ໜ້າມົງກຸດຂອງຈັກກະພັດຊານທີ່ 5" ການກ່າວຄຳຄັດຄ້ານທີ່ເມືອງສະປ່າຍເປັນພຍານສຳຄັນທີ່ສະແດງໃຫ້ເຫັນວ່າມະນຸດທຸກຄົນມີອິສາຣະທີ່ຈະນັບຖືສາສນາໄດ້ຕາມຄວາມພໍໃຈແລະທຸກຄົນມີສິດທີ່ຈະນະມັດສະການພຣະເຈົ້າຕາມຄວາມສຳນຶກຜິດແລະຊອບຂອງຕົນເອງ

ປະສົບການຂອງນັກປະຕິຮູບສາສນາເປັນເຈົ້ານາຍ ເຫລົ່ານີ້ເປັນບົດຮຽນສຳລັບຄົນທັງຫລາຍ ຕໍ່ມາທຸກຍຸກທຸກສມັຍ ຊາຕານຍັງຄົງພຍາຍາມຂັດຂວາງບໍ່ໃຫ້ເຮົາຍອມຮັບເອົາພຣະຄັມພີເປັນສິ່ງນຳທາງຊີວິດ ໃນສມັຍຂອງເຮົາຈຳເປັນທີ່ຈະຕ້ອງຫັນກັບມາສົນໃຈ ແລະປະຕິບັດຕາມຄຳສອນສຳຄັນອັນຍິ່ງໃຫຍ່ຂອງໂປເຕສແຕນຄືພຣະຄັມພີແລະພຣະຄັມພີເທົ່ານັ້ນທີ່ເປັນກົດເກນແຫ່ງຄວາມເຊື່ອແລະໜ້າທີ່ຊາຕານກຳລັງຫາທາງທຳລາຍເສຣີພາບໃນການນັບຖືສາສນາອຳນາດແຫ່ງປະຕິປັກຂອງຄຣິສະຕຽນຊຶ່ງບັນດາຜູ້ຕໍ່ຕ້ານຄັດຄ້ານແຫ່ງເມືອງສະປ່າຍປະຕິເສດກຳລັງຫາທາງຊ່ວງຊີງອຳນາດທີ່ສູນເສັຽໄປນັ້ນກັບຄືນມາ

## ການປະຊຸມສະພາແຫ່ງເມືອງອ໊ອກສະເບີກ

ພຣະເຈົ້າເຟີດີນັນບໍ່ຍອມຟັງຂໍ້ສເນີຂອງບັນດາເຈົ້ານາຍຝ່າຍໂປເຕສແຕນແຕ່ເພື່ອລະງັບເຣື່ອງຫຍຸ້ງຍາກວຸ່ນວາຍໃນຈັກກະພົບ ຫລັງຈາກການປະຊຸມທີ່ເມືອງສະປ່າຍນຶ່ງປີ ພຣະເຈົ້າຊານທີ່ 5 ໄດ້ຈັດໃຫ້ມີການປະຊຸມສະພາຂຶ້ນທີ່ເມືອງອ໊ອກສະເບີກ ພຣະອົງຊົງປະກາດວ່າຈະສະເດັດໄປເປັນປະທານປະຊຸມຄັ້ງນີ້ ບັນດາຜູ້ນຳໂປເຕສແຕນກໍຖືກຮຽກໃຫ້ໄປຮ່ວມປະຊຸມຄັ້ງນີ້ດ້ວຍ

ທີ່ປຶກສາຂອງເຈົ້າຊາຍເຟຣເດີຣິກແຫ່ງແຊັກໂຊນີໄດ້ເຕືອນພຣະອົງບໍ່ໃຫ້ໄປຮ່ວມປະຊຸມສະພາຄັ້ງນີ້ວ່າ "ບໍ່ເປັນການສ່ຽງໄພເກີນໄປຫລືທີ່ຈະໄປຂັງຕົວເອງຢູ່ໃນກຳແພງເມືອງຖ້າມກາງວົງລ້ອມຂອງສັດຕຣູ" ແຕ່ເຈົ້ານາຍອື່ນໆ ປະກາດວ່າ "ຂໍ

ນັກປະຕິຮູບສາສນາເພິ່ງພາຄວາມຊ່ອຍເຫລືອຂອງມະນຸດເທົ່ານັ້ນ ພວກເຂົາກໍຄົງບໍ່ມີພະລັງອຳນາດເໝືອນດັ່ງທີ່ຝ່າຍຂອງສັນຕະປາປາຄິດ ແຕ່ພວກເຂົາກໍກ້າຮ້ອງຂໍ "ໃຫ້ການໃຊ້ບັນທຶກການປະຊຸມເປັນການໃຊ້ພຣະທັມຂອງພຣະເຈົ້າແທນການຖວາຍກຽດພຣະເຈົ້າຊານເປັນຖວາຍກຽດແດ່ພຣະເຢຊູຄຣິດຜູ້ຊົງເປັນຈອມກະສັດແລະຈອມເຈົ້ານາຍ"

ໂດຍເຫດ ທີ່ກະສັດເຟີດີນັນບໍ່ຊົງຮັບພິຈາລະນາກ່ຽວກັບຄວາມສຳນຶກຜິດຊອບຂອງຄົນເຫລົ່ານີ້ ບັນດາເຈົ້ານາຍຈຶ່ງຕັດສິນໃຈວ່າຈະບໍ່ສົນໃຈທີ່ກະສັດບໍ່ຢູ່ໃນທີ່ປະຊຸມ ແຕ່ນຳຂໍ້ສເນີຄັດຄ້ານຕໍ່ການປະຊຸມແຫ່ງຊາດ ໂດຍບໍ່ລັງລໍເພິ່ນໄດ້ເຮັດການຮ່າງໝາຍປະກາດທີ່ສຳຄັນຂຶ້ນສເນີຕໍ່ທີ່ປະຊຸມ

"ເຮົາຂໍກ່າວຄຳຄັດຄ້ານນີ້ ເພື່ອເຮົາທັງຫລາຍແລະເພື່ອພີ່ນ້ອງຮ່ວມຊາດເຮົາຈະບໍ່ຍອມປະຕິບັດຫລືຍອມຮັບວິທີການໃດໆ ຊຶ່ງມີຂຽນໄວ້ໃນຄຳປະກາດນີ້ຈະບໍ່ຍອມຮັບສິ່ງໃດກໍຕາມທີ່ຂັດແຍ່ງຕໍ່ພຣະເຈົ້າ ຕໍ່ພຣະທັມອັນສັກສິດຂອງພຣະອົງຕໍ່ຄວາມຖືກຕ້ອງແຫ່ງສຳນຶກຜິດແລະຊອບຂອງເຮົາຫລືຕໍ່ຄວາມລອດແຫ່ງຈິດວິນຍານຂອງເຮົາເພາະເຫດນີ້ເຮົາຈຶ່ງບໍ່ຍອມຮັບແອກຊຶ່ງຜູ້ມີນຳມາວາງໄວ້ເທິງບ່າເຮົາໃນຂນະດຽວກັນເຮົາຫວັງວ່າອົງຈັກກະພັດຈະປະຕິບັດຕໍ່ເຮົາ ເຊັ່ນເຈົ້ານາຍຄຣິສະຕຽນຜູ້ຮັກພຣະເຈົ້າສິ່ງອື່ນໃດ ແລະເຮົາຂໍປະກາດວ່າພ້ອມທີ່ຈະມອບທຸກສິ່ງແດ່ພຣະອົງແລະຕໍ່ທ່ານທັງຫລາຍດ້ວຍແລະເຮົາຍອມຮັບເຊື່ອຟັງທ່ານຕາມໜ້າທີ່ທີ່ຍຸດຕິທັມແລະຖືກຕ້ອງຕາມກົດໝາຍ"

ຜູ້ທີ່ມາຮ່ວມປະຊຸມສ່ວນຫລາຍມີຄວາມປະຫລາດໃຈແລະຮູ້ສຶກຕົກໃຈຢ້ານເມື່ອໄດ້ຟັງບັນດາເຈົ້ານາຍກ່າວຄຳຄັດຄ້ານຢ່າງກ້າຫານ ພວກເຂົາຮູ້ວ່າການແຕກແຍກ ການຕໍ່ສູ້ແລະການນອງເລືອດຈະຕ້ອງເກີດຂຶ້ນຢ່າງແນ່ນອນແຕ່ສຳລັບບັນດານັກປະຕິຮູບສາສນານັ້ນ "ມີຄວາມກ້າຫານແລະຈິດໃຈໜັກແໜ້ນໝັ້ນຄົງ" ເພາະເຂົາໄດ້ວາງໃຈໃນພຣະຜູ້ຊົງຣິດທານຸພາບ

"ຫລັກສຳຄັນຂອງຄຳຄັດຄ້ານຂອງບັນດາເຈົ້ານາຍຄຣິສະຕຽນເປັນແກ່ນແທ້ຂອງລັດທິໂປເຕສແຕນ...ໂປເຕສແຕນຍຶດຖືອຳນາດແຫ່ງຄວາມສຳນຶກຜິດແລະຊອບໄວ້ເໜືອອຳນາດຂອງຜູ້ພິພາກສາແລະອຳນາດແຫ່ງພຣະທັມຂອງພຣະເຈົ້າເໜືອ



ເຖິງປານນັ້ນຈັກກະພັດຊານກໍຍັງບໍ່ຍອມຮັບຄວາມຈິງທີ່ລູເຕີໄດ້ປະກາດສັ່ງສອນ ພຣະອົງບໍ່ຍອມຍ່າງກ້າວອອກຈາກທາງແຫ່ງເຄົານິບທັມນຽມປະເພນີເພື່ອດຳເນີນຕາມທາງແຫ່ງຄວາມຈິງແລະຄວາມຊອບທັມ ເພາະບັນພຣະບຸຣຸດຂອງພຣະອົງຊົງກະທຳຢ່າງນັ້ນ ພຣະອົງຈຶ່ງສນັບສນູນລະບອບສັນຕະປາປາ ດັ່ງນັ້ນຈັກກະພັດຊານຈຶ່ງປະຕິເສດທີ່ຈະຍອມຮັບແສງແຫ່ງຄວາມຈິງຫລາຍເກີນກວ່າທີ່ບັນພຣະບຸຣຸດຂອງພຣະອົງເຄີຍຮັບມາ

ໃນປັດຈຸບັນນີ້ຫລາຍຄົນຖືຮັກສາເຄົານິບທັມນຽມແລະຮີດຄອງປະເພນີຂອງບັນພຣະບຸຣຸດຢ່າງເຄັ່ງຄັດ ເມື່ອພຣະເຈົ້າຊົງໂປຣດປະທານແສງສວ່າງແຫ່ງຄວາມຈິງໃຫ້ພວກເຂົາກັບບໍ່ຍອມຮັກເພາະວ່າບັນພຣະບຸຣຸດຂອງຕົນບໍ່ເຄີຍຮັບຄວາມຈິງນັ້ນມາກ່ອນ ພຣະເຈົ້າບໍ່ຊົງພໍພຣະທັຍໃນການທີ່ເຮົາຕາມບັນພຣະບຸຣຸດຂອງຕົວເອງເພື່ອນຳມາຕັດສິນໜ້າທີ່ຮັບຜິດຊອບ ແທນທີ່ເຮົາຈະຄົ້ນຄົ້ວຈາກພຣະທັມແຫ່ງຄວາມຈິງດ້ວຍຕົວເອງ ເຮົາມີໜ້າທີ່ທີ່ຈະປະຕິບັດຕາມແສງສວ່າງແຫ່ງຄວາມຈິງທີ່ເພີ່ມເຂົ້າມາທີ່ສ່ອງມາຈາກພຣະທັມຂອງພຣະເຈົ້າ

ພຣະເຈົ້າຜູ້ຊົງຣິດທານຸພາບໄດ້ຕຣັດແກ່ຈັກກະພັດແລະພວກເຈົ້ານາຍແຫ່ງເຢຣະມັນຜ່ານທາງລູເຕີ ພຣະວິນຍານບໍຣິສຸດຂອງພຣະອົງຊົງວິງວອນຂໍຮ້ອງໃຫ້ເປັນຄັ້ງສຸດທ້າຍໃຫ້ຄົນທັງຫລາຍໃນທີ່ປະຊຸມນັ້ນກັບໃຈໃໝ່ເໝືອນປີລາດເຄີຍກະທຳເມື່ອຫລາຍສັດຕະວັດທີ່ຜ່ານມາ ຈັກກະພັດ ຊານທີ່ 5 ກໍຊົງມີພຣະທັຍຍິ່ງເກີນກວ່າຈະຕັດສິນພຣະທັຍຍອມຮັບແສງສວ່າງແຫ່ງຄວາມຈິງ

ປະຊາຊົນທັງເມືອງມີຄວາມຕື່ນເຕັ້ນຢ່າງມາກມາຍ ເມື່ອຂ່າວວ່າຈັກກະພັດຊານຕັດສິນພຣະທັຍທີ່ຈະຕໍ່ສູ້ຂັດຂວາງລູເຕີກະຈາຍອອກໄປ ບັນດາເພື່ອນຂອງເພິ່ນຮູ້ດີເຖິງຄວາມໂຫດຮ້າຍທາຣຸນຂອງໂຣມ ພວກເຂົາຕັດສິນໃຈຈະຊ່ອຍບໍ່ໃຫ້ລູເຕີໄດ້ຮັບໂທດ ສ່ວນພວກຂຸນນາງຫລາຍຮ້ອຍຄົນປະຕິຍານຕົນວ່າຈະຄຸ້ມຄອງປ້ອງກັນລູເຕີໃຫ້ພົ້ນອັນຕຣາຍ ມີປ້າຍປະກາດຕິດໄວ້ຕາມປະຕູເຮືອນແລະທີ່ສາທາຣະນະມີທັງຂໍ້ຄວາມຕິຕຽນແລະສນັບສນູນລູເຕີ ປ້າຍແຜ່ນນຶ່ງມີຄຳຕຣັດຂອງກະສັດຊາໂຣມອນຜູ້ຊົງພຣະສະຕິປັນຍາຂຽນໄວ້ວ່າ "ໂອບ້ານເມືອງເອີຍ ວິບັດແກ່ເຈົ້າເມື່ອກະສັດເປັນເດັກ" (ປັນຍາຈານ 10:16) ການທີ່ປະຊາຊົນທົ່ວເຢຣະມັນທີ່ຄວາມກະຕືລືລົ້ນ

ສນັບສນູນລູເຕີ ເຮັດໃຫ້ທັງຈັກກະພັດແລະທີ່ປະຊຸມເຫັນວ່າຖ້າພວກເຂົາບໍ່ຍຸດຕິທັມຕໍ່ລູເຕີກໍຈະເກີດອັນຕຣາຍຕໍ່ຣາຊອານາຈັກແລະຣາຊບັນລັງ

## ພະຍາຍາມໄກ່ເກັ່ຽໃຫ້ປອງດອງກັບສັນຕະປາປາ

ເຈົ້າຊາຍເຟຣເດີຣິກແຫ່ງແຊັກໂຊນີມີອາການສະງົບ ພຍາຍາມເຊື້ອງຄວາມຮູ້ສຶກອັນແທ້ຈິງທີ່ທ່ານມີຕໍ່ນັກປະຕິຮູບສາສນາ ແຕ່ໃນຂນະດຽວກັນທ່ານກໍຄອຍເຝົ້າເບິ່ງຄວາມເຄື່ອນໄຫວຂອງລູເຕີແລະສັດຕຣູຂອງເພິ່ນຢູ່ທຸກອິຣິຍາບົດ ມີຫລາຍຄົນບໍ່ສາມາດປິດບັງຄວາມເຫັນອົກເຫັນໃຈຂອງຕົນເອງໄວ້ໄດ້ ສະປະລາຕິນ ໄດ້ຂຽນໄວ້ວ່າ “ຫ້ອງນ້ອຍໆ ຂອງ ດຣ.ລູເຕີບໍ່ມີທີ່ພໍສຳລັບຕ້ອນຮັບຄົນທີ່ມາຢ້ຽມ” ແມ່ນກະທັ່ງຄົນທີ່ບໍ່ເຊື່ອໃນຫລັກຄວາມເຊື່ອຂອງລູເຕີ ກໍພາກັນຍົກຍ້ອງຊົມເຊີຍເພິ່ນວ່າເພິ່ນເປັນຜູ້ທີ່ມີຄວາມຊື່ສັດຢ່າງຍິ່ງ ເຖິງກັບຍອມຕາຍດີກວ່າຈະເຮັດສິ່ງທີ່ຂັດແຍ່ງກັບໃຈສຳນຶກຜິດຊອບ

ໄດ້ມີຄວາມພຍາຍາມຈະຊັກຈູງໃຫ້ລູເຕີປານີປານອມກັບສັນຕະປາປາແຫ່ງໂຣມ ບັນດາເຈົ້ານາຍແລະຂຸນນາງໄດ້ຊີ້ແຈງໃຫ້ລູເຕີຮູ້ວ່າ ຖ້າເພິ່ນຍັງດື້ດຶງຈະເຮັດຕາມສິ່ງທີ່ເພິ່ນເຫັນວ່າຖືກ ຊຶ່ງຂັດແຍ່ງຕໍ່ຄວາມເຫັນຂອງຄຣິສຕະຈັກແລະທີ່ປະຊຸມເພິ່ນກໍຈະຖືກຂັບໄລ່ອອກຈາກຈັກກະວານແລະບໍ່ມີຜູໃດປ້ອງກັນເພິ່ນໄດ້ ທີ່ປະຊຸມໄດ້ຂໍຮ້ອງໃຫ້ລູເຕີຍອມປະຕິບັດຕາມການຕັດສິນພຣະທັຍຂອງຈັກກະພັດແລ້ວເພິ່ນຈະບໍ່ໄດ້ຕ້ອງຢ້ານອັນໃດ ແຕ່ລູເຕີຕອບວ່າ “ຂ້າພະເຈົ້າເຫັນຊອບດ້ວຍຈາກສ່ວນເລິກຂອງຈິດໃຈຂ້າພະເຈົ້າວ່າຈັກກະພັດ ເຈົ້ານາຍແລະແມ່ນແຕ່ຄຣິສະຕຽນທີ່ເຫັນແກ່ຕົວທີ່ສຸດຄວນພິສູດ ແລະຕັດສິນກິຈການຂອງຂ້າພະເຈົ້າໃຫ້ດີວ່າຖືກຫລືຜິດ ແຕ່ມີເງື່ອນໄຂຢ່າງນຶ່ງວ່າໃຫ້ເອົາພຣະຄັມພີເປັນມາຕຖານເພາະມະນຸດບໍ່ສາມາດເຮັດຢ່າງອື່ນໄດ້ນອກຈາກເຊື່ອຟັງພຣະທັມຂອງພຣະເຈົ້າ”

ລູເຕີໄດ້ກ່າວໂນ້ມນ້າວຜູ້ທີ່ມາປະຊຸມຕໍ່ໄປວ່າ “ຂ້າພະເຈົ້າຍິນຍອມເລີກລົ້ມໃບຮັບຮອງຄວາມປອດພັຍ ຈະໃຫ້ຂ້າພະເຈົ້າມອບຮ່າງກາຍແລະຊີວິດໄວ້ໃນພຣະ



ເສຣີພາບຄວາມສຳນຶກຜິດແລະຊອບ ນີ້ຄືຂອບເຂດອຳນາດຂອງລັດກ່ຽວກັບເຣື່ອງສາສນາ

ຝ່າຍຜູ້ຕິດຕາມສັນຕະປາປາຕັດສິນໃຈທຳລາຍສິ່ງທີ່ເພິ່ນຮຽກວ່າ “ບັງອາດດື້ດຶງ” ບັນດາຜູ້ແທນຂອງເມືອງທັງຫລາຍທີ່ມີອິສາຣະໃນການນະມັດສການພຣະ ເຈົ້າຖືກກຳນົດໃຫ້ມີການປະກາດວ່າຈະຍອມປະຕິບັດຕາມເງື່ອນໄຂຂໍ້ສເນີນີ້ ພວກເຂົາຈຶ່ງຂໍໃຫ້ຍືດໄລຍະເວລາໄປກ່ອນ ແຕ່ກໍໄຮ້ຜົນເກືອບເຄິ່ງນຶ່ງຂອງຜູ້ແທນທີ່ມາຮ່ວມປະຊຸມຍອມຢູ່ຝ່າຍນັກປະຕິຮູບສາສນາ ທັງທີ່ຮູ້ດີວ່າພວກເຂົາຈະຕ້ອງປັບໂທດແລະຖືກກົດຂີ່ຂົ່ມເຫງ ຜູ້ແທນຄົນນຶ່ງກ່າວວ່າ “ເຮົາຈະຕ້ອງຕັດສິນໃຈວ່າຈະປະຕິເສດພຣະທັມຂອງພຣະເຈົ້າຫລືຍອມຖືກເຜົາໄຟ”

## ຂຸນນາງຢືນຢູ່ຝ່າຍບັນດາເຈົ້ານາຍ

ກະສັດເຟີດີນັນຜູ້ແທນຂອງຈັກກະພັດທີ່ມາຮ່ວມປະຊຸມຄັ້ງນີ້ ພຣະອົງພຍາຍາມໃຊ້ສິລປະໃນການຊັກຊວນໂດຍ “ໄດ້ຂໍຮ້ອງໃຫ້ພວກເຈົ້ານາຍຍອມຮັບການປະກາດຂອງທີ່ປະຊຸມແລະຢືນຢັນວ່າຈັກກະພັດຈະຊົງພໍພຣະທັຍຫລາຍ ຖ້າພວກເຂົາຍອມ” ແຕ່ເຈົ້ານາຍຜູ້ຊື່ສັດເຫລົ່ານີ້ໄດ້ຕອບດ້ວຍຄວາມສຸກຂຸມວ່າ “ພວກເຮົາຈະເຊື່ອຟັງຈັກກະພັດໃນທຸກສິ່ງທີ່ຈະເຮັດໃຫ້ເກີດສັນຕິສຸກແລະຖວາຍກຽດແດ່ພຣະເຈົ້າເທົ່ານັ້ນ”

ໃນທີ່ສຸດກະສັດກໍຊົງປະກາດວ່າ “ທຸກຄົນຈະເຮັດຕາມສຽງສ່ວນຫລາຍ” ເມື່ອຕຣັດເຊັ່ນນີ້ແລ້ວກໍສະເດັດອອກຈາກຫ້ອງປະຊຸມໄປ ໂດຍບໍ່ລໍໃຫ້ນັກປະຕິຮູບສາສນາມີໂອກາດເວົ້າໂຕ້ຕອບແຕ່ປະການໃດ “ພວກເຂົາໄດ້ສົ່ງຜູ້ແທນໄປທູນຂໍຮ້ອງໃຫ້ກະສັດເຟີດີນັນສະເດັດກັບມາ” ພຣະອົງຕຣັດວ່າ “ເຣື່ອງນີ້ເວົ້າຕົກລົງກັນຮຽບຮ້ອຍແລ້ວພຽງເຮັດຕາມເງື່ອນໄຂເທົ່ານັ້ນ”

ຝ່າຍຂອງຈັກກະພັດເວົ້າຍົກຍ້ອງຕົວເອງວ່າກິຈການຂອງຈັກກະພັດແລະສັນຕະປາປາມີອຳນາດໝັ້ນຄົງ ແຕ່ກິຈການຂອງນັກປະຕິຮູບສາສນາອ່ອນແອຫາກ

ຮັກສາໄວ້ໃຫ້ໝັ້ນຄົງໄດ້" ເສຣີພາບກໍຈະຖືກຫ້າມບໍ່ອະນຸຍາດໃຫ້ເວົ້າເຣື່ອງສາສນາ ຄວາມຫວັງຂອງໂລກເບິ່ງເໝືອນຈະສູນສລາຍໄປເສັຽແລ້ວ

ເມື່ອພວກໂປເຕສແຕນມອງເບິ່ງກັນແລະກັນດ້ວຍຄວາມສະດຸ້ງຕົກໃຈຢ້ານ "ຈະເຮັດຢ່າງໃດດີຈະໃຫ້ຜູ້ນຳການປະຕິຮູບສາສນາຈະຍອມຮັບແລະປະຕິບັດຕາມ ປະກາດຫລືບັນດາເຈົ້ານາຍທີ່ເຊື່ອຄຳສອນຂອງລູເຕີ ຮັບຮອງອະນຸຍາດໃຫ້ນັບຖືສາສນາຂອງພວກເຂົາຢ່າງອິສາຣະສິ່ງອັນເປັນຄຸນປໂຍດນີ້ຂຍາຍໄປຍັງປະຊາຊົນທີ່ຢູ່ໃຕ້ການປົກຄອງຄົນເຫລົ່ານີ້ ເມື່ອຜ່ານການກວດສອບໄດ້ຍອມຮັບຄວາມເຫັນການປະຕິຮູບຈະບໍ່ນັບພວກເຂົາວ່າໄດ້ຮັບເສຣີພາບນີ້ດ້ວຍຫລື

ພວກເຂົາມອງເບິ່ງຫລັກການນັ້ນຊຶ່ງກຳນົດໄວ້ເພື່ອເປັນພື້ນຖານ ແລະປະຕິບັດຕາມດ້ວຍຄວາມເຊື່ອຫລັກການນັ້ນຄືອັນໃດ ກໍຄືສັນຕະປາປາແຫ່ງໂຣມບໍ່ມີສິດທີທີ່ຈະບັງຄັບໃຫ້ຄົນທັງຫລາຍເຮັດອັນໃດຕາມທີ່ຕົນເຫັນວ່າຖືກຫລືຜິດ ແຕ່ສັນຕະປາປາເອງແລະກຸ່ມໂປເຕສແຕນທີ່ຢູ່ພາຍໃຕ້ອຳນາດຂອງພຣະອົງບໍ່ມີສິດທີທີ່ຈະນັບຖືສາສນາຕາມອິສາຣະຫລື ແນ່ນອນທັງສອງຝ່າຍຄວນຈະມີອິສາຣະໃນການນັບຖືສາສນາແລະນະມັດສະການພຣະເຈົ້າເຊັ່ນດຽວກັນ ແຕ່ສັນຕະປາປາບໍ່ມີສິດທີທີ່ຈະບັງຄັບໃຫ້ໂປເຕສແຕນນະມັດສະການພຣະເຈົ້າ ຕາມທີ່ພຣະອົງພໍພຣະທັຍ ແຄວ້ນແຊັກໂຊນີຊຶ່ງຍອມຮັບຄຳສອນຂອງນັກປະຕິຮູບຄວນມີອິສາຣະພາບໃນການນະມັດສະການພຣະເຈົ້າສຳລັບແຄວ້ນອື່ນໆ ໃນຄຣິສຕະຈັກ ການໃຝ່ຫາເສຣີພາບໃນການນັບຖືສາສນາເປັນຄວາມຜິດຢ່າງມະຫັນ ເຂົາຕ້ອງຖືກຂັງໃນຫ້ອງມືດໃຕ້ດິນຫລືຖືກເຜົາທັງເປັນຈະຍິນຍອມໃຫ້ພວກເຂົາມີອິສາຣະໃນການນັບຖືສາສນາພາຍໃນກຸ່ມຂອງເຂົາເອງບໍ່ໄດ້ຫລື...ບັນດານັກປະຕິຮູບສາສນາຈະຍອມຮັບຫລືບໍ່ວ່າເຂົາບໍ່ຕ້ອງຮັບຜິດຊອບໃນການເຮັດໃຫ້ຫລາຍຮ້ອຍຫລາຍພັນຄົນຕ້ອງເສັຽເລືອດເນື້ອໃນດິນແດນຕ່າງໆຂອງສັນຕະປາປາ ເພາະເຫດທີ່ພວກເຂົາບໍ່ຍອມປະຕິບັດຕາມຄວາມປະສົງຂອງພຣະອົງ

ບັນດາເຈົ້ານາຍກ່າວວ່າ "ເຮົາຈະບໍ່ຍອມຮັບຄຳປະກາດນີ້ ໃນເຣື່ອງຄວາມສຳນຶກຜິດແລະຊອບຊຶ່ງຄົນສ່ວນຫລາຍບໍ່ມີອຳນາດ" ລັດມີໜ້າທີ່ໃນການປົກປ້ອງ



ຫັດຂອງຈັກກະພັດຫລື ຂ້າພະເຈົ້າເຮັດຢ່າງນັ້ນບໍ່ໄດ້ເດັດຂາດ ແຕ່ຂ້າພະເຈົ້າຂໍວາງຊີວິດໄວ້ໃນພຣະຫັດຂອງພຣະເຈົ້າ" ລູເຕີກ່າວວ່າເພິ່ນເຕັມໃຈທີ່ຈະຍອມໃຫ້ທີ່ປະຊຸມທົ່ວໄປຕັດສິນແລະມີເງື່ອນໄຂວ່າທີ່ປະຊຸມຈະຕ້ອງຕັດສິນໃຫ້ເປັນໄປຕາມພຣະຄັມພີ ລູເຕີກ່າວວ່າ "ໃນເຣື່ອງທີ່ກ່ຽວກັບພຣະວະຈະນະຂອງພຣະເຈົ້າ ແລະຄວາມເຊື່ອນັ້ນຄຣິສະຕຽນທຸກຄົນສາມາດຈະເປັນຜູ້ຕັດສິນທີ່ດີສຳລັບ ເພິ່ນໄດ້ເທົ່າກັບສັນຕະປາປາແມ່ນວ່າທີ່ປະຊຸມຈະສນັບສນູນເປັນລ້ານ" ໃນທີ່ສຸດທັງມິດສະຫາຍແລະສັດຕຣູຂອງລູເຕີກໍປະຈັກວ່າບໍ່ມີປໂຍດອັນໃດທີ່ຈະພຍາຍາມໄກ່ເກັ່ຽໃຫ້ກັບຄືນດີກັນໄດ້

ຫາກລູເຕີຍອມປະຕິບັດຕາມຄວາມປາຖນາຂອງທີ່ປະຊຸມພຽງຂໍ້ດຽວຊາຕານແລະພັກພວກຂອງມັນກໍຈະໄດ້ຊັຍຊະນະ ແຕ່ເພິ່ນມີໃຈໜັກແໜ້ນໝັ້ນຄົງຈຶ່ງສາມາດຊ່ອຍໃຫ້ຄຣິສຕະຈັກຂອງພຣະເຈົ້າລອດພົ້ນໄປໄດ້ ອິດທິພົນຂອງບຸຣຸດຜູ້ນີ້ທີ່ກ້າຄິດກ້າທຳໃນເຣື່ອງກ່ຽວກັບສາສນາມີຜົນດີກັບຄຣິສຕະຈັກແລະໂລກ ບໍ່ພຽງແຕ່ໃນສມັຍຂອງເພິ່ນເທົ່ານັ້ນແຕ່ໃນຊົ່ວອາຍຸຄົນຕໍ່ໄປພາຍໜ້າດ້ວຍ

ຕໍ່ມາບໍ່ນານຈັກກະພັດກໍມີຮັບສັ່ງໃຫ້ກັບບ້ານໄດ້ ແລະການອອກຄຳສັ່ງນີ້ກໍຈະຕາມມາດ້ວຍການປະນາມຢ່າງວ່ອງໄວຕາມເສັ້ນທາງທີ່ເພິ່ນຈະຕ້ອງເດີນໄປນັ້ນມີອັນຕຣາຍທີ່ຢູ່ຮອບດ້ວຍ ແຕ່ຂນະທີ່ເດີນທາງອອກມາຈາກເມືອງເວີມ ຈິດໃຈຂອງເພິ່ນເຕັມໄປດ້ວຍຄວາມຊົມຊື່ນຍິນດີແລະການສັນລະເສີນ

ພາຍຫລັງທີ່ລູເຕີເດີນທາງຈາກເມືອງເວີມແລ້ວ ເພິ່ນໄດ້ຂຽນຈົດໝາຍເຖິງຈັກກະພັດ ເພາະບໍ່ໄດ້ປາຖນາຈະໃຫ້ຈັກກະພັດເຂົ້າພຣະທັຍຜິດວ່າການທີ່ເພິ່ນບໍ່ຍອມເລີກລົ້ມຫລັກຄຳສອນຂອງເພິ່ນນັ້ນເປັນການຄິດກະບົດ ລູເຕີໄດ້ທູນຈັກກະພັດວ່າ "ຂ້ານ້ອຍພ້ອມທີ່ຈະເຊື່ອຟັງຝ່າພຣະບາດທັງສິ່ງທີ່ມີກຽດແລະ ໄຮ້ກຽດທັງຊີວິດແລະ ຄວາມຕາຍໂດຍບໍ່ມີຂໍ້ຍົກເວັ້ນ ເພື່ອຮັກສາພຣະທັມຂອງພຣະເຈົ້າຊຶ່ງເປັນສິ່ງທີ່ບຳລຸງລ້ຽງມະນຸດໄວ້ ເມື່ອມີຄວາມສົນໃຈໃນສິ່ງອັນເປັນນິຣັນໄດ້ຮັບຄວາມໃສ່ໃຈນ້ຳພຣະ ທັຍຂອງພຣະເຈົ້າຈະບໍ່ເຮັດໃຫ້ມະນຸດຍອມມອບຕົວຂອງເພິ່ນໄວ້ແກ່ມະນຸດດ້ວຍກັນເອງ ເພາະຄວາມເຊື່ອຟັງໃນເຣື່ອງທີ່ກ່ຽວກັບຈິດວິນຍານຄືການນະມັດສະການທີ່ແທ້ຈິງ ແລະສົມຄວນມອບຖວາຍແດ່ພຣະຜູ້ສ້າງແດ່ພຣະອົງດຽວ"

ເມື່ອລູເຕີເດີນທາງອອກຈາກເມືອງເວີມ ພວກເຈົ້ານາຍຜູ້ມີສ່ວນກ່ຽວຂ້ອງໃນອີງການສາສນາ ຕ້ອນຮັບບາດຫລວງທີ່ຖືກຂັບໄລ່ອອກຈາກຄຣິສຕະຈັກດ້ວຍຄວາມຍິນດີ ບັນດາຜູ້ປົກຄອງຂອງເມືອງໄດ້ໃຫ້ກຽດແກ່ບຸຣຸດທີ່ຈັກກະພັດຕິຕຽນວ່າຊົ່ວຮ້າຍ ເພິ່ນໄດ້ຖືກຂໍຮ້ອງໃຫ້ເທສນາແມ່ນວ່າຈັກກະພັດຈະຊິງຫ້າມກໍຕາມ ລູເຕີໄດ້ຂຶ້ນໄປຢືນຢູ່ເທິງທັມມາດອີກເທື່ອນຶ່ງ ກ່າວວ່າ “ຂ້າພະເຈົ້າບໍ່ເຄີຍກ່າວຄຳປະຕິຍານວ່າ ຂ້າພະເຈົ້າຈະຜູກມັດພຣະທັມຂອງພຣະເຈົ້າໄວ້ຫລື ແມ່ນແຕ່ຈະຄິດກໍບໍ່ເຄີຍ”

ຫລັງຈາກເດີນທາງອອກຈາກເມືອງເວີມໄດ້ບໍ່ນານເທົ່າໃດ ບັນດາຜູ້ແທນຂອງສັນຕະປາປາໄດ້ຂໍຮ້ອງໃຫ້ຈັກກະພັດປະກາດໂທດລູເຕີ ໃນປະກາດຄັ້ງນີ້ລູເຕີຖືກປະນາມວ່າເປັນ “ຊາຕານໃນຮ່າງຂອງມະນຸດແລະນຸ່ງຮົ່ມເສື້ອຄຸມຂອງບາດຫລວງ” ທັນທີທີ່ໃບຮັບຮອງຄວາມປອດພັຍຂອງເພິ່ນໝົດອາຍຸຫ້າມທຸກຄົນໃຫ້ທີ່ພັກອາສັຍແກ່ເພິ່ນ ຫ້າມໃຫ້ອາຫານແລະເຄື່ອງດື່ມ ຫ້າມຊ່ອຍເພິ່ນດ້ວຍວາຈາ ຫລືການກະທຳຫ້າມຊ່ອຍເຫລືອຫລືສົງເຄາະເພິ່ນ ເພິ່ນຄວນຖືກນຳຕົວໄປມອບໃຫ້ເຈົ້າໜ້າທີ່ບັນດາຄົນທັງຫລາຍທີ່ຕິດຕາມລູເຕີຈະຕ້ອງຖືກຈຳຈອງແລະຖືກຮິບຊັບສົມບັດ ໜັງສືທີ່ເພິ່ນຂຽນຈະຕ້ອງຖືກທຳລາຍແລະໃນທີ່ສຸດທຸກຄົນທີ່ບັງອາດກະທຳສິ່ງທີ່ຂັດແຍ່ງຕໍ່ຄຳປະກາດນີ້ຈະຕ້ອງໄດ້ຮັບໂທດເຊັ່ນດຽວກັນ ເຈົ້າຊາຍເຟຣເດີຣິກແຫ່ງແຊັກໂຊນີແລະບັນດາເຈົ້ານາຍທີ່ສະແດງຄວາມເປັນມິດຕໍ່ລູເຕີໄດ້ເດີນທາງຈາກເມືອງເວີມ ຫລັງຈາກລູເຕີອອກຈາກເມືອງນີ້ໄປບໍ່ນານເທົ່າໃດຄຳປະກາດຂອງຈັກກະພັດໄດ້ຮັບຄວາມເຫັນຊອບຈາກທີ່ປະຊຸມສ້າງຄວາມດີອົກດີໃຈຫລາຍໃຫ້ກັບສານຸສິດແຫ່ງໂຣມ ເພາະພວກເຂົາຄິດວ່າຊະຕາກັມຂອງນັກປະຕິຮູບໄດ້ຖືກປິດໄປແລ້ວ

## ພຣະເຈົ້າຊົງໃຊ້ເຈົ້າຊາຍເຟຣເດີຣິກແຫ່ງແຊັກໂຊນີ

ມີຜູ້ຄອຍຈັບຕາເບິ່ງຄວາມເຄື່ອນໄຫວຂອງລູເຕີທຸກອິຣິນາບົດ ມິດສະຫາຍຜູ້ຊື່ສັດແລະມີນ້ຳໃຈດີງາມໄດ້ຕັ້ງໃຈວ່າຈະຊ່ອຍເພິ່ນໃຫ້ພົ້ນພັຍ ພຣະເຈົ້າຊົງປະທານແຜນການແກ່ເຈົ້າຊາຍເຟຣເດີຣິກໃນການຮັກສາຊີວິດຂອງເພິ່ນ ຂນະທີ່ລູເຕີເດີນທາງກັບບ້ານ ເພິ່ນຖືກແຍກຈາກຜູ້ຕິດຕາມແລະນຳຕົວເດີນທາງຜ່ານປ່າໄປຍັງປະສາດ



ຂອງພວກເຂົາ ໜ້າທີ່ຂອງລູເຕີຈຶ່ງມີເພື່ອນໆ ແລະບັນດາເຈົ້ານາຍທີ່ພຣະເຈົ້າຊົງຮຽກໃຫ້ມາຮັບຜິດຊອບແທນເຈົ້າຊາຍເຟຣເດີຣິກແຫ່ງແຊັກໂຊນີໄດ້ພົ້ນຈາກຕຳແໜ່ງຫລັງຈາກສິ້ນພຣະຊົນ ດະຍູກຈອນຊຶ່ງໄດ້ຮັບຕຳແໜ່ງສືບແທນໄດ້ສົ່ງເສີມການປະຕິຮູບສາສນາດ້ວຍຄວາມຍິນດີ

ພວກບາດຫລວງໄດ້ຂໍຮ້ອງໃຫ້ພົລເມືອງຂອງລັດທີ່ຍອມຮັບການປະຕິຮູບສາສນາຕ້ອງປະຕິບັດຕາມຄຳຕັດສິນຂອງໂຣມ ພວກນັກປະຕິຮູບບໍ່ພໍໃຈທີ່ທາງໂຣມພຍາຍາມເຮັດໃຫ້ພົລເມືອງຂອງລັດທີ່ຍອມຮັບພຣະທັມຂອງພຣະເຈົ້າຢູ່ພາຍໃຕ້ອຳນາດຂອງພວກເຂົາ

ໃນທີ່ສຸດມີຂໍ້ສເນີອອກມາວ່າລັດໃດທີ່ຍັງບໍ່ມີການປະຕິຮູບສາສນາກໍຈະບັງຄັບໃຫ້ປະຕິບັດຕາມກົດສະຖິກາແຫ່ງເວີມແລະນັ້ນກໍຄື “ພົລເມືອງໃນລັດໃດທີ່ບໍ່ສາມາດປະຕິບັດຕາມນີ້ກໍບໍ່ຄວນໃຫ້ມີການປະຕິຮູບແລະພວກເຂົາບໍ່ຄວນຂັດຂວາງການທຳພິທີມິສະຊາ ແລະບໍ່ຄວນໃຫ້ຜູ້ນັບຖືໂຣມັນຄາທໍລິກຍອມຮັບນັບຖືນິກາຍຂອງລູເຕີແຣນ (ຄຳສອນຂອງລູເຕີ)” ຂໍ້ຕົກລົງເຫລົ່ານີ້ຜ່ານສະພາກໍໄດ້ສ້າງຄວາມເພິ່ງພໍໃຈໃຫ້ແກ່ບັນດາບາດຫລວງແລະພຣະຣາຊາຄະນະຊັ້ນສູງທີ່ເປັນຢ່າງຍິ່ງ

## ການຕັດສິນໃຈຄັ້ງສຳຄັນຂອງນັກປະຕິຮູບສາສນາ

ຫາກຄຳປະກາດນີ້ຖືກນຳໄປໃຊ້ “ການປະຕິຮູບສາສນາກໍບໍ່ສາມາດເຜີຍແຜ່ໄປໄດ້ ແລະຮາກຖານແຫ່ງການປະຕິຮູບສາສນາທີ່ໄດ້ກໍ່ຮູບຮ່າງແລ້ວກໍຈະບໍ່ສາມາດ

ເມືອງສະປ່າຍ ເມື່ອ ຄ.ສ. 1529 ຄວາມກ້າຫານແລະຄວາມເຊື່ອອັນໜັກແໜ້ນໝັ້ນຄົງຂອງຄົນຂອງພຣະເຈົ້າເຫລົ່ານັ້ນໄດ້ຊ່ອຍໃຫ້ປະຊາຊົນໃນຍຸກຫລັງໆ ມີອິສະຣະໃນສຳນຶກຜິດຊອບແລະເຮັດໃຫ້ຄຣິສຕະຈັກທີ່ມີການປະຕິຮູບໃໝ່ນີ້ໄດ້ເຊື່ອວ່າໂປເຕສແຕນ (ຄືກຸ່ມທີ່ບໍ່ເຫັນດ້ວຍກັບຮູບແບບສາສນາເດີມໂດຍການຫັນໄປຢຶດຫລັກຄວາມເຊື່ອຕາມແບບຂອງພຣະຄັມພີ)

ພຣະເຈົ້າໄດ້ຊົງຕຽມການສອບສວນກອງທັບທັງຫລາຍທີ່ຄອຍຕໍ່ສູ້ຂັດຂວາງຄວາມຈິງ ພຣະເຈົ້າຊານທີ່ 5 ຊົງຕັ້ງພຣະທັຍທີ່ຈະທຳລາຍການປະຕິຮູບສາສນາໂດຍສິ້ນເຊີງ ແຕ່ທຸກເທື່ອທີ່ພຣະອົງຊົງຍົກພຣະຫັດຂຶ້ນເພື່ອທຳລາຍກິຈການຂອງພຣະເຈົ້າກໍມີເຫດການເກີດຂຶ້ນທີ່ເຮັດໃຫ້ພຣະອົງຈຳເປັນຕ້ອງເລີກລົ້ມຄວາມຄິດອີກແລ້ວອີກໃນຫ້ວງວິຕິກກອງທັບຂອງພວກເຕີຣກກໍຈະມີປາກົດຢູ່ບໍລິເວນຊາຍແດນສເມີຫລືບາງຄັ້ງກະສັດຝຣັ່ງເສດຫລືແມ່ນແຕ່ພຣະສັນຕະປາປາເອງກໍເຮັດສົງຄາມກັບພຣະອົງຈຶ່ງເປັນເຫດໃຫ້ເກີດການຈາລາຈົນແລະຄວາມຂັດສົນວຸ່ນວາຍຂຶ້ນໃນປະເທດຈິ່ງປ່ອຍ ໃຫ້ການປະຕິຮູບສາສນາເຂັ້ມແຂງແຜ່ຂຍາຍທົ່ວໄປ

ຢ່າງໃດກໍຕາມ ໃນທີ່ສຸດຜູ້ມີອຳນາດປົກຄອງຝ່າຍຂອງສັນຕະປາປາຫລາຍອົງກໍໄດ້ຮ່ວມກັນຕໍ່ສູ້ກັບນັກປະຕິຮູບສາສນາ ຈັກກະພັດໄດ້ຮຽກປະຊຸມສະພາທີ່ເມືອງສະປ່າຍ ເມື່ອ ຄ.ສ. 1529 ເພື່ອກຳຈັດລັດທິນອກຮີດ ຖ້າກະທຳດ້ວຍສັນຕິວິທີຫລົ້ມເຫລວພຣະເຈົ້າຊານກໍຕຽມພ້ອມທີ່ຈະໃຊ້ດາບ

ຜູ້ສນັບສນູນສັນຕະປາປາທີ່ເມືອງສະປ່າຍ ໄດ້ສະແດງຄວາມເປັນສັດຕຣູຕໍ່ນັກປະຕິຮູບສາສນາຢ່າງເປີດເຜີຍ ເມນແລງທອນກ່າວວ່າ “ເຮົາເປັນພວກທີ່ຖືກສາບແຊ່ງແລະເປັນເສດຂີ້ເຫຍື້ອໃນໂລກ ແຕ່ພຣະຄຣິດຊົງເຝົ້າມອງລົງມາຍັງປະຊາກອນຜູ້ທຸກຍາກຂອງພຣະອົງ ແລະຊົງພິທັກຮັກສາພວກເຂົາໄວ້” ປະຊາຊົນໃນເມືອງສະປ່າຍກະຫາຍທີ່ຈະໄດ້ຮັບພຣະທັມຂອງພຣະເຈົ້າ ເຖິງແມ່ນວ່າຈະຖືກຫ້າມແຕ່ຫລາຍພັນຄົນກໍເຂົ້າຮ່ວມນະມັດສະການດ້ວຍກັນທີ່ຫ້ອງນະມັດສະການຂອງເຈົ້າຊາຍເຟຣເດີຣິກ ແຫ່ງແຊັກໂຊນີ ການກະທຳດັ່ງກ່າວເປັນເຫດເລັ່ງໃຫ້ເກີດວິກິດໄວຂຶ້ນ ເສຣີພາບໃນການນັບຖືສາສນາໄດ້ຮັບການຈັດຕັ້ງຖືກຕ້ອງຕາມກົດໝາຍ ຕັ້ງແຕ່ບັດນັ້ນເປັນຕົ້ນມາລັດທີ່ພົນລະເມືອງຖືລັດທິໂປເຕສແຕນຈຶ່ງຕໍ່ສູ້ຜູ້ທີ່ມາລ່ວງລ້ຳລັດທິ



ວ໊ອດເບີກ ຊຶ່ງເປັນປ້ອມຕັ້ງຢູ່ໂດດດ່ຽວເທິງພູທີ່ຫ່າງໄກ ເຣື່ອງທີ່ລູເຕີຖືກລັກພາຕົວໄປເຊື່ອງໄວ້ເປັນເຣື່ອງເລິກລັບເປັນເວລາດົນນານ ແມ່ນແຕ່ເຈົ້າຊາຍເຟຣເດີຣິກເອງກໍລືມສິ່ງທີ່ຕົນເອງໄດ້ກະທຳການເກັບເຣື່ອງໃຫ້ງຽບນີ້ມີການວາງແຜນໄວ້ ຕາບໃດທີ່ເຈົ້າຊາຍເຟຣເດີຣິກບໍ່ຮູ້ເຣື່ອງລາວກ່ຽວກັບລູເຕີ ພຣະອົງກໍບໍ່ສາມາດເປີດເຜີຍອັນໃດໄດ້ຕໍ່ມາເມື່ອພຣະອົງຮູ້ວ່າລູເຕີປອດພັຍດີກໍຈະຊົງມີຄວາມພໍພຣະທັຍ

ລະດູໃບໄມ້ປົ່ງ ລະດູຮ້ອນ ແລະລະດູໃບໄມ້ລ່ວງຜ່ານໄປ ລະດູໜາວວຽນມາເຖິງ ລູເຕີກໍຍັງຖືກຄຸມຂັງຢູ່ອາລົມເດີຜູ້ແທນຂອງສັນຕະປາປາແລະພັກພວກຂອງເພິ່ນຕ່າງພາກັນດີໃຈທີ່ແສງສວ່າງແຫ່ງຂ່າວປະເສີດເບິ່ງເໝືອນກຳລັງຈະອັບແສງລົງແຕ່ແສງສວ່າງຂອງນັກປະຕິຮູບຈະສ່ອງປະກາຍຮຸ່ງເຮືອງຫລາຍຂຶ້ນ

## ຄວາມປອດໄພໃນວ໊ອດເບີກ

ພາຍໃຕ້ການດູແລຄວາມປອດພັຍຂອງເພື່ອນໃນປະສາດວ໊ອດເບີກ ນັບວ່າເປັນຊ່ວງເວລາເນື່ອງທີ່ລູເຕີຮູ້ສຶກຊົມຊື່ນຍິນດີທີ່ໄດ້ຫລຸດພົ້ນຈາກເຣື່ອງຍຸ້ງຍາກ ການຕໍ່ສູ້ຂັດແຍ່ງໃນສນາມຮົບ ແຕ່ເພິ່ນເຄີຍຊິນກັບຊີວິດທີ່ທຳງານໜັກແລະຕໍ່ສູ້ກັບຄວາມຂັດແຍ່ງມາຢ່າງທໍຣະຫົດ ຈຶ່ງບໍ່ສາມາດຈະທົນຢູ່ເສີຍໆ ໄດ້ໃນຍາມທີ່ຕ້ອງຢູ່ໂດດດ່ຽວເຊັ່ນນີ້ສະພາບຂອງຄຣິດສຕະຈັກປະກົດຂຶ້ນຕໍ່ໜ້າເພິ່ນຢ້ານວ່າຄົນອື່ນໆ ຈະຄິດວ່າເປັນຄົນຂີ້ດຽດທີ່ລ່າຖອຍການຕໍ່ສູ້ຄັ້ງນີ້ ຈາກນັ້ນເພິ່ນກໍຕິຕຽນຕົວເອງທີ່ຢູ່ເສີຍໆ ຢ່າງກຽດຄ້ານແລະຕາມໃນຕົວເອງ

ແຕ່ເວລາດຽວກັນເພິ່ນທຳງານແຕ່ລະວັນໄດ້ຫລາຍກວ່າຄົນໃດຄົນນຶ່ງຈະເຮັດໄດ້ ປາກກາຂອງເພິ່ນບໍ່ເຄີຍຫວ່າງ ພວກສັດຕຣູຂອງເພິ່ນກໍຕ້ອງປລາດໃຈແລະສັບສົນບໍ່ຮູ້ວ່າເພິ່ນຍັງມີຊີວິດຢູ່ຫລືບໍ່ ມີໃບປີວຈຳນວນຫລວງຫລາຍທີ່ລູເຕີຂຽນໄດ້ຖືກເຜີຍແຜ່ໄປທົ່ວປະເທດເຢຣະມັນ ນອກຈາກນີ້ເພິ່ນຍັງແປພຣະຄັມພີພັນທະສັນຍາໃໝ່ເປັນພາສາເຢຣະມັນອີກດ້ວຍ ຈາກປະສາດວ໊ອດເບີກປຽບໄດ້ກັບເກາະປັດທະ

ມອດທີ່ເຕັມໄປດ້ວຍຫີນຂະລຸຂະລະ ລູເຕີໄດ້ປະກາດຂ່າວປະເສີດແລະກ່າວຕິຕຽນຄວາມບໍ່ຖືກຕ້ອງໃນສມັຍນັ້ນຢູ່ເປັນເວລາເກືອບນຶ່ງປີ

ພຣະເຈົ້າຊົງໂປຣດນຳຜູ້ຮັບໃຊ້ຂອງພຣະອົງໃຫ້ຢູ່ຫ່າງໄກຈາກຊຸມຊົນໃນທີ່ສະຖານທີ່ອັນສະງົບງຽບແລະສັນໂດດທີ່ປົກປິດໄວ້ຂອງພຣະອົງ ລູເຕີຖືກນຳຕົວອອກມາຈາກການສນັບສນູນແລະຍົກຍ້ອງສັນລະເສີນຈາກມະນຸດ ດັ່ງນັ້ນເພິ່ນຈຶ່ງປອດພັຍຈາກຄວາມເຊື່ອໝັ້ນໃນຕົວເອງຊຶ່ງມັນຈາກການທຳງານທີ່ປະສົບຜົນສຳເຣັດ

ຂນະທີ່ມະນຸດມີຄວາມຊົມຊື່ນຍິນດີໃນອິດສາຣະພາບທີ່ຄວາມຈິງນຳມາໃຫ້ນັ້ນ ຊາຕານກໍພຍາຍາມທີ່ຈະຊັກຈູງບໍ່ໃຫ້ເພິ່ນຄິດເຖິງພຣະເຈົ້າ ແຕ່ໃຫ້ຄິດເຖິງມະນຸດດ້ວຍກັນແລະຊັກຈູງໃຫ້ມະນຸດມອບກຽດຕິຍົດໃຫ້ກັບເຄື່ອງມືທີ່ພຣະເຈົ້າຊົງໃຊ້ ແລະບໍ່ໄດ້ສົນໃຈໃນພຣະຫັດທີ່ບັນດານໃຫ້ເຫດການທຸກຢ່າງເກີດຂຶ້ນຕາມທີ່ພຣະອົງຊົງພໍພຣະທັຍ ຫລາຍເທື່ອທີ່ຜູ້ນຳສາສນາທີ່ໄດ້ຮັບຄຳຍົກຍ້ອງສັນລະເສີນມັນຈະໄວ້ວາງໃນໃນຕົນເອງ ປະຊາຊົນຖືກຊັກນຳໃຫ້ປະຕິບັດຕາມຄຳແນະນຳຂອງພວກເຂົາແທນທີ່ຈະຄົ້ນຄົ້ວຈາກພຣະທັມຂອງພຣະເຈົ້າ ພຣະເຈົ້າຊົງປົກປ້ອງຄຸ້ມຄອງງານປະຕິຮູບສາສນາບໍ່ໃຫ້ມີອັນຕຣາຍໃນສິ່ງນີ້ ຄົນທັງຫລາຍເພັ່ງມອງເບິ່ງລູເຕີໃນຖານະຜູ້ອະທິບາຍຄວາມຈິງ ເມື່ອເພິ່ນຖືກນຳຕົວໄປເສັ້ງສາຍຕາຂອງມະນຸດທຸກຄົນກໍຈະຫັນໄປມອງເບິ່ງອົງນິຣັນດອນຜູ້ຊົງຊຽນຄວາມຈິງເຫລົ່ານັ້ນ

ຂນະທີ່ມາຕິນລູເຕີເລີ່ມການປະຕິຮູບສາສນາໃນປະເທດເຢຣະມັນບໍ່ໄກກັນເທົ່າໃດໃນປະເທດສະວິດເຊີແລນດິນແດນທີ່ຄຣິສະຕຽນເຄີຍໃຊ້ເປັນທີ່ຫລົບຊ່ອນຕົວຈາກການກົດຂີ່ຈາກຄຣິສຕະຈັກຂອງຣັດອູລຣິກສະວິງລີ (ຄ.ສ. 1484-1531) ອະນຸສາສນາຈານໃນກອງທັບກໍເລີ່ມສັງເກດເຫັນຄວາມແຫລວແຫລກຂອງຄຣິສຕະຈັກ ເພິ່ນເລີ່ມວິພາກວິຈານກ່ຽວກັບຄຳສອນຜິດເຊັ່ນເຣື່ອງແດນຊຳຣະການກາບໄຫວ້ນັກບຸນແລະການຢູ່ອາຮາມດ້ວຍການພິມໃບປີວຕໍ່ຕ້ານ

ຫລັກຄຳສອນຂອງສະວິງລີນັ້ນອາສັຍພຣະຄັມພີເປັນບັນທັດຖານ ເພິ່ນປະຕິເສດພິທີກັມຂອງຄຣິສຕະຈັກເຊັ່ນພິທີຖາວາຍບູຊາມິສຊາ ລະດູການຖືກສິນອົດອາຫານ ການຢູ່ເປັນໂສດຂອງບັນພະສິດແລະປະຕິເສດອຳນາດຂອງສັນຕະປາປາ ເໜືອຄຣິສຕະຈັກ ການກະທຳຂອງສະວິງລີໄດ້ຮັບການສນັບສນູນຈາກປະຊາຊົນ ແລະເຈົ້າ



ບົດທີ່ 11

# ຄຳຂັດຄ້ານຂອງເຈົ້ານາຍເຢຣະມັນ

ຄຳພະຍານອັນປະເສີດທີ່ສຸດທີ່ເຄີຍກ່າວເຖິງສຳລັບການປະຕິຮູບ ສາສນາຄືຄຳຂັດຄ້ານຊຶ່ງກະທຳໂດຍບັນດາເຈົ້ານາຍຄຣິສະຕຽນເຢຣະມັນ ນະ ສະພາແຫ່ງ

ເອື້ອເຟື້ອເພື່ອແຜ່ເປີດປະຕູກວ້າງສຳລັບພວກເຂົາສເມີ ພວກເຂົາກໍເທສນາສັ່ງສອນເຣື່ອງລາວຂອງພຣະຄຣິດ ລາງເທື່ອກໍກະທຳໃນໂບດໃນບ້ານແລະກາງເດີ່ນຄວາມຈິງໄດ້ແຜ່ຫລາຍໄປໂດຍບໍ່ມີອຳນາດໃດຈະມາຂັດຂວາງໄດ້

ຜູ້ມີອຳນາດທາງຝ່າຍສາສນາແລະບ້ານເມືອງພຍາຍາມຢັບຢັ້ງການປະກາດຫລັກສອນແຫ່ງຄວາມຈິງ ໂດຍການຈັບຄົນເຫລົ່ານີ້ໄປຂັງຄຸກທໍຣະມານດ້ວຍວິທີການຕ່າງໆ ເຜົາດ້ວຍໄຟແລະປະຫານດ້ວຍດາບ ແຕ່ກໍເຮັດບໍ່ສຳເຣັດຜູ້ທີ່ມີຄວາມເຊື່ອຫລາຍພັນຄົນໄດ້ປະທັບຕາແຫ່ງຄວາມເຊື່ອຂອງພວກເຂົາດ້ວຍເລືອດ ການກົດຂີ່ຂົ່ມເຫງກັບເຮັດໃຫ້ຄວາມຈິງແຜ່ຜາຍອອກໄປຫລາຍຂຶ້ນ ລັດທິຄັ່ງໃນສາສນາທີ່ຊາຕານພຍາຍາມຮວມເຂົ້າກັບຄວາມຈິງນັ້ນ ແທນທີ່ຈະເປັນຜົນດີແຕ່ກັບເຮັດໃຫ້ຄົນທັງປວງມອງເຫັນເຖິງຄວາມແຕກຕ່າງລະຫວ່າງກິຈການຂອງຊາຕານແລະກິຈການຂອງພຣະເຈົ້າໄດ້ຊັດເຈນຫລາຍຂຶ້ນ

ຄວາມວຸ່ນວາຍອັນເກີດຈາກການປະຕິຮູບສາສນາຍັງບໍ່ສິ້ນສຸດ ເມື່ອຝ່າຍຄາທໍລິກໄດ້ອອກປະກາດວ່າໃນເມືອງໃດກໍຕາມທີ່ຍັງບໍ່ຍອມຮັບຄຳສອນຂອງລູເທີກໍບໍ່ຄວນໃຫ້ມີການປະຕິຮູບຫລືຂັດຂວາງພິທີກັມທາງສາສນາການກະທຳເຊັ່ນນີ້ກໍເທົ່າກັບບັງຄັບປະຊາຊົນບໍ່ໃຫ້ມີອິສາຣະໃນການນັບຖືສາສນາທີ່ຕົນເຊື່ອຖື

ໃນຂນະດຽວກັນລູເທີກໍຕ້ອງຂຶ້ນສານເພື່ອການສອບສວນແລະໂຕ້ແຍ່ງສເມີ ແຕ່ລູເທີກໍຕໍ່ສູ້ຕໍ່ໄປຢ່າງບໍ່ຍ່ອມທໍ້ຖອຍ ເພິ່ນປ່ຽນຊີວິດຈາກບັນພະສິດມາເປັນສາມັນຊົນແລະແຕ່ງງານເມື່ອປີ ຄ.ສ. 1525 ແລະແມ່ນວ່າຜົນຂອງການປະຕິຮູບໄດ້ນຳຄວາມຂັດແຍ່ງທາງສັງຄົມໃຫ້ເກີດຂຶ້ນເພາະຊາຕານ ຕ້ອງການພຍາຍາມທຳລາຍງານຂອງນັກປະຕິຮູບໃນທຸກຮູບແບບ ແຕ່ເພາະເພິ່ນມີວິນຍານແຫ່ງຄວາມເສັຽສະລະເພື່ອພຣະກຸຽດຕິຄຸນຂອງພຣະເຈົ້າຈຶ່ງຕໍ່ສູ້ຈົນເອົາຊັຍຊະນະໄດ້ແລະເປັນມໍຣະດົກທີ່ຕົກທອດມາຈົນທຸກວັນນີ້



ເມືອງດ້ວຍ ໃນຕອນທຳອິດສະວິງລີຍອມຮັບການມາສະຖິດໃນເຂົ້າໜົມປັງ ຂອງພຣະຄຣິດແລະເຫລົ້າອະງຸ່ນເປັນໂລຫິດຈິງໆ ຂອງພຣະຄຣິດໃນພິທີມະຫາສະນິດຕາມຄວາມເຊື່ອຂອງຄາທໍລິກ ໃນເວລາຕໍ່ມາເພິ່ນປະຕິເສດຄຳສອນນີ້ ແຕ່ບອກວ່າທຸກສິ່ງຈຶ່ງເກີດຄວາມຂັດແຍ່ງກັບລູເທີໃນເຣື່ອງນີ້ແຕ່ສະວິງລີກໍບໍ່ຍອມປ່ຽນຄວາມເຊື່ອຂອງຕົນ ເຮັດໃຫ້ກຸ່ມຂອງໂປເຕສແຕນທັງສອງຂັດແຍ່ງກັນ

ສະວິງລີຖືກຕໍ່ຕ້ານມີການຕໍ່ສູ້ກັນທີ່ຟຣໍເຣດ ແຄນຕັນແລະໃນປີ ຄ.ສ. 1531 ເພິ່ນຖືກໂຈມຕີຢ່າງກະທັນຫັນທີ່ເມືອງຊູຣິກ ສະວິງລີຖືກຂ້າຕາຍໃນສະໜາມຮົບຂນະນັ້ນຕົງກັບຣັດສມັຍຂອງສົມເດັດພຣະບໍຣົມຣາຊາທິຣາດທີ່ 4 ແຫ່ງກຸງສີອະຍຸທະຍາ

ບົດທີ່ 9

# ແສງສວ່າງຖືກຈູດຂຶ້ນໃນສະວິດເຊີແລນ

ຫລັງຈາກລູເທີຖືກກຳເນີດມາໄດ້ບໍ່ທັນເທົ່າໃດສັບປະດາ ໃນກະທ່ອມຂອງກັມມະກອນເໝືອງແຮ່ໃນແຄວັນແຊັກໂຊນີ ອູຣິກ ສະວິງລີ ໄດ້ຖືກກຳເນີດຂຶ້ນມາເບິ່ງໂລກໃນກະທ່ອມຂອງຄົນລ້ຽງສັດໃນຮ່ອມພູແອນປີເຊັ່ນກັນ ສະວິງລີໄດ້ຮັບການລ້ຽງດູໃຫ້ຈະເຣີນເຕີບໂຕຂຶ້ນຖ້າມກາງທັມມະຊາດທີ່ສວຍງາມ ສະງ່າຣາສີແລະຣິດທານຸພາບຍິ່ງໃຫຍ່ຂອງພຣະເຈົ້າຈຶ່ງປະທັບໃຈເພິ່ນມາຕັ້ງແຕ່ຍັງນ້ອຍ ເພິ່ນນັ່ງຂ້າງແມ່ຍາຍ

ສເມີ ເພື່ອຟັງເຣື່ອງຣາວໃນພຣະຄັມພີອັນປະເສີດຊຶ່ງໄດ້ຈົດຈຳມາຈາເຣື່ອງເລົ່າສືບຕໍ່ໆ ກັນມາໃນຄຣິສຕະຈັກ

ເມື່ອອາຍຸສະວິງລີໄດ້ 13 ປີ ເພິ່ນໄດ້ໄປທີ່ເມືອງເບີຣນຊຶ່ງມີໂຮງຮຽນທີ່ດີທີ່ສຸດໃນສະວິດເຊີແລນໃນສມັຍນັ້ນ ຢ່າງໃດກໍຕາມມີອັນຕຣາຍເກີດຂຶ້ນທີ່ເມືອງນີ້ພວກບາດຫລວງພິກຂາຈານໄດ້ຊັກຈູງໃຫ້ເພິ່ນບວດເປັນບາດຫລວງແລະໃຫ້ອາສັຍຢູ່ໃນໂບດພຣະຜູ້ເປັນເຈົ້າໄດ້ຊົງບັນດານໃຫ້ບິດາຂອງສະວິງລີລ່ວງຮູ້ເຖິງແຜນການຂອງບາດຫລວງພິກຂາຈານເຫລົ່ານັ້ນຈຶ່ງເຫັນວ່າເປັນການສ່ຽງຕໍ່ອານາຄົດອັນມີຄ່າຂອງບຸດຊາຍ ເພິ່ນຈຶ່ງສັ່ງໃຫ້ສະວິງລີກັບບ້ານດ່ວນ

ສະວິງລີເຊື່ອຟັງຄຳສັ່ງຂອງບິດາ ແຕ່ຊາຍໜຸ່ມບໍ່ພໍໃຈທີ່ຈະກັບໄປຢູ່ໃນຮ່ອມພູບ້ານເກີດຂອງຕົນຈຶ່ງກັບໄປສຶກສາຕໍ່ ຕໍ່ມາອີກບໍ່ນານຈຶ່ງໄປທີ່ເມືອງບາເຊນທີ່ເມືອງນີ້ເອງທີ່ສະວິງລີໄດ້ຍິນຂ່າວປະເສີດຂອງພຣະເຈົ້າ ກ່ຽວກັບພຣະຄຸນທີ່ໄດ້ຮັບມາໂດຍບໍ່ເສັຽຄ່າອັນໃດ ເປັນເທື່ອທຳອິດທີ່ວິດເທັມບັດເພິ່ນໄດ້ສຶກສາພາສາກຣີກແລະເຮັບເຣີແລະພຣະວິນຍານບໍຣິສຸດໄດ້ນຳເພິ່ນສຶກສາພຣະຄັມພີ ດ້ວຍເຫດນີ້ແສງສວ່າງແຫ່ງພຣະທັມຂອງພຣະເຈົ້າໄດ້ສ່ອງເຂົ້າໄປໃນຈິດໃຈຂອງນັກສຶກສາທີ່ເພິ່ນສອນຢູ່ ເພິ່ນປະກາດວ່າຄວາມຕາຍຂອງພຣະຄຣິດເປັນສິ່ງດຽວທີ່ຈະຊ່ອຍໃຫ້ຄົນຜິດບາບໃຫ້ໄດ້ຄວາມລອດ ສະວິງລີຮູ້ສຶກວ່າຖ້ອຍຄຳເຫລົ່ານີ້ປຽບເໝືອນແສງປະກາຍກ່ອນຮຸ່ງອະຣຸນ

ຕໍ່ມາບໍ່ນານສິວິງລີກໍຖືກຮຽກຈາກເມືອງບາເຊນໃຫ້ໄປເລີ່ມຕົ້ນຊີວິດການທຳງານສະຖານທີ່ແຫ່ງທຳອິດທີ່ເພິ່ນປະກາດສາສນາຄື ຕາແສງໃນຮ່ອມພູແຫ່ງນຶ່ງເມື່ອໄດ້ບວດເປັນພຣະເພິ່ນໄດ້ອຸທິດຕົນແລະຈິດວິນຍານ ເພື່ອສະແຫວງຫາຄວາມຈິງຂອງພຣະເຈົ້າ”

ແຮ່ງສຶກສາພຣະຄັມພີຫລາຍເທົ່າໃດ ກໍແຮ່ງເຮັດໃຫ້ສະວິງລີເຂົ້າໃຈແລະເຫັນຄວາມແຕກຕ່າງລະຫວ່າງຄວາມຈິງແລະຄຳສອນນອກຮີດຊັດເຈນຂຶ້ນ ເພິ່ນຍອມຮັບແລະເຊື່ອວ່າພຣະຄັມພີເປັນພຣະທັມຂອງພຣະເຈົ້າ ເປັນກົດເກນທີ່ບໍ່ມີຜິດພາດສະວິງລີເຫັນວ່າພຣະຄັມພີໜ້າຈະມີຄຳອະທິບາຍຢູ່ໃນຕົວ ເພິ່ນພຍາຍາມທຸກວິທີທາງເພື່ອຈະເຂົ້າໃຈຄວາມໝາຍຂອງພຣະຄັມພີຢ່າງຖືກຕ້ອງທູນຂໍໃຫ້ພຣະວິນຍານບໍ



## ມີການສຶກສາພຣະຄັມພີທົ່ວທຸກຫົນທຸກແຫ່ງ

ໃນເວລາກາງຄືນຄຣູໃນໂຮງຮຽນຂອງໝູ່ບ້ານໄດ້ອ່ານພຣະຄັມພີສຽງດັງໃຫ້ຄົນກຸ່ມນ້ອຍໆ ທີ່ນັ່ງອ້ອມເຕົາຜີງໄຟດ້ວຍຄວາມພຍາຍາມທຸກທີທາງເພື່ອບາງຄົນຍອມຮັບເອົາຄວາມຈິງ “ການອະທິບາຍພຣະທັມຂອງພຣະອົງເປັນທາງທີ່ເຮັດໃຫ້ສວ່າງແລະກະທຳໃຫ້ຄົນມີປັນຍານ້ອຍມີຄວາມເຂົ້າໃຈ” (ເພງສັນລະເສີນ 119:130

ຜູ້ຕິດຕາມສັນຕະປາປາ ທີ່ເຄີຍປ່ອຍໃຫ້ການສຶກສາພຣະຄັມພີເປັນເຣື່ອງຂອງພຣະບາດຫລວງ ບັດນີ້ໄດ້ຮຽກຮ້ອງໃຫ້ໂຕ້ແຍ່ງກັບຄຳສອນໃໝ່ ແຕ່ບາດຫລວງເຫລົ່ານັ້ນບໍ່ມີຄວາມຮູ້ກ່ຽວກັບພຣະຄັມພີພໍຈຶ່ງຕ້ອງຜ່າຍແພ້ໄປ ນັກຂຽນຄາທໍລິກຄົນນຶ່ງກ່າວວ່າ “ລູເຕີໄດ້ສອນຜູ້ຕິດຕາມເພິ່ນບໍ່ໃຫ້ມີຄວາມເຊື່ອໝັ້ນໃນຄຳສອນໃດນອກຈາກພຣະຄັມພີ” ຝູງຊົນພາກັນມາຟັງຄວາມຈິງຈາກຄົນທີ່ມີການສຶກສານ້ອຍປະກາດສັ່ງສອນ ຄົນທັງຫລາຍທີ່ມີຊື່ສຽງແຕ່ມີຄວາມຮູ້ນ້ອຍຮູ້ສຶກອັບອາຍ ເພື່ອການໂຕ້ແຍ່ງຂອງພວກຕົນຮູ້ກັບຄຳສອນງ່າຍໆຂອງພຣະທັມຂອງພຣະເຈົ້າບໍ່ໄດ້ພວກກັມມະກອນທະຫານ ພວກຜູ້ຍິງ ແລະແມ່ນແຕ່ເດັກນ້ອຍກໍມີຄວາມຮູ້ກ່ຽວກັບຄຳສອນໃນພຣະຄັມພີດີກວ່າບາດຫລວງແລະອາຈານມະຫາບັນດິດທັງຫລາຍ

ບັນດາເຍົາວະຊົນຍິງທີ່ມີຄວາມຄິດກວ້າງໄກ ໄດ້ອຸທິດຕົນໃນການສຶກສາຮ່ຳຮຽນຄົ້ນຄົ້ວຫາຄວາມຮູ້ຈາກພຣະຄັມພີແລະສຶກສາຮ່ຳຮຽນວັນນະກັມທີ່ສຳຄັນໃນສມັຍໂບຮານພວກໜຸ່ມສາວເຫລົ່ານີ້ມີຄວາມຄິດປາດເປື້ອງແລະມີຈິດໃຈສູງ ໃນບໍ່ຊ້າຄົນເຫລົ່ານີ້ກໍໄດ້ສຶກສາຄົ້ນຄົ້ວຢ່າງກວ້າງຂວາງເປັນໄລຍະເວລາອັນຍາວນານແລະບໍ່ມີໃຜເຮັດຄວາມຮູ້ສູ້ພວກເຂົາໄດ້ປະຊາຊົນພົບວ່າຄຳສອນແນວໃໝ່ນີ້ເປັນສິ່ງສນອງຄວາມຕ້ອງການຂອງຈິດວິນຍານ ດັ່ງນັ້ນພວກເຂົາຈຶ່ງເອົາໃຈອອກຫ່າງຈາກຜູ້ທີ່ສັ່ງສອນດ້ວຍວິທີກັມຕ່າງໆ ທີ່ປະກອບດ້ວຍການເຊື່ອຖືໂຊກລາງແລະເຄົາລົບປະເພນີທີ່ຜິດໆ ຂອງມະນຸດມາເປັນເວລາດົນນານ

ເມື່ອມີການກົດຂີ່ຂົ່ມເຫງຕໍ່ສູ້ບັນດາຄຣູຜູ້ສອນຄວາມຈິງເຫລົ່ານັ້ນ ທຸກຄົນຍອມເຊື່ອຟັງແຕ່ພຣະທັມຂອງພຣະຄຣິດ “ເມື່ອເຂົາຂົ່ມເຫງພວກທ່ານໃນເມືອງນຶ່ງຈົ່ງໜີໄປຍັງເມືອງອື່ນ” (ມັດທາຍ 10:23) ຜູ້ທີ່ຫລົບລີ້ໜີພັຍຍ່ອມຈະພົບຜູ້ທີ່ມີໃຈ

ລັດທິຕົງກັນຂ້າມແຕ່ລະກຸ່ມນີ້ລະຖິ້ມພຣະຄັມພີອັນສັກສິດຍົກຍ້ອງສະຕິ
ປັນຍາຂອງມະນຸດວ່າເປັນແຫລ່ງແຫ່ງຄວາມຈິງ ລັດທິເຫດຜົນນິຍົມຍົກຍ້ອງເຫດ
ຜົນແລະໃຊ້ສິ່ງນີ້ເປັນມາຕຖານຂອງສາສນາສ່ວນລັດທິຂອງໂຣມອ້າງວ່າສືບທອດ
ຢ່າງບໍ່ມີຂາດຕອນຕັ້ງແຕ່ສມັຍຂອງອັກຄະສາວົກແລ້ວເປີດໂອກາດເພື່ອຄວາມຫລູ
ຫລາຟຸ່ມເຟືອຍແລະການສໍ້ໂກງໂດຍແອບອ້າງສິດທິອຳນາດໃນການປະຕິບັດໜ້າທີ່
ພາຍໃຕ້ພຣະມະຫາບັນຊາ “ຕາມແບບອັຄສາວົກ” ລັດທິຄຳສອນຂອງມູນເຊີທີ່
ເພິ່ນແອບອ້າງວ່າໄດ້ຮັບການດົນໃຈນັ້ນເປັນແຕ່ພຽງຈິນຕະນາການທີ່ເພີ້ເຈີ້ ຄຣິສຕະ
ສາສນາຍອມເອົາພຣະທັມຂອງພຣະເຈົ້າເທົ່ານັ້ນເປັນເຄື່ອງພິສູດການດົນໃຈທຸກຢ່າງ

ເມື່ອກັບຈາກປະສາດວ໊ອດເບີກ ລູເຕີໄດ້ແປພຣະຄັມພີພັນທະສັນຍາມໃໝ່
ສຳເຣັດແລະຫລັງຈາກນີ້ບໍ່ນານປະຊາຊົນເຢຣະມັນກໍໄດ້ອ່ານຂ່າວປະເສີດເປັນພາສາ
ຂອງຕົນເອງພຣະຄັມພີເຫລັ້ມນີ້ສ້າງຄວາມຊົມຊື່ນຍິນດີແກ່ຜູ້ຮັກຄວາມຈິງທັງຫລາຍ

ພວກບາດຫລວງຕົກໃຈກົວເມື່ອຄິດວ່າສາມັນຊົນທັງຫລາຍສາມາດນຳເອົາ
ພຣະທັມຂອງພຣະເຈົ້າມາອະພິປາຍແລະເວົ້າໂອ້ລົມກັນກັບພວກເຂົາໄດ້ ເມື່ອເປັນ
ດັ່ງນີ້ຄວາມບໍ່ຮູ້ຂອງພວກຕົນກໍຈະຖືກເປີດເຜີຍອອກມາທາງໂຣມຈຶ່ງອອກຄຳສັ່ງໃຫ້
ໃຊ້ອຳນາດທຸກຢ່າງເພື່ອຢັບຢັ້ງການຈຳໜ່າຍພຣະຄັມພີ ແຕ່ຄຣິສຕະຈັກຫ້າມບໍ່ໃຫ້
ອ່ານພຣະຄັມພີຫລາຍເທົ່າໃດ ປະຊາຊົນກໍແຮ່ງຢາກຮູ້ຄຳສອນທີ່ແທ້ຈິງຫລາຍຂຶ້ນ
ເທົ່ານັ້ນ ບັນດາຄົນທີ່ສາມາດຈະອ່ານໜັງສືໄດ້ຈະນຳພຣະຄັມພີໄປດ້ວຍທຸກຫົນທຸກ
ແຫ່ງແລະກໍຍັງບໍ່ພໍໃຈຈົນກວ່າຈະສາມາດທ່ອງຂຶ້ນໃຈຂໍ້ຄວາມສ່ວນໃຫຍ່ໄດ້ ຫລັງ
ຈາກນັ້ນລູເຕີຈຶ່ງເລີ່ມແປພຣະຄັມພີພັນທະສັນຍາເກົ່າທັນທີ

ຜົນງານການຂຽນຂອງລູເຕີໄດ້ຮັບການຕ້ອນຮັບຈາກປະຊາຊົນທັງໃນເມືອງ
ແລະຊົນນະບົດ “ອັນໃດກໍຕາມທີ່ລູເຕີແລະສະຫາຍຂຽນຂຶ້ນ ຄົນອື່ນໆ ກໍນຳໄປ ແຈກ
ຈ່າຍ ບັນດາບາດຫລວງມີຄວາມເຊື່ອວ່າກົດເກນຂໍ້ບັງຄັບໃນວັດນັ້ນບໍ່ເປັນໄປຕາມ
ພຣະບັນຍັດ ແຕ່ເຮັດໃຫ້ບໍ່ມີຄວາມຮູ້ທີ່ຈະປະກາດພຣະທັມຂອງພຣະເຈົ້າ ບາດ
ຫລວງເຫລົ່ານີ້ຈຶ່ງເອົາໜັງສືທີ່ລູເຕີ ແລະເພື່ອນໆ ຂຽນໄປຂາຍ ຕໍ່ມາບໍ່ນານປະເທດ
ເຢຣະມັນກໍເຕັມໄປດ້ວຍຄົນຂາຍໜັງສືຜູ້ມີໃຈກ້າຫານເຫລົ່ານີ້”



ຣິສຸດຊົງຊ່ອຍ ຕໍ່ມາເພິ່ນໄດ້ບັນທຶກໄວ້ວ່າ “ຂ້າພະເຈົ້າເລີ່ມທູນຂໍພຣະເຈົ້າຊົງໂປຣດ
ປະທານແສງສວ່າງຂອງພຣະອົງ ແລະຂ້າພະເຈົ້າກໍເລີ່ມຮູ້ສຶກວ່າເຂົ້າໃຈພຣະຄັມພີ
ງ່າຍຂຶ້ນ”

ຫລັກຄວາມເຊື່ອທີ່ສະວິງລີປະກາດສັ່ງສອນນັ້ນ ເພິ່ນບໍ່ໄດ້ຮັບຈາກລູເຕີ
ແຕ່ເປັນຂອງພຣະຄຣິດ ນັກປະຕິຮູບສາສນາກ່າວຊາວສະວິດກ່າວວ່າ “ຖ້າລູເຕີ
ເທສນາເຣື່ອງພຣະຄຣິດ ເພິ່ນກໍເຮັດຢ່າງດຽວກັບທີ່ຂ້າພະເຈົ້າໄດ້ເຮັດຢູ່ ຂ້າພະເຈົ້າ
ບໍ່ໄດ້ຂຽນໜັງສືແມ່ນແຕ່ຕົວດຽວເຖິງລູເຕີ ແລະເພິ່ນກໍບໍ່ເຄີຍຂຽນໜັງສືເຖິງຂ້າພະເຈົ້າ
ເປັນຫຍັງຈຶ່ງເປັນເຊັ່ນນັ້ນ ກໍເພື່ອຈະສະແດງໃຫ້ເຫັນວ່າພຣະວິນຍານຂອງພຣະເຈົ້າມີ
ຄວາມສອດຄ່ອງຕ້ອງກັນໃນຕົວເອງຫລາຍຂນາດໃດ ເມື່ອເຮົາທັງສອງບໍ່ເຄີຍຂັດແຍ່ງ
ກັນຕ່າງກໍສັ່ງສອນຫລັກຄວາມເຊື່ອຂອງພຣະຄຣິດຢ່າງດຽວກັນ”

ໃນປີ ຄ.ສ. 1516 ສະວິງລີໄດ້ຮັບເຊີນໃຫ້ໄປເທສນາທີ່ໂບດໃນເມືອງໄອ
ຊີເດນທີ່ນີ້ເອງ ເພິ່ນກໍຈະຕ້ອງພຍາຍາມໃຫ້ອິດທິພົນໃນຖານະນັກປະຕິຮູບສາສນາ
ເພື່ອໃຫ້ພີ່ນ້ອງຊາວພູແອນປີໄດ້ມີຄວາມເຂົ້າໃຈໃນບັນດາສິ່ງຕ່າງໆ ທີ່ປະຊາຊົນມີ
ຄວາມສົນໃຈຫລາຍທີ່ສຸດໃນເມືອງໄອຊີເດນ ຄືຮູບປັ້ນແມ່ຊີອາຊຶ່ງເຊື່ອກັນວ່າມີອຳ
ນາດເຮັດການອັສຈັນໄດ້ເໝືອນປະຕູໂບດທີ່ມີຄຳຈາລຶກວ່າ “ທີ່ນີ້ທ່ານສາມາດຊຳຣະ
ບາບໄດ້ຢ່າງສົມບູນ” ປະຊາຊົນມາກມາຍມາຈາກທຸກສ່ວນຂອງສະວິດເຊີແລນ
ແມ່ນກະທັ່ງປະເທດຝຣັ່ງເສດແລະເຢຣະມັນກໍພາກັນມາທີ່ນີ້ ສະວິງລີຈຶ່ງໃຊ້ໂອກາດ
ນີ້ປະກາດການມີອິສຣະພາບໂດຍຂ່າວປະເສີດແກ່ບັນດາຜູ້ຕົກເປັນທາດຂອງຄວາມ
ເຊື່ອທີ່ຜິດ

ເພິ່ນກ່າວວ່າ “ຢ່າຄິດວ່າພຣະເຈົ້າສະຖິດຢູ່ໃນວິຫານນີ້ຫລາຍກວ່າສິ່ງທີ່ຊົງ
ສ້າງອື່ນໆ ກິຈການທີ່ໄຮ້ປໂຍດ ການເດີນທາງສະແຫວງບຸນ ການຖວາຍບູຊາຮູບ
ເຄົາຣົບ ແລະຄຳວິງວອນຂໍຮ້ອງຂອງແມ່ພຣະນັກບຸນບໍ່ໄດ້ເປັນສິ່ງທີ່ຈະຊ່ອຍໃຫ້ທ່ານ
ໄດ້ຮັບພຣະຄຸນຂອງພຣະເຈົ້າ ໝວກທີ່ເປັນມັນລະຍິບລະຍັບ ຫົວທີ່ໂກນຜົມໃຫ້ກ້ຽງດີ
ເສື້ອຄຸມຍາວຫລືເກີບທີ່ປັກດ້ວຍໄໝທອງຄຳຈະເກີດປໂຍດອັນໃດ” ສະວິງລີກໍກ່າວ
ຕໍ່ໄປວ່າ “ພຣະຄຣິດຜູ້ຊົງສະລະພຣະຊົນເທິງໄມ້ກາງແຂນຄັ້ງທີ່ນຶ່ງນັ້ນຕ່າງຫາກ ທີ່
ເປັນເຄື່ອງບູຊາທີ່ຈະຊ່ອຍໄຖ່ບາບຂອງຜູ້ມີຄວາມເຊື່ອອັນຕລອດໄປເປັນນິດ” ຄົນ

ເຫລົ່ານັ້ນຮູ້ສຶກຜິດຫວັງຢ່າງຫລວງຫລາຍ ເມື່ອມີຄົນມາບອກວ່າການເດີນທາງຢ່າງລຳບາກອິດເໝື່ອຍຂອງພວກເຂົານັ້ນບໍ່ມີປໂຍດ ທຸກຄົນບໍ່ເຂົ້າໃຈການຍົກໂທດຄວາມຜິດບາບໂດຍບໍ່ຕ້ອງສູນເສັຽອັນໃດເພື່ອພຣະຄຣິດເລີຍ ເພິ່ນມີຄວາມພໍໃຈຕາມວິທີການທີ່ໂຣມໄດ້ກຳນົດໄວ້ ເພາະການໄວ້ວາງໃຈວ່າບາດຫລວງແລະສັນຕະປາປາຈະຊ່ອຍໃຫ້ພວກເຂົາໄດ້ຮັບຄວາມລອດນັ້ນງ່າຍກວ່າການສະແຫວງຫາຄວາມບໍຣິສຸດຂອງຈິດໃຈ

ແຕ່ຄົນອີກຈຳນວນນຶ່ງຍອມຮັບຂ່າວກ່ຽວກັບການໄຖ່ບາບຂອງພຣະຄຣິດດ້ວຍຄວາມຍິນດີ ແລະຍອມຮັບພຣະໂລຫິດຂອງພຣະຜູ້ຊ່ອຍໃຫ້ລອດເປັນເຄື່ອງໄຖ່ບາບດ້ວຍຄວາມເຊື່ອ ຄົນເຫລົ່ານີ້ໄດ້ກັບໄປບ້ານແລ້ວບອກເຫລົ່າໃຫ້ຄົນອື່ນຮູ້ເຖິງແສງສວ່າງອັນປະເສີດທີ່ພວກເຂົາໄດ້ຮັບຄວາມຈິງ ຈຶ່ງຖືກປະກາດຈາກເມືອງນຶ່ງໄປອີກເມືອງນຶ່ງ ແລະຈຳນວນຄົນທີ່ກາບໄຫວ້ຮູບປັ້ນພຣະແມ່ມາຣີອາໄດ້ລົດນ້ອຍລົງເຮັດໃຫ້ໄດ້ຮັບເງິນຖວາຍນ້ອຍລົງ ເມື່ອເປັນເຊັ່ນນັ້ນເງິນເດືອນຂອງສະວິງລີກໍຖືກຫັກລົດລົງໄປດ້ວຍ ສິ່ງເຮັດໃຫ້ເພິ່ນມີຄວາມຍິນດີເມື່ອເພິ່ນເຫັນວ່າອຳນາດຂອງຄວາມເຊື່ອທີ່ຜິດໄດ້ຖືກທຳລາຍຄວາມຈິງກຳລັງເຂົ້າຄອບຄອງຈິດໃຈຂອງປະຊາຊົນແລ້ວ

## ສະວິງລີໄດ້ຮັບເຊີນໃຫ້ໄປເທສນາທີ່ເມືອງຊູຣິກ

ສາມປີຕໍ່ມາສະວິງລີໄດ້ຮັບການຂໍຮ້ອງໃຫ້ໄປເທສນາທີ່ໂບດໃນເມືອງຊູຣິກຊຶ່ງເປັນເມືອງທີ່ສຳຄັນທີ່ສຸດຂອງປະເທດສະວິດເຊີແລນ ອິດທິພົນຈາກທີ່ນີ້ຈະຂຍາຍຜົນໃຫ້ກວ້າງຂວາງອອກໄປ ຜູ້ມີອຳນາດຝ່າຍສາສນາຈຶ່ງໄດ້ແນະນຳໃຫ້ສະວິງລີຮູ້ວ່າເພິ່ນມີໜ້າທີ່ຈະຕ້ອງປະຕິບັດຢ່າງໃດ

"ເພິ່ນຕ້ອງໃຊ້ຄວາມພຍາຍາມທຸກຢ່າງເພື່ອຈະຮວບຮວມເງິນລາຍໄດ້ໃຫ້ຫລາຍທີ່ສຸດຢ່າລືມຄົນທີ່ຈຳນວນເລັກນ້ອຍທີ່ສຸດ ເພິ່ນຕ້ອງພຍາຍາມເພີ່ມພູນລາຍໄດ້ຈາກຄົນເຈັບປ່ວຍຈາກພິທີມິດຊາແລະຈາກພິທີກັມທາງສາສນາອື່ນໆ ສຳລັບການປະກອບພິທີກັມທາງສາສນາ ການເທສນາສັ່ງສອນແລະການເອົາໃຈໃສ່ສະມາຊິກ



## ຄວາມທຸກໃຈກິດທັບລູເຕີ

ພວກເຈົ້ານາຍທີ່ຕິດຕາມສັນຕະປາປາປະກາດວ່າການກິດຂີ່ຄັ້ງນີ້ເນື່ອງມາຈາກຄຳສອນຂອງລູເຕີ ແມ່ນວ່າຂໍ້ກ່າວຫານີ້ບໍ່ມີຂໍ້ມູນເຫດແຫ່ງຄວາມຈິງເຮັດໃຫ້ລູເຕີມີຄວາມທຸກຫລາຍຂຶ້ນ ເມື່ອເພິ່ນເຫັນຄວາມຈິງເຊື່ອມເສັຽ ເພາະພວກຄັ່ງໃນສາສນາທີ່ຕ່ຳຊ້າທີ່ສຸດ ອີກປະການນຶ່ງຜູ້ນຳພວກກະບົດກຽດຊັງລູເຕີ ເພິ່ນບໍ່ພຽງແຕ່ປະຕິເສດຄຳກ່າວອ້າງວ່າຄຳສອນຂອງພວກເຂົາມາຈາກພຣະເຈົ້າເທົ່ານັ້ນ ແຕ່ຍັງປະກາດວ່າພວກເຂົາກໍ່ກະບົດຕໍ່ອຳນາດຂອງບ້ານເມືອງອີກດ້ວຍເພື່ອເປັນການຕອບໂຕ້ເພື່ອເປັນການແກ້ເຜັດ ລູເຕີພວກເຂົາພາກັນປັກປຳວ່າເພິ່ນເປັນຄົນຫລອກລວງທີ່ຕ່ຳຕ້ອຍ

ພວກທີ່ນັບຖືສາສນາໂຣມຫວັງວ່າຈະໄດ້ເຫັນຄວາມພິນາດຂອງການປະຕິຮູບສາສນາ ພວກເຂົາກ່າວໂທດລູເຕີແມ່ນກະທັ່ງຄວາມຜິດຕ່າງໆ ທີ່ເພິ່ນພຍາຍາມປັບປຸງແກ້ໄຂດ້ວຍຄວາມຈິງໃຈ ກຸ່ມຂອງຄົນຄັ່ງໃນສາສນາກ່າວເທັດວ່າໄດ້ຮັບການປະຕິບັດຢ່າງບໍ່ຍຸດຕິທັມເພື່ອຈະໄດ້ຄວາມເຫັນໃຈແລະອ້າງວ່າພວກຕົນຄືຄົນທີ່ເສັຽສະລະເພື່ອສາສນາ ດັ່ງນັ້ນພວກທີ່ຕໍ່ຕ້ານການປະຕິຮູບສາສນາເຫລົ່ານັ້ນຈຶ່ງໄດ້ຮັບຄວາມເຫັນໃຈແລະເປັນທີ່ຍົກຍ້ອງ ນີ້ຄືງານຂອງວິນຍານດຽວກັບທີ່ກໍ່ກະບົດຂຶ້ນເປັນເທື່ອທຳອິດໃນສວັນ

ຊາຕານພຍາຍາມຫລອກລວງມະນຸດຢ່າງຕໍ່ເນື່ອງແລະຊັກຈູງໃຫ້ເພິ່ນຮຽກຄວາມບາບວ່າເປັນຄວາມຊອບທັມແລະຮຽກຄວາມຊອບທັມວ່າເປັນຄວາມບາບຄວາມບໍຣິສຸດຈອມປອມການຊຳຣະໃຫ້ສະອາດບໍຣິສຸດທຽມເທັດຍັງຄົງປາກົດໃຫ້ເຫັນເຖິງວິນຍານຢ່າງດຽວກັບວິນຍານໃນສມັຍຂອງລູເຕີ ຄອຍຊັກຈູງບໍ່ໃຫ້ມະນຸດເອົາໃຈໃສ່ໃນພຣະຄັມພີແລະເຮັດໃຫ້ຕາມຄວາມຮູ້ຄວາມປະທັບໃຈແທນທີ່ຈະປະພຶດພຣະບັນຍັດຂອງພຣະເຈົ້າ

ລູເຕີໄດ້ປ້ອງກັນຂ່າວປະເສີດໃຫ້ພົ້ນຈາກການໂຈມຕີກ້າຫານດ້ວຍການໃຊ້ພຣະທັມຂອງພຣະເຈົ້າເປັນອາວຸດໃນການຕໍ່ສູ້ກັບອຳນາດຂອງສັນຕະປາປາຢືນຢັດໝັ້ນຄົງດັ່ງສີລາຕໍ່ສູ້ກັບລັດທິຄັ່ງໃນສາສນາຊຶ່ງພຍາຍາມຈະມາກ່ຽວຂ້ອງກັບການປະຕິຮູບສາສນາ

ສັນຕະປາປາຕ້ອງຜ່າຍແພ້ ດັ່ງນັ້ນພວກເຈົ້ານາຍແລະຈັກກະພັດກໍບໍ່ເຮັດອັນໃດທີ່ເປັນອັນຕຣາຍຕໍ່ພຣະທັມຂອງພຣະເຈົ້າຫລາຍເທົ່າໃດແລະຂ້າພະເຈົ້າກໍບໍ່ໄດ້ເຮັດອັນໃດເລີຍ ພຣະທັມຂອງພຣະເຈົ້າເຮັດທຸກສິ່ງທຸກຢ່າງ" ພຣະທັມຂອງພຣະເຈົ້າໄດ້ທຳລາຍຄວາມຂອງຜູ້ຕັ້ງໃນສາສນາ ຂ່າວປະເສີດໄດ້ນຳຜູ້ຫລົງຜິດໃຫ້ກັບມາເດີນຕາມແນວທາງຂອງຄວາມຈິງ

ຫລາຍປີຕໍ່ມາພວກທີ່ຕັ້ງໃນສາສນາເຫລົ່ານີ້ໄດ້ເກີດຂື້ນອີກ ແລະເກີດຜົນຮ້າຍແຮງຍິ່ງຂື້ນ ລູເຕີກ່າວວ່າ "ສຳລັບພວກເຂົາແລ້ວພຣະຄັມພີອັນບໍຣິສຸດເປັນພຽງຕົວອັກສອນຕາຍແລ້ວ ແລະເມື່ອພວກເຂົາທຸກຄົນເລີ່ມຮ້ອງຂື້ນວ່າ "ພຣະວິນຍານພຣະວິນຍານ" ແຕ່ຂ້າພະເຈົ້າຈະບໍ່ຍອມຕິດຕາມໄປທີ່ໆ ວິນຍານນຳພວກເຂົາໄປ"

ໂທມັດ ມູນເຊີ ຜູ້ຊຶ່ງເປັນຜູ້ນຳຜູ້ເຂັ້ມແຂງຂອງຜູ້ຕັ້ງໃນສາສນາ ເພິ່ນໄດ້ຊື່ວ່າເປັນຜູ້ມີຄວາມສາມາດຄົນນຶ່ງ ແຕ່ບໍ່ໄດ້ຮຽນຮູ້ໃຫ້ເລິກຊຶ້ງຂອງແກ່ນແທ້ຂອງສາສນາທີ່ຖືກຕ້ອງ "ເພິ່ນມີຄວາມປາຖນາຈະປັບປຸງແກ້ໄຂໂລກແລະລືມວິທີການທີ່ຄົນມີຄວາມກະຕືລືລົ້ນກະທຳກັນ ໂດຍລືມໄປວ່າການປະຕິຮູບຄວນເລີ່ມຕົ້ນຈາກຕົວເພິ່ນກ່ອນ" ເພິ່ນບໍ່ຍອມເປັນສອງລອງຈາກໃຜ ແມ່ນແຕ່ລູເຕີ ເພິ່ນແອບອ້າງຕົວເອງວ່າໄດ້ຮັບບັນຊາຈາກພຣະເຈົ້າໃຫ້ປະຕິບັດການໃນການປະຕິຮູບສາສນາທີ່ແທ້ຈິງແລະມູນເຊີກ່າວອ້າງວ່າ "ຜູ້ໃດມີວິນຍານນີ້ເທົ່າກັບມີຄວາມເຊື່ອຢ່າງແທ້ຈິງ ເຖິງແມ່ນວ່າເພິ່ນຈະບໍ່ອ່ານພຣະຄັມພີເລີຍໃນຊີວິດ"

ບັນດາອາຈານທີ່ຕັ້ງໃນສາສນາຍ່ອມຕົກຢູ່ພາຍໃຕ້ອຳນາດຂອງຄວາມປະທັບໃຈເຊື່ອວ່າຄວາມຄິດແລະຄວາມຕັ້ງໃຈທຸກຢ່າງເປັນພຣະສຸຣະສຽງຂອງພຣະເຈົ້າບາງຄົນເຖິງກັບເຜົາພຣະຄັມພີຄົນເປັນພັນຍອມຮັບຫລັກຄຳສອນຂອງມູນເຊີໃນບໍ່ຊ້າເພິ່ນກໍປະກາດວ່າການເຊື່ອຟັງພວກເຈົ້ານາຍຄືການພຍາຍາມບົວລະບັດຮັບໃຊ້ທັງພຣະເຈົ້າແລະພຣະບາອັນ

ຄຳສອນແນວປະຕິຫວັດຂອງມູນເຊີ ຊັກຈູງໃຫ້ປະຊາຊົນກະດ້າງກະເດື່ອງຕໍ່ອຳນາດການປົກຄອງຂອງບ້ານເມືອງ ເກີດການກະບົດແລະການຕໍ່ສູ້ໃນບ້ານເມືອງປະເທດເຢຣະມັນຈຶ່ງນອງໄປດ້ວຍເລືອດ



ຂອງຄຣິສຕະຈັກນັ້ນເພິ່ນອາດຈະຈ້າງຄົນອື່ນເຮັດແທນໄດ້ໂດຍສະເພາະການເທສນາສັ່ງສອນ"

ສະວິ່ງລີນິ່ງຟັງຄຳກຳຊັບຢ່າງງຽບໆ ແລະຕອບວ່າ "ຊີວິດຂອງພຣະຄຣິດ ຖືກປິດບັງໄວ້ຈາກປະຊາຊົນມານານແລ້ວ ຂ້າພະເຈົ້າຈະເທສນາເຣື່ອງພຣະກິດຕິຄຸນມັດທາຍເປັນຕົ້ນໄປ ເພື່ອຖວາຍສັນລະເສີນສງ່າຣາສີຂອງພຣະເຈົ້າ ເພື່ອຖວາຍສັນລະເສີນແກ່ພຣະບຸດ ແລະເພື່ອການເສີມສ້າງຄວາມເຊື່ອທີ່ແທ້ຈິງແກ່ພວກເຂົາເພື່ອຂ້າເຈົ້າຈະຊຳຣະການຮັບໃຊ້ຂອງຂ້າພະເຈົ້າໃຫ້ບໍຣິສຸດ"

ປະຊາຊົນຫລວງຫລາຍມາຊຸມນຸມກັນຟັງຄຳເທສນາຂອງສະວິງລີ ເພິ່ນເລີ່ມການເທສນາສັ່ງສອນໂດຍເປີດພຣະກິດຕິຄຸນອອກອ່ານອະທິບາຍໃຫ້ຝູງຊົນທີ່ມາຟັງເຖິງເຣື່ອງຊີວິດ ຄຳສອນແລະຄວາມຕາຍຂອງພຣະຄຣິດເພິ່ນກ່າວວ່າ "ຂ້າພະເຈົ້າປາຖນາທີ່ຈະນຳທ່ານໄປຫາພຣະຄຣິດຜູ້ເປັນແຫລ່ງແຫ່ງຄວາມລອດທີ່ແທ້ຈິງ" ທຸກຄົນພາກັນມາຟັງຄຳເທສນາຂອງເພິ່ນ ມີທັງຜູ້ນຳປະເທດ ນັກສຶກສາຊ່າງຝີມືແລະຊາວນາເພິ່ນກ່າວຕິຕຽນຄວາມຊົ່ວຮ້າຍແລະຄວາມເຊື່ອມສິລທັມໃນສມັຍນັ້ນຢ່າງບໍ່ເກງກົວມີຫລາຍຄົນທີ່ກັບຈາກໂບດພາກັນກ່າວສັນລະເສີນພຣະເຈົ້າ ເຂົາກ່າວວ່າ "ຊາຍຄົນນີ້ເປັນນັກເທດແຫ່ງຄວາມຈິງ ເພິ່ນຈະເປັນໂມເຊຂອງພວກເຮົາທີ່ຈະນຳເຮົາອອກຈາກຄວາມມືດຂອງເອຢິບ"

ຫລັງຈາກທີ່ມີການຕໍ່ຕ້ານເກີດຂື້ນພວກບາດຫລວງເຫລົ່ານັ້ນເວົ້າເຢາະເຢີ້ຍເພິ່ນ ບາງຄົນກໍເວົ້າຫຍາບຊ້າ ແລະຂູ່ເຂັນເພິ່ນ ແຕ່ສະວິງລີອົດທົນຕໍ່ທຸກສິ່ງທຸກຢ່າງ

ເມື່ອພຣະເຈົ້າຊົງຕຽມການທຳລາຍຄວາມໂງ່ຊ້າແລະການເຊື່ອຖືທີ່ຜິດຊາຕານ ກໍພຍາຍາມໃຊ້ພະລັງອຳນາດອັນຍິ່ງໃຫຍ່ຂອງມັນ ຊັກຈູງມະນຸດທັງຫລາຍໃຫ້ຕົກຢູ່ໃນຄວາມມືດແລະຜູກມັດພວກເຂົາໄວ້ຢ່າງແໜ້ນໜາຫລາຍຂື້ນ ໂຣມຕັ້ງໜ້າຕັ້ງຕາທົບ ທວນການເປີດຕລາດຄ້າຂາຍໄປທົ່ວຄຣິສອານາຈັກ ເພື່ອຂາຍການອະພັຍຄວາມບາບໂດຍໃຊ້ເງິນເປັນເຄື່ອງແລກປ່ຽນບາບທຸກຢ່າງມີຄ່າຂອງມັນ ແລະຄົນທັງຫລາຍ ຈຶ່ງໄດ້ຮັບອານຸຍາດໃຫ້ປະກອບການຊົ່ວໄດ້ ຕາບໃດທີ່ເຮັດໃຫ້ຄັງຊັບຂອງຄຣິສຕະຈັກເຕັມ ດັ່ງນັ້ນການເຄື່ອນໄຫວສອງຢ່າງໄດ້ຈະເຣີນຫລຸດໜ້າ ຄືໂຣມຂາຍໃບລ້າງບາບໃຫ້ອະນຸຍາດເຮັດໄດ້ອັນເປັນແຫລ່ງທີ່ມາຂອງເງິນທອງ ສ່ວນນັກ

ປະຕິຮູບສາ ສນາໄດ້ກ່າວປະນາມຄວາມຜິດບາບແລະຊີ້ໄປທີ່ພຣະຄຣິດ ໃນຖານະຜູ້ອ້ອນວອນຂໍອະພັຍໂທດ ແລະພຣະຜູ້ໄຖ່

## ການຂາຍໃບລ້າງບາບໃນສະວິດເຊີແລນ

ໃນປະເທດເຢຣະມັນນີ ເທກເຊນເປັນຜູ້ຂາຍໃບລ້າງບາບທີ່ບໍ່ໄດ້ຜົນແລະໃນສະວິດເຊີແລນບາດຫລວງຊາວອິດຕາລ່ຽນຊື່ແຊ່ມຊັ່ນເປັນຜູ້ດຳເນີນການນີ້ ແຊ່ມຊັ່ນຂາຍໃບລ້າງບາບໃນເຢຣະມັນ ແລະໃນສະວິດເຊີແລນໄດ້ເງິນຈຳນວນຫລາຍຮວບຮວມໄວ້ໃນຄັງຂອງສັນຕະປາປາໃນເວລານີ້ແຊ່ມຊັ່ນໄດ້ເດີນທາງໄປທົ່ວປະເທດສະວິດເຊີແລນ ເພິ່ນໄດ້ຮີບໄຖເງິນຈາກລາຍໄດ້ນ້ອຍນິ່ງຂອງຊາວນາທີ່ຍາກຈົນແລະບີບບັງຄັບເອົາເງິນຈາກຄົນຮັ່ງມີ ນັກປະຕິຮູບຈຶ່ງຕ້ອງຮູບຂັດຂວາງກິຈການນີ້ທັນທີສະວິງລີໄດ້ຂັດຂວາງເປັນຜົນສຳເຣັດ ເຮັດໃຫ້ແຊ່ມຊັ່ນຂາຍລ້າງບາບບໍ່ໄດ້ຈຶ່ງຕ້ອງໄປຍັງເມືອງອື່ນທີ່ເມືອງຊູຣິກສະວິງລີໄດ້ເທສນາຕໍ່ຕ້ານໃບລ້າງບາບຢ່າງຮ້ອນຮົນເມື່ອແຊ່ມຊັ່ນເດີນທາງມາເຖິງເມືອງນັ້ນ ເພິ່ນຜ່ານເຂົ້າປະຕູເມືອງໄດ້ໂດຍການໃຊ້ກົນອຸບາຍ ແຕ່ກໍຖືກຂັບໄລ່ອອກຈາກເມືອງໂດຍຂາຍໃບລ້າງບາບບໍ່ໄດ້ແມ່ນແຕ່ໃບດຽວຫລັງຈາກນັ້ນບໍ່ນານເທົ່າໃດເພິ່ນກໍໄດ້ເດີນທາງອອກຈາກປະເທດສະວິດເຊີແລນ

ພັຍພິບັດຫລືຄວາມຕາຍຄັ້ງໃຫຍ່ເກີດຂຶ້ນທົ່ວສະວິດເຊີແລນ ໃນປີ ຄ.ສ. 1519 ພາບໂລກໄດ້ຣະບາດໄປທົ່ວປະເທດ ປະຊາຊົນຈຳນວນຫລາຍຮູ້ແລ້ວວ່າໃບລ້າງບາບທີ່ພວກເຂົາຊື້ໄວ້ນັ້ນບໍ່ມີຄວາມສຳຄັນແລະປໂຍດ ພວກເຂົາຢາກໄດ້ຮາກຖານທີ່ໝັ້ນຄົງສຳລັບຄວາມເຊື່ອຂອງຕົນເອງ ທີ່ເມືອງຊູຣິກສະວິງລີລົ້ມປ່ວຍໜັກຈົນແທບຈະເອົາຊີວິດບໍ່ລອດແລະມີຂ່າວລືວ່າເພິ່ນຕາຍແລ້ວ ຂນະທີ່ເພິ່ນພຍາຍາມເຮັດຈິດໃຈໃຫ້ເຂັ້ມແຂງ ເພິ່ນໄດ້ມອງໄປຍັງໄມ້ກາງແຂນແຫ່ງຄາວາລີດ້ວຍຄວາມເຊື່ອໄວ້ວາງໃຈໃນການໄຖ່ໃຫ້ລອດຈາກຄວາມບາບ ເມື່ອເພິ່ນຜ່ານພົ້ນຈາກປະຕູແຫ່ງຄວາມຕາຍ ເພິ່ນໄດ້ເທສນາຂ່າວປະເສີດຢ່າງຮ້ອນຮົນຍິ່ງກວ່າທີ່ເຄີຍເຮັດ ຄົນເຫລົ່ານັ້ນ



ໂຊນີມີໃຈຄວາມວ່າ "ຂ້າພະເຈົ້າຈະເດີນທາງໄປເມືອງວິດເຕັນເບີກພາຍໃຕ້ຄວາມຄຸ້ມຄອງທີ່ດີກວ່າຄວາມຄຸ້ມຄອງຂອງບັນດາເຈົ້ານາຍແລະພວກຜູ້ດີທັງຫລາຍ ຂ້າພະເຈົ້າບໍ່ຄິດຈະຂໍຄວາມຊ່ອຍເຫລືອແລະການສນັບສນູນຈາກເພິ່ນ ຂ້າພະເຈົ້າຄວນຈະຄຸ້ມຄອງທ່ານດ້ວຍຕົວຂ້າພະເຈົ້າເອງ ບໍ່ມີດາບເຫລັ້ມໃດທີ່ຈະເຮັດໃຫ້ກິຈການນີ້ຈະເຣີນຕໍ່ໄປໄດ້ ຂ້າພະເຈົ້າພ້ອມແລ້ວທີ່ຈະຜະເຊີນໜ້າກັບຄວາມບໍ່ພໍໃຈຂອງເພິ່ນແລະຄວາມໂກດເຄືອງຂອງຄົນທັງໂລກ ຊາວເມືອງວິດເຕັນເບີກບໍ່ແມ່ນລູກແກະຂອງຂ້າພະເຈົ້າຫລື ແລະຖ້າຫາກວ່າຂ້າພະເຈົ້າຈຳເປັນທີ່ຈະຕ້ອງຕາຍເພາະພວກເຂົາເຫລົ່ານັ້ນຂ້າພະເຈົ້າຈະບໍ່ຍອມຢ່າງນັ້ນຫລື"

## ຣິດອຳນາດແຫ່ງພຣະທັມ

ໃນບໍ່ຊ້ານີ້ມີຂ່າວເລື່ອງລືໄປທົ່ວເມືອງວິດເຕັນເບີກວ່າ ລູເຕີໄດ້ກັບມາແລະຈະເທສນາສັ່ງສອນ ມີຄົນໄປຟັງເພິ່ນຈົນແໜ້ນໂບດ ເພິ່ນກ່າວຕັກເຕືອນສັ່ງສອນຜູ້ຟັງດ້ວຍຄວາມອ່ອນໂຍນ "ພິທີມິຊາເປັນສິ່ງບໍ່ດີ ພຣະເຈົ້າບໍ່ຊົງພໍພຣະທັຍໃນພິທີນີ້ຄວນຈະເລີກລົ້ມພິທີນີ້ ແຕ່ຂໍຢ່າໃຫ້ຜູ້ນຶ່ງຜູ້ໃດເລີກໂດຍຖືກບັງຄັບໃຫ້ພຣະທັມຂອງພຣະເຈົ້າດົນໃຈເຂົາເອງບໍ່ແມ່ນເຮົາເປັນຜູ້ບັງຄັບເຮົາມີສິດທິທີ່ຈະເວົ້າໄດ້ ແຕ່ເຮົາບໍ່ມີສິດທິທີ່ຈະກະທຳຂໍໃຫ້ເຮົາເທສນາສັ່ງສອນເຣື່ອງນີ້ ສ່ວນອື່ນໆ ນັ້ນເປັນພະລະກິດຂອງພຣະເຈົ້າ ຖ້າຫາກຂ້າພະເຈົ້າໃຊ້ອຳນາດບັງຄັບຂ້າພະເຈົ້າຈະໄດ້ອັນໃດ ພຣະເຈົ້າຊົງຍຶດຈິດໃຈຂອງມະນຸດໄວ້ແລະເມືອພຣະເຈົ້າເອົາຊະນະຫົວໃຈໄດ້ ພຣະອົງກໍຊົງເອົາຊະນະທຸກສິ່ງທຸກຢ່າງໄດ້

"ຂ້າພະເຈົ້າຈະເທສນາສັ່ງສອນອະພິປາຍແລະຂຽນໜັງສືແຕ່ຈະບໍ່ບັງຄັບໃຜເລີຍເພາະຄວາມເຊື່ອເປັນການກະທຳດ້ວຍຄວາມສະມັກໃຈ ຂ້າພະເຈົ້າຢືນຢັດສູ້ກັບສັນຕະປາປາ ໃບລ້າງບາບແລະຄົນຂອງສັນຕະປາປາ ແຕ່ຂ້າພະເຈົ້າບໍ່ໄດ້ຕໍ່ສູ້ດ້ວຍການໃຊ້ອຳນາດບັງຄັບຫລືກໍ່ຄວາມໂກລາຫົນວຸ່ນວາຍ ຂ້າພະເຈົ້າປະກາດພຣະທັມຂອງພຣະເຈົ້າ ຂ້າພະເຈົ້າເທສນາສັ່ງສອນແລະຂຽນໜັງສືນີ້ຄືສິ່ງທີ່ຂ້າພະເຈົ້າເຮັດແລະຂນະທີ່ຂ້າພະເຈົ້ານອນຫລັບ ຖ້ອຍຄຳທີ່ຂ້າພະເຈົ້າໄດ້ເທສນາສັ່ງສອນກໍເຮັດໃຫ້

ທີ່ເມືອງວ໊ອດເບີກ ລູເຕີໄດ້ຊາບເຖິງເຫດທີ່ເກີດຂື້ນແລະເວົ້າຂື້ນດ້ວຍຄວາມຫ່ວງໃຍວ່າ "ຂ້າພະເຈົ້າຄິດຢູ່ສເມີວ່າຊາຕານຈະກໍ່ພັຍພິບັດຄັ້ງນີ້ໃຫ້ເກີດຂື້ນແກ່ພວກເຮົາ" ລູເຕີຮູ້ເຖິງອຸປະນິສັຍທີ່ແທ້ຈິງຂອງ "ຜູ້ປະກາດພຣະທັມ" ເທັດເຫລົ່ານັ້ນດີການຕໍ່ສູ້ຂັດຂວາງຂອງສັນຕະປາປາແລະຈັກກະພັດບໍ່ໄດ້ເຮັດໃຫ້ລູເຕີຮູ້ສຶກວຸ່ນວາຍໃຈແລະເປັນທຸກຫລາຍເທົ່າກັບສິ່ງທີ່ເພິ່ນຕ້ອງປະສົບຢູ່ໃນເວລານີ້ພວກທີ່ສະແດງຕົນວ່າເປັນ "ສະຫາຍ" ຂອງນັກປະຕິຮູບສາສນາໄດ້ກັບກາຍເປັນສັດຕຣູທີ່ຮ້າຍກາດທີ່ສຸດຂອງເພິ່ນ ເມື່ອພວກເຂົາກໍ່ໃຫ້ເກີດການທະເລາະວິວາດແລະຄວາມສັບສົນວຸ່ນວາຍໃນຄຣິສຕະຈັກ

ພຣະວິນຍານບໍຣິສຸດຂອງພຣະເຈົ້າຊົງຊ່ອຍສນັບສນູນລູເຕີ ໃນການປະຕິບັດງານການປະຕິຮູບສາສນາໃຫ້ຈະເຣີນກ້າວໜ້າ ແລະຊົງຊ່ອຍເຫລືອລູເຕີໃຫ້ກິຈການທີ່ເກີນຄວາມສາມາດຂອງເພິ່ນໃຫ້ລຸລ່ວງໄປດ້ວຍດີ ເຖິງປານນັ້ນເພິ່ນກໍຍັງຮູ້ສຶກຫວາດຫວັ່ນຕໍ່ຜົນງານທີ່ເພິ່ນໄດ້ກະທຳໄປ "ຖ້າຂ້າພະເຈົ້າຮູ້ວ່າຄຳສອນຂອງພຣະເຈົ້າເຮັດໃຫ້ອັນຕຣາຍຕໍ່ຄົນໃດຄົນນຶ່ງ ບໍ່ວ່າຄົນນັ້ນຈະເປັນຜູ້ຕ່ຳຕ້ອຍຫລືດ້ອຍຊື່ສຽງກໍຕາມຊຶ່ງບໍ່ມີທາງເປັນໄປໄດ້ເພາະຫລັກຄຳສອນຄືຂ່າວປະເສີດຂ້າພະເຈົ້າຂໍຍອມຕາຍເສັຽສິບເທື່ອ ຖ້າຫາກວ່າຂ້າພະເຈົ້າບໍ່ລະຖິ້ມຫລັກຄຳສອນນັ້ນ"

ເມືອງວິດເຕັນເບີກໄດ້ຕົກຢູ່ພາຍໃຕ້ອຳນາດຂອງຄົນຄັ່ງສາສນາບໍ່ເຄົາຣົບຕໍ່ກົດໝາຍບ້ານເມືອງ ສັດຕຣູຂອງລູເຕີທີ່ວເຢຣະມັນກ່າວວ່າເພິ່ນເປັນຕົວການໃນເຣື່ອງນີ້ລູເຕີຖາມດ້ວຍຄວາມຂົມຂື່ນໃຈວ່າ "ງານການປະຕິຮູບສາສນາເປັນງານອັນຍິ່ງໃຫຍ່ຈະເຖິງທີ່ສິ້ນສຸດລົງເຊັ່ນນີ້ເອງຫລື ຂນະທີ່ເພິ່ນອະທິຖານຂໍຕໍ່ພຣະເຈົ້າຈິດໃຈຂອງເພິ່ນເຕັມລົ້ນໄປດ້ວຍຄວາມສງົບສຸກອີກເທື່ອນຶ່ງ ເພິ່ນກ່າວວ່າ "ງານນີ້ບໍ່ແມ່ນຂອງຂ້ານ້ອຍແຕ່ເປັນຂອງພຣະອົງ" ແລະໃນທີ່ສຸດລູເຕີກໍຕັດສິນໃຈກັບວິດເຕັນເບີກ

ຈັກກະພັດໄດ້ອອກປະກາດຫ້າມບໍ່ໃຫ້ຜູ້ນຶ່ງຜູ້ໃດຕິດຕໍ່ກ່ຽວຂ້ອງກັບລູເຕີ ສັດຕຣູຂອງເພິ່ນມີອິສາຣະທີ່ຈະທຳລາຍຊີວິດຂອງເຂົາ ເພື່ອນໆ ຖືກຫ້າມບໍ່ໃຫ້ຊ່ອຍປົກປ້ອງຄຸ້ມຄອງເພິ່ນແຕ່ລູເຕີເຫັນວ່າການເຜີຍແຜ່ຂ່າວປະເສີດກຳລັງຕົກຢູ່ໃນອັນຕຣາຍແລະໃນນາມຂອງອົງພຣະຜູ້ເປັນເຈົ້າເພິ່ນໄດ້ອອກໄປຕໍ່ສູ້ເພື່ອຄວາມຈິງໂດຍບໍ່ຫວັ່ນເກງຕໍ່ອັນຕຣາຍໃດໆ ທັງສິ້ນ ເພິ່ນຂຽນຈົດໝາຍເຖິງເຈົ້າຊາຍເຟຣເດີຣິກແຫ່ງແຊ໊ກ



ຫລັງທີ່ໄດ້ປົວຄົນປ່ວຍແລະຄົນທີ່ໃກ້ຈະຕາຍກໍຮູ້ຊຶ້ງເຖິງຄຸນຄ່າແຫ່ງຂ່າວປະເສີດຢ່າງບໍ່ເຄີຍມີມາກ່ອນ

ສະວິງລີເຂົ້າໃຈໃນຂ່າວປະເສີດຊັດເຈນຫລາຍຍິ່ງຂື້ນ ແລະໄດ້ຮັບປະສົບປະການແຫ່ງອຳນາດການຟື້ນຟູດ້ວຍຕົນເອງຫລາຍຂື້ນສະວິງລີເວົ້າວ່າ "ພຣະຄຣິດຊົງຊຳຣະການໄຖ່ບາບອັນບໍ່ມີສິ້ນສຸດໃຫ້ເຮົາແລ້ວ ຊົງເປັນເຄື່ອງບູຊາອັນຕລອດໄປເປັນນິດ ແລະຊົງຮັກສາເຮົາໃຫ້ຫາຍຈາກຄວາມເຈັບໄຂ້ຕລອດໄປ ເຮັດໃຫ້ເປັນທີ່ພໍພຣະທັຍຂອງພຣະເຈົ້າແຫ່ງຄວາມຍຸດຕິທັມຕລອດໄປ ເພື່ອບັນດາຜູ້ທີ່ວາງໃຈໃນຄວາມໝັ້ນຄົງແລະຄວາມເຊື່ອສະເທືອນ ບໍ່ວ່າຢູ່ໃສກໍຕາມທີ່ມີຄວາມເຊື່ອໃນພຣະເຈົ້າທີ່ນັ້ນຍ່ອມຈະມີອຳນາດຊັກຈູງໃຫ້ມະນຸດທຳດີ"

ງານການປະຕິຮູບສາສນາໃນຊູຣິກໄດ້ຈະເຣີນຫລຸດໜ້າໄປທີ່ລະຂັ້ນຕອນຈຶ່ງເປັນການເຕືອນໃຫ້ສັດຕຣູຕ້ອງລຸກຂື້ນມາຕໍ່ສູ້ຂັດຂວາງຢ່າງຈິງຈັງ ມີການທົບທວນການຕໍ່ຕ້ານສະວິງລີ ຄຣູຜູ້ສັ່ງສອນລັດທິນອກຮີດຕ້ອງງຽບສຽງລົງ ບິຊອບແຫ່ງເມືອງຄອນສະແຕນໄດ້ສົ່ງຜູ້ແທນສາມຄົນໄປຮ່ວມປະຊຸມສະພາທີ່ເມືອງຊູຣິກ ຜູ້ແທນເຫລົ່ານັ້ນໄດ້ກ່າວໂທດສະວິງລີວ່າເປັນອັນຕຣາຍຕໍ່ຄວາມສງົບສຸກແລະລະບຽບຂອງສັງຄົມ ຖ້າປະຊາຊົນບໍ່ເຄົາຣົບຕໍ່ອຳນາດຂອງຄຣິສຕະຈັກ ຜົນທີ່ບັງເກີດຂື້ນກໍຄືໂລກນີ້ຈະເຕັມໄປດ້ວຍຄວາມສັບສົນວຸ່ນວາຍ

ແຕ່ທີ່ປະຊຸມປະຕິເສດບໍ່ຍອມຕໍ່ຕ້ານສະວິງລີ ແລະໂຣມຈຶ່ງຕຽມທີ່ຈະຂັດຂວາງເພິ່ນ ສະວິງລີເວົ້າວ່າ "ປ່ອຍໃຫ້ພວກເຂົາມາ ຂ້າພະເຈົ້າເປັນເໝືອນກັບ ໜ້າຜາທີ່ບໍ່ເຄີຍຢ້ານຄື້ນຟອງທີ່ພັດມາກະທົບ" ຄວາມພຍາຍາມໃນການທຳລາຍການປະຕິຮູບສາສນາຂອງພວກຜູ້ມີອຳນາດກັບຍິ່ງເຮັດໃຫ້ງານປະຕິຮູບນັ້ນຂຍາຍ ອອກໄປຫລາຍຂື້ນ ແຕ່ການເຜີຍແຜ່ຄວາມຈິງກໍຍັງຄົງດຳເນີນຕໍ່ໄປ ບັນດາຜູ້ເຊື່ອຖືທີ່ເກີດຄວາມທໍ້ຖອຍເພາະລູເຕີໄດ້ຫາຍສາບສູນໄປກັບມາມີກຳລັງໃຈເຂັ້ມແຂງຂື້ນອີກ ເມື່ອພວກເຂົາເຫັນຄວາມຈະເຣີນກ້າວໜ້າຂອງຂ່າວປະເສີດໃນສະວິດເຊີແລນ ຂນະທີ່ການປະຕິຮູບສາສນາຕັ້ງໝັ້ນຄົງຢູ່ໃນເມືອງຊູຣິກ ຄົນທັງຫລາຍກໍໄດ້ເຫັນຜົນທີ່ບັງເກີດຂື້ນໃນເມືອງນັ້ນວ່າຊ່ອຍກຳຈັດຄວາມຊົ່ວຮ້າຍໄດ້ແລະທຸກຢ່າງເປັນລະບຽບຮຽບຮ້ອຍ

## ໂຕ້ຖຽງກັບຜູ້ເຫລື້ອມໃສຄຣິສຕະຈັກຄາທໍລິກ

ເມື່ອທາງໂຣມັນເຫັນວ່າ ການກົດຂີ່ຂົ່ມເຫງແລະຕໍ່ສູ້ກັບງານຂອງລູເຕີ ຂອງພວກເຂົາໃນເຢຣະມັນບໍ່ບັງເກີດຜົນ ພວກເຂົາຈຶ່ງຕັດສິນໃຈວ່າຈະຈັດໃຫ້ມີການອະພິປາຍກັບສະວິງລີເພື່ອແນ່ໃຈວ່າຈະໄດ້ຮັບຊັຍຊະນະພວກເຂົາຈຶ່ງເປັນຜູ້ເລືອກສະຖານທີ່ແລະຜູ້ຕັດສິນໃນການອະພິປາຍຄັ້ງນີ້ເອງ ເມືອພວກເຂົາສາມາດບັງຄັບໃນສະວິງລີຢູ່ໃນໃຕ້ອຳນາດແລ້ວ ພວກເຂົາຈະບໍ່ຍອມໃຫ້ເພິ່ນໜີພົ້ນໄປໄດ້ ແຜນການນີ້ໄດ້ຖືກປິດບັງໄວ້ຢ່າງມິດຊິດ

ການອະພິປາຍໄດ້ກຳນົດໃຫ້ຈັດທີ່ເມືອງບາເດນ ແຕ່ສະພາແຫ່ງເມືອງຊູຣິກຫ້າມບໍ່ໃຫ້ສຶກສາພິບານຂອງພວກເຂົາພາຕົວເອງໄປສູ່ອັນຕຣາຍ ເພາະສົງສັຍວ່າພວກຂອງສັນຕະປາປາມີແຜນການບາງຢ່າງທີ່ຊົ່ວຮ້າຍ ເພາະເຄີຍເຫັນຜູ້ທີ່ຍອມຮັບຂ່າວປະເສີດຂອງພຣະເຈົ້າຖືກເຜົາທັງເປັນໃນທ້ອງຖິ່ນສັນຕະປາປາມາແລ້ວ ການໄປເມືອງບາເດນທີ່ວິຣະບຸຣຸດແຫ່ງຄວາມຈິງເຄີຍຫລັ່ງເລືອດມາແລ້ວ ເມື່ອບໍ່ນານມານີ້ກໍເທົ່າກັບເປັນການເດີນໄປສູ່ຄວາມຕາຍຢ່າງແນ່ນອນ ໂອໂຄແລມພາດຽດແລະຮອນເລີຖືກເລືອກໃຫ້ເປັນຕົວແທນຂອງນັກປະຕິຮູບສາສນາສ່ວນ ດຣ. ເອັກຜູ້ມີຊື່ສຽງໄດ້ຮັບການສນັບສນູນຈາກສາສດາຈານຜູ້ຄົງແກ່ຮຽນ ແລະບັນດາບາດຫລວງລະດັບສູງໃຫ້ເປັນຕົວແທນຂອງໂຣມ

ເລຂານຸການທຸກຄົນຖືກເລືອກໂດຍພັກພວກຂອງສັນຕະປາປາ ແຕ່ຄົນອື່ນຖືກຫ້າມບໍ່ໃຫ້ຈົດລາຍງານການປະຊຸມ ຖ້າຂັດຂືນຈະຕ້ອງໄດ້ຮັບໂທດເຖິງຕາຍ ຢ່າງໃດກໍຕາມນັກສຶກສາຄົນນຶ່ງທີ່ເຂົ້າຮ່ວມປະຊຸມຄັ້ງນີ້ຕອນກາງເວັນໄດ້ຈົດບັນທຶກລາຍງານການປະຊຸມທຸກໆແລງນັກສຶກສາອີກສອງຄົນໄດ້ລາຍງານນີ້ພ້ອມດ້ວຍຈົດໝາຍຂອງໂອໂຄແລມພາດຽດມາໃຫ້ສະວິງລີທີ່ເມືອງຊູຣິກທຸກວັນ ນັກປະຕິຮູບກໍຕອບຈົດໝາຍແລະໃຫ້ຄຳແນະນຳໄປດ້ວຍ ເພື່ອໃຫ້ທະຫານຍາມທີ່ປະຕູເມືອງຄົ້ນພົບຜູ້ຊື່ຂ່າວເຫລົ່ານັ້ນໄດ້ເອົາຈົດໝາຍຊ້ອນໃນກະຕ່າໃສ່ເປັດ,ໄກ່ຕັ້ງໄວ້ເທິງຫົວໂດຍວິທີນີ້ພວກເຂົາຈຶ່ງເຂົ້າໄປໃນເມືອງໄດ້ໂດຍບໍ່ຖືກຂັດຂວາງ



ຮ້ອນຮົນເຫລົ່ານີ້ກໍໃຫ້ເກີດຄວາມຕື່ນເຕັ້ນບໍ່ແມ່ນນ້ອຍ ລູເຕີປຸກໃຈໃຫ້ປະຊາຊົນ ເຫັນເຖິງຄວາມເປັນໄປໃນການປະຕິຮູບສາສນາ ແຕ່ບັດນີ້ບາງຄົນທີ່ມີຄວາມເຊື່ອທີ່ ແທ້ຈິງໄດ້ຖືກຫລອກລວງໃຫ້ຫລົງກະທຳຜິດ ໂດຍການແກ້ງຂອງ "ຜູ້ປະກາດພຣະທັມ" ໃໝ່ເຫລົ່ານີ້

ບັນດາຜູ້ນຳໃນກິຈການນີ້ໄດ້ອ້າງວ່າພວກເຂົາເປັນພວກດຽວກັບເມນແລງທອນ "ພຣະເຈົ້າຊົງໃຊ້ເຮົາມາສັ່ງສອນເຮົາໄດ້ສົນທະນາກັບພຣະອົງ ເຮົາຮູ້ດີວ່າມີອັນໃດເກີດຂຶ້ນຫລືຈະເວົ້າອີກຢ່າງນຶ່ງຄືເຮົາເປັນສາວົກແລະຜູ້ປະກາດພຣະທັມແລະປະກາດຕາມຄຳສອນຂອງ ດຣ. ລູເຕີ"

ພວກນັກປະຕິຮູບສາສນາມີຄວາມປະຫລາດໃຈ ເມນແລງທອນ ກ່າວວ່າ "ແທ້ຈິງແລ້ວມີວິນຍານທີ່ຜິດທັມມະດາຢູ່ໃນຄົນເຫລົ່ານີ້ ແຕ່ວິນຍານຊະນິດໃດ ປະການນຶ່ງຄືຂໍໃຫ້ເຮົາລະມັດລະວັງການຂັດຂວາງພຣະວິນຍານຂອງພຣະເຈົ້າ ແລະອີກປະການນຶ່ງຄື ເຮົາຕ້ອງລະມັດລະວັງບໍ່ໃຫ້ວິນຍານຂອງຊາຕານຊັກຈູງໃຫ້ເຮົາຫລົງກະທຳຜິດ

## ຜົນຂອງຄຳສອນແນວໃໝ່ປາກົດ

ປະຊາຊົນຖືກຊັກຈູງໃຫ້ເລີກສົນໃຈໃນພຣະຄັມພີແລະລະຖິ້ມພຣະຄັມພີ ນັກສຶກສາບໍ່ຍອມເຊື່ອຟັງກົດຂໍ້ບັງຄັບ ພວກເຂົາລະຖິ້ມການສຶກສາແລະລາອອກຈາກມະຫາວິທະຍາລັຍ ຄົນທັງຫລາຍທີ່ຄິດວ່າພວກເຂົາສາມາດຊ່ອຍຟື້ນຟູແລະຄວບຄຸມກິຈການກ່ຽວກັບການປະຕິຮູບສາສນາກັບນຳກິຈການນີ້ໄປສູ່ຄວາມພິນາດ ຝ່າຍໂຣມມີຄວາມໝັ້ນໃຈວ່າ ພວກເຂົາຈະໄດ້ຊັຍຊະນະແລະຮ້ອງຕະໂກນດ້ວຍຄວາມດີໃຈວ່າ "ເຮົາຈະຕໍ່ສູ້ອີກເປັນຄັ້ງສຸດທ້າຍແລ້ວທຸກຢ່າງຈະເປັນຂອງເຮົາ"

ຂ້າຕາຍ ປະຊາຊົນຈຳນວນຫລາຍພາກັນເສົ້າໂສກແລະຫລາຍຄົນປະຕິຍານຕົນວ່າຈະແກ້ແຄ້ນແທນລູເຕີຊຶ່ງພວກເຂົາຄິດວ່າຖືກຂ້າຕາຍໄປແລ້ວ

ແມ່ນຕອນທຳອິດສັດຕຣູຂອງລູເຕີພາກັນດີໃຈທີ່ໄດ້ຂ່າວວ່າເພິ່ນຕາຍໄປແລ້ວ ແຕ່ກໍເກີດຄວາມຢ້ານກົວວ່າຫາກລູເຕີຖືກຈັບຕົວໄປອີຫລີ ມີຄົນນຶ່ງເວົ້າວ່າ "ມີພຽງວິທີດຽວທີ່ຈະຊ່ອຍໃຫ້ເຮົາມີຊີວິດຄືໄຕ້ໄຟຊອກຄົ້ນຫາລູເຕີທົ່ວໂລກ ເພື່ອຈະນຳເພິ່ນກັບຄືນມາໃຫ້ຊົນທັງຊາດທີ່ຮຽກຮ້ອງຫາເພິ່ນ" ຂ່າວທີ່ບອກວ່າລູເຕີປອດພັຍເຮັດໃຫ້ປະຊາຊົນຮູ້ສຶກດີໃຈ ແມ່ນວ່າຈະຕົກຢູ່ໃນສະພາບນັກໂທດກໍຕາມພວກເຂົາອ່ານຂໍ້ຂຽນຂອງລູເຕີດ້ວຍຄວາມຮ້ອນຮົນຫລາຍກວ່າແຕ່ກ່ອນຝູງຊົນທີ່ຢູ່ຝ່າຍປະຕິຮູບສາສນາມີຈຳນວນເພີ່ມຂຶ້ນເພາະພວກເຂົາເຫັນວ່າລູເຕີຕໍ່ສູ້ປ້ອງກັນພຣະທັມຂອງພຣະເຈົ້າ

ເມັດພືດແຫ່ງພຣະທັມຂອງພຣະເຈົ້າທີ່ລູເຕີໄດ້ຫວ່ານໄປໄດ້ຈະເຣີນງອກງາມທົ່ວທຸກຫົນທຸກແຫ່ງ ການທີ່ລູເຕີຫາຍໄປນັ້ນເຮັດໃຫ້ງານສິ້ນນຶ່ງສຳເຣັດຊຶ່ງຖ້າເພິ່ນຢູ່ຄົງເຮັດບໍ່ສຳເຣັດເພາະຜູ້ນຳສຳຄັນຂອງພວກເຂົາຖືກຍ້າຍໄປຢູ່ບ່ອນອື່ນພວກເຂົາຈຶ່ງເຮັດທຸກສິ່ງທຸກຢ່າງທີ່ສາມາດຈະເຮັດໄດ້ເພື່ອບໍ່ໃຫ້ງານຊຶ່ງໄດ້ເລີ່ມໄວ້ຢ່າງດີນັ້ນຖືກຂັດຂວາງ ຊາຕານພຍາຍາມຫລອກລວງທຳລາຍຄົນທັງຫລາຍໂດຍເຮັດສິ່ງທີ່ປອມແປງຂຶ້ນແທນຂອງຈິງ ພຣະຄຣິດຫຽມເທັດເກີດຂຶ້ນໃນສັດຕະວັດທີ່ນຶ່ງສັນໃດ ຜູ້ປະກາດພຣະທັມຫຽມເທັດກໍເກີດຂຶ້ນໃນສັດຕະວັດທີ່ສິບຫົກສັນນັ້ນ

ມີບາງຄົນທີ່ຄິດເອົາເອງວ່າ ໄດ້ຮັບນິມິດພິເສດຈາກສວັນແລະອ້າງວ່າເພິ່ນໄດ້ຮັບມອບໝາຍຈາກພຣະເຈົ້າໃຫ້ທຳງານການປະຕິຮູບສາສນາຊຶ່ງລູເຕີໄດ້ເລີ່ມຕົ້ນໄວ້ ຄວາມຈິງແລ້ວພວກເຂົາບໍ່ໄດ້ທຳງານທີ່ລູເຕີໄດ້ເຮັດສຳເຣັດໄວ້ແລ້ວນັ້ນເລີຍພວກເຂົາບໍ່ຍອມຮັບຫລັກເກນການປະຕິຮູບສາສນາທີ່ວ່າພຣະທັມຂອງພຣະເຈົ້າຄືກົດເກນທີ່ສຳຄັນຂອງຄວາມເຊື່ອແລະການປະຕິບັດ ພວກເຂົານຳເອົາມາຕຖານທີ່ບໍ່ແນ່ນອນແລະປ່ຽນແປງໄດ້ຊຶ່ງພວກເຂົາຕັ້ງຂຶ້ນນັ້ນເອງ ຕາມຄວາມຮູ້ສຶກແລະຄວາມປະທັບໃຈມາໃຊ້ແທນພຣະທັມຂອງພຣະເຈົ້າ

ຄົນອື່ນໆ ຊຶ່ງຕາມທັມມະດາເປັນຜູ້ມີໃຈເອນອຽງໄປທາງບ້າໆ ບໍໆ ຫລົງໄຫລໃນສາສນາໄດ້ເຂົ້າຮ່ວມກັບຄົນເຫລົ່ານັ້ນດ້ວຍ ການດຳເນີນກິຈການຂອງຜູ້ມີ ໃຈ



ໄມໂຄນຽດກ່າວວ່າ "ໂດຍການອະທິຖານພາວັນນາອິດຫລັບອິດນອນ ໃນຕອນກາງຄືນ ແລະຄຳແນະທີ່ຂຽນລົງໃນຈົດໝາຍສົ່ງໄປຍັງເມືອງບາເດນເຮັດໃຫ້ສະວິງລີທຳງານໄດ້ຜົນຫລາຍກວ່າການທີ່ເພິ່ນຈະໄປອະພິປາຍດ້ວຍຕົນເອງຖ້າມກາງສັດຕຣູ"

ພັກພວກຜູ້ແທນຈາກໂຣມເດີນທາງມາທີ່ເມືອງບາເດນໂດຍແຕ່ງຕົວດ້ວຍເສື້ອຜ້າທີ່ຫລູຫລາ ແລະປະດັບດ້ວຍເຄື່ອງເພັດປອຍທີ່ມີຄ່າ ພວກເຂົາຮັບປະທານອາຫານຢ່າງຟູມເຟືອຍ ໂຕ໊ະອາຫານຂອງພວກເຂົາເຕັມໄປດ້ວຍອາຫານດີມີຣາຄາແພງແລະເຫລົ້າອະງຸ່ນຣົດຢ່ຽມ ເປັນສິ່ງທີ່ຕົງກັນຂ້າມກັບເຫລົ່ານັກປະຕິຮູບສາສນາທີ່ບໍ່ມີເງິນທອງ ເຮັດໃຫ້ບໍ່ເສັຽເວລາຢູ່ກັບໂຕ້ະອາຫານ ເຈົ້າຂອງໂຮງແຮມທີ່ໂອໂຄແລມພາດຽດພັກຢູ່ເຄີຍຫາໂອກາດເຝົ້າປະຕູເພິ່ນໃນຫ້ອງກໍເຫັນເພິ່ນນັ່ງສຶກສາຮ່ຳຮຽນພຣະຄັມພີຫລືບໍ່ກໍອະທິຖານຢູ່ສເມີ ເຈົ້າຂອງໂຮງແຮມກ່າວວ່າຢ່າງນ້ອຍທີ່ສຸດຄົນນອກຮີດກໍເປັນຄົນ "ເຄັ່ງຄັດໃນສາສນາຢ່າງຍິ່ງ"

ນະທີ່ປະຊຸມ "ດຣ. ເອັກກ້າວຂຶ້ນສູ່ເວທີໃນເຄື່ອງແຕ່ງຕົວທີ່ງົດງາມ ຂນະທີ່ໂອໂຄແລມພາດຽດ ແຕ່ງຕົວມໍຊໍນັ່ງຢູ່ຕົງໜ້າຄູ່ຕໍ່ສູ້ຂອງເພິ່ນຖືກບັງຄັບໃຫ້ນັ່ງເທິ່ງມ້ານັ່ງທີ່ແກະສະລັກຢ່າງຫຍາບໆ" ດຣ. ເອັກກ່າວຄຳປາສັຍດ້ວຍສຽງອັນດັງແລະມີຄວາມໝັ້ນໃຈວ່າຈະໄດ້ຊັຍຊະນະຢ່າງແນ່ນອນຜູ້ທີ່ປົກປ້ອງຄວາມເຊື່ອຈະໄດ້ຮັບລາງວັນຢ່າງງາມ ເມື່ອການໂຕ້ຖຽງບໍ່ໄດ້ຜົນເພິ່ນຈຶ່ງກ່າວຄຳດູໝິ່ນຢຽມຫຍາມແລະສາບົດສາບານ

ໂອໂຄແລມພາດຽດມີກິຣິຍາທ່າທາງອ່ອນສຸພາບແລະບໍ່ປມາດ ພຍາຍາມຫລີກລຽງການໂຕ້ຖຽງແມ່ນຈະມີກິຣິຍາທ່າທາງສຸພາບແລະອ່ອນໂຍນກໍໄດ້ພິສູດຈົນໃຫ້ເຫັນວ່າເພິ່ນມີຄວາມສາມາດ ແລະບໍ່ຢ້ານກົວທີ່ຈະຜະເຊີນກັບຄູ່ຕໍ່ສູ້ ນັກປະຕິຮູບໄດ້ຍຶດໝັ້ນຢູ່ກັບພຣະຄັມພີ ເພິ່ນກ່າວວ່າ "ເຄົານິບທັມນຽມບໍ່ມີອຳນາດບັງຄັບໃນສະວິດເຊີແລນ ນອກຈາກເຄົານິບທັມນຽມນັ້ນຈະເປັນໄປຕາມຣັຖທັມມະນູນສ່ວນໃນເຣື່ອງກ່ຽວກັບຄວາມເຊື່ອນັ້ນພຣະຄັມພີຄືທັມມະນູນຂອງເຮົາ"

ຖ້ອຍຄຳທີ່ນັກປະຕິຮູບສາສນາໄດ້ຊີ້ແຈງຢ່າງຊັດເຈນ ແລະປະກອບດ້ວຍເຫດຜົນອີກທັງກິຣິຍາມາຣະຍາດທີ່ສຸພາບຮຽບຮ້ອຍເຮັດໃຫ້ຜູ້ຟັງມີຄວາມສົນໃຈຄົນເຫລົ່ານັ້ນຮູ້ສຶກເບື່ອໜ່າຍຕໍ່ຄຳເວົ້າໂອ່ອວດຂອງ ດຣ. ເອັກ

ການອະພິປາຍດຳເນີນຕິດຕໍ່ກັນເປັນເວລາສິບແປດວັນ ເມື່ອສິ້ນສຸດການປະຊຸມແລ້ວພັກພວກຂອງສັນຕະປາປາອ້າງວ່າພວກເຂົາໄດ້ຊັຍຊະນະ ຜູ້ແທນສ່ວນຫລາຍເຂົ້າຂ້າງໂຣມແລະທີ່ປະຊຸມປະກາດວ່າພວກນັກປະຕິຮູບສາສນາພ້ອມດ້ວຍສະວິງລີຫົວໜ້າຂອງພວກເຂົາເປັນຝ່າຍຜ່າຍແພ້ແລະຕ້ອງຖືກຕັດຂາດຈາກຄຣິສຕະຈັກ ແຕ່ການຕໍ່ສູ້ເຮັດໃຫ້ການເຜີຍແຜ່ສາສນາຂອງພວກໂປເຕສແຕນຈະເຣີນກ້າວໜ້າ ຕໍ່ມາພາບຫລັງບໍ່ນານເທົ່າໃດ ເມືອງເບີຣນແລະເມືອງບາເຊນຊຶ່ງເປັນເມືອງສຳຄັນຂອງສະວິດເຊີແລນໄດ້ປະກາດການປະຕິຮູບສາສນາ

ໃນເຢຣະມັນເກີດເຫດການຍຸ້ງຍາກ ເມື່ອລູເຕີຫາຍຕົວໄປລະຍະນຶ່ງກໍໄດ້ມີຄຣິສະຕຽນປອມອ້າງວ່າເຂົາໄດ້ຮັບນິມິດທຳໜ້າທີ່ຕໍ່ຈາກລູເຕີ ຊັກຊວນໃຫ້ປະຊາຊົນລະຖິ້ມການສຶກສາພຣະຄັມພີເສັຽ ລູເຕີກໍຕ້ອງພົບກັບຄວາມກົດດັນຢ່າງໜັກຈາກຝ່າຍບ້ານເມືອງແລະຝ່າຍສານສນາຈັກ

ໃນຂນະທີ່ລູເຕີພຳນັກຢູ່ທີ່ປະສາດວ໊ອດເບີກ ເພິ່ນກໍໄດ້ແປພຣະຄັມພີເປັນພາສາເຢຣະມັນ ເຮັດໃຫ້ຖືກຄັດຄ້ານແລະຕໍ່ຕ້ານຈາກສັນຕະປາປາ ແຕ່ກໍບໍ່ມີສິ່ງໃດທີ່ຈະສາມາດຢັບຢັ້ງຄວາມຫິວກະຫາຍພຣະທັມຂອງປະຊາຊົນໄດ້ ດັ່ງນັ້ນຈຶ່ງມີຄົນສຶກສາກັນຢ່າງຫລວງຫລາຍຈົນ ແມ່ນແຕ່ຜູ້ຍິງແລະເດັກນ້ອຍກໍຮູ້ເຣື່ອງພຣະຄັມພີຫລາຍກ່າວພຣະອີກ

ຄວາມພະຍາຍາມຂອງສາສນາທີ່ຈະຫ້າມພຣະທັມຂອງພຣະເຈົ້າແຜ່ກະຈາຍໄປກໍຕ້ອງລົ້ມເຫລວ ເພາະບໍ່ມີຢ່າງໃດຈະຫ້າມໄດ້ ຄຣິສຕະຈັກຂອງຝ່າຍໂປເຕສແຕນກໍເລີ່ມເຂັ້ມແຂງຂຶ້ນເລື້ອຍໆ



ບົດທີ່ 10

## ຄວາມກ້າວໜ້າໃນເຢຣະມັນ

ການຫາຍຕົວຢ່າງເລິກລັບຂອງລູເຕີ ເຮັດໃຫ້ປະຊາຊົນທົ່ວປະເທດເຢຣະມັນຢ້ານກົວເປັນຢ່າງຍິ່ງຂ່າວເລົ່າລືກະຈາຍໄປທົ່ວ ແລະຫລາຍຄົນເຊື່ອວ່າລູເຕີຖືກ